ອານໂຕນ ມາກາເຣັນໂກ

ບົນເສັ້ນທາງ ສູ່ຊີວິດ

ເຫລັ້ມທີ ໒

ອານໂຕນ ມາກາເຣັນໂກ

ບົນເສັ້ນທາງ ສູ່ຊີວິດ

ເຫລັ້ມທີ

໒

ສຳນັກພິມ "ຣາດູກາ"
ມົດສະກູ

ແປໂດຍ: ດວງເດືອນ ບຸນຍາວົງ

ແຕ້ມໂດຍ: ໂອເລຍ ປະລູຊະນີໂກວາ

Антон Макаренко

ПЕДАГОГИЧЕСКАЯ ПОЭМА

В трёх книгах

Книга вторая

На лаосском языке

© ແປເປັນພາສາລາວ, ສຳນັກພິມ "ຣາດູກາ", 1989

ISBN 5-05-002170-7

ISBN 5-05-002172-3

ບົດທີ ໑

ນ້ຳນົມກ້ອຍຫນຶ່ງ

ພວກເຮົາຍົກຍ້າຍໄປຢູ່ນິຄົມໃຫມ່ ໃນວັນຫນຶ່ງທີ່ແຈ່ມໃສ ແລະ ອົບອຸ່ນເກືອບເທົ່າໆລະດູຮ້ອນ. ໃບໄມ້ເທິງຕົ້ນໄມ້ຍັງບໍ່ທັນເລີ່ມແຫ້ງແຫ່ວຊ້ຳ, ພຸ່ມຫຍ້າຍັງຂຽວຄືກັບເວລາມັນປົ່ງໃຫມ່ ສົດຊື່ນຍ້ອນອາກາດຍາມຕົ້ນລະດູໃບໄມ້ຫລົ່ນ. ເວລານັ້ນນິຄົມໃຫມ່ຂອງພວກເຮົາບໍ່ຕ່າງຫຍັງກັບແມ່ຍິງໄວສາມສິບ, ເປັນຕາຮັກຢູ່ໃນຕົວເອງ ແລະ ໃນສາຍຕາຜູ້ອື່ນ, ນາງທັງເປັນສຸກ ແລະ ສະຫງົບສະງ່ຽມ ຢູ່ດ້ວຍຄວາມເຊື່ອຫມັ້ນຕໍ່ສະເຫນຂອງຕົນ. ນ້ຳຫ້ວຍໂກໂລມາກ ໂອບຫຸ້ມມັນໄວ້ເກືອບທຸກໆດ້ານ, ມີທາງຜ່ານແຄບໆບ່ອນຫນຶ່ງເພື່ອຕິດຕໍ່ໄປມາຫາບ້ານກົງຊາຣອບກາ. ພຸ່ມໄມ້ໃບຫຍ້າທີ່ແຕກປົ່ງດົກຫນາຢູ່ໃນສວນຂອງພວກເຮົາແຜ່ລາມຄອບຄຸມໄປຮອດເນີນຝັ່ງແມ່ນ້ຳ. ນະທີ່ນີ້ມີຫລາຍບ່ອນເປັນຮົ່ມເຢັນ ເປັນເດີ່ນ ຫລືລັບລີ້ເຫມາະເປັນບ່ອນອາບນ້ຳ ລອຍຢອກລໍ້ກັບຟອງນ້ຳ, ມີບ່ອນເຫມາະທີ່ຈະນັ່ງຊິດເບັດ ຫລືບໍ່ກໍນັ່ງຊຸບຊິ່ມຄວາມນ້ອຍກັບເພື່ອນຫົວໃຈ. ທີ່ພັກຂອງພວກເຮົາຕັ້ງຢູ່ແຄມຝັ່ງສູງ, ພວກເດັກນ້ອຍຂີ້ດື້ ແລະ ຫນ້າດ້ານແດ່ ຈຶ່ງສາມາດແກ້ເຄື່ອງມ້ຽນໄວ້ຕາມແຄມປ່ອງຢ້ຽມແລ້ວໂດດລົງສູ່ແມ່ນ້ຳໄດ້ໂດຍກົງໂລດ.

ຕ່ຳລົງໄປພຸ້ນແມ່ນສວນເກົ່າແຫ່ງຫນຶ່ງ, ທາງລົງທ່າສູ່ຫນ້ານ້ຳ

ເປັນພັກຂັ້ນໄດໃຫຍ່ໆ ໂດຍທຳມະຊາດ. ແຊເຣີ ໄດ້ຍຶດເອົາພັກລຸ່ມສຸດເປັນກຳມະສິດຂອງຕົນ, ຢູ່ບ່ອນນີ້ພວກເຮົາມີເດີ່ນກວ້າງຂວາງຕາກແດດຕະຫລອດເວລາ. ນ້ຳຫ້ວຍໂກໂລມາກສະຫງົບງຽບກວ້າງເວີ້ງອອກ, ແຕ່ສະຖານທີ່ນີ້ບໍ່ມີຫຍັງລຶກລັບ ແລະ ເປັນຫນ້າອອນຊອນໃດໆຫມົດ. ຢູ່ທີ່ນີ້ມີຜັກກະຫລ່ຳ ກັບພຸ່ມຫມາກແຫລ້* ຂຶ້ນເຕັມຫມົດ. ພວກຊາວນິຄົມພາກັນມາຍັງທີ່ນີ້ ກໍແຕ່ເມື່ອກີກອງຽກງານຮຽກຮ້ອງເທົ່ານັ້ນ, ມີກີຊວ້ານ ຫລືຈົກ ແລະບາງເທື່ອມ້າບັກ ມິນລັງ ກັບອີໂຈນ ກໍໄດ້ຕິດຕາມຮອຍພວກເຂົາມາໄດ້ຢ່າງລຳບາກ ທັງແກ່ໄກໄປພ້ອມ. ແມ່ນບ່ອນນີ້ອີກຄືກັນທີ່ພວກເຮົາມີຂົວແພ ເຮັດດ້ວຍແປ້ນສາມແຜ່ນເດີ່ນອອກຈາກຝັ່ງໄປຫານ້ຳຮອດສາມແມັດ.

ໄກອອກໄປທາງຕາເວັນອອກ. ນ້ຳຫ້ວຍ ໂກໂລມາກ ໄຫລຄົດໂຄ້ງເຮັດໃຫ້ພວກເຮົາ ມີເດີ່ນຮາບພຽງກວ້າງຫລາຍເຮັກຕາອຸດົມໄປດ້ວຍເດີ່ນຫຍ້າ ແລະ ປ່າໄມ້ນ້ອຍ. ພໍອອກຈາກສວນຜັກໃຫມ່ຂອງພວກເຮົາເທົ່ານັ້ນ ກໍຕົກໃສ່ບ່ອນນີ້ໂລດ ແລະ ເນີນຝັ່ງທີ່ຂຽວອຸ່ມຫຸ່ມນີ້ຍັງໃຊ້ເປັນປະໂຫຍດໄດ້ຫລາຍຢ່າງນຳເຊັ່ນ ໃນເວລາພັກຜ່ອນ ພວກເຮົາມັກພາກັນມານອນເຫມບລົງກັບເດີ່ນ

---

* ໄມ້ພຸ່ມປະເພດໃຫ້ຫມາກນ້ອຍໆ ເນື້ອອ່ອນ, ຮູບນອກຄືຫມາກປັງ, ມີລົດຫວານສົ້ມ, ໃຊ້ຫມັກເຮັດເຫລົ້າຫວານ (ຜູ້ແປ).

ຫຍ້າຕາມກ້ອງຮິ່ມກົກ ຊາຈ້າງ* ທີ່ຕັ້ງຕົວລຽນລຽບຕາມແຄມສວນ ຜັກ ແລ້ວແນມເບິ່ງພູມພາບຂອງທົ່ງກວ້າງ ພຸ່ມຫຍ້າ ທ້ອງຟ້າ ແລະ ພາກສ່ວນຫນຶ່ງຂອງບ້ານ ກົງຊາຣອບກາ ເຊິ່ງວາງຢຽດຢາຍ ຢູ່ຕິດຂອບຟ້າ. ກາລີນາ ອີວາໂນວິດ ຕິດອົກຕິດໃຈໃນສະຖານທີ່ນີ້ ຫລາຍ ບາງຄັ້ງ ເຊັ່ນ ໃນຕອນບ່າຍວັນທິດ ລາວມັກແກ່ດຶງເອົາຂ້າ ພະເຈົ້າມານຳ.

ຂ້າພະເຈົ້າພໍໃຈໂອ້ລົມກັບລາວ ກ່ຽວກັບພວກຊາວນາ. ການ ສ້ອມແປງສະຖານທີ່, ຄວາມອະຍຸຕິທຳໃນຊີວິດ ແລະ ກ່ຽວກັບ ອະນາຄົດຂອງພວກເຮົານຳ. ຢູ່ຕໍ່ຫນ້າພວກເຮົາແມ່ນທົ່ງຫຍ້າຍາວ ຢຽດ ນອນທອດເນິ້ງໃຫ້ເບິ່ງ, ຈັ່ງຊັ້ນ ມັນຈຶ່ງກາຍເປັນສາເຫດ ມັກເຮັດໃຫ້ລາວຫລີກຫ່າງອອກຈາກເສັ້ນທາງຂອງການສົນທະນາ ປັດຊະຍາຂອງຕົນເລື້ອຍໆ.

- ເຈົ້າເຫັນບໍ່! ເກົ້າເອີຍ, ຊີວິດເຮົາມັນບໍ່ຕ່າງຫຍັງກັບແມ່ຍິງ ດອກ, ອັນກັບເພິ່ນຜູ້ວ່ານີ້ເກາະ ເຈົ້າຢ່າໄດ້ໄປຫວັງວ່າຊິມີຄວາມ ຍຸຕິທຳໃດ໋ເດີ້. ຄັນວ່າແມ່ນຜູ້ຫນຸ່ມແຫນ້ນແຂງແຮງ ຫານວດງາມ ມັນກະເຮັດຢູ່ ເຮັດກິນແຊບໆ ແກມເຫລົ້າແກ້ວຫນຶ່ງໃຫ້ອີກ, ຄັນ ວ່າແມ່ນທ້າວຂີ້ສູດ ບໍ່ມີຂົນຈັກເສັ້ນຢູ່ເທິງຫນ້າ ຢ່າເວົ້າຮອດ ຫນວດກໍຢ່າແຫລະ... ຈ້າງອີເວນຕາຍຍາກນັ້ນ ມັນຊິເອົານ້ຳໃຫ້

---

* ເປັນກົກໄມ້ເນື້ອອ່ອນ, ສູງ, ໃບແລະດອກອ່ອນ ແຫ້ງໃຊ້ ຊົງກັບນ້ຳຮ້ອນກິນເປັນ ເຄື່ອງດື່ມລະງັບປະສາດ, ຊ່ອຍໃຫ້ນອນ ຫລັບດີ (ຜູ້ແປ).

ກິນແດ່. ເບິ່ງແຕ່ຂ້ອຍນີ້ແມ້ ຫວ່າງຢູ່ກອງທະຫານມ້າ ແຕ່ກໍ້ຫັນ ນ່າ... ເຮີຍບັກນັ້ນນ່າ ລູກອີ່ແມ່ເລງ... ມຶງລ່ວງເຂົ້າມາຫຍັງນີ້? ຫມາກິນຄວາມຄຶດມຶງຫມົດແລ້ວຫລືໃດ? ຫລືວ່າມຶງກຶ້ມມັນໄວ້ ເຮືອນພຸ້ນ? ບັກເວນຫ້າຮ້ອຍມຶງເອີຍ, ມຶງເອົາມ້າເຂົ້າມານີ້ເຮັດ ຫຍັງ? ຕາແຕກມຶງບໍ່ເຫັນຫວະ? ມັນ ຜັກກະລໍາຢູ່ນີ້ນ່າ,

ເມື່ອ ກາລີນາ ອີວາໂນວິດ ພົ່ນຄໍາເວົ້າເຫລົ່ານີ້ອອກມານັ້ນ ລາວຢືນຢູ່ຫ່າງຂ້າພະເຈົ້າ, ແລ້ວລາວດຶງກອກອອກມາ ແກວ່ງປະ ກອບທ່າທີ.

ຢູ່ຫ່າງຈາກພວກເຮົາໄປປະມານສາມຮ້ອຍແມັດ, ເຮົາເຫັນ ຫລັງມ້າເຫມບຢູ່ເທິງເດີ່ນຫຍ້າ, ແຕ່ບໍ່ມີລູກອີ່ແມ່ເລງຄືວ່ານັ້ນຈັກ ຄົນຢູ່ໃນບໍລິເວນນີ້, ຢ່າງໃດກໍຕາມກາລີນາ ອີວາໂນວິດ ຮູ້ວ່າ ລາວ ເວົ້າສຽດໃສ່ໃຜ. ທົ່ງຫຍ້າແຫ່ງນີ້ແມ່ນກົ່ນຂອງ ບຣາເຊັນໂກ, ຍາມໃດເຂົາກໍຢູ່ຫັ້ນ ເຖິງວ່າບໍ່ເຫັນໂຕເຫັນຕົນກໍຕາມ ຈັ່ງຊັ້ນເວົ້າ ແທ້ແລ້ວຄໍາເວົ້າ (ສຽດສີ) ຂອງ ກາລີນາ ອີວາໂນວິດ ກໍບໍ່ຜິດ ຫຍັງກັບການເສກມົນຢ່າງຫນຶ່ງ. ຫລັງຈາກພົ່ນຄວາມເວົ້າປະເພດ ນີ້ອອກອີກຈັກ ສອງ - ສາມ ປະໂຫຍກ ບຣາເຊັນໂກກໍປາກົດຕົວ ອອກມາຢ່າງເລິກລັບພໍປານຫາຍໂຕມາ ຄືແທນທີ່ຈະອອກມາຈາກ ເບື້ອງດຽວກັບທີ່ມ້າຢູ່ ເຂົາຊໍ້າໂປໂລມາທາງເບື້ອງຫລັງພວກເຮົາ ຄືມາຈາກສວນຜັກພຸ້ນ.

- ແມ່ນເຈົ້າຮ້ອງດາຍວາຍຫາອີ່ສັງ ກາລີນາ ອີວາໂນວິດ? ເຈົ້າ ດາລາຍຊັ້ນຫວາ. ເຫັນຜີຢູ່ໃນຕົ້ນໄມ້ຊັ້ນເບາະ? ໃສ່ຜັກກະລໍ່າ? ໃສ່ມ້ານະ?

ຈາກນັ້ນກໍແມ່ນການຜິດກຽງແບບວິຊາສະເພາະຢ່າງໜຶ່ງ ຊຶ່ງເຮັດໃຫ້ເຫັນ ໄດ້ວ່າກາລີນາ ອີວາໂນວິດ ເຖົ້າແກ່ເກີນໄປແລ້ວ ແມ່ນແຕ່ສຳລັບຜູ້ບໍ່ມີຫຍັງກ່ຽວພັນກັບການປູກຝັງກໍຕາມ, ລາວຈື່ຈຳຕິດຕາມແຜນທີ່ຂອບເຂດຂອງນິຄົມເກືອບບໍ່ໄດ້ເລີຍ ແລະ ກໍຫລົງລືມໄປແທ້ ໆ ວ່າ ຢູ່ໃນທົ່ງນີ້ເພິ່ນໄດ້ປູກຜັກກະລໍ່າປີໃສ່ບ່ອນໃນແດ່.

ສະມາຊິກນິຄົມປ່ອຍໃຫ້ ກາລີນາ ອີວາໂນວິດ ເດີນທາງໄປສູ່ໄວຊະລາຂອງລາວຢ່າງສະຫງົບ, ເຫິງນານມາແລ້ວທີ່ວຽກງານການປູກຝັງຕົກຢູ່ໃນກຳມືຂອງ ແຊເອີ ຢ່າງຂາດຂັ້ນ ແລະ ກໍເປັນແຕ່ບາງໂອກາດເທົ່ານັ້ນທີ່ ກາລີນາ ອີວາໂນວິດ ໃນນາມຜູ້ກວດການເຄັ່ງຄັດ ໄດ້ພະຍາຍາມເຈາະຈົ້ມຫາບ່ອງໂກນບ່ອງໃດບ່ອງໜຶ່ງຢູ່ໃນວຽກງານອັນນີ້ແຕ່ ແຊເອີ ກໍສາມາດຍູ້ດັນລາວອອກມາຢ່າງສຸພາບດ້ວຍການເວົ້າຍອກແກມຍົກ ແລະກາລີນາ ອີວາໂນວິດ ກໍຈຳໃຈຖອຍອອກມາ.

- ໂຍ້ວ ຊັ້ນຈິໃຫ້ເຮັດແນວໃດ? ສະໄຫມພວກເຮົາກໍເຄີຍພາກັນປູກເຂົ້າຄືກັນ, ບັດນີ້ແມ່ນພຽນຜູ້ອື່ນໆ, ມັນບໍ່ແມ່ນວ່າ ຍ້ອນຂາດພອນສະຫວັນນັ້ນດອກເດ້ ແຕ່ວ່າ ຄັນມີອັນນີ້ແລ້ວເຮັດໃຫ້ເຂົາເກີດໄດ້ບໍ່?

ແຕ່ວ່າຢູ່ໃນວຽກງານເສດຖະກິດທົ່ວໆໄປຂອງພວກເຮົາ ແລ້ວລາວຢູ່ໃນຖານະຂອງການເປັນເຈົ້າຄອງບັນລັງແຕ່ບໍ່ຄຸ້ມຄອງ. ພວກເຮົາທຸກຄົນຮັບຮູ້ຄວາມຍິ່ງໃຫຍ່ຂອງລາວ ພາກັນກົ້ມຫົວຄຳນັບຫລັກການທິດສະດີຂອງລາວ ແຕ່ພວກເຮົາກໍປະຕິບັດທຸກຢ່າງຕາມ

ທີ່ພວກເຮົາເຫັນວ່າເຫມາະສົມ. ເຮັດດັ່ງນີ້ ກາລິນາ ອີວາໂນວິດ ກໍບໍ່ຄຽດຂຶ້ນຫຍັງເລີຍ ທັງນີ້ດ້ານຫນຶ່ງຍ້ອນລາວບໍ່ແມ່ນຄົນຮັກກຽດຂອງຕົນເອງ ແລະ ອີກດ້ານຫນຶ່ງກໍຍ້ອນວ່າ ລາວໃຫ້ຄວາມສຳຄັນແກ່ປັດຊະຍາຂອງຕົນເອງຫລາຍກວ່າທຸກຢ່າງຄືກັບກະສັດອັງກິດ ຊຶ່ງຖືສຳຄັນແຕ່ເລື່ອງພິທີການເທົ່ານັ້ນເອງ.

ອີງຕາມຮີດຄອງເກົ່າແກ່ຢ່າງຫນຶ່ງ. ກາລິນາ ອີວາໂນວິດ ຕ້ອງເຂົ້າໄປໃນເມືອງເພື່ອກິດທຸລະບາງອັນ ແລະ ການໄປຂອງລາວກໍຕ້ອງປະກອບດ້ວຍພິທີການອັນເຄັ່ງຂຶມວາດໃດວາດຫນຶ່ງສະເຫມີ, ລາວຕັ້ງເປັນຄົນນິຍົມຊົມຊອບໃນພິທີການແບບເກົ່າແກ່ ມາແຕ່ໃດພວກເດັກນ້ອຍກໍລຶ້ງເຄີຍກັບກ້ອຍຄຳສຳນວນຂອງລາວແລ້ວ :

- ນີ້ແຫລະ ອາດຍາຜູ້ຍິ່ງໃຫຍ່ ມີກວຽນທີ່ຫລູຫລາ ແຕ່ມີມ້າທີ່ຈ່ອຍໂຊ. ບາດຊາວນາ ມີກວຽນທຳມະດາ ແຕ່ມີມ້າໂຕຕຸ້ຍພີ.

ພວກເດັກນ້ອຍພາກັນເອົາຫຍ້າສົດໆ ມາປູຮອງພື້ນກວຽນເກົ່າຊຶ່ງມີຮູບຮ່າງຄ້າຍຄືໂລງພີ ຈາກນັ້ນຈຶ່ງເອົາຜ້າຫນາສະອາດຜືນຫນຶ່ງມາປູປົກຕັ່ງ. ເມື່ອເອົາມ້າຕົວດີທີ່ສຸດມາທຽມໃສ່ແລ້ວ ພວກເຂົາກໍຈູງມັນມາກ້ອງຊານເຮືອນ ກາລິນາ ອີວາໂນວິດ. ຂະນະດຽວກັນນີ້ ຫມົດທຸກຄົນພວກເຮົາ ນັບແຕ່ພະນັກງານຝ່າຍເສດຖະກິດ ຈົນຮອດພວກຄຸ້ມຄອງທຸກໆຂັ້ນ ກໍພາກັນປະຕິບັດຫນ້າທີ່ຢ່າງເຕັມຂີດເຊັ່ນ ຜູ້ຊ່ອຍວຽກເສດຖະກິດ ທ້າວເດີດກູດລາຕີ ກໍຍັດບັນຊີເຄື່ອງທີ່ຈະຊື້ເຂົ້າໃສ່ກົງ, ອາໂລດຊາ ໂວນກອບ ຜູ້ກຳກັບສາງກໍຍັດກະໂລ່ງ, ໄຫ, ເຊືອກ ແລະ ສິ່ງອື່ນໆອີກເຂົ້າກ້ອງຫຍ້າ. ກາລິນາອີວາໂນວິດ ປ່ອຍໃຫ້ຫມູ່ກູຢູ່ປະມານ ສາມຫາສີ່ ນາທີ ຈຶ່ງອອກ

ມາຊານເຮືອນ, ເຂົາບຸ່ງເສື້ອກັບຝົນຕົວສະອາດຈັກມາໃຫມ່ໆ ແລະ ຣີດຮຽບຮ້ອຍ, ຈົກກອກທີ່ຍັດຢາເສັ້ນໄວ້ກ່ອນແລ້ວຂຶ້ນມາຕໍ່ໄຟ, ເສືອດຕາກວດກາເບິ່ງມ້າ ແລະ ກວຽນບາດຫນຶ່ງ, ບາງຄັ້ງກໍເວົ້າ ຫຍັງພຸມໆ ຄືວ່າສຳຄັນເອົາກະດ່ວ່າ:

-ອັນຊິໃຫ້ກູບອກມຶງຈັກເທື່ອເກາະວ່າ ບໍ່ຄວນໃສ່ຫມວກແບບ ນີ້ເຂົ້າໃນເມືອງ! ຈັ່ງແມ່ນຊາດບອກຍາກເວີ້ຍ!...

ຂະນະທີ່ ເດນິດ ປ່ຽນຫມວກແງບກັບຫມູ່ ກາລີນາ ອີວາໂນ ວິດ ກໍກ້າວຂຶ້ນໄປນັ່ງເທິງຕັ່ງ ແລະ ອອກຄຳສັ່ງວ່າ:

-ໄປໄດ້ແລ້ວ!

ຢູ່ໃນເມືອງ, ກາລີນາ ອີວາໂນວິດ ໃຊ້ເວລາສ່ວນໃຫຍ່ຢູ່ໃນ ຫ້ອງການຂອງເລຂາສະບຽງບ່ອນໃຫຍ່ໆ ດ້ວຍທ່າທີເປັນສະຫງ່າ, ເຮັດຫນ້າເບີດໆຢູ່ເລີງໆ ເພື່ອໃຫ້ສົມກັບສັກສີອັນຍິ່ງໃຫຍ່ ແລະ ຄວາມເຂັ້ມແຂງຂອງນິຄົມ ກັອກກີ, ຍ້ອນເຫດຜົນນີ້ເອງທີ່ຄຳໂອ້ ລົມສ່ວນໃຫຍ່ຂອງລາວ ຈຶ່ງພົວພັນຢູ່ນຳແຕ່ເລື່ອງນະໂຍບາຍຂັ້ນສູງ, ລາວມັກເວົ້າວ່າ:

-ພວກຊາວນາຫວະ? ພວກເຂົາມີທຸກຢ່າງຕາມທີ່ຕ້ອງການ ແລ້ວ, ອັນຂ້ອຍເວົ້ານີ້ແມ່ນແທ້ເດີ!

ໃນເວລາດຽວກັນ, ເດນິດ ກູດລາຕີ ເຊິ່ງໃສ່ຫມວກແງບຍືມ ຫມູ່ມານັ້ນກໍເຈລະຈາເລື່ອງຊື້ຂາຍຢູ່ຊັ້ນເທິງ, ເຂົາສົນລະວົນຢູ່ນຳ ວຽກຫລາຍອັນ ເຊັ່ນ ຮັບໃບເບີກສິນຄ້າ, ຜິດຖຽງກັບຫົວຫນ້າ ພະແນກ ແລະ ກັບຜູ້ຮອງແດ່, ຈາກນັ້ນ ຈຶ່ງຂົນກົງ ແລະ ກະໂລ່ງ ເຄື່ອງອອກໄປໃສ່ກວຽນ ໂດຍບໍ່ໃຫ້ແປດເປື້ອນບ່ອນນັ່ງອັນສັກກາ

ລະຂອງ ກາລີນາ ອີວາໂນວິດ, ເອົາອາຫານໃຫ້ມັນກິນແລ້ວ ປະມານສາມໂມງຈຶ່ງໂປໂລເຂົ້າມາຫ້ອງການ ໃນສະພາບມຸມມອມເປິເປື້ອນດ້ວຍຝຸ່ນແປ້ງ ແລະ ຂີ້ເລື່ອຍ.

- ກາລີນາ ອີວາໂນວິດ, ຮຽບຮ້ອຍໝົດແລ້ວ.

ໃບໜ້າຝ່າຍນີ້ ປາກົດມີຮອຍຍິ້ມແບບນັກການທູດເສຍກ່ອນຈາກນັ້ນຈຶ່ງຫັນໄປຈັບມືອຳລາຜູ້ອຳນວຍການ ແລ້ວຫັນມາຖາມ ເດນິດ ດ້ວຍນ້ຳສຽງຂຶງຂັງວ່າ:

- ໂຕມັງນຸທຸກຢ່າງຮຽບຮ້ອຍດີແລ້ວແມ່ນບໍ່?

ເມື່ອມາຮອດບ້ານ, ກາລີນາ ອີວາໂນວິດ ເຊິ່ງອິດເມື່ອຍຫລາຍແລ້ວນັ້ນ ກໍຈະພັກຜ່ອນ, ຂະນະທີ່ ເດນິດ ກິນອາຫານແລງອັນເຢັນຈ້ອຍຢ່າງຟ້າວຟັ່ງແລ້ວນັ້ນ ຍັງຄົງໄປຢ່າງອວດໂສມແບບຄົນມີງໂກນຂອງຕົນເລາະລຽບຢູ່ຈົນເດິກດື່ນ, ວຸ່ນວາຍຢູ່ນຳລະບົບເສັ້ນສາຍຄຸ້ມຄອງຂອງບ້ານ ເຂົາແລ່ນຟູນແລ່ນພົບຕ່າງຫຍັງກັບແມ່ຍິງເກົ້າຄົນໜຶ່ງ.

ກູດລາຕີ ເປັນຄົນປະເພດບໍ່ສາມາດທົນເຫັນສິ່ງໃດຕົກເຮ່ຍເສຍຫາຍແມ່ນແຕ່ໜ້ອຍດຽວ ມາແຕ່ເກີດ, ບໍ່ວ່າຈະເປັນຫຍ້າແຫ້ງເຮັ່ຍຈາກກວຽນດ້າມເລັກນ້ອຍ, ກຸນແຈເສຍໄປຈັກໜ່ວຍຫລືລະຄັງຢູ່ຄອກງົວຫາຍຕົວໄປ ທັງໝົດເຫລົ່ານີ້ເຮັດໃຫ້ເຂົາເຈັບປວດຫົວໃຈທັງນັ້ນ ເຂົາເປັນຄົນຍິ້ມຍາກ ແຕ່ກໍບໍ່ປາກົດວ່າໃຈຮ້າຍໂມໂຫຈັກເທື່ອ ແລະ ຄວາມເອົາໃຈໃສ່ຕິດຕາມຜູ້ພູມເພື່ອຍທຸກຢ່າງຂອງເຂົາ ຊ້ຳບໍ່ເປັນໜ້າເບື່ອໜ່າຍ ໜ້າທົນຫວຍແຕ່ຢ່າງໃດ ທັງນີ້ຍ້ອນຄວາມເຊື່ອໝັ້ນອັນໜັກແໜ້ນ ແລະ ເຈດ

ຕະນາລົມອັນເດັດດ່ຽວທີ່ແຝງຢູ່ໃນນ້ຳສຽງຂອງເຂົານັ້ນເອງ. ເຂົາຮູ້ວິທີປາບພວກເດັກນ້ອຍຂີ້ເພີທີ່ເຊື່ອວ່າ ການຊົມໃຊ້ພະລັງງານມະນຸດແບບມີປະໂຫຍດທີ່ສຸດ ແມ່ນການປີນຕົ້ນໄມ້ຫລິ້ນນັ້ນ ດ້ວຍຄວາມງ່າຍດາຍ. ພໍພຽງແຕ່ ເດນິດ ເຮັດຫນ້າຫຍຸມປິ່ນໃສ່ເທົ່ານັ້ນ ພວກເຂົາກໍພາກັນປີນລົງຈາກຕົ້ນໄມ້ໂລດ.

- ວ່າແນວໃດ? ມຶງເອົາຫົວ ຫລືເອົາຕີນຄິດຣື? ອີກບໍ່ດົນກໍຊິເອົາລູກເອົາເມຍແລ້ວ ຍັງມາຫາປີນຕົ້ນໄມ້ ເຮັດສົ້ງຂາດກົ້ນຢູ່. ມາກັບກູດຽວນີ້, ມາຊິເອົາສົ້ງໂຕອື່ນໃຫ້ໂຕ.

- ເອົາສົ້ງໃຫ້ຫວະ? ຄົນຂີ້ດີ້ການຄົນ, ເຫື່ອເຍັບຈ້ອຍໆໄຫລລົງຕາມຫນ້າ.

- ເອີ, ອີກໂຕຫນຶ່ງໄວ້ໃຫ້ມຶງນຸ່ງປີນຕົ້ນໄມ້ຈັ່ງໃດລະ, ເວົ້າມາເບິ່ງ ມຶງເຄີຍເຫັນໃຜນຸ່ງສົ້ງໃຫມ່ປີນຕົ້ນໄມ້ຣື, ມຶງເຄີຍເຫັນຄົນແບບນີ້ຢູ່ໃສ?

ຍ້ອນຄວາມເປັນຄົນມັດທະຍັດຫມົດຈິດຫມົດໃຈແນວນີ້ ເດນິດຈຶ່ງບໍ່ສາມາດມີເວລາສົນໃຈໃນຄວາມເພີດເພີນຂອງມະນຸດ. ເຂົາບໍ່ສາມາດເຂົ້າໃຈແມ່ນແຕ່ຄວາມຈິງກ່ຽວກັບຈິດຕະສາດງ່າຍໆຂັ້ນ ຄື: ບັກນ້ອຍປີນຕົ້ນໄມ້ຍ້ອນຄວາມດີໃຈທີ່ໄດ້ສົ້ງໃຫມ່, ສົ້ງກັບຕົ້ນໄມ້ເກີດມີຄວາມພົວພັນກັນຢ່າງມີສາເຫດ, ແຕ່ສຳລັບ ເດນິດ ແລ້ວ, ວັດຖຸສອງຢ່າງນີ້ຊ້ຳເປັນສິ່ງທີ່ຢູ່ຮ່ວມກັນບໍ່ໄດ້ຢ່າງເດັດຂາດ.

ຢ່າງໃດກໍຕາມ, ນະໂຍບາຍອັນເຂັ້ມງວດຂອງ ເດນິດ ກໍຫາກເປັນສິ່ງຈຳເປັນ ເພາະຄວາມທຸກໄຮ້ຂາດເຂີນຂອງພວກເຮົາເອງ, ມັນບັງຄັບໃຫ້ພວກເຮົາຕ້ອງປະຢັດສຸດຂີດ, ຍ້ອນແນວນີ້ສະພາ

ນາຍກອງຈຶ່ງເລືອກເອົາເຂົາໄວ້ ໃນຕຳແຫນ່ງຮອງຫົວຫນ້າເສດຖະກິດມາຕະຫລອດເວລາ ທັງປະຕິເສດຢ່າງເດັດດ່ຽວຕໍ່ຄຳພ້ອງທຸກຂອງພວກເດັກນ້ອຍທີ່ຕໍ່ວ່າຕໍ່ຂານກ່ຽວກັບມາດຕະການອັນເຂັ້ມງວດເຄັ່ງຄັດໄຮ້ຄວາມຍຸດຕິທຳ ເຊິ່ງ ເດນິດ ນຳອອກມາໃຊ້ເພື່ອຮັກສາສິ້ງຂອງພວກເຂົາ. ກາບາຣານິບ, ເບຍລູກິນ, ແວກຊະເນັບ, ບູຮູນ ກັບສະມາຊິກຮຸ່ນເກົ່າຂອງນິຄົມ ຕ່າງກໍພາກັນຕີລາຄາຄວາມເດັດດ່ຽວຂອງ ກູດລາຕີໄວ້ຢ່າງສູງ ແລະ ພໍຕິກຣອດລະດູບານໃຫມ່, ພວກເຂົາກໍພາກັນຍອມຮັບຢ່າງບໍ່ມີການລັ່ງເລ ຫລືຄຳຄັດຄ້ານໃດໆ ເມື່ອ ເດນິດ ປະກາດໃນກອງປະຊຸມໃຫຍ່ວ່າ:

- ມື້ອື່ນ ທຸກຄົນເອົາເກີບສົ່ງຄືນສາງ, ໃນລະດູຮ້ອນ, ພວກເຮົາສາມາດຢ່າງຕີນເປົ່າໄດ້.

ໃນເດືອນຕຸລາ ໑໙໔໓ ເດນິດ ໄດ້ສຳເລັດວຽກງານອັນຍິ່ງໃຫຍ່ຢ່າງຫນຶ່ງ. ມີເດັກນ້ອຍຢູ່ປະມານສິບກອງທີ່ຂາດເຂີນບ່ອນຢູ່ບ່ອນນອນ ພາຍໃນເຮືອນຕຶກເຊິ່ງເພິ່ນກຳລັງທຳການສ້ອມແປງຢູ່ທົ່ວທຸກບ່ອນ. ຫໍໂຮງເກົ່າຫລັງຫນຶ່ງເຊິ່ງພວກເຮົາຂະຫນານນາມວ່າເຮືອນຂາວ ນັ້ນຖືກໃຊ້ເປັນຫໍພັກ ແລະ ຫ້ອງຮຽນ, ໂຮງຊ່າງໄມ້ໄດ້ຫ້ອງໂລ່ງກວ້າງຫ້ອງຫນຶ່ງ, ໂຮງອາຫານໄດ້ບ່ອນຢູ່ຫ້ອງໃຕ້ດິນຂອງຕຶກຫລັງທີ່ສອງ ເຊິ່ງເປັນເຮືອນພັກພະນັກງານ, ມັນບໍ່ກວ້າງຂວາງພໍຈະຮັບຄົນເຂົ້າໄດ້ກາຍສາມສິບ ຈັ່ງຊັ້ນພວກເຮົາຈຶ່ງແບ່ງກັນເປັນສາມຊຸດເພື່ອກິນເຂົ້າ. ໂຮງຊ່າງເກີບ, ໂຮງຊ່າງແປງກວຽນລໍ້ກັບບ່ອນຕັດເຄື່ອງນັ້ນ ໄດ້ຢູ່ແຈ້ງບໍ່ສົມກັບວ່າເປັນສະຖານທີ່ສຳລັບເຮັດວຽກຈັກຫນ້ອຍ. ຫມົດທຸກຄົນຄໍ່ວ່າຊາວນິຄົມ ຫລືຄູ

ເຝິກຕ່າງກໍຢູ່ກັບຢ່າງຄັບແຄບບຽດແຫຍ້, ສິ່ງຫນຶ່ງທີ່ເຕືອນໃຫ້ພວກ ເຮົາຄຶດຫາຊີວິດອັນອຸດົມສົມບູນໃນອະນາຄົດກໍແມ່ນເຄຫາປະເພດ "ຈັກກະພັດ" ຫລັງຫນຶ່ງເຊິ່ງມີສີຫນ້າສູງເປັນຊັ້ນຫນຶ່ງເດັ່ນສຽດເຂົ້າ ມາໃນສວນຜັກໃຫມ່, ລະບຽງໂລ່ງກວ້າງທີ່ບຸກຮຸກເຂົ້າໃນສວນນີ້ປະ ກອບດ້ວຍຫ້ອງກວ້າງໆ ເພດານສູງປະດັບລວດລາຍ, ມັນເຮັດໃຫ້ ເຮົາຄຶດຝັນໄປແບບຕ່າງໆ ນາໆ. ພຽງແຕ່ວ່າພວກເຮົາຈະໃສ່ພື້ນ, ປ່ອງຢ້ຽມ, ຂັ້ນໄດ ແລະ ເຄື່ອງອາຍອຸ່ນໃຫ້ຮຽບຮ້ອຍເທົ່ານັ້ນ ພວກເຮົາ ກໍຈະມີຫໍພັກຊະນິດວິເສດສົມຄວນສຳລັບເດັກນ້ອຍຕັ້ງ ໑໔໐ ຄົນ ແລະ ສິ່ງດັ່ງກ່າວຈະເຮັດໃຫ້ໄດ້ສະຖານທີ່ເປົ່າຫວ່າງສຳ ລັບເຮັດກິດຈະການດ້ານສຶກສາສາດອັນອື່ນໆຕັ້ງຫລາຍບ່ອນ. ແຕ່ ຈະເຮັດອັນນີ້ໄດ້ພວກເຮົາຕ້ອງໃຊ້ເງິນຈຳນວນ ໖໐໐໐ ຣູບ, ພວກ ເຮົາໃຊ້ຈ່າຍເງິນລາຍໄດ້ທຸກອັດ ເພື່ອສູ້ຍັບລຶບລ້າງຮ່ອງຮອຍເສດ ເຫລືອອັນເປັນຜົນສະທ້ອນຈາກຄວາມທຸກໄຮ້ໃນອະດີດອັນທີ່ພວກ ເຮົາທຸກຄົນ ບໍ່ຍອມຫວນກັບໄປຫາມັນອີກຢ່າງເດັດຂາດນັ້ນແລ້ວ. ການບຸກຄືດ້ານຫນ້າອັນນີ້ຂອງພວກເຮົາ ສາມາດລຶບລ້າງເສື້ອຜ້າສຳ ລີ, ຫມວກແງບຂາດ, ຕຽງພັບ, ຜ້າຟາຊະນິດເຫລືອມາແຕ່ສະ ໄຫມພະເຈົ້າຊາ ໂຣມານອບ ອີງທີ່ II ແລະ ແຖມຜ້າພັນຕີນຊະ ນິດໃຊ້ແທນກົງຕີນໄດ້ຫມົດແລ້ວ, ບັດນີ້ມີຊ່າງຕັດຜົມຄົນຫນຶ່ງເດີນ ທາງເຂົ້າມານິຄົມຂອງພວກເຮົາຮອດເດືອນລະສອງເທື່ອ, ເຖິງ ແມ່ນວ່າເຂົາເກັບຄ່າຕັດຜົມດ້ວຍຕີງເດີຮອດຫົວລະ ໑໐ ອັດ ແລະ ຄ່າສອຍດ້ວຍມີດຕັດຮອດຫົວລະ ໔໐ ອັດ, ພວກເຮົາກໍຍັງມີ ຄວາມສາມາດເລືອກຕັດຕາມແບບທີ່ເປັນທີ່ນິຍົມກັນຢູ່, ເຖິງແມ່ນ

ວ່າ ພວກເຮົາຍັງບໍ່ໄດ້ຫາສິ່ງເຄື່ອງໃຊ້ໃນເຮືອນເທື່ອ ແລະ ຍັງຕ້ອງ ໃຊ້ບ່ວງໄມ້ກິນເຂົ້າ, ຜ້າປູບ່ອນຍັງເຕັມແຕ່ຮອຍດາບຈຸບຢູ່ ແຕ່ທັງນີ້ ກໍເປັນຍ້ອນວ່າພວກເຮົາລົມໃຊ້ລາຍໄດ້ສ່ວນໃຫຍ່ຂອງເຮົາໃສ່ການ ຊື້ອຸປະກອນເຄື່ອງມື ແລະ ໂດຍທົ່ວໄປກໍແມ່ນໃສ່ພື້ນຖານການຜະ ລິດຂອງພວກເຮົານັ້ນເອງ.

ພວກເຮົາບໍ່ມີເງິນຈຳນວນ ໓໐໐໐ ແລະ ກໍທັງບໍ່ມີຫວັງວ່າຈະ ໄດ້ມັນອີກຊ້ຳ. ຢູ່ໃນກອງປະຊຸມໃຫຍ່, ຢູ່ໃນສະພາບາຍກອງ ຫລື ແມ່ນແຕ່ຢູ່ໃນການໂອ້ລົມທຳມະດາ ລະຫວ່າງພວກອ້າຍໃຫຍ່, ຈົນກະທັ້ງຮອດຢູ່ໃນຄຳໂອ້ລົມຂອງພວກ ກົມໂຊໂມນ ຫລືແມ່ນແຕ່ ການສົນທະນາປາໄສຂອງພວກນ້ອງໃຫມ່ ເພິ່ນມັກໄດ້ຍິນການເວົ້າ ຮອດເງິນຈຳນວນນີ້ອອກມາສະເຫມີ ແລະ ກໍທັງຮູ້ສຶກວ່າມັນແມ່ນ ຈຳນວນມະຫຶມາທີ່ບໍ່ອາດເອື້ອມເຖິງນັ້ນຈັກເທື່ອ.

ໃນປາງນັ້ນ ນິຄົມກ້ອກກີ ຂຶ້ນກັບກະຊວງສຶກສາປະຊາຊົນ ເຊິ່ງ ໄດ້ໃຫ້ເງິນອຸດຫນູນບຳລຸງນິຄົມແຕ່ພຽງຫນ້ອຍດຽວເທົ່ານັ້ນ. ຈຳ ນວນເງິນດັ່ງກ່າວນີ້ມີຄວາມຫມາຍແບບໃດນັ້ນ ເພິ່ນສາມາດຕີລາຄາ ໄດ້ຈາກເຫດການຕົວຈິງອັນນີ້ຄື: ຄ່ານຸ່ງຫົ່ມໄດ້ຜູ້ລະ ໑໘ ຮຸບຕໍ່ປີ ກາລີນາ ອີວາໂນວິດ ຈົນໂມໂຫໂຫໂສເປັນຟືນເປັນໄຟຂຶ້ນ:

-ອັນມັນແມ່ນໃຜເກາະ ມາຄືວ່າສະຫລຽວສະຫລາດແທ້? ກູຢາກພໍ້ກັບມັນເບິ່ງເດ້, ຫນ້າມັນເປັນແນວໃດ? ຜັດແຕ່ກູມາຢູ່ນີ້ ກະຈິເຂົ້າ ໕ ຮອບແລ້ວ ແຕ່ຄົນແບບນີ້ກູຍັງບໍ່ເຄີຍພໍ້ເທື່ອເວີຍ! ມັນແມ່ນໂຕພາກດູດເລືອດບໍ້?

ຂ້າພະເຈົ້າເອງ ກໍບໍ່ເຄີຍພົບຫນ້າພໍ່ຕາບຸກຄົນດັ່ງກ່າວຈັກເທື່ອ

ເຖິງແມ່ນວ່າໄດ້ທຽວໄປມາຫາສູ່ກະຊວງເລື້ອຍໆກໍຕາມ. ຄວາມຈິງແລ້ວຕົວເລກນີ້ບໍ່ແມ່ນຜົນຂອງການຄິດໄລ່ຈາກມັນສະຫມອງນັກຈັດຕັ້ງຜູ້ໃດຜູ້ຫນຶ່ງດອກ, ມັນອອກມາຈາກການຄິດໄລ່ແບບເອົາງົບປະມານທັງຫມົດຫານໃຫ້ຈຳນວນພວກເດັກນ້ອຍໄຮ້ຍາດເທົ່ານັ້ນເອງ.

ເຄຫາຈັກກະພັດຂອງຄະລືຫາດແຕຣບແກ ເຊິ່ງພວກເຮົາຂະຫນານນາມມັນຢ່າງບໍ່ມີພິທີການໃດໆວ່າ "ເຮືອນແດງ" ນັ້ນມີທຸກຢ່າງ ແລະ ພ້ອມທີ່ຈະກາຍເປັນບ່ອນຈັດງານລາຕີສະໂມສອນໄດ້ທຸກເວລາ ແຕ່ຫາກວ່າວັນເວລາດັ່ງກ່າວຊ້ຳກຶກເລື່ອນໄປຢ່າງບໍ່ມີກຳນົດ ເພາະວ່ານັກເຕັ້ນລຳຄູ່ທຳອິດຄືພວກຊ່າງເຮືອນນັ້ນຍັງບໍ່ໄດ້ຮັບບັດເຊີນເທື່ອ.

ເຖິງແມ່ນວ່າ ພວກເຮົາຕົກຢູ່ໃນສະພາບອັດຕະຄັດຂັດສົນຫນ້າສົມເພດປານນີ້ກໍຕາມ, ຊາວນິຄົມກໍບໍ່ຮູ້ສຶກທໍ້ຖອຍຫມົດຫວັງດອກ, ກາຣາບານົບ ຫັນດຶງເອົາຮອດຜີສາງເທວະດາເຂົ້າມາຫຍຸ້ງກ່ຽວນຳ.

-ພວກສູຄອງເບິ່ງໂລດ, ເຈົ້າພໍ່ເຈົ້າແມ່ຫາກຊິມາຊ່ອຍພວກເຮົາດອກ! ພວກເຮົາມັນໂຊກດີພໍແຮງແລ້ວເດ້. ພວກສູຫາກຊິເຫັນ, ຄັນບໍ່ແມ່ນເຈົ້າພໍ່ ກໍອາດແມ່ນແມ່ມົດຫມໍຜີຜູ້ໃດຜູ້ຫນຶ່ງນີ້ລະ, ກູເຊື່ອວ່າ ເພິ່ນຊິບໍ່ປະໃຫ້ເຮືອນຕຶກແບບນີ້ກິ້ມຢູ່ລ້າໆຄືກອງດິນຈີ່ເກົ່າໆດອກເວີຍ!

ດັ່ງນັ້ນ ເມື່ອພວກເຮົາໄດ້ຮັບໂທລະເລກແຈ້ງຂ່າວການມາຢ້ຽມຢາມຂອງນາງໂບໂກວາ ຜູ້ກວດການຂອງຄະນະກຳມະການ ອູກຣາອີນ ວ່າດ້ວຍການປ້ອງກັນເດັກ ໃນວັນທີ ໖ ຕຸລາ ຈຶ່ງມີການຕົກລົງກັນວ່າ ຕ້ອງສົ່ງລົດມ້າໄປຮັບເອົານາງທີ່ສະຖານີລົດໄຟເມືອງຄາ

ຄົນ. ພວກເຮົາຕ່າງກໍພາກັນດີໃຈນໍາຂ່າວນີ້ຫລາຍ ໂດຍສະເພາະກຸ່ມຜູ້ນໍາຂອງນິຄົມ, ຫລາຍຄົນວິພາກວິຈານສະແດງຄວາມຄິດເຫັນກ່ຽວກັບການສ້ອມແປງເຮືອນຕຶກແດງອອກມາໂລດ.

- ອີ່ນາຍເກົ້ານີ້ ອາດຊິປ່ອຍເງິນ ໖໐໐໐ ຣຸບ ໃຫ້ພວກເຮົາ...

- ມຶງຮູ້ໄດ້ແນວໃດ ວ່າລາວເກົ້າ?

- ໂອ້ຍ ອັນຄົນຢູ່ໃນວົງການນີ້ ມັນກະມີແຕ່ຜູ້ເກົ້າໆ ຫັ້ນລະ.

ກາລີນາ ອີວາໂນວິດ ສະແດງຄວາມສົງໄສອອກມາວ່າ:

- ສູອາດຊິບໍ່ໄດ້ຈັກອັດຊໍ້າບ່າ... ອົງການປ້ອງກັນເດັກອ່ອນນີ້ ກູຮູ້ຈັກມັນດີ, ມີແຕ່ເພິ່ນຊິມາຖາມຫັ້ນແລ້ວວ່າ ພວກເຮົາຊິຮັບເອົາເດັກນ້ອຍນໍາພວກເຂົາໄດ້ອີກຈັກ ໓-໔ ຄົນບໍ່, ຈາກນັ້ນ... ເຮີ! ກະຍັງວ່າແມ່ຍິງ... ແມ່ຍິງ! ຕາມທິດສະດີນັ້ນກະຮູ້ຢູ່ດອກວ່າ ເພິ່ນມີສິດເທົ່າທຽມເຮົາ ແຕ່ໃນພາກປະຕິບັດນີ້ຕີ, ຍາມໃດເຂົາກໍຍັງເປັນແມ່ຍິງຢູ່ ແລະ ກໍຈະເປັນຈັ່ງຊັ້ນຕະຫລອດໄປ...

ຮອດວັນທີ ໕, ອານໂຕນ ບຣາເຊັນໂກ ລ້າງສ່ວຍທໍາຄວາມສະອາດລົດມ້າທຽມຄູ່ຢ່າງຈົບງາມ, ຂົນຄໍມ້າບັກແດງ ກັບອີ່ເນຣີ ກີກຫວີ ແລະ ກັກເປຍຢ່າງຮຽບຮ້ອຍ. ນິຄົມຂອງພວກເຮົາບໍ່ໄດ້ມີໂອກາດຮັບແຂກຈາກນະຄອນຫລວງເລື້ອຍປານໃດ ຈັ່ງຊັ້ນບຣາເຊັນໂກ ຈຶ່ງເລີ່ມເອົາໃຈໃສ່ໃຫ້ຄວາມສໍາຄັນແກ່ພວກມັນ. ເຊົ້າວັນທີ ໖, ຂ້າພະເຈົ້າອອກເດີນທາງໄປຍັງສະຖານີລົດໄຟ ໂດຍມີບຣາເຊັນໂກ ເອງເປັນຜູ້ຂັບລົດມ້າ.

ເມື່ອພາລົດມ້າໄປຈອດຢູ່ໃນເດີ່ນຂອງສະຖານີລົດໄຟແລ້ວ ພວກເຮົາບໍ່ລົງຈາກລົດ, ຍືນຢູ່ເທິງຫັ້ນທັງສອດສາຍຕາແນມນໍາແມ່ຍິງ

ເກົ້າແຕ່ລະຄືນທີ່ພວມຍ່າງອອກມາຈາກສະຖານີ, ໂດຍສະເພາະພວກທີ່ມີທ່າທາງຄືມາຈາກພະແນກສຶກສາປະຊາຊົນ. ຄາວຫນຶ່ງພວກເຮົາໄດ້ຍິນສຽງຖາມຂຶ້ນໃກ້ໆຕົວຈາກແມ່ຍິງຄົນຫນຶ່ງ ເຊິ່ງບໍ່ມີລັກສະນະສອດຄ່ອງກັບຜູ້ທີ່ພວກເຮົາລໍຄອຍຈັກຫນ້ອຍວ່າ:

- ລົດມ້າຄັນນີ້ມາຈາກໃສເນາະ?

ອານໂຕນ ຕອບສຽງອຸມອິວຢູ່ໃນປາກດ້ວຍວາຈາບໍ່ສຸພາບປານໃດວ່າ:

- ພວກເຮົາມາວຽກສ່ວນໂຕ, ລົດມ້າໂດຍສານຈອດຢູ່ທາງພຸ້ນ.

- ພວກເຈົ້າບໍ່ໄດ້ມາຈາກນິຄົມກ້ອກກີຫວະ?

ອານໂຕນຫັນກັບມາຢ່າງໄວພະລັນ, ຂ້າພະເຈົ້າກໍເກີດມີຄວາມສົນໃຈຕໍ່ການມາປາກົດຕົວຂອງຍິງຄົນນີ້ຄືກັນ.

ນາງຜູ້ຢືນຢູ່ຕໍ່ຫນ້າພວກເຮົາມີລັກສະນະບໍ່ສຽດໃກ້ກັບຜູ້ ທີ່ພວກເຮົາຄອງຄອຍເລີຍ: ນາງນຸ່ງເສື້ອຄຸມຜ້າລາຍຕາຫມ້ອງສີອ່າວຫມົ່ນ, ລໍາຂາຮຽວສ້ວຍສຸບໃສ່ຖົງຂາໄຫມ, ໃບຫນ້າກ້ຽງສົດໃສທັງມີແກ້ມບ່ອງຕື່ມສະເຫນ, ດວງຕາຄູ່ ແວວວາວຢູ່ພາຍໃຕ້ວົງຄິ້ວບາງໆ, ພາຍໃຕ້ຜ້າມັດຜົມລູກໄມ້ມີລອນຜົມສີເຫລືອງຄໍາຫ້ອຍຍ່ອນລອດພົ້ນອອກ, ຢູ່ບໍ່ໄກຈາກນາງມີຄົນຂົນຫີບຜູ້ຫນຶ່ງຢືນຫິ້ວເຄື່ອງຂອງຈໍານວນຫນ້ອຍດຽວມານໍາ ຄືກີແອບນ້ອຍໆແອບຫນຶ່ງ ແລະຖົງຫນັງຢ່າງດີຖົງຫນຶ່ງເທົ່ານັ້ນ.

- ເຈົ້າແມ່ນສະຫາຍ ໂບໂກວາ ບໍ່?

-ຫາກວ່າແລ້ວ, ຂ້ອຍເບິ່ງອອກໂລດວ່າ ພວກເຈົ້າຕ້ອງມາ ຈາກນິຄົມກ້ອກກີ.

ໃນທີ່ສຸດອານໂຕນກໍຕັ້ງສະຕິໄດ້, ເຂົາງຶກຫົວຢ່າງໜັກແໜ້ນ ທັງເອົາໃຈໃສ່ສາງເຊືອກມ້າຢ່າງຈິງຈັງ. ນາງ ໂບໂກວາ ໂດດຂຶ້ນ ລົດມ້າຢ່າງຄ່ອງແຄ້ວ, ບັດນີ້ບັນຍາກາດຂອງສະຖານີລົດໄຟພາຍໃນ ລົດມ້າຂອງພວກເຮົາຄ່ອຍໆເລື່ອນຫາຍສາບສູນໄປ ປ່ອຍໃຫ້ບັນ ຍາກາດອັນສົດຊື່ນຫອມຫວານແບບໃໝ່ ແຊກຊຶມເຂົ້າມາແທນ. ຂ້າພະເຈົ້າຖອຍເຂົ້າໄປນັ່ງຈົນສຸດຕັ່ງ ທັງຮູ້ສຶກເກີ້ເຂີນຍ້ອນຄວາມ ໃກ້ຊິດທີ່ບໍ່ລຶ້ງເຄີຍມາກ່ອນນີ້ນໍາ.

ຕະຫລອດເວລາເດີນທາງ, ສະຫາຍ ນາງ ໂບໂກວາ ເວົ້າ ລົມເກືອງບັນຫາຕ່າງໆຢ່າງບໍ່ຂາດປາກ, ນາງໄດ້ຍິນເລື່ອງນິຄົມກ້ອກ ກີມາຫລາຍສົມຄວນ, ຈຶ່ງຢາກມາເຫັນກັບຕາເອງວ່າ ອັນນິຄົມ ກ້ອກກີນີ້ມັນແມ່ນຫຍັງແທ້ ໆ.

-ສະຫາຍ ມາກາເຣັນໂກ, ເຈົ້າຄົງບໍ່ຮູ້ດອກວ່າ ພວກເຮົາ ພົບຄວາມຫຍຸ້ງຍາກຫລາຍເທົ່າໃດ ເວລາພະຈົນກັບເດັກນ້ອຍໝູ່ ນີ້ນະ, ເປັນຮ້າຍແທ້ໆໃດ... ຈັ່ງແມ່ນຂ້ອຍອຸກຂ້ອຍອັ່ງນໍາພວກ ເຂົາ, ຂ້ອຍເອງກໍຢາກເຮັດອັນໃດອັນໜຶ່ງເພື່ອພວກເຂົາຢູ່. ໂອ້, ທ້າວອັນນັ້ນກໍແມ່ນນັກຮຽນເຈົ້າເບາະ? ມັນເປັນຕາຮັກດີເນາະ! ພວກເຈົ້າຄົງບໍ່ງຽບເຫງົາຕີຢູ່ພີ້ນ່າ? ທໍາມະດາແລ້ວຢູ່ຄາຍດັດສາງ ເດັກແບບນີ້, ການດໍາລົງຊີວິດຄົງງຽບເຫງົາຫລາຍເຕີບ. ຢູ່ກະ ຊວງ, ພວກເຮົາເວົ້າຮອດເຈົ້າຫລາຍໃດ໋, ແຕ່ນິຄົມເວົ້າວ່າເຈົ້າ ເອງບໍ່ມັກຫນັງຫນ້າພວກເຮົາປານໃດ.

-ຂ້ອຍບໍ່ມັກຫນັງຫນ້າໃຜ?

-ພວກເຮົາ, ສະພາແມ່ຍິງ.

-ຂ້ອຍບໍ່ເຂົ້າໃຈ.

-ມືຄືນເວົ້າວ່າ ເຈົ້າເອີ້ນພວກເຮົາວ່າ "ພວກຫມ່ອມນາງແຫ່ງສະພາສັງຄົມສຶກສາ".

-ໂຫ່! ອັນນີ້ແມ່ນຂ່າວໃຫມ່ແທ້ໆລະ, ຂ້ອຍບໍ່ເຄີຍເອີ້ນໃຜແບບນີ້ຈັກເທື່ອ... ແຕ່ຂ້ອຍຂໍຊົມວ່າ ເຂົາຫາຄວາມໄດ້ດີສົມຄວນ, ຂ້າພະເຈົ້າຕອບຄືນທັງຫົວຢ່າງຈິງໃຈ, ນາງ ໂບໂກວາ ເອງກໍຫົວດ້ວຍຄວາມພໍອົກພໍໃຈທີ່ໄດ້ມີໂອກາດໃຊ້ຄຳອັນເຫມາະສົມດີຈັ່ງຊີ້.

-ເວົ້າແທ້ໆແລ້ວ ກໍຄືດວ່າກືກຢູ່ໃດ໋ເນາະ, ຢູ່ພະແນກສັງຄົມສຶກສານີ້ກໍຫາກມີແມ່ຍິງຫລາຍຢູ່, ຂ້ອຍກໍແມ່ນຜູ້ຫນຶ່ງໃນຈຳນວນນັ້ນ, ແຕ່ເຈົ້າຊິບໍ່ໄດ້ຍິນອີຫຍັງທຳນອງນັ້ນຈາກຂ້ອຍ, ທຳນອງວິທະຍາສາດອ້ອຍຕ້ອຍຫັ້ນນ່າ, ດີໃຈບໍ່?

ອານໂຕນງວກມາເບິ່ງຜູ້ໂດຍສານຍິງ ທີ່ອ່ວແປກປະຫລາດຄືນນີ້ເລື້ອຍໆ, ດວງຕາຂອງເຂົາຕື່ກ້ວາງ ແລະ ເຄັ່ງຂຶມຈິງຈັງແທ້ ໆ.

-ລາວຫັນມາເບິ່ງຂ້ອຍເລື້ອຍໆ! ໂບໂກວາ ເວົ້າທັງຫົວໆ ເປັນຫຍັງລາວຈຶ່ງເບິ່ງຂ້ອຍເອົາແທ້ເອົາວ່າແນວນີ້?

ອານໂຕນຫນ້າແດງຮືນຂຶ້ນ, ເອົາແສ້ຟາດມ້າທັງຈົ່ມພຸມໆອີຫຍັງສອງສາມຄວາມ.

ທີ່ນີ້ຄືນ, ພວກເຮົາໄດ້ຮັບການຕ້ອນຮັບທີ່ແຝງດ້ວຍຄວາມສົນໃຈຢ່າງຫລວງຫລາຍຈາກພວກເດັກນ້ອຍ ຮວມທັງ ກາລິນາ

ອີວາໂນວິດ ນຳ. ສ່ວນ ເຊນີຍົງ ກາຣາບານົບນັ້ນ ໄດ້ແຕ່ເກົາ
ງ່ອນດົ້ນຂອງຕົນໄປມາ ອັນເປັນການສະແດງຢ່າງເປີດແປນວ່າ ເຂົາ
ງົງຫົບໄປຫມົດແລ້ວ; ຊາໂດຣອບ ລິ່ວຕາລົງເບື້ອງຫນຶ່ງແລ້ວຍິ້ມ
ຫນ້າບານ.

ຂ້າພະເຈົ້າແນະນຳ ນາງໂບໂກວາ ໃຫ້ຮູ້ຈັກກັບພວກເດັກ
ນ້ອຍ ; ໃນທັນທີພວກເຂົາກໍແກ່ດຶງເອົານາງໄປຢ້ຽມເບິ່ງອາຄານຕ່າງໆ
ພາຍໃນນິຄົມຢ່າງເປັນກັນເອງ ທັງຫນ້າຮັກຍິ່ງຫນັກ. ກາລີນາ
ອີວາໂນວິດ ຈ່ອງແຂນເສື້ອຂ້າພະເຈົ້າໄວ້ ແລ້ວຖາມວ່າ:

- ແລ້ວພວກເຮົາຊິເອົາຫຍັງຕ້ອນຮັບນາງລະນີ້?

- ຂ້ອຍຊິໄປຮູ້ນຳຊຸນຫວະ? ພ້າເອີຍ! ເອົາຫຍັງກໍໄດ້ດອກ,
ແນວມັນກິນໄດ້ຫັ້ນນະ; ຂ້າພະເຈົ້າຕອບຄືນດ້ວຍສຽງຄ້າຍຄືກັນ.

- ຂ້ອຍຄຶດວ່າຊິເອົານ້ຳນົມສົດໆນີ້ລະໃຫ້ລາວກິນນະ, ຄືຊິຄັກ
ຢູ່ດອກເນາະ! ຫລືເຈົ້າຄຶດວ່າແນວໃດ?

- ບໍ່ນ່າ, ກາລີນາ ອີວາໂນວິດ, ຂ້າພະເຈົ້າຕອບຄືນ, - ນາງ
ອາດຊິຕ້ອງກິນແນວອຸ່ນທ້ອງກວ່ານີ້ດີ.

- ຮວ້າຍ! ຊິໃຫ້ຂ້ອຍເຮັດແນວໃດຊຸນ? ຂ້າຫມູນ້ອຍຈັກໂຕ
ຊັ້ນຫວະ? ເກົ້າ ເອດວກ ນິໂກລາຍວິດ ມັນຊິຍອມໃຫ້ບໍ້?

ກາລີນາ ອີວາໂນວິດ ອອກໄປຈັດການເລື່ອງອາຫານການກິນ
ເພື່ອຕ້ອນຮັບແຂກພິເສດຄືນນີ້, ຂ້າພະເຈົ້າຈຶ່ງພາວກັບໄປສົມທົບ
ນາງໂບໂກວາໃນທັນທີ, ເກືອບປານນັ້ນນາງກໍທັນໄດ້ທຳຕົວສະຫນິດ
ສະຫນົມເປັນກັນເອງກັບພວກເດັກນ້ອຍແລ້ວ ທັງບອກພວກເຂົາ
ວ່າ:

-ເອີ້ນຂ້ອຍວ່າ ມາເຣຍ ກົງດຣາແຕັບນາ ກໍໄດ້.

-ມາເຣຍ ກົງດຣາແຕັບນາ ຈັ້ນຫວະ? ໂອ້... ດີລະບໍ້, ຈັ້ນ ມາເຣຍ ກົງດຣາແຕັບນາ ເຊີນເບິ່ງທາງພີ້, ອັນນີ້ແມ່ນເຮືອນແກ້ວ ຂອງພວກເຮົາ. ພວກເຮົາສ້າງມັນຂຶ້ນເອງ, ຂ້ອຍເອງຟາດຫມາກ ຈົກ ຫມາກສຽມໃສ່ມັນຫລາຍບາດຢູ່ໃດ໋, ນີ້ເດ້... ມີຂ້ອຍຍັງເປັນ ຮອຍຢູ່ເລີຍ.

ກາຣາບານົບ ແບມືທີ່ເບິ່ງຄ້າຍຄືຫມາກຊ້ວານໃຫ້ ມາເຣຍ ກົງດຣາແຕັບນາ ເບິ່ງ.

-ມາເຣຍ ກົງດຣາແຕັບນາ, ຢ່າໄປເຊື່ອມັນ, ຮອຍນັ້ນເປັນ ຍ້ອນມັນພາຍເຮືອດອກ.

ມາເຣຍ ກົງດຣາແຕັບນາ ງວາກຫົວ ເຊິ່ງປົກຄຸມດ້ວຍເສັ້ນ ຜົມສີເຫລືອງຄໍາລອດຈາກຜ້າຄຸມຜົມໄປມາ, ເບິ່ງນາງບໍ່ສົນໃຈໃນ ເຮືອນແກ້ວຕະຫລອດຮອດຜົນສໍາເລັດອື່ນໆຂອງພວກເຮົາ ພໍປານ ໃດ.

ຜູ້ໃດຜູ້ຫນຶ່ງໄດ້ຊີ້ໃຫ້ນາງເບິ່ງເຮືອນຕຶກແດງນໍາ.

-ເປັນຫຍັງພວກເຈົ້າບໍ່ເຮັດໃຫ້ມັນແລ້ວລະ? -ນາງໂບໂກວາ ກາມຂຶ້ນ.

-ຜົooo ຣຸບ! ຊາໂດຣອບ ສອດຂຶ້ນທັນທີ.

-ແລ້ວພວກເຈົ້າບໍ່ມີເງິນແມ່ນບໍ່ລະ? ອ່າ ພວກອານາກາເອີຍ!

-ແຕ່ເຈົ້າມີແມ່ນບໍ່? ເຊມີຍົງ ກັດແຂ້ວເວົ້າ, -ຈັ່ງຊັ້ນພວກ ເຮົາຈະຕ້ອງເວົ້າຫຍັງນໍາກັນອີກ? ເອົາເຊີນ; ເຊີນນັ່ງລົງກັບເດີ່ນ ຫຍ້ານີ້ໂລດ.

ມາເຣຍ ກົງດຣາແຕັບນາ ນັ່ງລົງຢ່າງສະຫງ່າງາມເທິງເດີ່ນຫຍ້າໃກ້ໆກັບຕຶກແດງ, ພວກເດັກນ້ອຍຕ່າງກໍພາກັນພັນລະນາ ທາສີເຕີມແຕ່ງໃສ່ການດຳລົງຊີວິດອັນຄັບແຄບບຽດແຫຍ້ຂອງພວກເຮົາສູ່ນາງຟັງ ແລະ ເວົ້າເຖິງຄວາມສະດວກສະບາຍໃນອະນາຄົດ ເມື່ອໃດເຮືອນຕຶກແດງຫາກກັບຄືນສູ່ສະພາບປົກກະຕິຂອງມັນ.

-ເຈົ້າຮູ້ບໍ່, ດຽວນີ້ພວກເຮົາຊາວນິຄົມມີຢູ່ນຳກັນຮອດ ໘໐, ຕໍ່ໄປມັນຊິເປັນ ໑໒໐ ພຸ້ນໃດ... ເຈົ້າເຫັນບໍ່?

ກາລີນາ ອີວາໂນວິດ ມາຈາກສວນຜັກຕິດຕາມດ້ວຍ ໂອເລຍ ໂວໂຣໂນວາ ເຊິ່ງກືກ້ວຍດິນຂະໜາດໃຫຍ່ແບບພື້ນບ້ານມາສອງກ້ວຍ ພ້ອມດ້ວຍເຂົ້າຈີ່ດຳເຄິ່ງກ້ອນ. ມາເຣຍ ກົງດຣາແຕັບນາ ອຸທານວ່າ:

-ຟ້າເອີຍ! ມາເປັນຕາຮັກແທ້, ຢູ່ນີ້ອັນໃດກໍເປັນຕາຮັກຫມົດ, ແລ້ວພໍ່ເຖົ້ານັ້ນກໍຢູ່ນຳພວກເຈົ້າຫວະ? ລາວເປັນຄົນລ້ຽງເຜິ້ງຂອງພວກເຈົ້າແມ່ນບໍ່?

-ບໍ່ເດີ້, ຂ້ອຍບໍ່ໄດ້ເປັນຄົນລ້ຽງເຜິ້ງດອກ ແລະ ກໍທັງບໍ່ເຄີຍເປັນມາກ່ອນຈັກເທື່ອ, ກາລີນາ ອີວາໂນວິດ ເວົ້າທັງຍິ້ມຢ່າງແຈ່ມໃສ, -ແຕ່ນີ້, ຂ້ອຍມີນ້ຳນົມຊະນິດພິເສດດີກກວ່ານ້ຳເຜິ້ງທຸກຊະນິດພຸ້ນລະ, ເຊີນເຈົ້າດື່ມ, ຍານາງເອີຍ, ມັນບໍ່ແມ່ນວ່າຫນ້າຈົ່ງໃດກໍສາມາດຫານ້ຳນົມຊະນິດນີ້ມາໃຫ້ເຈົ້າດື່ມດອກເດີ້, ມີແຕ່ຫນ່ວຍອອກແຮງງານຂອງນິຄົມກ້ອກກີເທົ່ານັ້ນດອກ ທີ່ເຮັດໄດ້, ນາງເອີຍ... ເຊີນ ນ້ຳນົມສົດທັງຫອມທັງເຢັນ, ພະນັນກໍໄດ້ວ່າເຈົ້າບໍ່ເຄີຍດື່ມນ້ຳນົມແບບນີ້ມາກ່ອນໃນຊີວິດ.

ມາເຣຍ ກິງດຣາແຕັບນາ ດືບມືຄ່ອຍໆ ແລ້ວກໍ້ມລົງໄປຫາ ກ້ອຍດິນເຊິ່ງກາລີນາ ອີວາໂນວິດ ພວມຕັ້ງໃຈກອກນ້ຳນົມໃສ່ຢ່າງ ເຄັ່ງຂຶມ ພໍປານກຳລັງທຳພິທີທາງສາສະໜາຢູ່. ຊາໂດຣອບ ຟ້າວ ສວຍໂອກາດອັນເໝາະສົມນີ້ທັນທີ ໂດຍເວົ້າວ່າ:

-ພວກເຈົ້າມີເງິນຢູ່ລ້າງໆຕັ້ງ ໖໐໐໐ ຣຸບ, ສ່ວນວ່າພວກເຮົາ ຊ້ຳບໍ່ສາມາດສ້ອມແປງເຮືອນຫລັງນີ້, ແບບນີ້ຄືວ່າບໍ່ຍຸຕິທຳໃດນໍ້... ເຈົ້າວ່າບໍ່?

ມາເຣຍ ກິງດຣາແຕັບນາ ອືນນ້ຳນົມເຍັນລົງຄໍແລ້ວຈຶ່ມສຽງ ກົວຣູຄໍວ່າ:

-ມັນບໍ່ແມ່ນນ້ຳນົມດອກ, ແມ່ນນ້ຳທີ່ບມາແຕ່ສະຫວັນພຸ້ນ ດອກ, ຂ້ອຍບໍ່ເຄີຍດື່ມຈັກເທື່ອ.

-ຊັ້ນ ໖໐໐໐ ຣຸບຫັ້ນເດ້? -ຊາໂດຣອບ ສອດຂຶ້ນອີກທັງ ຍິ້ມໃສ່ໜ້ານາງກິງ ຢ່າງບໍ່ຈິງຈຽມ.

-ໂຍ້ວ ທ້າວນ້ອຍນີ້, ເຈົ້າແມ່ນນັກວັດຖຸນິຍົມອ້ອຍຕ້ອຍຕວ່າ ນີ້! ມາເຣຍ ກິງດຣາແຕັບນາ ເວົ້າຕໍ່ທັງລົວຕາໃສ່ບາດໜຶ່ງ, -ພວກ ເຈົ້າຕ້ອງການເງິນ ໖໐໐໐ ຣຸບ, ແລ້ວຂ້ອຍລະ, ຂ້ອຍຊິໄດ້ຫຍັງ ຕອບແທນ?

ຊາໂດຣອບກົ້ມແນງຕາໄປຮອບໆຕົວຢ່າງໝົດຫວັງ ຈາກນັ້ນ ກໍວາແຂນອອກກຽມພ້ອມທີ່ຈະສະເໜີຊັບສິນບັດທຸກຢ່າງ ເພື່ອ ແລກປ່ຽນກັບເງິນຈຳນວນນີ້, ການຣາບານົບບໍ່ຢຸດອັ້ງຢູ່ດົນ, ເຂົາ ເວົ້າຂຶ້ນວ່າ:

-ພວກເຮົາຊິເອົານ້ຳທິບໃຫ້ເຈົ້າຫລາຍທໍ່ໃດກໍໄດ້ ຕາມທີ່ເຈົ້າຕ້ອງການ.

-ແມ່ນຫຍັງເກາະ? ນ້ຳທິບອັນໃດ? ມາເຣຍ ກິງດຣາແຕັບນາ ການຄືນ, ໃບຫນ້າຂອງນາງແຈ່ມໃສໄປດ້ວຍຮອຍຍິ້ມ ຫລາກຫລາຍໄປດ້ວຍສີສັນພໍປານວິງແຫວນຟ້າ.

-ກະ ນ້ຳນົມເຢັນນີ້ເດ!

ມາເຣຍ ກິງດຣາແຕັບນາ ຫມູບຫນ້າລົງກັບເດີ່ນຫຍ້າ, ຫົວອອກມາແຮງງຢ່າງອິດບໍ່ໄຫວ.

-ຕາຍແລ້ວ! ບໍ່ເດີ້, ບໍ່... ບໍ່, ຢ່າເອົານ້ຳນົມພວກເຈົ້າມາລ້ຂ້ອຍກໍຢ່າ, ຂ້ອຍຊິໃຫ້ພວກເຈົ້າດອກອັນເງິນ ໓໐໐໐ ຣຸບ ຫັ້ນແຕ່ມີເງື່ອນໄຂວ່າ ພວກເຈົ້າຕ້ອງຮັບເອົາເດັກນ້ອຍອີກ ໔໐ ຄົນ. ພວກເດັກນ້ອຍທີ່ຫນ້າຮັກເຕີບ... ເກີງແມ່ນວ່າດງວນີ້ພວກເຂົາຍັງອ່າວດີດ້ານໄປແດ່ຈັກຫນ້ອຍກໍຕາມ.

ພວກເດັກນ້ອຍພາກັນເຮັດຫນ້າຂື່ມເຂົ້າ, ໂອເລຍ ໂວໂຣໂນວາ ແກວ່ງກ້ວຍດິນໄປມາ ພໍປານວ່າ ມັນແມ່ນຫມາກຕຸ້ມໂມງທັງຈົ້ງເບິ່ງ ມາເຣຍ ກິງດຣາແຕັບນາ ຢ່າງເຕັມຕາແລ້ວເວົ້າວ່າ:

-ຈັ່ງຊັ້ນຫວະ? ພວກເຮົາຊິຮັບເອົາພວກເຂົາດອກ.

-ພາຂ້ອຍໄປອາບນ້ຳດຸ, ຂ້ອຍຢາກນອນແລ້ວ... ສ່ວນເງິນ ໓໐໐໐ ນັ້ນພວກເຈົ້າຫາກຈະໄດ້ມັນດອກ.

-ແຕ່ເຈົ້າຍັງບໍ່ທັນເຫັນທົ່ງນາຂອງພວກເຮົາ.

-ມື້ອື່ນ ພວກເຮົາຈິ່ງອອກໄປເບິ່ງນຳກັນດີບໍ່?

ມາເຣຍ ກິງດຣາແຕັບນາ ພັກຢູ່ນຳພວກເຮົາສາມມື້. ນັບ

ແຕ່ແສງທຳອິດນັ້ນໂລດ ນາງໄດ້ຮູ້ຈັກມັກຄຸ້ນກັບເດັກນ້ອຍຕັ້ງຫລາຍຄົນ, ເອີ້ນພວກເຂົາດ້ວຍຊື່ນ້ອຍແລະຢູ່ໂອ້ລົມກັບພວກເຂົາຈົນເດິກ ໂດຍນັ່ງກັນຢູ່ເທິງແປ້ນມ້າໃນສວນເກົ່າ. ພວກເຂົາພານາງໄປຂີ່ເຮືອ, ຈຳໃຫ້ນາງຫລິ້ນເກມຕ່າງໆ, ຂີ່ໂອນຊາ ແຕ່ນາງກໍຍັງບໍ່ມີເວລາພໍທີ່ຈະອອກໄປເບິ່ງທົ່ງນາຊ້ຳ ທັງເຫລືອເວລາຫນ້ອຍເຕັມທີ ເພື່ອລົງລາຍເຊັນໃນຂໍ້ຕົກລົງອັນຫນຶ່ງຮ່ວມກັບຂ້າພະເຈົ້າ. ອີງໃສ່ຂໍ້ຕົກລົງດັ່ງກ່າວ ພະແນກປ້ອງກັນເດັກຈະມອບເງິນຈຳນວນ ໖໐໐໐ ຣຸບໃຫ້ພວກເຮົາ ເພື່ອໃຊ້ໃນການສ້ອມແປງເຮືອນຕຶກແດງ ແລະ ເມື່ອໃດການສ້ອມແປງສຳເລັດລົງ ພວກເຮົາກໍຈະຮັບເອົາເດັກນ້ອຍໄຮ້ຍາດຕື່ມອີກ ໔໐ ຄົນ.

ມາເຣຍ ກົງດຣາແຕັບນາ ພໍໃຈໃນນິຄົມພວກເຮົາຫລາຍ, ນາງເວົ້າວ່າ:

- ນິຄົມພວກເຈົ້າ ຕັ້ງແມ່ນສະຫວັນນ້ອຍໆບ່ອນຫນຶ່ງແທ້ໃດ, ພວກເດັກນ້ອຍກໍວິເສດທີ່ສຸດ, ຊິເວົ້າແນວໃດດີເນາະ...

- ພວກເຂົາແມ່ນເທວະດາອົງນ້ອຍໆແມ່ນບໍ່ລະ?

- ກະບໍ່ວ່າ, ບໍ່ແມ່ນເທວະດາດອກ ແຕ່ວ່າແມ່ນຄົນ, ຄົນແທ້ໆນັ້ນລະ.

ຂ້າພະເຈົ້າຈະບໍ່ອອກໄປສົ່ງມາເຣຍ, ບຣາເຊັນໂກ ບໍ່ໄດ້ຂັບລົດມ້າ ແລະ ຂົນຄົນມ້າກໍບໍ່ທັນກຶກກັກເປຍຊ້ຳ. ກາຣາບານົບ ໄດ້ຂຶ້ນໄປນັ່ງຢູ່ເທິງອານ ເຊິ່ງ ອານໂຕນມອບສິດໃຫ້ເຂົາຄອບຄອງດ້ວຍເຫດຜົນບາງປະການ, ແກ່ນຕາດຳປີ້ຂອງເຂົາທີ່ສ່ອງແສງແວວວັບ

ໂຮງຮຸ່ງໄປດ້ວຍຮອຍຍິ້ມເລີກລັບແຝງເລດໃນ ສາດກະຈາຍໄປທົ່ວ ເດິ່ນ.

- ເຊັນກັນແລ້ວຮຽບຮ້ອຍຫວະ ອານໂຕນ ເຊມິວໂນວິດ? ເຂົາຊົ່ມການຂ້າພະເຈົ້າຄ່ອຍ ໆ.

- ເອີ້.

- ວິເສດຫລາຍ, ຊັ້ນຂ້ອຍຊິພາບາງຄົນງາມຜູ້ນີ້ທ່ຽວຄັກໆ ກ່ອນ!

ຊາໂດຣອບ ບີບມື ມາເຣຍ ກົງດຣາແຕັບນາ ແລະ ເວົ້າວ່າ:

- ຊັ້ນລະດູຮ້ອນປີນີ້ ເຈົ້າມາພັກກັບພວກເຮົານໍ, ສັນຍາເດີ້.

- ສັນຍາໄດ້, ຂ້ອຍຈະມາອີກ, ຈະມາເຊົ່າເຮືອນໄມ້ນ້ອຍໆຢູ່ ແຖວນີ້ຈັກຫລັງ.

- ຊິໄປເຊົ່າເຮັດຫຍັງ? ມາຢູ່ກັບພວກເຮົາ...

ມາເຣຍ ກົງດຣາແຕັບນາ ກົ້ມຫົວຂໍ່ານັບພວກເຮົາ ທັງສົ່ງ ແສງຕາຫວານໃຫ້ທຸກໆຄົນ.

ເມື່ອກັບມາແຕ່ສະຖານີລົດໄຟ ກາຣາບານົບ ມີທ່າທາງວິຕົກ ກັງວົນແດ່ ໃນຂະນະທີ່ປົດມ້າອອກຈາກລົດ, ຊາໂດຣອບ ຜູ້ກໍາລັງ ຟັງເຂົາເວົ້ານັ້ນ ກໍມີທ່າທາງເປັນກັງວົນຄືກັນ. ຂ້າພະເຈົ້າຫຍັບ ເຂົ້າໄປຫາພວກເຂົາ ຈຶ່ງໄດ້ຍິນວ່າ:

- ເຮົາເວົ້າແລ້ວນ່າ ວ່າຊິຕ້ອງມີແມ່ມົດຈັກຄົນດອກມາຊ່ອຍ ພວກເຮົາ, ແລ້ວມັນກໍແມ່ນແທ້ ໆ.

- ມາເຣຍ ກົງດຣາແຕັບນາ ນັ້ນຫວະເປັນແມ່ມົດ? ໂຕເວົ້າ ຫຍັງແບບນີ້?

-ໂຕຄຶດວ່າ ແມ່ມົດຫັ້ນຍາມໃດກໍຕ້ອງຂີ່ກ້ານພອຍເຫາະເວີ່ນໄປມາສະເຫມີຊັ້ນດິ? ບໍ່ເດີ້, ແມ່ມົດແທ້ ໆ ຜູ້ງາມຈັ່ງຊີ້ລະ.

ບົດທີ ໔

ພໍ່ເຖົ້າອິດເຊນາດ

ນາງໂບໂກວາ ປະຕິບັດຕາມສັນຍາຂອງນາງແທ້, ອາທິດຫນຶ່ງຕໍ່ມາ ພວກເຮົາໄດ້ຮັບເຊັກເງິນຈຳນວນ ໖໐໐໐ ຣຸບ ຈັ່ງຊັ້ນໃຜໆກໍຈຶ່ງໄດ້ຍິນສຽງ ກາລີນາ ອີວາໂນວິດ ຮ້ອງຈົ່ມຢູ່ບໍ່ຂາດສົບຂາດປາກກ່ຽວກັບວຽກງານການກໍ່ສ້າງຄົງໃຫມ່ອັນນີ້. ຫນ່ວຍທີ ໔ ຂອງຕາຣາແບດ ກໍເປັນຄືກັນ ເພາະວ່າຫນ່ວຍນີ້ຮັບຫນ້າທີ່ເຮັດຂອບປະຕູ ປ່ອງຢ້ຽມດ້ວຍໄມ້ອ່າວຊຸ່ມນຳ. ກາລີນາ ອີວາໂນວິດ ຈົ່ມດ່າຜູ້ໃດຜູ້ຫນຶ່ງງຸມໆ ຜູ້ດຽວດ້ວຍກ້ອຍຄຳເຫລົ່ານີ້:

-ສາທຸ ເຂົາຍັດມັນມ້ຽນໃສ່ໂລງໄມ້ຊຸ່ມຫັ້ນເລີຍແດ່ແມ້ ໃຫ້ມັນຕາຍມັບເບິ່ງບັກຜາກໂຕນີ້ນ່າ.

ພຶດຕິກຳອັນສຸດທ້າຍແຫ່ງການຕໍ່ສູ້ໃນໄລຍະ ໔ ປີຂອງພວກເຮົາ ຕ້ານກັບຊາກຫັກພັງແຫ່ງ ແຕຣບແກ ເລີ່ມຕົ້ນຂຶ້ນແລ້ວ. ພວກເຮົາຫມົດທຸກຄົນນັບແຕ່ ກາລີນາ ອີວາໂນວິດຈົນຮອດ ຊູຣາເຊເວລີ ຕ່າງກໍພາກັນຢາກແລ້ວວຽກສ້ອມແປງເຮືອນໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້, ມັນຈຳເປັນຕ້ອງບັນລຸເຖິງເປົ້າຫມາຍແຫ່ງຄວາມຝັນ ເຊິ່ງຕິດຕາມຫລອກຫລອນເຮົາມາແຕ່ເຫິງນານນີ້ໃຫ້ໄດ້ໄວທີ່ສຸດ. ສ້າງປູນ, ການກາງຫຍ້າ, ການກາງທາງເຂົ້າສວນ, ການ

ມ້ຽນກ້ອນອິດດິນຈີ່ ແລະ ສິ່ງເສດເຫລືອຈາກການກໍ່ສ້າງທີ່ຮົກເຮື້ອຢູ່ເຕັມເດີ່ນທັງຫມົດເຫລົ່ານີ້ເລີ່ມກໍ່ກວນຈິດໃຈພວກເຮົາ ແລະ ພວກເຮົາກໍມີນຳກັນແຕ່ ໓໐ ຄົນເທົ່ານັ້ນ. ສະພານາຍກອງປະຈຳອາທິດ ໄດ້ຮຽກຮ້ອງຢ່າງຫນັກແຫນ້ນນຳ ແຊເຣີ ເພື່ອຂໍແຮງງານຕື່ມພິເສດອີກ ໓-໔ ກອງ ເຊິ່ງຈະເປັນຫນ່ວຍເຮັດອະນາໄມສະສາງເດີ່ນໃຫ້ພວກເຮົາ. ສ່ວນຫລວງຫລາຍແລ້ວພວກເຂົາຜິດຖຽງກັບ ແຊເຣີ ຊ້ຳ.

-ມັນໂພດໄປແລ້ວເດີ້! ໃນເຂດພວກເຈົ້າບໍ່ເຫັນມີຫຍັງເຮັດອີ່ຫຍັງກະແລ້ວຫມົດແລ້ວ!

ແຊເຣີ ດຶງເອົາປຶ້ມບັນທຶກທ້ອຍ ໆ ເຫລັ້ມຫນຶ່ງອອກມາຢ່າງງຽບໆ ແລ້ວກໍລົງມືຊີ້ແຈງໂດຍບໍ່ຂຶ້ນສຽງແຕ່ຢ່າງໃດວ່າ ກົງກັນຂ້າມຢູ່ໃນເຂດເຂົານັ້ນ ອັນໃດໆ ກໍ່ບໍ່ທັນໄດ້ເຮັດ, ວ່າພວກເຂົາມີວຽກເຮັດຢູ່ຢ່າງລົ້ນມືແລ້ວ ແລະ ກ້າຫາກວ່າເຂົາຈະໃຫ້ອີກ ໔ ກອງເພື່ອມ້ຽນເດີ່ນນັ້ນ ກໍແມ່ນຍ້ອນວ່າ ເຂົາເອງຮັບຮູ້ເຖິງຄວາມຈຳເປັນຂອງວຽກງານອັນນີ້ ບໍ່ເຊັ່ນນັ້ນແລ້ວເຂົາບໍ່ມີຕົກລົງດອກ ແລະ ຍັງຈະໃຫ້ຫນ່ວຍກອງເຫລົ່ານີ້ໄປໄຈ້ຄັດແກ່ນ ຫລືບໍ່ກໍສ້ອມແປງເຮືອນແກ້ວພຸ້ນແລ້ວ.

ພວກນາຍກອງພາກັນຈົ່ມພຸມໆດ້ວຍທ່າທີບໍ່ດີໃຈ ທັງນີ້ກໍຍ້ອນວ່າພວກເຂົາບໍ່ອາດສົມທົບຄວາມຮູ້ສຶກ ກົງກັນຂ້າມສອງຢ່າງເຂົ້າກັນໄດ້ງ່າຍໆ ຄືດ້ານຫນຶ່ງຄວາມໂມໂຫໂທໂສໃຫ້ ແຊເຣີ ທີ່ຄັດຄ້ານພວກເຂົາ ແລະ ອີກດ້ານຫນຶ່ງຄືຄວາມງຶດງໍ້ໃນຄວາມເດັດດ່ຽວຫນັກແຫນ້ນຂອງ ແຊເຣີ ເອງ.

ເວລານັ້ນ ແຊເຣີ ຫາກໍຈັດຕັ້ງວຽກງານປູກພືດຫມູນວຽນລະບົບ ໕ ປີແລ້ວ. ໃນບໍ່ດົນໃຜໆກໍສັງເກດເຫັນວ່າ ການກະສິກໍາຂອງພວກເຮົາໄດ້ຂະຫຍາຍຕົວພໍພຽງໃດ. ຊາວນິຄົມບາງຄົນສະແດງທ່າອຽງມັກໄປທາງວຽກງານກະສິກໍາຢ່າງເຫັນໄດ້ຄັກ ແລະ ໃນຈໍານວນເຫລົ່ານີ້ ໂອເລຍ ໂວໂຣໂນວາ ກໍແມ່ນຜູ້ຫນຶ່ງ. ກ້າຫາກວ່າ ກາຣາບານົບ, ໂວໂລຄອບ, ບູຣູນ ແລະ ອົດຊາຈີ ພໍອົກພໍໃຈໃນພື້ນແຜ່ນດິນ ແຕ່ນັ້ນມັນກໍພຽງຄວາມມັກແບບຫລົງໄຫລໃນຄວາມງາມຊື່ໆ, ພວກເຂົາບໍ່ມີແນວຄຶດເຫັນເຖິງຜົນປະໂຫຍດສ່ວນຕົວໃດໆ, ພວກເຂົາເກີດມີຄວາມຮູ້ສຶກອັນນີ້ ໂດຍບໍ່ຄຶດຫຍັງ ແລະ ທັງບໍ່ສ້າງຄວາມພົວພັນອັນໃດອັນຫນຶ່ງຂຶ້ນລະຫວ່າງວຽກນີ້ກັບອະນາຄົດຂອງພວກເຂົາ ຫລືແມ່ນແຕ່ກັບລົດນິຍົມອື່ນໆຂອງພວກເຂົາ. ພວກເຂົາດໍາລົງຊີວິດຢູ່ຊື່ໆ ແລະ ພໍອົກພໍໃຈນໍາຄວາມງາມແຫ່ງຊີວິດນີ້, ແຕ່ລະວັນຜ່ານໄປ, ພວກເຂົາພໍໃຈນໍາວຽກງານອັນຫນັກຫນ່ວງ ແລະ ຄອງຄອຍວັນໃຫມ່ຄືກັບວ່າ ມັນແມ່ນວັນບຸນວັນຫນຶ່ງ. ພວກເຂົາເຊື່ອຫມັ້ນວ່າ ວັນເວລາເຫລົ່ານີ້ຈະພາພວກເຂົາໄປປະສົບກັບຜົນສໍາເລັດທີ່ໃຫ້ຫມາກຜົນ ສ່ວນວ່າມັນຈະເປັນແນວໃດແທ້ນັ້ນ ພວກເຂົາບໍ່ສົນໃຈນໍາເລີຍ. ເວົ້າແທ້ແລ້ວຫມົດທຸກຄົນກຽມຕົວ ຢາກເຂົ້າຮຽນໃນມະຫາວິທະຍາໄລກໍາມະກອນ ແຕ່ຫາກບໍ່ໄດ້ກໍານົດຄວາມມຸ່ງຫວັງອັນໃດໄວ້ຢ່າງຄັກແນ່ ແລະກໍທັງບໍ່ຮູ້ຊໍ້າວ່າ ຕົນເອງຢາກເຂົ້າຮຽນຂະແຫນງໃດໃນມະຫາວິທະຍາໄລກໍາມະກອນ.

ມີຊາວນິຄົມອີກຈໍາພວກຫນຶ່ງ ເຊິ່ງກໍມັກໃນເລື່ອງກະສິກໍາຄືກັນ

ແຕ່ພວກນີ້ມີທັດສະນະຕິວຈິງກວ່າ. ພວກຜູ້ຊາຍ ເຊັ່ນ ໂອປຣິສ ໂກ ກັບ ເຟໂດເຣັງໂກ ນັ້ນບໍ່ຢາກເຂົ້າໂຮງຮຽນ ແລະ ໂດຍທົ່ວໄປແລ້ວ ພວກເຂົາບໍ່ມີຄວາມຮຽກຮ້ອງໃດໆພິເສດຕໍ່ຊີວິດ, ພວກເຂົາຄິດງ່າຍໆ ແລະ ກ່ອນຕົວວ່າ ສຳລັບຜູ້ຊາຍຄົນຫນຶ່ງແລ້ວບໍ່ມີອະນາຄົດອັນໃດງົດງາມໄປກວ່າການເຮັດໄຮ່ເຮັດນາ, ມີເຮືອນດີໆຈັກຫລັງ ມີມ້າເປັນຂອງຕົນເອງແລະມີເມຍຈັກຄົນ, ເຮັດວຽກໃນລະດູຮ້ອນຕັ້ງແຕ່ເຊົ້າເຖິງຄ່ຳ, ເຖິງລະດູໃບໄມ້ຫລົ່ນກໍເກັບກ່ຽວ ແລະ ມ້ຽນພືນລະປູກໄວ້ໃນຮົ້ວໃນສາງໃຫ້ຮຽບຮ້ອຍ, ໃນລະດູຫນາວກໍນັ່ງອ້ອຍອີ່ນກິນເຂົ້າຫນົມ ແລະ ຊິດແກງຜັກກາດຮ້ອນໆພ້ອມດ້ວຍເຂົ້າຈີ່ໃສ່ເນີຍ ຫມູເຄັມ ແລະໃນໂອກາດດີໆຈັກສອງເທື່ອຕໍ່ເດືອນ ກໍມ່ວນຊື່ນໃຫ້ຄັກໆຢູ່ເຮືອນໂຕເອງ ຫລື ເຮືອນຂ້າງຄຽງທີ່ມີການບອອກກຳ, ແຕ່ງດອງ, ວັນບຸນສາສະຫນາ ຫລື ອື່ນໆ.

ສ່ວນ ໂອເລຍ ໂວໂຣໂນວາ ເປັນອີກແບບຫນຶ່ງ ນາງເບິ່ງທົ່ງນາຂອງພວກເຮົາແລະ ທົ່ງທີ່ຢູ່ອ້ອມແອ້ມດ້ວຍແສງຕາຫ່ວງໃຍຄືຄຳນຶງຕາມແບບ ກົມໂຊໂມນ ຜູ້ຫນຶ່ງ. ສຳລັບນາງແລ້ວ ທົ່ງນາກໍໃຫ້ເກີດບັນຫາ ມັນບໍ່ພຽງແຕ່ເປັນບ່ອນເກີດເຂົ້າຫນົມແຜ່ນເທົ່ານັ້ນ.

ທົ່ງນາ ຜົວ ເຮັກຕາຂອງພວກເຮົາເຊິ່ງ ແຊເອີ ບຸກເບີກຢ່າງເອົາເປັນເອົາຕາຍນັ້ນ ບໍ່ໄດ້ເຮັດໃຫ້ເຂົາພ້ອມດ້ວຍລູກສິດຂອງເຂົາສູນເສຍຄວາມຝັນເຖິງແຫລ່ງຜະລິດຂະຫນາດໃຫຍ່ ທີ່ມີລົດໄຖແລ່ນກົ້ງວລະກິໂລແມັດເລີຍ. ແຊເອີ ຮູ້ຈັກເວົ້າຮອດບັນຫານີ້ກັບ

ສະມາຊິກນິຄົມ ຈັ່ງຊັ້ນ ຈຶ່ງເກີດມີກຸ່ມນັກຟັງຂຶ້ນກຸ່ມຫນຶ່ງຢູ່ອ້ອມໆ ໂຕະສະເຫມີ. ນອກຈາກຊາວນິຄົມຂອງພວກເຮົາເອງແລ້ວ ໃນກຸ່ມນີ້ຍັງມີສະມາຊິກປະຈຳອື່ນໆອີກຄື ສະປີຣິດົງ, ເລຂາຊາວຫນຸ່ມກົມໂຊໂມນ ເຂດກົງຊາຣອບກາ ແລະ ປາແວນ ປາວະໂລວິດ.

ປາແວນ ປາວະໂລວິດ ມີອາຍຸໄດ້ ໒໖ ປີແລ້ວ ແຕ່ຍັງເປັນບ່າວໂສດຢູ່. ຢູ່ໃນບ້ານຊົນນະບົດແບບນີ້ ເຂົາຈຶ່ງກາຍເປັນອ້າຍບ່າວເກົ້າຄົນຫນຶ່ງໄປ. ພໍ່ຂອງເຂົາຄືພໍ່ເກົ້ານິໂກລາຍເຢັງໂກ ນັ້ນໄດ້ປັບແປງຕົວກາຍມາເປັນຊາວນາຮັ່ງ ຕໍ່ຫນ້າຕໍ່ຕາພວກເຮົາໂດຍການຂູດຮີດເດັກນ້ອຍພະເນຈອນທີ່ມາສະຫມັກເປັນບ່າວນານຳ ແຕ່ໃນເວລາດຽວກັນລາວກໍຊ້ຳວາງທ່າເປັນຊາວນາທຸກຜູ້ຫນັກແຫນ້ນຄົນຫນຶ່ງ.

ຈັ່ງຊັ້ນອາດເປັນຍ້ອນເຫດນີ້ເອງກໍໄດ້ ທີ່ ປາແວນ ປາວະໂລວິດ ຈຶ່ງບໍ່ມັກຢູ່ເຮືອນພໍ່ຕົນເອງປານໃດ ແລະ ມັກໃຊ້ເວລາຫວ່າງທັງຫມົດຢູ່ໃນນິຄົມ, ສະຫມັກເຂົ້າເຮັດວຽກນຳ ແຊເຣີ ໂດຍເປັນຜູ້ປະຕິບັດວຽກງານກ່ຽວກັບການປູກຝັງ ອັນທີ່ຕ້ອງໃຊ້ຄວາມລະມັດລະວັງກວ່າຫມູ່ ທັງກະທຳຕົວເປັນຄູເຝິກຄົນຫນຶ່ງສຳລັບພວກນິຄົມ. ປາແວນ ປາວະໂລວິດເປັນນັກອ່ານຫນັງສືຄົນຫນຶ່ງ ແລະສາມາດຕິດຕາມຟັງບົດຮຽນຂອງ ແຊເຣີ ດ້ວຍຄວາມເອົາໃຈໃສ່ເປັນທີ່ສຸດ.

ທັງສອງຄື ປາແວນ ປາວະໂລວິດ ກັບ ສະປີຣິດົງ ນີ້ມີທ່າອຽງຫັນປ່ຽນຫົວຂໍ້ສົນທະນາໄປຫາເລື່ອງພວກຊາວນາເລື້ອຍໆ ພວກເຂົາຄຶດແຕ່ວ່າການພະລິດຂະຫນາດໃຫຍ່ນັ້ນ ສາມາດເກີດຂຶ້ນໄດ້ກໍ

ແຕ່ໃນຂົງເຂດການເຮັດໄຮ່ໄກບາເທົ່ານັ້ນ. ໂອເລຍ ໂວໂຣໂນວາ ຈ້ອງຕາເບິ່ງພວກເຂົາຢ່າງເອົາໃຈໃສ່, ແກ່ນຕາສີນ້ຳອ້ອຍຂອງນາງຮຸ່ງໂຮງເປັ່ງແປວແຫ່ງຄວາມເຂົ້າອົກເຂົ້າໃຈ ເມື່ອ ປາແວນ ປາວະໂລວິດ ເວົ້າສຽງຫນັກແຫນ້ນວ່າ:

-ເຮົາຄິດແບບນີ້: ຢູ່ອ້ອມຂ້າງພວກເຮົາ ຜູ້ຄົນພາກັນເຮັດວຽກຊື່ລົ້ມຊື່ຕາຍແຕ່ຊ້ຳເຮັດແບບບໍ່ມີຫລັກມີເກນ. ເພື່ອເຮັດວຽກຢ່າງມີຜົນ ຈຳເປັນຕ້ອງຮ່ຳຮຽນກ່ອນ ແຕ່ແມ່ນໃຜລະຈະມາສອນພວກເຮົາ? ຊາວນາຫວະ? ແລ້ວທັ່ນນະ! ແຕ່ອັນຊິສອນພວກເຂົານີ້ ກໍຍາກພໍແຮງແລ້ວ. ເບິ່ງແມ້ຕັ້ງແຕ່ ເອດວກ ນິໂກລາຍວິດ ຫັ້ນເດ໋ ເຂົາໄດ້ຄິດໄລ່ ແລະ ເລົ່າທຸກຢ່າງໃຫ້ພວກເຮົາຟັງຫມົດ, ກືກແລ້ວແນວນັ້ນນະ... ແບບນີ້ຈຶ່ງເອີ້ນວ່າເຮັດວຽກ! ແຕ່ພວກຜືເພດນີ້ຕີ ພວກເຂົາຈະບໍ່ເຮັດຫຍັງແບບນີ້ເລີຍ! ພວກເຂົາຊອມແຕ່ຈະເຮັດໄປຕາມໃຈທັ່ນນັ້ນ.

-ຊັ້ນພວກນີ້ຄົມເດ໋, ພວກນີ້ຮູ້ຈັກເຮັດວຽກຫວະ? ສະປີຣິດົງ ບ່າວນ້ອຍປາກອ່າວກວ້າງຊິງສະຫລຽວສະຫລາດ ການຂົ້ນຢ່າງລະມັດລະວັງ.

-ພວກນີ້ຄົມຫວະ, ປາແວນ ປາວະໂລວິດ ເວົ້າພ້ອມດ້ວຍຮອຍຍິ້ມແບບກົນແຫນງໃຈ, ພວກນີ້ຄົມແມ່ນບັນຫາຫນຶ່ງຕ່າງຫາກ.

ໂອເລຍ ກໍຍິ້ມ ທັງເອົາມືປະສານກັນ ຄື ເພື່ອຈະແກະຫມາກກໍ່ ຈາກນັ້ນດ້ວຍອັບປະກິລິຍາວ່ອງໄວ ນາງຊ້ຳເສືອດຕາຂຶ້ນໄປເບິ່ງປາຍຕົ້ນໄມ້ໃຫຍ່ພຸ່ມ. ຜົມເປຍສີຄຳຂອງນາງເພື່ອກົ້ງຢູ່ເທິງບ່າໄຫລ່,

ດວງຕາສີຫມົ່ນຊຶງເຄັ່ງຂຶມຂອງ ປາແວນ ປາວະໂລວິດກໍໄດ້ແນມນຳນາງໄປຢ່າງເອົາໃຈໃສ່.

- ພວກນິຄົມບໍ່ໄດ້ເກີດມາຄູ່ກັບທີ່ດິນ ແຕ່ພວກເຂົາເຮັດວຽກຢ່າງຖືກຕ້ອງ ສ່ວນຊາວນາດີ ພວກເຂົາຕ້ອງຢູ່ກັບດິນຕະຫລອດຊີວິດ, ພວກເຂົາມີລູກ ແລະ ສິ່ງອື່ນໆ...

- ອ້າວ! ແລ້ວເປັນແນວໃດລະ? ສະປີຣິດົງ ບໍ່ເຂົ້າໃຈ.

- ໂຢ້ວ ມັນກະຈະແຈ້ງແລ້ວຕວ່າ! ໂອເລຍ ເວົ້າຂຶ້ນ, ນ້ຳສຽງສະແດງຄວາມປະຫລາດໃຈ, ພວກຊາວນາຕ້ອງເຮັດວຽກຮ່ວມກັນໃຫ້ດີກວ່ານີ້ອີກ.

- ຈັ່ງໃດຈຶ່ງວ່າແນວນີ້? ຈຶ່ງວ່າພວກເຂົາຕ້ອງເຮັດຫັ້ນນະ? ປາແວນ ປາວະໂລວິດ ຖາມນ້ຳສຽງແຜງໄມຕີ.

ໂອເລຍ ຈຶ່ງເບິ່ງເຂົາດ້ວຍແສງຕາເຄັ່ງຂຶມ ຈົນ ປາແວນ ປາວະໂລວິດ ລືມເຫັນພົມເປຍຂອງນາງໄປຊົ່ວຄາວ ເຂົາແນມເຫັນແຕ່ແສງຕາເຄັ່ງຂຶມ ທີ່ບໍ່ໄດ່ເຫັນເລື້ອຍຢູ່ໃນຕົວຍິງສາວໄວອ່ອນນ້ອຍແບບນີ້.

- ພວກເຂົາຕ້ອງເຮັດ! ໂອເລຍ ເວົ້າຍ້ຳ - ເຈົ້າບໍ່ເຂົ້າໃຈຫວະວ່າ "ຕ້ອງເຮັດ" ຫມາຍຄວາມວ່າແນວໃດ? ມັນແຈ້ງຄືກັບ ສອງສົມສອງເປັນສີ່ ນັ້ນຕວ່າ.

ກາຣາບານົບ ກັບ ບູຣູນ ກໍຢູ່ໃນວົງສົນທະນານີ້ຄືກັນ. ສຳລັບພວກເຂົາແລ້ວ ບັນຫານີ້ມີຄວາມຫມາຍແຕ່ໃນແງ່ທິດສະດີເທົ່ານັ້ນ, ບໍ່ມີຫຍັງຫນ້າສົນໃຈເລີຍ ຄືງ ກັບການສົນທະນາທັງຫມົດກ່ຽວກັບພວກ "ມູຊິກ" ເຫລົ່ານີ້ ເຊິ່ງພວກເຂົາຕັດແຍກອອກ

ຈາກຕົວເອງໄດ້ຢ່າງເດັດຂາດຕະຫລອດໄປແລ້ວນີ້. ແຕ່ທ່າທີອັນເຄັ່ງຂຶມຂອງການໂອ້ລົມ ເຮັດໃຫ້ ກາຣາບານົບ ຄຶດມ່ວນຂຶ້ນນຳ ແລະ ເຂົາກໍບໍ່ສາມາດຍັບຍັ້ງ ໃຈຕົນເອງບໍ່ເຂົ້າຮ່ວມໃນສົງຄາມຍ່ອຍແຫ່ງຄາລົມອັນນີ້.

-ໂອເລຍ ເວົ້າຖືກແລ້ວ, "ພວກເຂົາຕ້ອງເຮັດ", ໝາຍຄວາມວ່າເຂົາຕ້ອງລົງມື, ຕ້ອງບັງຄັບພວກເຂົາ..,

-ແລ້ວໂຕຊິໄປບັງຄັບພວກເຂົາແບບໃດລະ? ປາແວນ ປາວະໂລວິດ ຖາມຂຶ້ນ,

-ແບບໃດກະໄດ້! ເຊມີຍົງ ຕອບແບບຄົນໃຈຮ້ອນ, ເພິ່ນບັງຄັບແບບໃດແດ່ຊັ້ນ? ດ້ວຍກຳລັງຫັ້ນເດ໋! ເກັບພວກ "ມູຊິກ" ໂຕທັງຫມົດມາໃຫ້ເຮົາແມ້, ພາຍໃນອາທິດຫນຶ່ງ ເຮົາຊິເຮັດໃຫ້ພວກເຂົາເຮັດວຽກໃຫ້ເບິ່ງ, ເອົາປານແກະນ້ອຍພຸ້ນລະ ແລ້ວອີກສອງອາທິດຕໍ່ມາພວກເຂົາກໍຈະພາກັນມາຂອບອົກຂອບໃຈເຮົາ.

ປາແວນ ປາວະໂລວິດ ຢູ່ຫົວຄິ້ວເຂົ້າກັນ.

-ໂຕຫມາຍຄວາມວ່າແນວໃດ ອັນໃຊ້ກຳລັງຫັ້ນນະ? ເອົາກຳລັງຫັ້ນນະ? ເອົາກຳປັ້ນຟາດປາກພວກເຂົາຊັ້ນຫວະ?

ເຊມີຍົງ ນອນເຫມບລົງກັບມ້ານັ່ງທັງຫົວ ສ່ວນບູຣູນ ອະທິບາຍ ນ້ຳສຽງເປັນການ ແຜງເຍາະເຍີ້ຍວ່າ:

-ເອົາກຳປັ້ນຍັດປາກມັນຍັງຄ່ອຍດອກ! ເອົາປືນພຸ້ນລະບໍ້ ມັນຈິ່ງສັກສິດແທ້.

ໂອເລຍ ຫັນຫນ້າໄປຫາເຂົາຊ້າງ ແລ້ວກໍສັ່ງສອນຢ່າງໃຈເຢັນວ່າ:

-ຊັ້ນແປວ່າເຈົ້າບໍ່ເຂົ້າໃຈເລີຍເນາະ ວ່າກຳກຳມະກອນເຂົາບໍ່ຢາກເຮັດອັນໃດອັນຫນຶ່ງແລ້ວຕໍ່ໃຫ້ເອົາປືນຈີ້ເຂົາກໍບໍ່ເຮັດ, ພວກເຂົາຈະເຮັດວຽກງານນັ້ນເອງ ພໍພຽງແຕ່ເວົ້າກັບເຂົາຢ່າງເຫມາະສົມ, ອະທິບາຍໃຫ້ເຂົາເຂົ້າໃຈ.

ເຊມີຍົງ ໂງຫົວຂຶ້ນຈາກຕັ່ງ ເຮັດຕາຕີ່ໃສ່ໂອເລຍ ແລ້ວເວົ້າວ່າ:

-ໂອ່... ໂອເລຍ! ເຈົ້າກຳລັງຄິດຜິດແລ້ວ! ອະທິບາຍໃຫ້ພວກເຂົາວ່າຕີ! ໂດໄດ້ຍິນບໍ່ ບູຣູນ, ໂທ້ເອີຍ! ເຈົ້າຊິເອົາຫຍັງໄປອະທິບາຍກັບພວກເຂົາໃນເມື່ອວ່າພວກເຂົາຢາກເປັນຄົນຮັ່ງ?

-ອັນແມ່ນໃຜເກາະຢາກເປັນຄົນຮັ່ງຫັ້ນເກາະ? ໂອເລຍ ຖາມຕໍ່ເຮັດຕາຕີ່ກົ້ງດ້ວຍຄວາມໂມໂຫ.

-ແມ່ນໃຜຊັ້ນຫວະ? ພວກເຂົາຫມົດທຸກຄົນຫັ້ນແລ້ວ ນັບແຕ່ ສະປີຣີດົງ... ເອົ໋າ ປາແວນ ປາວະໂລວິດ ນຳ, ຫມົດທຸກຄົນ!

ປາແວນ ປາວະໂລວິດ ຫົວ ສ່ວນສະປີຣີດົງ ເຊິ່ງກາຍເປັນເປົ້າໂຈມຕີຢ່າງບໍ່ຄາດຝັນ ກໍໄດ້ແຕ່ຈົ່ມວ່າ:

-ເວົ້າໂພດໄປດອກ!

-ວ່າໂພດໄປຊັ້ນຫວະ! ກາຣາບານົບ ເວົ້າຍ້ຳ, -ມັນມາເຂົ້າກົມໂຊໂມນກໍຍອມວ່າ ບໍ່ມີດິນຈັກເມັດວ່າແດ່, ລອງໃຫ້ດິນມັນຈັກ ໒໐ ເຮັກຕາດູ, ງົວໂຕຫນຶ່ງ, ແກະຈັກໂຕ ກັບມ້າດີໆໂຕຫນຶ່ງເບິ່ງດູຄັນບໍ່ຄຸບໄວປານຫຍັງນະ ແລະ ເຈົ້າຫັ້ນອີນາງເອີຍ ບໍ່ດົນກະຊິກືກມັນຈູງດັງຄືກັນຫັ້ນລະ!

ບູຮູບຫົວຂຶ້ນແຮງໆ ແລະ ເວົ້າຢືນຢັນ ວາງທ່າທີເປັນຜູ້ມີອຳ
ນາດວ່າ:

- ມັນກໍຢາກໄດ້ແຕ່ທໍ່ນັ້ນລະ, ປາແວນ ເອງກໍຄືກັນຫັ້ນລະ!

- ຊິໄປຕາມທາງໃດກໍໄປເທາະເວີຍ, ພວກຂີ້ສູດ! ສະປີຣິດົງ
ຮ້ອງຂຶ້ນ, ໃນທີ່ສຸດເຂົາກໍໂມໂຫ ຫນ້າແດງຮຶນ ທັງກຳກຳປັ້ນ
ແຫນ້ນ.

ເຊມີຍົງ ຍ່າງວົນອ້ອມແປັນມ້າ ທັງຍົກແຂ່ງຍົກຂາຂຶ້ນສູງໆ
ອັນເປັນການສະແດງເຖິງຄວາມປິ້ມປີຕິສຸດຂີດຂອງເຂົາ. ເປັນການ
ຍາກທີ່ຈະເບິ່ງອອກວ່າ ເຂົາເວົ້າແທ້ ໆ ຫລືພໍພຽງແຕ່ເປັນການ
ຍົວະໃຫ້ພວກຫມູ່ເປັນພືນເປັນໄຟລ້າ ໆ.

ຊີລັນຕີ ເຊມີວໂນວິດ ອິດເຊນາດ ນັ່ງຢູ່ເດີ່ນຫຍ້າ ແລະ ຫັນ
ຫນ້າມາທາງແປັນມ້າ. ຫົວຂອງລາວມີນອຸ້ມລຸ້ມພໍປານ "ກະໂລ່ງ
ຫມັກເບຍ", ໃບຫນ້າແດງເປັນປ່າມ, ຫນວດຕັດທ້ຽນປາສະ
ຈາກສີສັນໃດໆ ແລະ ຫົວກໍບໍ່ມີຜົມຈັກເສັ້ນ, ຄົນປະເພດນີ້ນັບວ່າ
ຫາຍາກເຕັມທີແລ້ວໃນທຸກວັນນີ້, ແຕ່ສະໄຫມກ່ອນພຸ້ນ, ຄົນປະ
ເພດນັກປັດຊະຍາຮອບຮູ້ທຸກສິ່ງທຸກຢ່າງໃນຊີວິດ ແລະ ລັດຊາດ
ຂອງເຫລົ່າວິດກາທຸກຊະນິດແບບນີ້ ມີຢູ່ຢ່າງຫລວງຫລາຍໃນເຂດ
ລັດເຊຍ.

- ເຊມີຍົງ ເວົ້າຄວາມຈິງ, ຊາວນາບໍ່ເຂົ້າໃຈເລື່ອງການຢູ່ໂຮມ
ຫມູ່ດອກ, ຄືເພິ່ນວ່ານັ້ນລະ, ສົມມຸດວ່າເຂົາມີມ້າໂຕຫນຶ່ງ ເຂົາ
ຊໍ້າຢາກໄດ້ອີກໂຕຫນຶ່ງເພື່ອໃຫ້ມີສອງໂຕທໍ່ນັ້ນລະ, ເຈົ້າເຫັນບໍ່
ເປັນຈັ່ງຊັ້ນລະ.

ອິດເຊບາດ ແກວ່ງກຳປັ້ນໄປມາ, ມີນ້ວຊີ້ແຕກໂປກຂອງລາວ ຢຽດຊີ້ຂຶ້ນ, ດວງຕາມີແວວສະຫລາດ ຄູ່ນ້ອຍໆພາຍໃຕ້ຂົນຕາສີ ຫມົ່ນຂາວລື່ວຕີບເຂົ້າຫນ້ອຍຫນຶ່ງ.

- ຈັ່ງຊັ້ນ ຫມາຍຄວາມວ່າມ້າຫັ້ນຫາວະບັນຊາຄົນນະ? ສະປີຣີ ດີງການດ້ວຍຄວາມໃຈຮ້າຍ.

- ວ່າຈັ່ງຊັ້ນກະຖືກຄືກັນ ມ້າຫັ້ນລະເປັນນາຍຄົນ, ເລື່ອງມັນ ເປັນແບບນີ້ລະ. ທັງມ້າ ທັງງົວນຳກັນຫັ້ນແລ້ວ ຄັນຜູ້ໃດບໍ່ມີສັດ ສອງປະເພດນີ້ ກະມີຫວັງໄດ້ເປັນແຕ່ຄົນເຝົ້າສວນແຕງທໍ່ນັ້ນລະ, ໂຕເຂົ້າໃຈບໍ່? ເຫັນບໍ່ມັນເປັນຊັ້ນລະ.

ພວກເຮົາທຸກຄົນໃນນິຄົມ ພາກັນຮັກແພງພໍ່ເກົ້າ ອິດເຊບາດ ຫມິດ ແລະໂອເວຍ ໂວໂຣໂບວາ ກໍສະແດງອອກວ່າມີຄວາມຮັກ ແພງລາວຫລາຍ, ບັດນີ້ນາງກໍກົ້ມຫົວໄປຫາ ຊີລັນຕີ ຢ່າງມີນ້ຳ ໃຈໄມຕີ, ທາງຝ່າຍນີ້ ກໍປັ້ນຫນ້າຍິ້ມແຍ້ມຢ່າງເຕັມຢຽດບົ້ນມາຫາ ນາງ ພໍປານວ່າລາວກຳລັງຫັນໄປເບິ່ງຕາເວັນ.

- ວ່າຈັ່ງໃດອີກສາວຫລ້າ?

- ເຈົ້າຫັ້ນຫລ້າຫລັງຫລາຍ ຊີລັນຕີ, ເຈົ້າເບິ່ງທຸກຢ່າງຄືກັບ ສະໄຫມກ່ອນພຸ້ນແຕ່ວ່າດຽວນີ້ທຸກຢ່າງມັນປ່ຽນໄປແລ້ວເດ້.

ຊີລັນຕີ ເຊມິວໂນວິດ ອິດເຊບາດ ມາຢູ່ນຳພວກເຮົາໂດຍທີ່ບໍ່ ມີໃຜຮູ້ວ່າລາວມາແຕ່ໃສ, ອາດຈະມາຈາກຕ່າງດາວຟາກຟ້າ ແບບທີ່ວ່າບໍ່ມີສາຍພົວພັນໃດໆກັບສິ່ງອ້ອມຂ້າງ ຫລືວັດຖຸໃດໆ. ລາວມີພຽງເສື້ອຜ້າຫນາງໆຕົວຫນຶ່ງພາດບ່າມານຳ, ຊົ້ງຂາຍາວໂຕ ເກົ່າໆ ແລະຕີນເປົ່າເປືອຍ... ມີເທົ່ານີ້ເອງເຄື່ອງຕິດໂຕລາວ, ບໍ່ມີ

ຮອດຄ້ອນເທົ່າຈັກອັນ, ຍ້ອນລັກສະນະປະຫລາດອັນນີ້ຂອງລາວ, ຊາຍອິດສະຫລະຄົນນີ້ ຈຶ່ງເປັນທີ່ກືກອົກກືກໃຈພວກເດັກນ້ອຍຫລາຍ, ພວກເຂົາພາລາວເຂົ້າມາຫາຂ້າພະເຈົ້າທີ່ຫ້ອງການດ້ວຍຄວາມພໍອົກພໍໃຈ.

-ອານໂຕນ ເຊມີວໂນວິດ ເບິ່ງແມ້ ພວກເຮົາໄດ້ໃຜມາໃຫ້ເຈົ້ານີ້ນ່າ!

ຊີລັນຕີ ແນມເບິ່ງຂ້າພະເຈົ້າດ້ວຍຄວາມສົນໃຈ ທັງຍິ້ມກັບພວກເດັກນ້ອຍພໍປານວ່າ ລາວລື້ງແກ່ນກັບພວກເຂົາມາແຕ່ດົນແລ້ວ.

-ແມ່ນຜູ້ທີ່... ເອີ... ຊິວ່າອຳນວຍການພວກເຈົ້າຫັ້ນຫວະ? ບໍ່ພໍຄາວ ຂ້າພະເຈົ້າກໍ່ຮູ້ສຶກກືກຊາດາກັບລາວຄືກັນ.

-ເຈົ້າມາເພື່ອຊິເຮັດວຽກກັບພວກເຮົາບໍ່?

ຊີລັນຕີ ບັບແປງອັນໃດອັນຫນຶ່ງຢູ່ໃນຕົວລາວ ອັນເຮັດໃຫ້ລາວເກີດມີທ່າທາງວ່ອງໄວເປັນຕາໄວ້ອົກໄວ້ໃຈຂຶ້ນທັນທີ.

-ຄືວ່າມັນເປັນແນວນີ້ນ່າ, ເຫັນບໍ່ມັນເປັນແນວນີ້ລະ ຂ້ອຍພວມຊອກວຽກເຮັດແລ້ວມັນກໍ່ມີອັນເຮັດຢູ່ນີ້, ກະຫັ້ນນະລະ...

-ແລ້ວເຈົ້າສາມາດເຮັດຫຍັງໄດ້ແດ່ລະ?

-ບ່າ... ມັນກະຄືສຸພາສິດວ່າໄວ້ນັ້ນເດ໋ ຍາມທ້ອງເປົ່າຄົນເຮົາສາມາດເຮັດໄດ້ທຸກຢ່າງ.

ລາວຫົວອຶກກຶຂຶ້ນ ມັນເປັນສຽງຫົວແບບຈິງໃຈ ແລະ ສົດຊື່ນຢ່າງຫນຶ່ງ ພວກເດັກນ້ອຍທີ່ຈ້ອງເບິ່ງລາວຢູ່ແລ້ວກໍ່ພາກັນຫົວຂຶ້ນແລະ ຂ້າພະເຈົ້າເອງກໍ່ຄືກັນ. ມັນເປັນສິ່ງຈະແຈ້ງສຳລັບທຸກໆຄົນ

ແລ້ວວ່າ ພວກເຮົາມີເຫດພົບພຽງພໍເພື່ອສະແດງຄວາມດີໃຈນຳກັນ.

-ຊັ້ນແປວ່າ ເຈົ້າຮູ້ຈັກເຮັດທຸກຢ່າງແມ່ນບໍ່?

-ຫມົດທຸກຢ່າງ... ຢາກວ່າຈັ່ງຊັ້ນກໍໄດ້, ເຫັນບໍ່ມັນເປັນແນວນີ້ລະ, ຊີລັນຕີ ຍອມຮັບ, ທ່າທີເລີ່ມເກີເຂີນຂຶ້ນແດ່ຫນ້ອຍຫນຶ່ງແລ້ວ.

-ແຕ່ວ່າ ແມ່ນຫຍັງແທ້ ໆ ລະ? ຍົກຕົວຢ່າງເບິ່ງ?

ຊີລັນຕີ ນັບນິ້ວມື ທັງພັບມັນເຂົ້າພ້ອມ.

-ເບິ່ງເດີ້... ມີໄກ, ຄາດ, ຕື່ມອີກອັນຫນຶ່ງ ລ້ຽງມ້າ ແລະ ສັດປະເພດອື່ນໆ ທຸກຢ່າງອັນນີ້ກະໄດ້ຄືກັນ, ນອກນີ້ກໍແມ່ນວຽກກ່ຽວກັບເຮືອນກັບຊານ ຊ່າງໄມ້ເບາະ, ຊ່າງຕີເຫລັກ, ຊ່າງເຕົາເບາະ, ຊ່າງທາສີກໍໄດ້... ຊ່າງແປງເກີບກໍເປັນ. ຕ້ອງປຸກເຮືອນຈັກຫລັງເບາະ ຂ້ອຍກໍເຮັດນຳໄດ້... ຫລືວ່າ ຂ້າຫມູນ້ອຍຈັກໂຕກໍສະບາຍ ມີແຕ່ອັນດຽວທີ່ເຮັດນຳບໍ່ໄດ້ ເປັນພໍ່ລ້ຽງເດັກນ້ອຍຢູ່ໂບດ ອັນນີ້ຍັງບໍ່ເຄີຍຈັກເທື່ອ.

ລາວຫົວຂຶ້ນແຮງໆ ທັງເຊັດນ້ຳຕາທີ່ຍື້ມອອກຈາກເບົ້າຕາ, ຈັ່ງແມ່ນລາວເຫັນວ່າສິ່ງເຫລົ່ານີ້ຫນ້າຢາກຫົວ.

-ບໍ່ເຄີຍຈັກເທື່ອ ຊັ້ນຫວະ? ເປັນຫຍັງລະ?

-ບໍ່ມີໃຜຫາຈັກເທື່ອເດ້, ເຫັນບໍ່ມັນເປັນຈັ່ງຊັ້ນລະ.

ພວກເດັກນ້ອຍບໍ່ສາມາດອົດກັ້ນຕໍ່ໄປໄດ້ ຈຶ່ງພາກັນຫົວຂຶ້ນຢ່າງເຕັມຍຽດ, ໂຕສະກາໂຊໂລແວັບ ຮ້ອງຂຶ້ນຈ໊ອດ ໆ ທັງຍືນຢ່ຳຢີ້ຫັນໄປຫາ ຊີລັນຕີ ແລ້ວເວົ້າວ່າ:

- ແລ້ວເປັນຫຍັງເພິ່ນຈຶ່ງບໍ່ຫາເຈົ້າລະ? ເປັນຫຍັງຮື?

ຊີລັນຕີ ວາງທ່າທາງໃຫ້ເຄັ່ງຂຶມຄືນ ແລະ ເວົ້າອະທິບາຍໃຫ້ໂຕສະກາ ດ້ວຍທ່າທີຂອງຄູສອນທີ່ດີຄົນໜຶ່ງວ່າ:

- ຫລ້າເອີຍ, ມັນເປັນຈັ່ງຊັ້ນລະ... ຢູ່ບຸນອອກກໍາແຕ່ລະຄັ້ງ ຂ້ອຍກໍຄິດໄວ້ຜູ້ດຽວວ່າ ບາດນີ້ລະເຂົາຊິຊໃຫ້ມຶງເປັນພໍ່ລ້ຽງນະ... ແຕ່ສຸດທ້າຍເຂົາກໍຫາໄດ້ຜູ້ໃຫມ່ ຜູ້ທີ່ຮັ່ງມີກວ່າ, ກະມີທັ້ນນະ.

- ເຈົ້າມີບັດປະຈໍາຕົວບໍ່? ຂ້າພະເຈົ້າຖາມຂຶ້ນ.

- ບັດປະຈໍາຕົວຂອງຂ້ອຍຫວະ, ມີແທ້, ຫວ່າງບໍ່ດົນນີ້ເອງແຫລະ ແຕ່ວ່າ, ມັນເປັນຈັ່ງຊັ້ນລະ, ໃນເມື່ອວ່າ ຂ້ອຍບໍ່ມີຮອດກິງສົງ ມັນກໍຈຶ່ງເສຍໄປ, ເຈົ້າເຂົ້າໃຈຕີ... ແລ້ວຊິຕ້ອງການບັດໄປເຮັດຫຍັງລະ ໃນເມື່ອຂ້ອຍເອງເປັນໂຕເປັນຕົນຢູ່ຕໍ່ຫນ້າຕໍ່ຕາແລ້ວປານນີ້.

- ເຈົ້າເຄີຍເຮັດວຽກຢູ່ໃສມາກ່ອນແລ້ວ?

- ຂ້ອຍເຄີຍເຮັດຢູ່ໃສມາແລ້ວວ່າຕີ? ໂຍ້ວ ກະນໍາບ້ານນໍາເຮືອນຄົນຫັ້ນແລ້ວ... ເຈົ້າຄິດເບິ່ງເອົາ... ຂ້ອຍເຄີຍເຮັດວຽກນໍາຄົນມາແລ້ວທຸກປະເພດ, ນັບແຕ່ຄົນດີ ໆ ມີເມດຕາ ຈົນຮອດປະເພດຊົ່ວຮ້າຍສຸດກະມີ, ຂ້ອຍບອກເຈົ້າຊື່ໆ... ບໍ່ມີຫຍັງປິດບັງເລີຍ.

- ເວົ້າກັບຂ້ອຍຊື່ ໆ ເດີ: ເຄີຍລັກບໍ່?

- ໂອ້ຍ... ເລື່ອງລັກຫວະ, ຂ້ອຍບອກເຈົ້າຕາມກົງເລີຍ, ບໍ່ເລີຍ... ຂ້ອຍບໍ່ເຄີຍລັກຈັກເທື່ອ, ເຈົ້າເຂົ້າໃຈລະຕີ... ໃນເມື່ອວ່າ

ມັນແມ່ນຄວາມຈິງແລ້ວ ເລື່ອງຫຍັງຂ້ອຍຈຶ່ງຊິໄປເວົ້າຕົວະລະ, ເຫັນບໍ່ເລື່ອງມັນເປັນຈັ່ງຊີ້ນລະ.

ຊີລັນຕີ ເບິ່ງຂ້າພະເຈົ້າດ້ວຍທ່າທີສັບສົນແດ່, ເບິ່ງຄືເຂົາກຳລັງຄຶດວ່າ ຄຳຕອບອີກແບບຫນຶ່ງຄົງຈະເຮັດໃຫ້ຂ້າພະເຈົ້າພໍໃຈຫລາຍກວ່າ.

ຊີລັນຕີ ຢູ່ເຮັດວຽກກັບພວກເຮົາ. ພວກເຮົາໄດ້ທົດລອງໃຫ້ລາວໄປລ້ຽງສັດຊ່ອຍແຊເອີ ແຕ່ຜົນບໍ່ເປັນດັ່ງຄາດຫມາຍໄວ້ເລີຍ. ຊີລັນຕີ ບໍ່ຮັບຮູ້ຂອບເຂດການເຮັດວຽກຂອງມະນຸດເລີຍ: ເປັນຫຍັງເພິ່ນ ຈຶ່ງໃຫ້ລາວເຮັດແຕ່ວຽກນີ້ເທົ່ານັ້ນ ແລະ ບໍ່ໃຫ້ວຽກນັ້ນ? ຈັ່ງຊັ້ນ ລາວຈຶ່ງເຮັດທຸກຢ່າງທີ່ເຫັນວ່າມີປະໂຫຍດ ແລະ ໃນເວລາໃດທີ່ລາວເຫັນວ່າມັນເປັນປະໂຫຍດ. ລາວເບິ່ງພວກຫົວຫນ້າງານທຸກຄົນດ້ວຍຮອຍຍິ້ມນ້ອຍໆ ແລະ ບໍ່ເອົາຫົວໃສ່ໃຈຊານຳຄຳສັ່ງຕ່າງໆ ພໍປານວ່າມັນແມ່ນຄຳປາໄສເປັນພາສາຕ່າງປະເທດຢ່າງຫນຶ່ງເທົ່ານັ້ນ. ໃນມື້ຫນຶ່ງໆລາວສາມາດໄປເຮັດວຽກຢູ່ຄອກມ້າ, ທົ່ງນາ, ເຮືອນແກ້ວ, ຢູ່ໃນເດີ່ນ, ຢູ່ໂຮງຕີເຫລັກ, ເຂົ້າຮ່ວມກອງປະຊຸມສະພາສຶກສາ ແລະ ສະພານາຍກອງ. ຄືກັບວ່າລາວມີອິນຊີທີ່ຫາກ, ລາວມີແວວປະເສີດຊະນິດພິເສດຢ່າງຫນຶ່ງໃນການເສາະສະແຫວງຫາພໍ່ບ່ອນກັນດານກວ່າຫມູ່ພາຍໃນນິຄົມ ແລ້ວກໍປາກົດໂຕຂຶ້ນນະທີ່ນັ້ນ ໃນທັນທີທັນໃດໃນບົດບາດເປັນຜູ້ຮັບຜິດຊອບ. ທັງໆ ທີ່ບໍ່ຮັບຮູ້ຄຳສັ່ງການໃດໆ ລາວກໍຫາກພ້ອມສະເຫມີທີ່ຈະໃຫ້ຄຳຈະແຈ້ງຕໍ່ວຽກງານຂອງລາວ, ພ້ອມທີ່ຈະຍອມຮັບຜິດ ແລະ ຍອມຮັບເອົາຄຳຕຳຫນິຕິຕຽນຕ່າງໆສຳຫລັບຄວາມຜິດພາດ

ແລະ ຄວາມປະລາໄຊຂອງຕົນ. ໃນກໍລະນີຫລັງນີ້ ລາວຍົກມືເກົາຫົວໂລ້ນບາດຫນຶ່ງ ແລ້ວວາແຂນອອກ.

-ຈັ່ງຊີ້ແລ້ວ... ມັນຫຍຸ້ງ ມັນຫຍອງແທ້ໆໃດ, ຄືເຫັນນັ້ນລະ, ເລື່ອງມັນເປັນແນວນີ້ລະ.

ນັບແຕ່ມື້ທຳອິດທີ່ລາວເຂົ້າມາຢູ່ກັບພວກເຮົາພຸ້ນແລ້ວ ຊີລັນຕີເຊມີວໂນວິດ ອິດເຊນາດ ພາຕົວເອງເຂົ້າມາແຊກຢູ່ໃນແຜນການທັງຫລາຍຂອງພວກ ກົມໂຊໂມນ ຢ່າງເລິກເຊິ່ງ ແລະ ກໍບໍ່ປ່ອຍໂອກາດທີ່ຈະພັນລະນາສາທະຍາຍຢ່າງຍືດຍາວຢູ່ໃນກອງປະຊຸມໃຫຍ່ຂອງພວກເຂົາ ແລະ ແມ່ນແຕ່ໃນກອງປະຊຸມຂອງຫ້ອງການ ແຕ່ກໍມີບາງເທື່ອຢູ່ທີ່ລາວໂມໂຫໂຫໂສ ແລະ ເຂົ້າມາຟ້ອງຂ້າພະເຈົ້າ.

-ເບິ່ງເອົາເທາະ! ລາວເວົ້າພຸມໆ ທັງເອົານິ້ວຊີ້ຂຶ້ນ - ຂ້ອຍຫາກໍໄປພົບກັບພວກມັນ!

-ພົບພວກໃດລະ?

-ພວກ ທ້າວກົມໂຊໂມນ ໂດດີ້ນັ້ນລະ, ພວກເຂົາບໍ່ອະນຸຍາດໃຫ້ຂ້ອຍເຂົ້າຮ່ວມກອງປະຊຸມປິດລັບ ວ່າຊັ້ນ, ເຈົ້າເບິ່ງຕີ, ຂ້ອຍເວົ້ານຳພວກເຂົາດີໆໃດ໋, ຂ້ອຍເວົ້າໃຫ້ພວກເຂົາວ່າ "ພວກເຈົ້າຢາກປິດລັບເລື່ອງນີ້ກັບຂ້ອຍຊັ້ນຫວະ... ພວກຂີ້ສູດເອີຍ, ພວກສູຊິຕາຍກັນຫມົດຫັ້ນລະ, ໂງ່ຈັ່ງໃດກະຕາຍຈັ່ງຊັ້ນລະ" ຣີ!

-ຕໍ່ໄປເດ້ລະ?

-ເຈົ້າເບິ່ງ, ເລື່ອງມັນເປັນຈັ່ງຊັ້ນລະ: ພວກເຂົາບໍ່ເຂົ້າໃຈຫລືວ່າ ບາງທີອາດເປັນຍ້ອນວ່າ ພວກເຂົາພາກັນກິນເຫລົ້າບໍ່ຈັກເດ? ແຕ່ກະຄືວ່າບໍ່ນ່າ. ຂ້ອຍອະທິບາຍໃຫ້ພວກເຂົາຟັງວ່າ: ບໍ່

ຈຳເປັນທີ່ຈະຕ້ອງປິດບັງກູບ່າ ກ້າຫາກວ່າແມ່ນ ລູກາ ຫລືໂຊຟຣົງ ຫລືວ່າ ມູດຊີ ກະຍັງວ່າຄືແດ່ ແຕ່ອັນນີ້ແມ່ນກູນ່ະ ມຶງບໍ່ຈົ່ກູຊັ້ນ ຫວະ ຫລືວ່າຕົງແກ້ງບໍ່ໃຫ້ກູເຂົ້າໄປ ຫລືວ່າ ມຶງຫັນປ່ວງໄປແລ້ວ? ເຈົ້າເບິ່ງແມ້, ເລື່ອງມັນເປັນຈັ່ງຊັ້ນແລ້ວ. ພວກເຂົາບໍ່ຟັງຂ້ອຍຊ້ຳ ແຖ, ພາກັນຫົວເສີຍ. ຕົງວ່າແມ່ນເດັກນ້ອຍແທ້ໆໃດ. ເວົ້າ ແທ້ໆ, ພວກເຂົາບໍ່ຮູ້ຫຍັງດອກ ຮູ້ແຕ່ຮູ້ຂວັນກັນທັ່ງນັ້ນລະ.

ຊີລັນຕີ ຍັງມີສ່ວນຮ່ວມໃນກິດຈະກຳຢູ່ໂຮງຮຽນນຳພວກກົມໂຊ ໂມນອີກ.

ການໃຫ້ຄວາມຮ່ວມມືຢ່າງສະຫມ່ຳສະເຫມີຂອງພວກກົມໂຊ - ໂມນ ເຮັດໃຫ້ໂຮງຮຽນຂອງພວກເຮົາຕັ້ງຕົວຂຶ້ນໄດ້. ຜ່ານມາ ນັ້ນມັນດຳລົງຄົງຕົວຢູ່ຢ່າງຫນ້າສົມເພດສົມຄວນຄືບໍ່ສາມາດເອົາຊະ ນະຄວາມຮູ້ສຶກອະເຫຍືອງຕໍ່ການສຶກສາຮ່ຳຮຽນ ເຊິ່ງສະມາຊິກນິຄົມ ຫລາຍໆຄົນສະແດງອອກມາ. ເລື່ອງນີ້ກໍພໍເຂົ້າໃຈໄດ້ຢູ່ ເພາະວ່າຊຸມ ມື້ທຳອິດທີ່ເດັກນ້ອຍໄດ້ມາຢູ່ໃນນິຄົມ ກ້ອກກີ ນີ້ມັນແມ່ນວັນພັກ ຜ່ອນສຳລັບພວກເຂົາ ຫລັງຈາກຜ່ານປົດຮຽນອັນທໍລະຫົດແຫ່ງຊີ ວິດເດັກໄຮ້ຍາດມາແລ້ວ. ເສັ້ນປະສາດຂອງພວກເຂົາເຂັ້ມແຂງ ຂຶ້ນ, ສ່ວນວ່າຄວາມນຶກຝັນນັ້ນຊ້ຳຍັງບໍ່ທັນຮູ້ເປົ້າຫມາຍຫຍັງທີ່ ສ່ອງໃສງົດງາມໄປກວ່າອາຊີບຊ່າງເກີບ ຫລືຊ່າງໄມ້ເທື່ອ.

ຄວາມກ້າວຫນ້າຂອງສ່ວນໂຮມອັນປະຈັກແຈ້ງ ແລະ ໄຊຊະນະ ຂອງພວກເຮົາເທິງແຄມຝັ່ງຫ້ວຍໂກໂລມາກນັ້ນເອງ ທີ່ຊ່ອຍຊູຍົກ ຄຸນຄ່າພວກນິຄົມຂຶ້ນເອງ. ຕໍ່ມາພວກເຮົາກໍສາມາດເຮັດໃຫ້ແສງ ຕາຂອງພວກເຂົາໂຮງຮຸ່ງໄປດ້ວຍຄວາມຫວັງ, ຄວາມໃຝ່ຝັນສູງ

ສິ່ງກວ່າໃນຄາວກ່ອນ ເມື່ອອ່ານຂໍ້ຄວາມອັນຫນ້າຕື່ນເຕັ້ນ ແລະ ງົດງາມເຫລົ່ານີ້:

ມະຫາວິທະຍາໄລກຳມະກອນ

ສະໄຫມນັ້ນ ຄຳວ່າ "ມະຫາວິທະຍາໄລກຳມະກອນ" ນີ້ຍັງບໍ່ມີຄວາມຫມາຍຄືກັບທຸກວັນນີ້ດອກ, ບັດນີ້ມັນກາຍມາເປັນພຽງຊື່ຂອງສະຖາບັນການສຶກສາທີ່ອ່າວນ້ອຍບ່ອນຫນຶ່ງເທົ່ານັ້ນ ແຕ່ກ່ອນມັນເປັນຄືກັບຄົນທຸງໄຊ ທີ່ຍືນຍັນຫມາຍບອກຄວາມເປັນອິດສະຫລະ, ຜ່ານພົ້ນຈາກຄວາມໂງ່ຈ້າຂອງຊາວຫນຸ່ມກຳມະກອນ ເປັນການຍັ້ງຍືນອັນເດັ່ນແຈ້ງຢ່າງຫນຶ່ງ ເຖິງສິດທິມະນຸດຕໍ່ການສະແຫວງຄວາມຮູ້ ເຊິ່ງເຮັດໃຫ້ພວກເຮົາຮູ້ສຶກເຖິງຄວາມອ່ອນຫວານ ແລະ ຕື່ນເຕັ້ນຢ່າງຫນຶ່ງ.

ທັງຫມົດເຫລົ່ານີ້ ສຳລັບພວກເຮົາມັນກາຍເປັນບັນຫາຕົວຈິງອັນຫນຶ່ງ: ໃນລະດູໃບໄມ້ຫລົ່ນປີ ໑໙໘໔, ຄວາມປາຖະຫນາຢາກເຂົ້າຮຽນໃນມະຫາວິທະຍາໄລກຳມະກອນໃຫ້ວ່າ ຄອບຄຸມຈິດໃຈຊາວນິຄົມເກືອບຫມົດທຸກຄົນ. ເປັນທີ່ຫນ້າສັງເກດໄດ້ວ່າ ຄວາມມຸ່ງຫວັງອັນນີ້ເຊື່ອມຊອດເຂົ້າພາຍໃນນິຄົມນັບຕັ້ງແຕ່ສະໄຫມຫນຶ່ງຄືຫວ່າງປີ ໑໙໘໘ ເມື່ອນາງຄູຂອງພວກເຮົາສາມາດຊີ້ແນະສາວນ້ອຍໂຊກຮ້າຍຜູ້ຫນຶ່ງຄື ຣາຍອິດຊາ ໃຫ້ເດີນເຂົ້າມະຫາວິທະຍາໄລກຳມະກອນໄດ້. ມີນັກສຶກສາຈາກມະຫາວິທະຍາໄລກຳມະກອນຂະແຫນງການຊ່າງທາງລົດໄຟຫລາຍຄົນ ມາຢ້ຽມຢາມພວກເຮົາ.

ພວກເດັກນ້ອຍນິຄົມຟັງບິດເລົ່າເລື່ອງກ່ຽວກັບການເລີ່ມຕົ້ນ ຢ່າງພິລະອາດຫານ ຕໍ່ສູ້ກັບອຸປະສັກຕ່າງໆຂອງພວກເຂົາດ້ວຍຄວາມອິດສາ ແລະ ຄວາມຮູ້ສຶກເຫລົ່ານີ້ກໍເຮັດໃຫ້ພວກເຂົາເກີດອາລົມສະດຸ້ງໄວຂຶ້ນກວ່າເກົ່າຕໍ່ການໂຄສະນາຂອງພວກເຮົາ. ພວກເຮົາຍົວະເຂົາຢ່າງບໍ່ອິດເມື່ອຍເປັນໃຫ້ຮຽນຕໍ່, ໃຫ້ສະແຫວງຫາຄວາມຮູ້ ແລະ ເວົ້າເຖິງມະຫາວິທະຍາໄລກໍາມະກອນຄືກັບວ່າມັນແມ່ນສະຖານທີ່ຊີງກຽດສູງກວ່າຫລາຍກວ່າຫມູ່ ທີ່ຄົນເຮົາສາມາດເລືອກເອົາໄດ້. ແຕ່ການເຂົ້າມະຫາວິທະຍາໄລກໍາມະກອນ ສໍາລັບພວກເຂົາຫມາຍເຖິງການສອບເສັງຊະນິດຍາກພິລຶກພິລ້ຳຢ່າງຫນຶ່ງ ຈົນເຖິງຂັ້ນວ່າຜູ້ທີ່ສາມາດຜ່ານເຂົ້າໄດ້ກໍມີແຕ່ພວກອັດສະລິຍະເທົ່ານັ້ນ. ເປັນການຍາກສົມຄວນສໍາລັບພວກເຮົາທີ່ຈະອະທິບາຍໃຫ້ພວກເຂົາເຊື່ອວ່າ ໂຮງຮຽນຂອງພວກເຮົານັ້ນມີຄວາມສາມາດກະກຽມໃຫ້ພວກເຂົາສູ້ຍັນຜ່ານຜ່າຂໍ້ທົດສອບອັນພິລຶກພິລ້ຳນີ້ໄດ້. ເວົ້າແທ້ແລ້ວ ກໍມີຫລາຍຄົນຢູ່ທີ່ກຽມພ້ອມແລ້ວ ແຕ່ຍັງລັ່ງເລລໍຄອຍຢູ່ຍ້ອນຄວາມຢ້ານອັນໄຮ້ເຫດຜົນຢ່າງຫນຶ່ງ ພວກເຂົາຈຶ່ງຕັດສິນໃຈຂໍຢູ່ໃນນິຄົມອີກປີຫນຶ່ງກ່ອນ ເພື່ອກະກຽມໃຫ້ຄັກແນ່ຮ້ອຍສ່ວນຮ້ອຍ. ກໍລະນີດັ່ງກ່າວເກີດຂຶ້ນກັບບູຮຸນ, ກາຮາບານົບ, ແວກສະເນັບ ແລະ ຊາໂດຮອບ. ພວກເຮົາພາກັນແປກໃຈຕື່ນເຕັ້ນ ຕໍ່ຄວາມເອົາໃຈໃສ່ໃນການຮໍ່າຮຽນຂອງ ບູຮຸນ ເປັນພິເສດ, ພວກເຮົາບໍ່ມີຄວາມຈໍາເປັນກະຕຸ້ນເຂົາເລື້ອຍໆເລີຍ, ດ້ວຍຄວາມດຶງດັນແບບເລີກລ້ຳ ເຂົາບໍ່ພຽງແຕ່ສາມາດເອົາຊະນະກົດເກນອັນຫຍຸ້ງຍາກຂອງເລກຄະນິດ ແລະ ໄວຍາກອນເທົ່ານັ້ນ ແຕ່ຍັງເອົາຊະນະຄວາມ

ອາດສາມາດເຊິ່ງກໍເຄີຍມີຂອບເຂດຈຳກັດນັ້ນຄືກັນ. ດ້ວຍການສຸມໃຊ້ມັນສະໝອງຢ່າງສຸດຂີດ, ເຫື່ອຍ້ອຍ ຫັນໃຈຫອບ ແກ້ມເປົ້າປຸ້ງພໍແຮງພຸ້ນແລ້ວ ເຂົາຈຶ່ງ ສາມາດຜ່ານຂ້າມອຸປະສັກຕົວສຳຄັນໄດ້ເຊັ່ນ ກົດເກນໄວຍາກອນ ແລະ ບັ້ງໂຈດເລກຄະນິດ ແຕ່ເຂົາກໍບໍ່ເຄີຍໂມໂຫໂທໂສຂຶ້ນ ຫລືບໍ່ແນ່ນອນໃຈໃນຜົນສຳເລັດຂອງຕົນ. ເຂົາຕົກເປັນເຫຍື່ອຄວາມຄຶດຜິດໆທີ່ວ່າ ອັນຄວາມຮູ້ນັ້ນເປັນສິ່ງຍາກຫລາຍ ແລະຕ້ອງແມ່ນແຕ່ຜູ້ມີມັນສະໝອງດີແທ້ໆ ແລະ ກໍມີແຕ່ຄວາມພະຍາຍາມເທົ່ານັ້ນ ຈຶ່ງສາມາດເປັນເຈົ້າຂອງມັນໄດ້. ເປັນໜ້າອັດສະຈັນຢ່າງໜຶ່ງທີ່ເຂົາບໍ່ຍອມສັງເກດເຫັນວ່າ ພວກໝູ່ອື່ນໆພາກັນປະເຊີນໜ້າກັບຄວາມຫຍຸ້ງຍາກອັນດຽວກັນນີ້ຕາມແບບໃຜແບບມັນເຊັ່ນວ່າ ຊາໂດຣອບ ນັ້ນບໍ່ສະຫລະເວລາແມ່ນແຕ່ນາທີດຽວໃສ່ການສຶກສາຄົ້ນຄວ້າ ນອກເໜືອຈາກຊົ່ວໂມງຮຽນຢູ່ໃນໂຮງຮຽນ ແລະ ແມ່ນແຕ່ຢູ່ໃນຫ້ອງຮຽນບາງເທື່ອ ກາຣາບານົບ ເອງກໍຍັງຄຶດຝັນຫາສິ່ງອື່ນ, ຫົວຄຶດຂອງເຂົາເຕັມໄປດ້ວຍບັນຫາເລື່ອງເລັກໆ ນ້ອຍໆ ຢູ່ໃນນິຄົມແທນບັນຫາການແກ້ໂຈດ ຫລືບົດເຝິກຫັດ. ແລ້ວໃນທີ່ສຸດກໍແມ່ນພຽນ ບູຮູນ ທີ່ກາຍເປັນຜູ້ນຳໜ້າໝູ່ ເມື່ອປາກົດວ່າແສງສະຫວ່າງແຫ່ງຄວາມຮູ້ ເຊິ່ງພວກເຂົາເກັບກຳເອົາໄວ້ໄດ້ຢ່າງງ່າຍດາຍນັ້ນ ເປັນພຽງສິ່ງເລັກນ້ອຍເທົ່ານັ້ນ ເມື່ອສົມທຽບໃສ່ຄວາມຮູ້ພື້ນຖານອັນໜັກແໜ້ນຂອງ ບູຮູນ. ນາງນ້ອຍ ມາຣູດຊາ ເລັບເຊັນໂກ ນັ້ນໃຫ້ວ່າເປັນຜູ້ມີລັກສະນະກົງກັນຂ້າມອ້ອຍຕ້ອຍກັບ ບູຮູນ. ນາງຄົນນີ້ມາເຖິງນິຄົມໃນສະພາບຄົນຖ່ອຍຮ້າຍ ນິໄສເສຍສຸດຂີດ, ນາງມັກຮ້ອງກົດໆ, ຂີ້ສົງໄສ

ແລະ ຂີ້ໂຍ່ຍທີ່ຫນຶ່ງ. ນາງເຮັດໃຫ້ພວກເຮົາຫົວຫມຸນສົມຄວນ. ດ້ວຍຄວາມເສີຍເມີຍບໍ່ຫ່ວງໄຍຕໍ່ສິ່ງໃດໆ ປະກອບທັງເປັນຄົນໃຈຮ້ອນຕຶ້ດຶງເປັນທີ່ສຸດ ນາງສາມາດທຳລາຍທຸກຢ່າງທີ່ດີງາມໃຫ້ມຸ່ນອຸ້ຍປຸ້ຍລົງພາຍໃນພິບຕາດຽວ ບໍ່ວ່າສິ່ງນັ້ນແມ່ນມິດຕະພາບ, ຄວາມສຳເລັດ, ວັນທີ່ມີອາກາດແຈ່ມໃສ, ຄ່ຳຄືນທີ່ສົດຊື່ນ ແລະແຈ້ງສະຫວ່າງ ຫລືຄວາມຝັນອັນງົດງາມ ແລະ ຄວາມຫວັງທີ່ປະເສີດເລີດລ້ຳກວ່າຫມູ່. ເບິ່ງແລ້ວຄືວ່າບໍ່ມີແນວໃດເຮັດນອກຈາກເອົານ້ຳເຢັນໆ ຈັກຄຸມາຫົດຮວາດອີ່ນາງຄົນກ່ອຍ ທີ່ຍາມໃດກໍ່ຕົກເປັນເຫຍື່ອອາລົມຮ້ອນຮຸ່ມ ແລະ ໄຮ້ສາລະຜູ້ນີ້ຢ່າງບໍ່ປານີປາໄສເທົ່ານັ້ນ.

ຄວາມຕ້ານທານຂອງທຸກຄົນພາຍໃນບິຄົມ ເຊິ່ງສ່ວນຫລາຍສະແດງອອກມາໃນຮູບການແຂງກະດ້າງແທນນຸ່ມນວນ ແລະ ບາງເທື່ອກໍ່ອ່າວຮຸນແຮງສົມຄວນນັ້ນ ໄດ້ແອບສອນໃຫ້ນາງຮູ້ຈັກອົດກັ້ນແຕ່ຫາກເຮັດໄປດ້ວຍຄວາມຕຶ້ດຶງຜິດປົກກະຕິ ດັ່ງນັ້ນ ມາຣູດຊາຈຶ່ງເລີ່ມທຳລະມານຕົວເອງ. ນາງມີສະຫມອງດີສົມຄວນ, ຫົວຄິດວ່ອງໄວ ປະກອບກັບເປັນຄົນອ່າວງາມເຕີບ, ພວງແກ້ມແດງອົ່ງຕົ່ງເຮັດໃຫ້ຜິວສີນ້ຳອ້ອຍຂອງນາງສົດໃສ, ແກ່ນຕາດຳໂຮງຮຸ່ງເປັນປະກາຍຄືແປວໄຟ, ຫນ້າຜາກເນີນນູນບົ່ງບອກແວວສະຫລາດ ເຄັ່ງຂຶມ ແລະ ບໍລິສຸດ ແຕ່ ມາຣູດຊາ ຄຶດວ່າຕົນເອງຂີ້ເຮີຫລາຍຂະຫນາດ "ເປັນຕາຢ້ານ" ພຸ້ນລະ, ແລະ ກໍ່ຄຶດວ່າຕົວເອງໂງ່ຂະຫນາດບໍ່ເຂົ້າໃຈຫຍັງ ແລະ ຈະບໍ່ເຂົ້າໃຈອັນໃດເລີຍຈັກເທື່ອ. ເມື່ອມີບົດຄົ້ນຄວ້າເຮັດນາງກໍ່ຟ້າວຮ້ອງຂຶ້ນ ດ້ວຍຄວາມໂກດແຄ້ນທີ່ສຸມອັ່ງໄວ້ແຕ່ດົນນານແລ້ວ.

-ມັນຈິມີປະໂຫຍດຫຍັງເກາະ! ພວກເຂົາຕ້ອງການໃຫ້ກູຮຽນ! ຮື່ມ... ກໍເຊີນເອົາໃຈໃສ່ທ້າວບູຣິນ ຂອງພວກເຈົ້າພຸ້ນລະແມ້! ກູຈິໄປເປັນຄົນໃຊ້ເຂົາດອກ, ແລ້ວເປັນຫຍັງຈິຕ້ອງມາບັງຄັບທໍລະມານກູຈັ່ງຊີ້ໃນເມື່ອກູບໍ່ມີຫຍັງດີນະ?

ນາຕາເລຍ ມາກກອບນາ ອິດຈີໂປວາ ຜູ້ມີອາລົມສະດຸ້ງໄວ, ທັງຕາ ແລະນິໄສບົ່ງວ່າໃຈບຸນສຸດຂີດນັ້ນ ຍາມໃດກໍຕ້ອງໄດ້ຫລັ່ງນ້ຳຕາທຸກໆເທື່ອທີ່ຕ້ອງການພາມາຣູດຊາ ຮຽນຫນັງສື, ນາງຈະເວົ້າວ່າ:

-ຂ້ອຍຮັກມັນນ່າ, ຂ້ອຍຢາກສອນມັນ ແຕ່ມັນໄລ່ຂ້ອຍຫນີ, ດ່າວ່າຂ້ອຍເປັນຜີກິນຫົວມັນ... ຈິໃຫ້ຂ້ອຍເຮັດແນວໃດ?

ຂ້າພະເຈົ້າ ຍ້າຍ ມາຣູດຊາ ໄປຢູ່ໃນຈຸຂອງ ເອີກາເຕີຣີນາ ກຣີກໍເຣັບນາ, ທັງຄິດຍ້ານຜົນທີ່ຈະໄດ້ຮັບຈາກມາດຕະການອັນນີ້ນຳ. ເອີກາເຕີຣີນາ ກຣີກໍເຣັບນາ ເປັນຄົນວາງຂຽງກຣ້ອງງ່າຍໆ ແລະ ເຫມາະສົມກັບຄົນທົ່ວໄປ. ຫລັງຈາກຮຽນໄປໄດ້ສາມມື້, ເອີກາເຕີຣີນາ ກຣີກໍເຣັບນາ ກໍພາ ມາຣູດຊາ ເຂົ້າມາຫາຂ້າພະເຈົ້າຢູ່ຫ້ອງການ, ຫລັງຈາກອັດປະຕູແລ້ວ ກໍຈັດແຈ່ງໃຫ້ນັກຮຽນຜູ້ສົ່ນບົ່ນໆຢູ່ດ້ວຍຄວາມໂມໂຫນັ້ນນັ່ງລົງຕັ່ງອີກຫນ່ວຍຫນຶ່ງ ຈາກນັ້ນຈຶ່ງເວົ້າວ່າ:

-ອານໂຕນ ເຊມີວໂນວິດ! ນີ້ ມາຣູດຊາ ກໍຢູ່ນີ້ແລ້ວ, ເຈົ້າຕັດສິນໃຈໃຫ້ແດ່ວ່າ ຄວນເຮັດແນວໃດຈຶ່ງສົມຄວນ. ຄ້ຳພໍດີຢູ່ໂຮງສີເຂົາກໍຢາກໄດ້ຄົນຢູ່, ມາຣູດຊາຄືດວ່າໂຕເອງສາມາດແຕ່ພໍໄປເຮັດວຽກນີ້. ສົ່ງມັນໄປໂຮງສີສາເນາະ? ແຕ່ກໍມີວິທີແກ້ຢ່າງອື່ນຢູ່,

ຂ້ອຍຮັບປະກັນໄດ້ວ່າ ແຕ່ນີ້ຮອດລະດູໃບໄມ້ຫລົ່ນປີຫນ້າ ຂ້ອຍຈິສາມາດກະກຽມໃຫ້ມັນສອບເສັງເຂົ້າ ມະຫາວິທະຍາໄລກໍາມະກອນໄດ້, ມັນມີຄວາມສາມາດພຽງພໍຢູ່.

-ມະຫາວິທະຍາໄລ ກະທໍາມະດາແລ້ວ! ຂ້າພະເຈົ້າຕອບຄືນ.

ມາຣູດຊາ ທີ່ນັ່ງຢູ່ຕັ່ງແນມນໍາເອື້ອຍຄູດ້ວຍແສງຕາໂກດແຄ້ນ.

-ແຕ່ວ່າ ຂ້ອຍບໍ່ອະນຸຍາດໃຫ້ມັນດ່າຂ້ອຍໃນຊົ່ວໂມງສອນອີກ. ໂຍ້ວ ຂ້ອຍກໍແມ່ນຊາວຜູ້ອອກແຮງງານຄົນຫນຶ່ງຄືກັນໃດ໋ ຈັ່ງຊັ້ນຈິມາເຮັດແນວນີ້ນໍາກັນແມ່ນບໍ່ໄດ້. ຄັນມັນເວົ້າໃຫ້ຂ້ອຍອີກວ່າ "ໄປຕາຍໃສກະຍ່າ" ຫລືເອີ້ນຂ້ອຍວ່າ "ບ້າ" ອີກເທື່ອດຽວ ທໍ່ນັ້ນ ຂ້ອຍຈິບໍ່ສົນນໍາມັນເລີຍ.

ຂ້າພະເຈົ້າເຂົ້າໃຈຍຸດໂທບາຍຂອງ ເອີກາເຕີຣິນາ ກຣີກໍເຣັບນາ ຢູ່ແຕ່ພວກເຮົາເຄີຍທົດລອງໃຊ້ວິທີການທຸກແບບກັບ ມາຣູດຊາ ມາແລ້ວ ບັດນີ້ຂ້າພະເຈົ້າຂາດແປວໄຟແຫ່ງວິຊາຄູ ເພື່ອຈະໃຊ້ຍຸດໂທບາຍໃດໆອີກແລ້ວ. ຂ້າພະເຈົ້າ ແນມເບິ່ງ ມາຣູດຊາດ້ວຍທ່າທີເມື່ອຍລ້າ ແລະ ເວົ້າອອກໄປຢ່າງບໍ່ມີເລ່ຫລ່ຽມໃດໆວ່າ:

-ຈິບໍ່ໄດ້ຜົນຫຍັງດອກ! ມັນກະຈິດ່າເຈົ້າວ່າ ເປັນຄົນກ່ອຍໂງ່ຈ້າໂພດ, ແລະຄົນບ້າແນ່ນອນ! ມາຣູດຊາ ບໍ່ຮູ້ຈັກເຄົາລົບນັບຖືຜູ້ອື່ນ, ມັນແມ່ນນິໄສຊົ່ວອັນຫນຶ່ງທີ່ແກ້ໄຂໄດ້ຍາກ...

-ຂ້ອຍຮູ້ຈັກນັບຖືຄົນ. ມາຣູດຊາ ຮ້ອງຂັດຂຶ້ນ.

-ບໍ່ດອກ, ໂຕບໍ່ຮູ້ຈັກນັບຖືໃຜເລີຍ, ແຕ່ວ່າຈິເຮັດແນວໃດໄດ້? ມັນແມ່ນນັກຮຽນເຮົາຄົນຫນຶ່ງ... ເບິ່ງຂ້ອຍຄຶດແນວນີ້ ເອີກາເຕີຣິນາ ກຣີກໍເຣັບນາ, ເຈົ້າເປັນຜູ້ອາວຸໂສແລ້ວ, ທັງສະ

ຫລາດ ທັງຜ່ານປະສົບການມາຫລາຍ. ສ່ວນວ່າ ມາຣຸດຊາ ຫວະ! ມັນເປັນພຽງສາວນ້ອຍ ມີນິໄສຊື່ວໆຄືນຫນຶ່ງທີ່ນັ້ນ ພວກເຮົາຢ່າພາກັນມາກຸມຄຽດໃຫ້ມັນດີບໍ່? ມັນອາດຈະມີສິດດ່າເຈົ້າອີ່ບ້າ ຫລືອີຊື່ວ ຫລືແບບໃດກໍໄດ້... ຈັ່ງຊັ້ນຕວ່າ, ມັນຊິເປັນຫຍັງແມ່ນບໍ່ລະແລະ ເຈົ້າກະຊິບໍ່ເອົາຫົວຊາຊ້ຳ, ມື້ໃດມື້ຫນຶ່ງມັນຫາກຊິເຊົາເອງດອກ, ເຈົ້າວ່າບໍ່?

ເອີກາເຕີຣີນາ ກຣີກໍເຣັບນາ ຍິ້ມທັງຫລຽວເບິ່ງ ມາຣູດຊາແລະ ເວົ້າງ່າຍໆວ່າ:

-ຈັ່ງຊັ້ນກໍໄດ້, ຂ້ອຍກໍວ່າແນວນີ້ຄືກັນ.

ແກ່ນຕາດຳຂອງ ມາຣູດຊາ ເປັ່ງແປວໂຮງຮຸ່ງສັກໃສ່ຂ້າພະເຈົ້ານ້ຳຕາແຫ່ງຄວາມເຈັບແຄ້ນທັ້ງຫລັ່ອອກມາ, ຄາວຫນຶ່ງ ນາງກໍເອົາຜ້າມັດພົມມາມຸບຫນ້າ ແລ້ວແລ່ນອອກຈາກຫ້ອງການຂ້າພະເຈົ້າ ທັງສະອື້ນໄຫ້ນຳ.

ອາທິດຫນຶ່ງຕໍ່ມາ, ຂ້າພະເຈົ້າຈຶ່ງຖາມນຳ ເອີກາເຕີຣີນາ ກຣີກໍເຣັບນາ ວ່າ:

-ຈັ່ງໃດ? ມາຣູດຊາ ເປັນແນວໃດ?

-ດີແລ້ວ, ມັນບໍ່ອ້າປາກເລີຍ, ເບິ່ງມັນຄຽດໃຫ້ເຈົ້າຫລາຍເກາະ,

ແຕ່ມື້ຕໍ່ມາ, ປະມານຕອນຄ່ຳເດິກໆແລ້ວ, ຊີລັນຕີ ກໍມາຫາຂ້າພະເຈົ້າພ້ອມດ້ວຍ ມາຣູດຊາ, ລາວບອກວ່າ:

-ຄືເວົ້ານັ້ນ, ຊື່ວຊິພາມັນມາໄດ້ນີ້ຕ້ອງເປືອງແຮງສົມຄວນເດີ.

ເຈົ້າຮູ້ດີ, ມາຣູດຊາ ຄຽດໃຫ້ເຈົ້າຫລາຍ ອານໂຕນ ເຊມີວໂນວິດ, ເຈົ້າລອງລືມກັບມັນເບິ່ງ.

ຈາກນັ້ນ ລາວກໍຫລອຍຫນີມິດໆ, ມາຣູດຊາ ກົ້ມຫົວຢູ່, ນາງເວົ້າຂຶ້ນວ່າ:

- ຂ້ອຍບໍ່ມີຫຍັງລືມກັບເຈົ້າດອກ, ໃນເມື່ອວ່າໃຜໆກໍຄືດວ່າ ຂ້ອຍເປັນບ້າ, ຢ່າຫົວເຂົາແຫລະ.

- ໂຕຄຽດຫຍັງໃຫ້ຂ້ອຍລະ? ຂ້າພະເຈົ້າຖາມຂຶ້ນ.

- ເຈົ້າຄຶດວ່າຂ້ອຍບ່ວງ ຂ້ອຍບ້າ.

- ບໍ່ນ່າ, ບໍ່ໄດ້ຄຶດແນວນັ້ນຈັກດີ້.

- ແຕ່ເປັນຫຍັງເຈົ້າຈຶ່ງເວົ້າຈັ່ງຊັ້ນກັບ ເອີກາເຕີຣິນາ ກຣີກໍ ເຣັບນາ ລະ?

- ເອີ ແມ່ນເດັ້, ແຕ່ນັ້ນຂ້ອຍກໍຜິດໄປແລ້ວ, ຂ້ອຍຄຶດວ່າໂຕ ຊີໃຊ້ຄວາມຫຍາບໆຄວາມດ່າປ້ອຍທຸກແບບທຸກແນວກັບລາວ ອີກ ຫັ້ນເດ້.

ມາຣູດຊາ ຍິ້ມຫົວນ້ອຍຫນຶ່ງ.

- ແຕ່, ຂ້ອຍ, ຂ້ອຍບໍ່ໄດ້ດ່າລາວແລ້ວເດ້.

- ຈັ່ງຊັ້ນຫວະ? ໂຍ້ວ, ຊັ້ນຂ້ອຍກະຜິດເອງແຫລະ, ບ້າ... ຄືວ່າ ເຄີຍຄຶດແບບນັ້ນນ່າ.

ໃບຫນ້າຂອງ ມາຣູດຊາ ແຈ່ມໃສຂຶ້ນ, ຮ່ອງຮອຍແຫ່ງຄວາມ ດີໃຈປາກົດຂຶ້ນ, ດ້ວຍຄວາມລະມັດລະວັງແກມສົງໄສ ນາງເວົ້າຂຶ້ນ ວ່າ:

- ເຈົ້າເປັນແນວນີ້ລະ... ມັກຢຽບຍໍ່ຄືນ...

ຊີລັນຕີຫຍັບເຂົ້າມາ, ດຶງຫມວກແງບອອກ ທັງເວົ້າພຸມໆວ່າ :

- ແມ່ນມຶງວອນຫາເລື່ອງກັບເພິ່ນເຮັດຫຍັງອີກ? ພວກສູໂລດມີກັນເປັນກ່າຍເປັນກອງ, ເພິ່ນໂລດພູດງອ, ບັງເອີນວ່າ ເພິ່ນຫລິງເພິ່ນລືມໄປຈັກຫນ້ອຍ ມຶງກະຊິໄປຄຽດໄປຂົມໃຫ້ເພິ່ນຊັ້ນຫວາ.

ມາຣູດຊາ ເສືອດຕາມາເບິ່ງ ຊີລັນຕີ ຢ່າງວ່ອງໄວ, ແສງຕາສິດຊື່ນ, ຈາກນັ້ນຈິ່ງເວົ້າສຽງໃສວ່າ :

- ຊີລັນຕີ ເອີ້ຍ, ເຈົ້າຫັ້ນເກົ້າກໍເກົ້າລ້າດອກ, ຈ້າຊິຕາຍ.

ວ່າແລ້ວ ນາງກໍແລ່ນຫນີໄປ, ຊີລັນຕີ ຈັບຫມວກແງບວິເວີບໆ ແລະ ເວົ້າວ່າ :

- ເລີຍເປັນແນວນັ້ນຊ້ຳ.

ບຶດຫນຶ່ງລາວກໍເອົາຫມວກຟາດຫົວເຂົ່າ ແລະ ຫົວແຮງໆຂຶ້ນວ່າ :

- ຮ່າ... ມັນຫາກເປັນແນວນີ້, ອີ່ຫມານ້ອຍມຶງເອີ້ຍ!

ບົດທີ ໓

ຈຸດເດັ່ນ

ພວກເຮົາບໍ່ທັນເອົາຝາປ່ອງຢ້ຽມຕິດຕັ້ງເຮືອນຊ້ຳ ລະດູຫນາວກໍມາຈວາດພວກເຮົາແລ້ວ. ແຕ່ລະດູຫນາວປີນີ້ຫນ້າຮັກດີຢູ່ ມີຫິມະປົກຄຸມບາງໆຢູ່ທົ່ວໄປ, ບໍ່ມີການກ້າມ ແລະ ຄວາມຫນາວເຢັນຊະນິດຮຸນແຮງ. ກູດລາຕີ ເອົາເຄື່ອງນຸ່ງສຳລັບລະດູຫນາວອອກມາແຈກຢາຍເປັນເວລາສາມວັນຈຶ່ງແລ້ວ. ເຂົາເອົາເກີບຂົນສັດໃຫ້ແກ່

ພວກລ້ຽງມ້າ ແລະ ລ້ຽງໝູ. ສ່ວນຊາວນິຄົມອື່ນໆໄດ້ເກີບໂບກຫນັງ, ເຖິງວ່າບໍ່ເຫລື້ອມພຽງໆ ໃຫມ່ອ່ຽມ ແລະ ເປັນແບບໂກ້ກໍຕາມ ແຕ່ຫາກມີຄຸນປະໂຫຍດຫລາຍອັນ ເຊັ່ນວ່າ ມັນເຮັດດ້ວຍຫນັງຢ່າງດີ, ຫຍິບຕິດຢ່າງປານີດ ທັງໃຫຍ່, ເພາະສະນັ້ນ ເຖິງຈະໃຊ້ຜ້າພັນຕີນລັດເຊຍຊ້ອນຮອດສອງແຜ່ນ ກໍຍັງສາມາດສຸບສອດເຂົ້າໄດ້ຢ່າງສະບາຍ. ໃນຄາວນັ້ນພວກເຮົາຍັງບໍ່ຮູ້ຊ້ຳເທື່ອວ່າເສື້ອຄຸມໃຫຍ່ເປັນແນວໃດ, ພວກເຮົານຸ່ງເສື້ອຍ່າມປະເພດເຄິ່ງສັ້ນເຄິ່ງເສື້ອນອກ, ຮອງດ້ວຍຜ້າສຳລີ, ແຂນຮອງດ້ວຍຜ້າຝາ, ທັງຫມົດນີ້ແມ່ນມູນມັງຕົກທອດມາແຕ່ສະໄຫມສົງຄາມຈັກກະພັດ, ພວກທະຫານຂອງພະເຈົ້າຊາ ນິໂກລາຍເອີ້ນມັນວ່າເສື້ອ "ກູຟາບກາ". ບາງຄົນໄດ້ຫມວກສຸບໃສ່ຫົວ ແລະ ຫມວກແບບນີ້ກໍຄືກັນ, ມັນຍັງມີກົ່ນອາຍຂອງກອງທັບເຈົ້າຊາຕິດຫ້ອຍຢູ່, ແຕ່ຊາວນິຄົມສ່ວນຫລວງຫລາຍຈຳຕ້ອງໃສ່ຫມວກແງບຝ້າຍຕະຫລອດຮອດຍາມຫນາວນີ້ຄືກັນ. ພວກເຮົາຍັງບໍ່ຢູ່ໃນຖານະທີ່ຈະໃຫ້ເຄື່ອງນຸ່ງຫົ່ມທີ່ອົບອຸ່ນກວ່ານີ້ແກ່ຊາວນິຄົມເທື່ອ. ທັງລະດູຫນາວ ແລະ ລະດູຮ້ອນ ພວກເຂົາຍັງຄົງນຸ່ງສົ້ງຂາຍາວ ແລະ ເສື້ອຜ້າຝ້າຍບາງໆຄືເກົ່າ. ຈັ່ງຊັ້ນ ໃນລະດູຫນາວພວກເຂົາ ຈຶ່ງມີການເຄື່ອນເຫນັງວ່ອງໄວເປັນພິເສດຢູ່, ມັນຊ່ອຍໃຫ້ພວກເຂົາຍ້າຍບ່ອນໄດ້ຢ່າງວ່ອງໄວພໍປານດາວສະເດັດ ແມ່ນແຕ່ໃນຍາມທີ່ອາກາດຫນາວເຢັນທີ່ສຸດກໍຕາມ.

ຢູ່ນິຄົມເວລາແລງໃນລະດູຫນາວ ອົບອຸ່ນຫນ້າອອນຊອນດີແທ້ໆ. ວຽກງານຕ່າງໆຢຸດເຊົາລົງເວລາ ໕ ໂມງ, ຈັ່ງຊັ້ນ ຈຶ່ງມີເວລາຫວ່າງຮອດ ໓ ຊົ່ວໂມງກ່ອນເຖິງເວລາກິນເຂົ້າແລງ. ຕະ

ກຽງນ້ຳມັນກໍາດໄດ້ຮຸ່ງຫ້ອຍຢູ່ຫລາຍບ່ອນ ແຕ່ກໍບໍ່ແມ່ນພວກມັນນັ້ນ ດອກທີ່ສ້າງບັນຍາກາດອັນມີຊີວິດຊີວາ ແລະ ຄວາມສະດວກສະ ບາຍ. ພາຍໃນຫ້ອງນອນ ແລະ ຫ້ອງຮຽນ, ເຕົາໄຟເລີ່ມອຸ່ນຮຸ່ມຂຶ້ນ ແລ້ວ, ຢູ່ອ້ອມມັນ ພື້ນ ແລະ ຊາວນີຄົມກອງກັນຢູ່ພໍໃຜພໍມັນ, ພວກຫນຶ່ງມາຢູ່ຫັ້ນເພື່ອສ້າງຄວາມອົບອຸ່ນ ສ່ວນອີກພວກຫນຶ່ງມາ ຊຸມນຸມສັງສັນກັນແບບເພື່ອນມິດ. ພື້ນແຕ່ລະດົນທີ່ຖືກມືນ້ອຍໆຂອງ ເດັກນ້ອຍຈູເຂົ້າໃນກອງໄຟສີ່ງສຽງຕ່າງໆອອກມາ ຄ້າຍຄືກັບພວກມັນ ພວມເລົ່າເລື່ອງ ທີ່ເຕັມໄປດ້ວຍຄວາມຕື່ນເຕັ້ນສ່ຽງໄພ ແລະ ສຽງ ຫົວ, ການຕິດຕາມ, ການຍິງກັນ, ຄວາມກ້າຫານແບບເອົາໄວ ແລະໄຊຊະນະໃນຂັ້ນສຸດທ້າຍ, ພວກເດັກນ້ອຍບໍ່ສາມາດຕິດຕາມ ເລື່ອງລາວ ໄດ້ດີປານໃດເພາະພື້ນພວກນັກເລົ່າຍາດກັນເວົ້າໂພດ, ແຕ່ລະຄົນສະແດງຕົວວ່າຟ້າວ ຄືວ່າມີວຽກອື່ນໆລໍຖ້າຕົນຢູ່ ແຕ່ຄວາມ ຫມາຍຂອງແຕ່ລະເລື່ອງນັ້ນຈະແຈ້ງສຳລັບຫມົດທຸກຄົນ: ຊີວິດເຕັມ ໄປດ້ວຍຄວາມມ່ວນຊື່ນ ແລະ ຫນ້າສົນໃຈ. ຕາບຈົນເມື່ອໃດພື້ນ ເຊົາແຕກມຸດມອດໄປແລ້ວ ແລະ ພວກນັກເລົ່າທີ່ພາກັນຈົມປົ່ງຢູ່ ໃນການພັກຜ່ອນຮຸ່ມຮ້ອນ, ເວົ້າຈາກັນຊຸບຊິມດ້ວຍສຽງເມື່ອຍອ່ອນ ແລ້ວເທົ່ານັ້ນ, ພວກເດັກນ້ອຍຈຶ່ງພາກັນມິປາກມິສຽງ.

ຢູ່ໃນກຸ່ມເຫລົ່ານີ້, ເວດກອບສະກີ ເປັນເຈົ້າກຸ່ມຫນຶ່ງ, ເຂົາຜູ້ ນີ້ເປັນນັກເລົ່ານິທານຜູ້ອາວຸໂສຄົນຫນຶ່ງໃນນິຄົມ ຂອງພວກເຮົາ, ຍາມໃດເຂົາກໍມີຜູ້ຟັງຢູ່ອ້ອມຂ້າງເປັນຈຳນວນຫລາຍ.

- ໃນໂລກນີ້ ມີຫລາຍສິ່ງຫລາຍຢ່າງຈົບງາມແທ້ໆເດີ. ພວກ ເຮົາບໍ່ໄດ້ອອກຈາກນີ້ ກໍເລີຍບໍ່ເຫັນຫຍັງຫມົດ, ແຕ່ກໍມີເດັກນ້ອຍ

ບາງຄືນເດີ້ ມັນບໍ່ຍອມໃຫ້ພາດໂອກາດຈັກໜ້ອຍເລີຍລະ, ຫວ່າງ ມໍ່ໆນີ້, ຂ້ອຍຮູ້ຈັກຜູ້ໜຶ່ງ, ມັນໄດ້ໄປຮອດທະເລກາສປຽນ ແລະ ທ່ຽວໄປຮອດເຂດ ໂກກາດ. ຢູ່ບ່ອນນີ້ມີເຫວກັບໂງ່ນຫີນກ້ອນ ໜຶ່ງຊື່ວ່າ "ພະເຈົ້າຊ່ອຍເຮົາຂ້າມ" ເພາະວ່າບໍ່ມີທາງເສັ້ນອື່ນຂ້າມ ຜ່ານໄປໄດ້ເດ້, ສູເຂົ້າໃຈບໍ່ວ່າ ຕ້ອງລອດກ້ອງໂງ່ນຫີນນີ້ໄປຈຶ່ງໄດ້. ມີບາງຄືນລອດຂ້າມໄປໄດ້ ແຕ່ບາງຄືນກໍໄປບໍ່ໄດ້ ກ້ອນຫີນນ້ອຍຕົກ ລົງມາແຕ່ຈອມໂງ່ນຫີນໃຫຍ່ຕະຫລອດເວລາເລີຍລະ, ບຸນມຶງຫລາຍ ລະ ຄົນບໍ່ຕົກລົງກົກຫົວມຶງນະ, ເພາະວ່າຄົນມັນກົກມຶງກະມີຫວັງ ຕົກລົງໄປນອນຢູ່ກົ້ນເຫວ ບໍ່ຄອງວ່າໃຜຊິໄປດຶງຂຶ້ນມາໄດ້ເລີຍ.

ຊາໂດຮອບ ຍືນຢູ່ຂ້າງໆເຂົາຢ່າງລະມັດລະວັງ ທັງແນມເບິ່ງຕາ ສີຟ້າຂອງເວດກອບສະກີ ດ້ວຍຄວາມລະວັງເທົ່າ ໆ ກັນ.

-ແລ້ວມຶງເດລະ ໂກສະເຈຍ, ມຶງເປັນຫຍັງບໍ່ໄປບ່ອນຫັ້ນ ເອງລອງເບິ່ງແດ່, ເຂົາເວົ້າຂຶ້ນ, -ບາງທີພະເຈົ້າອາດຊິຊ່ອຍມຶງ ຂ້າມນັ້ນບໍ່ຈັກເດ້?

ຫົວພວກເດັກນ້ອຍທີ່ກົກແປວໄຟສີແດງຈາກເຕົາຜີງສາດສ່ອງ ໃສ່ຫັນໄປທາງຊາໂດຮອບ.

ເວດກອບສະກີ ຫັນໃຈໃຫຍ່ດ້ວຍທ່າທາງບໍ່ພໍໃຈ:

-ໂຕບໍ່ເຂົ້າໃຈດອກວ່າ ມັນແມ່ນຫຍັງ, ຊູຮາ ເອີຍ. ໄດ້ເຫັນ ທຸກສິ່ງທຸກຢ່າງນະ ມັນເປັນຕາສົນໃຈເທົ່າໃດ, ບັກນ້ອຍນັ້ນມັນໄດ້ ໄປບ່ອນຫັ້ນແທ້ ໆ...

ດ້ວຍຮອຍຍິ້ມເຍີ້ຍໆຄືເກົ່າຂອງເຂົາ, ຊາໂດຮອບ ເວົ້າໃຫ້ ໂກ ສະເຈຍ ວ່າ:

-ແຕ່ວ່າ ຄົນແມ່ນເຮົາ, ເຮົາຊິການມັນເລື່ອງອື່ນດອກ, ບັກຂີ້ສູດນັ້ນນ່າ... ເກີງເວລາອັດກືອກແລ້ວລະສູເອີ້ຍ.

-ໂຕຊິການຫຍັງມັນລະ? ເວດກອບສະກີ ການຊີງຄືດຮິ່ນຕອງນໍາ.

ຊາໂດຮອບ ເລືອດດານ້ອຍເບິ່ງບັກນ້ອຍຫນຶ່ງຊຶ່ງຢືນເອົາອີ່ຫຍັງເຂີ່ຍປາກເຕົາຫລົ້ນຢູ່.

-ກູຊິການວ່າ ມັນໄດ້ບັງສູດຄູນຂອງມັນຫລືຍັງ. ບັກນັ້ນຫວະ ມັນຄືນຂີ້ສູດຜູ້ຫນຶ່ງທີ່ນັ້ນລະ, ໄປທ່ຽວມາຮອບໂລກແລ້ວ ຊ້ຳຜັດມາອາໄສກິນນໍາຫມູ່, ໃຫຍ່ຂຶ້ນມາໂດຍບໍ່ຮ່ຳຮຽນຫຍັງ, ກູກ້າພະນັນວ່າ ມັນບໍ່ຮູ້ຈັກຮອດອ່ານຫນັງສືຊ້ຳ. "ພະເຈົ້າຊ່ອຍເຮົາຂ້າມ" ຊັ້ນຫວະ? ພວກຂີ້ເຮືອນແບບນີ້ ສິມແຕ່ເຂົາທຸບຫົວໃຫ້ມຸ່ນອຸ້ຍອຸ້ຍປຸ້ຍນັ້ນລະ. ໂງ່ນຫີນ ອັນນຶ່ງວ່ານັ້ນ ເຂົາເອົາໄປໃສ່ໄວ້ໃຫ້ພວກມັນໂດຍສະເພາະດອກ!

ພວກເດັກນ້ອຍພາກັນຫົວຂຶ້ນໂຄບໆ, ໃຜຜູ້ຫນຶ່ງຊ້ຳແນະນໍາຂຶ້ນວ່າ:

-ໂກສະເຈຍ ຢູ່ນໍາພວກເຮົາດີກວ່າ, ເຈົ້າບໍ່ແມ່ນຄົນຫົວຂີ້ເລື່ອຍຕວ່າເບາະ?

ຢູ່ໃກ້ກັບເຕົາຝັງອີກຫນ່ອຍຫນຶ່ງ, ຊີລັນຕີ ຫົວໂລ້ນນັ່ງຢູ່ກັບພື້ນ, ຫົວເຂົ່າຈ່າງອອກ ກຳລັງເລົ່າເລື່ອງຍາວຢ່າງພິດພື້ນ:

-...ພວກເຮົາຄືດວ່າແນວນີ້ລະ, ຄືເພິ່ນວ່ານັ້ນລະ, ອັນໃດດີກໍສຸດລີ່ງດີ. ແຕ່ບັກເວນນັ້ນຕີ, ມັນຮ້ອງໄຫ້ແລ້ວກໍກອດຈູບໄປຫມົດທຸກຄົນ, ບັກຄົນພານສັນດານຫຍາບ, ແຕ່ພໍກັບຄືນໄປຫ້ອງ

ການຂອງມັນທ່ນັ້ນ, ມັນເຮັດແນວຊື່ວໆໂລດ. ມັນສັ່ງຫມາດົມກິ່ນ ຂອງມັນອອກໄປໃນເມືອງ, ເປັນແນວນັ້ນລະ, ເຊົ້າມື້ຕໍ່ມາ, ພວກ ເຮົາເຫັນຫຍັງວ່າດີ, ຕຳຫລວດມ້າມາເປັນກອງ, ຜູ້ໃດກໍພາກັນ ເວົ້າວ່າ ພວກເຂົາຊິມາຂ້ຽນຕີພວກເຮົາຢ່າງໃຫຍ່. ແຕ່ກູກັບອ້າຍກູ ນໍເດ໊ ບໍ່ມັກຈັກດີ໊ເລີຍລະເວີ໊ຍ ອັນເລື່ອງຊິມາເກັ໊ສິງເກັ້ຜ້າກັນນີ໊ນະ, ກະທ່ນັ້ນລະ, ກູກະດູດີນມັນຢູ່ອື່ນບາງອັນນັ້ນນະ ແຕ່ກູຄຶດແບບນີ໊, ກູ ຄຶດວ່າພວກເຂົາຊິບໍ່ຕີ່ອື່ນບາງນັ້ນດອກ...

ຢູ່ເບື້ອງຫລັງຂອງ ຊີລັນຕີ, ເກີບໂບກ ຜ້າຫົ່ມຂອງ ກາລີນາ ອີວາໂນວິດ ຍຽດວາງຢູ່ເທິງພື້ນ, ສ່ວນໂຕເຂົາດູດກອກພົ່ນຄວັນ ລອຍເປັນວົງລີງມາ, ມັນແຕກອອກເປັນສອງລອນແລ້ວປິ່ນວົນ ອ້ອມຫົວມົນໆບັກນ້ອຍຫນຶ່ງ ຈາກນັ້ນຈຶ່ງລົມທົບປະສົມເຂົ້າຄວັນ ຮ້ອນຂອງເຕົາຜີງ. ເຂົາລີ່ວຕາກັບຂ້າພະເຈົ້າບາດຫນຶ່ງກ່ອນຈຶ່ງຂັດ ຊີລັນຕີ ວ່າ:

- ເຮີ໊ຍ...ຊີລັນຕີ, ເວົ້າຄວາມຈິງເທາະນ່າ, ພວກກາຝາກນັ້ນ ມັນໄດ້ຟາດບ່ອນເຫງົ້າຂາໂຕແລ້ວແມ່ນບໍ່ລະ?

ຊີລັນຕີ ງຶກຫົວໄປທາງຫລັງ ຫົວຂັ້ນແຮງໆ ຈົນເກືອບລົ້ມລົງ ໃສ່ພື້ນເຮືອນ.

- ແມ່ນແທ້, ກາລີນາ ອີວາໂນວິດ, ພວກມັນເຮັດແທ້, ເຈົ້າ ເວົ້າຖືກແລ້ວ ແລະ ທັງຫມົດນີ້ກໍແມ່ນເພື່ອແມ່ຍິງຄົນນັ້ນ... ອ່າ ພວກເຜດເອີ໊ຍ!

ຢູ່ອ້ອມເຕົາຜີງຫນ່ວຍອື່ນໆ, ຢູ່ໃນຫ້ອງຮຽນ. ຫ້ອງພັກ ສຽງເລົ່ານິທານດັງອຸ່ມໆຫລັ່ງໄຫລອອກຈາກປາກບັກເລົ່າທັງຫລາຍ ບໍ່ຂາດສາຍ. ແວກຊະເບັບ ກັບ ກາຣາບານິບນັ້ນ ແນ່ນອນແລ້ວວ່າຕ້ອງໄປຢູ່ຫ້ອງນາງ ລີດາ ພຸ້ນ, ນາງຈະຕ້ອນຮັບພວກເຂົາດ້ວຍນ້ຳຊາ ແລະ ກວນຫມາກໄມ້. ແຕ່ນ້ຳຊາກໍ່ບໍ່ສາມາດເກືອດຫ້າມບໍ່ໃຫ້ແວກຊະເບັບ ຄຽດໃຫ້ ເຊມີຍົງ ໄດ້ດອກ.

ເຂົາເວົ້າແບບຄົນປາກພ້ຳວ່າ:

-ກະ ກະ ດີ ຢູ່ດອກ ທ... ທີ່ໂຕ ໆ ເວົ້າຕະຫລົກຫລີ້ນຢູ່ໄດ້ຫມົດມື້ແນວນີ້, ຕ... ແຕ່ ວ່າ ຕ.. ໂຕ ຄ... ຄວນຮູ້ຈັກຄຶດແດ່...

-ເອີ້...ແລ້ວ ໂຕຊິໃຫ້ເຮົາຄຶດຫາຫຍັງລະ? ໂຕມີເມຍ, ມີງົວ ມີເຄື່ອງຂອງເຕັມເລົ້າເຕັມເຍຍແລ້ວຊຸນຫວະ? ໂຕ ຊິຄຶດຫາຫຍັງອີກ...? ຢູ່ໄປຈັ່ງຊີ້ກໍພໍແລ້ວ.

-ກ.. ກໍຕ້ອງຄຶດ ກ... ເກືງ ຊີວິດ ນັ້ນແລ້ວ, ບັກບັກ ຕະ ຕະ ຫລົກເອີ້ຍ!

-ຈັ່ງແມ່ນຊາດໂຕໂງ່ເນາະ, ໂກເລຍ ເອີ້ຍ! ໂງ່, ໂງ່ ຈົນບໍ່ມີບ່ອນເວົ້າ. ອັນຄຶດສຳລັບໂຕທັ້ນແມ່ນຕ້ອງຢູ່ຕັ່ງອີ້, ຕີ່ຕາກວ້າງໆເບິ່ງໄປຂ້າງຫນ້າຊຸນຫວະ, ແຕ່ຄົນຜູ້ເຂົາມີສະຫມອງທັ້ນກໍ້ ຄວາມນຶກຄຶດມັນແລ່ນມາເອງດອກ, ສ່ວນວ່າພວກຄືມຶງທັ້ນຊ້ຳຕ້ອງເສບອັນໃດອັນຫນຶ່ງກ່ອນ ຈິ່ງມີຄວາມຄຶດ...

-ໂທ່...ເປັນຫຍັງເຈົ້າຈິ່ງຮ້າຍລາວແທ້, ນາງນ້ອຍລີດາ ເວົ້າ

24/VII
ຫ້າມຈຳໜ່າຍ

ຂຶ້ນ, -ຍາມໃດຄົນເຮົາໃຊ້ຄວາມຄິດ, ມັນກໍຕ້ອງມີອັນໃດອັນໜຶ່ງອອກມາດອກ.

-ອອກມາຈາກໃຜ? ຈາກ ໂກເລຍ ນີ້ຫວະ? ບໍ່ມີທາງດອກ! ເຈົ້າຮູ້ບໍ່ວ່າ ໂກເລຍ ເປັນຫຍັງ? ແມ່ນອີງເຍຊູນ້ອຍພຸ້ນໃດ໋. ເຂົາສະແຫວງຫາສັດຈະທຳ. ເຈົ້າເຄີຍເຫັນຄົນບາງແບບນີ້ແລ້ວຫວະ? ມັນເຮັດຄືວ່າ ຈະເອົາສັດຈະທຳນັ້ນມາຜັດເກີບໄດ້ຈັ່ງຊັ້ນລະ.

ເຊມີຍົງ ກັບ ໂກເລຍ ພາກັນອອກຈາກຫ້ອງພັກຂອງ ລີດາ ດ້ວຍຄວາມຮູ້ສຶກເປັນມິດທີ່ດີຕໍ່ກັນຄືເກົ່າ, ເຊມີຍົງ ຮ້ອງເພງຫອງກ້ອງດັງໄປທົ່ວນິຄົມ, ສ່ວນ ແວກຊະເນັບ ເຊິ່ງຍ່າງກອດຄໍເຂົາມາຄ່ອຍໆ ກໍເວົ້າກັບເຂົາດ້ວຍນ້ຳສຽງໜັກແໜ້ນວ່າ:

-ນ... ໃນ ເມື່ອ ວ... ວ່າ ມີ ກ... ການປະຕິວັດແລ້ວ, ຕ... ໂຕເຂົ້າໃຈດີ ວ່າ ທຸກຢ່າງມັນຕ້ອງເດີນໄປດ້ວຍດີ.

ຫ້ອງພັກອັນຕ່ຳຕ້ອຍຂອງຂ້າພະເຈົ້າ ກໍມີໂອກາດຕ້ອນຮັບແຂກຄົນຄືກັນ. ບັດນີ້ຂ້າພະເຈົ້າຢູ່ກັບແມ່ ເຊິ່ງເປັນຍິງຊະລາອາຍຸຫລາຍ, ວັນເວລາໃນບັ້ນປາຍຂອງຊີວິດຂອງແມ່ຄ່ອຍໆ ດຳເນີນໄປຢ່າງສະຫງົບງຽບ ທ່າມກາງເມກໝອກຈາງໆແຫ່ງຍາມອັດສະດົງທີ່ງຽບສະຫງັດ ແລະ ກະຈ່າງໃສ.

ເດັກນ້ອຍນິຄົມທຸກຄົນເອີ້ນລາວວ່າ ແມ່ເກົ້າ. ບັດນີ້ ຊູຣາ ເກເວລີ ກຳລັງຢູ່ນຳລາວ, ເຂົາເປັນນ້ອງຂອງ ມີເຕຍ ເຊເວລີ ເຊິ່ງເປັນຜູ້ນ້ອຍກວ່າໝູ່ຢູ່ໃນນິຄົມທັງມີດັງແຫລມທີ່ສຸດ. ເຂົາມາຢູ່ໃນນິຄົມດົນແລ້ວ ແຕ່ບໍ່ໃຫຍ່ຂຶ້ນເລີຍ ຫາກແຕ່ຂະຫຍາຍຕົວ

ປິ່ງແຫລມອອກໃນທິດທາງຕ່າງໆ ເຊັ່ນວ່າ ມີດັງແຫລມປຶດ, ຫູແຫລມ, ຄາງແຫລມແລະແສງຕາກໍ່ສັກໄປທາງໜ້າຄືກັນ.

ສຸຣາ ນັ້ນຍາມໃດກໍ່ມັກເຮັດກິດຈະການອັນໃດອັນໜຶ່ງຢູ່ສະເໝີ. ໃນແຈງສວນອ່າວລີ້ລັບບ່ອນໜຶ່ງ ເຂົາໄປເຮັດຄອກໄມ້ໃສ່ກະຕ່າຍຄູ່ໜຶ່ງໄວ້ ແລະ ຢູ່ໃນຫ້ອງໃຕ້ດິນກັບຫ້ອງໝໍ້ນ້ຳຮ້ອນເຂົາລ້ຽງກາບ້ອຍໄວ້ໂຕໜຶ່ງ. ບາງເທື່ອ, ຢູ່ໃນກອງປະຊຸມໃຫຍ່, ພວກ ກິມໂຊໂມນ ກໍ່ຕູ່ຫາວ່າເຂົາສວຍໃຊ້ການຜະລິດເຫລົ່ານີ້ເພື່ອຫາເງິນ ໂດຍເວົ້າວ່າ ເຂົາທຳກິດຈະການແບບເອກະເທດຂຶ້ນ. ແຕ່ ສຸຣາ ກໍ່ປ້ອງກັນຕົນເອງຢ່າງແຂງຂັນ ແລະ ທ້າທາຍຮຽກຮ້ອງດ້ວຍນ້ຳສຽງບໍ່ສຸພາບປານໃດວ່າ:

- ຈັ້ນຫາພິຍານຫລັກການມາຕີວ່າ ເຮົາຂາຍອັນໃດອັນໜຶ່ງ? ໂຕເຫັນເຮົາເຮັດຈັ່ງຊັ້ນ ຈັ້ນຫວະ?

- ຈັ້ນໂຕເອົາເງິນມາແຕ່ໃສ?

- ເງິນອີ່ຫຍັງ?

- ອ້າວ ກໍ່ເງິນທີ່ໂຕຊື້ເຂົ້າໜົມອົມມື້ວານນີ້ເດ້.

- ໂອ່.. ອັນນັ້ນຫວະ ເງິນນະ! ແມ່ເກົ້າເອົາໃຫ້ເຮົາ ໑໐ ອັດ.

ບໍ່ມີໃຜກ້າເວົ້າຫຍັງຕ້ານກັບແມ່ເກົ້າກອດຢູ່ໃນກອງປະຊຸມໃຫຍ່ນະ, ຍາມໃດກໍ່ຕ້ອງມີຈຳນວນໜຶ່ງລະ ທີ່ເອົາຕົວລອດຍ້ອນອິດທິພົນຂອງລາວ. ພວກເຂົາມາຮັບໃຊ້ລາວ, ໄປຊື້ເຄື່ອງເລັກໆ ນ້ອຍໆໃຫ້ລາວຢູ່ບ້ານ ກົງຊາຣອບກາ, ແຕ່ພາກັນລະວັງບໍ່ໃຫ້ຂ້າພະເຈົ້າເຫັນ, ແລະ ເມື່ອໃດພວກເຂົາແນ່ໃຈທີ່ສຸດວ່າ ຂ້າພະເຈົ້າມີວຽກຢູ່ນອກ ແລະ ຈະບໍ່ກັບເຂົ້າເຮືອນໄວ, ກໍ່ປາກົດວ່າມີຜູ້ມານັ່ງເຫົາ

ແຂນຢູ່ໂຕະແມ່ເຖົ້າຮອດ ໔ ຫລື ໖ ຄືນເພື່ອກິນນ້ຳຊາ ຫລືນ້ຳ ຕົ້ມຫມາກໄມ້ເຊິ່ງລາວເຮັດໄວ້ໃຫ້ຂ້າພະເຈົ້າກິນ ແຕ່ຫາກຂ້າພະ ເຈົ້າບໍ່ມີເວລາມາກິນ. ເນື່ອງຈາກວ່າສະມັດຕະພາບຂອງຄວາມຊົງ ຈຳຫລຸດຍ່ອນລົງຫລາຍຍ້ອນຄວາມແກ່ຊະລາ, ແມ່ເຖົ້າຈຶ່ງບໍ່ຈື່ຮອດ ຊື່ສຽງຮຽງນາມນິດສະຫາຍຂອງລາວຊ້ຳ ແຕ່ລາວກໍ່ຈື່ຈຳ ຊູຣາ ໄດ້ ດີກວ່າຫມູ່ ທັງນີ້ກໍ່ຍ້ອນວ່າມັນເປັນສະມາຊິກເກົ່າແກ່ຂອງນິຄົມຢ່າງ ຫນຶ່ງ ແລະ ກໍ່ຍ້ອນວ່າມັນຜູ້ຊ່າງປາກຊ່າງເວົ້າ ມີຊີວິດຊີວາກວ່າ ຫມູ່ນຳ.

ມື້ນີ້ ຊູຣາ ມາຫາແມ່ເຖົ້າດ້ວຍເຫດພິນພິເສດ ແລະ ສຳຄັນ ບາງອັນ.

-ສຳບາຍດີ.

-ສຳບາຍ, ເປັນແນວໃດ ຊູຣາ, ຄືບໍ່ເຫັນຫນ້າເຫັນຕາ ຫລານດົນແລ້ວ? ຫລານບໍ່ສະບາຍຫວະ?

ຊູຣາ ນັ່ງລົງຕັ່ງມ້າໂຕຫນຶ່ງ ແລະ ພາດຫມວກແງບ ເຊິ່ງແຕ່ ກ່ອນເປັນສີຂາວນັ້ນໃສ່ຫົວເຂົ່າເຈົ້າຂອງ ບ່ອນມີຮອຍຕາບໆຕື່ມ. ເສັ້ນພົມແຂງຂອງຂົນແປງສີຂາວໆຢູ່ຫົວຊຸ້ນເກ່ເດ່ ລໍຄອຍມືດຶງ ເດີມາແກອອກ, ດັ່ງແຫລມເບິດຊຸ້ນເທິງຟ້າ, ເຂົາສັກຕາເບິ່ງ ພົ້ນເພດານຕ່າງໆແລ້ວເວົ້າວ່າ:

-ບໍ່. ຫລານບໍ່ເປັນຫຍັງດອກ ແຕ່ກະຕ່າຍຂອງຫລານດີ, ມັນ ບໍ່ສະບາຍ.

ແມ່ເຖົ້ານັ່ງຢູ່ເທິງຕຽງນອນ ລາວກຳລັງຄົນຄັງສົມບັດຢູ່ ໃນນັ້ນ

ມີທັງເສດຜ້າ, ເຂັມຮ້ອຍຝ້າຍແລ້ວ, ກໍ່ແລບ ແລະ ສິມບັດອື່ນໆ ຂອງລາວ.

-ກະຕ່າຍຫລານບໍ່ສະບາຍຊັ້ນຫວະ? ຕ້າຍ ເປັນຕາດູຕິນ ເນາະ, ແລ້ວຫລານເຮັດຫຍັງໃຫ້ມັນແດ່ລະ?

-ບໍ່ມີຫຍັງເຮັດແລ້ວ, ສູຣາ ເວົ້າຢ່າງເຄັ່ງຂຶມ, ຕາເບື້ອງຂວາ ພັບລົງ ອັນເປັນສັນຍາລັກວ່າ ເຂົາພະຍາຍາມອົດກັ້ນຄວາມກັງວົນ ໄວ້ພໍແຮງແລ້ວ.

-ລອງປິ່ນປົວບໍ່ໄດ້ຫວະ? ແມ່ເຖົ້າເວົ້າທັງເບນມນຳ ສູຣາ.

-ຫລານບໍ່ມີຫຍັງຊິປົວມັນເດ໋! ເຂົາຊຶມບອກ.

-ຕ້ອງໃຊ້ຢາ ຊັ້ນຫວະ?

-ຄັນໄດ້ແປ້ງຫມາກເດືອຍຈັກຫນ້ອຍ... ຈັກເຄິ່ງຈອກທໍ່ນັ້ນ ລະ...

-ກິນນ້ຳຊາບໍ່ ສູຣາ? ແມ່ເຖົ້າຖາມຂຶ້ນ, -ຫັ້ນ, ເຕົ້ານ້ຳຊາ ວາງຢູ່ເທິງເຕົາ, ຈອກຢູ່ພຸ້ນ, ໃສຫຍິບມາໃຫ້ແມ່ເຖົ້ານຳຈັກ ຈອກດຸ.

ສູຣາ ວາງຫມອກແງບເຂົາໄວ້ເທິງຕັ່ງຢ່າງລະມັດລະວັງ ແລ້ວ ໄປວິນວຽນເງີຍງະໆ ຢູ່ອ້ອມເຕົາທີ່ອ່າວສູງກວ່າເຂົາຈັກຫນ້ອຍ, ໃນ ຂະນະດຽວກັນ, ແມ່ເຖົ້າກໍ່ຄ່ອຍໆລຸກຂຶ້ນຍ່າງຍ່ອງຕີນໄປຫາຊັ້ນໄມ້ ແປ້ນ, ຄວາຈັບເອົາກົງນ້ອຍສີບົວທີ່ລາວມ້ຽນແປ້ງຫມາກເດືອຍ ໄວ້.

ກຸ່ມທີ່ແຈ່ມໃສອຶກກະທຶກກວ່າຫມູ່ ຈຸ້ມລຸມກັນຢູ່ໃນໂຮງລົດ ນ້ອຍໆ ເຊິ່ງເພິ່ນໃຊ້ເປັນໂຮງຊ່າງແປງກວຽນ ລໍ້ ແລະ ບ່ອນນອນ

ຂອງ ໂກເຊຍ. ຢູ່ແຈໆຫນຶ່ງຂອງຫ້ອງເຂົາໄດ້ເຮັດເຕົາຜິງຕ່າງຂຶ້ນດ້ວຍມືຕົນເອງເຕົາຫນຶ່ງ, ຫມໍ້ນ້ຳຊາຫນຶ່ງແຂວນຫ້ອຍຢູ່ຊື່ເຕົາ, ສ່ວນອີກແຈຫນຶ່ງມີຕຽງພັບ ແລະ ຜ້າຫົ່ມລາຍຫລາຍສີຜືນຫນຶ່ງ. ໂກເຊຍ ນັ່ງຢູ່ເທິງບ່ອນນອນຂອງເຂົາ ສ່ວນແຂກພາກັນນັ່ງຕາມທ່ອນໄມ້, ເທິງເຄື່ອງໄມ້ເຄື່ອງມືແລະກອງກົງລໍ້. ຫມົດທຸກຄົນພວກເຂົາພະຍາຍາມໃຊ້ຄວາມສາມາດສຸດຂີດເພື່ອລົບລ້າງ ຊຸດກິ່ນຄວາມເຊື່ອຖືທາງສາດສະຫນາທີ່ຝ່າຍນີ້ສະສົມທ້ອນໄວ້ຕະຫລອດຊີວິດຜ່ານມາ ໃຫ້ອອກຈາກວິນຍານຂອງລາວ.

ໂກເຊຍ ຍິ້ມດ້ວຍທ່າທີເປັນທຸກໃຈ.

-ບໍ່ດີດອກ, ສູເອີຍ!... ບໍ່ດີດອກ... ຂໍພະເຈົ້າຍົກໂທດໃຫ້ພວກເຮົາ! ແຕ່ລະວັງຢ່າໃຫ້ພະອົງໂມໂຫ...

ແຕ່ກ່ອນພະອົງຈະທັນມີເວລາມາສະແດງຄວາມ ໂມໂຫໂທໂສ, ຄວາມໂມໂຫຂອງກາລີນາ ອີວາໂນວິດ ກໍລະເບີດອອກມາກ່ອນ. ຈາກເງົາມືດປ່ອງປະຕູ ລາວໂປໂລເຂົ້າມາບ່ອນຮຸ່ງ, ໃນມືຖືກອກແກວ່ງເວີບໆ.

-ແມ່ນພວກສູມາລົບກວນຜູ້ເຖົ້າເຮັດຫຍັງເກາະຫື? ແລ້ວພວກສູກ່ຽວຂ້ອງຫຍັງກັບພະເຍຊູເຈົ້າ? ບອກກູມາເບິ່ງດູ? ໃຫ້ກູຈັບໄດ້ເບິ່ງ ກູຊິຈັດການ ບໍ່ວ່າແຕ່ຕ້ອງໄຫ້ວພະເຍຊູດອກ ກູຊິໃຫ້ໄຫວ້ນັກບຸນ ນີໂກລາຍ ນຳພຸ້ນລະ. ອຳນາດໂຊວຽດປົດປ່ອຍພວກສູອອກຈາກເລື່ອງຫມູ່ນີ້ຫມົດແລ້ວ, ກໍດີແລ້ວເດ້ ສູກໍພາກັນດີໃຈຢູ່ພໍສູຊັ້ນຕວ່າ, ຢ່າມາລົບກວນຜູ້ເຖົ້າຜູ້ແກ່ອີກເດ້.

- ຂໍພະເຈົ້າຄຸ້ມຄອງເຈົ້າທ້ອນ, ກາລີນາ ອີວາໂນວິດ ເອີຍ, ເຈົ້າມາຊ່ອຍຜູ້ເຖົ້າແທ້ ໆ ລະ.

- ມີຫຍັງເຈົ້າໄປບອກຂ້ອຍໂລດ, ບໍ່ມີຂ້ອຍ ຈ້າງເຈົ້າກະສູ້ພວກເຂົາບໍ່ໄຫວດອກພວກອັນທະພານຫມູ່ນີ້ ແລ້ວກໍຢ່າໄປຫວັງເພິ່ງພະເຈົ້າຂອງເຈົ້າຫລາຍ.

ພວກເດັກນ້ອຍທຳທ່າຢ້ານກົວ ກາລີນາ ອີວາໂນວິດ, ພາກັນຫລີບລ່ຽງອອກຈາກໂຮງລົດ ຈາກນັ້ນກໍແຈກຢາຍກັນໄປຍັງຈອກແຈອື່ນໆພາຍໃນນິຄົມ. ຫຼັງຈາກນັ້ນຂະຫນາດໃຫຍ່ ແບບນອນລວມຫມົດໄປຈາກນິຄົມພວກເຮົາແລ້ວ, ພວກນັກຮຽນພາກັນນອນຮ່ວມກັນໃນຫ້ອງ ບ່ອນ ຜີ ຫາ ຊ ຄົນ. ເຮັດແບບນີ້ຄວາມສາມັກຄີພາຍໃນກຸ່ມຂອງພວກເຂົາປາກົດວ່າຫນັກແຫນ້ນຂຶ້ນ, ລັກສະນະສະເພາະຂອງແຕ່ລະກຸ່ມ ກໍສະແດງອອກຢ່າງຈະແຈ້ງກວ່າເກົ່າ, ຈັ່ງຊັ້ນການເຮັດວຽກຮ່ວມກັບພວກເຂົາຈຶ່ງຫນ້າສົນໃຈຂຶ້ນຫລາຍ. ກຸ່ມທີ່ ໑໑ ແມ່ນກຸ່ມເດັກນ້ອຍກວ່າຫມູ່, ກຸ່ມນີ້ເກີດຂຶ້ນຕາມຄວາມຮຽກຮ້ອງຈົນຈໍຂອງ ເກອໍເກັບສະກີ. ຄືກັນກັບແຕ່ກ່ອນໆ, ເຂົາເບິ່ງແຍງຕິດຕາມເດັກນ້ອຍຢ່າງບໍ່ອິດບໍ່ເມື່ອຍເປັນ, ເຂົາບົວລະບັດ ອາບນ້ຳ ແລະ ຫລິ້ນກັບພວກເຂົາ, ຮ້າຍພວກເຂົາ, ເອົາອົກເອົາໃຈພວກເຂົາບໍ່ຕ່າງຫຍັງແມ່ຄົນຫນຶ່ງ, ພະລັງແຫ່ງຄວາມເຂັ້ມແຂງອົດທົນ ແລະ ວຽກງານພິເສດ ພິລ້ຳອັນນີ້ຂອງ ເກອໍເກັບສະກີ ໄດ້ເຮັດໃຫ້ຈິດວິນຍານອັນແຂງກະດ້າງຂອງຊາວນິຄົມ ຕ້ອງງືດງໍ້ໄປນຳ ແລະພຽງແຕ່ວຽກງານອັນນັ້ນກໍສາມາດລຶບລ້າງແນວຄິດບໍ່ດີຕໍ່ຄຳທີ່ວ່າ ເຂົານັ້ນເປັນລູກຊາຍຂອງເຈົ້າແຂວງເຂດ ອຽກກູດ.

ນິຄົມຂອງພວກເຮົາໄດ້ຮັບຄູເຝິກມາຕື່ມອີກ. ຂ້າພະເຈົ້ານັ້ນຍາມໃດກໍຊອກຫາຄົນເຂັ້ມແຂງ ຈິງຈັງ ຢ່າງອົດທົນ ແລະ ກໍໂຊກດີເຕີບທີ່ສາມາດ ໄດ້ຜູ້ສົມຄວນເຕີບຈາກວົງການສຶກສາຂອງກະຊວງທີ່ບໍ່ໄດ່ແຈ່ມໃສດີປານໃດເລີຍ. ແມ່ນຢູ່ໃນສວນໄຮ່ນອກເມືອງຂອງສະຫະພັນຄູນີ້ເອງ ຂ້າພະເຈົ້າໄດ້ພົບຄົນທີ່ຕ້ອງການຜູ້ໜຶ່ງ ເຊິ່ງເຮັດວຽກເປັນຄົນເຝົ້າຍາມ, ຜູ້ນີ້ຊື່ວ່າ ປາແວນ ອີວາໂນວິດ ຊູກບິນ. ເຂົາເປັນຄົນມີການສຶກສາ ມີກິລິຍາມາລະຍາດຮຽບຮ້ອຍຄ້າຍໆກັບນັກບວດ ພ້ອມດຽວກັນກໍເປັນສຸພາບບຸລຸດຜູ້ໜ້າຮັກ. ຂ້າພະເຈົ້າ ພໍໃຈໃນຕົວຂອງເຂົາຍອນຄຸນສົມບັດພິເສດອັນນີ້: ເຂົາເປັນນັກຢັ່ງຈິດໃຈ ທາດແທ້ຂອງມະນຸດໄດ້ຢ່າງວິເສດສຸດ, ດ້ວຍຄວາມຫລົງໄຫລຂຶ້ນອີກຂຶ້ນໃຈແບບນັກສະສົມຄົນໜຶ່ງ, ເຂົາສາມາດເວົ້າເຖິງຈຸດແຕກຕ່າງລະຫວ່າງນິດໄສໃຈຄໍຂອງຄົນ, ໄຈ້ແຍກນິສັຍອັນຄ້າຍຄືກັນທີ່ສຸດຂອງບຸກຄະລະພາບ, ຮູ້ຈັກເວົ້າເຖິງຄວາມງາມຂອງລັດທິວິລະຊົນແລະເງົາມືດອັນເລິກລັບທີ່ແຝງຊ້ອນຢູ່ໃນຄວາມຕ່ຳຊາມ ຂອງມະນຸດ. ເຂົາໃຊ້ຄວາມຄິດກ່ຽວກັບເລື່ອງນີ້ຫລາຍ ແລະ ສັງເກດຫາສັນຍານແຫ່ງກົດເກນໂຮມຫມູ່ອັນໃຫມ່ໆທີ່ພົ້ນໂຜ່ຂຶ້ນໃນຝູງຊົນຢ່າງພາກພຽນ. ຂ້າພະເຈົ້າເຫັນເຫັນຢູ່ແລ້ວວ່າ ແນວຄິດບໍ່ຈິງຈັງແບບນີ້ຂອງເຂົາ ບໍ່ອາດພາເຂົາໄປຮອດໃສໄດ້ ແຕ່ຂ້າພະເຈົ້າ ພໍໃຈໃນຄວາມຊື່ກົງ, ຄວາມບໍລິສຸດສະອາດຂອງເຂົາ ແລະ ສິ່ງເຫລົ່ານີ້ເອງທີ່ເຮັດໃຫ້ຂ້າພະເຈົ້າບໍ່ເອົາຫົວຊານໍາຂີດບ່າຫມາຍຍິດ ນາຍຮ້ອຍເອກ ສັງກັດຫນ່ວຍ ໓໕ ແຫ່ງກອງທະຫານບົກຂອງພະເຈົ້າຊາ ເຊິ່ງເຂົາກົກຍາດເອົາມາໄດ້ກ່ອນການປະຕິວັດເດືອນຕຸລາ ເພາະ

ສະນັ້ນເຂົາຈຶ່ງບໍ່ໄດ້ຖືກສັງກັດຢູ່ກອງທະຫານຂາວ ແລະ ບໍ່ໄດ້ມີວິລະກຳອັນໃດທີ່ເຮັດໃຫ້ຊີວະປະຫວັດດ່າງເປື້ອນ, ເຂົາຈຶ່ງໄດ້ຮັບຍົດເປັນຜູ້ບັງຄັບກອງຮ້ອຍຢູ່ໃນກອງຫນູນຂອງກອງທັບແດງ.

ຜູ້ທີ່ສອງ ທີ່ຂ້າພະເຈົ້າຄົ້ນພົບແມ່ນ ຊີໂນວີ ອີວາໂນວິດ ບູດໄຊ. ເຂົາມີອາຍຸໄດ້ ໒໗ ປີແລ້ວ ແຕ່ຫາກໍຮຽນສຳເລັດມາຈາກໂຮງຮຽນສິນລະປະກຳໃຫມ່ໆ ແລະເຂົາຖືກສົ່ງມາຫາພວກເຮົາໃນຖານະຄູສອນແຕ້ມຮູບຜູ້ຫນຶ່ງ, ພວກເຮົາພວມຕ້ອງການນັກແຕ້ມເພື່ອກະໂຕໂຮງຮຽນເອງແດ່ ແລະ ກໍທັງເພື່ອການສະແດງລະຄອນນຳ, ເວົ້າທົ່ວໄປກໍແມ່ນເພື່ອກິດຈະກຳທຸກຢ່າງຂອງຊາວຫນຸ່ມກົມໂຊໂມນນັ້ນເອງ.

ຊີໂນວີ ອີວາໂນວິດ ບູດໄຊ ປະທັບໃຈພວກເຮົາດ້ວຍຄຸນສົມບັດອັນມີລັກສະນະເດັ່ນແຈ້ງທີ່ສຸດຂອງເຂົາ. ເຂົາເປັນຄົນຈ່ອຍ ແລະ ດຳຄ້ຳພິລຶກ ທັງສຽງເວົ້າກໍຫ້າວຕ່ຳພິລຶກຈົນເປັນເລື່ອງລຳບາກຢ່າງຫນຶ່ງໃນການທີ່ຈະໂອ້ລົມກັບເຂົາ. ມັນຄືກັບວ່າ ເຂົາສົ່ງກະແສສຽງຊະນິດສັ້ນທີ່ສຸດແນວໃດແນວຫນຶ່ງອອກມາຈັ່ງຊັ້ນແຫລະ. ນອກນີ້ເຂົາຍັງແຕກຕ່າງຫມູ່ຢູ່ບ່ອນວ່າ ເຂົາເປັນຄົນງຽບຂຶມຢ່າງແປກປະຫລາດ, ບໍ່ຫວັ່ນໄຫວຄອນແຄນແມ່ນແຕ່ຫນ້ອຍດຽວ. ເຂົາມາຢູ່ກັບພວກເຮົາລະຫວ່າງທ້າຍເດືອນພະຈິກ ແລະ ພວກເຮົາຫມົດທຸກຄົນຕ່າງກໍອົດໃຈຄອງຄອຍຖ້າເບິ່ງວ່າ ເຂົາຈະນຳເອົາຜົນງານທາງດ້ານສິນລະປະອັນໃດອອກມາກ່ອມຊີວິດພວກເຮົານະທີ່ນີ້. ແຕ່ກ່ອນທີ່ເຂົາຈະທັນໄດ້ຈັບສໍ່ຂົນມາເຮັດອັນໃດອັນຫນຶ່ງ, ເຂົາໄດ້

ສ້າງຄວາມງຶງງວາຍສົງໄສໃຫ້ແກ່ພວກເຮົາ ດ້ວຍການສະແດງອອກ ຊະນິດຢູ່ນອກອາຊີບສິນລະປິນຂອງເຂົາອອກມາ.

ເຂົາມາຮອດບໍ່ພໍເທົ່າໃດມື້ ພວກຊາວນິຄົມກໍມາບອກໃຫ້ຂ້າພະເຈົ້າຮູ້ວ່າ ແຕ່ລະເຊົ້າໃດເຂົາອອກຈາກຫ້ອງນອນທັງທີ່ປະເປືອຍ, ມີເສື້ອຄຸມຜ້າອ່າວບາງພາດບ່າ, ຍ່າງໄປອາບນ້ຳຢູ່ຫ້ວຍໂກໂລມາກ. ໃນຕອນທ້າຍໆເດືອນພະຈິກເຊັ່ນນີ້ ນ້ຳໃນຫ້ວຍເລີ່ມກ້າມແຂງແລ້ວ ແລະ ໃນອີກບໍ່ດົນມັນກໍຈະກາຍເປັນລານແລ່ນສະເກັດຂອງນິຄົມຢູ່ແລ້ວ. ດ້ວຍການຊ່ອຍເຫລືອຂອງພໍ່ເຖົ້າ ອົດເຊນາດ, ຊີໂນວີ ອີວາໂນວິດ ຂຸດຫລຸມໃສ່ເທິງແຜ່ນນ້ຳກ້ອນ ແລະ ລົງອາບນ້ຳແບບທໍລະມານທຸກງມື້. ຈັ່ງຊັ້ນຕໍ່ມາບໍ່ດົນ ເຂົາກໍຈຳຕ້ອງໄດ້ນອນແຊ່ຢູ່ກັບຕຽງຮອດສອງອາທິດ ຍ້ອນເປັນພະຍາດເຍື່ອຫຸ້ມປອດອັກເສບ, ເມື່ອລຸກໄດ້ເຂົາກໍລົງອາບນ້ຳເຢັນ ເປັນນ້ຳກ້ອນຫັ້ນອີກຕໍ່ໄປ. ເກືອງເດືອນທັນວາ ເຂົາກໍປ່ວຍເປັນພະຍາດທໍ່ປອດອັກເສບແບບສັບສົນອີກ. ບູດໄຊ ຂາດການສອນ ແລະ ເຮັດໃຫ້ຕາຕະລາງການຮຽນຂອງພວກເຮົາຂາດລະບຽບໄປ. ໃນທີ່ສຸດຂ້າພະເຈົ້າກໍຫມົດຄວາມອົດທົນ ແລະ ຂໍຮ້ອງໃຫ້ເຂົາເຊົາປະພຶດຕົນແບບໂງ່ຈ້າແນວນີ້ເສຍ.

ຊີໂນວີ ອີວາໂນວິດ ຕອບຂ້າພະເຈົ້າດ້ວຍສຽງແຫບຫ້າວວ່າ:

- ຂ້ອຍມີສິດລົງອາບນ້ຳ ເມື່ອໃດຂ້ອຍເຫັນວ່າມັນຈຳເປັນ. ກົດຫມາຍແຮງງານບໍ່ໄດ້ຫ້າມເລື່ອງນີ້. ຂ້ອຍຍັງມີສິດເຈັບປ່ວຍອີກຈັ່ງຊັ້ນເບິ່ງຢ່າງເປັນທາງການແລ້ວຄວາມປະພຶດຂອງຂ້ອຍ ຈຶ່ງບໍ່ມີຫຍັງຫນ້າຕິຕຽນລົງໂທດເລີຍ.

- ແຕ່ວ່າ, ຊີໂນວີ ອີວາໂນວິດ ເອີຍ! ຂ້ອຍບໍ່ໄດ້ມາເວົ້າກັບ

ເຈົ້າຢ່າງເປັນທາງການນ່າ. ເປັນຫຍັງຈຶ່ງເຮັດທໍລະມານຮ່າງກາຍໂຕເອງແນວນີ້? ຂ້ອຍພຽງແຕ່ອຸກໃຈນຳເຈົ້າຊື່ ໆ ດອກ.

-ຊັ້ນກໍດີລະ, ຂ້ອຍຊິເວົ້າສູ່ເຈົ້າຟັງເດີ້: ສຸຂະພາບຂອງຂ້ອຍບໍ່ດີ, ລະບົບອະໄວຍະວະຂອງຂ້ອຍຊຸດໂຊມຫລາຍ, ເຈົ້າເຂົ້າໃຈຕິວ່າການມີຊີວິດຢູ່ໂດຍອາໄສຮ່າງກາຍແບບນີ້ມັນຫນ້າເບື່ອຫນ່າຍ ເທົ່າໃດ. ຈັ່ງຊັ້ນ ຂ້ອຍກໍເລີຍຕັດສິນໃຈຢ່າງເດັດດ່ຽວເບິ່ງຈັກເທື່ອວ່າ: ເອົາມັນຈຸ່ມແຊ່ຕໍ່ໄປຈົນກວ່າຈະສາມາດຢູ່ຢ່າງເປັນສຸກ ຫລືວ່າ ໃຫ້ມັນຜຸພັງເປື່ອຍເນົ່າໄປຊໍ້າສາ ອັນກົງຫນັງຕ່ອນນີ້ນະ. ປີກາຍນີ້ຂ້ອຍເປັນເຫຍື່ອປອດອັກເສບ ໔ ເທື່ອ, ປີນີ້ ກະມາຮອດເດືອນທັນວາແລ້ວ ຂ້ອຍຍັງເປັນແຕ່ເທື່ອດຽວຫນຶ່ງ, ຂ້ອຍຄຶດວ່າປີນີ້ອາດຊິເປັນອີກຈັກເທື່ອທັ່ນນັ້ນລະ, ຂ້ອຍມາຢູ່ກັບພວກເຈົ້ານີ້ແມ່ນຕັ້ງເຈດຕະນາໃດເດີ້, ເພື່ອວ່າຊິໄດ້ຢູ່ໃກ້ໆຫ້ວຍນໍ້າດອກ.

ຂ້ອຍສັ່ງໃຫ້ຄົນໄປເອີ້ນ ຊີລັນຕີ ມາ ແລະ ກໍຮ້າຍວ່າ:

-ເຮັດແບບນີ້ແມ່ນຫມົດຄວາມຄິດແລ້ວຫວະ? ມັນຫັນເສຍສະຕິໄປແລ້ວ ແຕ່ເຈົ້າຊໍ້າຜັດໄປຂຸດຮູນໍ້າກ້ອນໃຫ້ມັນ!...

ຊີລັນຕີ ວາແຂນອອກສະແດງວ່າຍອມຮັບຜິດ:

-ກ່ຽວກັບເລື່ອງນີ້ຫວາ, ອານໂຕນ ເຊມີວໂນວິດ ເອີຍ, ເຈົ້າຢ່າຮ້າຍເທາະ, ຂ້ອຍບໍ່ມີທາງເລືອກເລີຍ, ເຈົ້າກະຮູ້ຢູ່ດີ? ຂ້ອຍເຄີຍພົ້ນມາແລ້ວນ່າຄົນແບບນີ້ນະ. ບັກອັນນັ້ນມັນຢາກລາຈາກໂລກນີ້ໄປຢູ່ໂລກໃຫມ່ ເລີຍຕັດສິນໃຈໂດດນໍ້າຕາຍ, ບໍ່ທັນໄດ້ຫັນຫລັງໃຫ້ມັນຊໍ້າເກາ ແຫລັດລົງນໍ້າແລ້ວເດ້ ແລ້ວຂ້ອຍເຮັດແນວໃດວ່າຕີ ກະໄປດຶງມັນຂຶ້ນມາ, ເທື່ອຫນຶ່ງ, ສອງເທື່ອ. ໂຍ້ວ ກະ

ເກືອບຕາຍໄປນຳກັນຄືວ່າຫັ້ນລະ, ເຈົ້າລອງຄິດເບິ່ງວ່າ ມັນອັບປີ ຊ່ຳໃດລະ, ບັກເຜດຮ້າຍໂຕນີ້ນະ, ບໍ່ມີເວົ້າບໍ່ມີວ່າຫຍັງຫມົດບາດ ນີ້ ມັນໄປຜູກຄໍຕາຍຈ້ອຍ. ຂ້ອຍນ່າ, ເລື່ອງແບບນີ້ຄິດບໍ່ອອກຈັກ ດີ້ເລີຍ... ເລື່ອງມັນເປັນແນວນີ້ລະ, ຈັ່ງຊັ້ນ, ຂ້ອຍບໍ່ຫ່ອນຊິໄປ ຂວາງທາງເລົາໄດ້... ກະມີຫັ່ນນັ້ນລະ.

ຊິໂນວີ ອີວາໂນວິດ ອາບນ້ຳໃນຮູນ້ຳກ້ອນຈົນຮອດເດືອນພຶດ ສະພາ. ຊາວນິຄົມເຊິ່ງໃນຕອນຕົ້ນພາກັນຫົວຂວັນຄວາມອວດດີ ຂອງທ້າວຂີ້ພະຍາດຄົນນີ້ ເລີ່ມພາກັນຮູ້ສຶກນັບຖືນ້ຳໃຈຂອງເຂົາ ຫລາຍຂຶ້ນ ແລະ ພາກັນເອົາໃຈໃສ່ປິ່ນປົວ ເມື່ອເຂົາເປັນເຫຍື່ອ ປອດອັກເສບ ທໍ່ປອດອັກເສບ ຫລືແມ່ນແຕ່ ໃນກໍລະນີຈັບຫນາວ ຊື່ ໆ.

ແຕ່ກໍມີຫລາຍອາທິດຢູ່ທີ່ຮ່າງກາຍແກ່ພະຍາດຂອງ ຊິໂນວີ ອີວາໂນວິດ ບໍ່ຮ້ອນຮຸ່ມດ້ວຍພິດໄຂ້, ແມ່ນໃນໂອກາດນີ້ແລ້ວທີ່ ຊິ ໂນວີ ອີວາໂນວິດ ໄດ້ສະແດງແວວປະເສີດແຫ່ງຄວາມເປັນສິນລະ ປິນທີ່ແທ້ຈິງຂອງເຂົາອອກມາ. ເກີດມີສະໂມສອນນັກນິຍົມສິນຂຶ້ນ ຕາມຄວາມຄິດຂອງເຂົາ. ສະມາຊິກສະໂມສອນໄດ້ຮັບຫ້ອງນ້ອຍ ໃຕ້ຂີ້ຫ້ອງຫນຶ່ງ ເປັນສຳນັກຕາມຄຳອະນຸມັດຂອງສະພານາຍກອງ, ໃນນີ້ພວກເຂົາໄດ້ຕັ້ງຫ້ອງຊ່າງຂຶ້ນ.

ທ່າມກາງສຽງອຶນອືວຂອງຍາມຄ້ອຍຄ່ຳໃນລະດູຫນາວ, ຫ້ອງ ຊ່າງຂອງ ບູດໄຊຊ້ຳພັດຟົ້ນໄປດ້ວຍກິດຈະກຳຫລາຍໆແນວ, ສ່ວນ ຝາຫ້ອງໃຕ້ຂີ້ສັ່ນສະເທືອນຍ້ອນສຽງຫົວຂອງພວກນັກຮຽນ ແລະ ຜູ້ເຂົ້າຊົມການສະແດງ. ມີຄົນເປັນກຸ່ມໆ ແຕ້ມຮູບອັນໃດອັນຫນຶ່ງ

ຢູ່ເທິງແຜ່ນເຈ້ຍແຂງຂະໜາດມະຫຶມາ ພາຍໃຕ້ແສງສະຫວ່າງຂອງ ຕະກຽງນ້ຳມັນກ໊າດ. ຊີໂນວີ ອີວາໂນວິດ ເອົາດ້າມພອຍແຕ້ມຮູບ ເກົາຫົວທີ່ປົກຄຸມດ້ວຍເສັ້ນຜົມດຳປີ້ປານກ່ານໄຟ ເຂົາເວົ້າດ້ວຍ ສຽງຕ່ຳປານຄຸນພໍ່ຂີ້ເມົາອອກມາວ່າ:

- ເອົາສີນ້ຳຕານປ້າຍໃສ່ບັກ ເຟໂດເຮັງໂກ ອີກດຸ! ມັນແມ່ນ ພວກ ມູຊິກ ແລ້ວສູຊ້ຳຜັດໄປໃສ່ສີແດງໃຫ້ມັນພໍປານເມຍເກົ້າແກ່. ວາເນຍ, ໂຕຫັ້ນຊ້ຳເອົາສີແດງຊ້ຳປ້າຍໃສ່ບ່ອນທີ່ບໍ່ຄວນໃສ່ຫັ້ນພໍດີ ເລີຍ!

ວາເນຍ ລາປິດ ຜູ້ມີຜົມແດງ ຕົນໂຕເຕັມໄປດ້ວຍເມັດໄຟແດງ ແລະ ດັງງວງງຸ້ມ, ຕອບໂຕ້ເພື່ອຍອກດ້ວຍສຽງກົ້ວຮູຄໍວ່າ:

- ພວກເຂົາໃຊ້ສີນ້ຳຕານ ກັບ ເລຊີ ໝົດແລ້ວ.

ໃນຕອນແລງຫ້ອງການຂອງຂ້າພະເຈົ້າກໍກາຍເປັນສູນກາງແຫ່ງ ກິດຈະກຳບັນນອງບ່ອນໜຶ່ງຄືກັນ. ນັກສຶກສາຍິງສອງຄົນຫາກໍມາ ແຕ່ ຄາຄົບ ໃໝ່ໆ, ພວກນາງກໍຈົດໝາຍນ້ອຍທີ່ມີຂໍ້ຄວາມດັ່ງ ນີ້ມາພ້ອມ:

"ສະພາບັນການສຶກສາວິຊາຄູແຫ່ງ ຄາຄົບ ຈັດສົ່ງສະຫາຍນາງ ກ. ວາກສະກາຍຢາ ແລະ ນາງ ຣ. ລັນສະແບກ ມາຍັງນິຄົມກ໊ອກກີ ເພື່ອຮຽນຮູ້ລະບົບການຈັດຕັ້ງວຽກການສຶກສາຢູ່ນິຄົມ".

ຂ້າພະເຈົ້າຕ້ອນຮັບຜູ້ຕາງໜ້າຂອງການສຶກສາວິຊາຄູຮຸ່ນໃໝ່ ເຫລົ່ານີ້ດ້ວຍຄວາມສົນໃຈອ່າວຫລວງຫລາຍແດ່. ທັງສອງຄົນຄື ກ. ວາກສະກາຍຢາ ກັບ ຣ. ລັນສະແບກ ນັ້ນຍັງໜຸ່ມແໜ້ນ ໜ້າອິດສາ, ອາຍຸບໍ່ກາຍ ໒໐ ປີຈັກຄົນ. ຜູ້ທຳອິດນັ້ນໃຫ້ວ່າເປັນ

ສາວນ້ອຍຜິວສີຄຳ ງາມຫລາຍເດີບ ຮູບຮ່າງອ່າວນ້ອຍ ແລະ ຊີງ ຫ້າວຫັນດີ. ສີຜິວຫນັງຂອງນາງເປັນນວນໆ ແລະ ເບິ່ງບາງຄືກັບວ່າ ຖືກແຕ່ງແຕ້ມໄວ້ດ້ວຍສີນ້ຳ. ທ່າງໆທີ່ກຳລັງມີວຢູ່ວົງຄິ້ວທີ່ອ່າວເບິ່ງບາງພໍແຕ່ຫລຽວເຫັນຢູ່ບໍ່ເຊົາ ແລະ ທ່າງໆທີ່ພະຍາຍາມຂັບໄລ່ຮອຍຍິ້ມທີ່ຍາມໃດກໍ່ກຽມແຕ່ຈະພົ້ນໂຜ່ຂຶ້ນເທິງຮີມສີບຢູ່ສະເຫມີນັ້ນ ນາງກໍວາງຄຳຖາມກັບຂ້າພະເຈົ້າຢ່າງຈິງຈັງຂຶ້ນວ່າ:

- ພວກເຈົ້າມີຫ້ອງການ ເວຊະກຸມານສາດ ບໍ່?

- ບໍ່, ພວກເຮົາບໍ່ມີຊ້ຳ.

- ອ້າວ, ຈັ່ງຊັ້ນ ພວກເຈົ້າຕິດຕາມສຶກສາເລື່ອງບຸກຄະລະພາບໄດ້ແນວໃດ?

- ບຸກຄະລະພາບຂອງເດັກນ້ອຍນັ້ນຫວະ? ຂ້າພະເຈົ້າຖາມຄືນທັງວາງທ່າໃຫ້ເຄັ່ງຂຶມຈິງຈັງທີ່ສຸດເທົ່າທີ່ຈະເຮັດໄດ້.

- ກະແມ່ນລະບໍ້, ບຸກຄະລະພາບຂອງນັກຮຽນເຈົ້າ.

- ແລ້ວເປັນຫຍັງຊີຕ້ອງສຶກສາມັນລະ?

- ເປັນຫຍັງຊັ້ນຫວະ? ຊັ້ນເຈົ້າເຮັດວຽກໄດ້ແນວໃດຄັນບໍ່ມີຫ້ອງການນີ້? ເຈົ້າສາມາດເຮັດວຽກກ່ຽວກັບສິ່ງທີ່ເຈົ້າບໍ່ຮູ້ຈັກໄດ້ແນວໃດ ຊັ້ນນະ?

ກ. ວາກສະກາຍຢາ ເວົ້າເຖິງສິ່ງເຫລົ່ານີ້ດ້ວຍນ້ຳສຽງອ່ອນໆແຝງພະລັງແຮງຢ່າງຫນຶ່ງ ເຊິ່ງຫມາຍບອກຄວາມຕື່ນເຕັ້ນແບບຈິງໃຈຂອງນາງ ທັງຫັນໄປຫາເພື່ອນຍິງຂອງນາງຄື ຣ. ລັນສະແບກບໍ່ຂາດ. ນາງຜູ້ນີ້ ມີຜົມດົກຫລາຍ ສີດຳໄຫມ້ ຖັກເປຍບັກໃຫ່ຍ, ນາງ

ຫລີບແສງຕາລົງຕ່ຳ ທັງອົດກັ້ນຄວາມເຄືອງໃຈຕາມທຳມະຊາດຂອງນາງໄວ້ດ້ວຍຄວາມອົດທົນທີ່ຄ່ອຍໆຈາງຫາຍໄປ.

- ຈຸດເດັ່ນສິ່ງຕົ້ນຕໍຢູ່ໃນຫມູ່ນັກຮຽນເຈົ້າມີຫຍັງແດ່? ກ. ວາກສະກາຍຢາຖາມຢ່າງຂຶງຂັງເດັດຂາດຂຶ້ນ.

- ຖ້າຫາກວ່າຢູ່ໃນນິຄົມນີ້ບໍ່ມີການສຶກສາກ່ຽວກັບບຸກຄະລະພາບແລ້ວ, ມັນກໍເປັນເລື່ອງໄຮ້ສາລະແລ້ວທີ່ຈະໄປເວົ້າເຖິງສິ່ງຄອບງຳ. ຣ. ລັນສະແບກ ເວົ້າຂຶ້ນຄ່ອຍໆ.

- ກະບໍ່ວ່າ! ຂ້າພະເຈົ້າເວົ້າຂຶ້ນຢ່າງເຄັ່ງຂຶມ, - ຂ້ອຍສາມາດໃຫ້ຂໍ້ມູນບາງຢ່າງກ່ຽວກັບເລື່ອງນີ້ຢູ່ເລັກນ້ອຍ ສິ່ງຄອບງຳເຫລົ່ານັ້ນມັນກໍແມ່ນອັນດຽວກັບຂອງພວກເຈົ້ານັ້ນແລ້ວ.

- ເຈົ້າຮູ້ໄດ້ແນວໃດວ່າ ພວກເຮົາເປັນແນວໃດ? ກ. ວາກສະກາຍຢາ ຖາມດ້ວຍນ້ຳສຽງໄຮ້ມິດຕະພາບ.

- ຂ້ອຍຮູ້ມັນກໍຍ້ອນວ່າພວກເຈົ້າມາຢູ່ນີ້, ຕໍ່ຫນ້າຂ້ອຍດຽວນີ້ ກຳລັງລົມກັບຂ້ອຍຢູ່ນີ້ລະ.

- ຈັ່ງຊັ້ນຫວະ? ແລ້ວເປັນແນວໃດລະ?

- ຈັ່ງຊັ້ນຂ້ອຍກໍແນມເຫັນທຸກຢ່າງພາຍໃນຕົວພວກເຈົ້າ ໃນຂະນະທີ່ພວກເຈົ້ານັ່ງຢູ່ນີ້ ຂ້ອຍເຫັນທຸກຢ່າງທີ່ກຳລັງເກີດຂຶ້ນ ປານກັບວ່າພວກເຈົ້າເຮັດດ້ວຍແກ້ວພຸ້ນລະ.

ກ. ວາກສະກາຍຢາ ຫນ້າແດງຂຶ້ນ ແຕ່ເວລານັ້ນຊ້ຳພັດ ກາຣາບານິບ, ແວກຊະເນັບ, ຊາໂດຣອບ ແລະ ຜູ້ອື່ນໆອີກຫລາຍຄົນ ໄດ້ພາກັນໂຫ້ເຂົ້າມາໃນຫ້ອງການຂ້າພະເຈົ້າ.

- ພວກເຮົາເຂົ້າໄປໄດ້ບໍ່ ຫລືວ່າເປັນເລື່ອງລັບ?

-ບໍ່ນ່າ... ຊິເປັນແນວນັ້ນຈັ່ງໃດ, ຂ້າພະເຈົ້າເວົ້າຂຶ້ນ, -ຣູ້ຈັກກັບແຂກພວກເຮົາຕິ, ຂະເຈົ້າເປັນນັກສຶກສາມາຈາກ ຄາຄິບ.

-ພວກເຈົ້າມາຢັ້ງມຢາມພວກເຮົາຫວະ, ກະດີລະຕິ ຊື່ວ່າຈັ່ງໃດເນາະ?

-ອິກຊານນາ ໂຣມານອບນາ ວາກສະກາຍຢາ.

-ຣາແຊນ ເຊມີວນອບນາ ລັນສະແບກ.

ກາຣາບານິບ ເອົາມືເບື້ອງຫນຶ່ງລູບແກ້ມ, ອຸທານອອກມາດ້ວຍຄວາມກັງວົນໃຈວ່າ:

-ຕາຍຣ່າ, ທັງຍາວ ແລະ ຍາກປານນີ້ຫວະ? ເອີ້ນເຈົ້າວ່າອິກຊານນາ ລ້າ ໆ ກໍໄດ້ລະຕິ.

-ກະໄດ້ຄືກັນ, ນາງ ກ. ວາກສະກາຍຢາ ຕິກລົງ.

-ແລະເຈົ້າ ເອີ້ນວ່າ ຣາແຊນ ໄດ້ບໍ່?

-ໄດ້, ນາງ ຣ. ລັນສະແບກ ຕອບອຸ່ມອິ່ມ.

-ຈັ່ງຊັ້ນກໍດີແລ້ວ ບັດນີ້ພວກເຮົາຊິຫາຫຍັງໃຫ້ພວກເຈົ້າກິນຈັກຫນ້ອຍ, ພວກເຈົ້າເປັນນັກສຶກສາແມ່ນບໍ່?

-ແມ່ນ.

-ດີແລ້ວ, ພວກເຈົ້າຄືຊິຫິວແລ້ວເນາະ. ເອີ, ອັນນີ້ແມ່ນວິທີເວົ້າຊື່ໆດອກ...ຫືວຢ່າງໃດເນາະ? ຄັນແມ່ນຫມໍ ແວກຊະເນັບກັບ ຊາໂດຣອບ ກໍຕ້ອງວ່າຫິວປານຫມາຂີ້ເຮືອນ ແຕ່ສຳຫລັບພວກເຈົ້າ... ແທນທີ່ຊິວ່າຫມາ ເວົ້າວ່າຫິວປານແມວນ້ອຍກໍໄດ້ເນາະ.

-ເວົ້າແທ້ໆ ພວກເຮົາກໍຫິວແລ້ວລະ, ອິກຊານນາ ເວົ້າທັງ ຫິວ, -ພວກເຮົາຈະອາບນ້ຳໄດ້ບໍ່?

-ໄປເລີຍ, ພວກເຮົາຈະພາໄປສົ່ງທີ່ແມ່ຍິງ, ຢູ່ທີ່ນັ້ນເອົາແຕ່ ພວກເຈົ້າຊິເຮັດດອກ.

ພວກເຮົາທຳຄວາມຮູ້ຈັກກັນແບບນີ້ແລ້ວ. ທຸກໆແລງໃດ ທັງ ສອງພາກັນມາຫາຂ້າພະເຈົ້າ ແຕ່ບໍ່ຢູ່ດົນດອກ. ຢ່າງໃດກໍດີ ບັດນີ້ ບັນຫາກ່ຽວກັບການສຶກສາບຸກຄະລະພາບນັ້ນໄດ້ຕົກໄປແລ້ວ. ອິກ ຊານນາ ກັບ ຣາແຊນ ບໍ່ມີເວລາສຳລັບວົນເວື່ອງນີ້ອີກແລ້ວ. ພວກ ເດັກນ້ອຍພາກັນແກ່ດຶງເອົາພວກນາງໄປສູ່ທະເລໄຮ້ຝັ່ງແຫ່ງກິດຈະ ກຳຂອງນິຄົມ, ມັນມີທັງການຫລິ້ນມ່ວນໆ ການຂັດແຍ່ງກັນ; ພວກ ເຂົາສະໜິດສະໜົມກັບພວກນາງ ດ້ວຍການບອກເລົ່າເຖິງບັນຫາ ຕ່າງໆທຸກແບບທຸກແນວ. ເວົ້າແທ້ແລ້ວກໍເປັນການຍາກຢູ່ ສຳລັບ ຄົນເປັນໆຜູ້ຫນຶ່ງທີ່ຈະຫລີກເວັ້ນຈາກລົມບ້າຫມູ ແລະ ແກ້ງຫີນ ນ້ອຍໆທີ່ອຸບັດຂຶ້ນພາຍໃນການດຳລົງຊີວິດແບບລວມຫມູ່ ຂອງພວກ ເຮົາ ເພາະວ່າ ກ່ອນທີ່ເຂົາຈະທັນຮູ້ສຶກຕົວ ເຂົາກໍຫົວຫມຸນ ແລະ ກຶກແກ່ດຶງໄປແລ້ວ. ແລະ ບາງຄັ້ງກະແສຟອງດັ່ງກ່າວກໍພັດພາ ເຫຍື່ອຂອງມັນເຂົ້າເຖິງຫ້ອງການຂອງຂ້າພະເຈົ້າໂດຍກົງ ເພື່ອຈະ ໂຍນມັນກັບໄປຍັງຝັ່ງທະເລຄືນອີກເທື່ອໃຫມ່.

ແລງວັນຫນຶ່ງ, ກຸ່ມຫນ້າສົນໃຈກຸ່ມຫນຶ່ງກໍຜາກົດຕົວຂຶ້ນ, ມັນ ປະກອບດ້ວຍ ອິກຊານນາ, ຣາແຊນ, ຊີລັນຕີ ແລະ ບຣາເຊັນ ໂກ.

ອິກຊານນາ ແກ່ແຂນເສື້ອຂອງ ຊີລັນຕີ ທັງຫົວ:

-ໄປ, ໄປ ຢ່າຂັດຂືນໃດ.

ເບິ່ງທ່າທີຂອງ ຊີລັບຕີ ກໍແມ່ນໃຫ້ພວກເຂົາແກ່ມາແທ້ ໆ.

-ລາວມີອິດທິພົນມືດຢູ່ໃນນິຄົມຂອງເຈົ້າແທ້ໆ ແຕ່ເຈົ້າກໍບໍ່ຮູ້ບໍ່ເຫັນ.

-ມີຫຍັງຊັ້ນຫວະ ຊີລັບຕີ?

ຝ່າຍຫລັງນີ້ຈຶ່ງດຶງແຂນເສື້ອອອກຈາກມືຂອງນາງ ດ້ວຍທ່າທີບໍ່ດີໃຈ ແລະ ລູບຫົວລ້ານຕົນເອງໄປມາ.

-ເອີ້... ເລື່ອງມັນເປັນແນວນີ້ລະ: ເຂົາພາກັນປະລໍ້ເລື່ອນໄວ້ກາງເດີ່ນ ຈັ່ງຊັ້ນ ເຊມີຍົງ ກັບສາວໆ ພວກນີ້ກໍເລີຍມີຄວາມຄິດພິດສະດານຂຶ້ນມາ, ເອົາລໍ້ມາຂີ່ແລ່ນນຳກ້ອນກັນລະບໍ້. ນີ້ ອານໂຕນ ກໍຢູ່ນີ້ ໃຫ້ມັນເລົ່າສູ່ເຈົ້າຟັງເອງ.

ອານໂຕນ ບຣາເຊັນໂກ ເລົ່າວ່າ:

-ພວກເຂົາມາວິນວຽນຂ້ອຍຢູ່ບໍ່ເຊົາ ເພື່ອຂໍຂີ່ກວຽນ! ກະຢ່າຊະ, ສຳລັບ ເຊມີຍົງ ຂ້ອຍເອົາແສ້ຟາດບາດຫນຶ່ງແລ້ວມັນກະຫນີໄປໂລດ ແຕ່ສອງສາວນີ້ດີບໍ່ວາງລໍ້ເລີຍ. ຊິເຮັດແນວໃດກັບພວກເຂົາ? ຄັນຂ້ອຍຢາດເອົາແສ້ຟາດກະຊິພາກັນຮ້ອງຕາຍວາຍໆ, ຈັ່ງຊັ້ນ ຊີລັບຕີ ຈຶ່ງເວົ້າໃຫ້ພວກເຂົາວ່າ:

-ຫັ້ນລະ, ຟັງເອົາ! ອິກຊານນາ ຮ້ອງຂຶ້ນຢ່າງໂມໂຫ, -ໃຫ້ຊີລັບຕີ ເວົ້າເອງວ່າ ລາວເວົ້າຫຍັງແດ່.

-ໂອ້ຍ ມັນຊິມີຫຍັງເກາະ! ອັນທີ່ຂ້ອຍເວົ້າອອກໄປມັນລ້ວນແຕ່ແມ່ນຄວາມຈິງ, ກະມີທັ້ນນະລະ. ມຶງຢາກໄດ້ຜົວບໍ່ລະ? ຂ້ອຍ

ເວົ້າແນວນີ້ລະ, ແລ້ວມຶງຍັງຫລິ້ນຄືເດັກນ້ອຍຫລິ້ນຈົນຊິໃຫ້ລໍ້ຫັກ, ຈັ່ງຊັ້ນລະ, ເລື່ອງມັນເປັນແນວນີ້ລະ...

-ຍັງບໍ່ຫມົດ, ຍັງບໍ່ຫມົດ...

-ຊິມີສັງອີກ, ຫມົດທໍ່ນີ້ລະ.

-ລາວເວົ້າກັບ ອານໂຕນ ວ່າ: ມຶງຫາດາມັດມັນໃສ່ລໍ້ເລື່ອນ ແລ້ວໄລ່ຂາມັນແລ່ນໄປຮອດ ກົງຊາຣອບກາ ຍ້ານແຕ່ມັນຊິມິດຊ້ອຍ ນ້ອຍດີປານຫຍັງ. ເຈົ້າເວົ້າແບບນີ້ແມ່ນບໍ່?

-ເອີ້, ຂ້ອຍເວົ້າຫັ້ນລະ ແລະ ດຽວນີ້ກໍຍັງຊິເວົ້າອີກວ່າ ຢູ່ນີ້ ມີສາວນ້ອຍແຂງແຮງຢູ່ລ້າງ; ພໍດີແລ້ວ ພວກເຮົາແຮ່ງບໍ່ມີມ້າໃຊ້, ຈັ່ງຊີ້ລະ ເລື່ອງມັນເປັນແນວນີ້ລະ.

-ໂຫ້! ອີກຊານນາ ຮ້ອງຂຶ້ນ, ອອກໄປ, ອອກໄປດຽວນີ້, ໄປ໋ ຍ່າງ...!

ຊີລັນຕີ ຫົວອັກງຶ້ນ ແລະ ຍ່າງອອກຈາກຫ້ອງການໄປພ້ອມ ກັບ ອານໂຕນ. ອີກຊານນາ ນັ່ງເປາະລົງຕັ່ງນວມຍາວບ່ອນທີ່ ຣາ ແຊນ ນັ່ງເຫງົານອນຢູ່ແຕ່ດົນແລ້ວ.

-ພໍ່ເກົ້າ ຊີລັນຕີ ນີ້ເປັນຜູ້ມີບຸກຄະລະພາບຫນ້າສົນໃຈໃດ໋ ເນາະ, ຂ້າພະເຈົ້າເວົ້າຂຶ້ນ, ເປັນບັນຫາຄົ້ນຄວ້າ ເລື່ອງຫນຶ່ງຂອງ ພວກເຈົ້າໄດ້ແລ້ວເດ້.

ອີກຊານນາ ໂດດອອກໄປນອກ. ແຕ່ແລ້ວກໍຢຸດຢູ່ຄ່າລະບອງ, ນາງເວົ້າທັງເຮັດທ່າທີລໍ້ຜູ້ໃດຜູ້ຫນຶ່ງວ່າ:

-ຂ້ອຍເຫັນເຈົ້າຊອດໂຈ່ງໂປ່ງ ພໍປານວ່າຕີນຕີວຂອງເຈົ້າເຮັດ ດ້ວຍແກ້ວ!

ຈາກນັ້ນ ນາງກໍຫລົບອອກໄປ ພໍແຕ່ມື້ມປະຕູກໍຕົກເຂົ້າໃນກຸ່ມເດັກນ້ອຍຫມູ່ຫນຶ່ງ. ຂ້າພະເຈົ້າໄດ້ຍິນສຽງໃສໆຂອງນາງ, ຈາກນັ້ນ ມັນກໍກືກອືນເຂົ້າໃນກະແສລົມຢ່າງຫນຶ່ງເຊິ່ງເປັນສິ່ງທີ່ຂ້າພະເຈົ້າລຶ້ງເຄີຍມາແຕ່ດົນແລ້ວ.

-ຣາແຊນ, ໄປນອນສາ, ຂ້າພະເຈົ້າບອກນາງ.

-ແມ່ນຫຍັງເກາະ? ເຈົ້າຄືດວ່າຂ້ອຍຢາກນອນແລ້ວຊັ້ນຫວະ? ແລ້ວເຈົ້າເດ້ລະ?

-ຂ້ອຍກະຊິໄປ.

-ກ້າ ຈັ່ງຊັ້ນ... ກໍແນ່ລະ...

ຫລັງຈາກເອົາມືນ້ອຍໆຂຶ້ນຮຸກຕາກ້ຳຊ້າຍແບບໄວໆຄືເດັກນ້ອຍບາດຫນຶ່ງແລ້ວນາງກໍເດີນມາຈັບກັບຂ້າພະເຈົ້າ ແລ້ວອອກຈາກຫ້ອງໄປ ທັງເອົາບ່າຕຳຣະຂອບແຄມປະຕູ.

ບົດທີ ໔

ລະຄອນເວທີ

ສິ່ງທີ່ຍົກຂຶ້ນມາອ້າງໃນບົດກ່ອນໆນັ້ນ ເປັນພຽງສິ່ງເລັກນ້ອຍເທົ່ານັ້ນ ຢູ່ໃນກິດຈະກຳທັງຫລາຍຂອງພວກເຮົາ ໃນຕອນແລງຍາມຫນາວ ແລະ ເມື່ອມາເບິ່ງຄືນໃນເວລານີ້ແລ້ວ ພວກເຮົາຮອດຄຶດຢາກອາຍທີ່ຕ້ອງຍອມຮັບວ່າ ເວລາຫວ່າງສ່ວນໃຫຍ່ຂອງພວກເຮົານັ້ນແມ່ນສຸມໃສ່ການຫລິ້ນລະຄອນທັງນັ້ນ.

ການໄດ້ມາຢູ່ນິຄົມໃຫມ່ ເຮັດໃຫ້ພວກເຮົາມີຫ້ອງຫລິ້ນລະ

ຄອນແຫ້ງແຫ່ງຫນຶ່ງ. ເວລານັ້ນ ມັນເປັນການຍາກບໍ່ຫນ້ອຍທີ່ຈະພັນລະນາເຖິງຄວາມພໍໃຈຂອງພວກເຮົາໄດ້ເມື່ອໂຮງສີຫມົດຫລັງກຶກຍິກໃຫ້ພວກເຮົາຊົມໃຊ້ຢ່າງເຕັມປ່ຽມ.

ຫ້ອງຫລິ້ນລະຄອນຂອງພວກເຮົາສາມາດບັນຈຸຄົນຊົມໄດ້ຮອດ ໖໐໐ ຄົນ ຫມາຍຄວາມວ່າເທົ່າໆກັບຈຳນວນຜູ້ຄົນມາຈາກບ້ານຕ່າງໆນັ້ນເອງ. ຄວາມສຳຄັນຂອງສະໂມສອນລະຄອນພວກເຮົາເຕີບໃຫຍ່ຂຶ້ນເລື້ອຍໆ ແລະ ຄວາມຮຽກຮ້ອງຫາມັນກໍ່ນັບມື້ນັບແຜ່ກວ້າງອອກຄືກັນ.

ເວົ້າກັນຕາມຄວາມຈິງແລ້ວ ໂຮງລະຄອນບ່ອນນີ້ກໍມີຄວາມບົກພ່ອງຫລາຍອັນຢູ່. ກາລີນາ ອີວາໂນວົດ ເຫັນວ່າຈຸດບົກພ່ອງເຫລົ່ານີ້ສາຫັດຫລາຍ ຈຶ່ງສະເຫນີວ່າ ຄວນພັນປ່ຽນມັນມາເປັນໂຮງມ້ຽນກວຽນ.

-ຄັນເອົາກວຽນມາມ້ຽນໄວ້ນີ້ ເຖິງວ່າເຢັນຈ້ອຍໆ ກວຽນກໍບໍ່ສະເທືອນຫຍັງຈັ່ງຊັ້ນກໍ່ບໍ່ຕ້ອງຫາເຕົາຜີງມາໃສ່ ແຕ່ວ່າຄົນເບິ່ງນີ້ຕິ ມັນຈຳເປັນໃດ໋!

-ຕົກລົງ ພວກເຮົາຫາເຕົາຜີງມາໃສ່.

-ມັນກໍ່ບໍ່ຕ່າງຫຍັງກັບໄປຈັບມືການສະບາຍດີກັບຄົນຂໍທານຫັ້ນແລ້ວ. ໂຕບໍ່ເຫັນດອກຫລືວ່າ ມັນບໍ່ມີເພດານ ມີແຕ່ຫລັງຄາສັງກະສີລ້າງໆ ບໍ່ມີຫຍັງຮອງຈັກຫນ້ອຍ. ເອົາເຕົາຜີງມາດັງໃນຫ້ອງນີ້ມີແຕ່ຊິເຮັດໃຫ້ພວກເທວະດາກັບນັກບຸນເທິງຟ້າພຸ່ນບຸ ອຸ່ນຕີນດີລ້າງຫັ້ນນ່າ ສ່ວນວ່າຜູ້ຊົມໃນຫ້ອງນີ້ຫວະ ຈ້າງກໍ່ບໍ່ຮູ້ເມື່ອຕວ່າ. ແລ້ວໂຕຊິເອົາເຕົາຜີງຊະນິດໃດມາໃສ່ລະ? ຢ່າງຫນ້ອຍກໍຕ້ອງແມ່ນ

24/VII
ຫ້າມຈຳໜ່າຍ

ເຕົາຂາງພຸ້ນເດີ້ ແຕ່ໂຕຈິເອົາມາແຕ່ໃສລະ? ເຊີນກຳມໂຕນອດໄຟໄວ້ກາໂລດແຫລ້ວ ພໍແຕ່ລິງມີສະແດງກໍຕ້ອງຟ້າວໄປເອີ້ນພະນັກງານນອດໄຟມາພ້ອມໂລດເດີ້!

ແຕ່ພວກເຮົາບໍ່ເຫັນດີນໍາ ກາລີນາ ອີວາໂນວິດ ດອກ ແລະ ແມ່ນແຕ່ ຊີລັນຕີ ເອງກໍປະກາດວ່າ:

- ເລື່ອງມັນເປັນຈັ່ງຊີ້ລະ, ໃນເມື່ອວ່າເຮົາຫລີ້ນໃຫ້ເຂົາເບິ່ງລ້າງຢູ່ແລ້ວ ຊິຈໍາເປັນໄປກັງວົນສົນໃຈຫານໍ້າ ຫາໄຟມາໃສ່ເຮັດຫຍັງ? ບໍ່ມີໃຜມາໂຈມຕີ ຕໍ່ວ່າພວກເຮົາໄດ້ດອກ.

ພວກເຮົາເອົາເຕົາຜີງ ເຊິ່ງເຮັດດ້ວຍຂາງ ແລະ ເຫລັກມາໃສ່ໂຮງລະຄອນ ແລະ ດັງໄຟໃສ່ ກໍຕໍ່ເມື່ອມີການສະແດງເທົ່ານັ້ນ ເຖິງຢ່າງໃດເຕົາເຫລົ່ານີ້ກໍບໍ່ຢູ່ໃນສະພາບ ສາມາດສ້າງບັນຍາກາດອົບອຸ່ນ ໃນເວລາສະແດງລະຄອນຈັກເທື່ອດອກ ເພາະວ່າອາຍອຸ່ນທັງຫມົດໄດ້ລ່ອງລອຍປິວວ່ອນຂຶ້ນໄປເທິງຫລັງຄາລອຍຜ່ານແຜ່ນ ສັງກະສີອອກໄປໂລດ. ດ້ວຍເຫດນີ້ ເຖິງແມ່ນວ່າມີໄຟແດງຈື່ງຄື່ງຢູ່ໃນເຕົາ ແຕ່ຜູ້ຊົມກໍຍິນດີນັ່ງຫົ່ມເສື້ອຍ່າມ ຫລືເສື້ອຄຸມກັນຫນາວໄວ້ກັບໂຕຫລາຍກວ່າ ເຂົາເຈົ້າພໍພຽງແຕ່ລະມັດລະວັງບໍ່ໃຫ້ດ້ານທີ່ຫັນໄປຫາເຕົາຜີງ ເກີດຕິດໄຟຂຶ້ນມາເທົ່ານັ້ນ.

ມີເທື່ອຫນຶ່ງ ເກີດໄຟໄຫມ້ຂຶ້ນແທ້ໆຢູ່ໃນໂຮງລະຄອນຂອງພວກເຮົາ ບໍ່ແມ່ນເກີດຈາກເຕົາຜີງດອກ ແຕ່ແມ່ນຍ້ອນໂຄມຕະກຽງຫ້ອຍຫນ່ວຍຫນຶ່ງ ຕົກລົງມາໃສ່ກາງເວທີຕ່າງຫາກ ດັ່ງນັ້ນ ຈຶ່ງເກີດສະພາບຕົກໃຈ ແຕກຕື່ນກັນຢ່າງໃຫຍ່ ພວກຜູ້ຊົມນັ້ນບໍ່ເຫນັງຕີງອອກຈາກຕັ່ງ ແຕ່ຊາວນິຄົມທັງຫມົດແຕກຕື່ນສົນລະວົນຢ່າງເຕັມ

ຂຶດພາກັນໂຫ້ຂື້ນໄປເທິງເວທີແຕ່ ການາບານີບ ຊ້ຳຮ້າຍພວກເຂົາ ວ່າ :

-ພວກຈ້າ ແມ່ນສູບໍ່ເຄີຍເຫັນໄຟໄຫມ້ຈັກເທື່ອ ຊັ້ນຫວະ?

ພວກເຮົາໄດ້ສ້າງເວທີລະຄອນແຫ້ງແຫ່ງຫນຶ່ງຂຶ້ນແລ້ວ ຄືມັນ ທັງກວ້າງ ທັງສູງ ມີລະບົບຫລືບຮ່ອມ ແລະ ຫ້ອງນ້ອຍສຳລັບຜູ້ສິ່ງ ບົດ. ທາງດ້ານຫລັງມີບ່ອນກວ້າງຫວ່າງເປົ່າຫລາຍບ່ອນ ແລະ ພວກເຮົາກໍ່ບໍ່ລືມໃຊ້ສະຖານທີ່ເຫລົ່ານີ້ເທື່ອ. ເພື່ອໃຫ້ນັກສະແດງ ໄດ້ຢູ່ບ່ອນມີອາກາດອົບອຸ່ນພໍສູ້ທົນໄດ້ ພວກເຮົາຈຶ່ງແອ້ມເຮັດເປັນ ຫ້ອງນ້ອຍໆຫ້ອງຫນຶ່ງ ແລ້ວເອົາເຕົາຜີງຂະຫນາດນ້ອຍຫນ່ວຍ ຫນຶ່ງມາຕັ້ງໃສ່ ສຳລັບເປັນບ່ອນແຕ່ງເພດປ່ຽນເຄື່ອງນຸ່ງ ໂດຍພະ ຍາຍາມສັບປ່ຽນພຽນປ່ຽນທີ ແລະ ແບ່ງແຍກເພດແບບໄດ້ແດ່ບໍ່ໄດ້ ແດ່.

ນອກນັ້ນ ທັງຢູ່ໃນຮ່ອມ ແລະ ເທິງເວທີ ອຸນຫະພູມເຢັນ ຈ້ອຍໆບໍ່ຜິດຫຍັງກັບຢູ່ກາງແຈ້ງ.

ບໍລິເວນຫ້ອງກວ້າງຂວາງ ບັນຈຸເປັນມ້ານັ່ງຫລາຍສິບຫນ່ວຍ ສ່ວນຈຳນວນບ່ອນນັ່ງແທ້ບໍ່ຈຳກັດ, ສະຖານທີ່ແຫ່ງນີ້ ຕັ້ງແມ່ນທັງ ວັດທະນະທຳ ບ່ອນຫນຶ່ງ ທີ່ຄອງຄອຍພຽງແຕ່ການປູກຫວ່ານພືດ ແນວໃສ່ ແລະ ເກັບກ່ຽວເອົາຫມາກພົນເທົ່ານັ້ນ.

ກິດຈະກຳລະຄອນຢູ່ໃນນິຄົມໃຫມ່ຂະຫຍາຍຕົວວ່ອງໄວຈົນເປັນ ຫນ້າງຶດ ຕະຫລອດສາມລະດູຫນາວຕິດຕໍ່ກັນ ມັນບໍ່ເຄີຍລົງຄ້ອຍ ຫລື ຢຸດພັກຜ່ອນແມ່ນແຕ່ນາທີດຽວ ມັນພິດຮ້ອນເຕີບໃຫຍ່ຈົນວ່າ ຕົນເອງກຳລັງຂຽນຫຍັງອອກມາ.

ຕະຫລອດລະດູຫນາວ ພວກເຮົາຈັດໃຫ້ມີການສະແດງປະມານ ໔໐ ເທື່ອ ໂດຍບໍ່ຊອກເອົາບົດລະຄອນຊະນິດງ່າຍໆ ຄືທີ່ພວກສະໂມສອນທັງຫລາຍມັກເຮັດ ກົງກັນຂ້າມພວກເຮົາຈັດສະແດງເອົາແຕ່ບົດສຳຄັນທີ່ປະກອບດ້ວຍສາກສະແດງເກືອບ ໔ ຫາ ໕ ສາກ ໂດຍຖືເອົາຕົວຢ່າງຂອງໂຮງຮຽນລະຄອນໃນເມືອງ. ສິ່ງດັ່ງກ່າວເປັນເລື່ອງຫນ້າເຫລືອເຊື່ອແທ້ໆ ແຕ່ສຳບານກໍໄດ້ ພວກເຮົາບໍ່ເຄີຍສະແດງເລື່ອງດາຍໆຈັກເທື່ອ.

ຫລັງຈາກການສະແດງຄັ້ງທີ່ສາມ ຊື່ສຽງຂອງພວກເຮົາກໍໂດ່ງດັງອອກກາຍຂົງເຂດກົງຊາຣອບກາ ໄປ ມີປະຊາຊົນໄທບ້ານມາຊົມຈາກຫລາຍເຂດຄື ມາແຕ່ ບີໂຣກອບກາ ແດ່, ມາແຕ່ ກຣາບີລອບກາ, ບາບີເຊັບກາ, ກົງຊີ, ກາດຊີ, ສະໂດໂຣເຈວອຍ, ຈາກນິຄົມນ້ອຍເຂດ ໂວໂລວີ, ຈາກ ຈູມາດສະເກຍ, ຈາກໂອແຊັກສະເກຍ, ມີພວກກຳມະກອນມາຈາກເຂດອ້ອມແອ້ມເມືອງ, ກຳມະກອນລົດໄຟຈາກສະຖານີໃຫຍ່ ແລະ ຈາກໂຮງງານຫົວຈັກລົດໄຟ. ຕໍ່ມາບໍ່ດົນ ກໍມີຮອດໄທໃນເມືອງຄືຄູສອນ ໂດຍສະເພາະກໍແມ່ນພວກຢູ່ໃນພະແນກສຶກສາ, ພວກທະຫານ, ພະນັກງານຄຸ້ມຄອງ, ພວກສະມາຊິກສະຫະກອນ, ພວກສະບຽງ ຕະຫລອດຮອດຊາວຫນຸ່ມຍິງສາວທຳມະດາທີ່ເປັນຫມູ່ເພື່ອນກັບຊາວນິຄົມ ແລະ ພວກທີ່ເປັນຫມູ່ຂອງພວກເຂົາອີກຕໍ່ຫນຶ່ງນຳອີກ.

ໃນທ້າຍລະດູຫນາວປີທຳອິດ, ພໍແຕ່ຮອດວັນເສົາ ນັບແຕ່ເວລາກິນເຂົ້າແລງໄປຈະມີລົດມ້າຂອງຜູ້ຊົມທີ່ເດີນທາງມາແຕ່ໄກຈອດເຊົາຢູ່ອ້ອມໆບໍລິເວນໂຮງລະຄອນ.

ພວກຜູ້ຊາຍຫນວດດົກ ໃນຊຸດເສື້ອໃຫຍ່ຂົນແກະ ແລະ ເສື້ອຍ່າມຕິວຫນັກຫນາຈັດແຈ່ງປົດມ້າອອກລ່າມ ເອົາຜ້າຫົ່ມ ຜ້າຕຸ້ມພີປົກໃຫ້ມັນ ແລ້ວຈຶ່ງຫົວຄຸໄປຫາສ້າງທີ່ມີຫມາກຄັ້ງເກົ່ານ້ຳ ສົ່ງສຽງດັງນັນນອງ. ເວລາດຽວກັນ ພວກແມ່ຍິງ ເຊິ່ງຕຸ້ມຫົ່ມຜ້າຈີນເຫັນແຕ່ຕານັ້ນກໍພາກັນຍ່າງວິນວຽນໄປມາຢູ່ຕໍ່ຫນ້າ ໂຮງຈອດກວຽນມ້າ ເພື່ອໃຫ້ຕີນທີ່ແຂງກະແດ້ງຍ້ອນເດີນທາງມາໄກນັ້ນອົບອຸ່ນຂື້ນ. ຈາກນັ້ນກໍຍ່າງເຮັດແອວອ່ອນໆ ຍ້ອນໃສ່ເກີບສົ້ນເຫລັກອ່າວສູງແລ່ນໄປຍັງຫ້ອງຂອງພວກເດັກນ້ອຍແມ່ຍິງ ເພື່ອຮັບອາຍອຸ່ນແລະເພື່ອທຳຄວາມລື້ງເກວ່ນສະຫນິດສະຫນົມກັບເພື່ອນມິດໃຫມ່ ຂອງເຂົາເຈົ້າໃຫ້ຫລາຍຂື້ນກວ່າເກົ່າ. ຫລາຍຄົນດຶງເອົາກິ່ງ ແລະ ຫໍ່ພິກນ້ອຍໆອອກມາຈາກກອງສາດເພືອງປູກວຽນ. ໃນການເດີນທາງມາຊົມສິນລະປະ ທີ່ຫ່າງໄກແບບນີ້ ພວກເຂົາເຈົ້າໄດ້ຫ້າງກຽມອາຫານມາກິນນຳທາງພ້ອມ. ອາຫານມີທັງ ປາເຄຫມູ, ເຂົ້າຈີ່ຫອມ, ຫມູເຄັມຕ່ອນມຸ່ນໆ ແລະໄສ້ອິ່ວແຫ້ງແບບຕ່າງໆ. ອາຫານເຫລົ່ານີ້ສ່ວນໃຫຍ່ແລ້ວ ແມ່ນເອົາມາໂດຍເຈດຕະນາຢາກບຳລຸງລ້ຽງດູເດັກນ້ອຍນິຄົມ ຈັ່ງຊັ້ນ ບາງຄັ້ງໃນວັນທີ່ມີການສະແດງນັ້ນບັນຍາກາດຈຶ່ງບໍ່ຕ່າງຫຍັງກັບວັນບຸນຢູ່ຕະຫລາດນັດ ຈົນເຖິງຂັ້ນວ່າທາງຫ້ອງການ ກົມໂຊໂມນ ໄດ້ອອກກົດລະບຽບ ຫ້າມບໍ່ໃຫ້ຮັບຂອງຕ້ອນຈາກແຂກຢ່າງເດັດຂາດ.

ວັນເສົາເວລາບ່າຍສອງໂມງ ພວກເຮົາເລີ່ມກໍ່ໄຟໃສ່ເຕົາຜີງຢູ່ໂຮງລະຄອນເພື່ອໃຫ້ແຂກທີ່ມາເຖິງໄດ້ຜີງໄຟໃຫ້ອົບອຸ່ນ. ດົນນານມາ ເພື່ອລື້ງເກວ່ນກັນຫລາຍຂື້ນຜູ້ຄົນທັງຫລາຍກໍລ່ວງລ້ຳເຂົ້າມາ

ໃນບີຄົນຫລາຍຂຶ້ນໆ ຈົນເຂົ້າມາເກືງໂຮງອາຫານ, ບາງເວລາຈຶ່ງເຫັນວ່າ ມີກຸ່ມແຂກພິເສດຈຳນວນຫນຶ່ງ ເວົ້າງ່າຍໆແມ່ນພວກທີ່ຄົ້ງແກວ່ນກັນດີ ຈົນພວກຄູສອນເຫັນວ່າ ສົມຄວນເຊີນເຂົ້າຮ່ວມໂຕະອາຫານໄດ້.

ການສະແດງຕົກເປັນພາລະຫນັກຢ່າງຫນຶ່ງ ສຳລັບຄັງເງິນຂອງພວກເຮົາ. ທັງເຄື່ອງນຸ່ງ, ຜົມປອມ, ແລະ ເຄື່ອງປະກອບຢ່າງອື່ນໆ ກິນເງິນຂອງພວກເຮົາຫມົດລະຫວ່າງ ໔໐ ຫາ ໕໐ ຣຸບແລ້ວ ຫມາຍຄວາມວ່າມັນເປືອງເງິນພວກເຮົາປະມານ ໒໐໐ ຣຸບຕໍ່ເດືອນ ເງິນຈຳນວນນີ້ນັບວ່າເປັນກ້ອນໃຫຍ່ສົມຄວນ ແຕ່ພວກເຮົາບໍ່ຍອມເສຍສັກສີຈັກເທື່ອ, ບໍ່ຍອມໃຫ້ຜູ້ຊົມເສຍເງິນຊື້ປີ້ເບິ່ງແມ່ນແຕ່ອັດດຽວ ເພາະວ່າພວກເຮົາ ເນັ້ງແນໃສ່ຊາວຫນຸ່ມເປັນພິເສດແລະ ຢູ່ໃນຊົນນະບົດແບວນີ້ ພວກຜູ້ບ່າວ ແລະ ສະເພາະຜູ້ສາວນັ້ນເກືອບບໍ່ມີເງິນຕິດກົງຈັກອັດເລີຍ.

ໃນໄລຍະຕົ້ນ ການເຂົ້າຊົມດຳເນີນໄປຢ່າງບໍ່ຕ້ອງໃຊ້ປີ້ ແຕ່ຕໍ່ມາບໍ່ດົນໂຮງລະຄອນກໍ່ບໍ່ສາມາດຮັບເອົາຜູ້ຊົມທັງຫມົດໄດ້ ຈັ່ງຊັ້ນ ຈຶ່ງຕ້ອງອອກປີ້ ແລະ ມີການແຈກຢາຍກ່ອນວັນສະແດງ ໂດຍສາຂາຫ້ອງການຊາວຫນຸ່ມ ກົມໂຊໂມນ, ສະພາໂຊວຽດປະຈຳບ້ານ ແລະຕົວແທນຂອງພວກເຮົາໃນແຕ່ລະຫ້ອງກື້ນ.

ພວກເຮົາບໍ່ຄຶດບໍ່ຝັນມາກ່ອນເລີຍວ່າ ຜູ້ຊົມຊາວຊົນນະບົດຈະນິຍົມຊົມຊອບລະຄອນເວທີຮຸນແຮງຫລວງຫລາຍແບບນີ້. ປີ້ເຂົ້າຊົມກາຍເປັນມູນເຫດຜິດກຽງ ແລະ ຄວາມເຂົ້າໃຈຜິດຕໍ່ກັນລະຫວ່າງບ້ານຕ່າງໆຢ່າງເປັນປະຈຳ. ພວກເລຂາ ຄະນະບ້ານມາຫາ

ພວກເຮົາຢ່າງຮ້ອນຮຸ່ມໃຈຮ້າຍ ແລະ ໃຊ້ວາຈາອ່າວແຂງກະດ້າງກັບພວກເຮົາວ່າ:

-ເປັນຫຍັງພວກເຮົາຈຶ່ງໄດ້ປີ້ແຕ່ ໒໐ ໃບ ສຳລັບມາເບິ່ງລະຄອນໃນມື້ອື່ນ?

ໂຈຣາ ໂວນກອບ ຫົວໜ້າພະແນກຈຳໜ່າຍປີ້ ສັ່ນຫົວໃສ່ຕໍ່ໜ້າເລຂາຄະນະບ້ານ ແບບເຍີ້ຍໆ ແລະ ຕອບວ່າ:

-ຫັ້ນ ມັນກະຫລາຍໂພດແລ້ວ ສຳລັບພວກເຈົ້ານະ!

-ຫລາຍຊັ້ນຫວະ? ເຈົ້າໂລດບໍ່ງກົ້ນຕິດຕັ່ງອີ່ຢູ່ພີ້, ທ້າວອາດຍາສິດ! ແລ້ວເຈົ້າຮູ້ແນວໃດວ່າມັນຫລາຍໂພດ?

-ພວກເຮົາຢູ່ພີ້ ແຕ່ພວກເຮົາກໍເຫັນວ່າ ມີພວກຍານາງລູກສາວເຈົ້າອາວາດເອົາປີ້ມາເຂົ້າຊົມການສະແດງ.

-ພວກລູກສາວເຈົ້າອາວາດ ວ່າຕີ? ແມ່ນໃຜລະ?

-ລູກສາວເຈົ້າອາວາດ ພວກອີ່ຜົມແດງໆຫັ້ນລະ!

ເມື່ອຍອມຮັບຮູ້ຄຳພົນລະນາອັນຖືກຕ້ອງ ເຖິງລູກສາວເຈົ້າອາວາດໃນເຂດຕົນແລ້ວ ທ້າວເລຂາຄະນະບ້ານ ຈຶ່ງປ່ຽນນ້ຳສຽງເວົ້າແຕ່ບໍ່ຍອມພ່າຍແພ້ວ່າ:

-ເອົາລະ, ຂ້ອຍຍອມຮັບວ່າມີລູກສາວຂອງເຈົ້າອາວາດຢູ່ສອງຄົນ... ແຕ່ເປັນຫຍັງຈຶ່ງຫລຸດປີ້ລົງຮອດ ໒໐ ລະ? ພວກເຮົາເຄີຍໄດ້ ໔໐ ມາບາດນີ້ໂລດໄດ້ແຕ່ ໒໐ ຫນຶ່ງ?

-ພວກເຮົາຫມົດຄວາມໄວ້ເນື້ອເຊື່ອໃຈໃນໂຕເຈົ້າແລ້ວ; ໂຈຣາຕອບຫນ້າບຶ້ງ, -ລູກສາວເຈົ້າອາວາດສອງຄົນ ຕື່ມໃສ່ເມຍເຈົ້າອາວາດເອງອີກ, ເມຍພໍ່ຄ້າ, ເມຍພວກກູລັກອີກຕັ້ງທໍ່ໃດຄົນ ພວກ

ເຮົາບໍ່ຮັບຮູ້ນໍາ, ພວກເຮົາບໍ່ໄດ້ວ່າຈະໄປເສຍເວລານໍາພວກເສຍ ຫາດຂາດຄຸນຂອງເຈົ້າເດີ້.

- ແລ້ວບັກຫມາໃດ ມັນມາພ້ອງພວກເຈົ້າເນາະ? ບອກໄດ້ບໍ່?

- ພວກບັກຫມາຫມູ່ນີ້ ບໍ່ມີຊື່ຢູ່ໃນບັນຊີຂອງພວກເຮົາດອກັນ, ໃຫ້ພວກເຈົ້າ ໓໐ ປີກໍຫລາຍພໍແຮງແລ້ວ!

ທ້າວເລຂາຄະນະບ້ານເປີດຫນີເພື່ອໃນທັນທີ ເພື່ອສືບຫາຊື່ "ຜູ້ເສຍຫາດຂາດຄຸນ" ຜູ້ໃຫມ່, ແຕ່ກໍມີບັກປະທ້ວງຄົນໃຫມ່ມາ ແທນບ່ອນຂອງເຂົາເກືອບທັນທີ.

- ນີ້ນ່າ! ສະຫາຍ ແມ່ນພວກເຈົ້າເຮັດແນວໃດເກາະ? ຊາວ ຫນຸ່ມກຶມໂຊໂມນ ພວກເຮົາມີຢູ່ນໍາກັນ ໔໐ ຄົນ ແລ້ວພວກເຈົ້າ ຊໍ້າໃຫ້ປີພວກເຮົາແຕ່ ໑໔ ໃບ.

- ຈາກລາຍງານຂອງກອງ ຜ="ຜູ້ຊົມ", ເທື່ອແລ້ວນີ້ ປາກົດ ວ່າມີຊາວຫນຸ່ມກຶມໂຊໂມນຂອງພວກເຈົ້າແຕ່ ໑໔ ຄົນເທົ່ານັ້ນທີ່ບໍ່ ເມົາ, ແຕ່ໃນຈໍານວນນີ້ຍັງນັບເອົາແມ່ຕູ້ ໔ ຄົນເຂົ້ານໍາໃດ້ຫັ້ນ, ນອກນັ້ນເມົາຫມົດທຸກຄົນ.

- ບໍ່ແມ່ນ ບໍ່ແມ່ນຈັກດີ້! ຜູ້ໃດເວົ້າວ່າພວກເຮົາເມົາບັກຫມໍ ນັ້ນແມ່ນຍອດຂີ້ຕົວະອ້ອຍຕ້ອຍ, ສະມາຊິກພວກເຮົາເຮັດວຽກຢູ່ ໂຮງຕົ້ມເຫລົ້າ ຈັ່ງຊັ້ນມັນກໍມີກິ່ນເຫລົ້າຕິດຕາມເສື້ອຜ້າ ຕົນໂຕ ເປັນທໍາມະດາ.

- ພວກເຮົາພິສູດເບິ່ງແລ້ວ, ລົມຫັນໃຈຂອງພວກເຂົາມີກິ່ນ ເຫລົ້າ, ຢ່າໄປກຶມໂທດໃສ່ໂຮງງານເທາະ...

- ຂ້ອຍຈິເອົາພວກເຂົາມາຫາເຈົ້າ ໃຫ້ເຈົ້າເບິ່ງເອງ ພວກເຂົາ

ມີກົ່ນເຫລົ້າຕິດໂຕສະເຫມີເລີຍລະ, ເຈົ້ານັ້ນຕ້ອງຊ່າງຫາເລື່ອງໃສ່ພວກເຂົາແທ້ໆໃດ໋, ແມ່ນຊິຫາເລື່ອງປິດເປືອນຂີ້ດີວະແນວນີ້ເຮັດຫຍັງຣື?

-ພໍແລ້ວ! ພວກເຮົາຮູ້ຈັກໄຈ້ແຍກກິ່ນຕິດຈາກໂຮງງານ ກັບກິ່ນຄົນເມົາເປັນຢ່າງດີດອກ!

-ຈັ່ງໃດກໍ່ຂໍອີກຈັກ ៥ ປີຕື່ມເທາະເນາະ, ພວກເຈົ້າກໍ່ຄືດເບິ່ງແດ່ ບໍ່ເປັນຕາອາຍຫວະ? ຍາຍໃຫ້ພວກຜູ້ແຊ້ ຜູ້ສາວໂຕເອງຫມູ່ຄູ່ໂຕເອງ ຕັ້ງເທົ່າໃດ ບາດພວກກົມໂຊໂມນ ຊ້ຳຜັດຫນ້ອຍກວ່າຫມູ່...

ມາຮອດເວລານັ້ນ ພວກເຮົາຈຶ່ງເຂົ້າໃຈວ່າ ການສະແດງລະຄອນຂອງພວກເຮົາບໍ່ແມ່ນການພັກຜ່ອນຢ່ອນໃຈ ຫລື ການຫລິ້ນມ່ວນໆສຳລັບຕົນເອງອີກແລ້ວ ແຕ່ມັນໄດ້ກາຍເປັນຂໍ້ຜູກມັດຕົວເອງຢ່າງຫນຶ່ງ ຄ້າຍຄືພາສີສັງຄົມຢ່າງຫນຶ່ງ ເຊິ່ງຫລີກເວັ້ນບໍ່ໄດ້ ທັງເປັນລາຍຈ່າຍທີ່ບໍ່ສາມາດປິດເບື້ອງອອກຈາກຕົນເອງໄດ້ນຳ.

ຫ້ອງການກົມໂຊໂມນ ນຳບັນຫານີ້ຂຶ້ນພິຈາລະນາຄົ້ນຄວ້າຢ່າງຈິງຈັງ. ສະໂມສອນລະຄອນບໍ່ສາມາດແບກຫາບພາລະຫນັກຫນ່ວງອັນນີ້ໄດ້ແຕ່ພຽງຝ່າຍດຽວ ແລະ ການປ່ອຍໃຫ້ມີວັນເສົາຫວ່າງປາສະຈາກການສະແດງກໍ່ຊ້ຳເປັນເລື່ອງທີ່ບໍ່ສາມາດຍອມຮັບໄດ້ຄືກັນ. ນອກຈາກນີ້ ແຕ່ລະອາທິດພວກເຮົາຕ້ອງສະແດງເລື່ອງໃຫມ່ໄປເລື້ອຍໆ. ການສະແດງຊ້ຳເລື່ອງເກົ່ານັ້ນຫວະ ມັນແມ່ນການຫລຸດກຽດສັກສີຂອງຕົນ ທັງເປັນການສະຫນອງຄ່ຳຄືນຫນຶ່ງທີ່ໄຮ້ລົດຊາດໃຫ້ແກ່ຄົນບ້ານໃກ້ເຮືອນຄຽງກັບແຂກປະຈຳຂອງພວກເຮົາເອງ. ມີ

ເຫດການເກືອບທຸກແບບທຸກແນວເກີດຂຶ້ນຢູ່ໃນວົງສະໂມສອນລະຄອນຂອງພວກເຮົາ.

ກາຣາບານົບ ຈຶ່ງຮ້ອງອ້ອນວອນຂໍຄວາມເຫັນໃຈວ່າ:

- ແມ່ນເຮົາເປັນໂຕອີ່ຫຍັງເກາະ? ແມ່ນເຮົາມາສະຫມັກເປັນນັກສະແດງຕັ້ງແຕ່ມື້ເຫັງ? ອາທິດແລ້ວເຮົາສະແດງເປັນຫົວພໍ່ໃຫຍ່ມາອາທິດນີ້ສະແດງເປັນນາຍພົນແລ້ວບັດນີ້ ພວກໂຕຊ້ຳຢາກໃຫ້ເຮົາສະແດງເປັນທະຫານກອງຫລອນ, ໂຍ້ວ! ແມ່ນເຮົາເມື່ອຍບໍ່ເປັນຊຸ້ນຫວາ? ທຸກໆແລງຊ້ອມຈົນຮອດ 6 ໂມງເຊົ້າ ແລ້ວວັນເສົາຍັງຕ້ອງຂຶ້ນໂຕະຂຶ້ນຕັ່ງ ແຕ່ງສາກອີກ ...

ໂກວານ ເອົາມືຂຶ້ມໂຕະ ຮ້ອງມາໃສ່ວ່າ:

- ໂຕຄືຊິຢາກໃຫ້ຫມູ່ເອົາສາດມາປູໃຫ້ໂຕນອນເວັນຫລີ້ນ ຢູ່ກ້ອງຮົ່ມໄມ້ຫັ້ນເນາະ? ມັກຈັ່ງຊ້ານກໍໄດ້ເວີຍ...

- ຕ້ອງຈັດຕັ້ງວຽກງານ ແບບໃຫ້ຫມົດທຸກຄົນມີອັນເຮັດ!

- ຕົກລົງພວກເຮົາຈະຈັດຕັ້ງແບບນັ້ນ!

- ເອົາເລີຍ! ເຮັດໄດ້ໂລດ.

ກອງປະຊຸມສະພານາຍກອງຕົກລົງໃຫ້ຫ້ອງການສະເຫນີມະຕິອັນນີ້: ບໍ່ມີສະໂມສອນລະຄອນອີກຕໍ່ໄປ, ຫມົດທຸກຄົນຕ້ອງເຂົ້າຮ່ວມສະແດງລະຄອນ!

ສະພານັ້ນ ຍາມໃດກໍມັກໃຫ້ທຸກຢ່າງດຳເນີນໄປຢ່າງຖືກຕ້ອງເປັນທາງການໂດຍການອອກຄຳສັ່ງ ຈັ່ງຊຸ້ນຈຶ່ງມີການອອກຄຳສັ່ງດັ່ງຕໍ່ໄປນີ້:

ອີງໃສ່ການຕົກລົງຂອງສະພານາຍກອງ ເຫັນວ່າການສະແດງລະຄອນເວທີເປັນວຽກງານບັງຄັບສຳລັບຊາວນິຄົມທຸກຄົນ ຫນ່ວຍພິເສດຕໍ່ໄປນີ້ ເປັນຜູ້ຮັບຜິດຊອບໃນການສະແດງເລື່ອງ "ການພະຈົນໄພຂອງຊົນເຜົ່ານິດເຊໂວ..."

ຕໍ່ລົງມາແມ່ນລາຍຊື່ຫນ່ວຍຕ່າງໆ ພໍປານວ່າບໍ່ແມ່ນເພື່ອການສະແດງສິນລະປະສູງສົ່ງຢ່າງຫນຶ່ງ ແຕ່ຫາກແມ່ນ ເພື່ອໄປເກັບຫົວຜັກກາດ ຫລືຂຸດຫົວມັນຝະລັ່ງທຳມະດາ. ການຍຽບຍ່ຳສິນລະປະໃນຄັ້ງນີ້ ມີພົນກະທົບອັນທຳອິດຄື ລຶບລ້າງສະໂມສອນລະຄອນແລະຕັ້ງກອງພິເສດ ພ=ສ "ສິລະປິນ" ຂຶ້ນ ພາຍໃຕ້ການບັນຊາຂອງ ແວກຊະເນັບປະກອບດ້ວຍສະມາຊິກ ໔໘ ຄົນ ເພື່ອການສະແດງຄັ້ງນີ້.

ແຕ່ກອງພິເສດກອງຫນຶ່ງ ມີຄວາມຫມາຍວ່າຕ້ອງເຄັ່ງຄັດຕໍ່ເວລາເອົາແທ້ເອົາວ່າ, ຜູ້ຊັກຊ້າກໍ່ຖືກບົ່ງຊື່ອອກຢູ່ໃນລາຍງານຕອນແລງ ແລະ ນອກນັ້ນກໍແມ່ນການປະຕິບັດຄຳສັ່ງຂອງນາຍກອງ, ພໍສຸດຄຳວ່າ "ໄດ້ແລ້ວ", ປາຍມືຕ້ອງຈີ້ໃສ່ປາຍຫມວກແງບໂລດ, ຜູ້ໃດບົກພ່ອງໃນຫນ້າທີ່ມີຫວັງໄດ້ໄປປາກົດຕົວຢູ່ໃນສະພານາຍກອງ ຫລືຕໍ່ຫນ້າກອງປະຊຸມໃຫຍ່ ໃນກໍລະນີລະເມີດລະບຽບວິໄນ, ສ່ວນໃນກໍລະນີເບົາບາງກວ່າຫມູ່ ແມ່ນມາພົບໂອ້ລົມກັບຂ້າພະເຈົ້າແບບສອງຕໍ່ສອງ ແລະ ເຮັດວຽກພິເສດຕື່ມເລັກນ້ອຍ ຫລືບໍ່ ກໍຖືກກັກຂັງຢູ່ໃນຫ້ອງໃນມື້ພັກ.

ເວົ້າແທ້ແລ້ວ ມັນແມ່ນການປະຕິຮູບຢ່າງຫນຶ່ງ, ສະໂມສອນລະຄອນແມ່ນອົງການຈັດຕັ້ງແບບສະຫມັກໃຈແຫ່ງຫນຶ່ງ ຈັ່ງຊັ້ນມັນ

ຈຶ່ງເກີດມີທ່າອຽງມຸ່ງຫາ ລັດທິປະຊາທິປະໄຕແບບໂພດເກີນແດ່ ແລະ ຈຳນວນສະມາຊິກຂອງມັນກໍ່ບໍ່ແນ່ນອນຈັກເທື່ອ. ນອກນີ້ສະໂມສອນລະຄອນ ຍັງເປັນເວທີຕໍ່ສູ້ຂອງຜູ້ມີລິດນິຍົມຕ່າງກັນອີກ ແລະ ເປັນການສະແດງອອກຂອງສິດທິຕ່າງໆ ໂດຍສະເພາະໃນເວລາຄັດເລືອກເອົາເລື່ອງສະແດງກັບການແຈກບົດ; ແມ່ນຢູ່ໃນສະໂມສອນລະຄອນຂອງພວກເຮົານີ້ເອງ ທີ່ບາງເທື່ອພວກພະນັກງານໄດ້ສະແດງຕົວວ່າ ເປັນນັກຊຸກຊານອອກມາ. ສຳລັບເດັກນ້ອຍນິຄົມນັ້ນ ພວກເຂົາຮັບເອົາຂໍ້ຕົກລົງຂອງຫ້ອງການ ແລະ ສະພານາຍກອງ ຄືກັບວ່າ ມັນຕ້ອງເປັນໄປແນວນັ້ນໂລດ ບໍ່ມີຫຍັງຫນ້າສົງໄສ. ການຫລິ້ນລະຄອນຢູ່ໃນນິຄົມ ເປັນຄືວຽກງານປະເພດດຽວກັບການກະສິກຳ, ການສ້ອມແປງເຄຫາສະຖານ, ການອອກລະບຽບ ແລະ ການຮັກສາຄວາມສະອາດພາຍໃນຂອງຕຶກເຮືອນທັງຫລາຍ. ເບິ່ງໃນແງ່ຜົນປະໂຫຍດຂອງນິຄົມແລ້ວ ການທີ່ຊາວນິຄົມຜູ້ໃດຜູ້ຫນຶ່ງມີສ່ວນຮ່ວມໃນການສະແດງຫລາຍຫລືຫນ້ອຍ ເທົ່າໃດນັ້ນ ມັນບໍ່ສຳຄັນເທົ່າໃດດອກ ແຕ່ສິ່ງສຳຄັນແມ່ນເຂົາຕ້ອງເຮັດໃນສິ່ງທີ່ເພິ່ນຮຽກຮ້ອງພຸ້ນຕ່າງຫາກ.

ຕາມປົກກະຕິແລ້ວ ແມ່ນຢູ່ໃນສະພານາຍກອງ ວັນອາທິດ ທີ່ຂ້າພະເຈົ້າ ແຈ້ງຊື່ບົດລະຄອນ ເຊິ່ງຈະຫລິ້ນໃນວັນເສົາຕໍ່ໄປໃຫ້ຮູ້ແລ້ວອ່ານຊື່ເດັກນ້ອຍຜູ້ຈະໄດ້ຮັບບົດສະແດງຕ່າງໆ ຈາກນັ້ນຊື່ຂອງພວກເຂົາກໍ່ຖືກບັນທຶກລົງໃນກອງພິເສດຫມາຍເລກ ຜ=ສ "ສີລະປິນ" ທັນທີ, ໃຜຜູ້ຫນຶ່ງໃນກອງ ຈະໄດ້ຮັບເລືອກເປັນນາຍກອງສະມາຊິກອື່ນໆຖືກຈັດຢູ່ໃນກອງໃຫມ່ຫມາຍເລກ ຜ ຄືກັນ ແລະ

ການຈັດແບ່ງແບບນີ້ ໃຊ້ສະເພາະໃນລະຍະສະແດງເລື່ອງໜຶ່ງເທົ່ານັ້ນ. ກອງເຫລົ່ານັ້ນມີຊື່ດັ່ງນີ້:

ກອງ ຜີ "ສ" = ສີລະປິນ

ກອງ ຜີ "ຊ" = ຜູ້ຊົມ

ກອງ ຜີ "ຄ" = ເຄື່ອງນຸ່ງ

ກອງ ຜີ "ອ" = ອາຍອຸ່ນ

ກອງ ຜີ "ປ" = ປະດັບປະດາ

ກອງ ຜີ "ກ" = ເຄື່ອງປະກອບ

ກອງ ຜີ "ຟ" - ໄຟ ແລະ ແສງເວທີ

ກອງ ຜີ "ສ.ອ" = ຄວາມສະອາດ

ກອງ ຜີ "ສ.ສ" = ສຽງສຽງ

ກອງ ຜີ "ຜ" = ຜ້າກັ້ງສາກ.

ພວກເຮົາຄວນຈື່ວ່າ ບໍລິສັດນັ້ນມີສະມາຊິກຢູ່ແຕ່ ໒໐ ຄົນເທົ່ານັ້ນ ຈຶ່ງເປັນທີ່ຈະແຈ້ງວ່າ ບໍ່ມີໃຜຫວ່າງງານເລີຍ ແລະ ຖ້າຫາກວ່າບົດລະຄອນທີ່ຈະຫລິ້ນນັ້ນຕ້ອງໃຊ້ຜູ້ສະແດງຫລາຍ ພວກເຮົາກໍຂາດຄົນເຮັດວຽກໄປເທົ່ານັ້ນເອງ. ແນ່ນອນແລ້ວວ່າ ສະພາບາຍກອງນັ້ນ ໄດ້ພະຍາຍາມຈັດຕັ້ງໜ່ວຍສະເພາະຕ່າງໆຂຶ້ນ ໂດຍອີງໃສ່ຄວາມມຸ່ງມາດປາດຖະໜາ ແລະທ່າອຽງຂອງແຕ່ລະຄົນ ແຕ່ປານນັ້ນກໍຍັງບໍ່ປະສົບຄວາມສຳເລັດສະເໝີໄປດອກ ດັ່ງນັ້ນ ຈຶ່ງມີຜູ້ມາການເລື້ອຍໆວ່າ:

- ເປັນຫຍັງຈຶ່ງຈັດຂ້ອຍໃສ່ກອງພິເສດ ຜີ "ສ"? ຂ້ອຍບໍ່ເຄີຍຫລິ້ນຈັກເທື່ອ.

ມີຜູ້ຕອບໄປວ່າ:

- ຈັ່ງແມ່ນໂຕເວົ້າຄືພວກມູຊິກເນາະ, ບໍ່ມີໃດກໍ່ມີຫນຶ່ງ ແຕ່ລະຄົນຕ້ອງໄດ້ຫລິ້ນເປັນເທື່ອທຳອິດ ຄືກັນນັ້ນແຫລະ!

ຕະຫລອດອາທິດ ສະມາຊິກຂອງກອງພິເສດເຫລົ່ານີ້ ໂດຍສະເພາະພວກຫົວຫນ້າກອງເອງ ພາກັນໃຊ້ເວລາທັງຫມົດວຸ່ນວາຍເຝິກຊ້ອມຢູ່ພາຍໃນນິຄົມ ແລະ ແມ່ນແຕ່ເວລາໄປໃນເມືອງ, ພວກເຂົາບໍ່ຕ່າງຫຍັງກັບຄົນພວມປ່ວງ. ພວກເຮົາບໍ່ຍອມຮັບຄຳຂໍໂທດໃດໆ ເຖິງວ່າຈະເປັນແບວໃດກໍ່ຕາມ ຈັ່ງຊັ້ນໃນບາງຄັ້ງພວກນາຍກອງຫນ່ວຍສະເພາະຈຶ່ງປະສົບກັບຄວາມຫຍຸ້ງຍາກສົມຄວນ. ເປັນຄວາມຈິງຢູ່ວ່າ ພວກເຮົາຕິດຕໍ່ກັບຄົນໃນເມືອງຫລາຍສົມຄວນ ສ່ວນຫລວງຫລາຍແມ່ນຜູ້ອຸ້ມຊູສະຫນັບສະຫນູນພວກເຮົາ ຈັ່ງຊັ້ນພວກເຮົາຈຶ່ງສາມາດຫາເຄື່ອງນຸ່ງອັນເຫມາະສົມສອດຄ່ອງກັບບົດເລື່ອງທີ່ຈະສະແດງ ບໍ່ວ່າບົດເລື່ອງຈະເປັນຢ່າງໃດ ແລະ ໃນກໍລະນີທີ່ເຫລືອວິໄສແທ້ໆ ກອງ ຝ "ຄ" ກໍ່ສາມາດຕັດຫຍິບເຄື່ອງນຸ່ງຂອງທຸກຍຸກທຸກສະໄຫມໄດ້ ບໍ່ວ່າຈະເປັນປະລິມານເທົ່າໃດ ໂດຍໃຊ້ຜ້າແພ ວັດຖຸ ແລະ ອື່ນໆທີ່ມີຢູ່ໃນນິຄົມ. ນອກນີ້ພວກເຮົາຍັງຖືວ່າ "ກອງລະຄອນ" ຂອງພວກເຮົາມີສິດຊົມໃຊ້ບໍ່ພຽງແຕ່ວັດຖຸສິ່ງຂອງທີ່ເປັນຂອງນິຄົມເທົ່ານັ້ນ ແຕ່ຍັງໂຮມເອົາທັງວັດຖຸສິ່ງຂອງ ຂອງຜູ້ຮ່ວມງານອື່ນໆນຳ ຕົວຢ່າງ ກອງ ຝ ພິເສດ "ກ" ນັ້ນເຊື່ອຫມັ້ນວ່າ ກະໂຕ່ຊີກອງຂອງພວກເຂົານັ້ນເອງທີ່ມອບສິດໃຫ້ເຂົາຄົ້ນໃນເຮືອນ ຫ້ອງພັກ ຂອງພະນັກງານ. ເມື່ອກິດຈະການຂອງພວກເຮົາຂະຫຍາຍຕົວຢູ່ໃນນິຄົມຫລາຍ ຈຶ່ງເກີດມີສາງ. ໃນເມື່ອວ່າຕົວ

ລະຄອນສ່ວນຫລວງຫລາຍ ຕ້ອງໄດ້ຍິງປືນ ແລະ ໂດຍທົ່ວໄປ ພວກເຮົາມັກຫລິ້ນເລື່ອງນັກຮົບ ຈັ່ງຊັ້ນນິຄົມຈຶ່ງມີຄັງສັບພາວຸດ ແຫ້ງບ່ອນຫນຶ່ງ ໃນນັ້ນມີເຄື່ອງແບບທະຫານ, ຂີດຍົດຊັ້ນທະຫານ ແລະ ຫລຽນກາຄຳຊອບຂອງທະຫານເປັນຊຸດໆ. ຈາກນັ້ນຈຶ່ງເກີດມີຜູ້ຊ່ຽວຊານຂຶ້ນຄືກັນ ແລະ ບໍ່ພຽງແຕ່ນັກສະແດງເທົ່ານັ້ນ ພວກເຮົາມີນັກຍິງປືນກິນທີ່ເກັ່ງກ້າສາມາດຫລາຍຄົນ, ອາໄສຫົວຄິດປະດິດສ້າງ ແລະ ເຄື່ອງ ປະກອບອື່ນໆ ພວກເຂົາເຮັດໃຫ້ມີສຽງດັງຄ້າຍອາວຸດຊະນິດນີ້ຂຶ້ນມາ, ບາງຢ່າງແຕກສຽງດັງປານຟ້າຮ້ອງ ທັງອອກແສງຮຸ່ງມາບຄືຟ້າເຫລື້ອມ.

ການເຝິກຊ້ອມດຳເນີນຢູ່ອາທິດຫນຶ່ງ ທຳອິດພວກເຮົາພະຍາຍາມເຮັດໃຫ້ຄືຢູ່ໃນໂຮງລະຄອນແທ້ງ ຄືຂຽນບົດສະແດງໃສ່ເຈ້ຍແລ້ວພະຍາຍາມເລົ່າໃຫ້ໄດ້ກັບປາກ ແຕ່ບໍ່ດົນພວກເຮົາກໍເລີກລົ້ມວິທີນີ້ ເພາະພວກເຮົາບໍ່ມີທັງເວລາກ່າຍບົດ ທັງເວລາເລົ່ານອກຈາກນີ້ພວກເຮົາຍັງມີວຽກປະຈຳວັນຂອງນິຄົມ ແລະ ວຽກຄົ້ນຄວ້າຈາກໂຮງຮຽນອີກ: ພວກເຮົາຈຶ່ງເຊົາເຮັດແບບນີ້ ແລ້ວລົງມືສະແດງໂດຍອາໄສຜູ້ສົ່ງບົດ ແລະ ກໍເຮັດໄດ້ດີຢູ່. ພວກເດັກນ້ອຍມີຄວາມສາມາດຢ່າງຫນ້າງຶດງໍ້, ສາມາດຮັບເອົາຄຳເວົ້າທີ່ລ່ອງລອຍມາໄດ້ຢ່າງຖືກຕ້ອງ. ແຕ່ເພື່ອໃຫ້ການສະແດງດຳເນີນໄປຢ່າງຕະຫລອດປອດໂປ່ງ ຂ້າພະເຈົ້າຕ້ອງເປັນຜູ້ກຳກັບການສະແດງເອງ ແລະ ເປັນຜູ້ສົ່ງບົດນຳ ເພາະຜູ້ສົ່ງບົດນີ້ ບໍ່ພຽງແຕ່ຕ້ອງອ່ານບົດໃຫ້ຊື່ງ ແຕ່ໂດຍທົ່ວໄປແລ້ວເຂົາຕ້ອງເປັນຜູ້ເປີດບົດສະແດງໄປນຳ ຊີ້ບອກບ່ອນຜິດ

ໃຫ້ສັນຍານເວລາລະດົມຍິງ, ການກອດດົນ ແລະ ການລົ້ມຕາຍ
ນຳ.

ພວກເຮົາບໍ່ໄດ້ຂາດເຂີນນັກສະແດງດອກ ເດັກນ້ອຍນິຄົມທີ່ມີແວວປະເສີດຫລາຍຄົນ ສະແດງຕົວອອກເລື້ອຍໆ. ພວກດາລາເອກຈຳນວນຫນຶ່ງຂອງພວກເຮົາແມ່ນ: ບີອິດ ອິວາໂນວິດ, ຊາໂດຣອບ, ມາຣູດຊາ ເລັບເຊັນໂກ, ກູດລາຕີ, ແວກສະເນັບ, ເກລແຊ, ລາປິດ.

ພວກເຮົາພະຍາຍາມຫລົບເລື່ອງທີ່ມີຫລາຍບົດສະແດງ ເພາະບໍ່ອິດແຕ່ຜູ້ຢາກສະແດງ ສຳລັບພວກເຮົາເອງແລ້ວກໍເຫັນວ່າ ມັນເປັນຜົນດີກວ່າ ເມື່ອທະວີຈຳນວນຜູ້ສາມາດສະແດງເທິງເວທີໄດ້ຫລາຍຂຶ້ນ. ຂ້າພະເຈົ້າໃຫ້ຄວາມສຳຄັນແກ່ການສະແດງລະຄອນຫລາຍ ເພາະວ່າມັນມີສ່ວນສົ່ງເສີມໃຫ້ການໃຊ້ພາສາຂອງພວກເດັກນ້ອຍດີຂຶ້ນພ້ອມທັງເສີມຂະຫຍາຍຂອບເຂດຄວາມຮອບຮູ້ຂອງພວກເຂົາໄປພ້ອມ ແຕ່ກໍມີບາງເທື່ອຄືກັນ ທີ່ພວກເຮົາຂາດເຂີນນັກສະແດງ, ໃນກໍລະນີນີ້ພວກເຮົາອາໄສພວກພະນັກງານ. ມີເທື່ອຫນຶ່ງພວກເຮົາເອົາຮອດ ຊີລັນຕີ ຂຶ້ນເທິງຮ້ານນຳ. ໃນເວລາເຝິກແອບຢູ່ນັ້ນລາວສະແດງວ່າບໍ່ມີຄວາມສາມາດພໍເທົ່າໃດ ແຕ່ໃນເມື່ອລາວຈີຕ້ອງເວົ້າແຕ່ພຽງປະໂຫຍກດຽວນີ້ ຄື: "ລົດໄຟຊັກຊ້າໄປ ສີ ຊົ່ວໂມງ" ຈັ່ງຊັ້ນ ຈຶ່ງຖືວ່າບໍ່ເປັນການສ່ຽງອັນຕະລາຍເກີນໄປ ແຕ່ຊ້ຳປາກົດວ່າຜົນທີ່ໄດ້ຮັບນັ້ນ ເກີນຄາດຫມາຍຊ້ຳ.

ຊີລັນຕີ ກ້າວອອກສູ່ເວທີຢ່າງທັນເວລາ ແລະ ຖືກຕ້ອງ ແຕ່ລາວເວົ້າແບບນີ້:

-ມັນເປັນຈັ່ງຊີ້ເດ໊, ເຈົ້າເຫັນລະຕິ ລົດໄຟມັນຊ້າໄປ ສີ ຊົ່ວ ໂມງເດ໊, ເລື່ອງມັນເປັນແນວນີ້ລະ!

ຄຳເວົ້າເຫລົ່ານີ້ຖືກໃຈຜູ້ຊົມຢ່າງແຮງ ແຕ່ນີ້ກໍຍັງບໍ່ເທົ່າໃດດອກ ຍ້ອນວ່າ ຢູ່ເທິງເວທີພວກສິລະປິນສະແດງບົດເປັນກຸ່ມຊາວອົບພະ ຍົບຈຳນວນຫນຶ່ງ ທີ່ມາລໍຖ້າຂຶ້ນລົດໄຟສະຖານີໃຫຍ່, ພວກເຂົາຢືນ ວົນວຽນຢູ່ເທິງເວທີ ທັງຫິວໂຕຂົດ ໂຕງໍ ໂດຍບໍ່ເອົາຫົວຊານໍ ສຽງເອີ້ນຂອງຂ້າພະເຈົ້າທີ່ຢູ່ໃນຮູບ່ອນສົ່ງບົດ ແລະ ຂ້າພະເຈົ້າເອງ ກໍບໍ່ສາມາດອົດຫົວໄດ້ຄືກັນ. ຊີລັນຕີ ຢຸດຢູ່ຄາວຫນຶ່ງຈຶ່ງຕາເບິ່ງ ຄວາມສັບສົນເຫລົ່ານີ້ ແລ້ວໃນທີ່ສຸດຈຶ່ງຮ້າຍຂຶ້ນວ່າ:

-ໂຍ້ວ! ຊິໃຫ້ເວົ້າກັບພວກເຈົ້າແນວໃດ ຮື? ພວກຕາຍຍາກ ສູເອີ້ຍ! ອີກ ສີຊົ່ວໂມງລົດໄຟຈຶ່ງຊິມາ...ມັນເປັນແນວນີ້ ພວກເຈົ້າ ກໍເຫັນວ່າຕະຫລົກຊັນຫວະ?

ພວກອົບພະຍົບຟັງຄວາມເວົ້າສຽດໃສ່ອັນນີ້ຈົບສຸດດ້ວຍຄວາມ ພໍໃຈ ແລ້ວຈຶ່ງລົງຈາກຮ້ານເປັນວຸ່ນໆ.

ຂ້າພະເຈົ້າ ໄດ້ສະຕິຈຶ່ງຊີ້ມບອກວ່າ:

-ຊີລັນຕີ ກັບເຂົ້າເມືອໂວ! ຊີລັນຕີ ຊິໄປຕາຍທາງໃດກໍໄປ ເທາະແມ້!

-ເອີ້ ມັນກໍເປັນແນວນີ້ແລ້ວ...!

ຂ້າພະເຈົ້າພັບປຶ້ມນ້ອຍເຂົ້າ ເປັນສັນຍານບອກອັດຜ້າກັ້ງ.

ພວກເຮົາມີຄວາມຫຍຸ້ງຍາກໃນການຫານັກສະແດງຍິງ. ໃນກຸ່ມ ນັກຮຽນສາວນ້ອຍພວກເຮົາ ເລັບເຊັນໂກ ກັບ ນາຊະເຈຍ ສະ ແດງໄດ້ພໍເຄິ່ງໆ ກາງໆ ສ່ວນໃນກຸ່ມພະນັກງານກໍມີແຕ່ ນາງນ້ອຍ

ລີດາ ຜູ້ດຽວ, ສ່ວນຜູ້ອື່ນໆນັ້ນ ບໍ່ມີພອນສະຫວັນໃນການສະແດງເລີຍ ພວກນາງຫນ້າອາຍໂພດເມື່ອຂຶ້ນເວທີ ບໍ່ຍອມໃຫ້ໃຜກອດຈູບຢ່າງເດັດຂາດເຖິງວ່າບົດສະແດງບົ່ງບອກໄວ້ກໍຕາມ, ເລື່ອງຄວາມຮັກຄວາມມັກນີ້ ມີຢູ່ໃນບົດສະແດງສະເຫມີ ຈັ່ງຊັ້ນ ພວກເຮົາຈຶ່ງຊອກຄົນຫານັກສະແດງຍິງ ຈາກກຸ່ມແມ່ຍິງພວກເອື້ອຍພວກປ້ານ້າອາ ທີ່ມາເບິ່ງລະຄອນ ຮ່ວມທັງຍາດພີ່ນ້ອງຂອງຫມູ່ຄູ່ ຜູ້ຮ່ວມງານ ແລະພວກຢູ່ໂຮງສີ. ພວກເຮົາຂໍຮ້ອງນຳຫມູ່ຄູ່ຢູ່ໃນເມືອງແລະ ເຮັດແນວນີ້ກໍພໍແຕ່ແກ້ໄຂບັນຫາໄດ້ໃນແຕ່ບາງເທື່ອ. ຍ້ອນແນວນີ້ແລ້ວ ພໍແຕ່ ອິກຊານນາ ກັບ ຮາເຊນ ມາຮອດນິຄົມໄດ້ມື້ດຽວ ພວກນາງກໍຕ້ອງໄປຊ້ອມສະແດງບົດຫນຶ່ງ ເຊິ່ງຊະນະໃຈພວກເຮົາໂດຍວາດທ່າອັນຄ່ອງໄວ ບໍ່ເຂີນອາຍຈັກຫນ້ອຍໃນເວລາກອດຈູບ.

ເທື່ອຫນຶ່ງພວກເຮົາສາມາດເອົາຊະນະຈິດໃຈ ຜູ້ຊົມນາງຫນຶ່ງເຊິ່ງມາແຕ່ໃນເມືອງເພື່ອຊົມການສະແດງຂອງພວກເຮົາ ເປັນບາງໂອກາດ. ນາງຄືນນີ້ພັກຢູ່ເຮືອນເຈົ້າຂອງໂຮງສີທີ່ເປັນຫມູ່ກັບນາງ. ນັບວ່ານາງນີ້ເປັນເພັດງາມຫນ່ວຍຫນຶ່ງ: ນາງທັງງາມ, ສຽງດີ, ມີຕາ ແລະ ວາດຍ່າງກັບຄຸນສົມບັດອື່ນໆ ເຫມາະສົມທີ່ຈະເປັນຫມ່ອມນາງເຈົ້າຊູ້ໃນບົດລະຄອນຍຸກປະຕິວັດໄດ້ຢ່າງດີ. ໃນເວລາເຝິກຊ້ອມນັ້ນ ພວກເຮົາຕ້ອງເລຍປາກດ້ວຍຄວາມຫວັງວ່າ ການສະແດງຮອບທຳອິດນີ້ຄົງໄດ້ຮັບຜົນສຳເລັດ ຢ່າງງົດງາມເປັນແນ່. ການສະແດງເລີ່ມຂຶ້ນທ່າມກາງບັນຍາກາດພິດພົ້ນ ແຕ່ໃນເວລາພັກຫລັງຈາກສາກທີຫນຶ່ງ, ຢູ່ດ້ານຫລັງຂອງເວທີ ພົວຂອງນາງເພັດ

ຫນ່ວຍງານກໍໂພ້ໂວ້ເຂົ້າມາ, ເຂົາເປັນນາຍຊ່າງໄປສະນີໂທລະເລກ ປະຈຳທາງລົດໄຟ, ເຂົາເວົ້າກັບເມຍຕໍ່ຫນ້າຄົນທັງຫມົດວ່າ:

-ຂ້ອຍບໍ່ຍອມໃຫ້ເຈົ້າຫລິ້ນເລື່ອງນີ້ຕໍ່ໄປດອກ, ໄປ໋ ເມືອ!

ນາງເພັດຫນ່ວຍງານຂອງພວກເຮົາຈົ່ມຄາງຄ່ອຍໆ ດ້ວຍຄວາມ ຕົກໃຈວ່າ:

-ຊິ... ຊິ ໃຫ້ຂ້ອຍເມືອຈັ່ງໃດ? ລະຄອນເດ້ ຊຸ້ນ?

-ລະຄອນ ຫວະ? ບໍ່ແມ່ນເລື່ອງຂອງຂ້ອຍເອີ້ຍ! ໄປ໋ ເມືອ! ຂ້ອຍບໍ່ຍອມໃຫ້ບັກໃດມາກອດມາຈູບ ແລະ ຍໍ່ຍີເຈົ້າຢູ່ເທິງເວທີນີ້ ອີກແລ້ວ.

-ໂຢ໋ວ ຊ່າງວ່າແທ້... ຊິໄດ້ຫວາ?

-ຕັ້ງແຕ່ສາກນີ້ສາກດຽວ ເຂົາຈູບເຈົ້າຕັ້ງ ໑໐ ເທື່ອແລ້ວ... ມັນບໍ່ເປັນຕາຫນ່າຍ ຫວະ?

ທຳອິດພວກເຮົາປາກບໍ່ອອກ ຕໍ່ມາຈຶ່ງພະຍາຍາມເວົ້າໃຫ້ທ້າວ ຂີ້ຫຶງນັ້ນຟັງເຫດຟັງຜົນວ່າ:

-ສະຫາຍເອີຍ ຈູບກັນເທິງເວທີລະຄອນແບບນີ້ ມັນບໍ່ມີ ຄວາມຫມາຍຫຍັງດອກ! ກາຣາບານົບ ເວົ້າຂຶ້ນ.

-ຂ້ອຍເຫັນຢູ່ດອກວ່າ ມັນມີຄວາມຫມາຍຫລືບໍ່ມີນະ! ຂ້ອຍ ຕາບອດຊຸ້ນຫວະນີ້? ຂ້ອຍນັ່ງຢູ່ແຖວຫນ້າທຳອິດໃດ໋.

ຂ້າພະເຈົ້າ ບອກກັບ ລາປິດວ່າ:

-ໂຕຫັ້ນຊ່າງເຈລະຈາ ລອງຈັດການໃຫ້ມັນມິດເບິ່ງ!

ລາປິດ ປະຕິບັດຫນ້າທີ່ຂອງເຂົາຢ່າງໃຈເຢັນ ຈັບຫົ້ນດຸມເສື້ອ ທ້າວຜົວຂີ້ຫຶງຈຳໃຫ້ມັນນັ່ງລົງແປັນມ້າ.

-ເຈົ້າກະໂພດດອກ,   ນີ້ມັນແມ່ນເລື່ອງເປັນປະໂຫຍດນ່າ. ແມ່ນວຽກງານວັດທະນະທຳຢ່າງໜຶ່ງໃດ໋, ໃຫ້ເມຍເຈົ້າກອດຈູບ ກັບຜູ້ໃດຜູ້ໜຶ່ງ ເພື່ອພາລະກິດດີແບບນີ້ມັນກໍມີແຕ່ຊິໄດ້ຮັບຜົນດີ ຫັ້ນຕວ່າ.

-ຜູ້ໃດວ່າດີ ກໍເຊີນວ່າດີໄປໂລດ ສ່ວນຂ້ອຍນີ້ບໍ່ຂໍວ່າມັນດີ ດອກ! ທ້າວນາຍຊ່າງໂທລະເລກບໍ່ຍອມ!

-ແຕ່ໝົດທຸກຄົນເຫັນວ່າດີໃດ໋ລະ.

-ເຈົ້າຄຶດວ່າໝົດທຸກຄົນຕ້ອງມາກອດມາຈູບເມຍຂ້ອຍໝົດ ຊັ້ນຫວະ?

-ໂຍ້ວ ເຈົ້ານີ້ ຈັ່ງແມ່ນຈ້າດອກ, ມັນເປັນແນວນີ້ ກໍຍິ່ງດີ ກວ່າໃຫ້ເມຍເຈົ້າໄປຄົບຊູ້ຊູບ່າວຕວ່າ ເບາະ?

-ຊູບ່າວທາງໃດ?

-ເລື່ອງອັນວ່ານີ້ ມັນອາດເປັນໄປເອງເດີ້! ເຈົ້າຄຶດເບິ່ງ ຢູ່ ຫນີ້ແມ່ນຕໍ່ໜ້າໝົດທຸກຄົນ ແລະ ເຈົ້າເອງກໍເຫັນ ມັນຊິບໍ່ເປັນ ແນວດີເດີ້ກ້າວ່າເລື່ອງມັນເກີດຢູ່ແຖວງປ່າໄມ້ ບ່ອນເຈົ້າບໍ່ຮູ້ບໍ່ເຫັນ ນຳພຸ້ນນ່າ.

-ເປັນໄປບໍ່ໄດ້ດອກ!

-ເປັນໄປບໍ່ໄດ້ຈັ່ງໃດ? ເມຍເຈົ້າຊ່າງກອດຊ່າງຈູບຄືຫຍັງນີ້, ເຈົ້າຄຶດວ່າເປັນແບບນີ້ແລ້ວ ລາວຍັງຊິຢູ່ລ້າງຊັ້ນຫວະ? ນ່າ... ໃຫ້ ລາວສະແດງຢູ່ເທິງເວທີນີ້ມັນດີແລ້ວລະ.

ຜູ້ຜົວຍອມຮັບຟັງເຫດຜົນຂອງ ລາບິດ ຢ່າງຍາກຊາ ແລ້ວອະ ນຸຍາດໃຫ້ຜູ້ເປັນເມຍສະແດງຕໍ່ໄປຈົນສຸດ ທັງກົດແຂ່ວກັດຄາງແລະ

ວາງເງື່ອນໄຂຂໍ້ດຽວວ່າ ຂໍໃຫ້ການກອດຈູບນັ້ນບໍ່ "ແມ່ນເລື່ອງແທ້ໆ". ລາວຖອຍອອກຈາກເວທີໄປດ້ວຍຄວາມໂມໂຫ. ດາລາເອກຂອງພວກເຮົາເລີຍເປັນເກີງ ເຂີນໆ ວາດໃດວາດໜຶ່ງ, ພວກເຮົາຄຶດຢ້ານວ່າການສະແດງຄົງຈະລົ້ມເຫລວໄປແລ້ວ, ທ້າວພິວນັ່ງຢູ່ແຖວທີ່ໜຶ່ງ ກົ້ງຕາສະກິດຈິດຫມິດທຸກຄືນພໍປານງູເຫລືອມຍັກ. ສາກທີ່ສອງຜ່ານໄປຢ່າງງຽບເຫງົາ ພໍປານພິທີສົ່ງສະການແຕ່ພໍມາຮອດສາກທີ່ສາມ ຫມິດທຸກຄືນກໍຍິ້ມອອກ ທ້າວພິວບໍ່ໄດ້ນັ່ງຢູ່ບ່ອນເກົ່າຂອງລາວອີກແລ້ວ ຂ້າພະເຈົ້າຄຶດບໍ່ອອກເລີຍວ່າ ຫມໍໄປລີ້ນັ່ງຢູ່ໃສ, ຈົນການສະແດງສິ້ນສຸດລົງຄວາມລັບທັງຫມົດຈຶ່ງຖືກເຜີຍອອກ, ກາຣາບານິບ ເວົ້າຢ່າງຖ່ອມຕົນວ່າ:

- ຂ້ອຍແນະນຳໃຫ້ລາວອອກໄປຊື່ໆນີ້ລະ, ທຳອິດລາວກໍບໍ່ຢາກໄປດອກ ແຕ່ໃນທີ່ສຸດກໍຍອມໄປ.

- ໂຕເຮັດແນວໃດລະ?

ດວງຕາທັງຄູ່ຂອງ ກາຣາບານິບ ສົ່ງແສງຍິບຍັບ, ເຂົາວາງທ່າທີ່ເລິກລັບຄືພູດຜີປີສາດ ແລ້ວຊົມວ່າ:

- ເອົາຊີ້ຊະ ເຮົາມາຕົກລົງກັນດີໆ ຊິງາມກວ່າເນາະ. ສຳລັບມື້ນີ້ໃຫ້ມັນແລ້ວໄປສາ ແຕ່ຖ້າວ່າເຈົ້າບໍ່ອອກຈາກນີ້ໄປດຽວນີ້ ຂ້ອຍສັນຍາວ່າ ເຂົາຊິເອົາເຂົາມາສຸບຫົວເຈົ້າຄັກໆຕວ່າ ເວົ້າແທ້ເດີ້, ຊາວບ້ານເວົ້າແນວໃດເປັນແນວນັ້ນ, ຢູ່ນີ້ມີຜູ້ບ່າວເຈົ້າຊູ້ຫລາຍຄົນ, ເມຍເຈົ້າອິດບໍ່ໄຫວດອກ!

- ແລ້ວເປັນແນວໃດລະ? ນັກສະແດງອື່ນໆຫຸ້ມຖາມຢ່າງສົນໃຈ.

-ຊິມີຫຍັງອີກ ລາວກໍເວົ້າພຽງແຕ່ວ່າ "ເຈົ້າຈື່ເດົ້ວ່າ ເຈົ້າເວົ້າກັບຂ້ອຍແນວໃດ" ແລ້ວກໍຍ້າຍໄປນັ່ງແຖວຫລັງສຸດພຸ້ນ.

ມີການຊ້ອມລະຄອນທຸກງາມື້ ແລະ ຊ້ອມຈົນຫມົດເລື່ອງຕະຫລອດເລີຍ. ໂດຍທົ່ວໄປແລ້ວ ພວກເຮົາພາກັນອົດນອນແດ່. ອີງໃສ່ວ່ານັກສະແດງຂອງພວກເຮົາ ສ່ວນຫລວງຫລາຍຍັງບໍ່ລຶ້ງເຄີຍກັບການສະແດງ ແລະ ຍ້ອນເຫດຜົນອັນນີ້ ພວກເຮົາຈໍາຕ້ອງຮຽນເລົ່າເອົາວິທີສະແດງທຸກບົດທຸກຕອນ ນັບແຕ່ການເຄື່ອນເຫນັງມືຮອດຕີນ, ອາການງ່ຽງຫົວ, ການສົ່ງແສງຕາ, ການປິ່ນຕົວ ຂ້າພະເຈົ້າບໍ່ໄດ້ເອົາຫົວຊານໍາບົດເລົ່າປານໃດເພາະຫວັງວ່າ ຜູ້ສົ່ງບົດຈະເຮັດຫນ້າທີ່ຂອງເຂົາດີທີ່ສຸດແລ້ວ. ເຖິງວັນເສົາຕອນແລງພວກເຮົາກໍຖືກັນວ່າທຸກສິ່ງທຸກຢ່າງຮຽບຮ້ອຍແລ້ວ.

ຢ່າງໃດກໍດີ, ສາມາດເວົ້າໄດ້ວ່າ ການສະແດງຂອງພວກເຮົາບໍ່ຂີ້ຮ້າຍປານໃດ, ຜູ້ຄົນຈາກໃນເມືອງຫລາຍຄົນມັກການສະແດງຂອງພວກເຮົາ. ພວກເຮົາພະຍາຍາມສະແດງຢ່າງມີສິລະປະ ໂດຍບໍ່ເຮັດແບບໂພດເຫລືອ ຫລືເຮັດຕາມຄວາມມັກຂອງຜູ້ຊົມ ທັງບໍ່ສະແຫວງຫາໄຊຊະນະລາຄາຕ່ໍາໆນັ້ນເລີຍ. ພວກເຮົາສະແດງເລື່ອງຂອງລັດເຊຍແລະຂອງ ອູກຣາອີນ. ໃນວັນເສົາໂຮງລະຄອນເລີ່ມມີຊີວິດຊີວານັບແຕ່ບ່າຍສອງໂມງໄປ. ກ້າຫາກວ່າບົດລະຄອນປະກອບດ້ວຍຕົວສະແດງຫລາຍຄົນ. ບູດໄຊ ລົງມືແຕ່ງຕົວ ໃຫ້ນັກສະແດງທັນທີທີ່ກິນເພນແລ້ວ ໂດຍມີ ປີອົດ ອີວາໂນວິດ ເປັນຜູ້ຊ່ອຍ. ແຕ່ ໔ ໂມງຮອດ ໕ ໂມງ ພວກເຂົາສາມາດແຕ່ງຕົວໃຫ້ນັກສະແດງຕັ້ງ ໓໐ ຄົນແລ້ວຮຽບຮ້ອຍຈາກນັ້ນຈຶ່ງຈັດການໃຫ້ຕົນເອງ.

ພວກເດັກນ້ອຍນິຄົມ ພາກັນຊອກຄົ້ນຫາວັດຖຸອຸປະກອນປະກອບການສະແດງດ້ວຍຄວາມຫ້າວຫັນເຂັ້ມແຂງເຫລືອວິໄສມະນຸດ. ຖ້າຫາກວ່ານິຄົມລະຄອນ ຕ້ອງການໃຫ້ມີໂຄມໄຟແບບມີໂຄມບັງເປັນສີຟ້າ ພວກເຂົາກໍພາກັນຊອກຄົ້ນທົ່ວໄປ ບໍ່ພຽງແຕ່ຊອກຢູ່ໃນເຮືອນພັກຜູ້ຮ່ວມງານຂອງພວກເຮົາເທົ່ານັ້ນ ແຕ່ຍັງໄປຊອກຢູ່ໃນເຮືອນຜູ້ຄົນທີ່ຮູ້ຈັກຢູ່ໃນເມືອງນຳ ແລ້ວພວກເຂົາກໍຫາໂຄມໄຟແບບນີ້ມາຈົນໄດ້. ຖ້າຫາກວ່າມີສາກກິນເຂົ້າຢູ່ໃນນິຄົມ, ກໍຕ້ອງກິນແທ້ໆ ບໍ່ມີເຮັດປອມໆຈັກຫນ້ອຍ. ບໍ່ພຽງແຕ່ກອງ ຝໍ "ກາ" ເຄື່ອງປະກອບເທົ່ານັ້ນ ທີ່ຮຽກຮ້ອງດັ່ງນີ້ ແຕ່ມັນເປັນຮີດຄອງນຳ. ນັກສະແດງຂອງພວກເຮົາຖືວ່າເປັນເລື່ອງເຊື່ອມເສຍກຽດຢ່າງຫນຶ່ງ ທີ່ຕ້ອງກິນອາຫານແບບປອມໆຢູ່ເທິງເວທີ. ຈັ່ງຊັ້ນບາງຄັ້ງໂຮງອາຫານຈຶ່ງໄດ້ກຽມແຕ່ງອາຫານຈຳພວກຍຳຜັກ, ອີບຊີນ, ປາເຕ ຫລືເຂົ້າຫນົມ ໃຫ້ນຳ, ແລະ ແທນທີ່ຈະດື່ມເຫລົ້າແວງ ພວກເຮົາກິນນ້ຳຫມາກນາວເອົາ.

ຂ້າພະເຈົ້າ ເຊົາຢູ່ໃນຮູບ່ອນສົ່ງນິຄົມນັ້ນ ມັກໃຈສັ່ນສະເຫມີໆເມື່ອຮອດຍາມກິນເຂົ້າ: ພວກນັກສະແດງມັກພາກັນລືມລະວັງນຳນິຄົມບາດຂອງພວກເຂົາເກີນໄປ ຈົນລືມຟັງຜູ້ສົ່ງນິຄົມ, ພວກເຂົາຍືດເວລາສະແດງອອກຈົນບໍ່ເຫລືອອາຫານຊະນິດໃດຢູ່ເທິງໂຕະຂ້າພະເຈົ້າ ຈຳຕ້ອງເຕືອນພວກເຂົາຢູ່ເປັນປະຈຳ ດ້ວຍຖ້ອຍຄຳທຳນອງນີ້:

-ເອົາລະ, ພໍແລ້ວ... ພວກເຈົ້າໄດ້ຍິນຂ້ອຍເວົ້າບໍ່? ເຊົາກິນເທາະ!

ພວກນັກສະແດງເສືອດຕາມາເບິ່ງຂ້າພະເຈົ້າ ດ້ວຍຄວາມປະຫລາດໃຈແລ້ວກໍເຮັດຕາກໍໃສ່ຂ້າພະເຈົ້າ ເພື່ອບອກວ່າພວກເຂົາກິນຍັງບໍ່ແລ້ວເທື່ອ ແລະ ຍຸດິການກິນຂອງພວກເຂົາລົງກໍ່ຕໍ່ເມື່ອຂ້າພະເຈົ້າຊີມສຽງຮ້າຍສຸດຂີດວ່າ:

- ການບານິບ, ອອກຈາກໂຕະອາຫານດຽວນີ້ ໄວ! ເຊມີຍັງມິງຊິເວົ້າບໍ່ວ່າ "ຂ້ອຍຕ້ອງໄປແລ້ວລະ!"

ການບານິບ ຟ້າວອືນຕ່ອນຫ່ານທີ່ຫາກໍຫຍໍ້າ ແລ້ວເວົ້າວ່າ:

- ຂ້ອຍຕ້ອງໄປແລ້ວລະ!

ເມື່ອເຂົ້າມາຫລັງເວທີໃນເວລາພັກລະຫວ່າງການສະແດງ, ເຂົາກໍມາຕໍ່ວ່າຕໍ່ຂານຂ້າພະເຈົ້າວ່າ:

- ອານໂຕນ ເຊມີວໂນວິດ, ເຈົ້າກໍໂພດດອກ! ອັນຫ່ານຫັ້ນພວກເຮົາບໍ່ແມ່ນວ່າຊິໄດ້ກິນມັນເລື້ອຍໆເດີ! ເຈົ້າບໍ່ປ່ອຍໃຫ້ພວກເຮົາກິນແລ້ວຊໍ້າ!

ແຕ່ຕາມປົກກະຕິແລ້ວ ພວກນັກສະແດງບໍ່ພະຍາຍາມຫາທາງຢູ່ໜ້າເວທີດົນດອກເພາະອາກາດຫນາວເຍັນເທົ່າກັບຢູ່ກາງເດີ່ນ.

ຢູ່ໃນເລື່ອງ "ເຄື່ອງຈັກທໍລະຍົດ" ນັ້ນ ການບານິບ ຕ້ອງຢູ່ໜ້າເວທີຕັ້ງ ໑ ຊົ່ວໂມງ ແລະ ມີພຽງຜ້າຜືນດຽວພັນຮ່າງຄີງ, ການສະແດງດຳເນີນຢູ່ລະຫວ່າງເດືອນກຸມພາ ແລະ ພວກເຮົາກໍໂຊກຮ້າຍແດ່ ອຸນຫະພູມຫລຸດລົງຮອດ -໓໐. ເອິກາເຕີຣີນາກຣີກໍເຣັບນາ ຮຽກຮ້ອງໃຫ້ຍົກເລີກການຫລິ້ນລະຄອນເລື່ອງນີ້ ໂດຍເນັ້ນຍໍ້າວ່າ ເຊມີຍັງ ຈະຕ້ອງແຂງກະແດ້ງຕາຍຍ້ອນຄວາມຫນາວແຕ່ທຸກຢ່າງກໍຍຸດຕິລົງໂດຍດີ: ການບານິບພໍພຽງແຕ່ຕີນແຂງກະ

ແດ້ງໄປເທົ່ານັ້ນ, ໃນເວລາພັກລະຫວ່າງການສະແດງ ເອີກາເຕີຣີນາ ກຣີກໍເຣັບນາ ໄດ້ເອົານ້ຳຢານວດຢ່າງຫນຶ່ງມາບີບຄັ້ນເອົາຫມໍໄວ້.

ຢ່າງໃດກໍດີ ຄວາມຫນາວຕັ້ງວ່າເປັນອຸປະສັກຢ່າງຫນຶ່ງຂອງຄວາມກ້າວຫນ້າທາງດ້ານສິລະປະຂອງພວກເຮົາເທົ້ງ. ຕົວຢ່າງ ພວກເຮົາສະແດງເລື່ອງ "ສະຫາຍ ເຊມົວໂນວິດ" ນັ້ນແລ້ວ, ສາກສະແດງ ເປັນອຸທິຍານໃນຫໍໂຮງແຫ່ງຫນຶ່ງ ແລະ ຕ້ອງມີຮູບປັ້ນຕັ້ງເອ້ຢູ່ໃນສວນ, ກອງ ຝ "ກ" ບໍ່ສາມາດຫາຮູບປັ້ນມາໄດ້ ເຖິງແມ່ນວ່າ ໄດ້ອອກແຮງຊອກຄົ້ນຢູ່ໃນປ່າຊ້າທົ່ວທຸກບ່ອນມາແລ້ວກໍຕາມ, ພວກເຂົາຕົກລົງກັນວ່າບໍ່ໃຫ້ມີຮູບປັ້ນ ແຕ່ພໍ່ມ່ານກັ້ງຮື້ຂຶ້ນ ຂ້າພະເຈົ້າກໍແນມເຫັນດ້ວຍຄວາມປະຫລາດໃຈວ່າ ມີຮູບປັ້ນໂຕຫນຶ່ງ: ເຊລາປູຕີນ ຫົ່ມຜ້າປູບ່ອນພື້ນດຽວ, ແຕ່ຫົວຮອດຕີນ ທາໂອບດ້ວຍສີຂາວ, ເຂົາຢືນຕັ້ງຢູ່ເທິງໂຕະສາມຂານ້ອຍໆຫນ່ວຍຫນຶ່ງ, ເຂົາກົ້ມແສງຕາຍອກໆມາໃສ່ຂ້າພະເຈົ້າ. ຂ້າພະເຈົ້າສັ່ງອັດຜ້າກັ້ງ ແລ້ວໃຫ້ຍົກຮູບປັ້ນຫນີ ທ່າມກາງຄວາມເສຍອົກເສຍໃຈຂອງກອງ ຝ "ກ".

ກອງ ຝ "ສ.ສ" (ສົ່ງສຽງ) ໄດ້ພິສູດຄວາມພາກພຽນ ແລະ ຫົວຄິດປະດິດສ້າງແບບພິເສດອອກມາ. ພວກເຮົາຈັດສະແດງເລື່ອງ "ອາແຊັບ". ຊາໂຊນິບ ໂຍນລະເບີດໃສ່ ແປລເວີ*. ລະ

---

* ແປລເວີ: ລັດຖະມຸນຕີກະຊວງພາຍໃນ, ຫົວຫນ້າຕຳຫລວດໃນລັດຖະບານພະເຈົ້າຊາ. ເຂົາໄດ້ປາບປາມການເຄື່ອນໄຫວໃຕ້ດິນປະຕິວັດຢ່າງຮຸນແຮງ ແລະ ເມື່ອປີ ໑໙໐໔ ເຂົາຖືກລອບສັງຫານ ໂດຍນັກປະຕິວັດສັງຄົມນິຍົມ.

ເບີດຕ້ອງແຕກ, ອິດຊາຈິ ນາຍກອງຫນ່ວຍ ຝ "ສ.ສ" ປະກາດວ່າ: -ພວກເຮົາຈະເຮັດໃຫ້ມີການລະເບີດແທ້ ໆ.

ໃນເມື່ອວ່າຂ້າພະເຈົ້າສະແດງເປັນ ແປລເວີ, ບັນຫານີ້ຍ່ອມຢູ່ໃນຄວາມສົນໃຈຂ້າພະເຈົ້າຫລາຍກວ່າຫມູ່.

-ຈະໃຫ້ເຂົ້າໃຈແບບໃດເວີ້ຍ ອັນຄວາມວ່າລະເບີດແທ້ໆ ຫັ້ນນ່າ?

-ແປວ່າ ບາງທີເວທີລະຄອນທັງຫມົດຈະປິວວ່ອນຂຶ້ນເທິງອາກາດພຸ້ນແຫລ້ວ.

-ບໍ່ຕ້ອງປານນັ້ນດອກນ່າ! ຂ້າພະເຈົ້າເວົ້າຢ່າງລະມັດລະວັງ.

-ບໍ່ເປັນຫຍັງດອກນ່າ! ອິດຊາຈິ ເວົ້າໃຫ້ຂ້າພະເຈົ້າອຸ່ນໃຈ;
-ທຸກຢ່າງຈະຮຽບຮ້ອຍດີ.

ກ່ອນເກີງສາກໂຍນລະເບີດ ອິດຊາຈິ ເອົາເຄື່ອງຂອງຕ່າງໆຂອງເຂົາມາໃຫ້ຂ້າພະເຈົ້າເບິ່ງ ມັນມີທັງກະໂລ່ງໄມ້ເປົ່າ ຈຳນວນຫນຶ່ງວາງຢາຍຢູ່ທາງຫລັງເວທີ, ເບື້ອງຫລັງກະໂລ່ງແຕ່ລະຫນ່ວຍມີເດັກນ້ອຍປະຈຳຢູ່ຄົນຫນຶ່ງ ກືປືນຍາວຊະນິດຊອງແຜດສຳລັບຍິງຈ້າງ. ສ່ວນຢູ່ອີກຟາກຫນຶ່ງຂອງເວທີ ມີເສດແກ້ວແຕກຢາຍຊະເຕັມພື້ນ ເດັກນ້ອຍນີຄົມຢືນຢູ່ຂ້າງໆພ້ອມດ້ວຍດິນຈີ່ໃນມືຜູ້ລະກ້ອນຢູ່ດ້ານທີ່ສາມຄືກົງກັບປະຕູເຂົ້າເວທີຂອງນັກສະແດງ ເດັກນ້ອຍປະມານເຄິ່ງໂຫລນັ່ງລຽນແຖວຢູ່ຕໍ່ຫນ້າທຽນໄຂທີ່ໄຕ້ແລ້ວ ໃນມືເບື້ອງຫນຶ່ງກືແກ້ວບັນຈຸທາດນ້ຳຢ່າງຫນຶ່ງ.

-ແມ່ນພິທີສິ່ງສະການ ຈັ່ນຫວະນີ້? ຂ້າພະເຈົ້າຖາມຂຶ້ນ.

-ອັນນີ້ແມ່ນອັນຕົ້ນຕໍ ຫັ້ນແລ້ວ, ໃນແກ້ວນີ້ແມ່ນນ້ຳມັນກ໊າດ, ພໍເຖິງເວລາຕ້ອງການ ພວກເຂົາຊິອົມນ້ຳມັນພູດໃສ່ແປວທຽນ, ບາດນັ້ນລະ ໄຟຊິລຸກພຶບພັບ...ດັກປານຫຍັງດວ່າ...

-ໂຫ້ ພວກເຜດສູ! ບາດເທື່ອເກີດໄຟໄຫມ້ຂຶ້ນແທ້ໆ ຫັ້ນເດ້ ຊິເຮັດແນວໃດ?

-ບໍ່ຕ້ອງຢ້ານບ່າ, ເຈົ້າລະວັງແຕ່ຢ່າໃຫ້ນ້ຳມັນເຂົ້າຕາເປັນພໍ, ສ່ວນໄຟຫັ້ນພວກເຮົາຊິມອດມັນເອງດອກ.

ເຂົາຈຶ່ງໃຫ້ຂ້າພະເຈົ້າເບິ່ງເດັກນ້ອຍອີກຈຳນວນຫນຶ່ງ ຊຶ່ງຢືນລຽນແຖວພ້ອມດ້ວຍຄຸນ້ຳວາງຢູ່ປາຍຕີນ.

ມີເຄື່ອງກຽມພ້ອມຢູ່ອ້ອມຮອບຕົວທັງສາມດ້ານແບບນີ້ ປານນີ້ຂ້າພະເຈົ້າກໍເລີ່ມຮູ້ສຶກເປັນຫ່ວງເຖິງຊາຕາກຳອັນຫນັກຫນ່ວງຂອງທ້າວລັດກະມຸນຕີຜູ້ໂຊກຮ້າຍຢ່າງແທ້ຈິງແລ້ວ ແລະ ຄິດແທ້ໆວ່າໃນເມື່ອວ່າຕົນເອງບໍ່ຈຳເປັນຈະຮັບເອົາໂທດກຳທຸກຢ່າງຂອງ ທ້າວແປລເວີ ແລ້ວ ຢ່າງຂີ້ຮ້າຍ ກໍາຫມົດຫົນທາງຫລີກແລ້ວ ຂ້າພະເຈົ້າກໍຍັງມີສິດໂດດລົງທາງດ້ານຫນ້າເວທີໄປຫາຜູ້ຊົມເລີຍ. ອີກຄັ້ງຫນຶ່ງ ຂ້າພະເຈົ້າລອງເວົ້າໃນທຳນອງຫລຸດຜ່ອນຄວາມເຊື່ອຫມັ້ນເກີນຕົວຂອງ ອິດຊາຈີ ວ່າ:

-ແລ້ວນ້ຳມັນກ໊າດຫັ້ນ ບາດໄຟໄຫມ້ມາ ເອົານ້ຳມອດກໍໄດ້ຈັ້ນເບາະ?

ແຕ່ ອິດຊາຈີ ບໍ່ມີຈຸດບົກພ່ອງໃຫ້ຕໍາໜິເລີຍ, ເຂົາຮູ້ຈັກວຽກງານຂອງຕົນດີທັງສາມາດສະແດງຄວາມຮອບຮູ້ທີ່ເໜືອກວ່າອອກມາຢ່າງແທ້ຈິງ.

- ເວລາເປົ່ານໍ້າມັນໃສ່ທຽນໄຂ ນໍ້າມັນກໍກາຍປ່ຽນຮູບເປັນອາຍໄປແລ້ວ ບໍ່ຈໍາເປັນຈະໄປມອດມັນອີກດອກ ແຕ່ອາດຈະມີແນວອື່ນຢູ່ທີ່ຕ້ອງມອດແທນ.

- ກູຫັ້ນຫວະ?

- ຖ້າວ່າເຈົ້າຈະຖືກໄຟໄໝ້, ພວກເຮົາຈະມອດເອົາເຈົ້າກ່ອນອື່ນໝົດ!

ຂ້າພະເຈົ້າຄຶດດູຕົນຊາຕາກໍາຂອງຕົນເອງ: ຖ້າບໍ່ຖືກໄຟໄໝ້ກໍຕ້ອງຖືກຫົດດ້ວຍນໍ້າເຢັນທ່າມກາງອຸນຫະພູມ -40°. ແຕ່ໃຫ້ຕາຍເຫາະ ເຮັດແນວໃດ ຂ້າພະເຈົ້າຈິ່ງຈະກ້າສະແດງຄວາມຂີ້ຢ້ານອອກມາໃຫ້ກອງ ຜີ "ສ.ສ" ທັງໝົດເຫັນໄດ້ ໃນເມື່ອວ່າພວກເຂົາໄດ້ໃຊ້ພະລັງງານເຫື່ອແຮງ ແລະ ຄວາມສະຫລຽວສະຫລາດທັງໝົດເພື່ອເຮັດໃຫ້ມີການລະເບີດແທ້ໆແນວນີ້ແລ້ວ!

ເມື່ອຊາໂຊນິບ ໂຍນລະເບີດນັ້ນ ຂ້າພະເຈົ້າຈຶ່ງມີໂອກາດອີກຄັ້ງໜຶ່ງ ທີ່ເຂົ້າໃຈເຖິງຊາຕາກໍາອັນໂຊກຮ້າຍຂອງ ແປລເວີ ແລະບໍ່ໄດ້ຄິດອິດສາເຂົາເລີຍ: ປືນແຝດລູກຊອງ ສໍາລັບໂຫ່ຊ້າງຍິງນໍ່າໃສ່ກະໂລ່ງ, ກະໂລ່ງແຕກໂປ້ງ ແລ້ວໂຄງເຫລັກມັດແອວຈຶ່ງແຕກຫັກອອກ ພ້ອມກັບຂ້າພະເຈົ້າຮູ້ສຶກແສບແກ້ວຫູຄືຈະແຕກ: ເສດດິນຈີ່ໂຍນນໍ່າລົງໃສ່ແຜ່ນແກ້ວ, ພວກເດັກນ້ອຍເຄິ່ງໂຫລທັງລົມຫັນໃຈທີ່ຂັງມັ້ຽນຢູ່ໃນພົ້ງປອດທັງໝົດອອກຢ່າງແຮງ ສາດນໍ້າມັນ

ກ້ຳດໃນປາກອອກໃສ່ແປວທຽນໄຂ: ປາກົດວ່າ ເວທີທັງຫມົດດີກ ຢູ່ກາງແປວໄຟຮຸ່ງສະຫວ່າງ ແລະ ຄວັນດຳຫນາສັບກັນໄປມາ. ຂ້າ ພະເຈົ້າບໍ່ສາມາດສະແດງບົດບາດຕາຍຂອງຕົນຢ່າງບໍ່ແນບນຽນ ອີກ ແລ້ວ ຈຶ່ງລົ້ມກິ້ງລົງກັບພື້ນເວທີທ່າມກາງສຽງຕົບມືພົດສະນັ່ນ ແລະ ສຽງຮ້ອງອຸທານດ້ວຍຄວາມພໍໃຈຂອງກອງ ຜີ "ສ.ສ.". ຄວັນ ດຳຫນຽວຂອງນ້ຳມັນກ້ຳດຕົກຫລົ່ນໃສ່ຂ້າພະເຈົ້າປານຫ່າຝົນ. ຜ້າ ກັ້ງອັດລົງແລ້ວ ອົດຊາຈິ ດຶງກົກແຂນຂ້າພະເຈົ້າ ໃຫ້ລຸກຂຶ້ນ ແລະ ຖາມດ້ວຍຄວາມຫ່ວງໄຍວ່າ:

- ໄຟບໍ່ໄຫມ້ເຈົ້າເລີຍແມ່ນບໍ?

ຂ້າພະເຈົ້າກຶກໄຟລາມໄຫມ້ຢູ່ໃນສະຫມອງ ແຕ່ຫາກບໍ່ປາກ ອອກຊື່ງ ໃຜໆກໍ່ຮູ້ພໍແຮງແລ້ວວ່າ ກອງ ຜີ "ສ.ສ" ໄດ້ຫາງກຽມ ທຸກຢ່າງໄວ້ຮຽບຮ້ອຍແລ້ວ ໃນກໍລະນີເກີດອຸບັດເຫດນີ້.

ດ້ວຍວິທີການອັນດຽວກັນ ພວກເຮົາສະແດງການລະເບີດເຮືອ ກຳປັ່ນລຳຫນຶ່ງໃນໂອກາດ ທີ່ມັນລ່ວງລະເມີດເຂົ້ານ່ານນ້ຳປະຕິວັດ ຂອງ ສ.ສ.ສ.ຊ. ວິທີການຂອງປະຕິບັດການຄັ້ງນີ້ ຍິ່ງສັບສົນກວ່າ ເກົ່າອີກ, ບໍ່ພຽງແຕ່ຕ້ອງເຮັດໃຫ້ມີແປວໄຟແລບເລຍອອກຈາກ ປ່ອງຢັ່ງມຂອງເຮືອເທົ່ານັ້ນ ແຕ່ຕ້ອງເຮັດໃຫ້ເບິ່ງຄືວ່າ ເຮືອຫມົດ ທັງລຳແຕກລະເບີດປິວກະຈາຍຂຶ້ນໃນອາກາດນຳ. ເພື່ອເຮັດດັ່ງນີ້ ພວກເດັກນ້ອຍ ທີ່ລີ້ຢູ່ເບື້ອງຫລັງສາກໄດ້ໂຍນແປ້ນຕັ່ງອີ້ໂຕະນ້ອຍ ຂຶ້ນໃນອາກາດ ພວກເຂົາວ່ອງໄວພໍທີ່ຈະເອົາຕົວຫລົບຫລີກຈາກ ວັດຖຸສິ່ງຂອງເຫລົ່ານີ້ ແຕ່ທ້າວກັບຕັນເຮືອຄື ປີອດ ອີວາໂນວິດ ໂກໂຣວິດ ນັ້ນຕົກກົກເຂົ້າຢ່າງຄັກ ແຂນແຂນເສື້ອທີ່ເຮັດດ້ວຍເຈ້ຍ

ຖືກໄຟໄຫມ້ ແລະ ເຄື່ອງໄມ້ຢ່າງຫນຶ່ງຕົກລົງມາຖືກເຂົາ ເຮັດໃຫ້ຜູ້ກ່ຽວຊ້ຳບອມໄປຫລາຍເຕີບ. ບໍ່ພຽງແຕ່ວ່າ ເຂົາບໍ່ຮ້ອງໄຫ້ຕໍ່ວ່າຕໍ່ຂານກ່ຽວກັບເລື່ອງນີ້ເທົ່ານັ້ນ ແຕ່ເວລາຜ່ານໄປເກືອບເຄິ່ງຊົ່ວໂມງພຸ້ນ ພວກເຮົາຈຶ່ງເຫັນວ່າ ສຽງຫົວຂອງເຂົາມິດລົງກ່ອນຈະເວົ້າຢືນຢັນອອກມາວ່າ ກັບຕົນເຮືອຍັງມີອະໄວຍະວະ ຄົບຖ້ວນຢູ່.

ສຳລັບພວກເຮົາແລ້ວບາງບົດສະແດງ ກໍຢາກເອົາແທ້ເອົາວ່າ. ຕົວຢ່າງ ພວກເດັກນ້ອຍນິຄົມເອງບໍ່ຍອມໃຫ້ມີການຍິງແບບບັງສາກເລີຍ ຖ້າວ່າເຈົ້າເປັນຜູ້ຖືກຍິງແລ້ວ ກໍຕ້ອງກຽມຕົວທົດສອບບົດພິສູດເຄິ່ງຄັດອັນຫນຶ່ງໂລດ ເພື່ອສະແດງບົດຖືກຄາດຕະກຳນັ້ນຕາມປົກກະຕິແລ້ວ ພວກເຮົາມັກໃຊ້ປືນສັ້ນຈະນິດທຳມະດານີ້ເອງເອົາລູກກະສູນອອກຈາກປອກແລ້ວຍັດຫມາກນຸ່ນຫລືຝ້າຍໃສ່ແທນເມື່ອເວລາຍິງ ແປວໄຟມາບແມບອອກຈາກບອກປືນ ເນັ່ງໃສ່ກະໂຕເຈົ້າປານທ່າຝັນ ແລະ ໃນເມື່ອວ່າ ພວກເພິ່ນຜູ້ຍິງນັ້ນເມົາມ່ວນໄປນຳບົດຈົນເກີນຂອບເຂດ ເພິ່ນກໍເລີຍແນໃສ່ກະໂຕແກ່ນຕາເຈົ້າຫັ້ນແລ້ວ ຖ້າຫາກວ່າເຈົ້າຕ້ອງຖືກຍິງຫລາຍນັດ ເລົາປືນທັງບັ້ງກໍຖືກຍັດລູກໃສ່ຕາມແບບຕຳລາສາຫັດອັນດຽວນີ້.

ຢ່າງໃດກໍຕາມພວກຜູ້ຊົມຍັງຕົກຢູ່ບ່ອນມີທ່າດີເຫນືອກວ່າພວກເຮົາຫລາຍ ພວກເຂົານັ່ງຢູ່ຢ່າງອົບອຸ່ນພາຍໃນເສື້ອຢ່າມກັນຫນາວແລະ ເຕົາຜີງກໍພົ່ນອາຍຮ້ອນຫຸ່ມໆຢູ່ຕາມຈອກແຈຫ້ອງທຸກບ່ອນ. ພວກເຂົາພໍພຽງແຕ່ຖືກຫ້າມບໍ່ໃຫ້ເກັດແກ່ນດອກຕາເວັນ ເທົ່ານັ້ນແລະ ພວກຂີ້ເມົາກໍຖືກຫ້າມບໍ່ໃຫ້ຜ່ານປະຕູເຂົ້າມາຊົມການສະແດງຢ່າງເດັດຂາດ. ອົງໃສ່ຮີດຄອງເກົ່າແກ່ອັນຫນຶ່ງຫລັງຈາກມີການ

ສືບສາວຫາວຄວາມລະອຽດແລ້ວ ກໍ່າຫາກວ່າບຸກຄົນໃດມີຮ່ອງຮອຍກິນເຫລົ້າຕິດຕົວແມ່ນແຕ່ໜ້ອຍດຽວ ເຂົາຜູ້ນັ້ນຈະຖືກຕີລາຄາວ່າເປັນຄົນຂີ້ເມົາໂລດ. ພວກເດັກນ້ອຍບໍ່ຄົມສາມາດສືບຫາຕົວຄົນເມົາ ຫລືຜູ້ສິ່ງກິນເຫລົ້າຢູ່ທ່າມກາງຜູ້ຊົມເປັນຮ້ອຍໆຄົນໄດ້ຢ່າງໄວວາ, ຍິ່ງໄປກວ່ານັ້ນ ພວກເຂົາກໍມີວິທີເອົາໂຕຄົນເຫລົ່ານີ້ອອກມາຈາກບ່ອນນັ່ງ ພາພວກເຂົາອອກຈາກຫ້ອງສະແດງໄປແບບເປັນຕາອັບອາຍຂາຍໜ້າ ໂດຍບໍ່ຍອມຟັງສຽງຕໍ່ວ່າຕໍ່ຂານໃດໆ ເຊິ່ງບາງເທື່ອເຮົາຟັງແລ້ວຄືວ່າແມ່ນຄວາມຈິງແທ້.

- ໃຫ້ເປັນຫຍັງກໍໄດ້ນ່າ... ຂ້ອຍກິນເບຍໂຈກດຽວແຕ່ເຊົ້າໆພຸ້ນ ທໍ່ນັ້ນແທ້ໆ.

ໜ້າທີ່ກໍາກັບການສະແດງຂອງຂ້າພະເຈົ້າເອງຍັງຊັກດຶງເອົາຂ້າພະເຈົ້າໄປປະເຊີນກັບ ການທົດສອບອື່ນໆອີກໃນລະຫວ່າງການສະແດງ ຫລືກ່ອນການສະແດງ, ຕົວຢ່າງກັບ ກູດລາດ ຂ້າພະເຈົ້າບໍ່ສາມາດສອນໃຫ້ມັນເວົ້າບາງປະໂຫຍກໄດ້ ຢ່າງຖືກຕ້ອງຈັກເທື່ອ. ເມື່ອພວກເຮົາຫລິ້ນເລື່ອງ "ຜູ້ກວດການທົ່ວໄປ" ຂອງ ໂກໂກນນັ້ນພວກເດັກນ້ອຍຫລິ້ນໄດ້ດີຫມົດທຸກຄົນ ແຕ່ໃນຕອນທ້າຍພວກເຂົາເຮັດໃຫ້ຂ້າພະເຈົ້າໂມໂຫຮ້ອນປານໄຟສຸມໃຈ ທັງໆທີ່ວ່າ ຂ້າພະເຈົ້າເປັນຄົນປະສາດແຂງທີ່ສຸດແລ້ວ ແຕ່ກໍຍັງບໍ່ສາມາດອົດທົນຟັງຂໍ້ຄວາມສົນທະນາໃນສາກສຸດທ້າຍໄດ້, ພວກນັກສະແດງຮ່ວມສາກເອີ້ນຂ້າພະເຈົ້າເຕັມສົບເຕັມປາກວ່າ ອານໂຕນ ເຊມິວໂນວິດ(ຊື່ແທ້) ທັງໆທີ່ວ່າ ຂ້າພະເຈົ້າ ສະແດງເປັນທ່ານເຈົ້າແຂວງ ຊື່ວ່າອານໂຕນ ອານໂຕໂນວິດ. ບົດສົນທະນາໃນສາກມີດັ່ງຕໍ່ໄປນີ້:

ອານີດ ເຟໂດໂຣວິດ: ຈະຕ້ອງເຊື່ອຟັງສຽງຊ່າລື ຫວະ ອານໂຕນ ເຊມີວໂນວິດ? ຄວາມສຸກແບບບໍ່ເຄີຍມີມາກ່ອນ ຕົກຢູ່ໃນກຳມືຂອງເຈົ້າແລ້ວ ເບາະ?

ອາກເຕີນ ພີລິບໂປວິດ: ອານໂຕນ ເຊມີວໂນວິດ! ຂ້າພະເຈົ້າຂໍຖືເປັນກຽດຊົມເຊີຍທ່ານ ທີ່ໄດ້ຮັບຄວາມສຸກແບບບໍ່ເຄີຍພົບມາກ່ອນແນວນີ້. ຂ້າພະເຈົ້າພາກພູມໃຈສຸດຂີດ ທີ່ໄດ້ຍິນເຊັ່ນນີ້, ອານນາ ອັງເດຣເອັບນາ, ມາເຣຍ ອານໂຕນອບນາ!

ຣາຊະໂຕກອບສະກີ: ອານໂຕນ ເຊມີວໂນວິດ, ຂໍຊົມເຊີຍສຸດຂີດ. ຂໍພະເປັນເຈົ້າປະທານພອນປະເສີດແກ່ຄູ່ສົມລົດຫນຸ່ມ ມີອາຍຸຫມັ້ນຂວັນຍືນ ໄດ້ລູກເຕັມບ້ານ ຫລານເຕັມເມືອງເທີ້ນ! ອານນາ ອັງເດຣເອັບນາ, ມາເຣຍ ອານໂຕນອບນາ!

ໂກຣອບກິນ: ອານໂຕນ ເຊມີວໂນວິດ ຂ້າພະເຈົ້າຂໍຊົມເຊີຍທ່ານ!...

ອັນຂີ້ຮ້າຍກວ່າຫມູ່ກໍແມ່ນວ່າ ຂ້າພະເຈົ້າເອງບໍ່ມີທັນທາງໂຕ້ຕອບພວກຜີເຜດຫມູ່ນີ້ເລີຍ ເພາະຢູ່ກາງເວທີສະແດງ ແລະ ຕົນເອງກໍຢູ່ໃນຊຸດທ່ານເຈົ້າແຂວງເຕັມຍົດ ມີແຕ່ຫລັງຈາກສາກສຸດທ້າຍເຊິ່ງເປັນບົດກືກ ແລະ ເຂົ້າມາຢູ່ຫລັງເວທີແລ້ວເທົ່ານັ້ນ ຂ້າພະເຈົ້າຈຶ່ງສາມາດທັ່ງໃສ່ພວກເຂົາວ່າ:

- ແມ່ນພວກສູເຮັດແນວໃດ ຣື? ເວນຕາຍສູເອີ້ຍ! ສູພາໂລກູແມ່ນບໍ່? ສູເຮັດຫລິ້ນໄປຫມົດເນາະ?

ດ້ວຍທ່າທີງງງວາ ພວກເຂົາແນມເບິ່ງຫນ້າຂ້າພະເຈົ້າ ຊາໂດຣອບ ເຊິ່ງເປັນຫົວຫນ້າຫນ່ວຍບົດການຂຶ້ນວ່າ:

-ແມ່ນຫຍັງ? ມີຫຍັງເກີດຂຶ້ນຫວະ? ທຸກຢ່າງກໍສຽງສຸດລົງຢ່າງດີແລ້ວເດ້.

-ເປັນຫຍັງພວກສູຈຶ່ງເອີ້ນກູວ່າ ອານໂຕນ ເຊມີວໂນວິດ ລະ?

-ຕາຍຫ່າ! ແມ່ນແທ້ຫວະ? ອ່າ... ແມ່ນແທ້ໃດເນາະ, ເວນຕາຍເອີ້ຍຕ້ອງວ່າ ອານໂຕນ ອານໂຕໂນວິດ ທ່ານເຈົ້າແຂວງພຸ້ນນ່າເນາະ!

-ບາດຕອນລ້ອມ ສູຄືເວົ້າກຶກຢູ່.

-ໂຍ້ວ ບາດລ້ອມກໍບາດລ້ອມ, ແຕ່ບາດຫລິ້ນແທ້ໆ ມັນລືມໄປຫມົດຫັ້ນເດ້!

ບົດທີ ໕

ການສຶກສາແບບກູລັກ

ວັນທີ ໒໖ ມີນາ ພວກເຮົາເຮັດບຸນສະຫລອງວັນເກີດຂອງມາກຊິມ ກັອກກີ, ນອກນີ້ພວກເຮົາຍັງເຮັດບຸນງານອື່ນໆ ເຊິ່ງຂ້າພະເຈົ້າຈະໄດ້ເວົ້າໃນຂັ້ນຕໍ່ໄປຢ່າງລະອຽດ. ພວກເຮົາເຮັດທຸກສິ່ງທຸກຢ່າງສຸດຄວາມສາມາດ ເພື່ອໃຫ້ມີຄົນມາຫລາຍ ແລະ ໂຕະອາຫານອຸດົມສົມບູນຢ່າງເຕັມທີ່ ເວົ້າກັນຢ່າງມີມະໂນທຳແລ້ວ ແມ່ນແຕ່ພວກເດັກນ້ອຍເອງກໍມັກຄວາມມ່ວນຊື່ນຫລິ້ນຫົວ ແລະໂດຍສະເພາະກໍແມ່ນເລື່ອງກະກຽມບຸນ. ແຕ່ການສະເຫລີມສະຫລອງວັນເກີດຂອງກັອກກີນີ້ ສຳລັບພວກເຮົາແລ້ວ ແມ່ນຄວາມຫັນສາອັນສູງສຸດແທ້ໆ. ໃນວັນດຽວກັນນີ້ ພວກເຮົາກໍສະເຫລີມສະຫລອງວັນລະດູບານໃຫມ່ນຳ. ທຸກຢ່າງດຳເນີນໄປຢ່າງດີ ໃນຂະ

ນະທີ່ພວກເດັກນ້ອຍຈັດແຈ່ງແຕ່ງໂຕະອາຫານ ເຊິ່ງຕັ້ງໄວ້ໃນກາງເດີ່ນ ເພື່ອໃຫ້ທຸກຜູ້ທຸກຄົນສາມາດໄປຕັກກິນຮ່ວມກັນນັ້ນ ບາງເວລາກໍມີລົມແຮງ ໆ ພັດວູບມາຈາກທິດຕາເວັນອອກ: ຫມາກເຫັບກ້ອນແຫລມໆ ແຂງໆ ຟາດນໍ່າລົງໃສ່ພວກເຮົາ, ຜິວນ້ຳຫນ້າບວກຫນອງໃນກາງເດີ່ນຢູ່ບໍ່ເຊົາ ແລະ ທັນໃດນັ້ນສຽງກອງຂອງພວກເຮົາກໍປ່ຽນມາເປັນສຽງທຸ້ມກວ່າເກົ່າ ຍ້ອນຫນ້າກອງຊຸ່ມ. ແຕ່ບໍ່ວ່າຈະເປັນແນວໃດກໍຕາມ ຊາວນິຄົມເຮັດຕາຫລິ່ວໄປທາງທິດຕາເວັນອອກ ແລ້ວເວົ້າວ່າ:

- ເກິງຢ່າງໃດກໍຍັງຫອມກິ່ນລະດູບານໃຫມ່ຢູ່ດອກເນາະ!

ບຸນສະຫລອງວັນເກີດຂອງ ກ້ອກກີ ຍັງມີຈຸດພິເສດອີກຢ່າງຫນຶ່ງ ເຊິ່ງພວກເຮົາຄຶດອອກເອົາເອງ ແລະ ກໍຍຶດຫມັ້ນໃນຈຸດນີ້ຫລາຍ, ມັນສ້າງຄວາມພໍອົກພໍໃຈໃຫ້ແກ່ພວກເຮົາຢ່າງມະຫາສານ. ດົນນານມາແລ້ວ ພວກເດັກນ້ອຍຕົກລົງກັນວ່າ ໃນວັນບຸນນີ້ພວກເຮົາຕ້ອງສະຫລອງກັນ "ຢ່າງສຸດຂີດ" ໂດຍບໍ່ຕ້ອງເຊື້ອເຊີນແຂກທາງນອກເລີຍ. ແຕ່ຖ້າຫາກມີໃຜຢາກມາຮ່ວມ ເຂົາກໍຈະໄດ້ຮັບການຕ້ອນຮັບເປັນຢ່າງດີ. ໂດຍສະເພາະແລ້ວ ກໍແມ່ນເຂົາຜູ້ນັ້ນຄຶດອອກເອົາເອງກໍຍິ່ງເປັນການດີທີ່ສຸດ ແຕ່ຕາມຫລັກການແລ້ວມັນແມ່ນບຸນພາຍໃນຄອບຄົວ ທີ່ຄົນພາຍນອກບໍ່ມີສ່ວນກ່ຽວຂ້ອງຈັກຫນ້ອຍ. ພົນທີ່ໄດ້ຮັບກໍຄືບັນຍາກາດທີ່ເປັນກັນເອງທີ່ສຸດແບບທຳມະດາໆ ແຕ່ຜູກຮັດສາຍພົວພັນແບບຄອບຄົວລະຫວ່າງຊາວນິຄົມ ກ້ອກກີ ເຂົ້າຕື່ມອີກ ສະເພາະແລ້ວກໍແມ່ນວ່າ ບຸນອັນນີ້ບໍ່ມີຮູບການໃດຄ້າຍຄືກັບບຸນຄອບຄົວຈັກຫນ້ອຍ. ທຳອິດແມ່ນ

ການສອນສະໜາມ ຕໍ່ມາແມ່ນການສະເໜີທຸງ, ຕໍ່ຈາກຄຳປາໄສ ແມ່ນ ການຍ່າງເປັນກຸ້ມແຖວໄປຕໍ່ໜ້າຮູບຂອງ ກ໊ອກກີ, ຕໍ່ມາກໍ ແມ່ນເຂົ້ານັ່ງອ້ອມໂຕະອາຫານ ແລະ ນີ້ ບໍ່ມີຄຳວ່າ ຍ່ອມເຍົາອີກ ແລ້ວ, ຈັ່ງແມ່ນພວກເຮົາ... ບໍ່, ບໍ່ໄດ້ດື່ມເພື່ອສຸຂະພາບຂອງ ກ໊ອກກີດອກ. ບໍ່, ພວກເຮົາບໍ່ດື່ມນ້ຳເມົາຫຍັງເລີຍ ມີແຕ່ກິນ... ກິນເອົາແທ້ເອົາວ່າ ຈົນເປັນຕາຢ້ານ! ເມື່ອ ກາລີນາ ອີວາໂນວິດ ອອກຈາກໂຕະອາຫານນັ້ນລາວຈຶ່ງເວົ້າວ່າ:

-ຂ້ອຍວ່າ ອັນພວກນາຍທຶນນັ້ນເກາະ... ເຮົາກໍບໍ່ຄວນດ່າວ່າ ພວກເຂົາລະ, ພວກຜາກໜູ່ນີ້ກະດາຍ. ກິນເຂົ້າແບບນີ້ແລ້ວ... ສູຮູ້ລະຕິວ່າ ຄືຊິບໍ່ມີສັດໂຕໃດສາມາດເຮັດວຽກອີກ ຢ່າວ່າແຕ່ຄົນ ເລີຍ...

ຢູ່ພາເຂົ້າຂອງວັນບຸນມີອາຫານດັ່ງຕໍ່ໄປນີ້: ແກງບອກຊື ແຕ່ບໍ່ ແມ່ນແກງໃສ່ຫົວຜັກກາດຂາວລ້າງທຳມະດາເດີ້ແຕ່ແມ່ນແກງບອກຊ ແບບພິດສະດານ ຊະນິດຍາແມ່ເຈົ້າເຮືອນແຕ່ງສະເພາະໃນວັນບຸນ ສຳຄັນຂອງຜົວລາວພຸ້ນແລ້ວ, ຕໍ່ມາມີເຂົ້າໜົມໄສ້ຊີ້ນ, ຜັກກະລ່ຳ ປີ, ເຂົ້າຈ້າວ, ເນີຍຂາວ, ມັນຝະລັ່ງ, ໝາກສາລີກໍ່ ແລ້ວເຂົ້າ ໜົມແຕ່ລະຢ່າງນັ້ນ ກໍບໍ່ສາມາດເຂົ້າໄປແຫຍ້ຢູ່ໃນກົ່ງສ້ງພວກເດັກ ນ້ອຍໄດ້ໝົດດອກ, ຫລັງຈາກກິນເຂົ້າໜົມແລ້ວ ຊ້ຳມີອີບໝູ ອີກໂຕໜຶ່ງ ຊຶ່ງບໍ່ໄດ້ຊື້ໄດ້ຫາມາແຕ່ຕະຫລາດເລີຍແຕ່ມາຈາກຄອກ ໝູຂອງພວກເຮົາເອງ, ໝູໂຕນີ້ໄດ້ຮັບການບຳລຸງລ້ຽງມາຢ່າງດີ ແຕ່ລະດູໃບໄມ້ຫລົ່ນໂດຍກອງພິເສດ ໝາຍເລກ ໑໐ ເພື່ອເອົາ ມາກິນກັບໃນວັນບຸນນີ້ໂດຍສະເພາະ. ພວກເດັກນ້ອຍເອົາໃຈໃສ່

ເບິ່ງແຍງຫມູເປັນຢ່າງດີ ແຕ່ບໍ່ມີໃຜຢາກຂ້າມັນ ແມ່ນແຕ່ກະໂຕ ສະ ຕູບິດລືນ ນາຍກອງເອງກໍປະຕິເສດວຽກງານອັນນີ້.

-ຂ້ອຍບໍ່ກ້າຂ້າມັນດອກ, ອີ່ ຄລີໂອພັດຕຣາ ໂຕນີ້ ມັນເປັນ ຫມູດີ!

ຈັ່ງຊັ້ນ ຈຶ່ງເປັນທຳມະດາວ່າ ຕ້ອງແມ່ນ ລືລັນຕີ ອິດເຊນາດ ທີ່ເປັນຜູ້ແຫງຄໍ ອີ່ ຄລີໂອພັດຕຣາ, ລາວອະທິບາຍໃຫ້ເຫດໃຫ້ ຜົນດັ່ງຕໍ່ໄປນີ້:

-ປ່ອຍໃຫ້ພວກຂີ້ສູດອື່ນໆກິນຫມູຕາຍຊາກໄດ້ ແຕ່ພວກເຮົາ ຕ້ອງພາດອັນດີໆເວີຍ, ຄືເພິ່ນວ່າຫັ້ນລະ, ມາ ຕ້ອງຈັດການເອງ ເວີ້ຍ... ມັນເປັນແນວນີ້ລະ!

ຫລັງຈາກຈັດການກັບ ອີ່ ຄລີໂອພັດຕຣາ ໄປກ້ຽງແລ້ວ ພວກ ເຮົາກໍພາຍໃຈໂລ່ງແດ່ ແຕ່ແອ່ງ ແລະ ພາກາດບັນຈຸນົມຊຸ້ນສົ້ມ ກັບກອງເຂົ້າຫນົມຈີນໃສ່ເບີຍຂາວ ຈ້ຳແລ່ນມາຂຶ້ນໂຕະເຕັມໄປ ຫມົດອີກ. ຈັ່ງຊັ້ນຈຶ່ງບໍ່ມີເດັກນ້ອຍຈັກຄົນຄຶດຢາກອອກຫນີໄປພັກ ຜ່ອນແຕ່ກິງກັນຂ້າມພວກເຂົາພໍໃຈທີ່ຈະຊີມລົດເຂົ້າຫນົມຈີນໃສ່ເບີຍ ຂາວກັບນົມຊຸ້ນຫັ້ນອີກພໍແຮງ. ຫລັງຈາກເຂົ້າຫນົມຈີນນີ້ ຈ້ຳມີ ກວນຫມາກໄມ້ຕິດຕາມມາອີກ, ບໍ່ແມ່ນກວນຫມາກໄມ້ແບບພວກ ຊຸນນາງເອົາໃສ່ຈອກນ້ອຍໆ ດອກເດີ້ ແຕ່ຕັກໃສ່ຈານຫລົ້ງມາໃຫ້ ຢ່າງດີ. ຂ້ອຍບໍ່ມີໂອກາດເຫັນວ່າ ມີເດັກນ້ອຍຜູ້ໃດຜູ້ຫນຶ່ງຕັກກິນ ໂດຍບໍ່ໃສ່ເຂົ້າຈີ່ ຫລືເຂົ້າຫນົມ. ຫລັງຈາກອາຫານຊຸດນີ້ແລ້ວ ຈຶ່ງ ຖືວ່າລາຍການອາຫານວັນບຸນສິ້ນສຸດລົງ ແລະ ຕອນອອກຈາກໂຕະ ນັ້ນ ແຕ່ລະຄົນຍັງໄດ້ຮັບກິ່ງເຂົ້າຫນົມອົມກັບເຂົ້າຈີ່ດຳຫອມອີກຜູ້ລະ

ກິງ. ຄັ້ງນີ້ອີກກໍ່ເຫມືອນກັນ, ກາລີນາ ອີວາໂນວິດ ໄດ້ເວົ້າອອກ
ມາຢ່າງກຶກດ້ອງວ່າ:

-ໂອ້ຍ.. ກະຈັ່ງແມ່ນຢາກໃຫ້ ກ້ອກກີ ເກີດຫລາຍເທື່ອເດ້!
ຊີວິດນັ້ນຄືຊິດີກຂຶ້ນຫລາຍ!

ຫລັງຈາກກິນແລ້ວ ພວກເດັກນ້ອຍບໍ່ພາກັນໄປພັກຜ່ອນເລີຍ
ແຕ່ໄປຊ່ອຍກອງພິເສດ "ຜີ" ກະກຽມການສະແດງເລື່ອງ "ພວກ
ສັນດານຕ່ຳ" ລະຄອນບົດສຸດທ້າຍປະຈຳລະດູ. ກາລີນາ ອີວາໂນ
ວິດ ສົນໃຈລະຄອນເລື່ອງນີ້ຫລາຍ.

-ກູຢາກເບິ່ງ ເດ້ວ່າ ມັນເປັນແນວໃດ ເຄີຍໄດ້ຍິນມາຫລາຍ
ແລ້ວກ່ຽວກັບ "ພວກສັນດານຕ່ຳ" ນີ້ນ່າ ແຕ່ບໍ່ເຄີຍເຫັນຈັກເທື່ອ
ແລ້ວກະຍັງບໍ່ມີໂອກາດອ່ານປຶ້ມອີກ.

ກ່ຽວກັບບັນຫານີ້ ເວົ້າໄດ້ວ່າ ກາລີນາ ອີວາໂນວິດ ນັ້ນຢຽບ
ຍ່ຳໂຊກຮ້າຍຂອງຕົນເກີນໄປ: ຕາມຄວາມເປັນຈິງແລ້ວ ລາວພໍ
ສາມາດເຂົ້າໃຈ ຄວາມເລິກລັບຂອງຕົວຫນັງສືຢູ່ດອກ ແຕ່ກໍດ້ວຍ
ຄວາມຫຍຸ້ງຍາກສົມຄວນ. ແຕ່ມື້ນີ້ ກາລີນາ ອີວາໂນວິດ ມີອາລົມ
ດີແລະ ການຊິໄປຫາເລື່ອງກັບລາວນັ້ນ ມັນບໍ່ຄວນແລ້ວ. ໃນປີນີ້
ການສະເຫລີມສະຫລອງວັນເກີດ ກ້ອກກີ ຂອງພວກເຮົາ ມີເຫດ
ການພິເສດຫນຶ່ງເກີດຂຶ້ນນຳ ຄືການຕັ້ງຊື່ "ຊາວນິຄົມ" ຕາມທີ່ຊາວ
ຫນຸ່ມກົມໂຊໂມນສະເຫນີຂຶ້ນ. ມີການຖົກຖຽງກ່ຽວກັບເລື່ອງນີ້ມາ
ດົນແລ້ວ ລະຫວ່າງພວກເດັກນ້ອຍກັບພວກຄູສອນ ແລ້ວຈຶ່ງເຫັນ
ດີເຫັນງາມນຳກັນວ່າ ແນວຄວາມຄິດນີ້ດີສົມຄວນ. ຊື່ວ່າ "ຊາວ
ນິຄົມ" ນີ້ ມອບໃຫ້ແດ່ຜູ້ທີ່ຮັກນິຄົມຢ່າງແທ້ຈິງ ແລະໄດ້ຕໍ່ສູ້ເພື່ອ

ໃຫ້ນິຄົມດີຂຶ້ນທີ່ສຸດເທົ່ານັ້ນ. ສ່ວນພວກຂີ້ຄ້ານ ຂີ້ໂຍ່ຍ ຂີ້ແບະ ພວກນັກທ່ຽວຫລິ້ນນັ້ນ ໄດ້ຊື່ແຕ່ວ່າເປັນພວກ "ນັກຮຽນ" ຊື່ໆ. ເວົ້າກັນຕາມຈິງແລ້ວ ພວກນີ້ມີຢູ່ບໍ່ຫລາຍດອກປະມານ ໔໐ ຫນຶ່ງ ເທົ່ານັ້ນ. ສະມາຊິກພະນັກງານຮຸ່ນເກົ່າກໍໄດ້ຮັບຊື່ນີ້ຄືກັນ. ຂະນະ ດຽວກັນ ກໍມີຂໍ້ຕົກລົງໄວ້ວ່າ ຖ້າສະມາຊິກ ພະນັກງານ ຜູ້ໃດຜູ້ ຫນຶ່ງທີ່ໄດ້ມາເຮັດວຽກຢູ່ໃນນິຄົມຮອດປີແລ້ວ ແຕ່ຍັງບໍ່ໄດ້ຮັບຊື່ວ່າ ເປັນຊາວນິຄົມ ຈະຕ້ອງອອກຈາກນິຄົມໄປ.

ສະມາຊິກນິຄົມທຸກຄົນໄດ້ຮັບຫລຽນກາ ໂລຫະຊະນິດຫນຶ່ງ ເຮັດມາໃຫ້ພວກເຮົາໂດຍສະເພາະຈາກໂຮງງານຄາຄົບ. ມັນເປັນ ຮູບຄືເຄື່ອງຊ່ອຍລອຍນ້ຳ ມີຕົວອັກສອນ ມ. ກ. (ມາກຊິມ ກ໊ອກກີ) ແລະ ດາວແດງຫນ່ວຍຫນຶ່ງ.

ກາລີນາ ອີວາໂນວິດ ກໍໄດ້ຮັບຫນ່ວຍຫນຶ່ງຄືກັນ ໃນໂອກາດ ສະເຫລີມສະຫລອງຄັ້ງນີ້. ລາວດີໃຈຫລາຍ ແລະ ຮອດບໍ່ປິດບັງ ໄວ້:

- ອັນກູນີ້ເກາະ ຮັບໃຊ້ພະເຈົ້າ ນິໂກລາຍ ອາເລັກຊັງໂດຣວິດ ມາຕັ້ງທໍ່ໃດແລ້ວກູໄດ້ເປັນຫຍັງລະ ນອກຈາກທະຫານມ້າລ້າງ ແລ້ວບັດນີ້ເບິ່ງດູລະ ພວກຜາກນ້ອຍອັນທະພານພະເນຈອນຫມູ່ນີ້ ມາຕິດຫລຽນກາໃຫ້ກູ ຊິວ່າແບບໃດກໍວ່າເວີ້ຍ ກູດີໃຈຫັ້ນລະ, ສູ ເຂົ້າໃຈບໍ່, ບາດເທື່ອພວກມັນໄດ້ກຳອຳນາດ ຊິເປັນແນວໃດເນາະ! ດຽວນີ້ບໍ່ມີຮອດສົ້ງຊິໃສ່ ຍັງມາຕິດຫລຽນກາໃຫ້ຫມູ່ເວີ້ຍ!

ຄວາມເບີກບານມ່ວນຊື່ນຂອງ ກາລີນາ ອີວາໂນວິດ ຮວ້າຍ ຫາຍລົງຍ້ອນການມາປາກົດຕົວຂອງ ມາເຣຍ ກົງດຣາແຕັບນາ ໂບ

ໂກວາ. ກ່ອນຫນ້ານີ້ຫນຶ່ງເດືອນ ນາງໄດ້ຮັບແຕ່ງຕັ້ງເປັນຄະນະ ນຳຢູ່ໃນພະແນກສຶກສາສັງຄົມຂອງລັດຖະບານເຮົາ, ເຖິງແມ່ນວ່າ ນາງຈະບໍ່ໄດ້ເປັນຫົວຫນ້າຂອງພວກເຮົາໂດຍກົງ ແຕ່ກໍໄດ້ວ່ານາງມີ ສິດຕິດຕາມພວກເຮົາຄືກັນ.

ເມື່ອລົງຈາກລົດມ້າເຊົ່າມານັ້ນ ນາງກໍຮູ້ສຶກປະຫລາດໃຈຢ່າງ ໃຫຍ່ຫລວງ ທີ່ເຫັນໂຕະອາຫານອັນມະໂຫລານຂອງພວກເຮົາ ມີ ພວກເດັກນ້ອຍນິຄົມຜູ້ຮັບຫນ້າທີ່ແຈກຢາຍອາຫານກຳລັງກິນ ພວມ ຊິແລ້ວ. ກາລີນາ ອີວາໂນວິດ ສວຍໂອກາດທີ່ນາງພວມຕື່ນເຕັ້ນ ຢູ່ນີ້ ຫລົບຫນີໄປ ປ່ອຍໃຫ້ຂ້າພະເຈົ້າຮັບຮອງລາວຜູ້ດຽວ.

-ແມ່ນພວກເຈົ້າສະເຫລີມສະຫລອງບຸນຫຍັງກັນ? ມາເຣຍ ກົງດຣາແຕັບນາ ຖາມຂຶ້ນ.

-ວັນເກີດຂອງ ກໍອກກີ,

-ແລ້ວເປັນຫຍັງບໍ່ເຊີນຂ້ອຍລະ?

-ໃນມື້ນີ້ພວກເຮົາບໍ່ເຊີນແຂກນອກ, ນີ້ແມ່ນປະເພນີຂອງ ພວກເຮົາເອງ.

-ເອົາລະບໍ່ເປັນຫຍັງ... ໃຫ້ຂ້ອຍກິນຫຍັງຈັກຫນ້ອຍດຸ!

-ໄດ້, ໄດ້... ເອ ແລ້ວ ກາລີນາ ອີວາໂນວິດ ໄປໃສແລ້ວ?

-ອ່າ... ເກົ້າອຸບາດນັ້ນຫວະ? ເກົ້າລ້ຽງເຜິ້ງທ່ານແມ່ນບໍ່? ແມ່ນລາວທ່ານຕິພ້າວຫລົບໄປພໍແຕ່ເຫັນຂ້ອຍມານະ? ແລ້ວເຈົ້າ ເອງກໍຄືກັນແມ່ນບໍ່ ເຈົ້າມີສ່ວນພົວພັນໃນເລື່ອງນີ້ນຳ? ບັດນີ້ທາງ ກະຊວງສຶກສາປະຊາຊົນກໍເວົ້າຍຫາເລື່ອງກັບຂ້ອຍບໍ່ເວັ້ນແຕ່ລະວັນ, ອີ່ຕາຮັບຜິດຊອບເສດຖະກິດທ່ານ ຈົນເວົ້າວ່າ ຊິຕັດເອົາເງິນເດືອນ

ຂ້ອຍໄປສ່ວນຫນຶ່ງຕະຫລອດ ៤ ປີ. ລາວຢູ່ໃສ ພໍ່ເກົ້າ ກາລີນາ ອີວາໂນວິດ ຫັ້ນ, ນຳໂຕລາວມາຫາຂ້ອຍດຽວນີ້!

ມາເຣຍ ກິງດຣາແຕັບນາ ເຮັດຫນ້າໃຄ່ ແຕ່ຂ້າພະເຈົ້າພໍແນມ ເຫັນຢູ່ດອກວ່າກາລີນາ ອີວາໂນວິດ ຈະບໍ່ຕ້ອງໂທດໄພຮ້າຍແຮງ ອັນໃດ: ນາງກຳລັງມີອາລົມດີທີ່ສຸດ. ຂ້າພະເຈົ້າສິ່ງເດັກນ້ອຍນິຄົມ ຄົນຫນຶ່ງອອກໄປຊອກຫາລາວ ບໍ່ດົນ ກາລີນາ ອີວາໂນວິດຈຶ່ງປາ ກົດຕົວອອກມາທັງກິ່ນຂຳນັບມາແຕ່ໄກ ໆ.

-ຢ່າຫຍັບເຂົ້າມາໃກ້ກວ່ານີ້ເດີ! ມາເຣຍ ກິງດຣາແຕັບນາ ເວົ້າທັງຫົວ, -ເຈົ້າຄວນຊິຄຶດຢາກອາຍແດ່... ຈັ່ງແມ່ນເປັນຕາ ຫນ່າຍເດ໋!

ກາລີນາ ອີວາໂນວິດ ຍ່າງມານັ່ງລົງແປັນມ້າ ແລ້ວເວົ້າວ່າ:

-ພວກເຮົາໄດ້ສ້າງບຸນກຸສົນຢ່າງຫນຶ່ງແລ້ວ!

ຂ້າພະເຈົ້າໄດ້ເປັນສັກຂີພິຍານໃນການສ້າງໂທດກຳຂອງ ກາ ລີນາ ອີວາໂນວິດຫວ່າງອາທິດຫນຶ່ງກ່ອນຫນ້ານີ້ມາແລ້ວ, ຄັ້ງທີ່ ພວກເຮົາໄປແວ່ກະຊວງສຶກສາປະຊາຊົນນັ້ນ ພວກເຮົາໄດ້ແວະເຂົ້າ ໄປຢາມຫ້ອງການຂອງ ມາເຣຍ ກິງດຣາແຕັບນາ ດ້ວຍກິດທຸລະ ໄຮ້ສາລະອັນຫນຶ່ງ. ຫ້ອງການຂອງນາງກວ້າງຂວາງດີ ມີໂຕະຕັ່ງ ຈຳນວນຫລວງຫລາຍ ທີ່ເຮັດດ້ວຍໄມ້ດີຫາຍາກຫລາຍຊະນິດ, ໂຕະເຮັດວຽກຂອງນາງຕັ້ງຢູ່ກາງຫ້ອງ. ໂຊກຊາຕາຂອງນາງມີຈຸດ ເດັ່ນຢູ່ທ່າມກາງວົງລ້ອມຂອງຜູ້ຄົນມາກຫນ້າຫລາຍຕາ ປະຈຳກະ ຊວງສຶກສາ, ນາງທັງເວົ້າກັບຜູ້ຫນຶ່ງ ຮັບຟັງຄຳຄຶດຄຳເຫັນອີກຜູ້ ຫນຶ່ງ, ອີກຜູ້ທີ່ສາມຊ້ຳຜັດຟັງນາງ; ຢູ່ທາງຫນຶ່ງມີຜູ້ລົມໂທລະສັບ,

ອີກດ້ານຫນຶ່ງຜູ້ນັ້ນຊ້ຳຂຽນສິ່ງໃດສິ່ງຫນຶ່ງຢູ່ແຈໂຕະ, ອີກຄົນຫນຶ່ງພວມອ່ານ, ບາງຄົນຍື່ນເສດເຈ້ຍອີຫຍັງບໍ່ຮູ້ມາໃຫ້ນາງເຊັນ, ເວົ້າໂດຍທົ່ວໄປ ທຸກຢ່າງໃນຫ້ອງເສນາທິການນີ້ ມີຜູ້ຄົນອື່ນເປັນກອງໆທີ່ຢືນລົມກັນລ້າໆ. ທົ່ວທັງຫ້ອງພົດສະນັ້ນ ເຕັມໄປດ້ວຍຄວັນຢາ ແລະ ຂີ້ເຫຍື້ອຮີກຕາມພື້ນ.

ຂະນະທີ່ ກາລີນາ ອີວາໂນວິດ ກັບຂ້າພະເຈົ້າພວມນັ່ງລົມກັນຢູ່ເທິງຕັ່ງນວມຍາວຫນ່ວຍຫນຶ່ງນັ້ນ ແມ່ຍິງຄົນຫນຶ່ງອ່າວຈ່ອຍແຫ້ງທ່າທີຮ້ອນຮົນພິລຶກ ໄດ້ປາກົດຕົວເຂົ້າມາໃນຫ້ອງ ແລະ ມຸ່ງຫນ້າມາເວົ້າໃສ່ຫນ້າພວກເຮົາຈັດໆໂລດ. ໃນທ້າຍທີ່ສຸດ ພວກເຮົາຈຶ່ງເຂົ້າໃຈວ່າ ມັນກ່ຽວພັນກັບເຮືອນຝາກເດັກບ່ອນຫນຶ່ງ ມີເດັກນ້ອຍພ້ອມ ແລະ ຜູ້ຈະກຳກັບສິດສອນທີ່ດີກໍມີແລ້ວ ພຽງແຕ່ຂາດໂຕະຕັ່ງເທົ່ານັ້ນ. ເປັນທີ່ຈະແຈ້ງວ່າ ແມ່ຍິງຄົນນີ້ບໍ່ໄດ້ມາທີ່ນີ້ເປັນເທື່ອທຳອິດ ເພາະແຕ່ລະຄຳສັບທີ່ໃຊ້ນັ້ນຮຸນແຮງທີ່ສຸດ ທັງບໍ່ສະແດງວ່າເກງອົກເກງໃຈຜູ້ເປັນເຈົ້າສະຖານທີ່ພໍເມັດ.

– ໃຫ້ພີທ່າລາກຄໍເຂົາຊາ... ພາກັນໄຂຫ້ອງຝາກເດັກກວ້າງໃຫຍ່ຈົນຊິເປັນເມືອງ ເມືອງຫນຶ່ງແລ້ວ ແຕ່ຊ້ຳບໍ່ໃຫ້ໂຕະຕັ່ງປະກອບ ແລ້ວຊິໃຫ້ຂ້ອຍເອົາເດັກນ້ອຍນັ່ງໄວ້ໃສ? ຂ້ອຍຖາມຂະເຈົ້າແນວນີ້ລະ ເພິ່ນກະເລີຍບອກວ່າ "ເອີ ນ້ອນເຈົ້າຈັງມາຫາເດ້..." ຫາກຊິໄດ້ອີຫຍັງຈັກຫນ້ອຍດອກ. ຂ້ອຍກະມາກັບພວກເດັກນ້ອຍໂລດແຫລ້ວ ຕົ້ງ ສິ ກີໂລແມັດ ລາກກວຽນມາພ້ອມ ແລ້ວເປັນແນວໃດວ່າຕີ? ບໍ່ມີໃຜຈັກຄົນບໍ່ມີຈັກຄົນແທ້ໆໃດ໋ ຊິມາຮັບຟັງເຮົານ່າ. ມັນແມ່ນວິທີເຮັດວຽກແນວໃດກັນ? ຕັ້ງເດືອນຫນຶ່ງເຕັມໆ

ແລ້ວໃດ໋ ຂ້ອຍຫງອມານີ້... ບາດຢູ່ບ່ອນສາວອັນນີ້ຫວະ... ເບິ່ງ ເອົາຕີ... ໂຕະຕັ່ງບໍ່ອຶດບໍ່ຢາກເລີຍ... ພວກເຈົ້າເບິ່ງດູວ່າ ມັນມີໄວ້ເພື່ອຫຍັງ? ຮັບໃຊ້ໃຜ?

ນາງເວົ້າສຽງດັງຟັງແຈ້ງດີ ແຕ່ບໍ່ມີໃຜຈັກຄົນທີ່ຫ້ອມລ້ອມໂຕະຂອງ ມາເຣຍກິງດຣາແຕັບນາ ຢູ່ນັ້ນເອົາໃຈໃສ່ສົນໃຈ ທັງນີ້ກໍຍ້ອນວ່າ ມີສຽງອຶນອໍອຶງຄະນຶງຢູ່ແລ້ວຈຶ່ງບໍ່ມີໃຜໄດ້ຍິນນາງເວົ້າ. ກາລີນາ ອີວາໂນວິດ ເສືອດຕາເບິ່ງໂຕະຕັ່ງຫລິບໄປຫລິບມາ ແລ້ວເອົາມືຕົບຕັ່ງຍາວຫນ່ວຍນ້ອຍ ທັງກ່າມວ່າ:

-ສະຫາຍ, ກ້າຂ້ອຍບໍ່ເຂົ້າໃຈຜິດ ຄືດວ່າຕັ່ງຍາວຫນ່ວຍນີ້ກະຄືຊິພໍໃຊ້ໄດ້ຢູ່ແມ່ນບໍ່?

-ຕັ່ງຫນ່ວຍນີ້ຫວະ? ນາງອຸທານ ຫນ້າບານ, -ໂອ໋... ວີເສດລະຕີ ມັນດີທີ່ສຸດເລີຍລະ!

-ຄັນວ່າເປັນແນວນັ້ນ ກະຊິຕ້ອງເວົ້າຫຍັງອີກ? ກ້າວ່າມັນຊິຮັບໃຊ້ເຈົ້າໄດ້ ກໍເອົາໄປໂລດແຫລ້ວໃນເມື່ອວ່າຢູ່ນີ້ມັນກະຢູ່ລ້າງ, ເອົາມັນໄປໃຫ້ເດັກນ້ອຍເຈົ້ານັ່ງເລີຍ!

ດວງຕາທັງຄູ່ເປັ່ງແປວຕື່ນເຕັ້ນຂອງນາງ ທີ່ຕິດຕາມທ່າທີກິລິຍາຂອງ ກາລີນາ ອີວາໂນວິດ ມາຕະຫລອດເວລານັ້ນ ຢຸດເຄື່ອນເຫນັງໃນທັນທີ ຈາກນັ້ນຈຶ່ງຈົ້ງເບິ່ງລາວອີກ.

-ແຕ່ວ່າຊິເຮັດແນວໃດລະ?

-ກໍເຮັດຄືເຄີຍເຮັດນັ້ນແລ້ວ ຍົກຂົນອອກໄປໃສ່ກວຽນຂອງພວກເຈົ້າໂລດ.

-ຟ້າເອີ້ຍ! ຊິເຮັດແນວໃດຊັ້ນນ່າ?

-ເຈົ້າຂ້ອງໃຈນຳເລື່ອງເອກະສານຫວະ? ຢາກັງວົນສົນໃຈນຳແນວໝູ່ນັ້ນເທາະ... ບໍ່ຊັ້ນເຈົ້າຊິຄອງໃຫ້ພວກຜາກໝູ່ນີ້ອອກເຈັຍອອກສໍໃຫ້ຫັ້ນຫວະ ແລ້ວບໍ່ເປັນດອກເນີ ເຈົ້າຄອງບໍ່ໄຫວດອກ... ຫາດາເອົາໄປໂລດ.

-ແຕ່ບ່າ... ກ້າມີຄົນຖາມວ່າ ໃຜໃຫ້ອະນຸຍາດລະ ຂ້ອຍຊິວ່າແນວໃດລະ?

-ເຈົ້າກໍບອກໄປຕິວ່າແມ່ນຂ້ອຍ.

-ວ່າແມ່ນເຈົ້ານັ້ນຫວະທີ່ໃຫ້ອະນຸຍາດ?

-ເອີ້... ຂ້ອຍຍົກມັນໃຫ້ເຈົ້າ.

-ໂອ່... ຟ້າເອີ້ຍ! ນາງອຸທານດ້ວຍຄວາມດີໃຈ ແລະ ແລ້ວກໍລຸກຂຶ້ນຄ່ອຍເບົາພໍປານແມງກະເບື້ອ ນາງແລ່ນລິວປິວວ່ອນອອກຈາກຫ້ອງໄປທັນທີ.

ອີກນາທີໜຶ່ງຕໍ່ມາ ນາງກໍກັບຄືນມາຕິດຕາມດ້ວຍເດັກນ້ອຍເກືອບຊາວຄົນ ພວກເຂົາປຸ້ມໃສ່ໂຕະຕັ່ງອີ້ ຕັ່ງຍາວ ແລ້ວຫາມຫິ້ວລາກແກ່ອອກໄປດ້ວຍຄວາມລຳບາກ. ມີສຽງຊຸດຕຳດັງອຶກກະທຶກຂຶ້ນພາຍໃນຫ້ອງ ແລະ ເທື່ອນີ້ມັນກໍດຶງດູດຄວາມສົນໃຈຈາກມາເຣຍ ກົງດຣາແຕັບນາ ໄດ້ ນາງລຸກຂຶ້ນຢືນແລ້ວຖາມວ່າ:

-ແມ່ນພວກເຈົ້າເຮັດຫຍັງຫັ້ນນ່າ?

-ພວກເຮົາຂົນຂອງໝູ່ນີ້ໄປ! ຫມໍນ້ອຍໆຜິວກ່ຳແຫລ້ ຊຶ່ງພວມຂົນຕັ່ງນວມຫນ່ວຍຫນຶ່ງກັບໝູ່ຜູ້ຍິງຕອບ.

-ຊັ້ນກໍຢ່າເຮັດສຽງດັງອຶກກະທຶກຫລາຍແມ້, ມາເຣຍ ກົງ

ດຣາແຕັບນາ ເວົ້າແລ້ວບັ່ງລີງຄືນ, ນາງເຮັດວຽກງານປະຈຳຂອງລາວຄືນ.

ກາລີນາ ອີວາໂນວິດ ແນມເບິ່ງຂ້າພະເຈົ້າຢ່າງຜິດຫວັງ.

-ເຈົ້າວ່າແນວໃດ ພວກພາກນ້ອຍຫມູ່ນີ້ ມັນຊິພາກັນເອົາໄປຫມົດໃດນໍ້!

ເປັນເວລາດົນນານມາແລ້ວ ທີ່ຂ້າພະເຈົ້າຮູ້ສຶກຊົມຊື່ນຕໍ່ເຄື່ອງໂຕະຕັ່ງໃນຫ້ອງຂອງ ມາເຣຍ ກີງດຣາແຕັບນາ ແລະ ບໍ່ຢູ່ໃນການະທີ່ຈະໂກດແຄ້ນໃຫ້ໃຜໄດ້. ເດັກນ້ອຍຜູ້ຊາຍສອງຄົນຫັນມາດຶງຕັ່ງນວມທີ່ພວກເຮົານັ່ງຢູ່, ພວກເຮົາກໍເລີຍປ່ອຍໃຫ້ພວກເຂົາຈັດການກັບມັນຢ່າງປອດໂປ່ງສຸດຂີດ. ນາງຄູຜູ້ອຳນວຍການສິນລະປິນນຳພວກເດັກນ້ອຍຄາວຫນຶ່ງ ແລ້ວຟ້າວກົງມາຫາ ກາລີນາ ອີວາໂນວິດ, ດຶງມືຂອງລາວໄປຈັບສັ່ນດ້ວຍຄວາມຕື່ນຕັນໃຈ ທັງແນມນຳໃບຫນ້າຍິ້ມແຍ້ມບິນເກີເຂີນຂອງຊາຍໃຈບຸນຄົນນີ້ ຢ່າງຊື່ນອົກຊື່ນໃຈ.

-ຂໍໂທດ... ຊື່ຂອງເຈົ້າວ່າແນວໃດເນາະ? ຂ້ອຍຂໍຮູ້ແດ່ ເຈົ້າໄດ້ຊ່ວຍພວກເຮົາແທ້ໆໃດ!

-ຮູ້ໄປໄດ້ກໍຊິມີປະໂຫຍດຫຍັງ? ທຸກວັນນີ້ເຈົ້າກໍຮູ້ຢູ່ແລ້ວວ່າພວກເຮົາ ບໍ່ສູດມົນອ້ອນວອນຂໍພອນໃຫ້ຜູ້ຄົນມີສຸຂະພາບດີແລ້ວ ສ່ວນວ່າຊິສູດມົນພາວະນາໃນວັນພະເພື່ອຂ້ອຍນັ້ນ ກໍຍັງບໍ່ເກີງເວລາດອກ, ຂ້ອຍຄຶດວ່າ...

-ຢ່າງໃດກໍຕາມ, ບອກເທາະ, ບອກເທາະ...

-ໂຍ້ວເຈົ້າກໍເຂົ້າໃຈດີ ຂ້ອຍບໍ່ມັກໃຫ້ໃຜມາຂອບອົກຂອບໃຈດອກ.

-ພໍ່ເກົ້າໃຈບຸນຄຶນນີ້ຊື່ວ່າ ກາລີນາ ອີວາໂນວິດ ແຊກຍວກ, ຂ້າພະເຈົ້າບອກດ້ວຍອາລົມອ່ອນໄຫວໄປນຳ.

-ຂໍຂອບໃຈເຈົ້າຫລາຍໆ ສະຫາຍ ແຊກຍວກ, ຂອບໃຈ!

-ບໍ່ເປັນຫຍັງນ່າ... ຫາດາເອົາໄປໄວ້ງຫັ້ນຈັກຫນ້ອຍເກີດມີໃຜມາສິນນຳມັນຊິເປັນເລື່ອງໃຫມ່ດອກ.

ນາງເຫີນບິນຈາກໄປດ້ວຍປີກ ຂອງຄວາມເບີກບານຫັນສາ ແລະ ຄວາມສຳນຶກໃນບຸນຄຸນ. ກາລີນາ ອີວາໂນວິດ ແປງສາຍແອວຮັດເສື້ອຍ່າມຂອງລາວ, ໄອແຄັກໆ ແລ້ວດູດກອກແຮງບາດຫນຶ່ງ.

-ແລ້ວເຈົ້າບອກລາວໄປເຮັດຫຍັງລະ? ບໍ່ຮູ້ຫັ້ນລະດີແລ້ວ, ເຈົ້າເຂົ້າໃຈດີວ່າຂ້ອຍບໍ່ໄດ້ມັກໃຫ້ໃຜມາຍ້ອງຍໍສັລະເສີນດອກ. ແຕ່ອັນຂ້ອຍເປັນຫ່ວງກວ່າຫມູ່ ລະແມ່ນວ່ານາງອັນນັ້ນສາມາດຂົນເຄື່ອງໄປໄດ້ແທ້ບໍ່ ພຸ້ນຕ່າງຫາກ.

ບໍ່ດົນຜູ້ຄົນທີ່ຫ້ອມລ້ອມ ມາເຣຍ ກີງດຣາແຕັບນາ ກໍບາງດາຍ້າຍໄປຢູ່ຫ້ອງອື່ນຈຶ່ງແມ່ນພຽນພວກເຮົາ. ຄາວດຽວນາງກໍເວົ້າວຽກກັບພວກເຮົາແລ້ວຮຽບຮ້ອຍ ຈາກນັ້ນຈຶ່ງເສືອດແສງຕາເບິ່ງໄປທົ່ວຫ້ອງ ສະແດງຄວາມສົງໃສອອກມາວ່າ:

-ແມ່ນພວກເຂົາຂົນໂຕະຕັ່ງໄປໄວ້ທາງໃດ? ຂ້ອຍສົງໃສເດ໋, ພວກເຂົາເອົາໄປຈົນກ້ຽງເລີຍ.

-ເຂົາເອົາໄປໃຫ້ເຮືອນຝາກເດັກບ່ອນໜຶ່ງ; ກາລີນາ ອີວາໂນວິດ ບອກທ່າທີຈິງຈັງ ແລ້ວເງີກຫລັງໄປເອື່ອຍຕັ່ງອີ້.

ເປັນຕາງຶດພໍສົມຄວນ, ໃນສອງມື້ຕໍ່ມາພີ້ ເພິ່ນຈຶ່ງຮູ້ວ່າ ການຂົນຍ້າຍໂຕະຕັ່ງໄປນັ້ນ ແມ່ນເຮັດຕາມຄຳອະນຸຍາດຂອງ ກາລີນາ ອີວາໂນວິດ. ພວກເຮົາຖືກເອີ້ນໄປກະຊວງສຶກສາປະຊາຊົນ ແຕ່ພວກເຮົາບໍ່ຟ້າວບໍ່ຟັ່ງວ່າຈະໄປເລີຍ:

-ຂ້ອຍບໍ່ໄດ້ວ່າ ຊິໄປເສຍເວລານຳເລື່ອງໂຕະຕັ່ງຕາຍໆຫມູ່ນັ້ນເດີ້! ເຮັດພໍປານວ່າ ຂ້ອຍບໍ່ມີຫຍັງຫຍຸ້ງສະຫມອງ ຊັ້ນຫວະ ຢູ່ພີ້ນະ!

ແຕ່ວ່າເຖິງຈະມີເຫດມີຜົນດີເທົ່າໃດກໍຕາມ, ມາບັດນີ້ ກາລີນາ ອີວາໂນວິດ ກໍຫາກຮູ້ສຶກເຂີນໆ ເຄືອງໆ ວາດໃດວາດໜຶ່ງຢູ່ເມື່ອປະເຊີນໜ້າກັບ ມາເຣຍ ກິງດຣາແຕັບນາ.

-ພວກເຮົາເຮັດດີແລ້ວ ມັນມີຫຍັງຜິດຊັ້ນຫວະ?

-ເຈົ້າບໍ່ຢາກອາຍແດ່ຫວະ? ເຈົ້າມີສິດຫຍັງໄປອະນຸຍາດເຂົາຈັ່ງຊັ້ນ?

ກາລີນາ ອີວາໂນວິດ ປິ່ນຕັ່ງຫັນມາຢ່າງອ້ອຍອິ່ນໜ້າຮັກ.

-ຂ້ອຍມີສິດເທົ່າໆກັບຜູ້ອື່ນຫັ້ນລະ. ສົມມຸດວ່າມື້ນີ້ຂ້ອຍອະນຸຍາດໃຫ້ເຈົ້າຊື້ເຮືອນຈັກຫລັງ, ຂ້ອຍອະນຸຍາດໃຫ້ເຈົ້າແນວນັ້ນກໍຫມົດທໍ່ນັ້ນລະ. ເລື່ອງມັນຂຶ້ນຢູ່ກັບວ່າ ເຈົ້າຈະຊື້ຫລືບໍ່, ຫລືວ່າເຈົ້າຢາກເອົາລ້າງ... ຂ້ອຍກໍອະນຸຍາດເຈົ້າເຮັດຄືກັນ.

-ໂຍ້ວ ຄັນຊັ້ນ ຂ້ອຍກໍສາມາດອະນຸຍາດໃຫ້... ເອີ້ ເອົາໂຕະຕັ່ງຫມູ່ນີ້ໄປໄດ້ຄືກັນຫວະ? ມາເຣຍ ກິງດຣາແຕັບນາ ເວົ້າ

ທັງກວາດສາຍຕາໄປເບິ່ງທຸກສິ່ງທຸກຢ່າງທີ່ຢູ່ອ້ອມໂຕນາງ.

- ເຈົ້າສາມາດເຮັດໄດ້.

- ຈັ່ງຊັ້ນຫວະ? ມາເຣຍ ກິງດຣາແຕັບນາ ຖາມຍໍ້ຕໍ່ດ້ວຍຄວາມຮູ້ສຶກສັບສົນແບບໃດແບບຫນຶ່ງ.

- ເອີ້ ກະຫັ້ນລະ.

- ຄັນເປັນແນວນີ້ ຕໍ່ໄປຊິເປັນແນວໃດ? ຄົນຊິບໍ່ມາເອົາແລ້ວຂົນຍ້າຍເຄື່ອງໄປຫມົດຫວະ?

- ແມ່ນໃຜຄົນ ໆ ນັ້ນ?

- ກະຜູ້ໃດຜູ້ຫນຶ່ງຫັ້ນແລ້ວ.

- ກະເຊີນມັນມາໂລດແຫລ້ວ ອັນຫມໍ້ນັ້ນນະ, ແລ້ວມັນຊິເຫັນເອງດອກວ່າບາດມັນກັບອອກໄປຫັ້ນ ມັນຊິເປັນແບບໃດ.

- ຮັບຮອງວ່າ ມັນຊິຍ່າງໄປເອງບໍ່ໄດ້ກໍແລ້ວກັນ, ຄືຊິຕ້ອງໃຊ້ກວຽນຈັກເຫລັ້ມພຸ້ນລະ, ຊາໂດຣອບ ເວົ້າທັງຫົວ, ຫມໍມາລັກຢືນຟັງຢູ່ທາງຫລັງຂອງ ມາເຣຍ ກິງດຣາແຕັບນາ ແຕ່ດົນເຕີບແລ້ວ.

ມາເຣຍ ກິງດຣາແຕັບນາ ຫນ້າແດງຮືນ, ເສືອດຕາມາເບິ່ງຊາໂດຣອບ ແລະຖາມຢ່າງເຄືອງວ່າ:

- ເຈົ້າວ່າແນວນັ້ນຫວະ?

ຊາໂດຣອບ ຫົວຈົນເຫັນແຂ້ວທຸກເຫລັ້ມ.

- ສຳລັບຂ້ອຍ ເຂົ້າໃຈວ່າຕ້ອງເປັນແນວນັ້ນ.

- ນີ້ມັນແມ່ນປັດຊະຍາມະຫາໂຈນແທ້ງລະ! ຍິງສາວເວົ້າແຮງໆ, - ແມ່ນພວກເຈົ້າອົບຮົມສຶກສາເດັກນ້ອຍແບບນີ້ຫວະ? ນາງເວົ້າຕໍ່ ນ້ຳສຽງກະແດ້ງ ທັ່ງມາໃສ່ຂ້າພະເຈົ້າ.

- ກໍເກືອບຢາກວ່າຈັ່ງຊັ້ນ...

- ເຈົ້າເຫັນວ່າມັນແມ່ນການສຶກສາອົບຮົມຫວະ? ລັກເຄື່ອງໃຊ້ໂຕະຕັ່ງໃນຫ້ອງການຂ້ອຍ... ເຮັດແບບນີ້ຫມາຍຄວາມວ່າແນວໃດແທ້ຣື? ເຈົ້າສຶກສາອົບຮົມໃຜກັນແທ້? ເຈົ້າຄຶດວ່າ ຖ້າມີເຄື່ອງຂອງປະຢູ່ທົ່ວໄປແລ້ວ ຢາກເອົາໄປທາງໃດກໍໄດ້ຊັ້ນຫວະ?

ເດັກນ້ອຍກຸ່ມຫນຶ່ງມາຢືນຟັງນຳ, ສີຫນ້າຂອງພວກເຂົາບົ່ງບອກວ່າສົນໃຈ ໃນການສົນທະນາຂອງພວກເຮົາສຸດຂີດ. ມາເຣຍ ກົງດຣາແຕັບນາ ໂມໂຫຂຶ້ນແດ່ ແລະ ຂ້າພະເຈົ້າສາມາດຈັບໄດ້ວ່າ ຢູ່ໃນນ້ຳສຽງເວົ້າຂອງນາງນັ້ນ ນາງໄດ້ພະຍາຍາມເຊື່ອງຊ້ອນສຳນຽງຮ້າຍແຮງແບບເປັນບໍລະປັກໄວ້. ໂດຍບໍ່ຢາກໃຫ້ການສົນທະນາອັນນີ້ແກ່ຍາວໄປໃນທິດທາງນີ້ ຂ້າພະເຈົ້າຈຶ່ງເວົ້າກັບນາງແບບປະນີປະນອມວ່າ:

- ພວກເຮົາເວົ້າກັນອີກໃນມື້ໃຫມ່ເນາະ ເພາະວ່າມັນເປັນເລື່ອງສັບສົນສົມຄວນ.

ແຕ່ ມາເຣຍ ກົງດຣາແຕັບນາ ບໍ່ຍອມຖອຍເສຍແລ້ວ:

- ມີອີຫຍັງສັບສົນຢູ່ໃນຫັ້ນ? ງ່າຍຊິຕາຍ ຄືພວກເຈົ້າສຶກສາອົບຮົມພວກເຂົາແບບ ກູລັກ ນັ້ນລະ.

ກາລີນາ ອີວາໂນວົດ ເຂົ້າໃຈວ່າ ນາງໂມໂຫແທ້ໆແລ້ວ ຈຶ່ງຫຍັບມານັ່ງໃກ້ໆນາງ.

- ເຈົ້າຢ່າຄຽດຢ່າຂົມໃຫ້ພໍ່ຕູ້ເກົ້າໆຄືນນີ້ເລີຍ, ແຕ່ຂໍນຳຢ່າເວົ້າແນວນີ້: ສຶກສາອົບຮົມແບບກູລັກ ຫັ້ນນ່າ. ພວກເຮົາສັ່ງສອນອົບຮົມກັນແບບຄົນໂຊວຽດ. ຂ້ອຍເອງແທ້ແມ່ນເຮັດມ່ວນໆ ຕະຫລົກ

ໄປຊື່ງນີ້ແລ້ວ, ຂ້ອຍຄິດແບບນີ້: ໃນເມື່ອວ່າກະໂດແມ່ເຈົ້າເຮືອນເອງກໍນັ່ງຢູ່ຫັ້ນແລ້ວ ລາວກໍມີແຕ່ຈະຫົວ, ບາງທີລາວກໍອາດຈະເຂົ້າໃຈເອົາເອງວ່າ... ບ້ານ ເຫັນບໍ່ພວກເດັກນ້ອຍບໍ່ມີແນວຊີ່ນັ່ງແຕ່ວ່າຟ້າເອີ້ຍ ນາງໂລດບໍ່ແມ່ນແມ່ເຈົ້າເຮືອນທີ່ດີຊໍ້າ: ມີຄົນມາຂີ່ນໂຕະຕັ່ງໄປຕໍ່ຫນ້າແທ້ໆ ກໍຍັງບໍ່ວ່າຫຍັງ ແລ້ວບັດນີ້ຊໍ້າຜັດມາຊອກຫາຜູ້ຮັບຜິດຮັບຊອບ ແລະ ເວົ້າຮອດການສຶກສາອົບຮົມແບບກູລັກ...

-ຫມາຍຄວາມວ່າ ພວກເດັກນ້ອຍເຈົ້າກໍຈະເຮັດແບບດຽວກັນສັ້ນຊັ້ນຫວະ? ມາເຣຍ ກົງດຣາແຕັບນາ ຖາມຄືນ ນ້ຳສຽງຕ້ານທານອ່ອນຍອບລົງແດ່.

-ກໍແທ້ແລ້ວ, ພວກເຂົາຊິເຮັດຄືກັນ!

-ແລ້ວຍ້ອນຫຍັງລະ?

-ຍ້ອນຢາກໃຫ້ບົດຮຽນແກ່ແມ່ເຈົ້າເຮືອນ ບໍ່ເປັນຕາສາເຫດຫັ້ນດີ.

ກາຣາບານົບ ກ້າວອອກມາຈາກຝູງເດັກນ້ອຍ ແລະ ເດ່ໄມ້ຄ້ອນເທົ້າ ເຊິ່ງສົ້ນເບື້ອງຫນຶ່ງມີແພມົນສີຂາວຄືຫມະມັດຫ້ອຍໃສ່ແລ້ວ ມາໃຫ້ ມາເຣຍ ກົງດຣາແຕັບນາ, ແພມົນນີ້ເພິ່ນແຈກຢາຍໃຫ້ນັກຮຽນຫວ່າງຕອນເຊົ້ານີ້ເອງ.

-ເອົານ່າ... ຍົກທຸງຂາວສາ ມາເຣຍ ກົງດຣາແຕັບນາ ແລ້ວຂໍຍອມດຽວນີ້.

ທັນໃດນັ້ນ ມາເຣຍ ກົງດຣາແຕັບນາ ກໍຫົວກ້າກຂຶ້ນ, ດວງຕາທັງຄູ່ເປັນແວວວັບ.

- ເອົາລະ ຂ້ອຍຂໍຍອມ ຍອມ, ເພິ່ນບໍ່ໄດ້ສັ່ງສອນອົບຮົມພວກເຈົ້າແບບ ກູລັກດອກ, ບໍ່ມີໃຜລັກລອບຫຍັງຂ້ອຍ ດອກ, ຍອມແລ້ວ ຫມ່ອມນາງ ຜູ້ຊ່ຽວຊານການສຶກສາສັງຄົມ ຂໍຍອມ!

ກາງຄືນ, ເມື່ອຂ້າພະເຈົ້າອອກມາຈາກບ່ອນສິ່ງບົດ, ທີ່ມເສືອຍ່າມກັບຜົນ ກໍພົບ ມາເຣຍ ກົງດຣາແດັບນາ ນັ່ງຢູ່ໃນຫ້ອງເປົ່າ, ນາງຕິດຕາມການເຄື່ອນເຫນັງສວ່ານສິບຄັ້ງສຸດທ້າຍ ຂອງຊາວນິຄົມ. ສຽງຫອງແຫລມຂອງ ໂຕສະກາ ໂຊໂລແວັບ ດັງກ້ອງມາແຕ່ຮ່ອມຫລັງສາກວ່າ:

- ເຣີ໊ຍ ເຊມີຍົງ! ເຊມີຍົງ ໂຕເອົາເຄື່ອງນຸ່ງມາສິ່ງແລ້ວຫວະ? ເອົາມາໄວໆ ແລ້ວຫນີໄປ.

ມີສຽງຂອງ ກາຣາບານົບ ຕອບມັນວ່າ:

- ໂຕສະກາ... ບັກສ່ຽວນ້ອຍ ໂຕຄືຊິປ່ວງຈັກຫນ້ອຍເນາະ? ກັບສະແດງເປັນ ຊາຕິນ* ພຸ້ນເດີ໊.

- ໂອ ຊາຕິນ ຫວະ! ຊັ້ນກໍປະໄວ້ເປັນຂອງທີ່ລະນຶກນໍາໂຕພຸ້ນສາ!

ໂວໂລຄອບ ຍືນຢູ່ແຄມໆເວທີສະແດງ ທ່າມກາງຄວາມມືດສະຫງັດຮ້ອງອອກມາວ່າ:

---

* ຊາຕິນ: ແມ່ນຕົວລະຄອນ ໃນເລື່ອງ "ພວກສັບດານຕໍ່າ" ຂອງ ກ໋ອກກີ, ເປັນຄົນຂີ້ດຽດ ນຸ່ງເຄື່ອງຂາດສ້ອຍ (ຜູ້ແປ).

-ກາລາແຕ້ງໂກ ບໍ່ເຮັດແນວນັ້ເດີ້, ສ່ຽວເອີ້ຍ, ຕ້ອງມອດໄຟໃນເຕົາຜິງໃຫ້ຫມົດເດີ້.

-ມັນຫາກຊິມອດເອງດອກ, ສຽງກົ້ວຮູຄໍຊີງເຫງົາໆນອນຂອງກາລາແຕ້ງໂກ ສະທ້ອນຄືນ.

-ເຮັດຄືເຮົາບອກຫັ້ນນ່າ, ມອດສາໃຫ້ຮຽບຮ້ອຍ, ໂຕບໍ່ຮູ້ຈັກບໍ່ຄໍາສັ່ງທີ່ວ່າ: ຢ່າປະເຕົາຜິງມີໄຟໄວ້!

-ໂອ້ຍຄໍາສັ່ງຕົກລົງມາປານຫ່າຝົນ! ກາລາແຕ້ງໂກ ຈົ່ມພຸ່ມໆ, ເອົາລະ... ເຮົາຊິມອດດຽວນີ້.

ເທື່ອເວທີ ເດັກນ້ອຍກຸ່ມຫນຶ່ງ ພວມມ້າງຮ່າງເຮືອນຖູບຍາມອອກເປັນຕ່ອນເລັກຕ່ອນນ້ອຍ, ສຽງໃຜຜູ້ຫນຶ່ງຮ້ອງເພງຄ່ອຍໆດັງລອດອອກມາວ່າ: "ດວງຕາເວັນພຸ່ງພົ້ນ ບໍ່ດົນກໍ້ຄ້ອຍຕໍ່າ ຄໍ່າລົງ...".

-ມື້ອື່ນແປ້ນໄມ້ຫມູ່ນີ້ ຄືນໄປໂຮງຊ່າງໄມ້ເດີ້! ມີເຕຍ ເຊເວລີ ບອກເຕືອນທຸກຄົນ ແລ້ວໃນທັນໃດນັ້ນກໍຮ້ອງຂຶ້ນວ່າ:

-ອານໂຕນ! ເຮີ້ຍ ອານໂຕນ!

ບຣາເຊັນໂກ ຕອບອອກມາຈາກຮ່ອມດ້ານຫລັງວ່າ:

-ໂຍ້ວ... ເຮົາຢູ່ນີ້ເວີ້ຍ! ແມ່ນໂຕຮ້ອງແຮັນໆປານມ້າລໍເຮັດຫຍັງເວີ້ຍ!

-ມື້ອື່ນໂຕໃຫ້ກວຽນພວກເຮົາຈັກເຫລັ້ມໄດ້ບໍ່?

-ໄດ້.

-ກັບມ້າໂຕຫນຶ່ງໄດ້ບໍ່?

-ສູແກ່ກວຽນເອງບໍ່ໄດ້ຫວະ?

- ພວກເຮົາບໍ່ມີແຮງແລ້ວ.

- ພວກສູບໍ່ໄດ້ແດກເຂົ້າເປືອກພໍຫວະ?

- ກືກທີ່ສຸດ.

- ຊັ້ນມາເອົາບໍາກູນີ້ແມ້!

ຂ້າພະເຈົ້າມາຫາ ມາເຣຍ ກົງດຣາແຕັບນາ.

- ເຈົ້າຊິພັກຢູ່ຫ້ອງໃດ?

- ຂ້ອຍພວມລໍຖ້ານາງ ລີເດຍ. ນາງພວມລ້າງເຂົ້າແປ້ງນໍ້າແດງອອກຈາກຫນ້າ, ບາດແລ້ວຊິພາຂ້ອຍໄປຫ້ອງຂອງລາວ. ອານໂຕນ ເຊມີວໂນວິດ ເອີ້ຍ, ເຈົ້າມີເດັກນ້ອຍທີ່ເປັນຕາຮັກຫລາຍ, ແຕ່ພາລະຂອງພວກເຂົາມັນຫນັກຫນ່ວງແທ້ໃດ໋; ຍາມນີ້ເດິກຫລາຍແລ້ວ ແຕ່ພວກເຂົາກໍຍັງເຮັດວຽກຢູ່, ຂ້ອຍຄຶດວ່າພວກເຂົາຄືຊິເມື່ອຍຫລາຍ! ຄວນຊິຫາຫຍັງໃຫ້ພວກເຂົາກິນຮອງທ້ອງແດ່ບໍ່? ຢ່າງຫນ້ອຍກໍໃຫ້ພວກທີ່ອອກແຮງງານຫລາຍ.

- ຜູ້ໃດກໍອອກແຮງງານຫລາຍຄືກັນ, ແຕ່ພວກເຮົາກໍບໍ່ມີຫຍັງໃຫ້ຜູ້ໃດ.

- ແລະ ພວກເຈົ້າເອງເດ, ເຊັ່ນວ່າ ພວກຄູຂອງເຈົ້າ, ມື້ນີ້ກໍໄດ້ສະແດງລະຄອນ, ແລະ ອັນໃດກໍເປັນທີ່ຫນ້າສົນໃຈຫມົດ, ເປັນຫຍັງພວກເຈົ້າຈື່ງບໍ່ມາເຕົ້າໂຮມກັນ, ໂອ້ລົມກັນ, ແລ້ວກໍ... ກິນຫຍັງນໍາກັນ. ຍ້ອນຫຍັງລະ?

- ມື້ອື່ນຕ້ອງໄດ້ຕື່ນແຕ່ຫົກໂມງ, ມາເຣຍ ກົງດຣາແຕັບນາເອີ້ຍ!

- ຍ້ອນສາເຫດນີ້ເທົ່ານັ້ນບໍ່?

- ເຫັນບໍ່ລະ, ເລື່ອງມັນເປັນຈັ່ງຊີ້ລະ, - ຂ້າພະເຈົ້າເວົ້າໃຫ້ແມ່ຍິງໃຈດີແລະ ໜ້າຮັກຜູ້ນັ້ນ - ຊີວິດຂອງພວກເຮົາມັນລຳບາກກວ່າທີ່ເຈົ້າຄິດນີ້ຫລາຍໃດ໋.

ມາເຣຍ ກົ່ງດຣາແຕັບນາ ມິດຈົ່ງງຽບໄປ. ນາງນ້ອຍ ລີເດຍໂດດອອກມາຈາກເວທີສະແດງ ແລະ ເວົ້າວ່າ:

- ການສະແດງມັນດີໃດ໋ເນາະ ແມ່ນບໍ່?

ບົດທີ ໖

ສອນການະເທບ

ລະດູບານໃໝ່ມາຢ້ຽມຢາມພວກເຮົາພ້ອມໆກັບການສະເຫລີມສະຫລອງວັນເກີດ ກ້ອກກີ. ພວກເຮົາເລີ່ມຮູ້ສຶກ ເກືອບບັນຍາກາດອັນສົດຊື່ນຂອງມັນ ຢູ່ໃນບາງຂົງເຂດຕ່າງດົນນານແລ້ວ.

ການສະແດງລະຄອນເວທີຂອງພວກເຮົາ ເຮັດໃຫ້ຊາວນິຄົມກັບຊາວໜຸ່ມໄທບ້ານໃກ້ຊິດສະໜິດກັນຫລາຍຂຶ້ນ ແລະ ທ່ອງທ່າຫລາຍອັນຂອງຄວາມໃກ້ຊິດອັນນີ້ ກໍເຮັດໃຫ້ອາລົມຈິດຫລາຍອັນ ນັບທັງໂຄງການເໜືອຄາດໝາຍຫລາຍອັນ ເຊິ່ງບໍ່ມີຢູ່ໃນທິດສະດີສຶກສາທາງດ້ານສັງຄົມ ເປີດເຜີຍເບີຍບານອອກມາ. ຜູ້ຮັບເຄາະຕົ້ນຕໍຂອງມັນສ່ວນຫລາຍແມ່ນຊາວນິຄົມ ຜູ້ເຊິ່ງປະຕິບັດຄຳສັ່ງຂອງສະພານາຍກອງເອງ ແລ້ວຕົກໄປຢູ່ໃນວົງແວດລ້ອມທີ່ອ່າວອັດຕະຄັດກວ່າໝູ່ ຄືຕົກຢູ່ໃນກອງພິເສດ "ຊ", ເຊິ່ງມີຄວາມໝາຍວ່າ ຜູ້ຊຸມ ນັ້ນເອງ.

ພວກສະຫາຍອື່ນທີ່ຕົກຢູ່ໃນກອງ ໖ "ສ" ທີ່ສະແດງເທິງເວ

ທີ່ນັ້ນ ຍາມໃດກໍ່ຕື່ນເຕັ້ນໃຈສັ່ນແຕ່ຕົ້ນຈົນປາຍ ຍ້ອນຄວາມເມົາມົວ ໃນການລະຄອນພໍເຣງ ຈັ່ງຊັ້ນພວກເຂົາຈຶ່ງໄດ້ສຳນຶກເຖິງອາລົມສະຫວາດຜັນຫວານ ແລະ ການສະແດງຄວາມຮັກບົນເວທີລະຄອນເລື້ອຍໆ ແຕ່ຊ້ຳພັດແມ່ນສິ່ງເຫລົ່ານີ້ເອງ ທີ່ກອບກູ້ເອົາພວກເຂົາໄວ້ ເຮັດໃຫ້ພວກເຂົາລອດພົ້ນຈາກລະຍະເວລາຫນຶ່ງ ເຊິ່ງເພິ່ນເອີ້ນວ່າ "ພົບຮັກເທື່ອທຳອິດ" ນັ້ນເອງ. ສະມາຊິກຂອງກອງພິເສດ ຜີ ກອງອື່ນໆກໍ່ປອດໄພເຊັ່ນດຽວກັນ. ພວກເດັກນ້ອຍໃນກອງ ຜີ "ສ. ສ" (ສິ່ງສຽງ) ນັ້ນ ຍາມໃດກໍ່ສົນລະວົນນຳວັດຖຸທາດລະເບີດຄຸນນະພາບສູງ ເຊັ່ນ ຕາຣາແນດ ນັ້ນຍາກທີ່ຈະບໍ່ເຫັນວ່າ ຫົວຂອງມັນບໍ່ມີຜ້າພັນບາດ ຍ້ອນອຸບັດເຫດຕ່າງໆ ໃນລະຫວ່າງການທົດລອງກ່ຽວກັບວັດຖຸລະເບີດ. ໃນກອງນີ້ກໍ່ຄືກັນ ຄວາມມັກຮັກບໍ່ສາມາດແຊກແຊງບົ່ງຮາກໄດ້ ທັງນີ້ຍ້ອນວ່າ ສຽງລະເບີດເຮືອກຳປັ່ນ, ປ້ອມຜາສາດ ແລະ ກວຽນມ້າຂອງພວກອາດຍາເຈົ້ານາຍແບບດັ້ງກ້ອງສະນັ່ນ ທັງມີວັດຖຸບົວຊະຂຶ້ນໃນອາກາດນັ້ນ ກວມກືນຈິດໃຈຂອງພວກເດັກນ້ອຍຢ່າງເລິກແລບ ບໍ່ປ່ອຍໃຫ້ "ເງົາດຳ ແລະ ຄວາມສັບສົນແຫ່ງແປວໄຟປາດຖະຫນາ" ໃດໆ ມີໂອກາດເບັ່ງແປວລຸກຂຶ້ນໄດ້, ເຊັ່ນດຽວກັນ ແປວໄຟຊະນິດນີ້ບໍ່ສາມາດລຸກລາມຂຶ້ນຢູ່ໃນກອງທີ່ຮັບຜິດຊອບເຄື່ອງປະກອບ ແລະ ຈັດສາກ, ໃນກໍລະນີພວກເຂົານີ້ ຂະບວນການອັນທີ່ຝ່າຍຊ່ຽວຊານດ້ານສຶກສາເອີ້ນວ່າ "ການເປື່ອຍລະລາຍ" ນັ້ນໄດ້ຮັບການປົກປ້ອງເຂັ້ມແຂງເກີນໄປ. ແມ່ນແຕ່ພວກ ດັງໄຟ ເຊິ່ງປະຕິບັດຫນ້າທີ່ຢູ່ທ່າມກາງຜູ້ຊົມ ກໍຍັງຢູ່ໃນການະລອດພົ້ນຈາກປາຍສອນກາມະເທບ

ໄດ້ ເພາະການະເທບເທງິກທາງກອິງນີ້ ບໍ່ອາດຈະຄິດປິ່ນປາຍສອນໄປໃສ່ເປົ້າທີ່ແສນມຸມມິວໂອບຂີ້ຝຸ່ນກ່ານໄພດຳປິ່ງ ປານນີ້ຈັກເທື່ອດອກ.

ແມ່ນສະມາຊິກໃນກອງພິເສດ ຜີ "ຊ" ທີ່ຕົກຢູ່ໃນພາວະສ່ຽງໄພກວ່າຫມູ່. ພວກນີ້ເຂົ້າໄປປະປົນຢູ່ກັບຜູ້ຊົມ, ນຸ່ງເຄື່ອງຊຸດໂກ້ທີ່ສຸດເທົ່າທີ່ນິຄົມສາມາດຫາໃຫ້ໄດ້. ເມື່ອໃພມີທ່າທີແບບ "ປ່ອຍຕາມໃຈ" ແມ່ນແຕ່ຫນ້ອຍດຽວ ຂ້າພະເຈົ້າກໍສາມາດໄລ່ຫນີ ແລະຕຳຫນິຕິຕຽນໂລດ. ແພມົນຜົນສະອາດເຫນັບຢູ່ກົງເສື້ອຫນ້າເອິກຂອງເຂົາພົ້ນໂຜ່ອອກມາຢ່າງພໍເຫມາະພໍດີ, ຊົງຜົມນັ້ນຍາມໃດກໍໂກ້ສະງ່າ, ເຂົາຕ້ອງຄ່ຽມຄົມມີມາລະຍາດພໍປານນັກການທູດແລະ ຮອບຄອບລະແວດລະວັງພໍປານຫມໍປົວແຂ້ວ. ເມື່ອພຽບພ້ອມໄປດ້ວຍຄຸນສົມບັດເຫລົ່ານີ້ແລ້ວ ພວກເຂົາຈຶ່ງຕົກເຂົ້າໃນອານາຈັກ ມົນສະເຫນອັນທີ່ໃຜໆກໍຮູ້ດີກັນວ່າ ມັນດຳເນີນໄປແບບໃດ ບໍ່ວ່າຢູ່ບ້ານ ກົງຊາຣອບກາ ກໍດີຢູ່ ບີໂຣກອບກາ, ຢູ່ໂຮງນາບ້ານໂວໂລວີ ຫລືແມ່ນແຕ່ຢູ່ໃນຫ້ອງຮັບແຂກສູງສຸດຂອງ ປາຣີ.

ການພົບພໍ້ເທື່ອທຳອິດຢູ່ປະຕູເຂົ້າໂຮງລະຄອນ ຂະນະທີ່ກວດກາເບິ່ງບັດ ແລະຊອກບ່ອນນັ່ງຫວ່າງໃຫ້ນັ້ນ ເບິ່ງຄືວ່າຈະບໍ່ມີໄພອັນຕະລາຍແຕ່ຢ່າງໃດ: ໃນສາຍຕາຂອງຫມູ່ນາງສາວແລ້ວ ເບິ່ງຄືວ່າພວກບ່າວເຈົ້າພາບ, ນັກຈັດການສະແດງແສນປະເສີດເຫລົ່ານີ້ ລ້ວນແຕ່ມີວາຈາຫນ້າຟັງ ແລະ ຄວາມສາມາດໃນການກຳກັບການສະແດງ ຍິ່ງໄປກວ່ານີ້ພວກເຂົາຍັງປະກອບດ້ວຍກຽດສັກສີຫນ້າຫລົງໄຫລ ເຫນືອຄວາມຄິດຝັນ ຂະຫນາດວ່າບໍ່ອາດເອື້ອມ

ຈົນເກີດຂັ້ນວ່າແມ່ນແຕ່ພວກຜູ້ບ່າວໄທບ້ານເອງກໍຍັງບໍ່ຮູ້ສຶກ ອິດສາ ຄຶດຫວັ່ນເກງແຕ່ແນວໃດ. ແຕ່ເມື່ອການສະແດງຜ່ານໄປຄັ້ງທີ່ຫນຶ່ງ, ຄັ້ງທີ່ສາມ ແລະ ຄັ້ງທີ່ຫ້າແລ້ວ ນິຍາຍເກົ່າແກ່ທັ່ງກັບໂລກເລື່ອງນີ້ ກໍເກີດຊ້ຳອີກ.

ບໍ່ດົນ ນາງ ປາຣາສະກາ ທີ່ມາແຕ່ບ້ານ ປີໂຣກອບກາ ຫລືນາງມາຣູດເຊຍທີ່ມາແຕ່ຄຸ້ມໂຮງນາ ໂວໂລວີ ຕ່າງກໍຄົ້ນພົບວ່າພວງແກ້ມແດງອິ່ມເຕັມຂອງຕົນ, ວົງຄິ້ວດົກດຳຫລືສີອ່ອນ ດວງຕາວາວຮຸ່ງ, ເສື້ອກະໂປ່ງນຳສະໄຫມຍາວລ່າມ ແລະ ຊົງຜົມຕາມສະໄຫມນິຍົມ ທັງຫມົດເຫລົ່ານີ້ລ້ວນແຕ່ປະກອບເປັນເຫຍື່ອລໍ້ຊະນິດບໍ່ມີໃຜທຽງໄດ້, ກະທັ່ງຮອດສຽງລົວຕົວ "ລ" ແບບອີຕາລີ ເຊິ່ງບໍ່ມີໃຜເຮັດໄດ້ ນອກຈາກຫລອດລົມໃນຄໍຂອງຍິງສາວເທົ່ານັ້ນ ທຸກສິ່ງທຸກຢ່າງເຫລົ່ານີ້ ປະກອບສ້າງເປັນພະລັງຢ່າງຫນຶ່ງຮຸນແຮງກວ່າວິທີສະແດງການລະເບີດຂອງຊາວນິຄົມ ກ໊ອກກີ ຫລືແມ່ນແຕ່ວິທີການອື່ນໆ. ແລະ ເມື່ອເກີດເວລາທີ່ພະລັງທັງຫມົດເຫລົ່ານີ້ເລີ່ມອອກລິດ, ກຽດຕິສັກອັນເຫນືອຄວາມໄຝ່ຝັນຂອງຊາວນິຄົມ ກໍພັງທະລາຍລົງໃນພັບຕາດຽວ, ຈາກນັ້ນກໍເກີດເວລາທີ່ໃຜຜູ້ຫນຶ່ງໃນກຸ່ມນີ້ມາພົບຂ້າພະເຈົ້າຫລັງຈາກເລີກການສະແດງ ແລ້ວເວົ້າຂີ້ດົວະຢ່າງບໍ່ອຳອາຍວ່າ:

-ອານໂຕນ ເຊມີວໂນວິດ, ອະນຸຍາດໃຫ້ຂ້ອຍໄປສົ່ງພວກແມ່ຍິງບ້ານ ປີໂຣກອບກາ ແດ່, ຂະເຈົ້າຢ້ານນ່າ.

ຄຳເວົ້າປະໂຫຍກນີ້ ແຝງຄວາມຂີ້ດົວະໂຂ້ໂຫລ້ ຊະນິດຫາຍາກຢ່າງຫນຶ່ງ ເພາະທັງຜູ້ຮ້ອງຂໍ ແລະ ຂ້າພະເຈົ້າເອງຕ່າງກໍຮູ້ສຶກ

ຄືກັນວ່າ ບໍ່ມີໃຜຍ້ານກົວໃນສິ່ງໃດຫມົດແລະ ບໍ່ມີໃຜຕ້ອງການໃຫ້ຄົນອື່ນເມືອສິ່ງ ແລ້ວການໃຊ້ສັບພະນາມພະຫູພົດວ່າ "ພວກແມ່ຍິງ" ນັ້ນກໍແມ່ນການເວົ້າໂຍກໄປແລ້ວ. ບໍ່ຈຳເປັນຕ້ອງມີການອະນຸຍາດຫຍັງເລີຍ, ການນຳເມືອສິ່ງສາວຂີ້ຍ້ານນັ້ນເປັນສິ່ງທີ່ຕ້ອງເຮັດຢູ່ແລ້ວ.

ດ້ວຍເຫດຜົນເຫລົ່ານີ້ ຂ້າພະເຈົ້າ ຈຶ່ງອອກປາກອະນຸຍາດທັງພະຍາຍາມລຶບລ້າງຄວາມຮູ້ສຶກ ບໍ່ເດັດຂາດເກັ່ງກອງຢູ່ໃນສ່ວນເລິກຂອງວິນຍານຄວາມເປັນນັກສຶກສາສາດ ຂອງຕົນອອກໄປ. ຫລັກການວິຊາຄູ, ຄືທຸກຄົນຮູ້ນັ້ນແລ້ວ, ບໍ່ຮັບຮູ້ເລື່ອງຄວາມຮັກເລີຍ ໂດຍຕີລາຄາວ່າ "ບັດໃຈ" ອັນນີ້ມີສດໂປໂລຂຶ້ນກໍ່ຕໍ່ເມື່ອເຫັນວ່າ "ການໃຊ້ວິທີສຶກສາອົບຮົມ" ບໍ່ໄດ້ຜົນແລ້ວເທົ່ານັ້ນ. ໃນທຸກຍຸກທຸກສະໄຫມ ແລະ ຢູ່ໃນຫມູ່ປະຊາຊາດທັງຫົມດ, ນັກສຶກສາສາດທັງຫລາຍກຽດຊັງ ແລະ ຂ້າພະເຈົ້າກໍ່ຮູ້ສຶກອິດສາຢ່າງບໍ່ມີເຫດມີຜົນ ເມື່ອເຫັນວ່າເດັກນ້ອຍນັກຄົນຄົນໃດຄົນຫນຶ່ງຂາດກອງປະຊຸມຊາວຫນຸ່ມ ຫລືວ່າການໂຮມຊຸມນຸມໃຫຍ່ຂອງພວກເຮົາ, ເມື່ອເຂົາສະແດງທ່າທີເບື່ອຫນ່າຍບໍ່ມຮຽນ, ບໍ່ສົນໃຈໂຍດີຕໍ່ຄຸນສົມບັດ ໃນການະເປັນສະມາຊິກຜູ້ຫ້າວຫັນ ແລະ ຕື່ນຕົວຂອງນັກຄົມ, ປະຕິເສດຢ່າງແຂງຂັນ ບໍ່ຮັບຮູ້ອຳນາດໃດໆ ນອກຈາກອຳນາດຂອງນາງ ມາຣູດເຊຍ ຫລື ນາຕາຊາ ເຊິ່ງເບິ່ງໃນແງ່ສຶກສາສາດ, ການເມືອງ ແລະ ຈັນຍາທຳແລ້ວ ລ້ວນແຕ່ເປັນບຸກຄົນທີ່ຢູ່ຕ່ຳກວ່າຂ້າພະເຈົ້າຈະນົດທຽບກັນບໍ່ໄດ້ນັ້ນເລີຍ. ພວກຄູຮ່ວມງານກັບຂ້າພະເຈົ້າຢູ່ນິຄົມ ແລະ ພວກພະນັກງານກະຊວງສຶກສາປະຊາຊົນນັ້ນ ຍິ່ງ

ເດັດຂາດກວ່າຂ້າພະເຈົ້າອີກ ແລະ ມີປະຕິກິລິຍາຕໍ່ການແຊກແຊງ ແບບບໍ່ຄາດຝັນ ແລະ ຫລາຍຮູບຫລາຍແບບຂອງການະເທບອົງນ້ອຍນີ້ຢ່າງຮ້ອນແຮງ ແລະ ໂມໂຫທີ່ສຸດ:

-ຕ້ອງຕ້ານຍັນກັບເລື່ອງນີ້ສຸດຂີດ.

ການໂອ້ລົມອະທິບາຍເຫລົ່ານີ້ ມີຜົນດີສະເຫມີ ເພາະມັນຊ່ອຍໃຫ້ແນມເຫັນສະພາບການໄດ້ແຈ່ມແຈ້ງກວ່າ: ແຕ່ລະຄົນຄວນຍຶດຫມັ້ນຢູ່ໃນຈິດສຳນຶກອັນດີງາມຂອງຕົນເອງ ແລະ ຂອງຊີວິດເອງ. ຈິດສຳນຶກອັນດີງາມນີ້ ຍັງບໍ່ມີຫລວງຫລາຍດອກຢູ່ໃນຊີວິດຂອງພວກເຮົາ ເພາະວ່າພວກເຮົາຍັງດຳລົງຊີວິດແບບທຸກຍາກຢູ່. ຂ້າພະເຈົ້າຄຶດຝັນໄປວ່າ: ຖ້າວ່າພວກເຮົາຮັ່ງມີພໍແລ້ວ ຂ້າພະເຈົ້າຈະໃຫ້ຊາວນີຄົມສ້າງຄອບຄົວ ແລະ ເຮັດໃຫ້ຫ້ອງກິນນີ້ອຸດົມສົມບູນໄປດ້ວຍຄອບຄົວຊາວ ກົມໂຊໂມນ. ຊິມີຫຍັງບໍ່ດີຊົນຫວະ? ເຮັດແນວນີ້ນະ? ແຕ່ຄວາມຝັນອັນນັ້ນນຍັງຢູ່ຫ່າງໄກຫລາຍ. ເກືອງຢ່າງໃດກໍ່ບໍ່ເປັນຫຍັງດອກ. ບາງຄັ້ງຄວາມທຸກຍາກນັ້ນເອງທີ່ກໍ່ໃຫ້ເກີດຄວາມຄຶດຝັນ, ຂ້າພະເຈົ້າບໍ່ກູກກວນຜູ້ດົກຢູ່ໃນຄວາມຮັກ ດ້ວຍການເອົາຫລັກວິຊາຄູເຂົ້າຫຍຸ້ງກ່ຽວນຳ ໂດຍສະເພາະໃນເມື່ອວ່າພວກເຂົາຍັງບໍ່ໄດ້ເຮັດຫຍັງເກີນຂອບເຂດເລີຍ. ຄັ້ງຫນຶ່ງເມື່ອພວກເຮົາໂອ້ລົມກັນແບບເປີດເຜີຍຈິງໃຈຕໍ່ກັນ, ໂອປຣິສໂກ ໄດ້ເອົາຮູບກ່າຍຂອງ ມາຣູດເຊຍ ໃຫ້ຂ້າພະເຈົ້າ ນັ້ນມັນສະແດງໃຫ້ເຫັນວ່າ ຊີວິດດຳເນີນວຽກງານຂອງມັນໄປສະເຫມີ ໃນຂະນະທີ່ພວກເຮົາຍັງຊຶ່ງຈົມຢູ່ໃນຄວາມນຶກຄິດ.

ອັນກະໂດແຜ່ນຮູບເອງນັ້ນ, ມັນບໍ່ສະແດງຫຍັງຫລາຍດອກ:

ໃບຫນ້າອ່ວກວ້າງ ດັງແຫງນ, ຕາຈົ້ງກົງມາໃສ່ຂ້າພະເຈົ້ານັ້ນບໍ່ມີຫຍັງແປກຕ່າງໄປກວ່ານາງ ມາຣູດເຊຍ ປະເພດສາມັນຄົນຫນຶ່ງ. ແຕ່ທາງດ້ານຫລັງຮູບນັ້ນດີ ມີລາຍມືແບບນັກຮຽນປະກົມຂຽນຈະແຈ້ງວ່າ: "ແດ່ ດະມິຕຣີ ທີ່ຮັກ. ມອບໄວ້ເພື່ອກັນລືມ, ຈາກ ມາຣູດເຊຍ ລຸກເຊັນໂກ".

ເວລາທີ່ ໂອປຣິສໂກ ນັ່ງຢູ່ເທິງຕັ່ງຂອງມັນນັ້ນ ໃຜງກໍເຂົ້າໃຈວ່າຫມໍເປັນຄົນໂສກົ້ມພໍແຮງແລ້ວ. ຈາກສະພາບຫນຸ່ມອະນາຖາຍັງເຫລືອຜຽງຮ່ອງຮອຍຂອງເສດຄົນຫນ້າສົງສານຜູ້ຫນຶ່ງ ກະທັ່ງຊົງຜົມຂອດເປັນລອນຫຍອງຫຍຸ້ງຢູ່ເທິງຫນ້າຜາກ ກໍມີອັນສາບສູນໄປ: ບັດນີ້ຊົງຜົມຂອງຫມໍສະອາດອ່ຽມ ມີວາດຊົງເປັນຄົນຮູ້ຜູ້ດີສະຫງົບສະຫງ່ຽມ. ດວງຕາສີໄມ້ແກ່ທັງຄູ່ທີ່ວາວວັບຂຶ້ນຢ່າງໄວວາງ່າຍດາຍ ຍ້ອນຄຳເວົ້າເລິກໆຈັກຄຳ ຫລືຄວາມຮູ້ສຶກຢາກໂດດເຕັ້ນຫົວລໍ້ຈັກບາດ ມາບັດນີ້ຄົງມີແຕ່ຄວາມວິຕົກກັງວົນຕໍ່ວຽກບ້ານການເຮືອນແລະ ການຍອມຈຳນົນຕໍ່ຊາຕາກຳອັນຫນ້າກະຫນອມເທົ່ານັ້ນ.

-ແລ້ວໂຕຊິເຮັດແນວໃດ ?

ໂອປຣິສໂກ ຫົວ:

-ຄັນວ່າເຈົ້າບໍ່ຊ່ອຍ ກໍຄືຈະບໍ່ງ່າຍປານໃດແລ້ວ. ພວກເຮົາບໍ່ທັນເວົ້າຫຍັງນຳພໍເລີຍ, ມາຣູດເຊຍ ຍ້ານຢູ່ ແຕ່ເບິ່ງໆ ແລ້ວພໍ່ລາວກໍບໍ່ອະຣິຕິດຽນຂ້ອຍປານໃດດອກ.

-ດີແລ້ວ ຊັ້ນກະດາຍ ລໍຖ້າອີກຈັກຫນ້ອຍເນາະ.

ໂອປຣິສໂກ ອອກຈາກຫ້ອງການຂອງຂ້າພະເຈົ້າດ້ວຍຄວາມ

ດີໃຈ ທັງເອົາຮູບສາວຊູ້ຮັກເຊື່ອງແນບໄວ້ກັບຫົວໃຈ.

ແຕ່ເລື່ອງຂອງ ໂຊບົດ ຮ້າຍແຮງກວ່າ. ຫມໍນີ້ເປັນຄົນໃຈດໍາ ມືດຂຶ້ນ ຢ່າງບໍ່ມີລັກສະນະເດັ່ນດີອັນອື່ນໃດເລີຍ, ຕອນມາຢູ່ນິຄົມ ໃຫມ່ໆນັ້ນ ຫມໍກໍ່ເລື່ອງຍ້ອນການອາລະວາດຫມູ່ດ້ວຍມີດສັ້ນ. ນັບແຕ່ນັ້ນມາກໍ່ຮັກສາລະບຽບວິໄນຢ່າງເຄັ່ງຄັດ ແຕ່ພະຍາຍາມຢູ່ ຫ່າງຈາກສູນກາງທີ່ມີຊີວິດຊີວາສະເຫມີ. ໃບຫນ້າຂອງຫມໍເສີຍຊື່ ບໍ່ສະແດງອາລົມໃດໆເກືອງແມ່ນແຕ່ໃນເວລາໂມໂຫທີ່ສຸດ ແສງຕາກໍ ຄືຫວ່າງເປົ່າ. ມັນໄປໂຮງຮຽນຍ້ອນກົດບັງຄັບ ແລະ ຮຽນພໍແຕ່ ອ່ານອອກຂຽນໄດ້ເທົ່ານັ້ນ. ສິ່ງຫນຶ່ງສິ່ງດຽວໃນໂຕມັນ ທີ່ຂ້າພະ ເຈົ້າພໍໃຈກໍແມ່ນ ວິທີມັນປາກເວົ້າ: ໃນກ້ອຍຄໍາທີ່ອ່າວຫນ້ອຍຂອງ ມັນນັ້ນ ມັກມີຄວາມຈິງໃຈຊື່ສັດແຝງຢູ່. ມັນແມ່ນຫນຶ່ງໃນຈໍານວນ ຜູ້ໄດ້ເຂົ້າເປັນສະມາຊິກ ກົມໂຊໂມນ ຊຸດທໍາອິດ. ໂກວານ ສະ ແດງຄວາມເຫັນກັບຫມໍນີ້ວ່າ:

- ມັນບໍ່ມີຄວາມສາມາດແມ່ນແຕ່ຈະຂຽນລາຍງານ ແລະ ໃຊ້ ການບໍ່ໄດ້ເລີຍໃນເລື່ອງໂຄສະນາ ແຕ່ລອງເອົາປືນກົນມືໃຫ້ມັນຈັກ ກະບອກແມ້ ຮັບຮອງມັນຊິຍອມຕາຍດີກວ່າ ປ່ອຍໃຫ້ປືນຫລຸດ ມືໄປ.

ທຸກຄົນໃນນິຄົມຮູ້ວ່າ ໂຊບົດ ຫລົງມັກ ນາຕາຊາ ເປເຕຣັມໂກ. ສ່ວນນາງຄົນນີ້ຢູ່ເຮືອນ ມູດຊີ ກາໂປວົດ ທີ່ທໍາທ່າວ່າລ້ຽງນາງໄວ້ໃນ ຖານະຫລານ ທັງໆທີ່ວ່າ ໃນຕົວຈິງແລ້ວເຂົາໃຊ້ນາງຄືກໍາມະກອນກະ ສິກໍາຄົນຫນຶ່ງ. ມູດຊີ ປ່ອຍໃຫ້ນາງມາຊົມລະຄອນຂອງພວກເຮົາ ແຕ່ນາງນຸ່ງເຄື່ອງຂີ້ຮ້າຍຫລາຍ ຄືສິ້ນກະໂປງບໍ່ພໍດີຄີງ, ເປັນເຄື່ອງ

ເກົ່າຮັບຕໍ່ມາຈາກຜູ້ອື່ນ, ເກີບໂບກບິດບ້ຽວບໍ່ພໍດີກັບຕີນ ແລະ ເສື້ອຄຸມນອກຕົວຫນຶ່ງສີຊ້ຳແບບຫລ້າສະໄຫມ. ເຄື່ອງນຸ່ງຫົ່ມເຫລົ່ານີ້ປົ່ງນບຸກຄະລິກຂອງນາງໃຫ້ຄ້າຍກັບຫຸ່ນເຟືອງແຕ່ຊ້ຳຜັດ ເຮັດໃຫ້ໃບຫນ້າມີສະເຫນວາດໃດວາດຫນຶ່ງ. ຢູ່ໃນວົງລ້ອມຂອງຜ້າແພສີແດງໆອ່າວຂາດສ້ອຍ ເປິເປື້ອນດ້ວຍຮອຍຈ້ຳດ່າງດາວນັ້ນ ໃບຫນ້າຂອງນາງແຈ່ມໃສສະຫວ່າງຍ້ອນດວງຕາທີ່ປ່ຽມລົ້ນໄປດ້ວຍຄວາມຮູ້ສຶກບໍລິສຸດເຊື່ອຫມັ້ນຂອງສາວນ້ອຍໄຮ້ດຽງສາ. ນາຕາຊາ ບໍ່ເຮັດຫນ້າຫຍູ້ຄິ້ວຢູ່ຈັກເທື່ອ, ບໍ່ດີ້ນດັ່ນກະດືກກະດື້ນ, ສະແດງຄວາມໂມໂຫ, ສົງໄສ, ຫລືທຸກອົກທຸກໃຈຈັກເທື່ອ. ນາງມີແຕ່ຟັງຢູ່ມິດໆຈົງຈັງເຄັ່ງຂຶມ ໃນເວລານີ້ເທົ່ານັ້ນກໍ່ສັງເກດໃຫ້ດີຈຶ່ງຈະເຫັນວ່າວົງຄິ້ວດົກດຳຂອງນາງສັ່ນຍິກໆຫນ້ອຍຫນຶ່ງ ຫລືບໍ່ນາງກໍຈະຍິ້ມຫນ້ອຍຫນຶ່ງຢ່າງຄ່ຽມຄົມລະມັດລະວັງ ເພີຍໃຫ້ເຫັນແຂ້ວເຫລັ້ມນ້ອຍໆຫນ້າຮັກຂອງນາງ.

ນາຕາຊາ ມາບີຄົມພ້ອມດ້ວຍຫມູ່ເພື່ອນແມ່ຍິງຂອງນາງສະເຫມີ, ທ່າມກາງຄວາມຄຶກຄະນອງຟົດສະນັ່ນຂອງພວກຫມູ່ນັ້ນນາງເປັນຈຸດເດັ່ນຢ່າງຈະແຈ້ງ ເພາະຄວາມງຽບສະຫງົບແບບທຳມະດາໄຮ້ດຽງສາ ແລະ ຄວາມເປັນຜູ້ມີອາລົມດີຂອງນາງນັ້ນເອງ.

ໂຊບິດ ໄປນັ່ງຢູ່ຄຽງຂ້າງນາງຢູ່ເທິງແປ້ນມ້າຫນ່ວຍຫນຶ່ງຢ່າງສະຫມ່ຳສະເຫມີ, ທ່າທີເປັນເກິງ ເຂີນໆ ຂອງຫມໍບໍ່ເຮັດໃຫ້ນາງຫວັ່ນໄຫວແມ່ນແຕ່ຫນ້ອຍດຽວ ແລະ ທັງບໍ່ກະທົບເຂົ້າເຖິງຈິດໃຈພາຍໃນຂອງນາງເລີຍ. ຂ້າພະເຈົ້າເອງບໍ່ຢາກເຊື່ອວ່າ ນາງສາວ

ນ້ອຍຄົນນີ້ອາດຈະມັກຮັກ ໂຊບິດ ແຕ່ພວກເດັກນ້ອຍພາກັນຮ້ອງ ຕອບເປັນສຽງດຽວກັນວ່າ:

-ແມ່ນໃຜເກາະ? ນາຕາຊາ ຫັ້ນຫວະ? ໃຫ້ມັນໂດດເຂົ້າກອງ ໄຟແທນຫມໍກໍຍັງໄດ້ນ່າ..., ບໍ່ມີລັ່ງເລຊໍ້າລະ!

ເວົ້າແທ້ແລ້ວ ໃນສະໄຫມນັ້ນພວກເຮົາບໍ່ມີເວລາເຫລືອພໍ ຈະ ເອົາໃຈໃສ່ໃນນິຍາຍຮັກຫມູ່ນີ້ດອກ. ວັນເວລາເຫລົ່ານັ້ນເລີ່ມຂຶ້ນ ພ້ອມໆກັບດວງຕາເວັນ ເຊິ່ງຕິກກືກລະຍະຍຸກປະຈຳປີຂອງມັນ ຄື ສ່ອງແສງຢູ່ຮອດມື້ລະ ໑໘ ຊົ່ວໂມງ. ແລ້ວ ແຊເຣີ ກໍເອົາແບບ ຢ່າງຕາເວັນ, ຫາວຽກໃຫ້ພວກເຮົາເຮັດ ຈົນເກືອບຫາຍາມຫວ່າງ ຫັນໃຈອີ່ມບໍ່ໄດ້ ແຕ່ພວກເຮົາຍັງຈື່ບໍ່ລືມວ່າພາກັນສະອຶ້ນສະອອນໃຈ ພຽງໃດນຳແຜນການຫວ່ານແນວປູກຂອງລາວ. ເວົ້າກັນຢ່າງເປັນ ທາງການແລ້ວ ມັນຫມາຍເຖິງການປູກພືດຫມູນວຽນໃສ່ດິນຕອນນີ້ ເປັນເວລາ ໕ ປີຕິດຕໍ່ກັນ ແຕ່ໃນພາກປະຕິບັດມັນຍິ່ງສັບສົນກວ່າ ນີ້ຫລາຍ. ແຊເຣີ ເກືອບບໍ່ຫວ່ານແນວພວກທັນຍາພືດເລີຍ, ລາວປູກເຂົ້າບະເລລະດູຫນາວແຕ່ ໆ ເຮັກຕາ, ນອກນັ້ນຢູ່ອ້ອມ ຂ້າງອ້ອມແອວກໍມີທົ່ງເຂົ້າໂອືດແດ່ ເຂົ້າບະເລແດ່, ນອກນີ້ລາວຍັງ ຈົ່ງຫມ້ອງນ້ອຍໆໄວ້ເປັນພິເສດ ເພື່ອທົດລອງປູກເຂົ້າໄຣຊະນິດພິ ເສດໄວ້, ລາວໄດ້ຄາດຄະເນວ່າ ຈະບໍ່ມີຊາວບ້ານຄົນໃດເຊື່ອວ່າ ນັ້ນແມ່ນເຂົ້າໄຣ, ແຕ່ພວກເຂົາຊິພາກັນ "ນ້ຳລາຍເຫີຍ" ແນ່ ໆ!

ແຕ່ໃນຂະນະທີ່ຄອງຄອຍນີ້ ແມ່ນພວກເຮົາເອງທີ່ນ້ຳລາຍ ເຫີຍ: ໃນສວນມີທັງມັນຝະລັ່ງ, ຫົວຜັກກາດຂາວ, ຫມາກແຕງ ຫວານ, ຜັກກະລ່ຳ, ຫມາກກົ່ວເກືອບທຸກປະເພດ ແຕ່ທັງຫມົດ

ເຫລົ່ານີ້ລ້ວນແຕ່ຕ່າງແບບຕ່າງແນວກັນຈົນຈຳແນກຍາກ. ພວກເດັກນ້ອຍພາກັນຊຸບຊິບວ່າ ແຊເອີ ໄດ້ນຳເອົາແນວ "ຜົນປະຕິວັດ" ເຂົ້າມາປູກໃນທົ່ງນາ.

-ລາວມີແຕ່ກະສັດ, ຈັກກະພັດ ລາຊີນີ ເຕັມໄປຫມົດ.

ຄວາມຈິງກໍເປັນແນວນີ້ແທ້, ແຊເອີ ຈັດແບ່ງຫນານປູກຂອງລາວ ຮົ້ວຮາວຊື່ ວັດແທກຢ່າງດີ, ແລ້ວສຽບຫລັກໄມ້ຕິດປ້າຍນ້ອຍໆເຮັດດ້ວຍໄມ້ແຜ່ນບາງໆໃສ່, ໃນປ້າຍລາວຂຽນບອກປະເພດແນວປູກ ແລະ ປະລິມານທີ່ປູກໃສ່ໄວ້. ເຊົ້າມື້ຫນຶ່ງ ເດັກນ້ອຍບີຄົນບາງຄົນ, ແນ່ນອນວ່າຕ້ອງແມ່ນພວກເຜົ່າໄລ່ການັ້ນແລ້ວ, ໄດ້ພາກັນເອົາປ້າຍຂອງພວກເຂົາມາສຽບໃສ່ກົງກັບປ້າຍຂອງ ແຊເອີ, ການເຮັດແບບນີ້ເຮັດໃຫ້ເຂົາໂມໂຫຫລາຍ, ແຊເອີ ສະເຫນີໃຫ້ໄຂກອງປະຊຸມສະພານາຍກອງ ແລ້ວສິ່ງທີ່ພວກເຮົາບໍ່ໄດ່ເຫັນກໍເກີດຂຶ້ນຄື ແຊເອີ ຮ້ອງກ້າກໆໃສ່ພວກເຮົາ:

-ແມ່ນພາກັນເຮັດເລື່ອງຂີ້ດຽດຕາຍໆແນວນີ້ເຮັດຫຍັງ? ຂ້ອຍເອີ້ນຊື່ພືດພັນຕ່າງໆ ຕາມທີ່ມັນເຄີຍຖືກເອີ້ນມາແລ້ວ. ກ້າຫາກວ່າພືດແນວນີ້ມີຊື່ວ່າ "ກະສັດ ອັນດາລູຊີ" ກໍຍ້ອນວ່າໃນທົ່ວໂລກເພິ່ນເອີ້ນມັນແນວນີ້, ຂ້ອຍບໍ່ຫ່ອນຊິສາມາດຕັ້ງຊື່ໃຫມ່ໃຫ້ມັນໄດ້. ເລື່ອງນີ້ບໍ່ຈົບເດີ້ ແມ່ນເລື່ອງຂອງອັນທະພານຂີ້ກ່ອຍ! ແມ່ນໃຜຄຶດອອກໄປໃສ່ຊື່ຫົວຜັກນີ້ວ່າ ນາຍພົນຫົວຜັກກາດຂາວ! ນາຍພົນຫມາກກ້ວຍຂຽວ? ແລ້ວນີ້ ຮ້ອຍເອກຫມາກໂມແລ້ວກະຮ້ອຍໂທຫມາກໂປມ?

ພວກນາຍກອງພາກັນຫົວ ບໍ່ຮູ້ວ່າຄວນວາງທ່າທີແນວໃດຕໍ່

ການຕໍ່ສູ້ທາງດ້ານຕັ້ງຊື່ພືດພັນຕ່າງໆແນວນີ້. ພວກເຂົາສັ້ຖາມກັນຢ່າງຈິງຈັງວ່າ:

- ແມ່ນໃຜກໍ່ເລື່ອງຕາຍໆແນວນີ້ຣ! ເບິ່ງດຸ ຫວ່າງກ່ອນພວກມັນເປັນຣອດກະສັດລາຊາ ມາບັດນີ້ໂລດໄດ້ເປັນຮ້ອຍເອກລ້າງ. ຟ້າເອີຍ ເປັນແນວນີ້ກໍຮ່າວມີ!...

ພວກເດັກນ້ອຍນັ້ນເຖິງວ່າຢ້ານ ເກງໃຈ ແຊເຣີ ຢູ່ ແຕ່ກໍອິດຫົວບໍ່ໄດ້. ຊີລັນຕີເຂົ້າໃຈດີເຖິງຄວາມຮ້າຍແຮງຂອງການຂັດແຍ່ງຈຶ່ງເວົ້າອອກມາເພື່ອຫລຸດຜ່ອນຄວາມເຄັ່ງຕຶງວ່າ:

- ເຫັນບໍ່ວ່າເປັນແນວໃດ ເປັນກະສັດທີ່ງົວສາມາດແຫ້ນກິນໄດ້ຢູ່ຈັ່ງຊີ້ກະຊີມີຫຍັງພິລຶກ ປ່ອຍໃຫ້ມັນເປັນຢູ່ແນວນີ້ລະ.

ກາລີນາ ອີວາໂນວິດ ຫັນໄປເຂົ້າຂ້າງ ແຊເຣີ ຄືກັນ.

- ແລ້ວພວກສູພາກັນເຮັດແນວນີ້ເຮັດຫຍັງລະ? ພວກສູຢາກສະແດງໂຕວ່າເປັນນັກປະຕິວັດຜູ້ຍິ່ງໃຫຍ່ຊັ້ນຫວະ? ພວກສູຄັນຕີນຄັນມືຊັ້ນຫວະທີ່ຊິໄດ້ເຮັດເສີກກັບພວກມັນນະ... ໄດ້ຕັດຄໍຕັດຫົວພວກມັນນະ? ໂຍ້ວ ແລ້ວນີ້ພວກສູພາກັນອຸກອັ່ງຫຍັງ? ຊິເອົາມີດໃຫ້ຜູ້ລະດວງດອກ ແລ້ວສູຊິໄປຕັດຫົວມັນຈົນເຫື່ອອາບຫນ້າອາບຫລັງຈັ່ງຊີສົມສູເນາະ!

ພວກເດັກນ້ອຍຮູ້ດີວ່າ ການຕັດໃບຫົວຜັກກາດຂາວນັ້ນເປັນວຽກຫນັກຫນ່ວງຊໍ່າໃດຈັ່ງຊັ້ນຈຶ່ງພາກັນຍອມຮັບຟັງຄຳຮ້າຍດ່າຂອງກາລີນາ ອີວາໂນວິດ ດ້ວຍຄວາມພໍໃຈຢູ່ເລີກໆ. ເປັນດັ່ງນີ້ແລ້ວກໍລະນີພິພາດເລື່ອງການນຳເອົາສິ່ງຝືນປະຕິວັດ ເຂົ້າມາໃນທົ່ງສວນຂອງພວກເຮົາກໍສິ້ນສຸດລົງ ແລະ ເມື່ອ ແຊເຣີ ນຳເອົາພຸ່ມກຸ

ຫລາບຈາກເຮືອນແກ້ວຈຳນວນ ໔໐໐ ກໍມາປູກໃສ່ຫນ້າເຮືອນຕຶກຂາວ ແລ້ວຂຽນປ້າຍຕິດໃສ່ວ່າ "ລາຊີນີຫົມະ" ຈຶ່ງບໍ່ມີໃຜຄັດຄ້ານຈັກຄົນ. ກາຣາບານົບ ພຽງແຕ່ເວົ້າ:

_ ເປັນລາຊີນີກະເປັນຊາ ອີ່ນ້ອຍເອີຍ... ໃຫ້ຫອມເປັນພໍ.

ຫົວຜັກກາດຂາວນັ້ນສ້າງຄວາມຫຍຸ້ງຍາກໃຫ້ພວກເຮົາຫລາຍກວ່າຫມູ່. ເວົ້າກັນຕາມຊື່ ມັນແມ່ນການປູກຝັງທີ່ຫນ້າຊັງກວ່າຫມູ່. ເວລາຫວ່ານນັ້ນງ່າຍດີຢູ່ດອກ ແຕ່ບາດຕໍ່ມານັ້ນດີ ຊິຕາຍເອົາຊື່ໆ. ພໍແຕ່ມັນຄ່ອຍໆພົ້ນຫນ້າດິນອອກມາແບບເຕື່ອຍຄ້ານ ແລະ ຊັກຊ້າ ເທົ່ານັ້ນກໍຕ້ອງຫລົກມັນແລ້ວ. ການຫລົກຫົວຜັກກາດຂາວຊຸດທຳອິດນັ້ນເປັນລະຄອນໂສກຕອນຫນຶ່ງຢ່າງແທ້ຈິງ ສຳລັບຜູ້ບໍ່ເຄີຍນັ້ນ, ຕົ້ນຜັກກາດອ່ອນບໍ່ແຕກຕ່າງຫຍັງກັບຫຍ້າລ້າງຢ່າງຫນຶ່ງ ຈັ່ງຊັ້ນ ແຊເອີ ຈຶ່ງຮຽກຮ້ອງເອົາແຕ່ເດັກນ້ອຍຮຸ່ນເກົ່າໄປເຮັດວຽກນີ້ ຈັ່ງຊັ້ນພວກນີ້ຈຶ່ງພາກັນເວົ້າວ່າ:

- ແມ່ນຫຍັງເກາະ... ຫລົກຫມາກອັນນີ້ອີກຫວະ? ມັນບໍ່ພໍແລ້ວຫວະອັນເຮົາຫລົກມື້ນີ້ນະ?

ການຫລົກຊຸດຫນຶ່ງຊຸດສອງສຳເລັດໄປແລ້ວ ຫມົດທຸກຄົນຄິດຝັນວ່າຈະໄດ້ເກັບຜັກກະລຳປີ, ຫມາກກ້ຽວ, ອີກບໍ່ດົນກໍຈະໄດ້ລົງມືກ່ຽວເພືອງ ແຕ່ແລ້ວໃນວັນອາທິດຫນຶ່ງແຊເອີ ກໍຂຽນຄຳສັ່ງອອກມາງ່າຍໆວ່າ: "໔໐ ແຮງງານເພື່ອຫລົກຫົວຜັກກາດ".

ແວກຊະເນັບ ເລຂາສະພາອ່ານຂໍ້ຄວາມນີ້ຕ່າງຫາກດ້ວຍຄວາມໂມໂຫ, ເຂົາເອົາກຳປັ້ນຟາດໃສ່ໂຕະ ແລະ ຮ້ອງຂຶ້ນວ່າ:

- ແມ່ນຫຍັງເກາະ? ຫົວຜັກກາດຂາວອີກຊັ້ນຫວະ? ພວກ

ເຮົາຍັງບໍ່ຫມົດກໍາຫນົດເວນກັບມັນອີກຊັ້ນຫວະນີ້? ອາດຈິແມ່ນຄໍາສັ່ງເກົ່າທີ່ເຈົ້າຫລົງມາສັ່ງດີ?

-ບໍ່, ແມ່ນຄໍາສັ່ງໃຫມ່; ແຊເອີ ຕອບຢ່າງສະຫງົບເສີຍ, ໔໐ ແຮງງານ ແລະ ເອົາຜູ້ເກົ່າຫມົດເດີ!

ມາເຣຍ ກົງດຣາແຕັບນາ ເຊິ່ງມາພັກຮ້ອນຢູ່ເຮືອນຕູບໄມ້ຢູ່ບໍ່ໄກຈາກພວກເຮົາກໍມີຫນ້າຢູ່ສະພາຄືກັນ. ແກ້ມບ່ອງທັງສອງເບື້ອງຂອງນາງ ຄືຈັ່ງວ່າຕິດຕາມອາການໂມໂຫໂຫໂສຂອງພວກເດັກນ້ອຍດ້ວຍອາລົມຕະຫລົກ.

-ຈັ່ງແມ່ນພວກເຈົ້າຂີ້ຄ້ານເນາະ! ທັງທີ່ພວກເຈົ້າມັກກິນແກງຫົວຜັກກາດຢູ່ບໍ່ແມ່ນຫວະ!

ເຊມີຍົງ ກົ້ມຫົວ ແລະ ຕອບຢ່າງອຶດກັ້ນວ່າ:

-ບັນຫາທີ່ຫນຶ່ງລະແມ່ນຫົວຜັກກາດສໍາລັບງົວ... ຢ່າຫົວມັນ! ອັນທີ່ສອງ... ເຊີນເຈົ້າໄປສວນກັບພວກເຮົາ ແລ້ວລອງຫລິກຊ່ອຍພວກເຮົາເບິ່ງດີບໍ່? ຖ້າວ່າເຈົ້າສາມາດເຮັດວຽກນີ້ກັບພວກເຮົາໄດ້ຮອດມື້ຫນຶ່ງແລ້ວຂ້ອຍສາບານວ່າ ຈະຕັ້ງກອງພິເສດສໍາລັບຫລິກຫົວອັບປີນີ້ໃຫ້ແປນກັງງອອກຈາກເດີ່ນເລີຍລະ!

ມາເຣຍ ກົງດຣາແຕັບນາ ຍິ້ມໃຫ້ຂ້າພະເຈົ້າແບບຄືນເຫັນໃຈກັນທັງງຶກຫົວໄປທາງເດັກນ້ອຍ:

-ເບິ່ງພວກເຂົາແມ້!

ມາເຣຍ ກົງດຣາແຕັບນາ ກໍາລັງຢູ່ໃນລະຫວ່າງການພັກຜ່ອນ, ໃນຕອນກາງເວັນນາງມາຢູ່ກັບພວກເຮົາຫມົດມື້. ແຕ່ໃນຕອນກາງເວັນນີ້ຄືນຊ້າງງບເຫງົາ ເພາະພວກເດັກນ້ອຍໄດ້ກັບມານີ້ຄືນກໍສະ

ເພາະແຕ່ເພື່ອກິນເຂົ້າເພນເທົ່ານັ້ນ, ພວກເຂົາມຸ່ມມອມຄົບຄົວ ເຕັມໄປດ້ວຍຝຸ່ນ ຫນ້າແຫລ້ຍ້ອນແສງແດດ ພໍແຕ່ໂຍນຊວ້ານເຂົ້າ ມ້ຽນແຈຫ້ອງຂອງກູດລາຕີ ແລ້ວພວກເຂົາກໍໂດດເຕັ້ນອອກມາພໍ ປານກອງທະຫານມ້າຂອງ ບູດອນນີ, ທັງແກ້ເຊືອກຫົວສົ້ງຂາສັ້ນ ທັງແລ່ນມາເນີນຝັ່ງກວ້າງ ຈາກນັ້ນຫນ້ານ້ຳຂອງຫ້ວຍໂກໂລມາກ ຈຶ່ງພິດພອງຂຶ້ນຍ້ອນການລອຍການມຸດຂອງພວກເຂົາ, ເບິ່ງສຽງ ຮ້ອງ ການຫລິ້ນເກມຕ່າງໆ ການຍອກລໍ້ຕ່າງໆ ພິດບັນນອງ. ຢູ່ ໃນພຸ່ມໄມ້ເທິງຝັ່ງ ພວກເດັກນ້ອຍແມ່ຍິງຮ້ອງມາໃສ່ວ່າ:

-ເຮີ້ຍ... ພວກເຈົ້າຫັ້ນນ່າ ພໍອອກແລ້ວເດີ... ແມ່ນຜຽນ ພວກເຮົາແລ້ວ!

ເວນປະຈໍາວັນຜູ້ມີໃບຫນ້າຫຍຸ້ງກັງວົນ ບິນຝັ່ງຂຶ້ນມາ ໃນຂະນະ ພວກອື່ນ ໆ ພາກັນສຸບສົ້ງຂາສັ້ນອ່າວອຸ່ນຮ້ອນໃສ່ຮ່າງຄີງທີ່ປຽກຊຸ່ມ ແລະ ຕາມໄຫລ່ກໍຍັງມີຍອດນ້ຳໃສເກາະຕິດຢູ່ ຈາກນັ້ນຈຶ່ງພາກັນ ຍ່າງມຸ່ງຫນ້າໄປໂຕະອາຫານທີ່ແຕ່ງໄວ້ຮຽບຮ້ອຍ ຢູ່ອ້ອມນ້ຳພຸກາງ ສວນເກົ່າ. ມາເອຍ ກົງດຣາແຕັບນາ ຄອງພວກເຂົາຢູ່ຫັ້ນດົນ ແລ້ວ. ນາງເປັນບຸກຄົນດຽວໃນນິຄົມທີ່ຮັກສາຜິວໃຫ້ຂາວຜ່ອງຄື ຜີວມະນຸດໄວ້ໄດ້ ແລະ ລອບພິມກໍບໍ່ຖືກແສງແດດແຜດເຜົາທໍາ ລາຍ. ເບິ່ງແລ້ວຄືວ່າ ຢູ່ໃນແກວນີ້ນາງເປັນຜູ້ດຽວທີ່ເອົາໃຈໃສ່ ການແຕ່ງເພດຢ່າງຈິງຈັງ ຈັ່ງຊັ້ນຈຶ່ງບໍ່ພົ້ນຈາກການສັງເກດຂອງ ກາ ລີນາ ອີວາໂນວົດ ໄປໄດ້.

-ເປັນແມ່ຍິງຈົບສົມຄວນເດີ... ເຈົ້າເຫັນຕິ ແຕ່ມາເສຍເວລາ ຢູ່ນີ້ລ້າງດອກ... ເຈົ້າຫັ້ນເຮັດບໍ່ຖືກດອກເດີທີ່ໄປເບິ່ງນາງແຕ່ຕາມ

ທິດສະດີນັ້ນນ່າ, ອານໂຕນ ເຊມີອໂນວິດ ເອີຍ, ນາງເບິ່ງເຈົ້າ ໃນການະສຸພາບບຸລຸດເດີ້ ແຕ່ເຈົ້ານັ້ນນ່າ ໂລດບໍ່ເອົາໃຈໃສ່ນາງຈັກ ດີ້ ພໍປານເບິ່ງຊາວນາຮົ່ງເອົາຊື່ ໆ.

- ເຈົ້າບໍ່ກະດຽມປາກແດ່ຫວະ? ຂ້າພະເຈົ້າຮ້າຍລາວ, ອັນຢູ່ ນີຄືມເຮົານີ້ເກາະ ມັນກໍຍັງຂາດແຕ່ເລື່ອງນີ້ເລື່ອງດຽວ... ຄືຂ້ອຍມີ ຄວາມຮັກນີ້ລະ.

- ເອີ້ນ່າ...! ກາລີນາ ອີວາໂນວິດ ເຮັດສຽງຫມີບຂຶ້ນດັງ ທັງ ດູດກອກເຂົ້າແຮງໆ - ຈື່ຄວາມຂ້ອຍເວົ້າເດີ້... ໃນຊີວິດນີ້ ເຈົ້າຊິ ໄດ້ຢູ່ເປັນໂສດຕະຫລອດໄປດອກ, ລະວັງຕົວນັ້ນເທາະ...

ຂ້າພະເຈົ້າບໍ່ມີເວລາພຽງພໍທີ່ຈະສຶກສາວິໃຈທິດສະດີ ແລະ ພາກປະຕິບັດຂອງ ມາເຣຍ ກົງດຣາແຕັບນາ ດອກ, ອາດເປັນ ຍ້ອນແນວນີ້ເອງກໍບໍ່ຮູ້ ນາງຈຶ່ງເຊື້ອເຊີນຂ້າພະເຈົ້າໄປຮ່ວມດື່ມນ້ຳ ຊາເລື້ອຍ ແລະ ມີທ່າທີຄຽດຂຶ້ນເມື່ອຂ້າພະເຈົ້າຢືນຢັນກັບນາງຢ່າງ ສຸພາບວ່າ:

- ເວົ້າແທ້ໃດ ຂ້ອຍບໍ່ມັກນ້ຳຊາເລີຍ.

ຄັ້ງຫນຶ່ງຫລັງກິນອາຫານແລ້ວ, ພວກເດັກນ້ອຍແຍກໄປຄົນ ລະທິດລະທາງເພື່ອໄປເຮັດວຽກ ພວກເຮົາທັງສອງພາກັນນັ່ງໂຈ່ຢູ່ ກັບໂຕະດິນເຕີບ, ນາງເວົ້າກັບຂ້າພະເຈົ້າງ່າຍໆ ແບບມິດສະຫາຍ ວ່າ:

- ຟັງນີ້ເດີ້... ອ້າຍ ດີໂອແຊນ* ເຊມີອໂນວິດ! ກ້າເຈົ້າບໍ່ໄປ

---

* ດີໂອແຊນ: ນັກປັດຊະຍາ ກຣີກ ສະໄຫມບູຮານ ຊຶ່ງຕາມ ນິທານເລົ່າໄວ້ວ່າ ເປັນຜູ້ບໍ່ມັກພົວພັນກັບສັງຄົມ.

ເຮືອນຂ້ອຍແລ້ວນີ້ ຂ້ອຍຊິຖືວ່າເຈົ້າເປັນຄົນບໍ່ມີມາລະຍາດໂລດລະ.

- ແລ້ວຢູ່ເຮືອນເຈົ້າມີຫຍັງລະ? ນ້ຳຊາຫວະ?

- ມີໄອສະຄຣີມ, ເຈົ້າໄດ້ຍິນບໍ່ ໄອສະຄຣີມ ຂ້ອຍເຮັດເອງ ເພື່ອເຈົ້າເປັນພິເສດ!

- ຈັ່ງຊັ້ນພໍໄດ້! ຂ້າພະເຈົ້າກົ້ນໃຈບອກນາງ, ຈັກໂມງຂ້ອຍຈຶ່ງຊິໄປກິນໄອສະຄຣີມນີ້ໄດ້?

- ແປດໂມງ.

- ແຕ່ຕອນ ໘ ໂມງເຄິ່ງຂ້ອຍຕ້ອງຮັບລາຍງານຈາກພວກນາຍກອງ.

- ໂອະ ອັນນີ້ຈັ່ງແມ່ນຜູ້ຮັບເຄາະຂອງສຶກສາສາດເນາະ, ເອົາລະຊັ້ນ... ໘ ໂມງກໍໄດ້.

ແຕ່ພໍຮອດເກົ້າໂມງຫລັງຈາກຮັບລາຍງານແລ້ວ, ໃນຂະນະທີ່ຂ້າພະເຈົ້ານັ່ງຈົມຢູ່ໃນຫ້ອງການ ຄຶດເສຍໃຈແດ່ທີ່ຈຳເປັນຕ້ອງໄປກິນໄອສະຄຣີມ ແລະ ບໍ່ມີເວລາຮອດໂກນຫນວດຢູ່ນັ້ນ ມີເຕຍ ເຊເວລີ ກໍແລ່ນມາຫາທັງຮ້ອງວ່າ:

- ອານໂຕນ ເຊມີວໂນວິດ... ໄວແດ່, ໄວແດ່!...

- ແມ່ນຫຍັງ?

- ພວກເຂົາເອົາໂຕ ໂຊບິດ ກັບ ນາຕາຊາ ມາ. ພໍ່ເກົ້ານັ້ນ... ລາວຊື່ວ່າ... ເອີເກົາ ມູດຊີ ກາໂປວິດ ຫັ້ນນ່າ...

- ພວກເຂົາຢູ່ໃສ?

- ຢູ່ໃນສວນ.

ຂ້າພະເຈົ້າແລ່ນເຂົ້າສວນ, ນາຕາຊາ ນັ່ງຢູ່ເທິງແປ້ນມ້າກາງ

ພຸ່ມດອກລີລາ, ທ່າທາງຂອງນາງຫວາດກົວຢ່າງເຫັນໄດ້ຄັກ. ພວກເດັກນ້ອຍແມ່ຍິງກັບພວກພະນັກງານຍິງນຶຄມຫຸ້ມລ້ອມນາງຢູ່ ພວກເດັກນ້ອຍຜູ້ຊາຍຍືນຢູ່ເປັນຈຸ້ມໆຢູ່ຕາມທາງຍ່າງ, ເວົ້າຈາຊຸບຊິມແນວໃດແນວຫນຶ່ງ ສີຫນ້າເຄັ່ງຂຶມ. ກາຣາບານົບ ສາທະຍາຍຍືດຍາວວ່າ:

-ດີແລ້ວລະ, ເສຍດາຍແຕ່ພວກເຂົາບໍ່ຂ້າມັນຫັ້ນດີ... ເກົ້າງູພິດນີ້...

ຊາໂດຣອບ ເວົ້າອອຍ ໂຊບົດ ເຊິ່ງໂຕສັ່ນຍ້ອກໆ ແລະ ຮ້ອງໄຫ້ຢູ່ວ່າ:

-ບໍ່ມີຫຍັງຮ້າຍແຮງນ່າ... ຫັ້ນເດ້ ອານໂຕນ ເຊມີວໂນວິດມາແລ້ວລາວຊິຈັດການດອກ.

ພວກເຂົາຍາດກັນເລົ່າເລື່ອງສູ່ຂ້າພະເຈົ້າຟັງ. ໂດຍອ້າງເຫດຜົນວ່າ ຍ້ອນນາຕາຊາ ອາດຈະລືມຕາກຜ້າ ມູດຊີ ກາໂປວິດ ກໍເລີຍຕົກລົງວ່າຊິສັ່ງສອນນາງຄັກໆຈັກບາດ. ເມື່ອໂຊບົດໄປຮອດນັ້ນ ລາວຫັນໄດ້ເອົາເຊືອກມ້າຟາດນາງສອງບາດແລ້ວ. ສ່ວນວ່າທ້າວນີ້ຫັນເຮັດແນວໃດແດ່ນັ້ນກໍເປັນການຍາກທີ່ຈະເວົ້າໄດ້ຢ່າງຖືກຕ້ອງ ເພາະໂຊບົດ ນັ້ນອັດປາກມິດເລີຍ ແຕ່ສຽງຮ້ອງເຫລີໄຫລຂອງມູດຊີ ກາໂປວິດ ນັ້ນເອງເຮັດໃຫ້ໄທເຮືອນໃກ້ແລ່ນໄປ ແລະພວກເດັກນ້ອຍຈຳນວນຫນຶ່ງກໍໄປນຳ. ພວກເຂົາພົບວ່າຜູ້ເຈົ້າຂອງເຮືອນຫມູບຊູບຟູບຢູ່ແຈຫ້ອງເລືອດກ້ວມຕົວ. ລູກຊາຍຄົນຫນຶ່ງຂອງລາວກໍຢູ່ໃນສະພາບບໍ່ຕ່າງກັນເທົ່າໃດ ສ່ວນ ໂຊບົດ ຢືນສະຫງ່າຢູ່ກາງຫ້ອງ "ຄາງຣົມງພໍປານຫມາບ້າ" ກຳເວົ້າຕາມສຳນວນ

ຂອງ ກາຣາບານິບ. ຕໍ່ມາເພິ່ນຈຶ່ງພົບ ນາຕາຊາ ຢູ່ນຳໄທເຮືອນໃກ້.

ອຸບັດເຫດຕ່າງໆເຫລົ່ານີ້ ເຮັດໃຫ້ມີການເຈລະຈາຕົກລົງກັນ ລະຫວ່າງພວກເດັກນ້ອຍນິຄົມກັບປະຊາຊົນຢູ່ໃນໂຮງນາອ້ອມແອ້ມ. ຮ່ອງຮອຍຫລາຍແນວພາໃຫ້ເຊື່ອວ່າ ມີການໃຊ້ກຳປັ້ນ ແລະ ອາວຸດອື່ນໆ ເພື່ອປ້ອງກັນຕົວໃນລະຫວ່າງການເຈລະຈາເຫລົ່ານີ້ແຕ່ພວກເດັກນ້ອຍເຮົາບໍ່ເວົ້າຫຍັງອອກມາເລີຍ, ການເລົ່າເລື່ອງຂອງພວກເຂົາທັງອ່ອນຫວານ ທັງໃຈເຢັນ:

-ບໍ່ເດ້... ພວກເຮົາບໍ່ໄດ້ເຮັດຫຍັງດອກ... ພວກເຮົາ... ເອີ້ ຄືວ່ານັ້ນລະ... ໄດ້ພາກັນໄປຊ່ອຍໂລດ ບາດແລ້ວ ກາຣາບານິບ ມັນເວົ້າກັບອີ່ນາງນັ້ນວ່າ "ໄປ ນາຕາຊາ, ໄປຢູ່ນິຄົມກັບພວກເຮົາ, ບໍ່ຕ້ອງຢ້ານຫຍັງດອກ, ຢູ່ພຸ້ນມີຄົນໃຈບຸນສຸນທານບໍ່ອຶດ ເຈົ້າຮູ້ບໍ່. ແລ້ວພວກເພິ່ນຫາກຊິຈັດການເລື່ອງນີ້ເອງດອກ".

ຂ້າພະເຈົ້າເຊື້ອເຊີນເອົາຜູ້ຮ່ວມໃນລະຄອນບົດໂສກຕອນນີ້ເຂົ້າມາໃນຫ້ອງການ.

ນາຕາຊາ ສັງເກດເບິ່ງຜູ້ທີ່ຫຸ້ມລ້ອມປະເພດໃຫມ່ນີ້ດ້ວຍດວງຕາທີ່ກ້ວາງແຝງຄວາມຫນັກຫນ່ວງໃຈ, ຮ່ອງຮອຍຄວາມຫວາດກົວປາກົດອອກມາພໍໃຫ້ຮູ້ສຶກໄດ້ດ້ວຍຮີມສົບທີ່ສັ່ນຍິກໆ ແລະ ນ້ຳຕາເມັດໃຫຍ່ໆເມັດຫນຶ່ງກິ້ງຄ່ອຍລົງຕາມຮ່ອງແກ້ມຂອງນາງ ເທົ່ານັ້ນ.

-ຊິເຮັດແນວໃດບັດນີ້? ກາຣາບານິບ ເວົ້າຂຶ້ນແບບຄົນໃຈຮ້ອນ, - ຈັ່ງໃດກໍຄວນຈັດການໃຫ້ຮຽບຮ້ອຍສາ.

-ເອີ້... ແມ່ນແລ້ວ! ຂ້າພະເຈົ້າເຫັນດີນຳ.

-ແຕ່ງດອງໃຫ້ພວກເຂົາສາ, ບູຣຸນ ສະເຫນີຂຶ້ນ.

ຂ້າພະເຈົ້າຕອບວ່າ:

-ສຳລັບເລື່ອງນີ້ຍັງພໍມີເວລາຢູ່ດອກ, ບໍ່ຕ້ອງຟ້າວກໍໄດ້ ແຕ່ພວກເຮົາມີສິດຮັບເອົາ ນາຕາຊາ ໄວ້ນີ້ຄືນ ບໍ່ມີໃຜຄັດຄ້ານເນາະ? ຄ່ອຍໆແດ່ ຢ່າຊຸບິນຫລາຍ, ພວກເຮົາມີຫ້ອງສຳລັບນາງແລ້ວ, ໂກເລຍ ມື້ອື່ນຈັດນາງເຂົ້າຢູ່ກອງທີ່ ໕ ເດີ້.

-ເຈົ້າ! ໂກເລຍ ຮັບຄວາມ,

ໃນທັນໃດນັ້ນ ນາຕາຊາ ກໍແກ້ຜ້າມັດພົມພືນຂາດເກົ່າຂອງນາງອອກ ດວງຕາທັງຄູ່ຂອງນາງລຸກຮຸ່ງວາບປານກ້ອນຖ່ານແດງໆຖືກລົມເປົ່າ, ນາງຫຍັບເຂົ້າມາຫາຂ້າພະເຈົ້າ, ທັງຫົວດ້ວຍຄວາມເບີກບານບໍ່ຕ່າງຫຍັງກັບເດັກນ້ອຍໆ:

-ເປັນໄປໄດ້ແທ້ຫວະ? ຂ້ອຍມາຢູ່ນີ້ຄືນໄດ້ຫວະ? ໂອ໋... ຂອບໃຈ... ຂອບໃຈ ອາວຫລາຍ ໆ...

ພວກເດັກນ້ອຍພາກັນຫົວຂຶ້ນໂຄບໆ ເພື່ອປິດບັງຄວາມຕື່ນເຕັ້ນຂອງພວກເຂົາເອງ ກາຣາບານົບ ເຕັ້ນທັບພື້ນຫ້ອງ:

-ງ່າຍໆຈັ່ງຊີ້ຫວະ... ງ່າຍເອົາແທ້ເອົາວ່າ... ຟ້າເອີຍເຮົາສິງຄິດບໍ່ອອກມາຢູ່ນີ້ຄືນ... ອ່າດີແລ້ວ... ລອງເບິ່ງບັດນີ້ ໃຜຊິແຕະຕ້ອງສະມາຊິກນີ້ຄືນໄດ້!

ພວກເດັກນ້ອຍແມ່ຍິງພາກັນມາລາກແກ່ເອົາ ນາຕາຊາ ເມືອຫໍພັກນຳພວກເຂົາ ສ່ວນພວກຜູ້ຊາຍຍັງຄົງໂອ້ລົມກັນເຮັດສຽງດັງໆ

ອີກຕໍ່ໄປ. ໂຊບິດ ນັ່ງຢູ່ຕໍ່ໜ້າຂ້າພະເຈົ້າ, ມັນກ່າວຂອບໃຈຂ້າພະເຈົ້າວ່າ:

-ຂ້ອຍບໍ່ຄິດຈັກດີ້ວ່າ... ເອີ້ຊິເຮັດແນວນີ້.,. ຂອບໃຈທີ່ເຈົ້າເອື້ອມມືມາປົກປ້ອງແມ່ຍິງໜ້າສົງສານຄົນໜຶ່ງ ແລະ... ສ່ວນເລື່ອງແຕ່ງດອງນັ້ນ ແລ້ວຈຶ່ງວ່າກັນ...

ພວກເຮົາຢູ່ລົມກັນກ່ຽວກັບເຫດການນີ້ຈົນເດິກດື່ນ. ພວກເດັກນ້ອຍພັດປ່ຽນກັນເລົ່າເລື່ອງທຳນອງດຽວກັນນີ້ ຫລາຍເລື່ອງ, ຊີລັນຕີ ສະເຫນີທັດສະນະຂອງລາວແດ່, ພວກເຂົາພາ ນາຕາຊາ ອອກມາໃຫ້ຂ້າພະເຈົ້າເບິ່ງ ເມື່ອນາງໃສ່ຊຸດນັກຮຽນທີຄົມແລ້ວ ແລະ ນາງຄົນນີ້ກໍບໍ່ມີວາດຊາວ່າຈະເປັນຍິງສາວມີຊູ້ຮັກຈັກໜ້ອຍນອກຈາກເປັນສາວນ້ອຍຜູ້ນີ້ມນວນຄົນໜຶ່ງ. ກາລິນາ ອີວາໂນວິດເປັນຜູ້ມາເຮັດໃຫ້ທຸກຢ່າງຢຸຕິລົງ ໂດຍເວົ້າສະຫລຸບຄືນເກິງເຫດການແລງນີ້ວ່າ:

-ຢ່າພາກັນວຸ່ນວາຍພິລຶກພິລັ້ນເລື່ອງໜູ່ນີ້ຫລາຍ, ຕາບໃດທີ່ພວກເຮົາບໍ່ໄດ້ຕັດຫົວມັນກໍ່ມ ມັນກໍບໍ່ຕາຍລະ, ທຸກຢ່າງຮຽບຮ້ອຍໄປແລ້ວ. ໄປ໋, ໄປຢ່າງຫລີ້ນອ້ອມທົ່ງພຸ້ນດຸ. ແລ້ວເຈົ້າຫາກຊິເຫັນເອງວ່າ ພວກຜາກນີ້ມັນຄູນເພື່ອງຂຶ້ນແນວໃດ; ບາດພວກເຂົາລົງໄປນອນໃນໂລງເດີ້ ກໍໃຫ້ກືກຄູນໄວ້ແບບນີ້ເດີ້!

ເມື່ອພວກເຮົາພາກັນຍ່າງອອກໄປທາງທົ່ງນັ້ນ ມັນເປັນເວລາເລີຍທ່ຽງຄືນໄປແລ້ວ. ລາຕີອັນອົບອຸ່ນ ແລະ ງຽບສະຫງັດມິດພັງ ກາລິນາ ອີວາໂນວິດ ເລົ່າເລື່ອງຢ່າງຕັ້ງໃຈ. ຕົ້ນໄຮໃຫຍ່ຍືນສະຫງ່າໜ້າເກງຂາມ, ຈຶ່ງຮັກພັກດີຕໍ່ຄວາມມີລະບຽບ ຮັກສາກັນ

ແກວຢືນຍາມຮຽງກັນ. ພວກມັນເອງກໍຄົງຄິດເຖິງອັນໃດອັນໜຶ່ງຄື ກັນບາງທີພວກມັນອາດຈະແປກໃຈຕໍ່ຄວາມປ່ຽນແປງທີ່ເກີດຂຶ້ນໃນ ອ້ອມຮອບຕົວເຮົາ ເພິ່ນປູກຝັງມັນໃສ່ນີ້ ເພື່ອເຝົ້າແຍງເຄຫາອາ ຄານ ແຕຣບແກ ແຕ່ບັດນີ້ພາລະໜ້າທີ່ຂອງພວກມັນແມ່ນເຝົ້າ ແຍງເບິ່ງນິຄົມ ມາກຊິມ ກັອກກີ.

ຢູ່ກ້ອງກຸ່ມຕົ້ນໄມ້ອ່າວທ່າງໆໝູ່ກຸ່ມໜຶ່ງ, ແມ່ນເຮືອນພັກຂອງ ມາເຣຍ ກົງດຣາແຕັບນາ, ປ່ອງຢ້ຽມເຮືອນໄຂອອກມາທາງພວກ ເຮົາ, ໃນທັນໃດນັ້ນປ່ອງຢ້ຽມບານໜຶ່ງກໍໄຂແງ້ມອອກຄ່ອຍໆ ຊາຍ ຄົນໜຶ່ງໂດດອອກມາ, ມັນທຳທ່າວ່າຈະມຸ່ງໜ້າມາທາງພວກເຮົາ ແຕ່ແລ້ວຊ້ຳຢຸດ ແລະ ໂດດເຂົ້າປ່າໄປເລີຍ. ກາລີນາ ອີວາໂນວິດ ຢຸດເລົ່າເລື່ອງການອົບພະຍົບຈາກ ມຽກໂກໂຣດ ສະໄໝປີ ໑໙໑໘ ແລ້ວເວົ້າສຽງເບີບໆວ່າ:

-ນັ້ນແມ່ນບັກຜາກ ກາຣາບານົບ ຕວ່າທັ້ນ. ບັກໝໍນີ້ເຈົ້າ ເບິ່ງຕີ ມັນບໍ່ສົນນຳເລື່ອງທິດສະດີໃດ່ເດີ້ ມັນເຮັດຕົວຈິງໂລດ. ສ່ວນເຈົ້າທັ້ນນ່າ... ມີການສຶກສາດາຍດອກ... ແຕ່ຊ້ຳຈິໄດ້ເປັນ ໂສດໂດດດ່ຽວດອກ.

ບົດທີ ໗

ສະມາຊິກໃໝ່

ມູດຊີ ກາໂປວິດ ມານິຄົມ ພວກເຮົາຄຶດວ່າລາວຄົງມາຍື່ນ ຟ້ອງຄະດີກໍລະນີທີ່ໂຊບິດກະທຳການຢ່າງເສລີໂພດໃນເວລາໂມໂຫ ຮ້າຍຄືໃຊ້ກຳລັງກັບຫົວຂອງລາວ. ເບິ່ງບາດນີ້ໜ້າຜາກຂອງລາວກໍ

ມີຜົນພັນແຜຢູ່ແທ້ ແລະ ລາວກໍບໍ່ປາກເວົ້າຄືກັບລາວຍັງເປັນທ້າວ ມູດຊີ ກາໂປວິດ ແລ້ວ ແຕ່ອອກສຽງຟ່າວໆຄືນິກຍາງຫັນໃຈຫອບ ໃກ້ຈະຂາດໃຈ. ກ່ຽວກັບບັນຫາທີ່ພວກເຮົາວິຕົກກັງວົນນັ້ນ ລາວ ຊ້ຳສະແດງວ່າເປັນຜູ້ຮັກຫອມຄວາມສະຫງົບສຸກ ແລະ ເປັນຜູ້ເຕັມ ໄປດ້ວຍເມດຕາຈິດຂອງຊາວຄຣິດ:

-ບໍ່ດອກ, ຂ້ອຍບໍ່ໄດ້ມາຍ້ອນເລື່ອງອື່ນໆນ້ອຍນັ້ນດອກ ແຕ່ມາຍ້ອນເລື່ອງອື່ນພຸ້ນ. ໂອ້ຍ ແມ່ນຂ້ອຍຊິມາຫາແນວຜິດແນວ ຖືກອີ່ຫຍັງກັບຫມວດເຈົ້າເດ້, ຊິໄດ້ຫຍັງຕື່ມ...? ພະເຈົ້າເອີຍ... ເຊົາໆ ສາເລື່ອງນັ້ນນ່າ... ຂ້ອຍມານີ້ແມ່ນເລື່ອງໂຮງສີພຸ້ນນ່າ, ຕາງ ຫນ້າສະພາໂຊວຽດທ້ອງຖິ່ນ... ເລື່ອງຫນ້າສົນໃຈໃດ໋...

ໂກວານເຮັດຄິ້ວສົນຈັ້ງຫນ້າ ມູດຊີ ກາໂປວິດ:

-ກ່ຽວກັບໂຮງສີຊັ້ນຫວາ?

-ກືກຕ້ອງແລ້ວ, ພວກເຈົ້າກຳລັງດຳເນີນການເພື່ອຊິໃຫ້ໄດ້ ເອົາໂຮງສີນີ້ ສ່ວນວ່າທາງສະພາໂຊວຽດບ້ານກໍຊ້ຳເຮັດຄຳຮ້ອງອັນ ຫນຶ່ງຄືກັນ, ຂ້ອຍໂລດຄຶດແນວນີ້, ພວກເຈົ້າເອງກໍແມ່ນອຳນາດ ການປົກຄອງໂຊວຽດຫນຶ່ງ ແລະ ສະພາໂຊວຽດບ້ານ ກໍແມ່ນອຳ ນາດການປົກຄອງໂຊວຽດຄືກັນ ຈັ່ງຊັ້ນ ມັນຈຶ່ງເປັນໄປບໍ່ໄດ້ທີ່ຈະ ປ່ອຍໃຫ້ພວກເຈົ້າເປັນຝ່າຍຫນຶ່ງ ແລະ ພວກເຮົາເປັນອີກຝ່າຍ ຫນຶ່ງ...

-ອ່າ... ແມ່ນແລ້ວ, ໂກວານ ອຸທານແບບເຍີ້ຍໆ.

ຈັ່ງຊັ້ນ ສຳລັບນິຄົມພວກເຮົາ, ລະຍະນີ້ຈຶ່ງແມ່ນບັນເຈລະຈາ ແບບການຫຼຸດກັນລະຍະສັ້ນໆຄັ້ງຫນຶ່ງ. ຂ້າພະເຈົ້າຂົນຂວາຍ ໂກ

ວານ ກັບເດັກນ້ອຍອື່ນໆ ໃຫ້ສອນວິນຍານນັກການທູດ ແລະ ຜູກ ກາລະວັດຂາວຕາມແບບຄືນປະເພດນີ້, ຈຶ່ງຊື່ນທັງ ລູກາ ເຊມິວ ໂນວິດ ທັງ ມູດຊີ ກາໂປວິດ ຈຶ່ງສາມາດປາກົດຕົວບົນພື້ນແຜ່ນ ດິນຂອງນິຄົມໂດຍບໍ່ມີອັນຕະລາຍຫຍັງໃນລະຍະຫນຶ່ງ.

ໃນເບື້ອງນັ້ນ ບັນຫາການຊອກຊື້ມ້າເປັນເລື່ອງຫນຶ່ງຊຶ່ງຊາວນິ ຄົມທັງຫມົດກັງວົນ. ມ້າແລ່ນຊ່ຳຂອງພວກເຮົາເກືອບເກົ່າແກ່ລົງຢ່າງທັນ ຕາເຫັນ, ມ້າບັກແດງເອງກໍເລີ່ມມີຫນວດເຄົາຍາວງອກອອກມາ ສ່ວນມ້າບັກນ້ອຍນັ້ນ ສະພານາຍກອງໄດ້ຈັດມັນເຂົ້າເປັນປະເພດ ພິການ ແລະ ຈັດແບ່ງອັດຕາເບ້ຍລ້ຽງໄວ້ໃຫ້ມັນ ມັນຕ້ອງດຳລົງຊີ ວິດຢູ່ໃນຄອກຈົນຮອດວາລະສຸດທ້າຍແຫ່ງຊີວິດຂອງມັນ ພ້ອມ ດ້ວຍອັດຕາເຂົ້າໂອັດຂອງມັນ. ມັນຈະຖືກນຳໄປທຽມກວຽນກໍແຕ່ ເມື່ອມີຄຳອະນຸຍາດຈາກຂ້າພະເຈົ້າເປັນການສ່ວນໂຕເທົ່ານັ້ນ. ແຊ ເຣີຜູ້ມີຄວາມຮູ້ສຶກຫມິ່ນປະຫມາດຕໍ່ ອີໂຈນ, ອີແມຣີ ແລະ ບັກ ນິນລັງ ໄດ້ເວົ້າວ່າ:

- ໄຮ່ສວນໃຫ້ຜົນດີກໍຕໍ່ເມື່ອມັນມີມ້າດີເທົ່ານັ້ນ, ແຕ່ໃນເມື່ອວ່າ ມ້າເອງກໍບໍ່ມີຄ່າຫຍັງແລ້ວ ໄຮ່ສວນກໍຄືກັນ.

ຍ້ອນອິດທິພົນຂອງ ແຊເຣີ, ອານໂຕນ ບຣາເຊັນໂກ ຜູ້ຫລົງ ຮັກມ້າທຸກໆຕົວຕິດຕໍ່ກັນມາຕະຫລອດ ແລະ ສະເພາະແລ້ວກໍ ແມ່ນຮັກມ້າບັກແດງຫລາຍກວ່າຫມູ່ ກໍເລີ່ມມົວເມົາຄິດຫາມ້າໂຕ ໃຫມ່ ທີ່ຈະປາກົດຕົວໃນອານາຈັກຂອງເຂົາໃນມື້ໃດມື້ຫນຶ່ງຂ້າງ ຫນ້າ. ແຊເຣີ, ກາລີນາ ອີວາໂນວິດ, ບຣາເຊັນໂກ ແລະ ຂ້າ ພະເຈົ້ານັ້ນ ບໍ່ເຄີຍພາດຕະຫລາດນັດຈັກບ່ອນເລີຍ ແລະ ພວກ

ເຮົາກໍໄດ້ເຫັນມ້າມາຫລາຍພັນໂຕແລ້ວ ແຕ່ບໍ່ໄດ້ຊື້ຈັກໂຕ. ສ່ວນ ຫລວງຫລາຍເປັນມ້າຂີ້ຮ້າຍໆ ຄືມ້າພວກເຮົານັ້ນແລ້ວ ຫລືບໍ່ກໍ ແມ່ນວ່າມັນແພງໂພດ, ຫລືບາງຄັ້ງກໍແມ່ນ ແຊເອີ ສັງເກດເຫັນ ວ່າມັນມີຕຳໜິ ມີພະຍາດອັນໃດອັນໜຶ່ງເຊື່ອງຊ້ອນຢູ່. ເວົ້າກັນ ຕາມຄວາມຈິງ, ຢູ່ຕະຫລາດນັດ ບໍ່ມີມ້າດີໆດອກ. ສົງຄາມ ແລະ ການປະຕິວັດໄດ້ລ້າງຜານັດບສູນເຊື້ອແນວທີ່ດີໄປໝົດ ສ່ວນແນວ ພັນໃຫມ່ກໍຍັງບໍ່ທັນກໍກຳເນີດເທື່ອ. ຈັ່ງຊັ້ນ ອານໂຕນ ຈຶ່ງກັບມາ ແຕ່ຕະຫລາດນັດດ້ວຍຄວາມຄຽດຂຶ້ນເປັນປະຈຳ.

-ມັນແມ່ນແນວໃດເກາະ? ບໍ່ມີມ້າເລີຍຊັ້ນຫວະ? ຊັ້ນຄົນວ່າ ພວກເຮົາຢາກໄດ້ມ້າດີໆຈັກໂຕ ມ້າແທ້ໆທັນນ່າ ຊິໄດ້ໄປຂົນພວກ ນາຍທຶນຊັ້ນຫວະ?

ໃນການະວ່າເປັນທະຫານມ້າເກົ່າ, ກາລີນາ ອີວາໂນວິດ ຈຶ່ງ ມັກສອດມືເຂົ້າມາກ່ຽວຂ້ອງໃນເລື່ອງນີ້ນຳ, ແລະ ແຊເອີ ເອງ ເມື່ອຕົກຢູ່ໃນສະພາບເຊັ່ນນີ້ ກໍຍອມຮັບຟັງ ທັນມາເຊື່ອໝັ້ນຕໍ່ ຄວາມກວ້າງຂວາງຂອງ ກາລີນາ ອີວາໂນວິດ. ມື້ໜຶ່ງ ກາລີນາ ອີວາໂນວິດ ຈຶ່ງປະກາດອອກຢູ່ທ່າມກາງວົງລ້ອມຜູ້ລ່ຽວຊານທັງ ຫລາຍວ່າ:

-ເກົ້າ ລູກາ ກັບ ມູດຊີ ໂຕຜາກ ຫມູ່ນີ້ເວົ້າວ່າພວກມູຊິກແຖວ ໂຮງນາໃຫຍ່ໆຫມູ່ນີ້ ມີມ້າດີໆຫລາຍ ແຕ່ພວກເຂົາບໍ່ຢາກເອົາໄປ ຂາຍຢູ່ຕະຫລາດນັດ, ພວກເຂົາຢ້ານວ່າຊັ້ນ.

-ບໍ່ແມ່ນ, ແຊເອີ ກຽງຂຶ້ນ, -ພວກເຂົາບໍ່ມີດອກ, ມ້າຂອງ ພວກເຂົາກໍຄືກັບພວກເຮົາໄດ້ເຫັນມານັ້ນແລ້ວ. ອີກບໍ່ດົນພວກ

ເຮົາອາດຊິໄດ້ມ້າດີໆນຳໂຮງລ້ຽງມ້າຫມູ່ນີ້ດອກ ແຕ່ດຽວນີ້ຢ່າພ້າວຄິດເທື່ອ.

-ແຕ່ຂ້ອຍຊ້ຳພັດວ່າພວກເຂົາມີ; ກາລິນາ ອີວາໂນວິດ ຢືນຢັນຄວາມເຫັນເດີມຕໍ່, ເກົ່າ ລູກາມັນຮູ້ດີ, ຫມໍນີ້ມັນຮູ້ຈັກທ້ອງຖິ່ນນີ້ພໍປານກົງສົງມັນພຸ້ນນ່າ... ແລ້ວພາກັນຄິດເບິ່ງວ່າ ຊິໄປຫາມ້າດີໆໄດ້ທາງໃດ ກ້າບໍ່ຢູ່ນຳໂຮງນາໃຫຍ່ໆ ນຳພວກອາດຍາຫັ້ນນະ. ຄົນພວກນີ້ມັນຕິວະເກ່ງແທ້ໃດ໋, ຜາກໂຕນີ້ນະ..., ມ້າໂຕດີໆມັນລ້ຽງໄວ້ແລ້ວເຊື່ອງມັ່ງນລະບໍ້ ເພາະວ່າມັນຢ້ານເພິ່ນມາຍຶດໄປເດ້ ແຕ່ກ້າວ່າພວກເຮົາໄປຮອດໄປເກີງ ມັນອາດຊິຂາຍໃຫ້...

ຂ້າພະເຈົ້າຈຶ່ງຕັດບັນຫາທັງຫມົດ ໂດຍບໍ່ກັງວົນນຳເລື່ອງແນວຄິດອຸດົມການວ່າ:

-ຕົກລົງ ວັນອາທິດຫນ້າພວກເຮົາພາກັນໄປເບິ່ງ, ບາງທີອາດຊິຊິໄດ້ຈັກໂຕກະບໍ່ຮູ້.

ແຊເຣີ ເຫັນດີນຳ:

-ກໍດີຄືກັນ, ເກີງແມ່ນວ່າພວກເຮົາຊິບໍ່ຊິຫຍັງ ແຕ່ຕິຕາງວ່າໄປທ່ຽວແດ່ກໍໄດ້ຄືກັນ, ຂ້ອຍຢາກເຫັນວ່າ ເຂົາບະເລ ພວກເຂົາເປັນແນວໃດ "ພວກອາດຍາ" ຂອງເຈົ້າຫັ້ນນ່າ!

ພໍຮອດວັນທິດພວກເຮົາກໍເອົາມ້າທຽມກວຽນ ແລ້ວອອກເດີນທາງໂຍກເຍກໄປຕາມກະຫນົນສາຍເປື້ອນເປິອ່ອນເລີດ້ວຍຕົມ ທີ່ຕໍ່ລຽນບ້ານຕ່າງໆໃສ່ກັນ. ຜ່ານບ້ານກົງຊາຮອບກາ ແລ້ວພວກເຮົາກໍຕັດເຂົ້າສູ່ກະຫນົນໃຫຍ່ເສັ້ນ ຄາຄົບ ໂລດ ຈາກນັ້ນຈຶ່ງລົງຢ່າງຂ້າມ

ດອນດິນຊາຍປ່າແປກບ່ອນຫນຶ່ງ ເພື່ອຊອກໄປຮອດຂົງເຂດໃຫມ່ບ່ອນຫນຶ່ງຊຶ່ງພວກເຮົາບໍ່ເຄີຍມາຈັກເທື່ອ.

ຈາກຈອມໂພນສູງເນີນຄ້ອຍລົງຄ່ອຍໆນັ້ນ ພູມພາບຫນ້າຊົມປາກົດຂຶ້ນຕໍ່ຫນ້າພວກເຮົາ, ສຸດຊົ່ວຕາຕໍ່ຫນ້າພວກເຮົາ... ສຸດຂອບຟ້າຟາກພຸ້ນ ພູມີປະເທດຮາບຕ່ຳກວ້າງແຜ່ສະເຫມີອອກໄປ ກວ້າງສຸດກວ້າງ. ສິ່ງທີ່ສະດຸດຕາໃນຂົງເຂດນີ້ ບໍ່ແມ່ນທິວທັດຫລາຍຢ່າງຫລາຍແນວ ແຕ່ແມ່ນຄວາມງ່າຍດາຍທຳມະດານັ້ນເອງ ທີ່ກາຍເປັນຄວາມງາມແບບຫນຶ່ງ ທົ່ວທ້ອງທົ່ງນາແຫ່ງນີ້ ປົກຫຸ້ມໄປດ້ວຍປ່າເຂົ້າບະເລດົກຫນາ ໂອ່ນເອນຕາມແຮງລົມເປັນກະແສຟອງສີທອງຄ້າຍຄຳ ແລະ ສີທອງແກມຂຽວ ບາງບ່ອນດ່າງເດັ່ນຂຶ້ນຍ້ອນສີຂຽວສົດໃສຂອງເຂົ້າມີນເລ້ ຫລືປ່າສາລີກໍ່. ບົນພື້ນສີຄຳນີ້ ມີກຸ່ມເຮືອນຫລັງນ້ອຍໆສີຂາວຄ້າຍຫິມະ ຕັ້ງຢາຍກັນເປັນລະບຽບສະຫມ່ຳສະເຫມີ, ອ້ອມຫລັງເຮືອນແມ່ນສວນນ້ອຍໆບໍ່ເປັນຮູບຈະແຈ້ງ ພາຍໃນເຂດຮົ້ວເຫລົ່ານີ້ ມີຕົ້ນໄມ້ໃຫຍ່ບ່ອນລະຕົ້ນຫລືສອງຕົ້ນຄືຕົ້ນໂຊນ, ຕົ້ນໃບສັ່ນ ຫລືຢ່າງຫາຍາກທີ່ສຸດກໍແມ່ນຕົ້ນໄຮໃຫຍ່ ນອກນີ້ຍັງມີສວນຫມາກແຕງ ແລະ ຕູບເຝົ້າສີແດງຊ້ຳ ປະຈຳຫລັງຫນຶ່ງ. ທັງຫມົດນີ້ຄົງຕົວຢູ່ໃນແບບຮູບເດີມອ້ອຍຕ້ອຍ, ແມ່ນແຕ່ຈິດຕະກອນຜູ້ຕາແຫລມທີ່ສຸດ ກໍບໍ່ອາດແນມເຫັນຈຸດບົກພ່ອງໄດ້.

ກາລີນາ ອີວາໂນວົດ ເອງກໍພໍໃຈນຳທິວທັດທຳມະຊາດນີ້ຄືກັນ.

- ເຈົ້າເຫັນບໍ່ວ່າ ພວກອາດຍາຫມູ່ນີ້ຢູ່ກິນກັນແນວໃດ? ຢູ່ນີ້ລ້ວນແຕ່ແມ່ນຜູ້ເປັນເຈົ້າຂອງແທ້ ໆ ລະ!

-ແມ່ນແທ້! ແຊເອີ ງຶກຫົວເຫັນດີນຳຢ່າງບໍ່ພ້າວພັ່ງແຕ່ຢ່າງໃດ.

-ໄປ໋, ລົງໄປເບິ່ງກັນເທາະ; ກາລີນາ ອີວາໂນວິດ ສະເໜີຂຶ້ນ.

ອານໂຕນບັງຄັບມ້າໃຫ້ລ້ຽວກວຽນໄປນຳທາງນ້ອຍໆ ຣິກເຮືອໄປດ້ວຍຫຍ້າຈົນຮອດປະຕູຮົ້ວແບບດັ້ງເດີມປະຕູໜຶ່ງ ເຮັດດ້ວຍກະໂລ່ງຕົ້ນໂຊນ ສານຜ່ອນມັດໃສ່ກັນດ້ວຍບໍ... ໝານ້ອຍສີມຸມຕົວໜຶ່ງຂົນທັງມຽນໆ ປ່ອນຫົວອອກມາ ທ້າຍງເດຂີ້ຄ້ານຢູ່ກ້ອງກວຽນ, ເມື່ອຂັບໄລ່ຄວາມຂີ້ຄ້ານໄປໄດ້ແລ້ວ ຈຶ່ງເຫົ່າວ້ອງໆອອກມາບາດໜຶ່ງ. ພໍ່ເຈົ້າຂອງເຮືອນອອກຈາກເຮືອນຕູບມຸງຫຍ້າ, ລາວສັ່ນເອົາອັນໃດອັນໜຶ່ງອອກຈາກເຄົາຄາງຊະນິດບໍ່ເຄີຍໃກ້ຫວີແລ້ວຈຶ່ງຕາເບິ່ງເຄື່ອງນຸ່ງຕັດແບບຊຸດທະຫານຂອງຂ້າພະເຈົ້າ ແບບຕື່ນໆ ແຝງຄວາມຫວາດກົວວາດໃດວາດໜຶ່ງ.

-ສະບາຍດີ, ຍາ...! ກາລີນາ ອີວາໂນວິດ ຮ້ອງທາມຢ່າງແຈ່ມໃສ, - ທາກໍມາແຕ່ໂບດຫວະ?

-ຂ້ອຍບໍ່ໄດ້ໄປໂບດເລື້ອຍດອກ! ສຽງຕອບມາ ນັ້ນແຫບຫ້າວແລະ ເຕື່ອຍເມື່ອຍເທົ່າກັບສຽງເຫົ່າຂອງນາຍຍາມເຮືອນຂອງລາວ; -ເມຍຂ້ອຍຕີ ລາວໄປແດ່ ວ່າແຕ່ວ່າ ພວກເຈົ້າພາກັນມາແຕ່ໃສລະ?

-ພວກເຮົາເມືອງກຈັກຫນ້ອຍ. ມີຄົນບອກວ່າເຈົ້າມີມ້າຈົບຕົວໜຶ່ງ ແລະ ຢາກຂາຍມັນຊັ້ນຫວະ?

ພໍ່ເຈົ້າເຮືອນງວາກມາເບິ່ງກວຽນກັບມ້າຂອງພວກເຮົາ ມ້າ

ທຽມຄູ່ຂອງພວກເຮົາຄື ອີ່ແມຣີດຳ ກັບບັກແດງຂອງພວກເຮົາທີ່ບໍ່ເປັນຕາເອົາປານໃດນັ້ນ ເຊິ່ງຄືເຮັດໃຫ້ລາວເຊົາກັງວົນໄປແດ່.

- ພວກເຈົ້າວ່າຫຍັງເກາະ? ມ້າດີງວ່າຕີ? ໂອ້ຍ ນາຍຊອກແກວນີ້ບໍ່ມີດອກ! ແຕ່ຂ້ອຍມີມ້າໂຕຫນຶ່ງ ກະລິນອາຍຸ ສິ ປີມັນນັ້ນແລ້ວ, ພວກເຈົ້າອາດຈະມັກບໍ່ຮູ້ດອກ?

ລາວຍ່າງໄປທາງຄອກມ້າ ແລ້ວຈູງມ້າແມ່ນ້ອຍໆໂຕຫນຶ່ງອອກມາ, ມັນມີທ່າທີແຈ່ມໃສ ແລະ ອ່ອນພິດີ.

- ເຈົ້າບໍ່ໄດ້ເອົາມັນແກ່ໄຖຫວະ? ແຊເອີ ຖາມຂຶ້ນ.

- ບໍ່ເຄີຍເອົາທຽມໄຖເຮັດວຽກໃດວຽກຫນຶ່ງ ເປັນພິເສດຈັກເທື່ອ ແຕ່ຂີ່ດີຢູ່, ມັນແລ່ນຊຳແກ່ກວຽນໄດ້ດີ ອັນນີ້ຂ້ອຍຮັບປະກັນໄດ້.

- ບໍ່, ມັນຍັງຫນຸ່ມໂພດຢູ່ສຳລັບພວກເຮົາ! ແຊເອີ ເວົ້າຂຶ້ນ, ພວກເຮົາຕ້ອງການມ້າທີ່ຊິນເຄີຍກັບວຽກງານແລ້ວ.

- ເລື່ອງຫນຸ່ມນັ້ນມັນກໍແມ່ນຫັນແລ້ວ, ຜູ້ເຈົ້າຂອງມັນເຫັນດີນຳ, - ແຕ່ໄປຢູ່ນຳບ່ອນດີງແລ້ວ ມັນຫາກຊິເຮັດວຽກເປັນເອງດອກ, ຂ້ອຍລ້ຽງມັນມາ ສິ ປີແລ້ວລ້ຽງຢ່າງດີຊ້ຳໃດ ເບິ່ງຕີ!

ເປັນຄວາມຈິງວ່າ ມ້າຕົວນີ້ໄດ້ຮັບການລ້ຽງດູເປັນຢ່າງດີ: ຂົນມັນເຫລື້ອມງາມສະອາດ, ແຜງຂົນຢູ່ຄໍຫວີຮຽບຮ້ອຍ, ບໍ່ວ່າຈະເບິ່ງໃນແງ່ໃດ ມັນສະອາດກວ່າຜູ້ເປັນເຈົ້າຂອງຊ້ຳອີກ.

- ຊັ້ນ ກະລອງວ່າມາເບິ່ງ ຈັກທໍ່ໃດລະ? ກາລີນາ ອີວາໂນວິດ ຖາມຂຶ້ນ.

- ຂ້ອຍເຫັນແລ້ວວ່າ ພວກເຈົ້າແມ່ນຜູ້ເອົາຈິງເອົາຈັງແທ້

ເອີ... ຈັ່ງຊັ້ນກະເອົາຈັກ ຜົວ ໃບແດງ (ໃບ ໑໐ ຣຸບ) ສາ ພໍ ດີລະ.

ອານໂຕນ ເຊືອດແສງຕາໄປໃສ່ຈອມຕົ້ນໂຊນ, ຕໍ່ມາ ເມື່ອເຂົ້າໃຈວ່າແມ່ນຫຍັງເປັນຫຍັງແລ້ວ ຈຶ່ງວາກມາອຸທານວ່າ:

-ທີ່ໃດເກາະ? ຜົວ໐ ຣຸບວ່າຕີ?

-ເຈົ້າ. ຜົວ໐ ຣຸບ, ຜູ້ເຈົ້າຂອງມ້າເວົ້າແບບກ່ອມຕົນ.

-ຜົວ໐ ຣຸບ ສຳລັບມ້າ... ຕາຍໆແບບນີ້ຫວະ? ອານໂຕນ ຮ້ອງຂຶ້ນຢ່າງແຮງໆ ຍ້ອນບໍ່ສາມາດອົດກັ້ນຄວາມໂມໂຫໄດ້.

-ມຶງຫັ້ນບ່າ ຄືວ່າຊິງເຂົ້າໃຈເລື່ອງດີຫມົດ! ລອງລ້ຽງມ້າເບິ່ງ ຈັກໂຕກ່ອນແລ້ວຈຶ່ງມາເວົ້າກັບກູ!

ກາລີນາ ອີວາໂນວິດ ເວົ້າປະນີປະນອມວ່າ:

-ບໍ່, ມ້າແບບນີ້ບໍ່ແມ່ນມ້າຕາຍໆດອກ..., ເປັນມ້າແມ່ໂຕງາມ ດີໂຕຫນຶ່ງພຽງແຕ່ວ່າມັນບໍ່ສອດຄ່ອງກັບວຽກພວກເຮົາທີ່ນັ້ນລະ.

ແຊເອີ ລັກຫົວຢູ່ມິດໆ, ພວກເຮົາກັບມາຂຶ້ນກວຽນມ້າ ແລ້ວ ອອກເດີນທາງຕໍ່ໄປ. ນາຍອະພິບານສີຫມົ່ນ ສົ່ງທາງພວກເຮົາ ດ້ວຍສຽງເຫົ່າວ້ອງໆແຮງກວ່າເກົ່າສ່ວນຜູ້ເປັນນາຍມັນນັ້ນຕີ ອັດປະ ຕູຮ້ວຍ່າງບໍ່ແນມສາຍຕາມານຳເລີຍ.

ພວກເຮົາແວະລົງການກຽງໄຮ່ນາປະເພດນີ້ ຮອດສິບຫລັງ ເຮືອນ, ແຕ່ລະບ່ອນມີມ້າຢູ່ແຕ່ພວກເຮົາບໍ່ໄດ້ຊື້ຈັກໂຕ.

ຄ້ອຍຄ່ຳລົງແລ້ວພວກເຮົາຈຶ່ງກັບຄືນບ້ານ, ແຊເອີ ນັ້ນຮອດ ບໍ່ເຊືອດຕາເບິ່ງທົ່ງເຂົ້າຊ່ຳ, ທ່າທີຈົມເລິກຢູ່ກັບຄວາມຄຶດອັນໃດ

ອັນຫນຶ່ງ, ອານໂຕນ ໂມໂຫຮ້າຍບັກ ແດງ ເອົາແສ້ຫົ່ງມັນແລ້ວ ຈຶ່ງພຸມພຳວ່າ:

- ມຶງປ່ວງແລ້ວຫວະ? ໂຍ້ວ ບໍ່ເຄີຍເຫັນຊຸ້ນຫວະ ຫຍ້າຄົນ ຫັ້ນ, ເບິ່ງ... ເບິ່ງກູຊິພາມຶງໄປເບິ່ງ!

ກາລີນາ ອີວາໂນວິດ ຫລຽວຕາເບິ່ງພູ່ມດອກໄມ້ທີ່ເລາະລຽບ ຕາມແຄມທາງ, ຈຶ່ງພຸມພຳຜູ້ດຽວມາຕະຫລອດທາງວ່າ:

- ເບິ່ງເອົາຕີພວກຜາກຂີ້ກີ້ຫມູນີ້, ຈັ່ງແມ່ນພວກເຂົາໂພດ ເນາະ, ມີຜູ້ມີຄົນມາຕິດຕໍ່ທຸລະກິດຮອດເຮືອນຮອດຊານພວກມັນ ເອີ້ຍ ຄວນຊິຕ້ອນຮັບຂັບສູ້ກັນແບບຊາວຄຣິດແດ່ລະບໍ້ ຮື້ຍ! ພວກ ຂີ້ສູດເອີ້ຍ! ທັງໆທີ່ມັນເຫັນຢູ່ເຕັມຕານະວ່າ ພວກເຮົານະອອກເດີນ ທາງມາແຕ່ເຊົ້າ ຊິຫາຫຍັງໃຫ້ກິນຮອງທ້ອງແດ່ບໍ່ມີເລີຍ, ກະພໍຊິມີ ຫຍັງຢູ່ຕີ... ແກງຫລືມັນຜະລັ່ງຕົ້ມກໍໄດ້ບ່າ... ແຕ່ເຈົ້າເບິ່ງຕີ.., ມັນ ບໍ່ມີເວລາຮອດຊິຫວີຫນວດເຄົາຂອງມັນ... ສູເຄີຍເຫັນຫວະຄົນ ແບບນີ້? ແລ້ວກະເອີ້ນເອົາຕັ້ງ ໓໐໐ ຣຸບ ມ້າຕາຍໆຈັ່ງຊັ້ນຮື? ມັນ ລ້ຽງມັນແພງມ້າຂອງມັນວ່າຕີ? ມັນວ່ານະ! ຈ້າງເທາະແມ້ຊິແມ່ນ ນະ... ສູເຫັນລະຕີ ມັນມີລູກຈ້າງຕັ້ງທໍ່ໃດຢູ່ນຳມັນນະ?

ຂ້າພະເຈົ້າເຫັນພວກເຂົາແລ້ວ ຜູ້ຄົນຈ່ອຍຜອມຫນ້າຕາ ຫມົ່ນ ຫມອງ ທີ່ລີ້ຊ່ອນຢູ່ດ້ວຍຄວາມຂີ້ຢ້ານຕາມໂຮງກວຽນ ແລະ ຄອກ ມ້າ, ແສງຕາສອດສ່ອງຕິດຕາມເຫດການທີ່ອຸບັດຂຶ້ນຢ່າງບໍ່ຄາດຝັນ ນີ້ ດ້ວຍຄວາມເອົາໃຈໃສ່ສຸດຂີດເຊັ່ນ ການມາຢ້ຽມຢາມເຮືອນຂອງຜູ້ ຄົນມາທີ່ແຕ່ໃນເມືອງ. ພວກເຂົາຕື່ນເຕັ້ນຕໍ່ເຫດການມະຫັດສະຈັນ ເຊັ່ນການຊຸມນຸມຜູ້ຄົນຫນ້າເຄົາລົບນັບຖື ຕັ້ງຫລວງຫລາຍຢູ່ໃນເດີ່ນ

ບ້ານດຽວກັນເຊັ່ນນີ້. ບາງເວລາພວກປາກກືກຫມູ່ນີ້ ກໍເອົາມ້າອອກມາແຕ່ຄອກ ແລ້ວເອົາເຊືອກບັງຫຽນມາຍື່ນໃສ່ມືໃຫ້ນາຍດ້ວຍທ່າທີຄຽມອາຍ, ບາງຄັ້ງພວກເຂົາກໍເອົາມືຕົບກົ້ນມ້າຄ່ອຍໆບາງທີນັ້ນອາດເປັນການສະແດງຄວາມຮັກແພງອ່ອນຫວານຕໍ່ສັດມີຊີວິດທີ່ໃກ້ຊິດໂຕຫນຶ່ງຂອງພວກເຂົາ.

ຄາວຫນຶ່ງ ກາລີນາ ອີວາໂນວິດ ຢຸດເວົ້າ ແລະ ດູດກອກມາບໆດ້ວຍທ່າທີໂມໂຫ, ຈົນຮອດທາງນິຄົມລາວຈຶ່ງເວົ້າຂຶ້ນຢ່າງແຈ່ມໃສວ່າ:

-ຮ່າ! ພວກຜີນະຣົກຫມູ່ນີ້ມັນເຮັດໃຫ້ຫິວເອີ້ຍ!

ຢູ່ນິຄົມພວກເຮົາພົບ ລູກາ ເຊມີວໂນວິດ ກັບ ມູດຊີ ກາໂປວິດ, ລູການັ້ນຮູ້ສຶກຕ່າງໃຈຫລາຍທີ່ເຫັນວ່າພວກເຮົາບໍ່ປະສົບຄວາມສຳເລັດໃນການອອກຄວ່າຄົ້ນລາວຄັດຄ້ານວ່າ:

-ເປັນໄປບໍ່ໄດ້ດີ ທີ່ວ່າເປັນແນວນີ້ນະ! ໃນເມື່ອວ່າຂ້ອຍໄດ້ບອກ ອານໂຕນ ເຊມີວໂນວິດ ກັບ ກາລີນາ ອີວາໂນວິດ ແລ້ວວ່າມືພວກເຮົາກໍຕ້ອງຈັດການເລື່ອງນີ້ໃຫ້ສຸດ, ແລ້ວກະເຈົ້າຫັ້ນ, ກາລີນາ ອີວາໂນວິດ ເອີ້ຍ ຢ່າເປືອງອາລົມຫລາຍ, ມັນບໍ່ດີດອກເດີ້ ອັນເຮັດໂມໂຫໂຫໂສແນວນີ້ນະ, ອາທິດຫນ້າພວກເຮົາຊິໄປນຳກັນທັງສອງຄົນ ທາງທີ່ດີແລ້ວ ອານໂຕນ ເຊມີວໂນວິດ ບໍ່ໄປນຳດີກວ່າ ເພາະວ່າເຈົ້າຫັ້ນເກາະທ່າທາງຄືນັກບອນເຊວິກ ມັນເຮັດໃຫ້ຄົນຢ້ານນ່າ. ຮະ ຮະ... ຮ່...!

ວັນອາທິດຕໍ່ມາ ກາລີນາ ອີວາໂນວິດ ຂີ່ມ້າໄປເລາະລຽບແຖວໂຮງນາກັບລູກາ ເຊມີວໂນວິດ. ບຣາເຊັນໂກ ເບິ່ງພວກເຂົາອອກ

ເດີງທາງມຸ່ງສູ່ກິດຈະການອັນນີ້ດ້ວຍຄວາມຮູ້ສຶກເສີຍເມີຍ ແລະ ກ່ອນຈະກ່າວລາກັນກໍເວົ້າຍອກແບບແຮງວ່າ:

-ຫໍ່ເຂົ້າໄປກິນທາງແດ່ດຸ ຄັນບໍ່ຢາກຫິວຕາຍກະດາຍ.

ລູກາ ເຊມີວໂນວິດ ລູບຄຳເຄີງາມສີແດງງຂອງລາວ ທີ່ຍາວ ເພື່ອເທີງເສື້ອແສ່ວສຳລັບນຸ່ງວັນບຸນ ແລ້ວເລຍຣີມສີບສີບິວອ່ອງ ຕ່ອງຂອງລາວທັງຍິ້ມເວົ້າວ່າ:

-ຕ້າຍແລ້ວ ເຈົ້າບໍ່ຄິດຈັ່ງຊັ້ນດິ... ສະຫາຍ ບຣາເຊັນໂກ? ເຮັດແນວໃດວ່າຊິຫໍ່ເຂົ້າໄປກິນນຳ ໃນເມື່ອວ່າເຮົາໄປຍັງມຍາມຄືນ ຮອດເຮືອນຮອດຊານ! ມື້ນີ້ພວກເຮົາຊິຢູ່ທ່າງກິນແກງຜັກກະລ່ຳ ດອງ, ອົບແກະ ແລ້ວບາງທີກໍອາດຊິບິດຄໍແກ້ວຄັກໆຈັກແກ້ວນຳ.

ເມື່ອຫລິ່ວຕານ້ອຍໃຫ້ ກາລີນາ ອີວາໂນວິດ ຊຶ່ງສະແດງທ່າທີ ວ່າສິນໃຈ ແລ້ວລາວຈຶ່ງຈັບເຊືອກບັງຫຽນຫຸ້ມຜ້າສີແດງຊ້ຳຢ່າງສວຍ ງາມມາກືໄວ້ ຈາກນັ້ນມ້າຫຽມຕິວງາມ ຮູບຮ່າງແຂງແຮງກໍກະດຸກ ໂຕແຮງໆ, ລາກເກ່ກວຽນສີ່ລໍ້ເຫລັ້ມກວ້າງ ແລະ ແຫນັບຫນາ ດ້ວຍເຄື່ອງອາໄຫລ່ເຫລັກໃຫ້ເຄື່ອນໄປຂ້າງຫນ້າ.

ໃນຕອນແລງ ພໍປານວ່າໄດ້ຍິນສັນຍານໄຟໄຫມ້, ພວກເດັກ ນ້ອຍນິຄົມທັງຫມົດອອກມາ ທັງແລ່ນມາລັດທາງ ເພື່ອປະເຊີນ ຫນ້າກັບສະພາບການທີ່ບໍ່ຄາດຝັນມາກ່ອນ: ກາລີນາ ອີວາໂນວິດ ກັບຄືນມາໃນຖານະຜູ້ຊະນະ. ມ້າຫຽມໂຕຂອງ ລູກາ ເຊມີວໂນ ວິດ ຖືກມັດຢູ່ດ້ານຫລັງຂອງກວຽນມ້າ ສ່ວນຢູ່ກາງຄານກວຽນພໍ່ຊ້ຳ ມີມ້າແມ່ຕິວງາມ ສູງສະຫງ່າ ສີຫມອກຫມື່ນຕົວຫນຶ່ງ. ໃນທ່າທີ ຊຶ່ງຕົວຂອງ ກາລີນາ ອີວາໂນວິດ ແລະລູກ ເຊມີວໂນວິດ ນັ້ນມີ

ຮ່ອງຮອຍອັນເປັນພະຍານຫລັກຖານບອກວ່າ ພວກເຂົາໄດ້ຮັບການຕ້ອນຮັບເປັນຢ່າງດີຈາກເຈົ້າຂອງບ້ານມາແລ້ວ. ກາລີນາ ອີວາໂນວິດ ລົງຈາກກວຽນມ້າຢ່າງລຳບາກ ແລະ ພະຍາຍາມສຸດຂີດເພື່ອບໍ່ໃຫ້ຮ່ອງຮອຍດັ່ງກ່າວນັ້ນກະທົບສາຍຕາຂອງພວກເດັກນ້ອຍ. ກາຣາບານິບ ຟ້າວຫຍັບເຂົ້າໄປຊ່ອຍລາວ:

-ຫມາຍຄວາມວ່າ ມີການສະເຫລີມສະຫລອງຢ່າງຄຶກມາແລ້ວ ແມ່ນບໍ່?

-ໂຢ້ວ ກໍຊັ້ນແລ້ວເອີ້ຍ...! ມຶງເຫັນວ່າເປັນແນວໃດ ມ້າໂຕນີ້ນະ?

ກາລີນາ ອີວາໂນວິດ ເອົາມືຕົບກະໂພກມ້າແຮງໆ ເວົ້າແທ້ແລ້ວມ້າໂຕນີ້ເປັນສັດງາມດີໂຕຫນຶ່ງ: ແຂ່ງຂາແຂງແຮງ ມີຂົນຍາວດົກຢູ່ຂໍ້ຂາ, ເອິກ ແລະແອວລີມສ່ວນ, ຮ່າງຄີງຫຶກຫນາ ແລະໄດ້ສ່ວນດີ ແມ່ນແຕ່ ແຊເຣີ ເອງກໍຍັງບໍ່ສາມາດຄົ້ນພົບບ່ອນຕຳຫນິເກີງແມ່ນວ່າເຂົາໄດ້ກົ້ມໆເງີຍໆຢູ່ກ້ອງທ້ອງມັນເທິງເຕີບແລ້ວ ກໍຕາມ ທັງການມ້າດ້ວຍສຽງແຈ່ມໃສ ແລະ ອື່ນອອຍວ່າ:

-ໃສ... ເອົາຕີນໂຕມາເບິ່ງດຸ... ຕີນ...

ພວກເດັກນ້ອຍຜູ້ຊາຍເຫັນດີນຳການຊື້ຂາຍຄັ້ງນີ້. ບູຣູນຫລືວຕາຕອມເປັນການເຫັນດີນຳ, ເຂົາພິຈາລະນາເບິ່ງມ້າໄປມາທຸກຂ້າງ ແລ້ວປະກາດວ່າ:

-ເອົາລະໃນທີ່ສຸດ ນິຄົມພວກເຮົາກໍມີສັດທີ່ຊື່ວ່າມ້າແທ້ໆແລ້ວ.

-ເອີ້... ມັນແມ່ນມ້າວຽກມ້າງານແທ້ໆລະ ໂຕນີ້ ລາຄາ ໕໐໐

ຮຸບ, ຄັນມີອີກຈັກ ໑໐ ໂຕ ຄືແນວນີ້ ພວກເຮົາອ້ອນພຸ່ງຍ່ອນ ໂລດຕວ່າ! ກາຮາບານິບ ເອງກໍພໍໃຈນໍາຫລາຍ.

ອານໂຕນ ຮັບເອົາມ້າໄປດູແລດ້ວຍຄວາມຮັກແພງເອົາໃຈໃສ່, ມັນພາມ້າຍ່າງໄປອ້ອມໆ ທັງຈຸ້ຍປາກດ້ວຍຄວາມພໍໃຈ ແລະ ປະທັບໃຈຈົນປາກບໍ່ອອກ ທີ່ເຫັນວ່າສັດງາມຕົວນີ້ທັງມີກໍາລັງມະຫາສານ ແລະ ສະຫງົບສະຫງ່ຽມດີ ນິໄສຫນ້າເຊື່ອຫມັ້ນເປັນທີ່ສຸດ. ມັນໄປຊູຊີຂໍຮ້ອງ ແຊເຣີ ດ້ວຍຄວາມເວົ້ານີ້ໂລດ:

-ພວກເຮົາຈໍາເປັນຕ້ອງມີມ້າຄັກໆຈັກໂຕໃດ໋ ເພື່ອຊິປະສົມພັນມ້າເອງ... ເຈົ້າຮູ້ບໍ່.

ແຊເຣີ ເຂົ້າໃຈດີແລ້ວ ລາວຈຶ່ງເບິ່ງຫນ້າ ອີໂຊຣກາ ຢ່າງເຄັ່ງຂຶມຈິງຈັງ ແລະ ງຶກຫົວເຫັນດີນໍາ, ລາວເວົ້າພຸມໆບໍ່ເຕັມສຽງວ່າ:

-ຂ້ອຍຊິຊອກພັນຄັກໆມາຈັກໂຕ... ເຄີຍເຫັນແລ້ວຢູ່ບ່ອນຫນຶ່ງບ່ອນນອງເອົາໄວ້ໃຫ້ພວກເຮົາກ່ຽວເຂົ້າ ແລ້ວກ່ອນຂ້ອຍຊິໄປເອງ.

ໃນປາງນັ້ນ ວຽກງານຢູ່ນິຄົມພວມຊຸ້ນຂຽວສຸດຂີດແຕ່ຕາເວັນຂຶ້ນຮອດຕາເວັນຕົກ, ວຽກງານດໍາເນີນໄປດ້ວຍຈັງຫວະເຮັ່ງຮ້ອນຕາມໄມ້ຮາງຫມອນທີ່ຄ່ອຍກັ່ງທີ່ແຊເຣີ ຈັດວາງຢ່າງເທົ່າທຽມກັນ. ກອງພິເສດຂອງພວກເດັກນ້ອຍນັ້ນ ບາງຄັ້ງ ກໍປະກອບດ້ວຍຄົນດ້ານຫນ້ອຍ, ບາງເວລາແມ່ນພວກຜູ້ໃຫຍ່ ແລະ ບາງເທື່ອກໍແມ່ນພວກເດັກນ້ອຍຮຸ່ນນ້ອຍ ໂດຍມີເຄື່ອງມືປະເພດ ຈົກ ຊວ້ານກ່ຽວຍາວ ຄາດ ຫລືບາງເທື່ອກໍແມ່ນມີຫົວດົວຂອງພວກເຂົາລ້າໆ. ກຸ່ມເດັກນ້ອຍຍ່າງທຽວໄປມາລະຫວ່າງທົ່ງນາ ແລະ ນິຄົມ

ຕາມຕາຕະລາງໂມງຄັກແນ່ ພໍປານຕາຕະລາງການແລ່ນຂອງຂະບວນລົດໄຟ, ຟັງສຽງຫົວສະອຶກສະອື້ອຍ ແລະ ສຽງຢອກເຍົ້າກັນ, ພວກເຂົາມີຄວາມກ້າຫານ ແລະ ເຊື່ອໝັ້ນໃນຕົວເອງ, ຮູ້ບັບປຸງວຽກງານທີ່ຕົນຈະເຮັດເປັນຢ່າງດີ ແລະ ຮູ້ວ່າຕ້ອງເຮັດແນວໃດມັນຈຶ່ງຈະສຳເລັດ. ບາງຄັ້ງ ໂອເລຍ ໂວໂຣໂນວາ ຜູ້ຮອງວິສະວະກອນກະເສດຂອງພວກເຮົາກໍລົງມາກາງທົ່ງ, ທ່າທາງຮີບຮ້ອນກິນນ້ຳອຶກໆສອງບາດຢູ່ໂກວາງເທິງໂຕະ ແລ້ວເວົ້າກັບນາຍກອງປະຈຳວັນວ່າ:

- ສົ່ງກອງຫມູນໄປຊ່ອຍຫນ່ວຍພິເສດ ໕.

- ມີເລື່ອງຫຍັງຢູ່ຫັ້ນ?

- ມັດເຂົ້າບໍ່ທັນ... ແລ້ວກະອາກາດຮ້ອນໂພດ.

- ຕ້ອງການຈັກຄົນ?

- ໕, ມີແມ່ຍິງເຫລືອແດ່ບໍ່?

- ມີຜູ້ດຽວ.

ໂອເລຍປ້າຍແຂນເສື້ອເຊັດສິບ ແລ້ວກໍກັບຄືນໂລດ. ນາຍກອງປະຈຳວັນກຸ້ມປຶ້ມບັນທຶກໄວ້ໃນມື ຍ່າງກົງໄປຍັງກ້ອງຮົ່ມຕົ້ນຫມາກຈອງ ເຊິ່ງກອງບັນຊາການຂອງກອງຫມູນພິເສດມາຕັ້ງຢູ່ຕັ້ງແຕ່ເຊົ້າພຸ້ນແລ້ວ. ຕິດຕາມເຂົາໄປມີ ເດັກເປົ່າແກສັນຍານສຳລັບມື້ນີ້ແລ່ນຍືອກໆນຳຫລັງ; ຫລັງຈາກນັ້ນປະມານນາທີຫນຶ່ງສຽງແກສັນຍານເອີ້ນຮ່ວມແຮງກອງຫມູນກໍດັງກ້ອງຂຶ້ນ. ຈາກພຸ່ມໄມ້ແຄມຫ້ວຍ, ຈາກທຳພັກ ມີພວກເດັກນ້ອຍຫລຸບແລ່ນອອກມາຢ່າງຟ້າວຟັ່ງ, ຄາວຫນຶ່ງກໍຍືນເປັນວົງມົນຢູ່ກ້ອງຕົ້ນຫມາກຈອງ ບໍ່ຮອດ

ໜຶ່ງນາທີຕື່ມາເດັກນ້ອຍ ໕ ຄົນກຸ່ມໜຶ່ງກໍອອກຍ່າງດ້ວຍບາດກ້າວໜັນໆມຸ່ງໜ້າໄປຍັງທົ່ງເຂົ້າ.

ພວກເຮົາໄດ້ຮັບເດັກນ້ອຍມາຕື່ມອີກຮອດ ໔໐ ຄົນແລ້ວ. ຕະຫລອດເວລາວັນອາທິດໜຶ່ງເຕັມໆ ພວກຊາວນິຄົມຮຸ່ນອ້າຍໄດ້ເອົາໃຈໃສ່ເບິ່ງແຍງ ອາບນ້ຳໃຫ້ພວກເຂົາ ແຈກຢາຍເຄື່ອງນຸ່ງໃຫ້ແລ້ວແບ່ງຢາຍໃສ່ກອງຕ່າງໆ. ພວກເຮົາບໍ່ຕື່ມຈຳນວນກອງທີ່ມີຢູ່ແລ້ວ ແຕ່ໄດ້ສ້າງໝົດທັງ ໑໑ ກອງນັ້ນໄປຍັງເຮືອນແດງ ໂດຍປ່ອຍໃຫ້ມີບ່ອນຫວ່າງທີ່ຈະເອົາຄົນມາຕື່ມໃສ່ຊື່ໆ, ເຮັດແນວນີ້ຜູ້ມາໃຫມ່ຈຶ່ງຕົກຢູ່ໃນວົງລ້ອມຂອງພວກເກົ່າຢ່າງແຂງແຮງ ອັນເຮັດໃຫ້ພວກເຂົາຮູ້ສຶກວ່າ ເປັນສະມາຊິກນິຄົມຢ່າງພາກພູມໃຈແຕ່ທ່າທາງຂອງພວກເຂົາຍັງບໍ່ເປັນເອົາເທື່ອ, ກາຣາບານົບໃຊ້ສຳນວນວ່າ "ຍັງຂົດໆ ງໍໆ ຢູ່".

ພວກເດັກນ້ອຍທີ່ມາຢູ່ນຳພວກເຮົາໃຫມ່ໆນີ້ ຍັງນ້ອຍຫລາຍ, ອາຍຸປະມານ ໑໓ ຫາ ໑໔ ປີເທົ່ານັ້ນ, ໃນຈຳນວນນີ້ມີເດັກນ້ອຍໜ້າຮັກໜ້າແພງຫລາຍຄົນ ໂດຍສະເພາະເວລາເຂົາອອກຫ້ອງອາບນ້ຳໃຫມ່ໆ, ນຸ່ງສົ້ງຂາສັ້ນ ໂຕສະອາດໃຫມ່ອ່ຽມ, ຜົມຕັດຫ້ຽນ ກະຕູ້ດກະຕ້າດ ຈົນ ເບຍລູກີນ ໄດ້ອອກປາກຍືນຍັນວ່າ:

- ມັນນີ້ ພວກເຂົາພາກັນຕັດຜົມໃຫ້ກັນເອງ... ຈັ່ງວ່າກໍເລີຍເປັນແນວນີ້ລະ... ບໍ່ຄືກປານໃດ..., ຊ່າງຕັດຜົມຊິມາມື້ແລງນີ້ລະແລ້ວຊິໃຫ້ລາວຈັດການຕໍ່ໃຫ້ແລ້ວ.

ຕະຫລອດເວລາສອງວັນ ຜູ້ມາໃຫມ່ຈະທ່ຽວຊົມນິຄົມທຸກຈອກທຸກແຈ..., ຕາທັງຄູ່ຂອງເຂົາຕື່ກວ້າງພ້ອມທີ່ຈະບັນທຶກເອົາຄວາມ

ປະທັບໃຈໃຫມ່ໆໄວ້. ເມື່ອເຂົ້າໄປເບິ່ງຄອກຫມູ, ຕາທີ່ຕົກວ້າງຢູ່ແລ້ວກໍຈ້ອງແນມເບິ່ງ ສະຕູບິດລຶນ ຜູ້ເຄັ່ງຄັດດ້ວຍຄວາມອັດສະຈັນໃຈ.

ຕາມທຳມະດາແລ້ວ, ອານໂຕນ ນັ້ນບໍ່ໂອ້ລົມຫຍັງກັບເດັກມາໃຫມ່.

- ແມ່ນພວກໂຕມາເຮັດຫຍັງຢູ່ນີ້ເອີຍ? ພວກສູຕ້ອງໄປຢູ່ໂຮງອາຫານພຸ້ນເດີ້.

- ເປັນຫຍັງຕ້ອງຢູ່ໂຮງອາຫານລະ?

- ແລ້ວເວລານີ້ພວກສູຮູ້ຈັກເຮັດຫຍັງລະ? ຮູ້ແຕ່ກິນຫັ້ນຕິ!

- ແຕ່ຂ້ອຍຊິໄປເຮັດວຽກເດ້.

- ຮູ້ແລ້ວລະວ່າພວກສູເຮັດວຽກແນວໃດນະ? ຕ້ອງມີຜູ້ຄຸມຕິດຕາມຫລັງຮອດສອງຄືນພຸ້ນແມ່ນບໍ່ລະ?

- ນາຍກອງລາວບອກແນວນີ້ໃດ໋: ມື້ອື່... ເຮັດວຽກ... ແລ້ວເຈົ້າຊິເຫັນດອກບາດນັ້ນ.

- ມຶງຄຶດວ່າກູຕ້ອງການເຫັນກ່ອນຊັ້ນຫວາ? ບໍ່ດອກ... ມັນຊິເປັນແນວນີ້ລະ. "ໂອ່... ຂ້ອຍຮ້ອນ, ໂອ່... ຂ້ອຍຫິວນ້ຳ! ໂອ່... ພໍ່ເອີຍ ແມ່ເອີຍ!..."

ພວກເດັກນ້ອຍພາກັນຫົວອາຍ ໆ.

- ເປັນຫຍັງຊິເອີ້ນຫາແມ່ລະ?... ບໍ່ໄດ້ວ່າ...

ນັບແຕ່ມື້ທຳອິດໂລດ ອານໂຕນກໍໄດ້ພັກພວກຜູ້ຖືກນິໄສຫລາຍຄົນ. ອິນຊິເລີກແລບຢ່າງຫນຶ່ງເຮັດໃຫ້ຫມໍແນມເຫັນວ່າແມ່ນໃຜຮັກນ້າ. ແລ້ວບັດນີ້ເບິ່ງດູ ກະໂລ່ງໃສ່ນ້ຳຫນ່ວຍຫນຶ່ງກຳລັງຖືກແກ່

ໃສ່ລໍ້ເຄື່ອນໄປທາງນ້ອຍໆ ມຸ່ງໜ້າສູ່ທົ່ງນາ ແລະ ຢູ່ບົນຫລັງບັກມົນລັງທີ່ເກົ່ານັ້ນແມ່ນ ເປເຕຍ ຊາໂດໂຣດນີ ຊາວນິຄົມກັອກກີຜູ້ໜຸ່ມນ້ອຍຄົນໜຶ່ງ, ມີສຽງຮ້ອງແນະນຳຕິດຕາມໝໍມາແຕ່ປາກປະຕູຄອກມ້າວ່າ:

- ບໍ່ຕ້ອງເລັ່ງມ້າແນວນັ້ນເອີ້ຍ, ມຶງບໍ່ແມ່ນຊິໄປມອດໄຟດວ່າເບາະ!

ຮອດມື້ຕໍ່ມາ ພວກມາໃໝ່ກໍເຂົ້າຮ່ວມປະກອບເຮັດວຽກໃນກອງພິເສດ. ຄວາມບໍ່ຊິນເຄີຍຕໍ່ວຽກງານ, ການອອກແຮງພະຍາຍາມ ເຮັດໃຫ້ພວກເຂົາລົ້ມລຸກຄຸກຄານອິ່ລາກອິ່ເລືອ ແຕ່ເກືອບບໍ່ແຕກແຖວຈັກເທື່ອ ພວກເດັກນ້ອຍນິຄົມຢືນຍ່ຳຢູ່ໃນທົ່ງມັນຝະລັ່ງຢ່າງແຂງຂັນ ແລະ ພວກມາໃໝ່ກໍຮູ້ສຶກວ່າ ຕົນເອງເຂົ້າຢູ່ໃນລະດັບວຽກກັບຜູ້ອື່ນໆແລ້ວ. ຈົນຊົ່ວໂມງໜຶ່ງຜ່ານໄປແລ້ວ ເຂົາຈຶ່ງສັງເກດເຫັນວ່າ ເພິ່ນຈັດໃຫ້ນັກຮຽນໃໝ່ສອງຄົນເຮັດວຽກຕໍ່ແຖວຄູມັນໜຶ່ງ, ສ່ວນນັກຮຽນເກົ່ານັ້ນຫລີກມັນຄູໃໝ່ຂອງໃຜຂອງລາວ. ທັງໆເຫື່ອຍ້ອຍອາບໜ້າເຕັມຢູ່ ເຂົາກໍຊື່ມການຜູ້ຢູ່ໃກ້ໆວ່າ:

- ໃກ້ຊິແລ້ວ ແລ້ວເບາະເຮີ້ຍ?

ເຂົ້າບະເລກ່ຽວແລ້ວຮຽບຮ້ອຍ ແລະ ບັດນີ້ຢູ່ກາງລານແປນໆທຸກຄົນກໍມາຫຸ້ມກັນຢູ່ອ້ອມຈັກຕີເຂົ້າ, ແຊເຣີ ເຫື່ອຍ້ອຍອາບໜ້າເປິເປື້ອນຄືກັບຜູ້ອື່ນໆກວດກາເບິ່ງເກຍລົດ ແລະ ຫລັງຈາກເສືອດຕາເບິ່ງລານຕີເຂົ້າບາດໜຶ່ງແລ້ວຈຶ່ງເວົ້າວ່າ:

- ມື້ຮືຈຶ່ງລົງມືຕີເຂົ້າ, ແລະ ມື້ອື່ນເຮົາຊິໄປຊອກເອົາມ້າຈັກໂຕ.

-ແມ່ນເຮົາເດີຊີໄປນະ, ເຊມີຍິງ ເວົ້າຂຶ້ນຢ່າງລະມັດລະວັງ ທັງເສືອດຕາເບິ່ງ ບຣາເຊັນໂກ.

-ເອີ້... ເຊີນທັ່ນເທາະ, ອານໂຕນ ຕອບຄືນ, ແລ້ວມັນຈີບ ບໍ່ລະມ້າໂຕນີ້ນະ?

-ກະບໍ່ຂີ້ຮ້າຍດອກ! ແຊເຣີ ຕອບ.

-ເຈົ້າຊື້ມັນຢູ່ນີ້ຄືມຫວະ?

-ແມ່ນລະ.

-ເທົ່າໃດ?

-ສາມຮ້ອຍ.

-ບໍ່ແພງເລີຍ.

-ອື... ອື...

-ຊັ້ນແມ່ນມ້າໂຊວງດຫວະ? ກາລີນາ ອີວາໂນວິດ ກາມທັງ ພິຈາລະນາເບິ່ງຈັກດີເຂົ້າ, -ແລ້ວເປັນຫຍັງຈຶ່ງເອົາເຄື່ອງຍົກອັນນີ້ ຂຶ້ນໄປໄວ້ສູງແທ້ລະ?

-ເອີ້ ມ້າໂຊວງດຕວ່າ, ແຊເຣີ ຕອບ - ບໍ່ເປັນຫຍັງດອກສູງ ກະດາຍເພື່ອງມັນເບົາດອກ.

ວັນອາທິດພວກເຮົາພັກຜ່ອນກັນ, ອາບນ້ຳໃນຫ້ວຍ ແລະ ພາຍເຮືອຫລິ້ນ ແລະເບິ່ງແຍງພວກມາໃຫມ່. ສ່ວນໃນຕອນແລງກໍ ຄືກັບທຸກໆມື້ນັ້ນແລ້ວ ກຸ່ມຫົວຫນ້າທັງຫມົດຂອງພວກເຮົາກໍມາຊຸມ ນຸມກັນຢູ່ເກີຍຊານຂອງຕຶກຂາວ ເພື່ອດື່ມກິນຫອມຂອງ "ລາຊີນີຫົມະ", ທັງພາກັນຮີ້ພັ້ນເລື່ອງລາວຕ່າງໆຂຶ້ນມາເລົ່າສູ່ກັນຟັງ ສ່ວນ

ພວກເດັກນ້ອຍມາໃຫມ່ ຊຶ່ງມາຈອບໆ ມອງໆ ກໍພາກັນຕົກຄະມ່າ ຢ້ານກົວມິດພັງຢູ່ຊື່ ໆ.

ທັນໃດນັ້ນ ຢູ່ທາງໂຄ້ງແຈໂຮງສີພຸ້ນກໍມີຝຸ່ນໄງ່ກຸ້ມຂຶ້ນ, ອັດສະວິນຄົນຫນຶ່ງກຳລັງຫໍ້ມ້າມາຢ່າງແຮງ ທັງພະຍາຍາມດຶງມ້າແຮງໆ ຫລີກຫມໍ້ນ້ຳເກົ່າໆຫນ່ວຍຫນຶ່ງ ຊຶ່ງກີດອອກມາຂວາງທາງ. ເຊມິຍົງ ນັ່ງຢູ່ເທິງມ້າສີດຳຕົວຫນຶ່ງ ຫໍ້ລໍ່ວກົງມາໃສ່ພວກເຮົາ ສ່ວນພວກເຮົາກໍພາກັນຕົກສະເງີ້ຈົນປາກບໍ່ອອກ ແລະ ລືມຫັນໃຈ. ຜ່ານມາຮູບພາບແນວນີ້ ພວກເຮົາເຄີຍເຫັນແຕ່ຢູ່ໃນແຜ່ນກະດານຮູບແຕ້ມ, ຮູບປະກອບນິທານ ແລະ ຮູບໃນເລື່ອງ "ການແກ້ແຄ້ນອັນທັງມໂຫດ". ມ້າທີ່ ເຊມິຍົງ ຂີ່ມານັ້ນວ່ອງໄວ, ທ່າທີຄ່ອງແຄ້ວ ແຕ່ໃນເວລາດຽວກັນກໍແຂງແຮງ. ພວງຫາງດົກຫນາຂອງມັນປິວສະບັດພືແຜ່ຢູ່ທາງຫລັງ ແລະ ຂົນແຜງຄໍກໍຕັ້ງສອນລອນຕາມແຮງລົມ. ມັນຄືດັ່ງອາບໂອບດ້ວຍສີດຳເຫລື້ອມໄປຫມົດ. ບໍ່ທັນທີ່ອາການເຄື່ອນເຫນັງທີ່ຄັກແນ່ຫນັກແຫນ້ນຂອງມັນ ຈະເຮັດໃຫ້ວິນຍານຂອງພວກເຮົາເຊົາຕື່ນເຕັ້ນອອນຊອນນຳກໍມີ ລາຍລະອຽດອັນຫນ້າຕື່ນເຕັ້ນປະທັບໃຈກວ່າເກີດຂຶ້ນອີກຄື: ລຳຄໍຊົງແຂງແຮງກົ່ງໂຄ້ງດັ່ງເສັ້ນກົ່ງຂີດນັ້ນ ຫັງສະຫງ່າງາມ ແລະອວດອົ່ງຢູ່ໃນຕົວ ແລະ ລຳຂາຮຽວຈ່ອຍກໍກະໂດດບາດກວ້າງໆ ແລະ ເຂັ້ມແຂງ. ເຊມິຍົງພາມ້າຢຸດຢູ່ຕໍ່ຫນ້າພວກເຮົາຢ່າງກະທັນຫັນ ໂດຍໃຊ້ມືຂ້າງດຽວກະຕຸກໃຫ້ມ້າຫັນຫົວງາມໆຂອງມັນ ມາຢູ່ຊື່ຄາງຂອງເຂົາ. ຂອບຕາຂອງມັນແດງຊ້ຳ ແລະ ແກ່ນຕາດົດຳປີ້ໂຮງຮຸ່ງເຕັມໄປດ້ວຍພະລັງຄວາມຫນຸ່ມສັກຊື່ໃສ່ ອານໂຕນ ຜູ້ກຳລັງຕົກສະເງີ້ຢູ່

ດ້ວຍຄວາມທະນົງໃຈ. ອານໂຕນ ເອົາມືຄວາໄປລູບຫູມ້າ ອຸທານ ສຽງສັ່ນວ່າ:

-ຂອງພວກເຮົາຫວະ? ມ້າໂຕນີ້ເປັນຂອງພວກເຮົາຫວະ?

-ກະແມ່ນລະບໍ້... ມັນເປັນຂອງພວກເຮົາແລ້ວ! ເຊມີຍົງ ເວົ້າຢ່າງພາກພູມໃຈ.

-ລົງມາເທາະແມ້... ພ້າເອີ້ຍ! ໃນທັນໃດ ອານໂຕນ ກໍຮ້ອງ ກົ້າກໃສ່ກາຣາບານົບ ແບບນີ້, - ໂຕນັ່ງຕິດມ້າຢູ່ເຮັດຫຍັງບາດນີ້ ນະ... ເບິ່ງດູ... ອາຍຄົງມັນອອກກຸ່ນໆ... ໂຕກໍເຫັນຕິ... ມ້າໂຕ ນີ້ມັນບໍ່ແມ່ນປະເພດມ້າພວກກູລັກເດີ້.

ອານໂຕນ ຍາດເອົາເຊືອກບັງຫຽນມາກື ແລະ ໃຊ້ແສງຕາ ເປັນຄຳສັ່ງຊ່ອຍ.

ເຊມີຍົງ ໂດດລົງດິນ.

-ເຮົາເຂົ້າໃຈ...ອ້າຍເອີ້ຍ, ເຮົາເຂົ້າໃຈ... ມ້າແບບນີ້ຫວະ ບາງທີຄືຊິມີແຕ່ຈັກກະພັດ ນາໂປລຽນເທົ່ານັ້ນທີ່ມີມ້າດີແບບນີ້ກໍເປັນ ໄດ້.

ອານໂຕນ ໂດດຂຶ້ນເທິງອານມ້າຢ່າງຄ່ອງແຄ້ວວ່ອງໄວປານ ສາຍຟ້າແມບ, ເຂົາລູບຄຳລ່ຳຄໍຂອງສັດດ້ວຍຄວາມຮັກຢ່າງຫລົງ ໄຫລ ຈາກນັ້ນຈຶ່ງຫັນຫນ້າຫນີແບບພຶບພັບ ແລະ ສັບສົນ, ຍົກ ແຂນເສື້ອຂຶ້ນເຊັດກູຕາ.

ພວກເດັກນ້ອຍພາກັນຫົວຂຶ້ນຄ່ອຍໆ. ກາລີນາ ອີວາໂນວິດ ຍິ້ມ, ສົ່ງສຽງຄາງອຸ່ມອຶມອອກມາ ແລ້ວຊ້ຳພັດຫົວອີກໃຫມ່.

-ບໍ່ມີຫຍັງຊິຕິເລີຍລະ... ມ້າໂຕນີ້ນະ, ກູບອກສູແລ້ວຕວ່າ...

ກູຢາກຈະບອກສູອີກວ່າ...ມັນແມ່ນເພັດມາຕິກຕິມດອກ..., ເອີ້... ພວກເຮົາຊິທຳລາຍມັນ.

-ທຳລາຍໃຜ? ວ່າແລ້ວ ອານໂຕນ ກໍກົ້ມຫົວລົງໃສ່ພໍ່ເກົ້າ ກາລີນາ ອີວາໂນວິດ ແລ້ວຫັນມາຮ້ອງໃສ່ເດັກນ້ອຍນິຄົມຮ້າຍໆວ່າ:

-ບັກໃດມາແຕະຕ້ອງມັນ ກູຊິຈັດການຫມໍນັ້ນໂລດ! ມິຫວັງໄດ້ຊິມເຫລັກສາມງ່າມກູຄັກໆດວ່າ!

ຫມໍງວາກກັບຄືນມາຢ່າງກະທັນຫັນ ແລ້ວມ້າໂຕງາມກໍພາມັນຢ່າງເຍາະໄປຍັງຄອກມ້າດ້ວຍບາດກ້າວສັ້ນໆ ແລະ ສະຫງ່າງາມ. ເບິ່ງຄືວ່າມັນມີຄວາມສຸກທີ່ໄດ້ຜູ້ຂັບຂີ່ເຫມາະສົມກັບຫລັງຂອງມັນ.

ພວກເຮົາຕັ້ງຊື່ໃຫ້ມັນວ່າ "ບັກຫນຸ່ມ".

ບົດທີ ໘

ກອງທີ ໗ ແລະ ກອງທີ ໘

ໃນຕົ້ນເດືອນກໍລະກົດ, ພວກເຮົາກໍໄດ້ຮັບສິດເຊົ່າໂຮງສີເປັນລະຍະ ໓ ປີໃນລາຄາ ໓000 ຣຸບຕໍ່ປີ. ພວກເຮົາເປັນຜູ້ມີສິດຊົມໃຊ້ມັນຢ່າງສົມບູນ ແຕ່ພຽງຜູ້ດຽວໂດຍບໍ່ຮັບເອົາຜູ້ໃດມາຮ່ວມຮຸ້ນສ່ວນນຳຈັກຄືນ. ສາຍພົວພັນທາງການທູດກັບສະພາໂຊວຽດທ້ອງຖິ່ນມີອັນຂາດສະບັບລົງອີກຄັ້ງຫນຶ່ງ, ນອກນີ້ກໍານົດສະພາໂຊວຽດທ້ອງຖິ່ນເກົ່າທີ່ມີແຕ່ສະມາຊິກຂອງພວກກູລັກນັ້ນກໍໃກ້ຈະຫມົດໄປແລ້ວ. ການພິຊິດໂຮງສີ ແມ່ນໄຊຊະນະຫນຶ່ງຂອງອົງການ ກົມໂຊໂມນ ຢູ່ໃນແນວຮົບເຂດທີສອງຂອງພວກເຮົາ.

ໂດຍບໍ່ຮູ້ສຶກຕົວ ນິຄົມເລີ່ມອຸດົມສົມບູນຂຶ້ນ ເລີ່ມມີການຜະລິດຢ່າງຈິງຈັງເປັນລະບົບ ແລະ ເຂັ້ມແຂງ.

ເຖິງແມ່ນການຊື້ມ້າສອງໂຕນັ້ນບໍ່ແມ່ນກິດຈະການທີ່ງ່າຍດາຍ ກໍຕາມ ແຕ່ມາຮອດກາງລະດູຮ້ອນພວກເຮົາກໍສາມາດມີສັດອື່ນໆເປັນຈຳນວນຫລາຍສົມຄວນ ຄືມີງົວແມ່ງາມໆຫລາຍໂຕ, ແກະຝູງໜຶ່ງ ແລະ ສາມາດຊື້ເຄື່ອງໂຕະຕັ່ງຊຸດໃຫມ່ໄດ້.

ນອກນີ້ ໂດຍບໍ່ໃຫ້ມີການກະທົບກະເທືອນເຖິງງົບປະມານຂອງພວກເຮົາ, ແຊເຣີ ລົງມືກໍ່ສ້າງຄອກງົວໃຫມ່ບ່ອນໜຶ່ງໂລດ, ບໍ່ທັນທີ່ພວກເຮົາຈະໄດ້ງວາກຫລັງມາເບິ່ງຊ້ຳ ອາຄານຮູບຊົງສະຫງ່າງາມ ແລະ ຫມັ້ນຫນຽວຫລັງໜຶ່ງກໍຕັ້ງໂພ້ໂວ້ຂຶ້ນຢູ່ເບື້ອງສຸດເດີ່ນພຸ່ມແລ້ວ. ຢູ່ຕໍ່ຫນ້າອາຄານ ແຊເຣີ ແຕ້ມແຜນຫນານປູກດອກໄມ້ເຮັດໃຫ້ຄວາມນຶກຄຶດທີ່ວ່າ ຄອກງົວເປັນບ່ອນເຫມັນເປິເປື້ອນສາບສູນໄປ. ຢູ່ຄອກໃຫມ່ມີແມ່ງົວພັນ ຊິມເມີທານ ມາໃຫມ່ຕັ້ງ ໔ ໂຕ, ໃນຈຳນວນໂຕສັດທີ່ເພີ່ມທະວີຂຶ້ນນີ້ ອັນພິເສດສຸດສຳລັບພວກເຮົາ ແລະ ສຳລັບ ແຊເຣີ ເອງກໍເຊັ່ນດຽວກັນແມ່ນງົວເຖິກບັກ ເຊຊາຣ໌ ເຊິ່ງຖືວ່າແມ່ນສິ່ງມະຫັດສະຈັນຢ່າງໜຶ່ງ.

ແຊເຣີ ປະສົບຄວາມຫຍຸ້ງຍາກສົມຄວນໃນການຂຽນບັດປະຈຳຕົວປີ້ງແນວພັນຂອງງົວເຖິກໂຕນີ້ ແຕ່ຍ້ອນວ່າມັນມີລັກສະນະງົວພັນ ຊິມເມີທານ ຫລາຍສົມຄວນບັດປະຈຳຕົວຂອງມັນຈຶ່ງອອກມາໄດ້. ມ້າ "ບັກຫນຸ່ມ" ເອງ ກໍມີບັດປະຈຳຕົວຄືກັນ, ນອກນີ້ຜູ້ມີບັດປະຈຳຕົວອີກຕົວໜຶ່ງໃນຄອກກໍແມ່ນ ຫມູເຖິກໂຕຂະຫນາດ ໔໘໐ ປອນຕົວໜຶ່ງ ເຊິ່ງຂ້າພະເຈົ້າໄດ້ມາຈາກສະຖານີທົດລອງ

ແຕ່ດິນແລ້ວ, ມັນເປັນຫມູ່ພັນອັງກິດບໍລິສຸດ ພວກເຮົາໃສ່ຊື່ໃຫ້ມັນວ່າ ວາຊີລີ ອີວາໂນວິດ ເພື່ອເປັນກຽດແກ່ເຈົ້າຂອງເຄຫາ ແຕຣບແກ ຄົນເກົ່າ.

ປີ່ນອ້ອມແກນເຊິ່ງປະກອບດ້ວຍສັດຕ່າງແດນສາມໂຕເຊັ່ນ ຄື ເຢຍລະມັນ, ແບນຊິກ ແລະ ອັງກິດ ນີ້ ມັນຈຶ່ງເຮັດໃຫ້ການຈັດຕັ້ງວຽກງານລ້ຽງສັດພັນດີຢ່າງແທ້ຈິງນັ້ນງ່າຍດາຍຂຶ້ນ.

ຄອກຫມູເຊິ່ງຢູ່ໃຕ້ຄວາມຮັບຜິດຊອບຂອງກອງທີ ໑໐ ອັນມີສະຕູປົດຊິນເປັນນາຍກອງນັ້ນ ໄດ້ປະຕິຮູບມາເປັນກອງຫນຶ່ງທີ່ເຮັດວຽກຢ່າງຈິງຈັງແລ້ວ, ຍ້ອນຄວາມສຳຄັນ ແລະ ຄວາມສົດບໍລິສຸດຂອງຜະລິດຕະພັນຂອງມັນນັ້ນເອງ ເຮັດໃຫ້ມັນກ້າວນຳຫນ້າຢູ່ຂົງເຂດນີ້ ຮອງ ຈາກສະຖານີທົດລອງ.

ກອງທີ ໑໐ ທີ່ປະກອບດ້ວຍສະມາຊິກ ໑໘ ຄົນນັ້ນ ຍາມໃດກໍປະຕິບັດພາລະກິດຂອງຕົນຢ່າງເປັນແບບເປັນຢ່າງແທ້ ຢູ່ໃນນິຄົມຄອກຫມູເປັນສະຖານທີ່ດຽວ ເຊິ່ງໃນນັ້ນບໍ່ມີໃຜຈັກຄົນມີແນວຄຶດສົງໄສ ບໍ່ແນ່ໃຈໃນຄວາມເປັນຢູ່ຂອງມັນແມ່ນແຕ່ວິນາທີດຽວ. ອາຄານກໍ່ດ້ວຍເບຕົງຫລັງງາມຫລັງນີ້ຕັ້ງຢູ່ກາງເດີ່ນ, ມັນຫວ່າງເປົ່າມາແຕ່ສະໄຫມພວກ ແຕຣບແກ ແລະ ບັດນີ້ກາຍເປັນສູນກາງທາງດ້ານພູມສາດຂອງພວກເຮົາ: ຮູບຊົງອັນສວຍງາມຂອງມັນທີ່ເດັ່ນສະງ່າ ຍືນຍັນຢູ່ຕໍ່ຫນ້າທຸກຄົນຈົນບໍ່ມີໃຜຄາດຄຶດຈັກເທື່ອວ່າ ຄອກຫມູເປັນສິ່ງທີ່ຫນ້າອັບອາຍຢູ່ໃນນິຄົມ ກັອກກີ.

ບໍ່ອີຫລີແລ້ວພວກເດັກນ້ອຍບໍ່ໄດ້ເຂົ້າໄປດອກ. ເດັກນ້ອຍມາໃຫມ່ໄດ້ເຂົ້າໄປໃນການມາຢ້ຽມຢາມທັດສະນະສຶກສາ, ໂດຍທົ່ວ

ໄປແລ້ວຕ້ອງມີໃບອະນຸຍາດຜ່ານເຂົ້າພາຍໃນ ໂດຍແມ່ນຂ້າພະເຈົ້າ ຫລື ແຊເຣີ ເຊັນໃຫ້. ຍ້ອນແນວນີ້ແລ້ວ ທີ່ຊາວນິຄົມ ແລະ ຊາວບ້ານຈຶ່ງແນມເບິ່ງວຽກງານຂອງກອງທີ່ ໑໐ ຈຶ່ງແຜ່ງເຊື່ອງຊ້ອນດ້ວຍຄວາມລີ້ລັບຫລາຍອັນ ຈົນເປັນເລື່ອງມີກຽດສູງໄປ ເມື່ອໄດ້ເດີນຜ່ານເຂົ້າໄປ.

ການຜ່ານເຂົ້າໄປຮອດຫ້ອງຕ້ອນຮັບ ຕາມຄຳອະນຸຍາດຂອງສະຕູປິດຊິນນັ້ນງ່າຍດາຍສົມຄວນ. ຢູ່ບ່ອນນີ້ ມີຫມູນ້ອຍທີ່ຈະຂາຍອອກໃຫ້ເບິ່ງ ແລະ ທັງເປັນບ່ອນເອົາຫມູແມ່ຂອງຊາວບ້ານມາເຊິງນຳ.

ລູກຄ້າ ເຈົ້າຂອງຫມູ ຈ່າຍຄ່າເຊິງຫມູເທື່ອລະ ໓ ຣຸບ, ເຊິ່ງນາຍຄັງອອບຊາເຣັນໂກ ຜູ້ຮອງ ສະຕູປິດຊິນ ເປັນຜູ້ອອກໃບຮັບໃຫ້. ຫມູນ້ອຍໃນຄອກຫ້ອງຕ້ອນຮັບມີລາຄາຂາຍຂາດຕົວຕາມນ້ຳຫນັກ ເຖິງວ່າມີຊາວບ້ານຫລາຍຄົນມາໂຕ້ຖຽງອ້າງເຫດອ້າງຜົນວ່າເປັນເລື່ອງໄຮ້ສາລະຫນ້າຢາກກົວ ຫລາຍທີ່ໄປຂາຍຫມູນ້ອຍຕາມນ້ຳຫນັກ ແລະ ເວົ້າວ່າ ບໍ່ມີໃຜເຮັດແນວນີ້ຢູ່ໃສຫມົດ.

ມີແຂກຄົນມາຫລາຍໃນເວລາແມ່ຫມູອອກລູກ. ແຊເຣີ ນັ້ນເອົາຫມູນ້ອຍບໍ່ກາຍ ໆ ໂຕ ຈາກແຕ່ລະຄອກ ໂດຍເລືອກເອົາພວກອອກທຳອິດ ແລະ ໂຕທີ່ແຂງແຮງກວ່າຫມູ່ ຈາກນັ້ນຈຶ່ງປ່ອຍໂຕອື່ນໆໃຫ້ຜູ້ສະຫມັກເລືອກເອົາຢ່າງສະບາຍໃຈ. ໃນທັນໃດສະຕູປິດຊິນ ກໍຈະພ້າວໃຫ້ຄຳແນະນຳອັນຈຳເປັນສຳລັບດູແລ ເບິ່ງແຍງຫມູນ້ອຍພາກແມ່ໃຫ້ພູ້ຊື້ໂລດ, ເຂົາອະທິບາຍເຖິງວິທີລ້ຽງຫມູນ້ອຍດ້ວຍເຕົ້ານົມດູດ ແລະ ການລ້ຽງນົມໃຫ້ມັນ, ວິທີເອົາມັນອາບ

ນ້ຳ ແລະ ລະຍະເວລາປ່ຽນອາຫານຂອງມັນ. ເພີ່ນຂາຍຫມູນ້ອຍບໍ່ທັນອອກນົມເຫລົ່ານີ້ໃຫ້ແກ່ບຸກຄົນ ທີ່ຄະນະກຳມະການຊາວນາທຸກແນະນຳມາເທົ່ານັ້ນ ຈັ່ງຊັ້ນວັນທີ່ຫມູແມ່ຈະອອກລູກ ຊຶ່ງເປັນທີ່ຮູ້ກັນທົ່ວໆໄປກ່ອນລ່ວງຫນ້າແລ້ວ, ກະດານແຜ່ນຫນຶ່ງທີ່ຕິດຕັ້ງຢູ່ດ້ານຫນ້າຂອງຄອກຫມູນັ້ນ ແຈ້ງບອກໃຫ້ປະຊາຊົນທັງຫລາຍຮູ້ວ່າ ມື້ໃດຫມູໂຕໃດຈະອອກ ແລະ ເວລາໃດພວກເຂົາຈຶ່ງຈະມາຮັບເອົາໄດ້.

ການແຈກຢາຍຈຳຫນ່າຍຫມູນ້ອຍ ສ້າງຊື່ສຽງໃຫ້ພວກເຮົາໄປທົ່ວຂົງເຂດ ແລະ ເຮັດໃຫ້ພວກເຮົາມີມິດສະຫາຍຢູ່ໃນຊົນຊັ້ນຊາວນາຫລາຍຂຶ້ນ. ແຕ່ລະບ້ານກໍມີຫມູພັນອັງກິດດີໆຢູ່ ເຊິ່ງເຖິງວ່າອາດຈະບໍ່ດີປານໃດສຳລັບເອົາເຮັດແນວ ແຕ່ຫມູນ້ອຍພວກນີ້ໃຫຍ່ອ້ວນໄວດີພິລຶກ.

ພາກສ່ວນທີສອງໃນຄອກຫມູ ຖືກຈັດໄວ້ເປັນບ່ອນລ້ຽງຫມູນ້ອຍ, ສະຖານທີ່ນັ້ນບວ່າແມ່ນຫ້ອງທົດລອງຂະຫນານແທ້ບ່ອນຫນຶ່ງ, ໃນທີ່ນີ້ ສັດແຕ່ລະຕົວຖືກຕິດຕາມໃກ້ຊິດບໍ່ຂາດຕອນ ກ່ອນທີ່ເພີ່ນຈະກຳນົດບົດບາດໃນອະນາຄົດຂອງມັນລົງໄປ. ຈັ່ງຊັ້ນຈຳນວນ "ລູກລ້ຽງ" ຂອງ ແຊເຣີ ຈຶ່ງສູງຂຶ້ນເປັນຫລາຍຮ້ອຍ, ໂດຍສະເພາະໃນລະດູບານໃຫມ່. ເດັກນ້ອຍນິຄົມຫລາຍຄົນກໍຮູ້ຈັກເບິ່ງ "ພວກຄວາມຫວັງໃຫມ່" ເຫລົ່ານີ້ຢ່າງທັນອົກທັນໃຈ, ພວກເຂົາຕິດຕາມການຂະຫຍາຍຕົວຂອງພວກມັນດ້ວຍຄວາມເອົາໃຈໃສ່ ແລະ ລະມັດລະວັງເປັນພິເສດ. ຊື່ສຽງຂອງຕົວເດັ່ນຫລາຍຕົວດັງມາເຖິງຫູຂ້າພະເຈົ້າ, ເຖິງ ກາລີນາ ອີວາໂນວິດ ສະພານາຍກອງ

ແລະ ຊາວນິຄົມທັງມວນ. ຍ້ອນແນວນີ້ແລ້ວ ເມື່ອລູກຊາຍຂອງຫມູເກີກ ວາຊີລີ ອີວາໂນວິດ ກັບແມ່ຫມູ ມາທິນດາ ມືນຕາມາເບິ່ງໂລກນັ້ນ ມັນຈຶ່ງຖືກຫຸ້ມລ້ອມດ້ວຍຄວາມເອົາໃຈໃສ່ທຸກຜູ້ທຸກຄົນ. ນັບວ່າມັນເປັນ "ແຣກກຸນລາ" ນ້ອຍໂຕຫນຶ່ງແທ້ໆ ພໍເກີດກໍສະແດງຄູນນະສົມບັດ ເພື່ອຈະເປັນຜູ້ສືບແນວແທນພໍ່ມັນໂລດ. ມັນບໍ່ເຮັດໃຫ້ການຄອງຄອຍຂອງພວກເຮົາຜິດຫວັງເລີຍ, ແລະ ໄດ້ເຂົ້າໄປຢູ່ປະຈຳໃນຫ້ອງຂ້າງໆຜູ້ໃຫ້ກຳເນີດມັນໂລດ ແລະ ໄດ້ຮັບຊື່ວ່າ ປີອົດ ວາຊີເລັບວິດ ຕາມຊື່ຂອງອາດຍາຫນຸ່ມຂອງຕະກູນ ແຕຣບແກ.

ໄກອອກໄປພຸ້ນແມ່ນຂະແຫນງລ້ຽງຫມູນ້ອຍ. ຢູ່ທີ່ນີ້ຄວາມສຸກສະຫງົບ ພ້ອມດ້ວຍລະບົບອາຫານ ແລະ ການຊັ່ງນ້ຳຫນັກຄອບຄຸມຢູ່ໃນຂັ້ນສູງສຸດ. ຖ້າຫາກວ່າໃນຂັ້ນຕົ້ນເຄີຍມີສັດບາງຕົວສະແດງອາການບໍ່ຄັກແນ່ໃຈ ຫລືບາງຕົວກໍຮ້ອງໂຮອອກມາດັງໆແບບຈະແຈ້ງແດ່ບໍ່ຈະແຈ້ງແດ່ ກ່ຽວກັບຄວາມຮັບຮູ້ ແລະ ອາລົມສຳຜັດອັນອ່ອນໄຫວຕໍ່ໂລກ ແຕ່ພໍເວລາຜ່ານໄປຫນຶ່ງເດືອນ ພວກເຂົາກໍພາກັນມິດຊ້ອຍມ້ອຍຢູ່ເທິງຮັງ ແລະ ສົນລະວົນຢູ່ນຳການຍ່ອຍອາຫານຢ່າງຄຳຮູ້ຄຳຊຽງ. ຊີວະປະຫວັດຫຍໍ້ໆຂອງມັນສ້ຽງສຸດລົງດ້ວຍຄວາມອ້ວນພີ ແລ້ວມາຮອດມື້ງາມຍາມດີ ພວກມັນກໍຍ້າຍມາຢູ່ເທິງໂພນດິນຊາຍຂ້າງສວນເກົ່າ ອັນເປັນເຂດຂອງ ກາລີນາ ອີວາໂນວິດ ແລະ ຊີລັນຕີ, ເຊິ່ງພາກັນປ່ຽນຮູບໂສມຂອງພວກມັນໃຫ້ເປັນສິ່ງບໍລິໂພກຢ່າງບໍ່ຫົວຊາຕໍ່ບັນຫາທີ່ເຄີຍກັງວົນໃດໆເລີຍ ໃນຂະນະທີ່ຢູ່ຫ້ອງມ້ຽນອາຫານ ອາໂລດຊາ ໂວນກອບ ກຳລັງກະກຽມເອົາຕ່ອນນ້ຳມັນມ້ຽນໃສ່ກະໂລ່ງ.

ຂະແໜງສຸດທ້າຍເປັນບ່ອນລ້ຽງໝູແມ່ສຳລັບປະສົມພັນ ໂດຍສະເພາະ ແຕ່ວ່າມີແຕ່ຜູ້ຫົວສະໝອງຍ້ຽມຍອດເທົ່ານັ້ນຈຶ່ງໄດ້ເຂົ້າໄປ. ແມ່ນແຕ່ຂ້າພະເຈົ້າເອງກໍຍັງບໍ່ຮູ້ຄວາມລີ້ລັບຢູ່ໃນສົມສັກສິດບ່ອນນີ້.

ການລ້ຽງໝູສ້າງລາຍໄດ້ໃຫ້ພວກເຮົາຢ່າງຫລວງຫລາຍ. ພວກເຮົາບໍ່ເຄີຍຄາດຫວັງໄວ້ວ່າ ຈະກ້າວມາເຖິງເປັນບ່ອນຜະລິດທີ່ໄດ້ຮັບຜົນປານນີ້. ການປູກຝັງທີ່ມີການຈັດຕັ້ງຢ່າງດີຂອງ ແຊເອີ ເຮັດໃຫ້ພວກເຮົາມີອາຫານລ້ຽງສັດຢ່າງເຫລືອເຟືອຄືມີທັງຫົວຜັກກາດຂາວສຳລັບງົວ, ໝາກອຶ, ເຂົ້າສາລີ, ມັນຝະລັ່ງ. ພໍຕົກເຖິງລະດູໃບໄມ້ຫລົ່ນ ພວກເຮົາຈົນວ່າເກືອບເກັບກ່ຽວທຸກຢ່າງເຂົ້າມ້ຽນບໍ່ທັນ.

ການໄດ້ເປັນເຈົ້າຂອງໂຮງສີ ເບີກເສັ້ນທາງແຫ່ງຄວາມສົມບູນພູນສຸກໃຫ້ແກ່ພວກເຮົາ. ນອກຈາກເກັບຄ່າສີເຂົ້າແຕ່ລະຄັ້ງແລ້ວ (໔ ປອນຕໍ່ ໑ ປູດ*) ແລ້ວພວກເຮົາຍັງໄດ້ຜົນຮັບສຳຮອງ ເຊິ່ງມີຄ່າປະເສີດສຸດສຳລັບເຮັດອາຫານໃຫ້ສັດຂອງພວກເຮົາ.

ນອກນີ້ໂຮງສີຍັງມີຄວາມສຳຄັນດ້ານອື່ນອີກ: ມັນພາໃຫ້ພວກເຮົາມີບົດບາດໃໝ່ຢູ່ໃນການພົວພັນກັບຊຸມຊົນຊາວນາອ້ອມແອ້ມ ແລະ ສາຍພົວພັນເຫລົ່ານີ້ ກໍເຮັດໃຫ້ພວກເຮົາດຳເນີນນະໂຍບາຍການເມືອງຍິ່ງໃຫຍ່ອັນໜຶ່ງ. ໂຮງສີກາຍເປັນກະຊວງຕ່າງປະເທດ

---

* ໑ ປອນ ເທົ່າກັບ ໐,໔໕໓ ກິໂລກຣາມ; ໑ ປູດ ເທົ່າກັບ ໑໖ ກິໂລກຣາມ.

ຂອງນິຄົມ. ບໍ່ມີໃຜສາມາດກ້າວເຂົ້າມາໃນນີ້ ແລ້ວບໍ່ຖືກແກ່ດຶງເຂົ້າ
ມາວົນວຽນຢູ່ໃນອຸມົງອັນສັບສົນແຫ່ງການແຂ່ງຂັນ ຍາດຊື້ຍາດຂາຍ
ຂອງຊາວບ້ານ. ໃນເບື້ງນັ້ນ ຢູ່ແຕ່ລະບ້ານມີຄະນະກຳມະການຊາວ
ນາທຸກເປັນຂອງຕົນເອງ, ສ່ວນຫລວງຫລາຍແລ້ວຫ້າວຫັນເຮັດ
ວຽກມີລະບຽບວິໄນດີ ແຕ່ຍັງມີພວກຊາວນາຖານະປານກາງ, ພວກ
ນີ້ອ່ອນພໍ ແລະ ແຂງຂັນພໍປານແກ່ນຫມາກກໍ່ວ, ພວກນີ້ຢູ່ຢ່າງກະ
ແຈກກະຈາຍຫ່າງໄກກັນ ຈັ່ງນັ້ນຈິ່ງເປັນພະລັງແຮງທີ່ນຶ່ງຊຶ່ງດຶງ
ດັນກັນເອງ. ນອກນີ້ກໍຍັງມີພວກຊາວນາຮັ່ງອາດຍາໃຫຍ່ ທີ່ເຊື່ອງ
ຕົວຢູ່ເບື້ອງຫລັງກຳແພງຮົ້ວອັນເຂັ້ມແຂງ, ຈິດໃຈຂອງພວກເຂົາປ່າ
ເຖື່ອນທ້ຽມໂຫດຂຶ້ນຍ້ອນຄວາມຄຽດແຄ້ນ ແລະ ຄວາມຈື່ຈຳອັນບໍ່
ສົດໃສ.

ເມື່ອມີສິດໃນການຊົມໃຊ້ໂຮງສີແລ້ວ ພວກເຮົາກໍປະກາດທັນທີ
ວ່າ ພວກເຮົາຢາກບໍລິການກຸ່ມໂຮມຫມູ່ໂດຍສະເພາະ ແລະ ຈະ
ໃຫ້ອະພິສິດແກ່ພວກນີ້ກ່ອນຫມູ່. ພວກເຮົາສະເຫນີໃຫ້ກຸ່ມເຫລົ່າ
ນີ້ມາຈົດຊື່ໄວ້ລ່ວງຫນ້າ. ພວກຊາວນາທຸກເຕົ້າໂຮມເຂົ້າກັນຢ່າງ
ງ່າຍດາຍ, ພວກເຂົາມາຮັບບໍລິການຢ່າງຖືກຕ້ອງຕາມເວລາ, ປະ
ຕິບັດຕາມກົດລະບຽບ ແລະ ຄຳແນະນຳຂອງຝ່າຍປົກຄອງຢ່າງເຄັ່ງ
ຄັດ, ຄິດໄລ່ບັນຊີຢ່າງວ່ອງໄວ ແລະ ງ່າຍດາຍ, ເຮັດໃຫ້ວຽກ
ງານການສີເຂົ້າຂອງພວກເຮົາດຳເນີນໄປຢ່າງສະດວກຫລ່ຽນໄຫລ.
ພວກ "ອາດຍາ" ນັ້ນຕັ້ງເປັນກຸ່ມນ້ອຍກວ່າ ແຕ່ແຫນ້ນຫນຽວດີ
ຍ້ອນຄວາມເຂົ້າອົກເຂົ້າໃຈຕໍ່ກັນ ແລະ ກັນຂອງພວກເຂົາ ແລະ
ສາຍພົວພັນທາງດ້ານຄອບຄົວ. ພວກເຂົາລົງມືເຄື່ອນໄຫວດ້ວຍ

ຄວາມສາມັກຄີນິດໆ ຈິນເປັນທີ່ເຂົ້າໃຈຍາກວ່າແມ່ນໃຜໃນຫມູ່ພວກເຂົາເປັນຫົວຫນ້າ.

ໃນທາງກົງກັນຂ້າມ ເມື່ອມີກຸ່ມຊາວນາຜ້ານກາງມາຍັງໂຮງສີ ວຽກງານຂອງຊາວນິຄົມກໍຫນັກຫນ່ວງຂຶ້ນ, ພວກເຂົາມາບໍ່ພ້ອມກັນຈັກເທື່ອ ຄ່ອຍໆທະຍອຍມາຫມົດມື້ພວກເຂົາກໍມີຕົວແທນກຸ່ມຢູ່ ແຕ່ເພິ່ນຜູ້ນີ້ເອົາເຂົ້າໂຕເອງມາສີໄວ້ກ່ອນຫມູ່, ເມື່ອແລ້ວວຽກກໍກັບເມືອ ປ່ອຍກຸ່ມຄົນທີ່ຮ້ອນຮົນວຸ່ນວາຍເຕັມໄປດ້ວຍແນວຄຶດສິ່ງໄສຕ່າງໆ ນາງໄວ້. ສວຍໂອກາດທີ່ໄດ້ມາບອກແດ່ ແລະ ປັ້ນເຂົ້າເຊົ້າທັງດື່ມເຫລົ້າເກື່ອນຕື່ມ ແຂກຂອງພວກເຮົາກໍເລີຍສະແດງທ່າທີວ່າຢາກຈັດການເລື່ອງຂັດແຍ່ງພາຍໃນເຮືອນຢູ່ ກັບບ່ອນນີ້ໂລດ ເມື່ອເຮັດເສັກທາງດ້ານວາຈາ ຕິດຕາມດ້ວຍການແລກກຳປັ້ນແດ່ເລັກນ້ອຍ, ເລື່ອງມັນກໍມັກລົງທ້າຍດ້ວຍເຫດການນີ້ຄື: ພວກນັກພິດກຽງນັ້ນໄດ້ອອກຈາກການະເປັນລູກຄ້າ ມາເປັນຄົນເຈັບປ່ວຍທີ່ຕ້ອງນຳໄປປິ່ນປົວຢູ່ສະຖານີພະຍາບານຂອງ ເອີກາເຕີຣີນາ ກຣີກໍເຣັບນາ, ສິ່ງດັ່ງກ່າວເຮັດໃຫ້ເດັກນ້ອຍ ນິຄົມໃຈຮ້າຍ ເປັນຟືນເປັນໄຟ. ອິດຊາຈີ ນາຍກອງເບີ ລ ເຊິ່ງຮັບຜິດຊອບຢູ່ໂຮງສີແລ່ນໄປໂຮງຫມໍນ້ອຍເພື່ອໂຕ້ຖຽງກັບ ເອີກາເຕີຣີນາ ກຣີກໍເຣັບນາ.

- ເປັນຫຍັງເຈົ້າຈຶ່ງພັນບາດແຜໃຫ້ພວກເຂົາ? ຈົ່ງແມ່ນພວກເຂົາສົມໄດ້ຮັບການປິ່ນປົວດອກ. ເຈົ້າບໍ່ຮູ້ຈັກພວກເຂົານ່າ...ພວກຊາວນາຮັ່ງມີຫມູ່ນີ້ ຖ້າວ່າເຈົ້າປິ່ນປົວພວກເຂົາແບບນີ້ຕໍ່ໄປ ພວກເຂົາແຮ່ງຊິຂ້າກັນຕາຍຫັ້ນແລ້ວ. ປ່ອຍໃຫ້ເປັນຫນ້າທີ່ຂອງພວກເຮົາເອງ ແລ້ວພວກເຮົາຊິໄດ້ປິ່ນປົວພວກເຂົາໄວໆດອກ. ທາງທີ່

ດີ ເຈົ້າໄປເບິ່ງເອງວ່າ ຢູ່ໂຮງສີພຸ່ນເປັນແນວໃດ.

ເພື່ອເຮັດໃຫ້ສັດຈະທຳຊຶ່ງໄວ້ເຊິ່ງຄວາມສັກສິດນັ້ນ ຕ້ອງຍອມຮັບວ່າກອງທີ ລ ກັບ ເດນິສ ກູດລາຕີ ຫືວໜ້າພະແນກສີ ຮູ້ວິທີປັ່ນປົວ ແລະ ເຮັດໃຫ້ນັກມວຍເຫລົ່ານີ້ຮູ້ເຫດຜົນເປັນຢ່າງດີ; ໃນລະຍະເວລາບໍ່ດົນ ພວກເຂົາກໍສ້າງຊື່ສຽງໂດ່ງດັງຢູ່ໃນຂົງເຂດນີ້ ໃນການະເປັນຜູ້ໃຊ້ສິດເຄັ່ງຄັດ.

ຈົນເຖິງເວລາກິນເຂົ້າເພນ ພວກເດັກນ້ອຍຢູ່ປະຈຳການຢ່າງບໍ່ເຫັນງຕຶງໄປໃສ ທ່ານກາງກົ່ນເຫລົ້າເກື່ອນ, ແຂນຂາແກວ່ງສວ່ານສົນ, ກິງແປ້ງທີ່ດຶງຍາດກັນໄປຄົນລະທາງ, ການແກ້ເຜັດ ອັນບໍ່ຫມົດບໍ່ສິ້ນ ເປັນສຳລັບບັນຫາໃຫມ່ ກັບບັນຫາເກົ່າ. ໃນທີ່ສຸດພວກເດັກນ້ອຍກໍອົດບໍ່ໄຫວ ອິດຊາຈີ້ອົດໂຮງສີ ແລະ ນຳໃຊ້ມາດຕະການ ປາບປາມ. ໃນຊົ່ວພິບຕາດຽວ ສະມາຊິກກອງທີ ລ ກໍຍົກພວກໃຫບ້ານຂີ້ເຫລົ້າກັບຜູ້ມັກຜິດກຽງສຽງດັງກວ່າຫມູ່ປະມານສາມຫລືສີ່ຄົນ ໃຫ້ຕີນຫວິດດິນແລ້ວລາກແກ່ໄປຍັງ ແຄມ ຫ້ວຍ ໂກໂລມາກ. ດ້ວຍທ່າທີເຄັ່ງຂຶມຈິງຈັງພໍປານການເຈລະຈາວຽກງານການຄ້າ ແລະ ດ້ວຍການໂອ້ລົມແບບອ່ອນຫວານຫນ້າຮັກທີ່ສຸດ ພວກຊາວນິຄົມຈັດການເອົາພວກເຂົານັ່ງລົງແຄມຝັ່ງ ແລະ ແລ້ວກໍຕັກເອົານ້ຳຂົ້ນມາຫົດຫົວພວກເຂົາເປັນສິບໆຄຸ ດ້ວຍຄວາມລະມັດລະວັງ ເປັນແບບເປັນຢ່າງແທ້ໆ. ທຳອິດ ຜູ້ສ້າງບັນຫາເອງກໍບໍ່ສາມາດເຂົ້າໃຈເຫດການໂລດດອກ, ເພິ່ນຍັງດົ້ດັ້ນຫັນມາເວົ້າເຖິງບັນຫາທີ່ໂອ້ລົມກັນຢູ່ໂຮງສີ

ພຸ້ນອີກ. ອິດຊາຈີ ຍືນຈ່າງຂາສີກ່ຳແດດຂອງຫມໍອອກກວ້າງໆ, ມື ທັງສອງຍັດຢູ່ກົງສົ້ງຂາສັ້ນ, ຫູຄອຍສະດັບຮັບຟັງສຽງຄາງຈົ່ມຂອງ ພວກຂີ້ເມົາ, ແກ່ນຕາດຳເລີກເຍືອກເຢັນຂອງຫມໍ, ຕິດຕາມອາ ການເຄື່ອນເຫນັງແຕ່ລະບາດຂອງພວກເຂົາ.

- ເກົ້າກີ້ຍັງເວົ້າ... "ບັກລູກ ຫມ..." ອີກ, ກອກນ້ຳໃສ່ຫົວ ມັນອີກສາມຄຸ.

ຢູ່ລຸ່ມພຸ້ນ, ແຄມຫນ້ານ້ຳ, ລາປິດ ວິນວາຍຢູ່ກັບການສາດນ້ຳ ຂຶ້ນມາຕາມປະລິມານສັ່ງ, ຈາກນັ້ນຈຶ່ງພິຈາລະນາເບິ່ງໃບຫນ້າຂອງ ຄົນປ່ວຍດ້ວຍຄວາມເອົາໃຈໃສ່ຈິງຈັງພຸ່ປານເຂົາເປັນແພດຫມໍ.

ໃນທີ່ສຸດ ຝ່າຍນີ້ຈຶ່ງຮູ້ສຶກຕົວເຂົ້າໃຈສະພາບການ, ຍົກມືຂຸກ ຕາ. ສັ່ນຫົວໄປມາແລ້ວຮ້ອງປະທ້ວງວ່າ:

- ຮ້ວາຍສູ... ມືສິດຫຍັງເຮັດແນວນີ້? ພວກລູກອີ...,

ອິດຊາຈີ ອອກຄຳສັ່ງຢ່າງສະຫງົບສະຫງ່ຽມວ່າ:

- ທົດໃສ່ມັນອີກບາດຫນຶ່ງ!

- ຫນຶ່ງອັດຕາທາດແຫລວວ່າຊຸ້ນເທາະ, ເອົາເລີຍ! ລາປິດ ເວົ້າເປັນທຳນອງເພງອອນຊອນອ້ອຍອິ່ນ ແລະ ແລ້ວຄືກັບວ່າຫມໍ ພວມຈະໃຫ້ຢາວິເສດຍອດສຸດທ້າຍແກ່ຄົນປ່ວຍ, ຫມໍຈັດແຈ່ງ ກອກນ້ຳເຕັມຄຸລົງໃສ່ຫົວທ້າວຊ່ານັ້ນດ້ວຍທ່າທີເປັນຫ່ວງກັງວົນ ນຳ. ຈາກນັ້ນຫມໍຈຶ່ງກົ້ມລົງໄປຕົບເອິກປຽກຂອງຜູ້ຮັບເຄາະ, ສັ່ງ ດ້ວຍນ້ຳສຽງອ່ອນຫວານອິ່ນອ້ອຍ ແລະ ຫນັກແຫນ້ນວ່າ:

- ຢ່າ! ຫັນໃຈ... ຫັນໃຈແຮງໆ... ອີກ... ອີກ... ຢຸດ...

ມາຮອດຕອນນີ້ຄົນປ່ວຍທີ່ເຜີສະຕິເລີ່ມປະຕິບັດຕາມຄຳສັ່ງຂອງ

ລາປິດ ຢ່າງຄຳຮູ້ຄຳຊຽງ ທ່າມກາງຄວາມພໍອົກພໍໃຈຂອງຜູ້ຊົມທັງໝົດ, ບາງເວລາເຂົາກໍຢຸດຢູ່ຊື່ງ, ຕໍ່ມາກໍເບິ່ງທ້ອງຂຶ້ນ ແລະ ໄອຄ້ອກໆ. ໃບໜ້າຂອງ ລາປິດ ແຈ່ມໃສຂຶ້ນແລ້ວເຂົາກໍລຸກຂຶ້ນຢືນ:

-ສະພາບປົກກະຕິດີແລ້ວ, ຫົວໃຈເຕັ້ນ ໜຶ່ງ໐, ອຸນຫະພູມ ໑໕.

ໃນກໍລະນີເຊັ່ນນີ້ ລາປິດ ຮູ້ກົ້ນຫົວໄວ້ເປັນຢ່າງດີ, ທຸກສິ່ງທຸກຢ່າງໃນຕົວເຂົາແຝງຄວາມຮູ້ທາງດ້ານວິທະຍາສາດໄວ້ຢ່າງສູງ. ຜູ້ທີ່ອອກສຽງແຮງໆມີແຕ່ພວກເດັກນ້ອຍເທົ່ານັ້ນ ຝັ່ງທີ່ຢືນຫົວຄຸເບິ່ງຢູ່ ສ່ວນວ່າກຸ່ມຊາວບ້ານທີ່ຢືນຢູ່ເທິງເນີນຄ້ອຍພຸ່ມ ພຽງແຕ່ສົ່ງຮອຍຍິ້ມແບບເຫັນໃຈມາໃຫ້. ລາປິດ ຫຍັບເຂົ້າໄປຫາພວກເຂົາ ແລ້ວກ່າວຢ່າງສຸພາບທີ່ສຸດວ່າ:

-ຕໍ່ໄປແມ່ນພຽນໃຜ? ແມ່ນໃຜຈະເຂົ້າປິ່ນປົວໃນຫ້ອງປິ່ນປົວດ້ວຍນ້ຳອີກ?

ພວກຊາວບ້ານຕົດອົກຕົດໃຈນຳຄຳເວົ້າຂອງ ລາປິດ ຈົນເວົ້າຫຍັງບໍ່ອອກ, ພໍປານວ່າໄດ້ດື່ມກິນນ້ຳຫວານເກສອນດອກໄມ້ພວກເຂົາເລີ່ມຫົວຍິ້ມໄວ້ກ່ອນທີ່ຄຳເວົ້າແຕ່ລະຄຳຈະດັງລອດອອກມາ.

-ສະຫາຍອາຈານ, ລາປິດ ເອີ້ນໃສ່ ອິດຊາຈີ, -ບໍ່ມີຄົນເຈັບອີກແລ້ວ.

-ເອົາຄົນເຈັບໄປເຊັດໂຕໃຫ້ແຫ້ງ, ອິດຊາຈີ ອອກຄຳສັ່ງ.

ກອງທີ ໙ ຈັດການເອົາຄົນປ່ວຍໄປນອນຢຽດລົງເທິງເດີ່ນຫຍ້າ, ຫງາຍໜ້າໃສ່ແສງແດດ ບັດນີ້ພວກເຂົາເລີ່ມມີສະຕິຢ່າງ

ແທ້ຈິງແລ້ວ. ຜູ້ຫນຶ່ງໃນພວກນີ້ສວ່າງເມົາແລ້ວເວົ້າອ້ອນວອນຂຶ້ນດ້ວຍຮອຍຍິ້ມວ່າ:

-ຢ່າລະ... ຢ່າລະ... ຂ້ອຍຊິຈັດການເອງດອກ, ຂ້ອຍຮູ້ສຶກໄຄແດ່ແລ້ວ...

ເກີງເວລານັ້ນ ລາປິດ ຈຶ່ງຍິ້ມອອກຢ່າງສົດໃສແບບອາລົມດີແລ້ວປະກາດວ່າ:

-ຜູ້ນີ້ເຊົາແລ້ວ, ເຮັດຫນັງສືອອກໃຫ້ໄດ້.

ພວກອື່ນໆຍັງອໍ້ແອ້ຢູ່ ທັງພະຍາຍາມກັບໄປຫາຄວາມຜິດພາດແບບເກົ່າວ່າ "ເຮີຍສູ... ສູຊິ..." ແຕ່ພໍຄຶດຮອດຄໍາສັ່ງເອົາຄຸນ້ຳມາຂອງ ອິດຊາຈິ ກໍເຮັດໃຫ້ພວກເຂົາເຊົາເມົາປານປິດກຶ້ມ ແລ້ວພາກັນອ້ອນວອນວ່າ:

-ບໍ່... ບໍ່ລະ, ຂໍເອົາກຽດຮັບປະກັນ, ມັນຫລົງປາກຫລົງຄວາມຍ້ອນຄວາມເຄີຍຊິນ, ຄືພວກເຈົ້າຮູ້ນັ້ນລະ.

ລາປິດ ກືວ່າພວກນີ້ແມ່ນຊະນິດກັບດານກວ່າຫມູ່ ຈຶ່ງຕ້ອງກວດກາຢ່າງເລິກເຊິ່ງ, ມາຮອດນີ້ ສຽງຫົວຂອງພວກເດັກນ້ອຍນີຄົມກັບພວກຊາວບ້ານ ໃຫ້ວ່າພຸ່ງຂຶ້ນສູງສຸດຂີດ, ຢຸດມິດໄປເປັນບາດພໍພຽງແຕ່ເພື່ອເກັບກໍາບ່ອນຄັກໆຢູ່ໃນການສົນທະນາຕໍ່ໄປນີ້ເທົ່ານັ້ນ.

-ຄວາມຊິນເຄີຍຊຸນຫວາ ເຈົ້າວ່ານະ? ແລ້ວເຄີຍມາດົນປານໃດແລ້ວລະ?

-ໂຍ້ວ ແມ່ນເຈົ້າຢາກເວົ້າຫຍັງເກາະ... ຟ້າເອີ້ຍ! ຄົນປ່ວຍອ້ອນວອນທັງຫນ້າແດງຮືນຂຶ້ນເກືອບຈະຮ້າຍຂຶ້ນແລ້ວ ແຕ່ບໍ່ກ້າສະແດງອອກຢ່າງເດັດຂາດພໍປານໃດ ເພາະວ່າສະມາຊິກກອງທີ ໙

ຍັງຢືນຢູ່ພຸ້ນ, ຢູ່ແຄມຝັ່ງນ້ຳພ້ອມດ້ວຍຄຸຕັກນ້ຳ ໃນມືກຽມພ້ອມຢູ່.

-ຊັ້ນບໍ່ດົນປານໃດຕິເນາະ? ພໍ່ແມ່ເຈົ້າກໍມີນິໄສປາກເສຍແບບນີ້ຫວະ?

-ແນ່ນອນລະ ພວກເພິ່ນກໍເປັນແນວນີ້ລະ, ທ້າວຜູ້ເປັນຄົນປ່ວຍຕອບທັງຫົວເຂີນ ໆ.

-ແລ້ວພໍ່ເກົ້າເຈົ້າເດ້?

-ເປັນຄືກັນ.

-ລຸງຂອງເຈົ້າເດ້?

-ເອີ້... ກະຄືກັນ.

-ແລ້ວແມ່ເກົ້າເດ້?

-ແນ່ນອນແລ້ວ... ລາວ... ເອີ້... ແມ່ນເຈົ້າພາຂ້ອຍເວົ້າຫຍັງໄປແລ້ວ... ຟ້າເອີຍ ແມ່ເກົ້າ... ຫວະ ໂອ້ຍບໍ່ດອກ, ຂ້ອຍຄຶດວ່າລາວບໍ່...

ລາປິດ ກັບຜູ້ຊຸມທັງຫມົດພາກັນພໍໃຈທີ່ໄດ້ຍິນວ່າ ແມ່ເກົ້າຂອງຄົນເຈັບຜູ້ນີ້ຢູ່ດີມີແຮງຕາມທຳມະດາ. ຫມໍຫັນມາຫາຄົນປ່ວຍຜູ້ປຽກມອດຍອດ ແລ້ວກໍເວົ້າກັບລາວໂດຍສະເພາະວ່າ:

-ມັນຈະຫມົດໄປດອກ. ມາຫາພວກເຮົາເລື້ອຍໆເດີ້ ບໍ່ເອົາຄ່າປິ່ນປົວດອກ.

ຄົນປ່ວຍກັບຜູ້ເປັນມິດສະຫາຍ ພ້ອມທັງຜູ້ເປັນສັດຕູຂອງລາວຫົວຈົນເຈັບທ້ອງ ແຕ່ ລາປິດ ຍັງຄົງເວົ້າຕໍ່ໄປຢ່າງເຄັ່ງຂຶມຈິງຈັງຄືເກົ່າ ທັງຍ່າງຄືນເມືອໂຮງສີບ່ອນທີ່ອິດຊາຈີ ໄຂປະຕູອອກໄວ້ແລ້ວ:

-ຫລືກ້າວ່າເຈົ້າຕ້ອງການພວກເຮົາໄປຫາຢູ່ເຮືອນກໍໄດ້ເດີ້. ບໍ່

ຄຶດຄ່າຫຍັງຫມົດຄືກັນ ແຕ່ເຈົ້າແຈ້ງມາກ່ອນລ່ວງຫນ້າສອງອາທິດ ແລະ ສົ່ງກວງນມ້າມາຕ້ອນເອົາທ່ານຫມໍ, ນອກນີ້ຄຸກັບນໍ້າກໍເປັນພາລະຂອງຝ່າຍເຈົ້ານໍາ. ພວກເຮົາອາດຊິປິ່ນປົວພໍ່ກັບແມ່ເຈົ້າພ້ອມເດົ້.

-ກ່ຽວກັບແມ່ຂອງລາວນັ້ນ ບໍ່ຕ້ອງດອກ, ລາວບໍ່ເຈັບປ່ວຍເປັນພະຍາດນີ້! ໃຜຜູ້ຫນຶ່ງໃນກຸ່ມຄົນເບິ່ງຮ້ອງອອກມາໃສ່ທ່າມກາງສຽງຫົວ.

-ຂໍໂທດເດີ້... ບາດຂ້ອຍຖາມກ່ຽວກັບພໍ່ແມ່ຂອງເຈົ້າ ເຈົ້າໂລດວ່າ "ແມ່ນອນ... ແລ້ວ!".

-ໂຫ້... ບໍ່ເດີ້! ລູກຄ້າຜູ້ສະຫວ່າງເຊົາແລ້ວຮ້ອງຄັດຄ້ານດ້ວຍຄວາມອັບອາຍ.

ພວກຊາວບ້ານຫົວໂຄບຂຶ້ນດ້ວຍຄວາມພໍໃຈ.

-ໂຮ່... ໂຮ... ຟັງເດີ້... ຫມໍນີ້ມັນປ້ອຍແມ່ມັນເອງ.

-ໃຜ?

-ກະຫມໍ ເຢຍດຸກ ຫັ້ນເດ້... ມັນເປັນຄົນປ່ວຍ... ຄົນປ່ວຍ... ໂອ້... ຂ້ອຍອົດບໍ່ໄຫວແລ້ວ, ຂ້ອຍຊິດາຍຄັກໆດວ່າ ບັກຊິວເອີຍ! ແລ້ວບັກນ້ອຍນັ້ນຈັ່ງແມ່ນພິລຶກ ບໍ່ຍົມບໍ່ກົວຈັກບາດເລີຍ... ທ່ານຫມໍວິເສດແທ້ ໆ.

ລາປິດ ຈະກັບຄືນມາໂຮງສີໃນການະຜູ້ຊະນະ ແລ້ວກໍມີຄໍາສັ່ງໃຫ້ຈັກແລ່ນຄືນ. ວຽກງານດໍາເນີນໄປໃນເງື່ອນໄຂທີ່ເກືອບຢາກວ່າກົງກັນຂ້າມກັບທີ່ມັນເປັນໃນຊົ່ວໂມງຫນຶ່ງກ່ອນຫນ້ານີ້: ພວກລູກຄ້າຮີບຮ້ອນປະຕິບັດຕາມຄໍາສັ່ງແນະນໍາຂອງ ກູດລາຕິ, ບາງຄົນຈົນ

ວ່າຍາກໂພດໄປພຸ້ນແລ້ວ, ລຽນກັນຕາມພຽນກັນຢ່າງບໍ່ມີປາກສຽງພໍ ຄວາມແລະພັງຄຳເວົ້າແຕ່ລະຄຳຂອງ ລາປິດ ຢ່າງຕິດອົກຕິດໃຈ, ເຂົາຜູ້ນີ້ກໍຕັ້ງວ່າມີພາສາເວົ້າ ແລະ ທ່າທີປະກອບແບບບໍ່ຫມົດບໍ່ສັງເປັນ. ໃນຕອນແລງເມື່ອການສີເຂົ້າແລ້ວຮຽບຮ້ອຍ ພວກຊາວບ້ານ ພາກັນມາຈັບມືກ່າວອຳລາພວກເດັກນ້ອຍນິຄົມ ຢ່າງອົບອຸ່ນ ແລະ ເມື່ອຂຶ້ນໄປນັ່ງເທິງກວຽນໃຜກວຽນມັນແລ້ວຮຽບຮ້ອຍ ກໍຍັງພາກັນເວົ້າເຖິງເຫດການຢ່າງມ່ວນຊື່ນອີກ.

-ອັນກ່ຽວກັບແມ່ເຖົ້າຫັ້ນເກາະ ຄັກແທ້ໃດ໋ເນາະ! ຫມໍນ້ອຍນີ້ພິລຶກຫລາຍມີຄົນແບບນີ້ຈັກຄົນໃນແຕ່ລະບ້ານ ມີຫວັງວັດເປັນວັດຮ້າງຫມົດເນາະ!

-ເຮີ້ຍ... ກາກໂປ ໂຕແຫ້ງດີແລ້ວຫວະ? ຜູ້ໃດຜູ້ຫນຶ່ງຮ້ອງທ້ວງຂຶ້ນ, -ແລ້ວຫົວຫັ້ນເດ້ ມັນກໍແຫ້ງບໍ່ລະ? ຮຽບຮ້ອຍດີຫມົດແລ້ວເບາະ? ແມ່ເຖົ້າໂຕເດ້ຄືກັນຫວະ... ຮະຮ່າ... ຮະຮ່າ...

ຮອຍຍິ້ມຂອງ ກາກໂປ ປາກົດຂຶ້ນຢູ່ກາງຫນວດເຄົາແບບອາຍໆ, ເຂົາພວມຂົນມ້ຽນກົງເຂົ້າແປ້ງຂຶ້ນມ້ຽນໃສ່ກວຽນ.

-ບໍ່ຄຶດມາກ່ອນຈັກເມັດເລີຍ! ລາວເວົ້າອອກມາທັງເກວ່ງຫົວ, -ບໍ່ຄຶດວ່າຊິໄດ້ມາເຂົ້າໂຮງຫມໍຢູ່ນີ້!".

-ເອົາລະ... ສຳບານໄດ້ບໍ່ລະ ຫລືວ່າໂຕລືມໄປແລ້ວ?

-ຢ່າເລີຍ... ຍັງບໍ່ເຖິງເວລາ, ກາຍ ສະໂຕໂຣເຈວອຍ ໄປກ່ອນແມ້ມັນອາດຊິສຳບິດສຳບານກັບມ້າມັນດອກ.

-ຮະຮ່າ... ຮະຮ່າ...

ໄຊຊະນະຂອງຫ້ອງແພດປິ່ນປົວດ້ວຍນ້ຳຂອງກອງທີ ລ ກະຈາຍອອກທົ່ວຂົງເຂດຢ່າງໄວວາ, ຄຳທຳອິດຂອງພວກລູກຄ້າທີ່ມາໂມ້ແປ້ງເອີ່ຍອອກກໍແມ່ນສະຖາບັນດີເດັ່ນແຫ່ງນີ້. ພວກເຂົາຕ້ອງການຢາກຮູ້ຈັກກັບ ລາປິດ ຢ່າງເປັນການສ່ວນໂຕແບບຈິງຈັງເດັດຂາດ. ສ່ວນທ້າວນີ້ກໍຈະອອກມາເດີນໄປໃຫ້ພວກເຂົາຈັບ ແຕ່ທ່າທີຍັງຈິງຈັງ ແລະ ເອື້ອອາລີ ເມື່ອເວົ້າວ່າ:

- ຂ້ອຍເປັນພຽງແພດຊ່ອຍຊັ້ນຫນຶ່ງເທົ່ານັ້ນດອກ, ພຸ້ນທ່ານຫມໍໃຫຍ່... ສະຫາຍ ອາຈານ ອິດຊາຈີ.

ອິດຊາຈີ ສົ່ງແສງຕາເຍັນກະດ້າງໄປເບິ່ງຊາວບ້ານ ທາງຝ່າຍນີ້ຊ້ຳເອົາມືຕົບບ່າໄຫລ່ເປືອຍຂອງ ລາປິດ ແບບລະວັງຕົວວ່າ:

- ຜູ້ຊ່ອຍຊັ້ນຫວະ? ຢູ່ບ້ານພວກເຮົາພຸ້ນ ບັດນີ້ຄົນຜູ້ໃດເວົ້າເພີ... ເວົ້າຊົ່ວ ຈະມີຜູ້ບອກເຂົາວ່າ "ເຮີຍ ຊິໄດ້ນຳທ່ານຫມໍຢູ່ນີ້ຄືນມາປາບມຶງລະນັ້ນ, ທ່ານຫມໍຜູ້ປິ່ນປົວດ້ວຍນ້ຳຫັ້ນນ່າ... ຄືວ່າເພິ່ນມາປົວຮອດເຮືອນເກາະ!"

ບໍ່ດົນພວກເຮົາ ກໍສາມາດສ້າງບັນຍາກາດຕາມແບບສະບັບຂອງພວກເຮົາຂຶ້ນໄດ້ຢູ່ໃນໂຮງສີ: ໃນນັ້ນຄວາມເບີກບານແຈ່ມໃສ, ຄວາມມ່ວນຊື່ນມີຊີວິດຊີວາ ກຸ້ມກົ້ວຢູ່ພ້ອມດ້ວຍຄວາມເຄັ່ງຄັດຕໍ່ລະບຽບວິໄນ ເຊິ່ງເຊື່ອງຊ້ອນຕົວຢູ່ພາຍໃຕ້ກົງມືຜ້າຂີນແຕ່ກໍສາມາດເຮັດໃຫ້ຜູ້ຢາກກໍ່ກວນໃນບາງໂອກາດຕ້ອງຖອຍຫລັງໄປ.

ມາຮອດເດືອນກໍລະກົດ ພວກເຮົາໄດ້ຈັດໃຫ້ມີການເລືອກຕັ້ງສະພາໂຊວຽດຫ້ອງກິນໃຫມ່. ລູກາ ເຊມີວໂນວິດ ກັບ ພັກພວກຂອງເຂົາ ຍິນຍອມຖອນຕົວອອກຈາກຕຳແຫນ່ງໂດຍບໍ່ຕໍ່ສູ້.

ປາແອນ ປາວະໂລວິດ ນິໂກລາຍເຢັງໂກ ໄດ້ຮັບເລືອກເປັນປະທານໃນສະພາໂຊວຽດ, ຈາກນິຄົມພວກເຮົາກໍມີຜູ້ແທນຜູ້ຫນຶ່ງຄື ເດນີສ ກູດລາດີ.

ບົດທີ ໗

ກອງພິເສດຫມາຍເລກ ໔

ໃນທ້າຍເດືອນກໍລະກົດ ກອງພິເສດຫມາຍເລກ ໔ ເລີ່ມລົງມືດໍາເນີນວຽກງານ, ກອງນີ້ປະກອບດ້ວຍສະມາຊິກ ໔໐ ຄົນ ໂດຍມີ ບູຣູນ ເປັນນາຍກອງ. ບູຣູນນັ້ນນັບວ່າເປັນຫົວຫນ້າທີ່ໃຜໆກໍຍອມຮັບນັບຖືແລ້ວ ແລະ ກໍບໍ່ມີຊາວນິຄົມຄົນໃດຄືດຢາກກໍາຕໍາແຫນ່ງອັນທັງມີກຽດ ແລະ ຍາກເທົ່າກັບຕໍາແຫນ່ງນີ້.

ກອງພິເສດຫມາຍເລກ ໔ ເຮັດວຽກແຕ່ "ຕາເວັນຂຶ້ນຮອດຕາເວັນຕົກ". ສ່ວນຫລວງຫລາຍແລ້ວພວກເດັກນ້ອຍພາກັນເວົ້າວ່າພວກເຂົາເຮັດວຽກ "ໂດຍບໍ່ມີສັນຍານ" ເພາະວ່າເພິ່ນບໍ່ໃຫ້ສັນຍານກະແລ່ງຈັກເທື່ອ ບໍ່ວ່າໃນເວລາ ລົງມືເຮັດວຽກຫລືເວລາເລີກວຽກ. ປັດຈຸບັນກອງພິເສດເລກ ໔ ຂອງ ບູຣູນ ພວມເຮັດວຽກຢູ່ກັບຈັກຕີເຂົ້າ.

ຕັ້ງແຕ່ ໔ ໂມງເຊົ້າ ພໍແຕ່ຕື່ນ ແລະ ປັ້ນເຂົ້າເຊົ້າແລ້ວ, ສະມາຊິກກອງພິເສດຫມາຍເລກ ໔ ກໍຢືນລຽນແຖວກັນ ຕາມຄວາມຍາວຂອງຫນານຜັກ ທີ່ຕັ້ງຢູ່ກົງກັບທາງເຂົ້າຕຶກຂາວ. ພວກຄູສອນທັງຫມົດຢູ່ດ້ານຂວາຂອງສະຫນາມຮົບແຫ່ງນີ້ເວົ້າແທ້ແລ້ວພວກເຂົາບໍ່ຈໍາເປັນຕ້ອງມາຮ່ວມເຮັດວຽກກັບກອງພິເສດນີ້ດອກ ຍົກເວັ້ນ ສອງ

ຄົນເຊິ່ງເປັນຄູປະຈຳວັນ ແຕ່ມັນເປັນປະເພນີມາດົນແລ້ວ ຢູ່ໃນນິຄົມຂອງພວກເຮົາ ທີ່ ທຸກຄົນຈະຕ້ອງເຂົ້າຮ່ວມເມື່ອມີຄຳສັ່ງໃຫ້ຕັ້ງກອງພິເສດຫມາຍເລກ ໔ ຂຶ້ນມາ ແລະ ດັ່ງນັ້ນຈຶ່ງບໍ່ມີຜູ້ໃດຜູ້ຫນຶ່ງທີ່ຮັກກຽດສັກສີຂອງຕົນເອງ ຈະຫລີງລືມບໍ່ຕອບສະຫນອງຕາມສຽງຮຽກເອີ້ນອັນນີ້. ຢູ່ດ້ານຂວາ ມີ ແຊເຣີ, ກາລີນາ ນີວາໂນວິດ, ຊີລັນຕີ ອິດເຊນາດ, ອີກຊານນາ, ຣາແຊນ, ຄົນຊັກເຄື່ອງສອງນາງ, ສະປີຣີດົງ ເລຂານຸການນາຍຊ່າງຈັກຜູ້ທຳອິດຂອງນິຄົມເຊິ່ງພວມຢູ່ໃນລະຫວ່າງການພັກຜ່ອນ, ໂກເຊຍ, ຄູສອນ, ຊ່າງເຮັດກວຽນ, ຄົນສວນ ມີຊີຢາກ ຊາຍຫົວແດງ ແລະ ຂີ້ໂມໂຫ ພ້ອມດ້ວຍເມຍຂອງລາວ, ສາວງາມ ນາເດັນກາ ເມຍຂອງ ຊຸກບິນ ແລະ ຄົນອື່ນໆເຊິ່ງຂ້າພະເຈົ້າບໍ່ຮູ້ຈັກອີກຫລາຍຄົນ.

ຢູ່ໃນກຸ້ນແກວນັກຮຽນນິຄົມກໍມີຜູ້ສະຫມັກໃຈຫລາຍຄົນ ຄື ພວກສະມາຊິກເຊິ່ງບັງເອີນຫວ່າງງານຂອງກອງທີ ໙ ແລະ ທີ ໑໐, ພວກເດັກນ້ອຍກອງທີ ໘-ພວກຄອກມ້າ, ກອງທີສາມ-ພວກຄອກງົວ: ທັງຫມົດນີ້ລ້ວນແຕ່ມີຫນ້າທີ່ມາຮ່ວມ.

ເກິງນາງໄດ້ພະຍາຍາມລຸກແຕ່ເດິກໆ ແລະ ມາຮ່ວມເຮັດວຽກດ້ວຍການນຸ່ງເສື້ອກະໂປ່ງພື້ນເກົ່າໆ ແຕ່ ມາເຣຍ ກົງດຣາແຕັບນາ ໂບໂກວາ ກໍເປັນພຽງຜູ້ດຽວທີ່ແຕກອອກຈາກກຸ້ນແກວ ນາງນັ່ງຢູ່ເທິງຮ້ານນ້ອຍໆ ນາງພວມໂອ້ລົມກັບ ບູຣູນ. ດົນນານມາແລ້ວທີ່ ມາເຣຍ ກົງດຣາແຕັບນາ ບໍ່ເຊື້ອເຊີນຂ້າພະເຈົ້າໄປຮ່ວມກິນນ້ຳຊາ ຫລືໄອສະຄຣີມຮ່ວມກັບນາງ, ແຕ່ນາງກໍໄດ້ສະແດງທ່າທີຫນ້າຮັກຕໍ່ຂ້າພະເຈົ້າບໍ່ຫລຸດຜູ້ອື່ນໆ ຈັ່ງນັ້ນຂ້າພະເຈົ້າຈຶ່ງບໍ່ມີ

ເລື່ອງໃດຈະໄປຄຽດຄຶນໃຫ້ນາງ. ຂ້າພະເຈົ້າພໍໃຈໃນຕົວນາງຫລາຍຂຶ້ນກວ່າແຕ່ກ່ອນອີກຊ້ຳ, ບັດນີ້ແສງຕາຂອງນາງເຄັ່ງຂຶມແລະຫນັກແຫນ້ນກວ່າເກົ່າ, ການເວົ້າຍອກໃຍເປັນກັນເອງ ແລະ ອົບອຸ່ນກວ່າ. ໃນລະຍະນໍ່ໆມານີ້ ມາເຣຍ ກົງດຣາແຕັບນາ ໄດ້ຮັກແພງລຶ້ງແກວ່ນກັບພວກເດັກນ້ອຍຜູ້ຊາຍ ແລະ ສາວນ້ອຍຂອງພວກເຮົາຫລາຍຄົນ, ນາງຜູກໄມຕກັບ ຊີລັບຕີ ແລະ ສາມາດເອົາຊະນະຜູ້ມີນິໄສຍາກຫລາຍຄົນ. ເກິງແມ່ນ ມາເຣຍ ກົງດຣາແຕັບບາ ຈະຫນ້າຮັກ ຫນ້າແພງປານໃດກໍຕາມ ຂ້າພະເຈົ້າຍັງເວົ້າກັບນາງຄ່ອຍໆວ່າ: "ມາເຣຍ ກົງດຣາແຕັບນາ, ເຂົ້າມາຢູ່ໃນແກວເກາະ, ທຸກຄົນຈະດີໃຈຫລາຍ ກ້າໄດ້ເຈົ້າມາຮ່ວມກຸ່ມອອກແຮງງານຂອງພວກເຮົາ".

ມາເຣຍ ກົງດຣາແຕັບນາ ຍິ້ມໃສ່ອະລຸນໂນໄທ, ສອດດົ້ວມືນ້ອຍໆສີບົວຂອງນາງເຂົ້າໄປແປງລອນຜົມສີບົວຍ້ອນແສງແດດຍາມເຊົ້ານັ້ນຄືກັນ ແລ້ວຕອບສຽງອ່າວແຫບໆ ເບັ່ງສ່ວນເລິກຂອງຊວງເອິກອອກວ່າ:

- ຂອບໃຈ, ແລ້ວຂ້ອຍຊິໄດ້ເຮັດຫຍັງລະມື້ນີ້... ສິເຂົ້າແມ່ນບໍ່?

- ບໍ່ພວກເຮົາບໍ່ສິເຂົ້າດອກມື້ນີ້, ພວກເຮົາຊິຕີເຂົ້າ, ບູຮູນຕອບ, - ເຈົ້າຈະເປັນຜູ້ຂຽນບັນຊີລາຍການສິ່ງເຂົ້າອອກ.

- ແຕ່ວ່າຂ້ອຍຊິຮູ້ຈັກເຮັດຫວະ?

- ຂ້ອຍຊິເຮັດໃຫ້ເຈົ້າເບິ່ງດອກ.

- ເຈົ້າອາດຊິເອົາວຽກງ່າຍໂພດໃຫ້ຂ້ອຍເຮັດບໍ່ຈັກດອກ?

ບູຣຸນຍົ້ມ:

- ວຽກງານທຸກຢ່າງຄືກັນຫມົດສຳລັບທຸກຄົນ, ເອົາລະບາດກິນເຂົ້າປຽກຕອນເດິກ, ຈົ່ງເວົ້າສູ່ພວກເຮົາຟັງວ່າ ເປັນແນວໃດ.

- ໂອ່... ພັ່ນເອີ້ຍ... ຟັງເບິ່ງຄືຊິດັກ... ກິນເຂົ້າປຽກຕອນເດິກຫລັງຈາກເລີກວຽກແລ້ວ...

ຂ້າພະເຈົ້າ ສັງເກດຄວາມຕື່ນເຕັ້ນຂອງ ມາເຣຍ ກົງດຣາແຕັບນາ ແລ້ວຈຶ່ງຫັນຫນ້າຫນີໄປລັກຍົ້ມທາງອື່ນ. ມາເຣຍ ກົງດຣາແຕັບນາ ຫຍັບເຂົ້າໄປຢືນຢູ່ປີກຂວາຂອງແຖວ ແລະ ພວມຫົວສຽງດັງກ່ຽວກັບເລື່ອງໃດເລື່ອງຫນຶ່ງຢູ່ ສ່ວນ ກາລີນາ ອີວາໂນວິດ ກໍຈັບມືກັບນາງດ້ວຍທ່າທີອີງອາດພໍປານສຸພາບບຸລຸດອາວຸໂສ ທັງຫົວນຳຄືກັນ.

ນັກຕີກອງແປດຄົນແລ່ນອອກມາເຂົ້າແຖວດ້ານຂວາ ຕິດຕາມດ້ວຍນັກເປົ່າແກ ໔ ຄົນ, ຄືງອ່ອນແບບເດັກນ້ອຍຂອງພວກເຂົາຂີດງໍເຂົ້າຢູ່ໃນທ່າກຽມພ້ອມຈະເປົ່າແກ. ພວກເດັກນ້ອຍພາກັນຢືນກົງ, ວາງທ່າເຄັ່ງຂຶມທັນທີ.

- ເຄົາລົບທຸງ! ຢືນກົງ!

ຕະຫລອດແຖວຊ່ວງແຂນເປືອຍ ແລະ ວ່ອງໄວຍຽດຂຶ້ນໃນອາກາດເພື່ອທຳພິທີເຄົາລົບທຸງ. ນາຊະເຈຍ ນິດແຊັບນາຢາ ນາຍເວນປະຈຳວັນຂອງນິຄົມ ໃນຊຸດກະໂປງພື້ນງາມກວ່າຫມູ່ຂອງນາງ ແລະ ມີປ້າຍແດງຕິດກົກແຂນເສື້ອ ຍ່າງອອກມາຕາມຈັງຫວະຕີກອງ ແລະ ສຽງບັນເລງເສາະໃສຂອງແກ, ນຳເອົາຄັນທຸງແພໄຫມ

ຂອງນິຄົມກ້ອກກີ ອອກມາທາງປີກຂວາ ເຊິ່ງແຕ່ລະເບື້ອງມີປາຍດາບເຫລັກຄົມເຫລື້ອມສອງດວງຕັ້ງເຟົ້າຢູ່.

-ລ້ຽວຂວາ, ແຖວສີ່,... ຫນ້າເດີນ!

ຄວາມສັບສົນຢ່າງຫນຶ່ງເກີດຂຶ້ນໃນແຖວຫມູ່ຜູ້ໃຫຍ່: ໃນທັນໃດ ມາເຣຍ ກົງດຣາແຕັບນາ ກໍຮ້ອງແຈ໊ດຂຶ້ນ ແລະ ເລືອດຕາມາເບິ່ງຂ້າພະເຈົ້າບາດຫນຶ່ງ ແຕ່ຈັງຫວະຕີກອງຮຽກເອີ້ນໃຫ້ທຸກຄົນຍ່າງເຂົ້າລະບຽບ. ກອງພິເສດຫມາຍເລກ ໔ ອອກເດີນທາງມຸ່ງຫນ້າສູ່ວຽກງານແລ້ວ.

ບູຊູນ ແລ່ນຈ້າວນຳແຖວ ແລະ ໄປທັນໃນບໍ່ຊ້າ, ຫມໍຈັດແຈ່ງຢ່າງໃຫ້ກຶກຈັງຫວະ ແລະ ນຳພາແຖວເດີນໄປຮອດບ່ອນ ເຊິ່ງດົນນານມາແລ້ວປະດັບປະດາດ້ວຍກອງເຂົ້າ ບະເລ ກອງໃຫຍ່ງາມໂດຍຝີມືຂອງ ຊີລັນຕີ, ນອກນັ້ນກໍຍັງມີກອງອື່ນໆນ້ອຍແດ່ໃຫຍ່ແດ່ບໍ່ສະຫມໍ່າສະເຫມີກັນປານໃດ ມີທັງກອງເຂົ້າໂອ໊ດ, ເຂົ້າໄຣແລະເຂົ້າຫມາກເດືອຍຊະນິດມະຫັດສະຈັນ ເຊິ່ງແມ່ນແຕ່ພວກຊາວນາເອງກໍຍັງເບິ່ງ ບໍ່ອອກ ແລະ ຄຶດວ່າແມ່ນເຂົ້າໂອ໊ດ; ກອງເຫລົ່ານີ້ແມ່ນຝີມືຂອງ ກາລີນາ ອີວາໂນວິດ, ໂຊບິດ, ເຟໂດເຣັນໂກ, ຕ້ອງເຂົ້າໃຈວ່າ ກ່ອນຈະໄດ້ກອງເຂົ້າແບບນີ້ພວກເດັກນ້ອຍຕ້ອງອາບເຫື່ອຕ່າງນ້ຳຫລາຍສົມຄວນ, ສ່ວນວ່າ ຊີລັນຕີ ນັ້ນຊ້ຳຂົມແຂ່ງລາວບໍ່ພໍຫລັ່ນຊ້ຳ.

ຢູ່ໃກ້ໆກັບບໍລິເວນມ້ຽນຫົວຈັກລັດໄຟ ທີ່ເຊົາຢູ່ດົນນ້ານກິດໆກັບບ້ານຫນຶ່ງນັ້ນພວກຊ່າງຈັກຜູ້ມີໃບຫນ້າເຄັ່ງຂຶມ ເສື້ອຜ້າຫມອງມົວໄປດ້ວຍນ້ຳມັນກຳລັງຄອງກ້າກອງພິເສດທີ່ ໔ ຢູ່. ຈັກຕີເຂົ້າ

ນັ້ນເປັນຂອງພວກເຮົາຢ່າງຂາດຕົວແລ້ວ ໃນລະດູບານໃຫມ່ປີນີ້, ພວກເຮົາຊື້ມັນມາເປັນລະຍະໆ, ມັນໃຫມ່ອ່ຽມອ່ອງຕ່ອງບໍ່ພິດຫຍັງກັບ ຊີວິດຂອງພວກເຮົາເອງ.

ບູຣູນ ຈັດວາງຄະນະເຮັດວຽກຂອງເຂົາຢ່າງໄວວາ ເພາະເຂົາໄດ້ຄິດໄລ່ໄວ້ຫມົດແລ້ວແຕ່ມື້ແລງວານນີ້, ການທີ່ຫມໍເປັນຜູ້ບັນຊາກອງພິເສດທີ ໔ ມາຕັ້ງດົນນານນີ້ ກໍບໍ່ແມ່ນວ່າທຳມະດາດອກ. ຢູ່ເທິງຈອມກອງເຂົ້າໂອືດທີ່ຈະຕີກອງສຸດທ້າຍມີຄົນຫຸງສຽບປີວສະບັດຢູ່.

ມາຮອດເວລາກິນເຂົ້າທ່ຽງ ການຕີເຂົ້າ ເຂົ້າບະເລ ກໍເກືອບແລ້ວ, ແທ່ນນັ່ງດ້ານເທິງຂອງລົດຕີເຂົ້ານັ້ນເປັນບ່ອນທີ່ມີຊີວິດຊີວາແຈ່ມໃສກວ່າຫມູ່. ດວງຕາແຕ່ລະຄູ່ຂອງພວກເດັກນ້ອຍແມ່ຍິງໂຮງຮຸ່ງແວວວາວ ທ່າມກາງວົງລ້ອມຂອງລະອອງສີທອງຫມື່ນໆຂອງຄາຍເຂົ້າ, ສ່ວນເດັກນ້ອຍຜູ້ຊາຍມີແຕ່ ລາປິດ ຄົນດຽວ. ຫມໍນີ້ເມື່ອຍບໍ່ເປັນ, ຫມໍບໍ່ຍືດຫລັງຂຶ້ນຈັກເທື່ອ ແລະ ກໍບໍ່ຢຸດປາກຢຸດເວົ້າຈັກເທື່ອຄືກັນ. ໃນຕຳແຫນ່ງຕົ້ນຕໍ ແລະ ມີຄວາມຮັບຜິດຊອບສູງນັ້ນ ພວກເຮົາແນມເຫັນຫົວລ້ານຂອງຊີລັນຕີ ເຊິ່ງໂອບດ້ວຍຄາຍເຂົ້າ ບະເລ ແລະ ຫນວດຍ່ອມໆຂອງລາວກໍເປິເປື້ອນດ້ວຍຝຸ່ນຊະນິດດຽວກັນ.

ບັດນີ້ ລາປິດ ຫັນມາສົ່ງສຽງໃສ່ ອິກຊານນາ ແລ້ວ:

- ອັນພວກເດັກນ້ອຍບອກເຈົ້າວ່າແມ່ນເຂົ້າ ບະເລ ຫັ້ນ ແມ່ນເຂົາລໍ້ເຈົ້າຊື່ໆດອກ, ເບິ່ງຕິແມ່ນເຂົ້າບະເລຫວະ ມັນແມ່ນເກັ່ນຫມາກກົ່ວພຸ້ນຕວ່າ...

ອິກຊານນາ ຄວາຫລີກເອົາເຂົ້າບະເລຈາກກໍແລ້ວເອົາປົກໃສ່ຫົວລາບົດ ແຕ່ການກະທຳດັ່ງກ່າວບໍ່ໄດ້ຫລຸດຜ່ອນຄວາມພໍໃຈຂອງຜູ້ຄົນສ່ວນຫລວງຫລາຍ ຕໍ່ຄຳເວົ້າຂອງອ້າຍບ່າວຄົນນີ້ເລີຍ.

ຂ້າພະເຈົ້າມັກເວລາຕີເຂົ້າ, ພໍຕົກແລງສະພາບກໍຫນ້າອອນຊອນງົດງາມຂຶ້ນ. ຈາກສຽງອຶກກະທຶກຂອງເຄື່ອງຈັກເລີ່ມມີທຳນອງເພງອ່ອນຊ້ອຍຊ້ອນຂຶ້ນມາ. ໃນທີ່ສຸດຫູກໍເລີ່ມລຶ້ງເຄີຍກັບກ້ອຍຄຳທຳນອງດົນຕີທີ່ປ່ຽນແປງໄປຢ່າງບໍ່ມີບ່ອນສຸດໃນແຕ່ລະນາທີ ແຕ່ຫາກຄືງຄວາມຄືເກົ່າໄວ້ຕະຫລອດເວລາ ແລະ ທຳນອງດົນຕີອັນນີ້ປະກອບພື້ນການທີ່ສອດຄ່ອງກັບຄວາມຊຸນລະມຸນສັບສົນອັນນີ້ ແທ້ງເຊິ່ງມາຮອດເວລານັ້ນ ເລີ່ມຈາລຶກຮ່ອງຮອຍແຫ່ງຄວາມເມື່ອຍອ່ອນ ແຕ່ບໍ່ຍອມເມື່ອຍຢ່າງຈິງຈັງ, ມັດເຂົ້າຕັ້ງຕົວຂຶ້ນເປັນແຖວເຕັມໆລຸກຍ່າງອອກຈາກກອງຟ່ອນເຂົ້າ, ບໍ່ຕ່າງຫຍັງກັບກຶກເວດມົນເທວະດາ, ເດີນຫນ້າໄປສູ່ຄວາມຕາຍ ແລະ ພາຍຫລັງທີ່ໄດ້ກະທົບຢ່າງຄ່ອຍເບົາ ແລະ ວ່ອງໄວກັບອຸ້ງມືພວກເດັກນ້ອຍແລ້ວມັນກໍມ້ວນຕົວເຂົ້າໃນຄົມແຂ້ວຂອງເຄື່ອງຈັກທີ່ອີ່ມບໍ່ເປັນ, ປ່ອຍໃຫ້ເຫັນແຕ່ເມັດເຂົ້າທີ່ກຶກໂມ້ລະອຽດ ເປັນຝຸ່ນກ້ອຢູ່ເບື້ອງຫລັງ ແລະ ສຽງຮ້ອງຄາງຂອງເມັດເຂົ້າທີ່ປິວກະຈັດກະຈາຍທົ່ວສາລະທິດຄືກັບວ່າມັນກຶກຊາກດຶງອອກຈາກຮ່າງຄືງທີ່ມີວິນຍານ. ທ່າມກາງລົມຝຸ່ນ ແລະ ສຽງອຶ້ອຶງເຫລົ່ານີ້, ທ່າມກາງຄວາມວຸ່ນວາຍບີນຕາຍຂອງຮວງເຂົ້າຈຳນວນນັບບໍ່ໄຂວ່ເຫລົ່ານີ້, ພວກເດັກນ້ອຍໂຊຊຸດໂຊເຊຍ້ອນຄວາມເມື່ອຍ ແລະ ຄວາມຕື່ນເຕັ້ນ ແຕ່ພາກັນແລ່ນໄປມາ... ກົ້ມຫົວໃສ່ກັນ, ຕົບຕົວໂຕ້ງກົ່ງລົງຍ້ອນສິ່ງແປກຫາບ

ອັນຫນັກຫນ່ວງ, ພວກເຂົາຫົວລໍ້ກັນ ຢອກເຢົ້າກັນ ທັງໆທີ່ຕົນຕົວໂອບຫຸ້ມໄປດ້ວຍຄາຍເຂົ້າ ແລະ ຝຸ່ນຮໍາ ເຊິ່ງໃນເວລານັ້ນພວມລ່ອງລອຍຢູ່ໃນເງົາເຢັນຂອງຍາມອັດສະດົງລະດູຮ້ອນແລ້ວ. ຕື່ມໃສ່ສຽງແຮງໆ ຊໍ້າຊາກແບບເກົ່າຂອງເຄື່ອງຈັກ ແລະ ສຽງແຈດແຫລມທີ່ເບັ່ງສອດອອກມາຈາກການສູງສຸດພຸ້ນ ຍັງມີສຽງເພງແຝງສໍານຽງແຫ່ງໄຊຊະນະ ແລະ ຄວາມຍິ່ງໃຫຍ່ແຫ່ງຄວາມອິດເມື່ອຍຂອງມະນຸດຊາດຕື່ມໃສ່ອີກ. ຈັ່ງຊັ້ນຈຶ່ງເປັນການຍາກທີ່ຈະໄຈ້ແຍກລາຍລະອຽດ ແລະ ຈະແຍກຕົວມັນອອກຈາກພາບກວມລວມທີ່ຊິງພະລັງໄດ້. ເພິ່ນພໍແຕ່ຈື່ພວກເດັກນ້ອຍໄດ້ຢູ່ໃນກຸ່ມເງົາສີມ່ວງມົວໆຄືກັບເງົາໃນຟິມຖ່າຍຮູບ, ບໍ່ວ່າຜູ້ມີຜິວແດງ, ຜິວສີນໍ້າຕານ ຫລືຜິວສີທອງ ບັດນີ້ລ້ວນແຕ່ຄືກັນຫມົດ. ມັນເປັນການຍາກທີ່ຈະເຊື່ອວ່າ ຜູ້ທີ່ຢືນມາແຕ່ເຊົ້າ, ກົ້ມຫົວອຽງຫງ່ຽງເບິ່ງຄ້າຍຄືຜີໃສ່ປຶ້ມນ້ອຍໃນມືຢູ່ກ້ອງຝຸ່ນຫນາເປັນປຸ້ມກ້ອງເຄື່ອງຈັກນັ້ນແມ່ນນາງ ມາເຣຍ ກົງດຣາແຕັບນາ, ແລະ ທັງບໍ່ອາດຈື່ ເອດວກ ນິໂກລາຍວິດ ຢູ່ໃນເງົາບິດບັງວພາໂລພາງານທີ່ເຄື່ອນຕິດຕາມລາວຕະຫລອດເວລານັ້ນໄດ້ນໍາ, ຂ້າພະເຈົ້າເດົາໄດ້ຈາກສຽງຂອງລາວ ໄດ້ຍິນສໍານຽງທີ່ຮຽບຮ້ອຍ ແລະ ຈິງຈຽມຂອງລາວເທົ່ານັ້ນ.

-ສະຫາຍ ໂປໂກວາ, ບັດນີ້ພວກເຮົາມີເຂົ້າບະເລຫລາຍເທົ່າໃດແລ້ວ?

ມາເຣຍ ກົງດຣາແຕັບນາ ປິ່ນປຶ້ມບັນທຶກນ້ອຍຂອງນາງໄປໃສ່ແສງຕາເວັນຍາມຄໍ່າ:

-ໄດ້ ຝ ໂຕນເຄິ່ງແລ້ວ; ນາງຕອບດ້ວຍສຽງລະດັບສູງ ແຕ່

ອ່າວແຕກແຫບແບບເມື່ອຍລ້າເຕັມທີ ຈົນຂ້າພະເຈົ້າເກີດຄວາມດູຖິນນາງ.

ດີແຕ່ວ່າ ລາບິດ ນັ້ນຍາມໃດກໍຊ່າງຊອກແນວຕະຫລົກມາແກ້ໄຂສະພາບການທີ່ທຸກຄົນພວມເມື່ອຍອ່ອນສຸດຂີດນີ້ໄດ້.

-ກາລາເຕັນໂກ! ຫມໍຮ້ອງຂຶ້ນຈາກສົ້ນສວນເບື້ອງຫນຶ່ງໄປຍັງອີກເບື້ອງຫນຶ່ງ.

ກາລາເຕັນໂກ ຜູ້ພວມແບກສ້ອມໃຫຍ່ສຽບມັດເຟືອງປະມານ ໑໐ ກິໂລຢູ່ເທິງຫົວ, ຍືນໂຫງ້ຍໄປມາກ້ອງເຄື່ອງຈັກຮ້ອງຕອບມາວ່າ:

-ແມ່ນຫຍັງເວີ້ຍ!

-ມານີ້ຄາວຫນຶ່ງເວີ້ຍ! ເຮົາຕ້ອງການໂຕນະ...

ກາລາເຕັນໂກນັ້ນສັດທາໃນຕົວລາບິດ ບໍ່ຜິດຫຍັງກັບສາສະນິກະຊົນສັດທາແຮງຄົນຫນຶ່ງ, ມັນຮັກມັນສະຫມອງຂອງຫມໍນີ້, ຮັກຄວາມເອົາໃຈໃສ່ ແລະ ໄມຕີຈິດມິດຕະພາບຂອງຫມໍ ເພາະມີແຕ່ລາບິດ ຜູ້ດຽວທີ່ເຮັດໃຫ້ຫມົດທຸກຄົນເຊື່ອຫມັ້ນວ່າ ກາລາເຕັນໂກບໍ່ແມ່ນຄົນໂສກົ້ມຈັກດີ້.

ກາລາເຕັນໂກ ໂຍນມັດເຟືອງລົງດິນໃກ້ໆກັບຫົວຈັກລົດ ແລ້ວແລ່ນໄປຫາຈັກຕີເຂົ້າ. ຫມໍຢືນອີງສ້ອມງ່າມ, ມີຄວາມສຸກໃນຫົວໃຈແດ່ທີ່ມີໂອກາດພັກຜ່ອນເລັກໆນ້ອຍໆຢູ່ທ່າມກາງສຽງວຸ່ນວາຍອຶກກະທຶກແນວນີ້, ຫມໍນີ້ເລີ່ມຫົວຂໍ້ສົນທະນາວ່າ:

-ແລ້ວໂຕເອີ້ນເຮົາມາເຮັດຫຍັງລະນີ້?

-ຟັງເດີ້ເກົ້າເອີ້ຍ, ລາບິດ ກົ້ມສ່ອງລົງມາແຕ່ເທິງຈັກຕີເຂົ້າ,

ຫມົດທຸກຄົນທີ່ຢູ່ອ້ອມໆ ຕ່າງກໍຫາງຫູຟັງ ໂດຍເຊື່ອຫມັ້ນວ່າຕ້ອງມີແນວຕະຫລົກອັນໃດອັນຫນຶ່ງຢູ່ໃນນັ້ນ.

- ເວົ້າແມ້... ເຮົາຟັງຢູ່ແລ້ວ.

- ໂຕໄປຫາພັກພວກເຮົາເດີ້...

- ເອີ້... ວ່າໄປ.

- ຢູ່ກ້ອງຫມອນເທິງຕຽງຂອງເຮົາ...

- ມີຫຍັງລະ?

- ຢູ່ກ້ອງຫມອນ... ຫັ້ນລະ...

- ມີຫຍັງລະ?

- ຢູ່ກ້ອງຫມອນໂຕິຊິເຫັນ...

- ເຮົາເຂົ້າໃຈແລ້ວ ຢູ່ກ້ອງຫມອນໂຕ...

- ໂຕຄົ້ນເບິ່ງຢູ່ກ້ອງຫມອນເຮົາ ແລ້ວໂຕ... ໂຕຊິເຫັນມີປ່ຽນຄູ່ຫນຶ່ງຂອງເຮົາ.

- ເອີ້ ແລ້ວຊິໃຫ້ເຮົາເຮັດແນວໃດລະ? ກາລາເຕັນໂກກາມ.

- ກະເອົາມາໃຫ້ເຮົາຢູ່ນີ້ຊັ້ນຕົວ... ໄວທີ່ສຸດເທົ່າທີ່ຈະໄວໄດ້ເພາະວ່າຄູ່ນີ້ໂຕເບິ່ງຕີໃຊ້ການບໍ່ໄດ້ແລ້ວ! ລາປິດ ເວົ້າທັງເຍີງມືຂອງຫມໍໃຫ້ເບິ່ງທ່າມກາງສຽງຫົວແຊວ ໆ.

- ເອີ້... ໄດ້! ກາລາເຕັນໂກ ເວົ້າຂຶ້ນ.

ຫມໍເຂົ້າໃຈວ່າ ຜູ້ຄົນທັງຫລາຍຫົວນຳຄຳເວົ້າຂອງ ລາປິດຫລືບາງທີກໍອາດຈະຫົວຂວັນຫມໍນຳຄືກັນ. ເຂົາໄດ້ພະຍາຍາມສຸດຂີດແລ້ວ ເພື່ອບໍ່ເວົ້າແນວໂລເລຫລືແນວເປັນຕາຫົວ, ຈັ່ງຊັ້ນ ຈຶ່ງບໍ່ໄດ້ປ່ອຍແນວຈັ່ງຊັ້ນອອກມາເລີຍ ເພາະວ່າ ລາປິດເປັນຜູ້ເວົ້າ

ເກືອບຄືນດຽວ. ແຕ່ຫມົດທຸກຄົນກໍຍັງຫິວກ້າກຢູ່; ຈັກດີເຂົ້າຟາດ ໄປຟາດມາຢ່າງບໍ່ມີມັດເຂົາ ແລະ ບູຮູນ ກໍເລີ່ມ "ຕື່ນຕົວ" ແລ້ວ.

-ແມ່ນຫຍັງກັນລະນີ້? ເປັນຫຍັງພວກເຈົ້າຈິ່ງພາກັນຍືນໂຈ່ຢູ່ ແນວນີ້? ແມ່ນໂຕນີ້ຫວະ ກາລາເຕັນໂກ ເປັນສາເຫດນະ!

-ເຮົາຫວະ? ເຮົາບໍ່ກ່ຽວເລີຍລະ!

ທຸກຄົນອັດປາກມິດ, ດ້ວຍສຽງແຜງຄວາມຈິງຈັງເຄັ່ງຂຶມຮຸນ ແຮງທີ່ສຸດ ລາບົດສະແດງທ່າເມື່ອຍອ່ອນ ຄວາມກັງວົນ ແລະ ເຊື່ອ ຫມັ້ນຕໍ່ສະຫາຍ ບູຮູນ ໄດ້ຢ່າງວິເສດສຸດ, ຫມໍເວົ້າກັບຝ່າຍນີ້:

-ໂຕເຫັນລະດີ, ມືທັງສອງເຮົາມັນໃຊ້ການບໍ່ໄດ້ແລ້ວ. ຈັ່ງຊັ້ນ ອະນຸຍາດໃຫ້ ກາລາເຕັນໂກ ກໍໄປເອົາມີປ່ຽນມາໃຫ້ແດ່.

ບູຮູນ ເຂົ້າໃຈ ແລະ ໂດດເຂົ້າຮ່ວມການຫລິ້ນທັນທີ, ດ້ວຍ ສຳນຽງແຜງຕິດຽນຈັກຫນ້ອຍ ຫມໍເວົ້າກັບ ກາລາເຕັນໂກວ່າ:

-ກໍແນ່ນອນແລ້ວ... ແລ້ວແມ່ນໂຕຄອງກ້າຫຍັງອີກລະ? ມັນ ຍາກແທ້ຫວະ? ໂອ້ຍ ກາລາເຕັນໂກ ເອີ້ຍ ຈັ່ງແມ່ນໂຕບໍ່ຈັກເຮັດ ຫຍັງດອກເນາະ!

ທຳນອງບັນເລງຂອງຈັກດີເຂົ້າຂາດໄປ. ສຽງສັບສົນອົນອົວຢ່າງ ຫນຶ່ງເກີດຂຶ້ນບໍ່ຈັກວ່າແມ່ນສຽງຫິວ ສຽງຮ້ອງແບບກົນໆຄືໃຈຈະຂາດ ແມ່ນແຕ່ ແຊເຮີ ເອງ ກໍຫິວ ກະທັ່ງພວກຊ່າງຈັກກໍອອກຫນີຈາກ ເຄື່ອງຈັກມາເພື່ອຫິວ, ມືທັງສອງຫຍຸມທົວເຂົ່າທີ່ເປື້ອນເປີທັງສອງ ເບື້ອງ. ກາລາເຕັນໂກ ຍ່າງມຸ່ງຫນ້າໄປທາງຫໍພັກ, ຊີລົນດີ ແນມ ຕາມຫລັງມັນໄປບໍ່ວາງຕາ.

-ເບິ່ງແມ້... ເຈົ້າເອີຍ, ເປັນແນວນີ້ກໍຮ່າວມີ...

ກາລາເຕັນໂກຢຸດຄຶດຊຶງ. ກາຣາບານົບ ຢູ່ເທິງກອງເຟືອງຮ້ອງ
ໃສ່ມັນວ່າ:

-ໂຍ້ວ... ເປັນຫຍັງໂຕບໍ່ໄປຫລະ? ຢຸດເຮັດຫຍັງ... ໄປເທາະ
ແມ້!

ແຕ່ປາກຂອງ ກາລາເຕັນໂກ ແຫກອອກຈົນຈໍາກົກຫູແລ້ວ,
ມັນເຂົ້າໃຈເລື່ອງແລ້ວ. ໂດຍບໍ່ຟ້າວບໍ່ຟັ່ງຫຍັງ ມັນຍ່າງກັບມາລານ
ເຂົ້າຫັງຍິ້ມ. ພວກເດັກນ້ອຍເທິງກອງເຟືອງຮ້ອງຖາມມັນໂຕບໆ
ວ່າ:

-ໂຕໄປໃສມາເວີ້ຍ?

-ແມ່ນຫມໍ ລາປິດ ນ່າ... ແຕ່ງເລື່ອງນີ້ຂຶ້ນ ໂຕເຂົ້າໃຈບໍ່,
ຫມໍໃຫ້ເຮົາໄປເອົາມີປ່ຽນມາໃຫ້.

-ອ້າວແລ້ວເປັນແນວໃດລະ?

-ມັນກະບໍ່ມີແລ້ວອັນມີປ່ຽນຫັ້ນນະ..., ແມ່ນເລື່ອງຕະຫລົກ
ຢ່າງຫນຶ່ງຂອງຫມໍ.

ບູຣູນ ສັ່ງຂຶ້ນວ່າ:

-ເອົາລະ. ບໍ່ມີມີປ່ຽນແລ້ວ... ແລ້ວໄປ! ບັດນີ້ເຮັດວຽກຕໍ່!

-ເອີ້... ບໍ່ມີມີປ່ຽນ, ພໍແລ້ວ, ລາປິດ ເວົ້າຂຶ້ນ, ກໍຕ້ອງສືບ
ຕໍ່ກັບມີເກົ່ານີ້ລະ!

ເຖິງເວລາ ໘ ໂມງ, ແຊເອີ ຢຸດຈັກແລ້ວໄປຫາ ບູຣູນ:

-ເດັກນ້ອຍຍືນບໍ່ຢູ່ແລ້ວ, ຕ້ອງໃຊ້ເວລາອີກເຄິ່ງຊົ່ວໂມງຈຶ່ງ
ແລ້ວ!

-ບໍ່ເປັນຫຍັງ, ພວກເຮົາຊິເຮັດໃຫ້ແລ້ວ, ບູຣູນ ເວົ້າ.

ລາບິດ ຮ້ອງກ້າກຂຶ້ນຢູ່ເທິງພຸ່ມວ່າ:

- ສະຫາຍ ຊາວບິຄິມກັອກກີ! ວຽກຂອງພວກເຮົາຍັງຢູ່ປະມານເຄິ່ງຊົ່ວໂມງ, ແຕ່ໃນຕອນນີ້ ພວກເຮົາອາດຈິແຈບໄປກ່ອນ... ເຮົາຢ້ານຊິເປັນແບບນີ້ລະ ຈຶ່ງບໍ່ເຫັນດີນຳ.

- ແລ້ວໂຕຊິເຮັດແນວໃດຊັ້ນ? ບູຣູນ ຜູ້ຕັ້ງຫູຟັງຢູ່ແລ້ວຖາມຂຶ້ນ.

- ເຮົາຄັດຄ້ານ, ຕື່ມອີກເຄິ່ງຊົ່ວໂມງ ພວກເຮົາເສັດເລີຍ... ແມ່ນບໍ່ກາລາເຕັນໂກ?

- ກໍແທ້ລະບໍ້... ເຄິ່ງຊົ່ວໂມງດົນໂພດ, ແນ່ນອນລະ.

ລາບິດ ຍົກກຳປັ້ນຂຶ້ນ:

- ອີກເຄິ່ງຊົ່ວໂມງຫວະ? ຢ່າເລີຍ... ຕ້ອງແລ້ວກ່ອນຫັ້ນ ເອົາຈັກ ໑໕ ນາທີເທົ່ານັ້ນພໍແລ້ວ!

- ເອີ້ ຈັ່ງຊັ້ນລະ! ກາລາເຕັນໂກ ຮ້ອງຂຶ້ນຊ່ອຍ, ມັນເວົ້າຖືກແລ້ວເວີ້ຍ!

ຢູ່ກາງເດີ່ນມີສຽງຫົວໂຄບຂຶ້ນ, ແຊເຣີ ຕິດຈັກລົດຕີເຂົ້າຄືນ, ຕໍ່ມາປະມານ ໔໐ ນາທີທຸກຢ່າງກໍສຳເລັດຮຽບຮ້ອຍ. ໃນທັນໃດແຕ່ລະຄົນກໍຮູ້ສຶກຢາກນອນ ກິ້ງລົງກັບກອງເຟືອງແລ້ວຫລັບໄປ ແຕ່ບູຣູນ ສັ່ງການວ່າ:

- ຈັດແຖວ!

ນັກເປົ່າແກ ແລະ ນັກຕີກອງ ເຊິ່ງຄອງຄອຍເວລາສັ່ງສຽງມາແຕ່ດົນແລ້ວນັ້ນລຸກພຶບພັບຂຶ້ນ ຍໍ່າຕີນເປັນຈັງຫວະເດີນອອກຫນ້າແຖວທັນທີ. ກອງພິເສດທີ່ສົນໍາຄັນທຸງກັບມາໄວ້ບ່ອນເກົ່າຂອງມັນ

ທີ່ເຄຫາສີຂາວ. ຂ້າພະເຈົ້າ ຍັງສັກສ້າຢູ່ລານຫນ້ອຍຫນຶ່ງແຕ່ສຽງຮ້ອງຂໍ່ານັບທຸງຍັງດັງວ່ອນມາຮອດຫູຢູ່. ເງົາຮ່າງຫນຶ່ງເຄື່ອນຫຍັບເຂົ້າມາຫາຂ້າພະເຈົ້າທ່າມກາງຄວາມລືວຽ, ໃນມືຂອງເຂົາມີໄມ້ເທົ້າຍາວ.

- ແມ່ນໃຜຫັ້ນ?

- ຂ້ອຍເອງນ່າ ອານໂຕນ ເຊມີວໂນວິດ, ຂ້ອຍມາເລື່ອງຈັກຕີເຂົ້າ, ຂ້ອຍມາແຕ່ບ້ານ ໂວໂລວີ, ຊື່ວ່າ ໂວໂລວິກ.

- ສັ້ນກໍໄປເວົ້າກັນຢູ່ເຮືອນພຸ້ນ.

ພວກເຮົາຍ່າງໄປຕາມທາງຄືນສູ່ເຄຫາສີຂາວ, ເຫັນໄດ້ວ່າລາວເຖົ້າແກ່ແລ້ວ, ໂວໂລວິກ ຍ່າງເຊໄປເຊມາໃນຄວາມມືດມົວ.

- ດີໃດ່ເຈົ້າເຮັດແນວນີ້... ເຮັດຄືຄືນເຮັດໃນສະໄຫມກ່ອນ.

- ແມ່ນຫຍັງເກາະ?

- ອ້າວ... ກໍເຈົ້າຈັດໃຫ້ມີຂະບວນແຫ່ເພື່ອໄປຕີເຂົ້ານີ້ເດ້... ມີທັງໄມ້ກາງເຂນ ແລະ ຄັນທຸງ, ເຮັດກືກຕ້ອງດີແລ້ວ.

- ຕ່າຍ ແມ່ນເຈົ້າເຫັນຂະບວນແຫ່ຢູ່ໃສ! ມີແຕ່ທຸງເທົ່ານັ້ນ ແລະ ພວກເຮົາບໍ່ມີຄຸນພໍ່ມາຮ່ວມນຳ.

ໂວໂລວິກ ຍ່າງທັງແລ່ນເຍາະໆອອກຫນ້າຂ້າພະເຈົ້າຫນ້ອຍຫນຶ່ງ, ຍົກໄມ້ເທົ້າຂຶ້ນອາກາດເວົ້າພຶມໆວ່າ:

- ເອີ້... ມັນບໍ່ແມ່ນເລື່ອງສຳຄັນດອກ ບໍ່ມີຄຸນພໍ່ມາຮ່ວມກໍດາຍ, ມັນດີຢູ່ບ່ອນວ່າ ມັນມີບັນຍາກາດຄືກັບຄືນຄົມບຸນ, ເຈົ້າກໍຮູ້ດີ... ເມື່ອຄືນເຮົາໄດ້ເອົາເຂົ້າຂຶ້ນເລົ້າແລ້ວ ມັນບໍ່ມີບຸນໃດຄັກໄປກວ່ານີ້ດອກ ແຕ່ສະໄຫມນີ້ຄົນສ່ວນຫລາຍລືມໄປແລ້ວ.

ຢູ່ບໍລິເວນແຄມອາຄານມີສຽງອຶນອົວອຶງຄະນຶງຢູ່. ເຖິງວ່າເມື່ອຍແສນເມື່ອຍ ແຕ່ພວກເດັກນ້ອຍກໍຍັງພາກັນໄປອາບນ້ຳຢູ່ຫ້ວຍ, ຈັ່ງຊັ້ນ ບັດນີ້ຄວາມເມື່ອຍລ້າຈຶ່ງສູນຫາຍໄປ. ຢູ່ໂຕະກາງສວນຈຶ່ງມີແຕ່ສຽງຫົວ ສຽງເວົ້າຍອກອັນສົດຊື່ນແຈ່ມໃສ ສ່ວນ ມາເຣຍ ກົງດຣາແຕັບນາ ນັ້ນຈ້ຳມີອາລົມຍາກຮ້ອງໄຫ້ຂຶ້ນມາຍ້ອນສາເຫດຫລາຍແນວ ເຊັ່ນຄວາມອິດເມື່ອຍ ແລະ ຄວາມຮູ້ສຶກເປັນມິດຕໍ່ເດັກນ້ອຍ, ເພາະວ່າບັດນີ້ກົດເກນມະນຸດຊາດອັນກືກດ້ອງເຂົ້າເຖິງຊີວິດຂອງນາງແລ້ວ ແລະ ນາງກໍໄດ້ທົດລອງຊີມລົດຊາດຂອງສະເຫນຫນ່ວຍແຮງງານເສລີເຂົ້າໄປແລ້ວ.

-ວ່າແນວໃດ... ພວກເຮົາຈັດດວງກເບົາບາງງ່າຍດາຍໂພດໃຫ້ເຈົ້າບໍ່? ບູຣູນ ຖາມນາງຂຶ້ນ.

-ຂ້ອຍບໍ່ຮູ້ດອກ, ມາເຣຍ ກົງດຣາແຕັບນາ ຕອບ. ມັນຍາກແທ້ ແຕ່ມັນບໍ່ແມ່ນຍ້ອນເລື່ອງນີ້, ວຽກນີ້... ຍາມໃດກໍຍັງມ່ວນຢູ່ດອກ.

ເມື່ອກິນເຂົ້າແລ້ວ, ຊີລັນຕີ ຫຍັບມານັ່ງໃກ້ໆຂ້າພະເຈົ້າ ແລ້ວເປີດເຜີຍຄວາມລັບອັນຫນຶ່ງໃຫ້ຟັງ.

-ເຈົ້າຮູ້ບໍ່ວ່າ ເຂົາມອບໃຫ້ຂ້ອຍມາແຈ້ງຂ່າວໃຫ້ເຈົ້າຮູ້ວ່າ ວັນທິດນີ້ຊີມີຄົນມາສູ່ຂໍ... ອີນາງ ໂອເລຍ ໃດ໋... ເບິ່ງເອົາເທາະເປັນແນວນີ້ລະ.

-ພວກ ນິໂກລາຍເຢັງໂກ ແມ່ນບໍ່ລະ?

-ກືກດ້ອງທີ່ສຸດ, ແມ່ນກະໂຕເກົ້າ ປາແວນ ອີວາໂນວິດ ນັ້ນເອງເລີຍລະ. ຈັ່ງຊັ້ນເຈົ້າຫັ້ນນໍ້, ອານໂຕນ ເຊມີວໂນວິດ ກໍຕ້ອງ

ເຮັດທຸກຢ່າງຕາມປະເພນີໃດ໋ ຄືວ່າຕ້ອງມີຜ້າເຊັດມືແດ່ ເຂົ້າຈີ່ ແລະ ເກືອ ຕ້ອນຮັບແຂກໃດ໋... ຫັ່ນນະ.

- ລຸງ ຊີລັນຕີ... ເຈົ້າຮູ້ເລື່ອງດີແລ້ວ ຈັດການໃຫ້ຂ້ອຍເລີຍສາ.

- ເອີ້ ເລື່ອງຈັດການຫັ້ນມັ່ນພໍໄດ້ຢູ່ດອກ, ຂ້ອຍຊິຈັດການເອງ... ແຕ່ເຈົ້າຮູ້ຕີວ່າ ເລື່ອງຂອງມັນຍັງບໍ່ຫມົດ... ມັນແມ່ນປະເພນີອີກນັ້ນລະ ຕ້ອງມີເຫລົ້າວິດກາຫຍັ້ນແດ່ຊຸ້ນນ່າ... ເຈົ້າເຂົ້າໃຈບໍ່?

- ເຫລົ້າວິດກາເທື່ອນຫັ້ນວະ... ໂອ້ຍບໍ່ເດ໊..., ຊິເອົາເຫລົ້າແວງຫວານໆຫັ້ນຈັກສອງແກ້ວກໍພໍ.

ບົດທີ ໑໐

ການແຕ່ງດອງ

ໃນວັນອາທິດກໍມີຄົນຂອງ ປາແວນ ອີວາໂນວິດ ນີໂກລາຍເຢັງໂກ ມາຫາພວກເຮົາ, ມີຜູ້ທີ່ພວກເຮົາຮູ້ຈັກແລ້ວເຊັ່ນ: ກູສະມາ ເປໂຕຣວິດ ໂມໂກຣິດ ແລະ ໂອຊິບ ອີຍາໂນວິດ ສະໂຕມູຄາ. ກູສະມາ ເປໂຕຣວິດ ນັ້ນ ທີ່ວທັງນິຄົມຮູ້ຈັກລາວດີ ເພາະວ່າລາວຢູ່ບໍ່ໄກຈາກພວກເຮົາເລີຍ; ລາວຢູ່ຟາກນ້ຳຫ້ວຍເບື້ອງນັ້ນຊື່ໆ. ລາວເປັນຄົນມັກເວົ້າມັກລີ້ນຢູ່ ແຕ່ນິໄສບໍ່ຫນັກແຫນ້ນດີເທົ່າໃດ. ລາວມີທົ່ງນາດິນພິງແກມຊາຍ, ຮົກເຮື້ອດ້ວຍຫຍ້າຫລາຍຊະນິດ, ລາວບໍ່ມັກໄປຈອບໄປຍັ່ງເບິ່ງເລື້ອຍໆດອກ, ນາລາວເປັນບ່ອນສະສົມຄວາມເປິເປື້ອນ ແລະ ຫຍ້າຕ່າງໆທີ່ເກີດເອົາເອງ. ທາງຍ່າງເສັ້ນເລັກເສັ້ນນ້ອຍຫລາຍເສັ້ນຕັດຜ່ານທົ່ງຂອງລາວ ເພາະມັນຂວາງ

ທາງໄປຂອງຫມົດທຸກຄົນຢູ່ແລ້ວ ແລະ ໃບຫນ້າຂອງເກົ້າ ກູສະມາ ເປໂຕຣວິດ ເອງ ກໍຄ້າຍຄືກັບດິນທົ່ງນາຂອງລາວ: ບໍ່ມີພືດດີງອັນໃດປົ່ງຊອບຂຶ້ນເຊັ່ນດຽວກັບໃບຫນ້າຂອງລາວ ຂົນເຄົາແຕ່ລະຍ່ອມຂອງລາວທີ່ເປັນສີດຳເປື້ອນນັ້ນ ກໍຊີ້ຊັນໄປທຸກທິບທຸກແດນ ໂດຍບໍ່ຄຶດເຫັນສິດຜົນປະໂຫຍດຂອງຜູ້ເປັນເຈົ້າຂອງມັນເລີຍ. ຫນັງຫນ້າເອງກໍຂີດເປັນຮ່ອງ ຄືກັບເສັ້ນທາງຢ່າງແຕ່ລະເສັ້ນນ້ອຍໆໃນທົ່ງນາຂອງລາວນັ້ນແລ້ວ ມັນເຕັມໄປດ້ວຍຮອຍແຫ່ວຄອງຂີດເລິກໆສັບກັນໄປ. ຄວາມແຕກຕ່າງອັນດຽວລະຫວ່າງ ກູສະມາ ເປໂຕຣວິດ ກັບທົ່ງນາຂອງລາວ ກໍແມ່ນວ່າທົ່ງນານັ້ນບໍ່ມີສິ່ງໃດສິ່ງຫນຶ່ງແຫລມເດ່ອອກຄືດັງຂອງຄົນຜູ້ນີ້, ມັນຕັ້ງວ່າຍາວ ແລະ ແຫລມພີລຶກເອົາແຫ້ເອົາວ່າ.

ກົງກັນຂ້າມ ໂອຊິບ ອີວາໂນວິດ ສະໂຕມູຄາ ນັ້ນຊ້ຳແຕກຕ່າງຫມູ່ ຍ້ອນຄວາມສະຫງ່າງາມຂອງລາວ. ເວົ້າແລ້ວກໍເກືອບແນ່ໃຈເລີຍວ່າຢູ່ໃນບ້ານ ກົງຊາຣອບກາ ນີ້ຄົງບໍ່ມີຊາຍຄົນໃດມີຮູບຮ່າງ ແລະ ໃບຫນ້າງາມສົມກັນເທົ່າກັບລາວ. ຫນວດຫນາຂອງລາວເປັນສີແດງຈື່ງຂື່ງ, ດວງຕາທັງຄູ່ເປັນຮູບແຕ້ມງາມ ມີແວວທະນົງຕົວເລິກແລບ, ເຄື່ອງນຸ່ງຂອງລາວຄ້າຍຄືເຄື່ອງແບບທະຫານ, ລາວວາງຕົວຢ່າງຖືກຕ້ອງແລະເປັນສະງ່າຢູ່ໃນຊຸດນີ້ສະເຫມີ. ໂອຊິບ ມີຍາດພີ່ນ້ອງເປັນຊາວນາຮັ່ງຫລາຍຄົນ ແຕ່ວ່າລາວເອງນັ້ນຊ້ຳບໍ່ມີຜູ້ໃດຮູ້ວ່າ ເປັນຫຍັງຈຶ່ງບໍ່ມີທີ່ດິນເລີຍ, ລາວດຳລົງຊີວິດຢູ່ດ້ວຍການໂຫ່ເນື້ອ, ເຮືອນນ້ອຍຂອງລາວຢູ່ແຄມນ້ຳຫ້ວຍ ມັນໂດດດ່ຽວຫ່າງຈາກຫມູ່ບ້ານຫລາຍເດີບ.

ພວກເຮົາລໍຄອຍການມາຢັ້ງຢາມຂອງພວກເຂົາຢູ່ແລ້ວ ແຕ່ເຖິງປານນັ້ນ ພວກເຂົາກໍຍັງເຫັນວ່າພວກເຮົາບໍ່ໄດ້ກຽມເນື້ອກຽມຕົວພຽງພໍ, ຟ້າເອີຍ ເຮັດແນວໃດພວກເຮົາຈຶ່ງຈະຮູ້ວ່າ ຕ້ອງກະກຽມໃສ່ເລື່ອງທີ່ດີນໆຈຶ່ງເກີດຂຶ້ນເທື່ອໜຶ່ງແບບນີ້ໄດ້ແນວໃດ? ນອກນີ້ ເມື່ອພວກເຂົາເຂົ້າມາໃນຫ້ອງການຂອງຂ້າພະເຈົ້ານັ້ນ ຮູ້ສຶກວ່າບັນຍາກາດເຄັ່ງຂຶມງຽບສະຫງັດ ແລະ ໜ້າຫີນຫວຍສົມຄວນ. ຜູ້ເປັນແຂກກ້າວເຂົ້າມາ, ຈັບມືການສະບາຍດີກັບພວກເຮົາ ແລ້ວນັ່ງລົງຕັ່ງຍາວ. ຂ້າພະເຈົ້າເອງຄິດບໍ່ອອກວ່າຈະທຳລາຍບັນຍາກາດອຶດອັດນີ້ແນວໃດ, ເດຊະບຸນ ໂອຊິບ ອີວາໂນວິດ ໄດ້ເລີ່ມຂຶ້ນຢ່າງງ່າຍໆວ່າ:

- ຄັນແມ່ນແຕ່ກີ້ແຕ່ກ່ອນ ເພິ່ນຈິເລົ່າເລື່ອງໄປໂຫ່ເນື້ອສູ່ກັນຟັງໃດ໋ນີ້ ວ່າແນວນີ້ເດ: ພວກເຮົາຕິດຕາມຮອຍໝາຈອກໂຕໜຶ່ງໄປ ແລ້ວໝາຈອກໂຕນັ້ນກາຍເປັນສາວງາມຄົນໜຶ່ງ... ແຕ່ຂ້ອຍຄຶດວ່າປະເພນີອັນນີ້ໃຊ້ການບໍ່ໄດ້ແລ້ວໃນສະໄໝພວກເຮົາ ເຖິງແມ່ນວ່າຂ້ອຍເອງຈິເປັນນາຍພານແທ້ໆກໍດາຍ.

- ແມ່ນຈັ່ງຊັ້ນແທ້ໆ, ຂ້າພະເຈົ້າຕອບ.

ກູສະມາ ເປໂຕຣວິດ ກູຕົນໄປມາໂດຍບໍ່ລຸກຈາກຕັ່ງຍາວ ທັງດຶງໜວດເຄົາຍ້ອມໆຂອງຕົນເອງ:

- ແນວຕາຍໆ..., ຂໍໃຫ້ຂ້ອຍເວົ້າແດ່ເທາະ.

- ບໍ່ແມ່ນວ່າມັນແມ່ນແນວຕາຍໆເດີ້... ພຽງແຕ່ວ່າບໍ່ແມ່ນຍາມມັນເທົ່ານັ້ນລະ, ສະໂຕມູຄາ ເວົ້າແກ້.

- ສະໄໝກ່ອນກໍນິຍົມອີກແບບໜຶ່ງ, ການີນາ ອີວາໂນວິດ

ເລີ່ມມີສຽງຂຶ້ນຢ່າງເປັນວາດເປັນຊິງ, -ຍັງມີຄົນປະເພດຫລ້າຫລັງ ຢູ່ ທີ່ມີແນວຄິດເຊື່ອຖືງົມງາຍ ຢູ່ກິນແບບປ່າເຖື່ອນ ຢ້ານກົວໄປ ຫມົດທຸກຢ່າງ: ຢ້ານລົມພະຍຸ, ຢ້ານພະຈັນ, ຢ້ານຮອດແນວດ້າມ ໂຕ. ແຕ່ສະໄຫມນີ້ຂອງພວກເຮົາມັນແມ່ນລະບອບໂຊວຽດເດີ້... ເອີ...ງ ແລ້ວຈັ່ງຊັ້ນ ອັນແນວເປັນຕາຢ້ານກວ່າຫມູ່ ແມ່ນຄົນເຮົາ ກວດກາທາງດ້ານເສດຖະກິດ ເຫລືອນັ້ນ...

ສະໂຕມູຄາ ເວົ້າຂັດ ກາລີນາ ອີວາໂນວິດ ຂຶ້ນ, ຝ່າຍນີ້ລົມ ໄປແລ້ວວ່າການທີ່ພວກເຮົາມານັ່ງຊຸມກັນຢູ່ນີ້ ບໍ່ແມ່ນເພື່ອມາໂອ້ລົມ ເລື່ອງວິທະຍາສາດ.

-ພວກເຮົາຈະບອກພວກເຈົ້າແຕ່ພຽງວ່າ ພວກເຮົາມາແທນ ປາແວນ ອີວາໂນວິດ ຜູ້ເຊິ່ງພວກເຈົ້າກໍ່ຮູ້ຈັກດີ... ເອີ້... ພ້ອມ ກັບ ເອັບໂດເກຍ ສະເຕປາໂນວາ ເມຍຂອງລາວນຳ. ໃນຖານະ ວ່າເຈົ້ານັ້ນເປັນຄືພໍ່ຂອງເດັກນ້ອຍນິຄົມນີ້ ເຈົ້າຈະຍິນດີຍົກລູກສາວ ສົມມຸດຂອງເຈົ້າຄືນາງໂອເລຍ ໂວໂຣໂນວາ... ໃຫ້ແກ່... ລູກຊາຍ ຂອງລາວ ທ້າວ ປາແວນ ປາວະໂລວິດ ຫັ້ນບໍ່? ບັດນີ້ທ້າວນີ້ແລ້ວ ເປັນປະທານສະພາໂຊວຽດທ້ອງຖິ່ນນ່າ.

-ພວກເຮົາຂໍຄຳຕອບນຳພວກເຈົ້າ, ກູສະມາ ເປໂຕຣວິດ ຄາງ ອຸ່ມງຶ້ນ, -ໃນກໍລະນີທີ່ພວກເຈົ້າເຫັນດີເຫັນງາມນຳ, ອີງໃສ່ວ່າ ຜູ້ເປັນພໍ່ເປັນແມ່ຕ້ອງການແນວນັ້ນ ຈົ່ງສົ່ງຜ້າເຊັດມື, ເຂົ້າຈີ່ໃຫ້ພວກ ເຮົາ, ຖ້າວ່າຂໍ້ສະເຫນີນີ້ ພວກເຈົ້າບໍ່ເຫັນດີນຳກໍ່ຈົ່ງອະໄພໃຫ້ດ້ວຍ ທີ່ມາລົບກວນພວກເຈົ້າ.

-ເອີ... ເອີ ເອີ. ຂໍໂທດຊຶ່ງມັນບໍ່ພໍດີ! ກາລີນາ ອີວາໂນວິດ

ເວົ້າຂຶ້ນ, -ຕາມທໍານຽມບ້າງ ບໍ ຂອງພວກເຈົ້າທ່ານ ຄືວ່າພວກເຈົ້າຕ້ອງເອົາຫມາກອືອ່ອນເມືອບ້ານນໍາຫນ່ວຍຫນຶ່ງບໍ່ແມ່ນຫວະ?

-ພວກເຮົາບໍ່ສົນໃຈນໍາຫມາກອືອ່ອນດອກ, ໂອຊີບ ອີວາໂນວິດ ຫົວຍິ້ມ, -ຍາມນີ້ມັນຍັງບໍ່ມີເທື່ອທ່ານເດ້.

-ເອີ້... ກໍແມ່ນແນວນັ້ນແທ້ໆທ່ານລະ, ກາລີນາ ອີວາໂນວິດ ຍອມຮັບ. ຄາວແຕ່ກີ້ມັນຍັງມີທ້າງຜູ້ສາວໂງ່ຈ້າ ທ້າງອວດອີງທະນົງຕົວຫັ້ນລະ, ພາກັນມ້ຽນຮັກສາຫມາກອືອ່ອນໄວ້ໃນສາງໃນເຍຍຈົນເຕັມ, ຄັນວ່າບໍ່ມີຜູ້ມາຂໍ ກໍເລີຍໄດ້ເອົາມາຕົ້ມກິນ... ຮື... ຄັກ ຕວ່າ ຕົ້ມຫມາກອືອ່ອນໃສ່ເຂົ້າຫມາກເດືອຍ ກໍຫາກແຊບດີດອກເນາະ.

-ຄໍາຕອບຂອງເກົ້າແກ່ພໍ່ແມ່ທາງພີ້ຊິວ່າແນວໃດເນາະ? ໂອຊີບ ອີວາໂນວິດ ຖາມຂຶ້ນ, ຂ້າພະເຈົ້າຈຶ່ງຕອບໄປວ່າ:

-ຂ້ອຍຂໍຂອບໃຈນໍາພວກເຈົ້າ ແລະ ຂໍຝາກຄວາມຂອບໃຈນີ້ໄປຫາ ປາແວນ ອີວາໂນວິດ ກັບ ເອັບໂດເກຍ ສະເຕປາໂນວາ ນໍາທີ່ໃຫ້ກຽດແກ່ພວກເຮົາແນວນີ້. ແຕ່ຂ້ອຍບໍ່ແມ່ນເກົ້າແກ່ພໍ່ແມ່ ແລະ ບໍ່ສາມາດໃຊ້ສິດແທນພໍ່ຂອງນາງໄດ້. ຈັ່ງຊັ້ນ ຈຶ່ງຕ້ອງການຄວາມສະຫມັກໃຈຂອງ ໂອເລຍ ເອງ ຕໍ່ໄປແມ່ນເລື່ອງຂອງສະພາ ນາຍກອງທີ່ຈະຈັດການລາຍລະອຽດທຸກຢ່າງ.

-ພວກເຈົ້າບໍ່ຕ້ອງບອກໃຫ້ພວກເຮົາຮູ້ນໍາດອກ. ເຊີນເຮັດທຸກຢ່າງຕາມລະບຽບຮີດຄອງໃຫມ່ໂລດ; ໂອຊີບ ອີວາໂນວິດ ຕົກລົງນໍາງ່າຍ ໆ.

ຂ້າພະເຈົ້າອອກຈາກຫ້ອງການ ແລະ ພົບເວນປະຈໍາວັນຢູ່ຫ້ອງ

ຂ້າງໆ, ຂ້າພະເຈົ້າຂໍໃຫ້ເຂົາສັ່ນກະແລ່ງສັນຍານເອີ້ນປະຊຸມນາຍກອງ. ບັນຍາກາດໃນນິຄົມຮຸ່ມຮ້ອນ ແລະ ຟົດເດືອດຂຶ້ນຢ່າງປະຈັກຕາ. ນາຊະເຈຍ ໂດດມາຫາຂ້າພະເຈົ້າທັງຫົວ:

-ຊິໃຫ້ໄປຍືນກີຜ້າເຊັດຫນ້າຫມູ່ນີ້ຢູ່ໃສເກາະ? ເອົາໄປໄວ້ພຸ່ມບໍ່ໄດ້ຫວະ? ນາງຖາມທັງງຶກຫົວໄປທາງຫ້ອງການ.

-ຖ້າຄາວຫນຶ່ງກ່ອນ, ບໍ່ທັນຕົກລົງກັນແລ້ວເທື່ອ, ພວກເຈົ້າຖ້າຢູ່ທາງນີ້ກ່ອນແລ້ວຂ້ອຍຊິເອີ້ນດອກ.

-ແລ້ວແມ່ນໃຜຊິມັດໃຫ້ພວກເຂົາລະ?

-ມັດຫຍັງ?

-ອ້າວກໍມັດຮອບແອວພວກເຂົາ... ເກົ້າແກ່ຂໍສາວຫັ້ນແລ້ວ, ເຮັດແນວນີ້ຕວ່າຕາມໄດ້ຍິນມານະ...?

ໂຕສະກາ ໂສໂລເວັບ ຢືນຢູ່ຂ້າງໆຂ້າພະເຈົ້າ ຫມໍຫນິບເຂົ້າຈີ່ຫອມກ້ອນໃຫຍ່ໄວ້ກ້ອງຂີ້ແຮ້ ແລະ ໃນມືກໍຖືກ້ວຍເກືອ, ເຊິ່ງຫມໍສັ່ນໄປສັ່ນມາ, ມ່ວນໃຈທີ່ເຫັນເມັດເກືອເຕັ້ນຟົ້ງ. ຊິລັນຕິ ແລ່ນຈ້າວມາໃສ່:

-ແມ່ນມຶງເຮັດອີ່ຫຍັງ... ສັ່ນເຂົ້າຈີ່ສັ່ນເກືອຂອງຮັບຂັນຫມາກແນວນີ້, ເອົາໃສ່ພາກາດໄວ... ລາວກົ້ມຫົວລົງເພື່ອເຊື່ອງຮອຍຍິ້ມທີ່ກັ້ນໄວ້ບໍ່ພັງ.

-ໂອ້ຍ ພວກເດັກນ້ອຍຫມູ່ນີ້ຈັ່ງແມ່ນໂພດດອກ..., ແລ້ວຂອງກິນແກ້ມເດ້ລະ?

ຂ້າພະເຈົ້າຊື່ນໃຈຂຶ້ນ ເມື່ອເຫັນ ເອີກາເຕີຣີນາ ກຣີກໍເຣັບນາຍ່າງເຂົ້າມາ:

- ຊ່ອຍພວກເຮົາຈັດການເລື່ອງນີ້ແດ່.

- ເອີ້... ເຈົ້າ, ຂ້ອຍຊອກຫາພວກເຂົາຕັ້ງດົນເຕີບແລ້ວນ່າ. ພວກເຂົາພາກັນຫອບເຂົ້າຈີ່ກ້ອນນີ້ເລາະອ້ອມນິຄົມມາແຕ່ເຊົ້າແລ້ວ. ເຈົ້າມາກັບຂ້ອຍແມ້, ພວກຂ້ອຍຊິຈັດການເລື່ອງນີ້ດອກ ເຈົ້າຢ່າກັງວົນເລີຍ. ພວກຂ້ອຍຊິໄປຢູ່ຫໍພັກ ພວກເດັກນ້ອຍແມ່ຍິງເດີ້. ມີຫຍັງເຈົ້າເອີ້ນໂລດ.

ພວກນາຍກອງແລ່ນມາຍັງຫ້ອງການຂອງຂ້າພະເຈົ້າໃນຊຸດສົ້ງຂາສັ້ນປະກິກຂາເປືອຍ.

ຂ້າພະເຈົ້າຮັກສາບັນຊີຊື່ພວກນາຍກອງໃນສະໄຫມເກີດເຫດການມ່ວນໆຕອນນີ້ຢູ່ດັ່ງນີ້:

- ຫົວຫນ້າກອງທີ ໑ (ຊ່າງເກີບ) ກູດ
- ຫົວຫນ້າກອງທີ ໒ (ຄອກມ້າ) ບຣາເຊັນໂກ
- ຫົວຫນ້າກອງທີ ໓ (ຄອກງົວ) ໂອປຣິສໂກ
- ຫົວຫນ້າກອງທີ ໔ (ໂຮງຊ່າງໄມ້) ຕາຣາແນດ
- ຫົວຫນ້າກອງທີ ໕ (ກອງແມ່ຍິງ) ນິດແຊັບນາຍາ
- ຫົວຫນ້າກອງທີ ໖ (ໂຮງຊ່າງຕີເຫລັກ) ເບຍລູກິນ
- ຫົວຫນ້າກອງທີ ໗ ເວັດກອບສະກີ
- ຫົວຫນ້າກອງທີ ໘ ກາຣາບານົບ
- ຫົວຫນ້າກອງທີ ໙ (ໂຮງສີເຂົ້າ) ອິດຊາຈີ
- ຫົວຫນ້າກອງທີ ໑໐ (ຄອກຫມູ) ສະຕູປິດຊິນ
- ຫົວຫນ້າກອງທີ ໑໑ (ພວກນ້ອງນ້ອຍ) ເກໍເກັບສະກີ
- ເລຂາສະພານາຍກອງ ໂກເລຍ ແວກຊະເນັບ

- ຜູ້ອຳນວຍການໂຮງສີ ກູດລາດີ

- ຫົວໜ້າສາງ ອາໂລດຊາ ໂວນກອບ

- ຜູ້ຊ່ອຍວິສະວະກອນກະເສດ ໂອເລຍ ໂວໂຣໂນວາ.

ໃນຕົວຈິງແລ້ວຈຳນວນຄົນອື່ນອີກຫລວງຫລາຍໄດ້ມາເຕົ້າໂຮມກັນຢູ່ສະພານາຍກອງ: ຜູ້ທີ່ໄດ້ເຂົ້າມາຢ່າງມີສິດເຕັມສ່ວນຄື ສະມາຊິກກົມໂຊໂມນກໍມີ: ຊາໂດຣອບ, ໂຈຣາ ໂວນກອບ, ໂວໂລຄອບ, ບູຣູນ, ພວກຮຸ່ນອາວຸໂສຫົວຍາວກ້ອງອານມ້າ ມີ: ປຣີໂກດໂກ, ໂຊໂຣກາ, ໂກໂລສ, ໂຊບີດ, ອິບຊາເຣັນໂກ, ໂກຣີໂຕ. ພວກທີ່ເຂົ້າມາໃນຖານະຜູ້ສະຫລອກກອກ ນັ່ງຢູ່ກັບພື້ນເຮືອນ ໃນນັ້ນແນ່ນອນຕ້ອງມີ ມີເຕຍ, ວິເຕຍ, ໂຕສະກາ ແລະ ວາເນຍ ເຊລາປູຕິນ. ພວກຄູສອນນັ້ນເຂົ້າຮ່ວມກອງປະຊຸມສະພານາຍກອງສະເຫມີ ເຊັ່ນດຽວກັບ ກາລີນາ ອີວາໂນວິດ ແລະ ຊີລັນຕີ ເຊມີວໂນວິດ. ຈັ່ງຊັ້ນ ຕັ່ງນັ່ງຈຶ່ງບໍ່ພຽງພໍຈັກເທື່ອ, ມີຜູ້ຂຶ້ນໄປນັ່ງເທິງຂອບປ່ອງຢ້ຽມ, ຍືນອີງຝາ, ມີຜູ້ສ່ອງມາແຕ່ນອກກໍພ່ອງນັ້ນ ເພື່ອຢາກຮູ້ວ່າມີຫຍັງເກີດຢູ່ໃນຫ້ອງ.

ໂກເລຍ ແວກຊະເນັບ ເປັນຜູ້ໄຂວາລະປະຊຸມ. ເກົ້າແກ່ຂີສາວໃນອະນາຄົດກຶກເດັກນ້ອຍເປັນສິບໆແຫຍ້ຫນີບ ຢູ່ເທິງຕັ່ງນວມຍາວ, ເມື່ອຫມົ້ນແຫຍ້ຢູ່ລະຫວ່າງແຂ່ງຂາແຂນເປືອຍເປົ່າເຫລົ່ານີ້ແລ້ວ ພວກເຂົາກໍສູນເສຍວາດຊົງເຄັ່ງຂຶມໄປຫມົດ.

ຂ້າພະເຈົ້າແຈ້ງໃຫ້ພວກນາຍກອງ ຮູ້ເກືອງການມາຢ້ຽມຢຽມຂອງແຂກ, ນອກນັ້ນກໍບໍ່ມີເລື່ອງລາວອັນໃດແປກໃຫມ່ສຳລັບສະພາ ເພາະດົນມາແລ້ວທີ່ທຸກຄົນຮູ້ເກືອງຄວາມສຳພັນລະຫວ່າງ ປາແວນ ປາວະ

ໂລວິດ ແລະ ໂອເລຍ. ແວກຊະເບັບຕັ້ງຄຳຖາມຂຶ້ນກັບນາງຕາມ ຮູບການວ່າ:

- ເຈົ້າຍິນດີແຕ່ງດອງກັບ ປາແວນ ບໍ່?

ໂອເລຍ ໜ້າແດງໜ້ອຍໜຶ່ງ ແລ້ວຕອບວ່າ:

- ເຈົ້າ, ແນ່ນອນແລ້ວ.

ລາບິດ ເຮັດໜ້າຫຍຸ້ງ:

- ແຕ່ກ່ອນບໍ່ມີໃຜເຮັດແນວນີ້ເລີຍ, ເຈົ້າຄວນປະຕິເສດ ແລ້ວພວກເຮົາກໍຈະໄດ້ໂອ້ລົມເອົາຊະນະເຈົ້າ, ແບບນີ້ບໍ່ໜ້າສົນໃຈເລີຍ.

ກາລີນາ ອີວາໂນວິດ ເວົ້າຂຶ້ນວ່າ:

- ໜ້າສົນໃຈຫລືບໍ່ ກໍຕ້ອງເວົ້າກັນເປັນການເປັນງານ. ຈົ່ງບອກພວກເຮົາມາເບິ່ງດູວ່າ ພວກເຈົ້າຊິຈັດການແນວໃດ, ເຮັດແນວໃດກັບບ່ອນພັກບ່ອນເຊົາ ແລະ ສ່ວນອື່ນໆນໍາ?

ໂອຊິບ ອີວາໂນວິດ ເອົາມືລູບໜວດໄປມາ:

- ເປັນແນວນີ້ເນາະ, ດ້ວຍຄວາມຍິນຍອມພ້ອມໃຈຈາກຝ່າຍເຈົ້າ ພວກເຮົາຈະຈັດພິທີແຕ່ງດອງ, ຮັບສິນຮັບພອນ ແລ້ວຄູ່ສົມລົດໃໝ່ຈະໄປຢູ່ເຮືອນນໍາພໍ່ແມ່ຝ່າຍຊາຍ: ພວກເຂົາຊິຢູ່ຮ່ວມເຮືອນດຽວກັນ...

- ຊັ້ນ ອັນເພີ່ນປຸກເຮືອນໃໝ່ຂຶ້ນຫັ້ນ ແມ່ນສໍາລັບໃຜຊັ້ນ? ກາຣາບານົບຖາມຂຶ້ນ.

- ເຮືອນນັ້ນຈະເປັນຂອງ ມີຄາຍອີນ.

- ແຕ່ ປາແວນ ເປັນລູກຊາຍກົກດວ່າເບາະ?

-ແມ່ນແທ້ມັນເປັນລູກກົກ, ແຕ່ເຖົ້າພໍ່ມັນຕົກລົງໃຈແນວນັ້ນ ເດ້, ເພາະວ່າປາແວນ ມາເອົາເມຍຢູ່ນີ້ຄືນ.

-ມັນມາເອົາເມຍຢູ່ນີ້ຄືນແລ້ວເປັນຫຍັງລະ? ໂກວານ ຄາງ ສຽງບໍ່ມ່ວນປານໃດ.

ໂອຊີບ ອີວາໂນວິດ ຊອກຫາຄຳຕອບບໍ່ໄດ້ໂລດ, ກູສະມາ ເປ ໂຕຣວິດຈຶ່ງເວົ້າເນີບໆສຽງອ້ອຍອິ່ນຂຶ້ນ:

-ເພິ່ນຕົກລົງໄວ້ແນວນັ້ນ. ປາແວນ ອີວາໂນວິດ ເວົ້າວ່າ: ພໍ່ ເຈົ້າເຮືອນຕ້ອງການມີແມ່ເຮືອນ ແລະ ບາງກໍຈະມີກະໂຕພໍ່ປູ່ບາງ ເອງເປັນພໍ່ເລີຍ, ເລື່ອງມັນມີຢູ່ວ່າ ມີຄາຍອີນ ຈະແຕ່ງດອງກັບລູກ ສາວ ແຊກກີ ເກຣຊານີ, ຈັ່ງຊັ້ນເຈົ້າສາວຂອງພວກເຈົ້າ ຈຶ່ງຈະ ເຂົ້າເປັນລູກໃພ້ຢູ່ໃນເຮືອນໃຫຍ່ເລີຍ ໂດຍການແຕ່ງດອງເອົາກັບ ປາແວນ ປາວະໂລວິດ. ເອີ້...ທ້າວນີ້ກໍໄດ້ເຫັນດີແນວນີ້ແລ້ວ.

ກາຣາບານົບ ແກວ່ງແຂນ:

-ຄັນວ່າມີຂີ້ສະເຫນີແບບນີ້, ພວກເຈົ້າອາດຈະກັບໄປພ້ອມ ກັບຫນ່ວຍຫມາກອຶສາແລ້ວລະ. ພວກເຮົາຊິໄປສົນໃຈຫຍັງນຳ ຄວາມຕົກລົງປົງໃຈຂອງ ປາແວນ ປາວະໂລວິດ! ອັນນີ້ມັນສະແດງ ວ່າ ເຂົາບໍ່ມີຄວາມເຂັ້ມແຂງຈັກດີ້ເລີຍ. ກອງປະຊຸມນາຍກອງບໍ່ ອາດເຫັນດີຕົກລົງໃຫ້ ໂອເລຍ ແຕ່ງດອງຢູ່ໃນເງື່ອນໄຂເຫລົ່ານີ້. ເຮັດແນວນີ້ມັນເທົ່າກັບວ່າ ປ່ອຍໃຫ້ນາງໄປເປັນສາວໃຊ້ຢູ່ໃນເຮືອນ ເຖົ້າເຜດນັ້ນແລ້ວ...

-ເຊມີຍົງ..., ໂກເລຍ ຮ້ອງໃສ່ເຮັດຄືວສິນ.

-ເອີ້... ເອີ... ຂ້ອຍຂໍກອບຄຳວ່າພິເສດ, ແລ້ວຕໍ່ມາເລີຍຮັບ
ສິນຮັບພອນນັ້ນມັນແມ່ນຫຍັງກັນ?

-ໂຍ້ວ ອັນນີ້ມັນແມ່ນປະເພນີເດີ້. ໃສຊິເຄີຍມີພິທີແຕ່ງດອງ
ໂດຍບໍ່ມີພະສັງຄະລາດມາຮ່ວມ, ໄທເຮົາບໍ່ເຄີຍດອກແນວນັ້ນນ່າ.

-ແຕ່ພວກເຮົາຈະເຮັດ..., ໂກວານ ເວົ້າຂຶ້ນ.

ກູສະມາ ເປໂຕຣວິດ ເອົາມືທັ້ນເຄົາຄ່ອຍ ໆ.

-ແລ້ວຊິເຫັນກັນວ່າ ຈະເປັນໄປໄດ້ຫລືບໍ່. ໄທເຮົາໂລດພາ
ກັນຖືວ່າ ຢູ່ກິນເປັນຜົວເມຍແບບບໍ່ໄດ້ແຕ່ງດອງຢູ່ໂບດບໍ່ດີ.

ຄວາມງຽບສະຫງັດຄອບງຳທົ່ວກອງປະຊຸມ: ຫມົດທຸກຄົນ
ຄຶດຄືກັນວ່າ: ຈະບໍ່ມີການແຕ່ງດອງ. ໃນກໍລະນີເຊັ່ນນີ້ ຂ້າພະເຈົ້າ
ຄຶດຢ້ານວ່າ ພວກເດັກນ້ອຍຈະຂັບໄລ່ພວກເຖົ້າແກ່ຕົວແທນຫນີ
ຢ່າງບໍ່ເກງອົກເກງໃຈເປັນພິເສດ.

-ໂອເລີຍ, ເຈົ້າຕ້ອງການໃຫ້ມີຄຸນພໍ່ບໍ່? ໂກເລຍ ກຸາມຂຶ້ນ.

-ແມ່ນຫຍັງເກາະ? ເຈົ້າ... ເຈົ້າ... ປ່ວງໄປແລ້ວຫວະ?
ລືມແລ້ວຫວະວ່າ ຂ້ອຍເປັນຊາວຫນຸ່ມກົມໂຊໂມນຄົນຫນຶ່ງ.

-ບໍ່ຕ້ອງກັງວົນຫມົດກັບສັງຄະລາດ, ຂ້າພະເຈົ້າບອກກັບເຖົ້າ
ແກ່ຂໍສາວ, ພະຍາຍາມຈັດການເລື່ອງນີ້ແບບອື່ນ. ພວກເຈົ້າກໍຮູ້ດີ
ວ່າ ພວກເຈົ້າເວົ້າກັບໃຜ. ເຮັດແນວໃດຈຶ່ງສາມາດຄຶດອອກວ່າ
ພວກເຮົາຊິຍອມເຂົ້າວັດ?

ຊີລັນຕີ ລຸກຂຶ້ນ, ດົວມີເດ່ອອກມາເພື່ອຂໍເວົ້າ.

-ຊີລັນຕີ ເຈົ້າຢາກມີຄວາມເຫັນຫວະ? ໂກເລຍ ກຸາມ.

-ເອີ້... ກະຊັ້ນລະ..., ຂ້ອຍມີອີ່ຫຍັງຢາກຖາມຈັກຫນ້ອຍ...

- ເອົາກໍການເລີຍ.

- ຊິນ່າ... ພວກເຈົ້າເຫັນລະຕິ... ກູສະມາ ລາວໂລດຝັນຫວານຢູ່ ປ່ອຍໃຫ້ ໂອຊິບ ຫັ້ນດຸ ບອກພວກເຮົາໃຫ້ຮູ້ແດ່ວ່າແມ່ນເພດໂຕໃດຕ້ອງການຖຸບພໍ່ອຸ້ມລຸ້ມຫມູ່ນັ້ນມາເຮັດຫຍັງ? ທາງທີ່ດີ... ລ້ຽງຫມູໄວ້ໃຫ້ພີ່ງ ດີກວ່າ.

- ເວນຕາຍມັນເອີຍ! ສະໂຕມູຄາ ເວົ້າທັງຫົວ, - ຄັນຈວບພວກເຂົາກາງທາງຂ້ອຍຊິບໍ່ໄປໂຫ່ເບື່ອເລີຍລະ*.

- ຊັ້ນແປວ່າ ແມ່ນທ່ານ ກູສະມາ ຜູ້ນີ້ແມ່ນບໍ່ ທີ່ບໍ່ສາມາດຂາດຖຸບພໍ່ໄດ້?

ກູສະມາ ຍິ້ມຫນ້ອຍຫນຶ່ງ.

- ຮື... ຮື... ບັນຫາມັນບໍ່ແມ່ນຢູ່ບ່ອນວ່າ ເຮົາຕ້ອງການຫລືບໍ່ຕ້ອງການດອກ, ມັນເປັນແນວນີ້ມາແລ້ວ ປູ່ຍ່າຕານາຍພວກເຮົາເຄີຍເຮັດມາແລ້ວ ແລະ ນອກນີ້ ປາແວນ ອີ່ວາໂນວິດ ກໍໄດ້ເວົ້າວ່າ: ພວກເຮົາຊິເອົາລູກໃພ້ ເກືອວ່ານາງຊິທຸກບໍ່ມີມູນສິນລົດກໍຕາມ... ແລ້ວກະອື່ນ ໆ...

ກາລີນາ ອີວາໂນວິດ ຟາດກໍາປັ້ນລົງໃສ່ໂຕະ:

- ແມ່ນຫຍັງເກາະ? ແມ່ນໃຜອະນຸຍາດໃຫ້ໂຕມາເຫົ່າຢູ່ນີ້ເວີຍ? ມັນແມ່ນໃຜເວີ້ຍ ທ້າວເສດຖີທ່າໃຫຍ່ທີ່ປະເຊີນຫນ້າກັບພວກເຮົາຢູ່ນີ້? ໂຕຄຶດຊັ້ນເບາະວ່າຍ້ອນໂຕກັບທ້າວ ປາແວນ ອີວາໂນວິດຫັ້ນປຸກເຮືອນມຸງຫຍ້າໄດ້ດ້າມຫລັງ ແລ້ວຊິມີສິດມາອວດອ້າງວາງ

---

* ມີຄວາມຫມາຍວ່າ ຊວຍ.

ທ່ານໃຫຍ່ຊັ້ນຫວະ? ມີໂຕະດ້ານໂຕ ແບັບມ້ານັ່ງສອງໂຕ ແລ້ວກໍ ເສື້ອຍ່າມຈັກໂຕໃສ່ຕູ້ໄວ້. ພວກເວນເອີຍ, ໄດ້ຫໍ່ນີ້ກໍອ້າງໂຕວ່າ ເປັນເສດຖີແລ້ວຊັ້ນເບາະ?

ກູສະມາ ເປໂຕຣວິດ ປາກສັ່ນຫິດ ໆ ຍ້ອນຢານ:

-ແມ່ນໃຜ... ວາງທ່າໃຫຍ່? ພວກເຮົາພຽງແຕ່ຢາກເວົ້າຮອດ ສິນສິນລິດຊື ໆ ນ່າ.

-ໂຕຮູ້ບໍ່ວ່າ ໂຕເວົ້າກັບໃຜ? ຮູ້ຫລືບໍ່? ຢູ່ນີ້ໂຕເວົ້າກັບອຳນາດ ການປົກຄອງໂຊວຽດເດີ, ບາງທີໂຕອາດຊິບໍ່ເຫັນຕິເບາະ? ອຳນາດ ໂຊວຽດສາມາດໃຫ້ສິນສິນລິດຊະນິດທີ່ພວກປູ່ຍ່າຕາທວດສູຫາແລ້ວ ຫາອີກ ເກີດສາມຊາດກໍຍັງບໍ່ໄດ້ພຸ້ນລະ.

-ແຕ່ວ່າ..., ໂຍ້ວ ຟັງກ່ອນ... ພວກເຮົາ... -ກູສະມາ ເປ ໂຕຣວິດຄັດຄ້ານຄ່ອຍໆ.

ພວກເດັກນ້ອຍຫົວທັງຕີນມືໃຫ້ ກາລີນາ ອີວາໂນວິດ ເຊິ່ງ ບັດນີ້ໃນໂຫໂຫໂສເກີງທີ່ສຸດແລ້ວ.

-ສະພາບາຍກອງຕ້ອງພິຈາລະນາເບິ່ງບັນຫານີ້ ຢ່າງລະອຽດ. ເບິ່ງເອົາ, ໃນນາມວ່າ ພວກເຂົາມາຫາພວກເຮົາ, ພວກເຮົາຕ້ອງ ຄຶດຄັກໆກ່ອນວ່າ ຈະສົມຄວນຍົກລູກສາວ ໂອເລຍ ໃຫ້ທ້າວຂີ້ທຸກ ຄື ນິໂກລາຍເຢັງໂກ ຜູ້ໄດ້ຍັດແຕ່ມັນຝະລັ່ງໃສ່ຫົວຜັກບົ່ວ ຄືນນີ້ ຫລືບໍ່, ແລະ ແທນທີ່ມັນຊິໄດ້ກ່ຽວເຂົ້າບະເລ ມັນຊໍ້າໄດ້ປູກແຕ່ ຫຍ້າແພດ, ບັກພາກ. ແຕ່ພວກເຮົາເປັນຄົນຮັ່ງຄົນມີແລ້ວ ພວກ ເຮົາຕ້ອງຕັດສິນໃຈຢ່າງລະມັດລະວັງ.

ຄວາມພິດພື້ນຂອງສະພາບາຍກອງ ແລະ ຂອງຜູ້ເຂົ້າຮ່ວມທັງ

ຫມົດ ຈຶ່ງບອກວ່າບໍ່ມີບັນຫາໃດທີ່ຈະຕ້ອງແກ້ໄຂແລ້ວ. ເຂົາເອົາເກົ້າ ແກ່ຂໍສາວອອກໄປຄາວຫນຶ່ງ ແລະ ສະພານາຍກອງກໍເລີ່ມສົນທະ ນາກັນວ່າ ຄວນຈະເອົາຫຍັງເປັນສິນສົມລົດໃຫ້ ໂອເລຍ.

ຍ້ອນເຈັບໃຈນຳການກົກກຽງຫວ່າງກີ້ນີ້ ພວກເດັກນ້ອຍຈຶ່ງຕົກ ລົງໃຫ້ສິນສົມລົດຂະຫນາດຫນັກແກ່ ໂອເລຍ ຕາມທີ່ພວກເຂົາ ເຫັນສົມຄວນ. ພວກເຮົາເຊີນໃຫ້ ແຊເຣີມາຮ່ວມນຳ ຍ້ອນຢ້ານ ວ່າລາວຈະຄັດຄ້ານຄວາມໃຈກວ້າງໃນຄັ້ງນີ້ ແຕ່ ແຊເຣີ ບໍ່ລັ່ງເລ ແມ່ນແຕ່ນາທີດຽວ, ລາວເວົ້າຢ່າງຫນັກແຫນ້ນວ່າ:

- ກົກຕ້ອງແລ້ວ! ເຖິງແມ່ນວ່າມັນຈະຫນັກຫນ່ວງສຳລັບພວກ ເຮົາກໍຕາມ, ໂອເລຍ ຕ້ອງມີສິນສົມລົດຫລາຍພຽງພໍ, ຫລາຍກວ່າ ຜູ້ສາວທຸກຄົນໃນຂົງເຂດນີ້ພຸ້ນລະ. ຕ້ອງເຮັດໃຫ້ພວກກູລັກຫມູ່ນີ້ ກອຍຫລັງເຂົ້າບ່ອນເກົ່າພວກເຂົາ.

ຈັ່ງຊັ້ນການກຳນົດສິນສົມລົດຈຶ່ງມີສຽງຄັດຄ້ານແຕ່ໃນທຳນອງນີ້:

- ແມ່ນໂຕເວົ້າຫຍັງເກາະ... ມ້ານ້ອຍວ່າຕີ... ຢ່າ...ຢ່າ, ເອົາ ມ້າໃຫຍ່ໃຫ້ດີກວ່າ.

ຈົ່ວໂມງຫນຶ່ງຜ່ານໄປ ພວກເກົ້າແກ່ເຊື້ອພັກຜ່ອນກິນອາກາດ ສົດ ກໍກັກເຊີນເຂົ້າເມືອໃນສະພາ ແລ້ວ ໂກເລຍ ແວກຊະເນັບ ຈຶ່ງຢືນຂຶ້ນຕໍ່ຫນ້າໂຕະ ປະກາດໂດຍເນັ້ນສຽງແບບຄົນປາກພ້ຳແດ່ ເພື່ອອ່ານຄຳປາໄສສຳຄັນບົດນີ້:

- ສະພານາຍກອງຕັດສິນຕົກລົງໃຈດັ່ງຕໍ່ໄປນີ້: ໃຫ້ ໂອເລຍ ແຕ່ງດອງກັບປາແວນ, ປາແວນຕ້ອງມີເຮືອນເປັນຂອງຕົນເອງ ແລະ ພໍ່ຂອງລາວກໍຕ້ອງໃຫ້ສິ່ງທີ່ລາວສາມາດໃຫ້ໄດ້. ພິທີແຕ່ງດອງແບບ

ພິນລະເຮືອນບໍ່ມີສັງຄະລາດ. ເຮັດພິທີມື້ທຳອິດຢູ່ບ້ານພວກເຮົາ, ຕໍ່ໄປພວກເຈົ້າຈະເຮັດແນວໃດກໍເຮັດ. ພວກເຮົາໃຫ້ສິນບັດແກ່ໂອເລຍ ເພື່ອສ້າງຄອບຄົວໃຫມ່ດັ່ງນີ້:

- ງົວແມ່ ໂຕຫນຶ່ງກັບງົວນ້ອຍລູກມັນ, ພັນຊິມເມັນຕານ.
- ມ້າແມ່ ແລະ ລູກ ຄູ່ຫນຶ່ງ.
- ແກະແມ່ຫ້າໂຕ.
- ຫມູພັນອັງກິດຫນຶ່ງໂຕ...

ໂກເລຍ ມີໂອກາດໄດ້ຄໍແຫບກ່ອນໄລ່ບັນຊີສິນສົມລົດອັນຍາວຢຽດຂອງ ໂອເລຍ ສຸດ, ໃນນັ້ນມີທັງເຄື່ອງມືກະເສດ, ເຄື່ອງຫວ່ານແນວປູກ, ອາຫານສັດ, ເຄື່ອງນຸ່ງ, ຊຸດຜ້າປູບ່ອນປອກຫມອນ, ເຄື່ອງໂຕະຕັ່ງ ຈົນກະທັ່ງຮອດຈັກຫຍິບ. ເຂົາສຸດລົງແບບນີ້:

-ພວກເຮົາຈະຊ່ອຍເຫລືອ ໂອເລຍ ທຸກໆຄັ້ງເມື່ອເຫັນສົມຄວນ ແລະ ພວກເຂົາກໍ່ເຊັ່ນດຽວກັນ, ໃນກໍລະນີຈຳເປັນກໍຕ້ອງຊ່ອຍເຫລືອປິຄົມໂດຍບໍ່ມີຄຳປະຕິເສດໃດໆ. ປາແວນເອງກໍໄດ້ຊື່ວ່າເປັນຊາວປິຄົມຄົນຫນຶ່ງ.

ເກົ້າແກ່ຂໍສາວພັບຕາດ້ວຍທ່າຕື່ນເຕັ້ນຫວາດກົວ ບໍ່ຕ່າງຫຍັງກັບຄົນທີ່ກຳລັງກຽມຕົວຮັບສິນເຂົ້າເປັນຄົດຕະສາສະນິກກະຊົນ ຂໍ້ສຸດທ້າຍ. ໂດຍບໍ່ຫົວຊາວ່າຕົນເອງເຮັດຖືກຕ້ອງຕາມກົດລະບຽບຫລືບໍ່, ພວກເດັກນ້ອຍແມ່ຍິງແລ່ນປຸ້ມເຂົ້າມາທັງຫົວເພື່ອເອົາຜ້າເຊັດມືແສ່ວລາຍງາມ ມາມັດແອວເກົ້າແກ່ຂໍສາວ, ສ່ວນພວກເດັກນ້ອຍຜູ້ຊາຍອັນມີ ໂຕສະກາ ນຳຫນ້າກໍ່ຍໍກາດເຂົ້າຈີ່ ແລະ

ກ້ອຍເກືອ ເຊິ່ງປົກດ້ວຍຜ້າເຊັດມືອີກຜືນຫນຶ່ງມາໃຫ້ພວກເຂົາ. ດ້ວຍຄວາມເກີເຂີນປົນອາຍ ຄົນທັງສອງຮັບເອົາເຂົ້າຈີ່ແລ້ວກໍເລີຍບໍ່ຮູ້ວ່າຈະຍັດໄວ້ໃສ. ໂຕສະກາ ດຶງເອົາພາກາດອອກຈາກກ້ອງຂີ້ແຮ້ຂອງ ກູສະມາ ເປໂຕຣວິດ ທັງເວົ້າໃສ່ຫົວງວ່າ:

-ເອີ້... ອັນນີ້ສິ່ງຄືນສາ ບໍ່ສັ້ນຂ້ອຍຊິກືກຊ່າງໂມ້ແປ້ງຈັດການ... ກາດນີ້ເປັນຂອງເຂົາ...

ພວກເດັກນ້ອຍແມ່ຍິງເອົາຜ້າມາປູໂຕະ ແລ້ວເອົາແກ້ວເຫລົ້າແວງຫວານສາມແກ້ວ ແລະ ຈອກປະມານ ໑໕ ຫນ່ວຍມາຢາຍໃສ່, ກາລີນາ ອີວາໂນວິດ ຫຍິບເຫລົ້າຢາຍທຸກຄົນ ແລ້ວຍົກຈອກຂອງລາວຂຶ້ນເວົ້າວ່າ:

-ເອົາລະເຊີນດື່ມເພື່ອສຸຂະພາບຂອງ ໂອເລຍ, ຂໍໃຫ້ນາງຮູ້ຫນ້າທີ່ດີ ໆ.

-ຫນ້າທີ່ຕໍ່ໃຜ? ໂອຊິບ ອີວາໂນວິດ ຖາມຂຶ້ນ.

-ໃຜກໍຮູ້ແລ້ວ! ຫນ້າທີ່ຕໍ່ສະພານາຍກອງ ແລະ ອຳນາດໂຊວຽດທົ່ວໄປນັ້ນແລ້ວ.

ພວກເຮົາເອົາຈອກເຫລົ້າຕຳກັນແລ້ວດື່ມເຫລົ້າແວງ ໂດຍມີເຂົ້າຈີ່ໃສ່ໄສ້ອົ່ວກິນແກ້ມໄປນຳ.

ກູສະມາ ເປໂຕຣວິດ ກົ້ມຫົວລົງເພື່ອຂໍລາ:

-ຈັ່ງຊັ້ນແລ້ວ ຂໍຂອບໃຈຫລາຍໆ, ທຸກຢ່າງດີແລ້ວ, ບັດນີ້ພວກເຮົາຊິໄດ້ໄປຊົມເຊີຍ ປາແວນ ອີວາໂນວິດ ກັບ ເອັບໂດເກຍສະເຕປາໂນວາກ່ອນ.

-ເອົາໂລດແຫລ້ວ, ໂຕໄປຊົມເຊີຍພວກເຂົາໄດ້ເລີຍ! ກາລີນາ ອີວາໂນວິດ ບອກ.

ໂອຊີບ ອີວາໂນວິດ ຈັບມືກັບພວກເຮົາ:

-ເອີ້... ພວກເຈົ້າໂລດ... ພິລຶກສົມຄວນ, ຄັກຫລາຍ, ພວກເຮົາບໍ່ມີທາງສູ້ເລີຍ.

ບໍ່ຕ່າງຫຍັງກັບນັກຮຽນຊາວວັງ, ພວກເຂົາທັງອ່ອນນ້ອມຖ່ອມຕົນ ແລະ ອ່ອນຫວານ, ເກົ້າແກ່ຂໍສາວທັງສອງອອກຈາກຫ້ອງການເພື່ອເດີນທາງກັບຄືນໃນບ້ານ... ເມື່ອພວກເຮົາແນມຕິດຕາມເຂົາເຈົ້າໄປນັ້ນ ກາລີນາ ອີວາໂນວິດ ກໍຫລິ່ວຕາເຂົ້າແບບຄຶນຄຶດມ່ວນ, ບາດແລ້ວລາວຍຶກບ່າໄຫລ່ແບບບໍ່ດີໃຈ:

-ບໍ່, ເປັນໄປບໍ່ໄດ້ດອກ, ແມ່ນພວກເຂົາເປັນຫຍັງຈຶ່ງພາກັນມະລ້ອມມະກ້ອຍລາໄປແນວນີ້, ນຳພວກເຂົາຄືນມາໄວ, ເປໂຕຣບອກພວກເຂົາໄປຫາຂ້ອຍຢູ່ຫ້ອງພັກເນີ. ສ່ວນມຶງຫັ້ນ, ອານໂຕນ ກຽມກວຽນມ້າໄວ້ແລ້ວມາຮັບເອົາພວກເຂົາຢູ່ຫ້ອງກູເນີ.

ຊົ່ວໂມງຫນຶ່ງຕໍ່ມາ ພວກເດັກນ້ອຍກໍພາກັນເອົາເກົ້າແກ່ຂໍສາວຂຶ້ນໃສ່ກວຽນມ້າທັງຫົວອີກໆ, ຜ້າເຊັດມືຍັງມັດຄາແອວຢູ່ ແຕ່ບັດນີ້ສູນເສຍລັກສະນະພິເສດຂອງຜູ້ເປັນທູດພິເສດ ແລະ ໂດຍສະເພາະອາການເວົ້ານັ້ນຄຳຢ່າງລ່ຽນໄຫລນັ້ນໄປຫມົດແລ້ວ. ກູສະມາ ເປໂຕຣວິດ ນັ້ນບໍ່ລືມກ້ອນເຂົ້າຈີ່ເລີຍ, ລາວກອດມັນແຫນ້ນຢ່າງກະຫນອມແພງໃສ່ກັບເອິກຕະຫລອດເວລາ. ມ້າບັກນ້ອຍພາຍານເຫລັ້ມຫນັກທະຍານອອກສູ່ຫົນທາງປູດິນພີງຢ່າງງ່າຍດາຍ.

ກາລີນາ ອີວາໂນວິດກືນນ້ຳລາຍແຮງ ໆ:

-ພວກເຂົາຕັ້ງພາໂລເຮັດ, ພວກພາກເອີ້ຍ, ສິ່ງເກົ້າແກ່ຂີ້ຫຸກໆແບບນີ້ມາ.

_ແມ່ນໃຜ?

-ອ້າວກະ ກະໂຕເກົ້າ ນີໂກລາຍເຢັງໂກ ເອງນັ້ນລະ, ມັນຢາກບອກໃຫ້ຮູ້ວ່າ: ເຈົ້າສາວແນວໃດ ເກົ້າແກ່ກໍແນວນັ້ນ.

-ຊັ້ນຫວາ... ມັນແມ່ນເລື່ອງໃຫມ່ແລ້ວເນາະ, ຊີລັນຕີເວົ້າຂຶ້ນ, -ເລື່ອງມັນເປັນແນວນີ້ລະ, ຄັນແມ່ນເກົ້າແກ່ອື່ນ ເຂົາອາດຊິບໍ່ຕິກລິງກໍໄດ້ເດີ້ ບໍ່ມີສັງຄະລາດຄືວ່າຫັ້ນນະ, ແຕ່ວ່າສອງເກົ້ານີ້ຊ້ຳພັດບໍ່ຫົວຊາເລີຍ, ຊັ້ນພະສັງຄະລາດກະຄືວ່ານັ້ນລະ... ບໍ່ຄືຫມູ່ປານໃດເນາະ... ບໍ່ເດີ້! ແລ້ວເກົ້າຕາຍຍາກນັ້ນຊ້ຳບອກພວກເຂົາມາເດີ້ວ່າໃຫ້ເຮັດພິທີແຕ່ງດອງຢູ່ໂບດ ແຕ່ກ້າວ່າບໍ່ຕ້ອງການແນວນັ້ນເດ້ລະ..., ຊິໄປຕາຍທາງໃດກໍໄປຊາສັງຄະລາດຫັ້ນ... ນີ້ລະເລື່ອງມັນນະ.

ຕົກຮອດກາງເດືອນສິງຫາ ເພິ່ນຈຶ່ງກໍານົດວັນແຕ່ງດອງຂຶ້ນ, ມີຄະນະກຳມາທິການດຳເນີນງານຄັກແນ່, ມີການກະກຽມລາຍການສະແດງ, ມີແນວວິນວາຍຫລາຍອັນ ແລະ ລາຍຈ່າຍຫນັກຫນ່ວງຕື່ມ ເຮັດໃຫ້ ກາລີນາ ອີວາໂນວີດ ຮູ້ສຶກບໍ່ເບີກບານໃຈເທົ່າທີ່ຄວນ:

-ກ້າວ່າພວກເຮົາຕ້ອງຈັດແຕ່ງດອງ ໃຫ້ເດັກນ້ອຍແມ່ຍິງຫມົດທຸກຄົນແບບນີ້, ຂ້ອຍເກົ້າໆນີ້ກັບພວກເດັກນ້ອຍຜູ້ຊາຍ ກໍມີແຕ່ຊິໄປຫາຂໍທານຕາມແຄມທາງຫັ້ນນັ້ນແລ້ວ, ອານໂຕນ ເຊມີວໂນວິດເອີ້ຍ... ຊັ້ນບໍ່ມີທາງອອກແນວອື່ນດອກ...

ຕັ້ງແຕ່ເຊົ້າງມື້ວັນແຕ່ງດອງ, ນິຄົມມີນາຍຍາມຢັ່ງຢາຍອ້ອມລ້ອມໄວ້ຫມົດ, ພວກເຮົາຕ້ອງໃຊ້ເດັກນ້ອຍຕັ້ງສອງກອງ ເພື່ອເຮັດວຽກປ້ອງກັນ. ພວກເຮົາສົ່ງບັດເຊີນພິມໃຫ້ແກ່ແຂກ ໗໐ ຄົນເທົ່ານັ້ນ, ມັນມີເນື້ອໃນດັ່ງນີ້:

"ສະພານາຍກອງຂອງນິຄົມອອກແຮງງານ ມາກຊົມ ກັອກກີ ຂໍເຊີນທ່ານມາຮ່ວມພາອາຫານແລງ ແລະ ຊົມລາຍການສະແດງໃນຕອນແລງ ເນື່ອງໃນໂອກາດລ້ຽງສົ່ງ ໂອເລຍ ໂວໂຣໂນວາ ແລະ ສະຫລອງການແຕ່ງດອງຂອງນາງກັບສະຫາຍ ປ. ປ. ນິໂກລາຍເຢັງໂກ.

ສະພານາຍກອງ".

ເຖິງເວລາບ່າຍສອງໂມງ, ທຸກສິ່ງທຸກຢ່າງຢູ່ນິຄົມກໍຮຽບຮ້ອຍ. ໂຕະອາຫານວາງຢາຍຢູ່ໃນສວນອ້ອມນ້ຳພຸ. ການປະດັບປະດາເປັນຝີມືຂອງສະມາຊິກສະໂມສອນສິລະປິນຂອງ ຊີໂນວີ ອີວາໂນວິດ: ຢູ່ເທິງປາຍໄມ້ຫລາວລຳຮຽວທີ່ສຽບລ້ອມໂຮງອາຫານ, ທົ່ວທຸກບ່ອນທີ່ມີເດັກນ້ອຍພໍ່ຍື້ເຖິງຍາກ ແຕ່ຫາກບັດນີ້ສາຍຕາສາມາດແນມຊອດເຖິງຢ່າງງ່າຍດາຍນັ້ນ ມີພວງມະໄລສີຂຽວສົດກັກດ້ວຍຫນໍ່ຕົ້ນບູໂລ, ຢູ່ເທິງໂຕະຊໍ່ກຸຫລາບ "ລາຊີນີທີມະ" ຕັ້ງຕົວຢູ່ໃນແຈກັນຫລາຍຫນ່ວຍ.

ມາຮອດມື້ນີ້ຈຶ່ງເຫັນໄດ້ຢ່າງເຕັມຕາ ແລະ ຄັກແນ່ໃນໃຈວ່າ ນິຄົມໄດ້ເຕີບໃຫຍ່ຂະຫຍາຍຕົວພໍພຽງໃດ. ທາງຢ່າງອ້າວກວ້າງປູດ້ວຍດິນຊາຍໃນສວນອຸທິຍານບົ່ງເນັ້ນຄວາມສະຫງ່າອົງອາດ ຂອງຊານລະບຽງສາມຊັ້ນ, ຕົ້ນໄມ້ແຕ່ລະຕົ້ນ, ພຸ່ມດອກໄມ້ຫນາຕືບ,

ຂອບຫນານດອກໄມ້ແຕ່ລະຕອນ ທັງຫມົດນີ້ລ້ວນແຕ່ຖືກກວດກາ ຄືນທ່າມກາງຄວາມງຽບສະຫງັດຂອງລາຕີການ ແລະ ໂຮຍຮວາດ ດ້ວຍຍາດເຫື່ອແຮງງານຂອງພວກເດັກນ້ອຍກອງພິເສດ, ມີຄວາມ ງົດງາມຄືກັບຖືກປະດັບດ້ວຍຫີນແກ້ວປະເສີດ ທັງນີ້ຍ້ອນຄວາມ ເອົາໃຈໃສ່ ແລະ ຮັກແພງຢ່າງຈິງໃຈຕໍ່ຊີວິດສ່ວນໂຮມ. ບ່ອນຫລຸບ ແລະ ໂນນຕາມແຄມຝັ່ງຫ້ວຍກໍຖືກດັດແປງດ້ວຍນ້ຳມືອັນເຂັ້ມແຂງ ແຕ່ເຕັມໄປດ້ວຍຄວາມຮັກຢ່າງຈິງໃຈ, ຢູ່ຫັ້ນມີຂັ້ນໄດໄມ້ປະມານ ໑໐ ຂັ້ນ, ຢູ່ພຸ້ນມີຮາວຮົ້ວເຕ້ຍໆເຮັດດ້ວຍລຳຕົ້ນບູໂລ, ໄກອອກ ໄປອີກແມ່ນຫນານດອກໄມ້ຮູບສີ່ຫລ່ຽມສະເຫມີ, ທາງຍ່າງເສັ້ນ ນ້ອຍໆຄົດໂຄ້ງ ແລະ ແພລອຍຕິດຝັ່ງຫ້ວຍ, ທັງຫມົດນີ້ຫມາຍ ບອກອີກເທື່ອຫນຶ່ງວ່າ ມະນຸດເຮົາເຖິງຈະເປັນມະນຸດປະເພດ ຕີນເປືອຍເຊັ່ນນີ້ ກໍຍັງສະຫລຽວສະຫລາດກວ່າທຳມະຊາດຕັ້ງເທົ່າ ໃດເທື່ອ ແລະ ທັງສາມາດຄອບຄຸມມັນໄດ້. ຢູ່ໃນບໍລິເວນເດີ່ນ ກວ້າງໆຂອງພວກເຈົ້ານາຍຕີນເປົ່າເຫລົ່ານີ້, ບົນຮ່ອງຮອຍບາດແຜ ເລິກລ້ຳທີ່ຖືກປະໄວ້ໃຫ້ເປັນມໍລະດົກແກ່ເຂົາ ຜູ້ບໍ່ຮັບມູນມັງຂອງ ມະນຸດບູຮານ, ໄດ້ພົກປົ່ນທຸກຢ່າງດ້ວຍຝາມືຂອງຜູ້ມີສິລະປະໃນ ຕົວ. ຫວ່າງລະດູໃບໄມ້ຫລົ່ນປີກາຍນີ້ ພວກເດັກນ້ອຍໄດ້ປູກກຸ ຫລາບພຸ່ມຮອດ ໔໐໐ ກໍ, ແລະ ບັດນີ້ບໍ່ຈັກດອກດາວເຮືອງອິນ ເດຍ, ດອກກ້ານກ່ອງ, ດອກເຊຣານຽມສີແດງເຂັ້ມ, ດອກຄັນ ເຕີບຸຣີສີແຫລ້ ແລະດອກໄມ້ອື່ນໆອີກບໍ່ຈັກເທົ່າໃດຊະນິດ ທີ່ບໍ່ມີໃຜ ຮູ້ຊື່ຕັ້ງທໍໃດ ພວມບານແຂ່ງກັນເຕັມສວນ. ຫີນທາງແທ້ໆກໍຖືກຂີດ ຫມາຍໄວ້ແລ້ວ, ເປັນສິ່ງແບ່ງເຂດແດນຂອງອາຄານແຕ່ລະຫລັງ

ແລະ ເຕົ້າໂຮມບາງບ່ອນໃສ່ກັນ, ແຜ່ນດິນຫຍ້າແລບແນວອ້ງ ກົດຮູບສີ່ຫລ່ຽມ ແລະ ສາມຫລ່ຽມຕາມບ່ອນຫວ່າງເຮັດໃຫ້ຫມ້ອງ ເຫລົ່ານີ້ສົດໃສຫນຸ່ມຂຶ້ນ, ໄນບາງບ່ອນກໍມີແປ້ນມ້າຫາສີຂຽວຕັ້ງຢູ່.

ບັດນີ້ຊີວິດຢູ່ໃນນິຄົມຈີບງາມ ແລະ ເປັນລະບຽບດີແລ້ວ, ເມື່ອເຫັນສິ່ງເຫລົ່ານີ້ແລ້ວ ຂ້າພະເຈົ້າກໍຮູ້ສຶກພາກພູມໃຈ ທະນົງຕົວທີ່ຕົນເອງໄດ້ມີສ່ວນ ໃນການໃຫ້ຄວາມສວຍງາມແກ່ແຜ່ນດິນ ແຕ່ຂ້າພະເຈົ້າຍັງມີອາລົມສູນຫອນແບບສະຫລອກກອກ ຂອງຕົນເອງຢູ່, ບໍ່ວ່າສວນດອກໄມ້, ບໍ່ວ່າເສັ້ນທາງຍ່າງນ້ອຍໆ ແລະ ແຈເງົາມືດໆບ່ອນໃດກໍບໍ່ສາມາດບິດເບືອນສາຍຕາຂອງຂ້າພະເຈົ້າ ອອກຈາກພວກເດັກນ້ອຍໄນຊຸດສົ້ງຂາສັ້ນສີຟ້າ ແລະ ເສື້ອສີຂາວໄດ້ດອກ. ບັດນີ້ພວກເຂົາເຫລົ່ານີ້ພວມແລ່ນໄປມາເຄື່ອນໄຫວຢ່າງຄ່ຽມຄົມຢູ່ທ່າມກາງແຂກ, ສົນລະວົນຢູ່ໃກ້ໆໂຕະອາຫານ ຫລືໂຕແຂງປະຈໍາຢູ່ບ່ອນຍາມ ແລະ ພະຍາຍາມຍຸດຕິຄົນໃຈລອຍຫລາຍຮ້ອຍຄົນ ເຊິ່ງພິທີແຕ່ງດອງແບບບໍ່ເຄີຍມີມາກ່ອນແນວນີ້ດຶງດູດເຂົ້າມາ: ນັ້ນແມ່ນຊາວນິຄົມ ກ້ອກກີ! ຮູບຮ່າງຂອງພວກເຂົາໄດ້ຫລາບໄດ້ລາຍພໍດີ, ຄ່ອງໄວ ແລະ ກົດກ້າມ, ສຸຂະພາບດີບົ່ງບອກວ່າບໍ່ຕ້ອງການວິຊາການແພດ ແລະ ຢຸກຢາໃດໆ, ພີສືບແດງເຮືອຢ່າງມີຊີວິດຊີວາ. ໃບຫນ້າຢ່າງນີ້ຫລໍ່ຫລອມເກີດຂຶ້ນຢູ່ໃນນິຄົມ, ຕອນພວກເຂົາມາຈາກຊີວິດພະເນຈອນແຄມກະຫນົນ ພວກເຂົາບໍ່ເປັນເຊັ່ນນີ້ດອກ.

ແຕ່ລະຄົນມີເສັ້ນທາງຊີວິດຂອງຕົນເອງແລ້ວ ແລະ ນິຄົມກັອກກີກໍມີເສັ້ນທາງຊີວິດຂອງມັນຄືກັນ. ຂ້າພະເຈົ້າ ຮູ້ສຶກເກິງຕອນຕົ້ນເສັ້ນທາງແຍກຂອງຊີວິດເຫລົ່ານີ້ແລ້ວ ແຕ່ເມກຫມອກມຸມມົວຂ້າງຫນ້ານັ້ນ ຂ້າພະເຈົ້າບໍ່ສາມາດຈຳແນກໄດ້ຢ່າງແຈ່ມແຈ້ງວ່າ ບາດແຮກຕົ້ນ, ທິດທາງເດີນ ແລະ ບັ້ນສຸດທ້າຍຂອງມັນຈະເປັນແນວໃດ. ຢູ່ໃນເມກຫມອກເຫລົ່ານີ້ ຍັງມີຫລາຍພາກສ່ວນຢູ່ທີ່ມະນຸດເຮົາຍັງບໍ່ສາມາດພິຊິດໄດ້ທ່າແຜນການລະບົບຄະນິດສາດຍັງບໍ່ໄດ້ຕັ້ງຊື່ໃຫ້ມັນເທື່ອ. ກ້າຫາກວ່າບາດກ້າວມຸ່ງສູ່ອົງປະກອບເຫລົ່ານີ້ຂອງພວກເຮົາ ມີສູນທອນທັດຢູ່ໃນຕົວແລ້ວ, ຄວາມງາມອັນສູນທອນຂອງອຸທິຍານ ແລະ ສວນດອກໄມ້ນັ້ນ ກໍໄດ້ເຊົາເຮັດໃຫ້ຂ້າພະເຈົ້າຕື່ນເຕັ້ນແລ້ວ.

ຍິ່ງໃນຂະນະນີ້ ມາເຣຍ ກິງດຣາແຕັບນາ ຫຍັບເຂົ້າໃກ້ຂ້າພະເຈົ້າແລ້ວກາມ, ຂ້າພະເຈົ້າຍິ່ງຕື່ນເຕັ້ນຕໍ່ພາບອັນສູນທອນນີ້ຫນ້ອຍລົງ.

-ອ້າວ... ແມ່ນເຈົ້າເຮັດຫຍັງຢູ່ແຈນີ້ລະ ຍາພໍ່ເກົ້າ, ເຫງົາເສົ້າຢູ່ຜູ້ດຽວຊັ້ນຫວາ?

-ແລ້ວຊິບໍ່ໃຫ້ເສົ້າແນວໃດ ໃນເມື່ອໃຜໆກໍປະຖິ້ມຂ້ອຍຫມົດທັງນັ້ນ ນັບທັງເຈົ້າເອງນຳ?

-ຂ້ອຍຈະດີໃຈຫລາຍທີ່ໄດ້ອອຍເຈົ້າ ແລ້ວຂ້ອຍກໍຕັ້ງນຳຫາເຈົ້າແທ້ງໃດນີ້ ເພາະວ່າຂ້ອຍບໍ່ຢາກເຫັນຂອງຂວັນແຕ່ງດອງຂອງເຈົ້າສາວ ໂດຍບໍ່ມີເຈົ້າຢູ່ນຳ, ໄປ... ໄປເທາະ.

ຊັບສິນບັດທັງຫມົດຂອງ ໂອເລຍ ຖືກຈັດໄວ້ໃນຫ້ອງຮຽນຂອງ

ຫ້ອງ. ແຂກຄົນພາກັນອັ່ງອໍແຫຍ່ເບິ່ງສິ່ງຂອງເຫລົ່ານີ້. ພວກແມ່ຍ້າວ ແມ່ເຮືອນກໍດີສົນກໍຄວາມເມໂຫ ແລະ ຄວາມປາດຖະຫນາໂລບມາກ, ກໍ້ງຕາເບິ່ງຂ້າພະເຈົ້າດ້ວຍຄວາມສົນໃຈແບບບໍ່ພໍໃຈ. ພວກເຂົາເບິ່ງຂ້າມລູກສາວຂອງພວກເຮົາ ແລະ ໄດ້ຈັດການແຕ່ງດອງລູກຊາຍໃຫ້ເອົາກັບລູກສາວຄຸ້ມກຸງນາ ແຕ່ມັນຊ້ຳປາກົດວ່າພາກສ່ວນທີ່ຮັ່ງມີກວ່າຫມູ່ຢູ່ພີ້, ຢູ່ກອງຮູດ້ງຂອງພວກເຂົາເອງ. ຂ້າພະເຈົ້າຂໍຍອມຮັບວ່າພວກເຂົາມີສິດພຽງພໍ ທີ່ຈະສະແດງຄວາມໂກດແຄ້ນອອກມາ.

ໂບໂກວາ ເວົ້າວ່າ:

-ຕາຍ, ແລ້ວເຈົ້າຊິເຮັດແນວໃດລະ ກໍ່າວ່າມີເກົ້າແກ່ມາສູ່ຂໍລູກສາວເຈົ້າພ້ອມກັນເປັນຫມູ່ ໆ?

ຂ້າພະເຈົ້າຕອບນາງໄປວ່າ:

-ຂ້ອຍປອດໄພຢູ່ດອກ, ເດັກນ້ອຍແມ່ຍິງຂອງພວກເຮົາ ບໍ່ຕົກລົງແຕ່ງດອງງ່າຍດອກ.

ເດັກນ້ອຍຜູ້ຊາຍຄົນຫນຶ່ງ ແລ່ນຫນ້າລ່າຕາຕາຍມາ:

-ພວກເຂົາມາແຂ່ງມ້າແລ້ວ!

ຢູ່ໃນເດີ່ນມີສຽງເປົ່າແກສັນຍານໂຮມຊຸມນຸມດັງກ້ອງຂຶ້ນ ພວກເດັກນ້ອຍຈັດກັນເປັນແຖວ ຕັ້ງແຕ່ປະຕູເຂົ້າພ້ອມດ້ວຍພືນທຸງປິວສະບັດນຳຫນ້າ ແລະ ຂະບວນກອງພາກຫລັງໂຮງສີພຸ້ນ ລົດມ້າທຽມຄູ່ຂອງພວກເຮົາໂປໂລອອກມາໃຫ້ເຫັນແລ້ວ. ທັງຫມົດປະດາດ້ວຍຜ້າໂບສີແດງ. ພວກເຮົາຂ່ຳນັບຮັບຕ້ອນຄູ່ບ່າວສາວ. ອານໂຕນດຶງບັງຫຽນມ້າ ແລ້ວ ໂອເລຍ ກໍໂດດລົງມາກອດຄໍຂ້າພະເຈົ້າດ້ວຍ

ຄວາມດີໃຈ ນາງທັງໄຫ້ດ້ວຍຄວາມຕື່ນເຕັ້ນ ແລະ ເວົ້າກັບຂ້າພະເຈົ້າວ່າ:

-ຢ່າປະຂ້ອຍໄວ້ຜູ້ດຽວເລີຍ, ຈັ່ງແມ່ນຂ້ອຍຢ້ານ.

ພວກເຮົາຈັດໃຫ້ມີການໂຮມນຸມນ້ອຍໆອັນໜຶ່ງ. ມາເຣຍກົງດຣາແຕັບນາ ສ້າງຄວາມປະທັບໃຈ້ແກ່ຂ້າພະເຈົ້າຢ່າງບໍ່ຄາດຝັນ ໂດຍການນຳເອົາຂອງຂວັນຈາກພະແນກສຶກສາປະຊາຊົນ ມາມອບໃຫ້ຄູ່ແຕ່ງດອງໃໝ່ ນັ້ນຄືປຶ້ມວິຊາການກ່ຽວກັບກະສິກຳຊຸດໜຶ່ງ ເຕັມໆ ຈົນໃຫ້ເດັກນ້ອຍສອງຄົນຫາມໃສ່ເປຄົນເຈັບຕິດຕາມມາທາງຫລັງ.

ກັດຈາກການໂຮມຊຸມນຸມ ພວກເຮົາແຕ່ງໃຫ້ຄູ່ສົມລົດໃໝ່ໄປຍືນຢູ່ກອງຄົນທຸງ ແລ້ວພວກເຮົາກໍຢ່າງຕິດຕາມພວກເຂົາໄປຢ່າງເປັນລະບຽບ ຈົນຮອດໂຕະ ຢູ່ເບື້ອງຫລັງໂຕະກຽດຕິຍົດສຳລັບພວກເຂົາໂດຍສະເພາະນັ້ນ ນາຍເວນຮັກສາທຸງໄດ້ມາຍືນຍາມຢູ່ນຳ. ເວນປະຈຳວັນຄົນໜຶ່ງຈະເປັນຜູ້ມາປ່ຽນພຽນ. ເດັກນ້ອຍຜູ້ຊາຍໃນຊຸດເສື້ອຂາວແຂນຍາວ ຈຳນວນ ໔໐ ຄົນ ເລີ່ມຍົກຍໍອາຫານມາບໍລິການ. ກອງພິເສດຂອງ ດາຣາແມັດ ນັ້ນໃຊ້ແສງຕານັກສຳຫລວດກວດກາເບິ່ງຮູບຊົງກົງສົ້ງກົງເສື້ອຂອງແຂກຮັບເຊີນ ຢ່າງລະວັງ ແລະ ໄດ້ເອົາແກ້ວເຫລົ້າໂວດກາເກື່ອນໄປກົ້ມລົງນ້ຳຫ້ວຍໂກໂລມາກມາແລ້ວຫລາຍແກ້ວຢ່າງມິດໆ, ພວກເຂົາຍຶດແກ້ວເຫລົ້າເຫລົ່ານັ້ນມາໄດ້ດ້ວຍຄວາມຄ່ອງແຄ້ວມີໄຫວພິກ ພໍປານນັກຫລິ້ນກົນແລະດ້ວຍມາລະຍາດອັນດີຂອງຜູ້ເປັນເຈົ້າພາບ.

ຂ້າພະເຈົ້ານັ່ງໃກ້ກັບຄູ່ແຕ່ງດອງໃໝ່, ອີກເບື້ອງໜຶ່ງແມ່ນ

ປາແວນ ອີວາໂນວິດ ແລະ ເອັບໂດເກຍ ສະເຕປາໂນວາ. ປາແວນ ອີວາໂນວິດ ເປັນຄົນລັກສະນະເຂັ້ມງວດ, ມີເຄົາຍາວແບບນັກບຸນ ນິໂກລາຍ ນັກອອກແຮງງານວິເສດ, ບັດນີ້ລາວກຳລັງຫັນໃຈຢ່າງ ຫນັກຫນ່ວງ ບາງທີອາດຈະເປັນຍ້ອນເຫັນວ່າ ບັດນີ້ລູກຊາຍຂອງ ລາວເປັນອິດສະລະແລ້ວ ຫລືອາດເປັນຍ້ອນຄວາມຮູ້ສຶກເສົ້າງຽບ ເຫງົາອັນເກີດຈາກການເຫັນແກ້ວເບຍຢູ່ຕໍ່ຫນ້າກໍເປັນໄດ້ ເພາະ ວ່າ ຕາຣາແນັດ ຫາກໍດຶງເອົາແກ້ວເຫລົ້າໂວດກາລາວໄປ.

ມື້ນີ້ພວກເດັກນ້ອຍມີຄົມດີວິເສດທີ່ສຸດ ແລະ ຂ້າພະເຈົ້າກໍ ແຮງຊື່ນຊົມພວກເຂົາຢ່າງອື່ມບໍ່ເປັນ: ພວກເຂົາມີຊີວິດຊີວາ ວ່ອງ ໄວ ຍິ້ມແຍ້ມຕ້ອນຮັບແຂກແຝງລັກສະນະເຍາະເຍີ້ຍສຽດສີຈັກ ຫນ້ອຍ. ຢູ່ສົ້ນໂຕະເບື້ອງຫນຶ່ງ, ສະມາຊິກກອງທີ ໑໑ ຍັງໄດ້ ຊວນແຂກຈຳນວນ ໕ ຄົນໂອ້ລົມນຳ ແບບຊວນພິດແດ່ ຢ່າງຍືດ ຍາວ. ຂ້າພະເຈົ້າຮູ້ສຶກກັງວົນແດ່ ຢ້ານວ່າ ຄວາມເວົ້າຂອງພວກ ເຂົາຈະເປີດເຜີຍໂພດໄປ. ຂ້າພະເຈົ້າຫຍັບເຂົ້າເບິ່ງ ເຊລາປູຕິນ ຜູ້ເຊິ່ງຮອດດຽວນີ້ ຍັງຮັກສາສຳນຽງສຽງຫອງກ້ອງໄວ້ຢູ່ນັ້ນ ພວມ ຫຍິ້ນເບຍໃຫ້ ໂກເຊຍ ແລະ ເວົ້າວ່າ:

-ພະສົງຄະລາດທຳພິທີແຕ່ງດອງໃຫ້ພວກເຈົ້າ ແລ້ວພວກເຈົ້າ ຊໍ້າບໍ່ເຫລື້ອມບໍ່ໃສຊໍ້າ ເຫັນບໍ່.

-ຊັ້ນພວກເຮົາຊິຈັດພິທີແຕ່ງດອງໃຫ້ເຈົ້າໃຫມ່ເອົາບໍ່? ໂຕສະ ກາ ສະເຫນີຂຶ້ນ.

ໂກເຊຍ ຍິ້ມ:

-ໂອ້ຍ ຫລ້າເອີຍ ມັນຫລ້າມັນສວຍໂພດແລ້ວລະ, ລາວຍົກ

ມືຈ້ຳໄຂ່ວຕີນກາໃສ່ຫນ້າເອີກ ແລ້ວຍົກຈອກເບຍຂຶ້ນດື່ມ, ໂຕສະກາ ທັວອັກໆ:

-ເຈົ້າຊິເຈັບທ້ອງແລ້ວ...

-ພະເຍຊູເຈົ້າ... ຍ້ອນຫຍັງລະ?

-ຈັ່ນເປັນຫຍັງເຈົ້າຈິ່ງໄຫວ້ລະ?

ຢູ່ຂ້າງໆມີໄຫບ້ານຫນວດຫຍຸ້ງຄົນຫນຶ່ງນັ່ງຢູ່ນຳ, ຫນວດຂອງລາວເປັນສີເຫລືອງຄືເຟືອງແຫ້ງ, ລາວເປັນແຂກຮັບເຊີນຄົນຫນຶ່ງຂອງ ປາແວນ ອີວາໂນວິດ, ເປັນຄັ້ງທຳອິດທີ່ລາວໄດ້ມາຍັງນິຄົມຈັ່ງຊັ້ນທຸກຢ່າງຈິ່ງເປັນຕາຕື່ນເຕັ້ນໄປຫມົດ.

-ສູ ພວກເດັກນ້ອຍ ແມ່ນແທ້ຫວະ ທີ່ພວກສູເປັນເຈົ້າຂອງບ່ອນນີ້?

-ຈັ່ນເຈົ້າວ່າແມ່ນໃຜຊັ້ນ? ລູຮາ ກາມຄືນ.

-ແຕ່ການປູກຝັງສຳລັບພວກສູ ມີປະໂຫຍດຫຍັງ?

ໂຕສະກາ ຫັນໂຕມາປະເຊີນຫນ້າກັບລາວຢ່າງເຕັມຕົວ:

-ເຈົ້າເວົ້າວ່າເຈົ້າບໍ່ຮູ້ວ່າ ມັນມີປະໂຫຍດຫຍັງຊັ້ນຫວາ? ຄັນບໍ່ເຮັດແນວນີ້ ພວກເຮົາກໍມີແຕ່ຊິໄດ້ໄປເປັນບ່າວນາຫັ້ນຕີ ແມ່ນບໍ່ລະ?

-ແລ້ວຕໍ່ໄປເດ້ ໂຕຊິເປັນຫຍັງລະ?

-ໂອ້ຍໂຍ! ໂຕສະກາ ເວົ້າທັງຍົກຕ່ອນຊີ້ນຍັດໄສ້ຂຶ້ນແກວ່ງສູງໆ, -ຂ້ອຍຊິເປັນວິສະວະກອນ, ອານໂຕນ ເຊມີວໂນວິດ ວ່າໄວ້ແລ້ວ ສ່ວນເຊລາປູຕິນ ຫມໍຊິເປັນນັກບິນ.

ມັນທັງເວົ້າທັງແນມເບິ່ງສ່ຽວ ເຊລາປູຕິນ ດ້ວຍທ່າທາງເຍີ້ຍໆ

ແບບໜຶ່ງ ເພາະວ່າຄວາມສັດທາແກ່ກໍາຕໍ່ອາຊີບນັກບິນຂອງທ້າວນີ້ຍັງບໍ່ທັນເປັນທີ່ແຜ່ຂະຫຍາຍຢູ່ໃນນິຄົມເລີຍ, ເຊລາປູຕິນ ກັດແຂ້ວເວົ້າຢ່າງເຂັ້ມແຂງວ່າ:

- ເອີ້... ເອີ້... ຂ້ອຍຊິເປັນນັກບິນ.

- ແຕ່ວ່າ... ເອີ້ ແລ້ວໃນໝູ່ພວກເຈົ້ານີ້ ບໍ່ມີໃຜຢາກເປັນຊາວນາແດ່ຫວະ?

- ເປັນຫຍັງຊິບໍ່ມີ? ກໍມີລະບໍ້ ພຽງແຕ່ວ່າພວກເຮົາບໍ່ເປັນຊາວນາແບບເຈົ້າດອກ, ໂຕສະກາ ເວົ້າແລ້ວລັກເສືອດຕາເບິ່ງຄູ່ສົນທະນາ.

- ໂອ່... ວ່າຈັ່ງຊີ້ສະ! ແລ້ວເຮັດແນວໃດລະ, ຊິໃຫ້ເຂົ້າໃຈແນວໃດ ອັນວ່າບໍ່ຄືພວກເຮົາຫັ້ນນ່າ?

- ໂຢ້ວ ກໍເປັນແບບຕ່າງຫັ້ນແລ້ວ, ພວກເຮົາຊິມີລົດໄຖ, ພວກເຈົ້າເຄີຍເຫັນແລ້ວເບາະ ລົດໄຖນະ?

- ບໍ່... ຍັງບໍ່ເຄີຍມີໂອກາດເຫັນເທື່ອ.

- ພວກເຮົາເຄີຍເຫັນແລ້ວ..., ພວກເຮົາເຫັນຢູ່ນິຄົມ, ມື້ລືງຕະຫລາດນັດຕອນພວກເຮົາເອົາໝູນ້ອຍໄປຫັ້ນ, ຂະເຈົ້າມີລົດໄຖຄັນໜຶ່ງ... ໂອ້ຍ ລົດເຫລັກຄັນບັກໃຫຍ່... ພໍປານວ່າ...

ຕະຫລອດແຖວຍາວທີ່ແຂກນັ່ງນັ້ນ ກອງຕ່າງໆຂອງເດັກນ້ອຍໄປຈອດສັບຫວ່າງຢ່າງເຂັ້ມແຂງ ຂ້າພະເຈົ້າບໍ່ຈໍາເປັນຕ້ອງຮູ້ວ່າແກ່ນກາງຂອງແຕ່ລະກອງຢູ່ບ່ອນໃດ ແຕ່ຮູ້ໄດ້ຢ່າງງ່າຍດາຍຈາກສຽງອ່າວດັງກວ່າໝູ່ຂອງມັນ. ແມ່ນກອງທີ ລ ທີ່ແຈ່ມໃສເບີກບານມີຊີວິດຊີວາກວ່າໝູ່ ຍ້ອນ ລາປິດ, ທັງພວກເດັກນ້ອຍ ທັງແຂກ

ພາກັນຫິວຈິນເຈັບທ້ອງຢູ່ອ້ອມໂຕະມັນ. ມື້ນີ້ ລາປິດ ກັບສ່ຽວ ຕາຣາແບ້ດ ຂອງຫມໍຕິກລົງກັນວ່າ ຈະເຮັດເສັ້ນພວກບຸກຄົນສຳຄັນຫລາຍຄົນທີ່ເຮັດວຽກຢູ່ໂຮງສີ ແລະ ນັ່ງປົນຢູ່ກັບເດັກນ້ອຍກອງທີ ລ ຕາມລຳດັບຄວາມສຳຄັນຂອງພວກເຂົາ. ນັ່ງຢູ່ພຸ້ນແມ່ນຊ່າງໂມ້, ເປັນຊາຍຮ່າງໃຫຍ່ມີຂົນ, ນາຍບັນຊີ ຊາຍຈ່ອຍພອມດັງແຫລມ, ຊ່າງຈັກປະຈຳໂຮງສີ ເຊິ່ງເປັນຄົນນອບນ້ອມກ່ອມຕົນ. ຜ່ານມາ ຕາຣາແບ້ດໄດ້ໃຊ້ວິທີດຶງຫລອຍ ເຊິ່ງເປັນເກມຫລິ້ນງ່າຍໆຂອງຫມໍ ຢ່າງຫນຶ່ງເພື່ອກຶກເອົາແກ້ວເຫລົ້າ ໂວດກາ ອອກຈາກກົງເສື້ອຂອງຊ່າງໂມ້ແລ້ວເອົານ້ຳທ່າໂກໂລມາກລ້າມາໃສ່ແທນໄວ້.

ຢູ່ໂຕະອາຫານ, ຊ່າງໂມ້ກັບນາຍບັນຊີນັ່ງແຊ່ຢູ່ດົນຮູ້ສຶກອຶດອັດ ຍ້ອນແສງຕາສອດແນມຂອງເດັກນ້ອຍໃນກອງພິເສດຂອງ ຕາຣາແບ້ດແຕ່ ລາປິດ ຫລິ່ວຕາໃຫ້ພວກເຂົາບາດຫນຶ່ງ ແລ້ວບອກຢ່າງຫມັ້ນໃຈວ່າ:

-ພວກເຈົ້າເປັນແຂກ, ເຊີນຕາມສະບາຍ, ຂ້ອຍຊິຈັດການເອງ.

ຫມໍຄວາດຶງຂໍ ຕາຣາແບ້ດ ທີ່ປ່ອນຫິວມາໃກ້ໆ ແລ້ວພວກເຂົາທັງສອງກໍກົ້ມລົງຊຸມຊຸບກັນຄ່ອຍໆ: ຕາຣາແບ້ດ ເຮັດທ່າທີວ່າເຫັນດີນຳ.

ລາປິດຫັນມາບອກແຂກຢ່າງເປັນກັນເອງວ່າ:

-ພວກເຈົ້າຫຍິບເຫລົ້າຢູ່ກ້ອງໂຕະ ແລ້ວເອົາເບຍປົນໃຫ້ເປັນສີຈັກຫນ່ອຍ: ເຮັດແນວນີ້ລະບໍ່ມີຫຍັງດອກ.

ຫລັງຈາກງົມງວາຫຍິບເຫລົ້າຢູ່ກ້ອງໂຕະຄາວຫນຶ່ງ, ຈອກເບຍ

ເຕັມປ່ຽມສີອ່າວຈາງຈືດຫນ້າສິງໄສ ກໍປາກົດຕົວຂຶ້ນມາວາງຢູ່ຕໍ່ຫນ້າ ແຂກຜູ້ຫິວເຫລົ້າແຮງ ແລະຜູ້ໂຊກດີໄດ້ເປັນເຈົ້າຂອງມັນກໍກະລິກ ກະລິນຕັກຂອງກິນແກ້ມມາໃສ່ກ້ວຍໄວ້ ພາຍໃຕ້ແສງຕາລະແວດລະ ວັງຂອງເດັກນ້ອຍກອງທີ ໙ ທີ່ພວມກັ້ນລົມຫາຍໃຈໄວ້ຢ່າງຍາກຊາ ໃນທີ່ສຸດທຸກສິ່ງທຸກຢ່າງກໍກຽມພ້ອມແລ້ວ, ຊ່າງໂມ້ແປ້ງຫລິ່ວຕາໃສ່ ລາບິດ ບາດຫນຶ່ງແລ້ວຍົກຈອກເຫລົ້າຫມົ່ນເຄົາຂຶ້ນຈໍ່ປາກ. ນາຍ ບັນຊີກັບຊ່າງຈັກຍັງຄົງດໍາເນີນການຢ່າງລະມັດລະວັງ ງວາກລ້າຍໆ ວາກຂວາຢູ່ ແຕ່ອ້ອມໆຂ້າງຂອງພວກເຂົາທຸກຄົນສະຫງົບສະຫງຽມ ຄ່ຽມຕົວຢູ່. ຕາຣາແບັດ ລໍຄອຍຢູ່ກ້ອງຕົ້ນໄມ້ໃຫຍ່ຢ່າງຫງຸນຫງວາຍ. ດວງຕາທັງຄູ່ຂອງ ລາບິດ ສິ່ງປະກາຍແວວວັບຂຶ້ນ ແຕ່ຫນໍເຮັດ ຫນັງຕາເຫີບລົງອັດບັງມັນໄວ້.

ຊ່າງໂມ້ແປ້ງເວົ້າຄ່ອຍໆວ່າ:

- ເອົາລະ, ເພື່ອສຸຂະພາບຂອງທຸກຄົນເດີ້.

ເດັກນ້ອຍກອງທີ ໙ ສັງເກດຕິດຕາມເບິ່ງແຂກທັງສາມເລຍ ຈອກເຫລົ້າຢ່າງບໍ່ພົບແສງຕາ ຫົວອງງງ່ງງຈັກຫນ້ອຍ. ພໍແຕ່ຍອດ ສຸດທ້າຍຜ່ານລໍາຄໍຫວິດໄປ ອາການງົງງວາຢ່າງຫນຶ່ງກໍສະແດງຕົວ ອອກ. ຊ່າງໂມ້ແປ້ງແນມເບິ່ງ ລາບິດ ດ້ວຍແສງຕາຂີ້ສົງໄສ ແຕ່ ລາບິດ ຫຍໍ້າແຈະໆ, ທ່າທາງຫົນຫວາຍຄືຈິດໃຈລ່ອງລອຍໄປໄກ ແສນໄກ. ນາຍບັນຊີກັບຊ່າງຈັກນັ້ນພະຍາຍາມສຸດຂີດເພື່ອສະແດງ ວ່າ ບໍ່ມີຫຍັງແປກປະຫລາດເກີດຂຶ້ນ ທັງເອົາສ້ອມສຽບຂອງກິນ ແກ້ມມາຍັດໃສ່ປາກຊໍ້າ.

ຊ່າງໂມ້ແປ້ງເຊິ່ງອາບນໍ້າຮ້ອນນໍ້າຝົນມາຫລາຍປີດົດັກ ແລ້ວນັ້ນ ກວດກາເບິ່ງແກ້ວເຫລົ້າຢູ່ກ້ອງໂຕະ ແຕ່ຊໍ້າມີໃຜຜູ້ຫນຶ່ງເອົາແຂນມາ

ຊຼລາວຂຶ້ນຢ່າງນິ້ມນວນ, ລາວເງີຍຫົວຂຶ້ນ, ໃບຫນ້າລາຍຈ້ຳເມັດໄຟແດງແຜງແວວຂີ້ລັກຂອງ ຕາຣາແມັດ ງວຳຫົວລາວຢູ່ພໍດີ.

- ເຈົ້າບໍ່ດງມໃຈແດ່ເນາະ! ຕາຣາແມັດ ເວົ້າຂຶ້ນ, ທຳທ່າໂມໂຫຈົນຫນ້າແດງຮຶນຂຶ້ນ, - ເພິ່ນກໍຄືວ່າບອກແລ້ວວ່າ ຫ້າມເອົາເຫລົ້າໂວດກາມາກິນ, ແລ້ວ... ຊ້ຳຜັດແມ່ນແຂກໃຫເຮົາເອງຊ້ຳ, ເບິ່ງເອົາຕີ້ ເຈົ້າກິນມັນໄປເກືອບຫມົດແລ້ວ ແລ້ວມີໃຜອີກດື່ມນຳເຈົ້າ?

- ເວນຕາຍເອີຍ!, ຊ່າງໂມ້ແປ້ງຊີດົນຊຶມ, ຈັກແມ່ນໃຜແດ່ກິນ ຂ້ອຍໂລດບໍ່ເຂົ້າໃຈຫຍັງຫມົດ.

- ແມ່ນຫຍັງເກາະ ເຈົ້າບໍ່ເຂົ້າໃຈຫຍັງຫມົດວ່າຕີ!... ເອົາລະຫັນໃຈເບິ່ງ! ຫັ້ນເດ້... ຈັ່ງແມ່ນເພິ່ນບໍ່ເຂົ້າໃຈຫຍັງຕວ່າ! ເບິ່ງດູກິ່ນເຫລົ້າໂວດກາແຮງບໍ່ແຮງນະ, ເຈົ້າບໍ່ອາຍແດ່ຫວະທີ່ເອົາຂອງແນວນີ້ມານີດືມນຳ...

- ມີຫຍັງກັນຊຸນຫວະຫັ້ນ? ກາລີນາ ອີວາໂນວິດ ຮ້ອງຖາມມາແຕ່ໄກ.

- ເຫລົ້າລະບໍ້, ຕາຣາແມັດ ເວົ້າທັງຊີ້ໃສ່ແກ້ວເຫລົ້າ. ກາລີນາ ອີວາໂນວິດ ເສືອດແສງຕາຂົ່ມຂູ່ໃສ່ຊ່າງໂມ້ແປ້ງ. ມາຮອດເວລານັ້ນ ສະມາຊິກກອງທີ ຌ ພາກັນຫົວຈົນໂຕຂົດໂຕງໍມາດົນເຕີບແລ້ວ ທັງນີ້ອາດແມ່ນຍ້ອນວ່າ ລາບິດ ນັ້ນໄດ້ເລົ່າເລື່ອງຕະຫລົກກ່ງວກັບກາລາເຕັນໂກ ກໍເປັນໄດ້. ພວກເດັກນ້ອຍເອົາຫົວຫມູບໃສ່ໂຕະແລະ ບໍ່ສາມາດຮັບເອົາເລື່ອງຕະຫລົກອື່ນໆໄດ້ອີກແລ້ວ.

ຈັ່ງຊັ້ນຢູ່ບ່ອນນີ້ຈຶ່ງມີຄວາມແຈ່ມໃສມ່ວນຊື່ນ ຈົນເຖິງເວລາ

ເລີກພາເຂົາ ເພາະບາງເທື່ອ ລາປິດ ກໍຮ້ອງໃສ່ຊ່າງໂມ້ແປ້ງວ່າ:

- ເຮີຍ! ເປັນແນວໃດ, ຫນ້ອຍໂພດຫວະ? ບໍ່ມີອີກແລ້ວຊັ້ນຫວະ? ຫນ້າເສຍດາຍເນາະ! ເຫລົ້ານີ້ຄົກຢູ່ຕີ? ແບບນີ້ແລ້ວຫມໍເຟດໍ ຫັ້ນຊ່າງຫາເລື່ອງນໍ້... ຫມໍນີ້ບໍ່ຢູ່ລ້າງເລີຍ ໂຕກໍຢ່າວິນວາຍລືບກວນເພິ່ນຫລາຍແມ໊ເອີ໊ຍ, ຄືນກັນເອງແທ້ ໆ ນ່າ!

- ບໍ່ໄດ້ດອກ! ດາຣາແນັດ ຕອບຢ່າງເຄັ່ງຂຶມ, ເບິ່ງຕີ ຂະເຈົ້າໂງຫົວບໍ່ຂຶ້ນແລ້ວຫັ້ນ.

ລາປິດ ຍັງມີແຜນການທີ່ຕ້ອງເຮັດໃຫ້ສຳເລັດອີກຕັ້ງຫລວງຫລາຍ, ຫມໍລຸກໄປຫາຊ່າງໂມ້ແປ້ງດ້ວຍທ່າທາງເອົາອົກເອົາໃຈແລ້ວໂຊມລາວລຸກຂຶ້ນຈາກໂຕະກົ້ມຊຸ່ມໃສ່ຫູວ່າ:

- ເອົາລະ... ໄປ... ໄປ ຊິພາອອກໄປທາງສວນ ຄືນຈິ່ງຊິບໍ່ສັງເກດແດ່.

ມື້ນີ້ກອງທີ ໘ ຂອງ ກາຣາບານິບ ເປັນສິບເວນປະຈຳວັນແຕ່ປານນັ້ນໃນເວລານີ້ ກະໂຕເຂົາເອງກໍວິນວຽນຢູ່ມ່ໆໂຕະ ບ່ອນທີ່ການສິນທະນາໂອ້ລົມແຜງບັດຊະຍາຕ່າງໆກຳລັງຟົດຮ້ອນຂຶ້ນ ຍ້ອນການແຕ່ງດອງທີ່ອ່າວພິເສດໃນຄັ້ງນີ້. ຢູ່ບ່ອນນັ້ນມີ ໂກວານ, ສະປີຣີດົງ, ກາລີນາ ອີວາໂນວິດ, ຊາໂດຮອບ, ແວກຊະແນັບ, ໂວໂລຄອບ ແລະ ອີກຜູ້ຫນຶ່ງທີ່ເປັນປະທານກອມມູນ ລູບັດຊາກສະກີ, ທີ່ຊື່ວ່າເນສເຕເຮັນໂກ ຜູ້ສະຫລຽວສະຫລາດ ແລະ ຈິ່ງເຄົາສີແດງຢູ່ປາຍຄາງ.

ກອມມູນທີ່ຢູ່ພາກຝັ່ງກົງກັນຂ້າມກັບພວກເຮົາ ບໍ່ຈະເລີນເລີຍ; ບໍ່ສາມາດປູກຝັງຊິມໃຊ້ດີນນາ, ບໍ່ຮູ້ຊຸງຊາແຈກຢາຍວຽກງານ ແລະ

ສິດຕ່າງໆ ທັງບໍ່ສາມາດເອົາຊະນະຈິດໃຈພວກແມ່ຍ້າວແມ່ເຮືອນປາກຮ້າຍນິໄສກໍ່ອຍໆທັງຫລາຍໄດ້, ກອມມູນນີ້ບໍ່ມີກຳລັງພໍ ທີ່ຈະຈັດຕັ້ງແຮງງານປະຈຳວັນ ທັງບໍ່ມີຄວາມເຊື່ອສັດທາຕໍ່ວັນຂ້າງໜ້າ. ເນສເຕເຣັນໂກ ສະຫລູບສູ່ພວກເຮົາຟັງຢ່າງເສົ້າໆວ່າ:

- ຕ້ອງມີຄົນໃຫມ່ຈຶ່ງໄດ້... ແຕ່ຊິໄປຫາທາງໃດລະ?

ກາລີນາ ອີວາໂນວິດ ຕອບຢ່າງດຸເດືອດ:

- ເຈົ້າເວົ້າແນວນີ້ບໍ່ຖືກດອກ, ສະຫາຍ ເນສເຕເຣັນໂກ ເອີຍ, ເຈົ້າເວົ້າຜິດແລ້ວ, ຄົນພວກມາໃຫມ່ຫັ້ນເກາະ ລ້ວນແຕ່ພາກທັງນັ້ນລະ, ບໍ່ຮູ້ທີ່ບຮູ້ແດນຫຍັງຫມົດ. ຕ້ອງເອົາຄົນເກົ່າຄົນແກ່ນັ້ນລະອອກມາໃຊ້ນະ...

ສຽງບັນນອງຕາມໂຕະຕ່າງໆດັງແຮງຂຶ້ນສຸກໃຊ້, ອາຫານທີ່ຫາກໍນຳມາຢາຍ ແມ່ນຫມາກໂປມ ແລະ ຫມາກຈອງຈາກສວນຂອງພວກເຮົາເອງ, ນອກນີ້ກະໂລ້ງໄອສະຄຣີມອັນແມ່ນ ແນວເອກອ້າງຂອງພະແນກບໍລິການຂອງພວກເຮົາໃນວັນນີ້ ກໍພວມປາກົດຕົວຂຶ້ນທາງຟາກພຸ້ນແລ້ວ.

ແລະ ແລ້ວໃນທັນໃດນັ້ນ ສຽງບັນເລງຈາກອັກກ້ອກຫນ່ວຍຫນຶ່ງກໍດັງຂຶ້ນທາງເບື້ອງຫລັງເຮືອນ ປະກອບດ້ວຍສຽງຮ້ອງແຈ້ດໆຂອງພວກແມ່ຍິງປະເພດຫາເຊິງມ່ວນນຳບຸນແຕ່ງດອງປະຈຳບ້ານ. ແມ່ຍິງປະມານ ໕-໖ ຄົນ ພ້ອມປີ້ນທັງທຶບຕີນຢ່າງອອກຫນ້າ ນັກຫລິ້ນອັກກ້ອກຄົນຫນຶ່ງ ຕາອ່າວເຫິບ ແລະ ຊຶງຊຶງແດ່ແລ້ວ ພວມເຄື່ອນຂະບວນເຂົ້າມາຫາພວກເຮົາ.

-ພວກເຂົາມາເພື່ອເບິ່ງຂອງຂວັນຫັ້ນລະ! ດາຣາແບັດ ເວົ້າຂຶ້ນ.

ແມ່ຍິງຄົນຫນຶ່ງຈ່ອຍແຫ້ງ ແຕ່ສີສັນສົດໃສພິເສດ ທີບຕີນເລົ່ງມາໃສ່ຂ້າພະເຈົ້າເປັນພິເສດ, ເອົາແຂນສອກເດິອອກ ແລະ ພະຍາຍາມລາກເກີບຄູ່ອ່າວໃຫຍ່ຍ່ຳດິນຊາຍກະເປະກະປະມາຫາຂ້າພະເຈົ້າ.

-ພໍ່ເກົ້າເອີ້ຍ... ພໍ່ເກົ້ານ້ອຍສຸດທີ່ຮັກ... ດື່ມເພື່ອລູກສາວເຈົ້າແດ່... ຮີ ໆ... ເພື່ອລູກສາວຂອງເຈົ້າ...

ຢູ່ໃນມືຂອງນາງມີແກ້ວເຫລົ້າໂວດກາແກ້ວຫນຶ່ງ ຊຶ່ງປະຕິຫານອອກມາແຕ່ຍາມໃດບໍ່ມີໃຜຮູ້ ແລະ ຈອກແກ້ວນ້ອຍເປັນຫລ່ຽມສີນ້ຳອ້ອຍຈອກຫນຶ່ງ. ດ້ວຍອາການມືນເມົາສົມຄວນ ເວລາຫຍິບເຫລົ້າໃສ່ຈອກນາງເລີຍເຮັດນ້ຳເຫລົ້າເຮ່ຍຮວາດລົງດິນ ແລະ ປຽກເສື້ອກະໂປງຂອງຕົນເອງ. ດາຣາແບັດ ຫລຸບເຂົ້າມາທັນທີ:

-ພໍແລ້ວ...!

ຫມໍດຶງເອົາແກ້ວ ແລະ ຈອກຈາກມືນາງໄດ້ຢ່າງງ່າຍດາຍ, ແຕ່ສາວນັ້ນລືມຂ້າພະເຈົ້າໄປແລ້ວ ບັດນີ້ນາງລິວໄປຫາ ໂອເລຍ ພໍປານເຫັນເຫຍື່ອຕ່ອນໃຫມ່ ທັງເວົ້າແບບຄົນຂີ້ເມົາມັກມ່ວນວ່າ:

-ໂອເລຍ ເປໂຕຣບນາ ຜູ້ຈີບຜູ້ດີນ່າເອີ້ຍ... ແຕ່ວ່າເປັນຫຍັງມາຄືຈັ່ງຜົມເປຍຢູ່... ບໍ່ດີໃດ໋... ບໍ່ດີແທ້ໆ ມື້ອື່ນຊິແຕ່ງຜົມໃສ່ຜ້າໃຫ້... ຕ້ອງໃສ່ຜ້າຄຸມ.

-ບໍ່ ຂ້ອຍບໍ່ໃສ່ດອກ, ໂອເລຍ ຕອບຢ່າງເດັດດ່ຽວແບບບໍ່ຄາດຝັນມາກ່ອນ.

- ອ້າວ ເປັນຫຍັງລະ? ເຈົ້າຊິຈັງຜິນເປຍແບບນີ້ຫວະ?

- ເອີ ຂ້ອຍຊິຈີ່ງມັນໄວ້.

ພວກແມ່ຍິງຂີ້ເຫລົ້າຮ້ອງແຈດຂຶ້ນ ທັງເວົ້າຫຍັງຕໍ່ຫຍັງລຸດໆ ອອກມາ ທັງຍ່າງກົ້ງມາຫາ ໂອເລຍ. ໂວໂລຄອບ ໂມໂຫ ຈຶ່ງ ເຂົ້າໄປຂວາງ ແລ້ວການສາວແມ່ໂປ່ວ່າ:

- ແລ້ວຊິເປັນຫຍັງລະ ຄັນບໍ່ໃສ່ຜ້າຄຸມຜົມນະ?

- ເອີ ບໍ່ໃສ່ກະບໍ່ໃສ່ລະບໍ້ ຊິເປັນຫຍັງ ມັນເລື່ອງຂອງພວກເຈົ້າ, ແຕ່ວ່າເຮັດແນວນັ້ນກໍເທົ່າກັບວ່າ ພວກເຈົ້າບໍ່ໄດ້ແຕ່ງດອງກັນນັ້ນ ແລ້ວ.

ພວກນັກການທູດອາວຸໂສບຸ້ມເຂົ້າມາ ເຮັດໃຫ້ພວກຜູ້ຍິງຂີ້ເມົາ ເຫມັນແຕ່ເຫລົ້າໂວດກາແຕກກະຈາຍໄປ. ໂອເລຍ ກັບຂ້າພະເຈົ້າ ອອກມາຈາກອຸທິຍານ.

- ຂ້ອຍບໍ່ຢ້ານພວກເຂົາດອກ ແຕ່ຄຶງຈະຍາກຢູ່.

ພວກເດັກນ້ອຍນິຄົມກາຍພວກເຮົາໄປໄກ້ໆ, ຂົນເຄື່ອງເຮືອນ ໂຕະຕັ່ງ ແລະ ຫີບຫໍ່ເຄື່ອງນຸ່ງ. ມັນລະຄອນທີ່ຈະສະແດງແມ່ນ ເລື່ອງ "ການແຕ່ງດອງ" ຂອງ ໂກໂກນ ແລະ ກ່ອນຈະເປີດສາກ ສະແດງ ລູກບິນ ໄດ້ປາກະກະກາຫນ້ອຍຫນຶ່ງກ່ຽວກັບ "ປະເພນີ ແຕ່ງດອງຂອງຊົນຊາດຕ່າງໆ".

ງານບຸນແຕ່ງດອງໄດ້ແກ່ຍາວຕໍ່ໄປເປັນເວລາດົນນານສົມຄວນ.

ບົດທີ ໑໑

ອາລົມລະເມີ

ການແຕ່ງດອງຂອງ ໂອເລຍ ຜ່ານໄປບໍ່ດົນເທົ່າໃດ ຄວາມທຸກລະທົມຢ່າງຫນຶ່ງຊຶ່ງພວກເຮົາຄອງຄອຍມາດົນກໍເກີດຂຶ້ນ ກັບພວກເຮົາ ນັ້ນຄືວັນເວລາແຍກທາງກັບພວກເດັກນ້ອຍບິຄົມຜູ້ຈະໄປເຂົ້າມະຫາວິທະຍາໄລກຳມະກອນ ເຖິງແມ່ນວ່າມີການເວົ້າຮອດມະຫາວິທະຍາໄລກຳມະກອນ ມາແຕ່ສະໄຫມເກີດເລື່ອງ "ຂອງພວກເຮົາດີກກວ່າຫມູ່" ພຸ້ນແລ້ວ ແຕ່ລະມື້ກໍມີການກະກຽມກັນ, ເຖິງແມ່ນວ່າພວກເຮົາບໍ່ສ້າງຄວາມຝັນອັນສວຍງາມ ຫນັກແຫນ້ນໄປກວ່າການຄາດຫວັງວ່າ ຢາກມີນັກສຶກສາຂອງພວກເຮົາເອງທີ່ມະຫາວິທະຍາໄລກຳມະກອນ ແລະ ໃນເລື່ອງທີ່ເກີດຂຶ້ນທັງຫມົດນີ້ ມັນກໍມີແຕ່ຄວາມມ່ວນຊື່ນ ແລະ ໄຊຊະນະ, ເມື່ອວັນເວລາແຫ່ງການອຳລາພາຈາກກັນມາເຖິງ ຫມົດທຸກຄົນກໍຮູ້ສຶກຄັບແຄ້ນແຫນ້ນເອິກຂຶ້ນມາ, ນ້ຳຕາຫລັ່ງເບົ້າ ບໍ່ມີໃຜຢາກຢູ່ປະເຊີນຫນ້າກັບສະພາບຫນັກໃຈອັນນີ້: ບິຄົມຍັງຄົງຫາຍໃຈຢູ່ຕໍ່ໄປ, ເຮັດວຽກ ແລະ ຍິ້ມຫົວ ແຕ່ມາບັດນີ້ສະມາຊິກຂອງມັນຊ້ຳມາພັດພາກຈາກກັນ, ມັນເປັນສິ່ງທີ່ບໍ່ມີໃຜຄາດຄິດມາກ່ອນວ່າຈະເກີດຂຶ້ນໄດ້. ໃນວັນນັ້ນຂ້າພະເຈົ້າເອງກໍຕື່ນສະເດີດຂຶ້ນ ດ້ວຍຄວາມຮູ້ສຶກ ຫວາດກົດຕໍ່ການສູນເສຍ ແລະ ຄວາມວິຕົກກັງວົນ.

ຫລັງຈາກປັ້ນເຂົ້າເຊົ້າແລ້ວ ທຸກຄົນກໍປ່ຽນເຄື່ອງໃສ່ຊຸດງາມຂອງຕົນ, ຢູ່ໃນສວນມີການຈັດໂຕະອາຫານ ແລະ ໃນຫ້ອງການ

24/VII
ห้ามจำหน่าย

ຂ້າພະເຈົ້າ ຜູ້ຮັບຜິດຊອບຍາມທຸງກໍໄດ້ກອດຄັນທຸງອອກຈາກບ່ອນ ປັກຂອງມັນແລ້ວ. ສ່ວນນັກຕີກອງກໍຈັດແຈ່ງເອົາອຸປະກອນດົນຕີ ຂອງເຂົາລົງມາຫ້ອຍໃສ່ແອວແລ້ວ. ແຕ່ສັນຍາລັກແຫ່ງວັນບຸນ ເຫລົ່ານີ້ ບໍ່ສາມາດຂົ່ມມອດແປວໄຟແຫ່ງຄວາມເສົ້າໂສກໄດ້. ດວງ ຕາຄູ່ສີຟ້າສົດໃສຂອງນາງນ້ອຍ ລິດາ ນອງລົ້ນໄປດ້ວຍນ້ຳຕາຕັ້ງແຕ່ ເຊົ້າ, ພວກເດັກນ້ອຍແມ່ຍິງສະອື້ນໄຫ້ອຶກຊຶກຢ່າງບໍ່ປິດບັງຢູ່ ເທິງຕຽງ ໃນຂະນະທີ່ ເອີກາເຕີຣີນາ ກຣີກໍເຣັບນາ ພະຍາຍາມອົ່ນ ອອຍພວກເຂົາເຕັມທີ ແຕ່ນາງເອງກໍອົດກັ້ນຄວາມຕື່ນເຕັ້ນພາຍໃນ ໃຈໄວ້ໄດ້ຍາກເຕັມທີຄືກັນ. ພວກເດັກນ້ອຍຜູ້ຊາຍວາງທ່າເຄັ່ງຂຶມ ກົດຊຶງຈົນເກີນຂີດ, ລາປິດ ນັ້ນກໍໃຫ້ວ່າ ຫມົດສະເຫນໃນຕົວໄປ ເລີຍ, ພວກເດັກນ້ອຍຈັບກຸ່ມກັນເປັນແຖວຍາວຊຶງ ບໍ່ຕ່າງຫຍັງ ກັບຫມູ່ນົກຈອກຈັບສາຍໄຟ ແລະ ມີຜູ້ສືບດັງແບບເປັນຫວັດ ຫລາຍປານນີ້ມາກ່ອນ. ພວກເຂົານັ່ງເຈົ່າຢູ່ເທິງແປ້ນມ້າ ແລະ ໄມ້ຂວາງທາງແບບຄຳຣູ້ຄຳຊຽງ, ມືວາງຢູ່ເທິງຫົວເຂົ່າ ແສງຕາ ແນມນຳວັດຖຸທີ່ຢູ່ສູງກວ່າຂອບເຂດສະຫນາມສາຍຕາຕາມທຳມະດາ ເຊັ່ນຫລັງຄາເຮືອນແດ່, ປາຍໄມ້ຫລືທ້ອງຟ້າພຸ້ນ.

ຂ້າພະເຈົ້າເຫັນໃຈໃນຄວາມອຸກອັ່ງສັບສົນແບບເດັກນ້ອຍຂອງ ພວກເຂົາ ແລະ ເຂົ້າໃຈໃນຄວາມທໍລະມານຂອງພວກເຂົາ, ມັນ ແມ່ນຄວາມຮູ້ສຶກນັບຖືເຊື່ອຫມັ້ນຕໍ່ຄວາມຍຸດຕິທຳ ຢ່າງສຸດກົກສຸດ ປາຍ. ຂ້າພະເຈົ້າຄຶດຄືກັບ ໂຕສະກາ ໂຊໂລແວັບ ທີ່ວ່າ: ເປັນ ຫຍັງນ້ໍອນ ມັດເວີຍ ເບຍລູກິນ ຈຶ່ງຈະບໍ່ຢູ່ໃນນິຄົມອີກແລ້ວ? ເປັນໄປໄດ້ບໍ່ວ່າ ຈະສາມາດຈັດແຈ່ງແຕ່ງຊີວິດຢ່າງສົມເຫດສົມ

ພົບກວ່ານີ້ ໃຫ້ເປັນໃນແບບທີ່ວ່າ ບໍ່ຕ້ອງໃຫ້ ມັດເວີຍ ຈາກໄປ ແລະ ບໍ່ໃຫ້ການຈາກໄປຂອງຫມໍສ້າງຄວາມເຈັບປວດອັນຫນັກຫນ່ວງເລິກເຊິ່ງ ແລະ ໄຮ້ເຊິ່ງຄວາມຍຸຕິທຳຕໍ່ ໂຕສະກາ? ນອກນີ້ ມັດເວີຍ ຈະມີເພື່ອນຮັກສ່ວນແພງພຽງຄົນດຽວຄື ໂຕສະກາ ເທົ່ານັ້ນເນາະ ແລະ ມັນກໍເປັນຜູ້ດຽວເທົ່ານັ້ນຫລືທີ່ຈະຈາກໄປ. ບູຣິນ, ກາຣາບານົບ, ຊາໂດຣອບ, ກຣາຍນົກ, ແວກຊະເນັບ, ໂກໂລສ, ນາສເຕຍ ນົດແຊັບນາຢາ ກໍໄປຄືກັນ. ແຕ່ລະຄົນມີຫມູ່ເປັນສິບໆ ແລ້ວກະ ມັດເວີຍ ກັບ ບູຣິນ ນັ້ນພວກເຂົາໂລດແມ່ນຄົນແທ້ຄົນວ່າ ເປັນຕາເອົາແບບເອົາຢ່າງແທ້ໆ... ແຕ່ວ່າບັດນີ້ຊ້ຳພັດຕ້ອງເລີ່ມໃຫມ່ທຸກຢ່າງໂດຍບໍ່ມີພວກເຂົາ.

ຄວາມຮູ້ສຶກເຫລົ່ານີ້ ບໍ່ແມ່ນອາລົມຊະນິດດຽວທີ່ບີບຄັ້ນບີຄົມ. ມັນຈະແຈ້ງສຳຫລັບທຸກຄົນແລ້ວບໍ່ວ່າ ຂ້າພະເຈົ້າກໍຄືພວກເດັກນ້ອຍ: ຄໍຂອງບີຄົມພວມວາງພາດຢູ່ເທິງຂຽງ ແລະ ຢູ່ເຫນືອມັນນັ້ນ ມີຂວານຫ້ອຍກຽມພ້ອມທີ່ຈະຕົກມາຕັດມັນອອກ.

ພວກທີ່ໄປເອງກໍຄືກັນ ມີທ່າທີບໍ່ຕ່າງຫຍັງກັບຜູ້ຮັບເຄາະກຳພວມຍ່າງເຂົ້າສູ່ການທຳພິທີວິລະກຳບູຊາເທບພະເຈົ້າແຫ່ງຄວາມຈຳເປັນ ແລະ ຊະຕາກຳ, ກາຣາບານົບ ບໍ່ກອຍຫ່າງຈາກຂ້າງຂ້າພະເຈົ້າເລີຍ, ມັນຍິ້ມ ແລະ ເວົ້າວ່າ:

- ຊີວິດກໍກສ້າງຂຶ້ນເພື່ອໃຫ້ທຸກສິ່ງທຸກຢ່າງສັບສົນຫຍຸ້ງຍາກໄປຫມົດ. ການໄປເຂົ້າຮຽນໃນມະຫາວິທະຍາໄລ ແມ່ນຄວາມສຸກສົມຫວັງຢ່າງຫນຶ່ງ, ບໍ່ມີໃຜປະຕິເສດໄດ້, ຜູ້ໃດກໍຄືດກໍຝັນຫາ ພໍປານພະຍາຄຶດຫານົກໄພວິເສດ... ພະເຈົ້າເທົ່ານັ້ນຮູ້ດີ, ແຕ່ໃນ

ຄວາມເປັນຈິງສິ່ງນີ້ອາດບໍ່ແມ່ນຄວາມສຸກກໍໄດ້, ບາງທີອາດແມ່ນວັນນີ້ຊ້ຳນ່າທີ່ແມ່ນວາລະສຸດທ້າຍ ແຫ່ງຄວາມສຸກຂອງພວກເຮົາ, ເພາະການພັດພາກຈາກກັນຂອງພວກເຮົານັ້ນ ຊ່າງແສນທໍລະມານຫົວໃຈພິລຶກ ... ຈາກນີ້ຄືນໄປ ... ໂອ່ ... ກ້າຫາກວ່າບໍ່ມີໃຜເຫັນຂ້ອຍຫວະ ຂ້ອຍຈິຮ້ອງຂຶ້ນສຸດສຽງນີ້ລະຮື ... ຮ້ອງຄັກໆວ່າ... ເຮັດແນວນີ້ແລ້ວ ບາງທີຂ້ອຍອາດຈະຊ່ວງໃຈບໍ່ຮູ້ ... ໃນໂລກນີ້ມັນບໍ່ມີຄວາມຍຸຕິທຳເລີຍ...

ແວກຊະເນັບ ແນມເບິ່ງພວກເຮົາຈາກແຈຫ້ອງເບື້ອງໜຶ່ງດ້ວຍທ່າທີຂີ້ໂມໂຫ:

- ມີຄວາມຈິງຢູ່ຢ່າງດຽວຄື: ຜູ້ຄົນທັງຫລາຍ ...

- ຈັ່ງແມ່ນຄັກຕວ່າ! ກາຮາບານົບ ທັງເວົ້າທັງຫົວ, - ແລ້ວໂຕ... ໂຕເຄີຍສະແຫວງຫາຄວາມຈິງນຳແນວຫວະ?

- ບະ... ບໍ່...ບໍ່ ມັນບະ, ບໍ່ ໝາຍຄວາມວ່າຈັ່ງຊັ້ນນ່າ...ແຕ່ວ່າຄົນເຮົາຕ້ອງເປັນຜູ້ດີ ບໍ່ຊັ້ນ... ເວນເອີ້ຍ! ຄວາມຍຸຕິທຳກໍບໍ່ມີແລ້ວ. ກ້າວ່າໂຕເປັນຄົນຊົ່ວ ເກາະ... ໂຕຮູ້ບໍ່ວ່າ ໂຕຈະກາຍເປັນຄົນຂັດຂວາງລະບອບສັງຄົມນິຍົມ, ມື້ນີ້ເຮົາເຂົ້າໃຈມັນແລ້ວ.

ຂ້າພະເຈົ້າຈ້ອງເບິ່ງມັນຢ່າງຈິງຈັງ:

- ເປັນຫຍັງຈຶ່ງເຂົ້າໃຈໃນມື້ນີ້ເທົ່ານັ້ນ?

- ເພາະວ່າມື້ນີ້ຂ້ອຍສາມາດແນມເຫັນຄົນ ຄືກັບແຍງເງົາໃນແວ່ນ... ຂ້ອຍເອງແຕ່ກ່ອນບໍ່ຮູ້ດອກ... ບາງທີອາດແມ່ນຍ້ອນການເຮັດວຽກ, ຄືກັນທຸກມື້ ແຕ່ມື້ນີ້ທຸກຢ່າງ... ຈະແຈ່ມແຈ້ງຂຶ້ນທັນຕາເຫັນ... ອັນ... ທີ່ ກ້ອກກີ ຂຽນໄວ້ນັ້ນໂລດແມ່ນແທ້ ແຕ່

ກ່ອນຂ້ອຍບໍ່ເຂົ້າໃຈມັນເລີຍ... ເອີ້ ໝາຍຄວາມວ່າຂ້ອຍເຂົ້າໃຈຢູ່ ແຕ່ບໍ່ໃຫ້ຄວາມສຳຄັນແກ່ມັນ: ມະນຸດຜູ້ໜຶ່ງບໍ່ແມ່ນອັນທະພານຄົນໃດຄົນໜຶ່ງຊື່ງ ແລ້ວກະຄົນອື່ນຫລື ຄົນແທ້.

ອາໄສຄຳເວົ້າເຫລົ່ານີ້ ພວກນັກສຶກສາຊຸດທຳອິດຂອງພວກເຮົາພະຍາຍາມປົກປິດບາດແຜສົດໆຂອງພວກເຂົາທີ່ພຸຂຶ້ນຍ້ອນການພັດພາກຈາກນິຄົມ. ແຕ່ພວກເຂົາເປັນທຸກໃຈໜ້ອຍກວ່າພວກເຮົາ ເພາະປະຕູມະຫາວິທະຍາໄລກຳມະກອນໄຂອອກຮັບພວກເຂົາຢ່າງສົດໃສເບີກບານ ສ່ວນວ່າພວກເຮົາຊ້ຳພັດບໍ່ມີຫຍັງສົດໃສເບີກບານຄອງຄອຍພວກເຮົາຢູ່ເລີຍ.

ໃນຕອນຄ່ຳກ່ອນວັນຈາກ, ພວກຄູສອນໄດ້ມາເຕົ້າໂຮມກັນຢູ່ເກີຍຊານຫ້ອງພັກຂ້າພະເຈົ້າ, ບາງຄົນນັ່ງ ບາງຄົນຢືນ ຊຶ່ງທ່າທາງມິດຂຶມໃກ້ຊິດກັນຫລາຍຂຶ້ນ: ທົ່ວທັງນິຄົມພວມຫລັບນອນ ທຸກຢ່າງສະຫງົບງຽບອົບອຸ່ນ ແລະ ສະຫວ່າງສະໄຫວດ້ວຍແສງດາວ. ສຳລັບຂ້າພະເຈົ້າເຫັນວ່າ ໂລກເປັນຄືໝໍ້ແກງມະຫັດສະຈັນ ທີ່ບັນຈຸທາດສານສັບສົນຢ່າງໜຶ່ງ ທີ່ມີທັງລົດຫອມຫວານໜ້າຫລົງໄຫລ ແຕ່ບໍ່ມີໃຜສາມາດບອກໄດ້ວ່າ ໃນນັ້ນມີສ່ວນປະກອບອັນໃດແດ່, ບໍ່ມີໃຜຮູ້ວ່າຢູ່ໃນສິ່ງປະປົນອັນນັ້ນມີແນວເປື້ອນເປິອັນໃດແດ່ຈ້ອນຢູ່ນຳ? ໃນຂະນະນັ້ນມະນຸດກໍຈະຮູ້ສຶກລາຍຕາໄປນຳບັດຊະຍາ, ໄປນຳຄວາມປາດຖະໜາຢາກເຂົ້າໃຈທຸກສິ່ງທຸກຢ່າງ ໂດຍສະເພາະບັນຫາທີ່ເຫລືອວິໄສນັ້ນນຳ. ແລະ ກ້າຫານກວ່ານັ້ນ ພວກໝູ່ເພື່ອນຕ້ອງຈາກພາກ ເຈົ້າໄປຢ່າງບໍ່ມີວັນຫວນກັບມາພົບກັນອີກເດ້.

ຜູ້ທີ່ເຈົ້າໄດ້ກີກດຶງເອົາເຂົາອອກຈາກ ການເປັນເດັກນ້ອຍພະເນຈອນດ້ວຍຄວາມຍາກຊາສົມຄວນນັ້ນເດ້?... ໃນກໍລະນີ້ຄົນເຮົາກໍຈະໄດ້ແຕ່ເງີຍຫນ້າເບິ່ງທ້ອງຟ້າແລ້ວອັດປາກມິດເລີຍ, ເວລານັ້ນມັນຄືກັບວ່າ ຕົ້ນໄມ້ມືດດໍາ, ຕົ້ນໂສນໂອນເອ່ນ ແລະ ຕົ້ນຊາຊ້າງອ້ອມ ໆ ຂ້າງນັ້ນກໍາລັງຊັບຊື່ມສະເຫນີວິທີແກ້ບັນຫາອັນຖືກຕ້ອງໃຫ້ແກ່ເຈົ້າຢູ່.

ເຊັ່ນນີ້ແລ້ວ ແຕ່ລະຄືນພວກເຮົາແຍກກັນຢູ່ໃນກຸ່ມໄຮ້ພະລັງແລ້ວທັງຫມົດກໍພ້ອມກັນມິດງຽບ ແລະ ຄຶດຮໍ່າທັງກາງຫູຟັງສຽງສະອື້ນໄຫ້ຂອງຕົ້ນຫມາກຮາກໄມ້ ສ່ວນດວງຕາຈັບຈ້ອງ ແລະ ມອງເບິ່ງດວງດາວໃນທ້ອງຟ້າ ບໍ່ຕ່າງຫຍັງກັບພວກຄົນປ່າເມື່ອກັບມາແຕ່ໂຫ່ເນື້ອເຫື່ອບໍ່ຫມານ.

ຂ້າພະເຈົ້າກໍຄຶດຮໍ່າຮອນນໍາຜູ້ອື່ນໆ. ໃນຄືນນັ້ນ ຄືນທີ່ຂ້າພະເຈົ້າຈະສົ່ງນັກຮຽນຊຸດທໍາອິດອອກໄປ ຂ້າພະເຈົ້າໄດ້ເສຍເວລາຄຶດນໍາແນວໄຮ້ສາລະຕັ້ງຫລາຍອັນ. ໃນເວລານັ້ນຂ້າພະເຈົ້າບໍ່ເວົ້າເລື່ອງນີ້ກັບຜູ້ໃດຫມົດ: ເບິ່ງຄືກັບວ່າມີແຕ່ພວກຄູສອນຫມູ່ຄູ່ຜູ້ອື່ນເທົ່ານັ້ນທີ່ອ່ອນແອ ສ່ວນຂ້າພະເຈົ້ານັ້ນຍາມໃດກໍຢືນຕົວກົງຕໍ່ໄປ ບໍ່ຕ່າງຫຍັງກັບຕົ້ນຈິກຕົ້ນຮັງທີ່ຫມັ້ນແກ່ນໄຮ້ສິ່ງທໍາລາຍໄດ້. ຢູ່ຕໍ່ຫນ້າຂ້າພະເຈົ້າແລ້ວເບິ່ງຄືວ່າພວກເຂົາພາກັນຢາກອາຍພຸ້ນແລ້ວ.

ຂ້າພະເຈົ້າຄຶດເຖິງຄວາມອະຍຸຕິທໍາ ແລະ ຄວາມທຸກຍາກ ທີ່ເກີດຂຶ້ນກັບຊີວິດຂອງຂ້າພະເຈົ້າ, ຂ້າພະເຈົ້າໄດ້ອຸທິດພາກສ່ວນຫນຶ່ງ ທີ່ປະເສີດສຸດໃນການຄົງຕົວຢູ່ຂອງຄົນຜູ້ຫນຶ່ງ ພໍພຽງແຕ່ເຮັດໃຫ້ເດັກນ້ອຍຕິດໄພສັງຄົມ ແລະ ເດັກພະເນຈອນຈໍານວນ

ເຄິ່ງໂຫລ ໄດ້ເຂົ້າສຶກສາຮ່ຳຮຽນໃນມະຫາວິທະຍາໄລກຳມະກອນ. ແຕ່ຢູ່ພຸ້ນໃນຕົວເມືອງໃຫຍ່ຫັ້ນ ພວກເຂົາຈະຫວນຄືນໄປຢູ່ກ້ອງອິດທິພົນໃຫມ່ ທີ່ຂ້າພະເຈົ້າບໍ່ອາດຊີ້ແນະໄດ້ ແລ້ວໃຜຈະຮູ້ວ່າເລື່ອງມັນຈະສຸດລົງແບບໃດ? ຄວາມທຸກຍາກ ແລະ ການອຸທິດເຫື່ອແຮງຂອງຂ້າພະເຈົ້າ ອາດຈະກາຍເປັນພຽງພະລັງງານກ້ອນຫນຶ່ງທີ່ສູນເສຍໄປໂດຍບໍ່ສ້າງປະໂຫຍດອັນໃດຫມົດຊຸ້ນຫວະ?

ແຕ່ຂ້າພະເຈົ້າຍັງຄຶດຫາອັນອື່ນອີກ: ເປັນຫຍັງຈຶ່ງມີຄວາມອະຍຸຕິທຳແບບນີ້? ທັງໆທີ່ຂ້າພະເຈົ້າສ້າງກຳດີແລ້ວ. ສິ່ງທີ່ຂ້າພະເຈົ້າເຮັດສຳເລັດແລ້ວນີ້ ມັນຍາກກວ່າ ແລະ ມີກຽດກວ່າການຮ້ອງລຳກັງວພາລາສີໃນງານລາຕີຂອງສິລະປິນສະມັກໃຈ ຕັ້ງຮ້ອຍເທົ່າພັນເທົ່າພຸ້ນຕວ່າ, ຫລືອາດຈະຍາກກວ່າການສະແດງບົດບາດໃນລະຄອນດີງຈັກເລື່ອງຢູ່ໂຮງລະຄອນສິລະປະ ມິດສະກູ ຊ້ຳອີກ... ແລ້ວເປັນຫຍັງຈຶ່ງມີຄົນເປັນຮ້ອຍຕົບມືຊົມເຊີຍນັກສະແດງ ເຫລົ່ານັ້ນແລ້ວພວກເຂົາກໍເຂົ້າຫລັບນອນດ້ວຍຄວາມຮູ້ສຶກ ທີ່ວ່າໄດ້ຮັບຄວາມສົນໃຈເອົາໃຈໃສ່ຢ່າງປ່ຽມລົ້ນແລະຄວາມສຳນຶກໃນບຸນຄຸນຈາກຜູ້ຄົນທັງຫລາຍ, ສ່ວນວ່າຂ້າພະເຈົ້າຫວະ ຂ້າພະເຈົ້າຊ້ຳຕ້ອງຢູ່ຄົນດຽວໂດດດ່ຽວໃນລາຕີອັນມືດມິດ ພາຍໃນນິຄົມກາງທົ່ງໄກຫມູ່ບ້ອນນີ້; ເປັນຫຍັງແມ້ແຕ່ປະຊາຊົນຊາວບ້ານ ກົງຊາຣອບກາ ເອງ ຈຶ່ງບໍ່ຕົບມືຊົມເຊີຍຂ້າພະເຈົ້າ? ຮ້າຍໄປກວ່ານີ້ ຂ້າພະເຈົ້າຍັງຄຶດວິຕົກກັງວົນຫ່ວງໄຍບໍ່ເລີກບໍ່ແລ້ວວ່າ ເພື່ອ "ສ້າງຄົງ" ໃຫ້ເດັກນ້ອຍຜູ້ຢູ່ມະຫາວິທະຍາໄລກຳມະກອນນັ້ນ ຂ້າພະເຈົ້າຕ້ອງຈ່າຍເງິນເປັນພັນຣຸບ ເຊິ່ງກໍລະນີເຊັ່ນນີ້ ບໍ່ເຄີຍມີໃຜຄາດຄະເນຂຶ້ນງົບປະມານໄວ້

ກ່ອນ ແລະ ເມື່ອຂ້າພະເຈົ້າໄປສືບຖາມນຳທ່ານຜູ້ກວດກາການເງິນ ເພິ່ນຈຶ່ງແນມເບິ່ງຂ້າພະເຈົ້າຢ່າງຕຳໜິ ແລະ ຮ້າຍວ່າ:

- ເຈົ້າຢາກຈ່າຍເງິນ ຈ່າຍລື່ນໄປທີ່ໃດກໍເຊີນຕາມສະບາຍໂລດແຫລ້ວ ແຕ່ຢ່າລືມວ່າສ່ວນເກີນໄປນີ້ແລ້ວ ເພິ່ນຈະຕັດເອົາເງິນເດືອນເຈົ້າໄວ້ແທນ.

ເມື່ອຄຶດເຫັນການສົນທະນາຕອນນີ້ ຂ້າພະເຈົ້າກໍຍິ້ມ, ໃນທັນໃດນັ້ນຢູ່ ໃນມັນສະໝອງຂອງຂ້າພະເຈົ້າກໍເກີດມີຫ້ອງການໃຫຍ່ຊຶ່ງພວມດຳເນີນໄປຢ່າງຟົດຟື້ນ. ຢູ່ໃນຫ້ອງໜຶ່ງມີຜູ້ໃດຜູ້ໜຶ່ງຂຶ້ນສຽງຮຸນແຮງໂຈມຕີທ່ານຜູ້ກວດກາຢ່າງໜັກໜ່ວງ, ສ່ວນອີກຢູ່ຫ້ອງໜຶ່ງຕິດໆກັນ ອີກຜູ້ໜຶ່ງຊໍ້າເວົ້າອອກມາແຮງໆຢ່າງບໍ່ເກງໃຈໃຜວ່າ: "ຈັ່ງແມ່ນຕາຍໆ..." ແລະ ອີກຢູ່ເບື້ອງໜຶ່ງທາງຂ້າງພີ້ພະນັກງານຂີ້ສູດຄົນໜຶ່ງກົ້ມໜ້າກົ້ມຕາໃສ່ໂຕະ ກຸມຄຶດໄລ່ຢູ່ວ່າຕ້ອງຕັດເງິນເດືອນຂ້າພະເຈົ້າຢູ່ຈັກເດືອນ ເພື່ອທົດແທນລາຍຈ່າຍເກີນພົນຮຸບ ທີ່ຂ້າພະເຈົ້າໃຊ້ໄປ. ພະແນກງານນີ້ດຳເນີນວຽກງານຂອງມັນໄປຢ່າງປົກກະຕິ ເຖິງແມ່ນວ່າຢູ່ໃນຫົວຂອງຂ້າພະເຈົ້າຍັງມີອີກພະແນກໜຶ່ງເຮັດວຽກຂອງມັນຢູ່. ຢູ່ໃນຕຶກໜຶ່ງຕິດໆກັນນີ້ຊໍ້າມີພິທີການເຄັ່ງຂຶມສະຫງ່າລາສີຢ່າງໜຶ່ງເກີດຂຶ້ນ: ພວກຄູສອນຂອງພວກເຮົາກັບນັກສຶກສາມະຫາວິທະຍາໄລກຳມະກອນນັ່ງຢູ່ໃນພິທີ, ວົງດຸລິຍາງປະສານ ໑໐໐ ສຽງພວມບັນເລງ "ເພງສາກົນ" ແລ້ວຜູ້ຊ່ຽວຊານດ້ານສຶກສາສາດຄົນໜຶ່ງກໍກ່າວຄຳປາໄສ.

ຂ້າພະເຈົ້າຍິ້ມອີກຄັ້ງໜຶ່ງ: ທ່ານນັກສຶກສາສາດຄົນນີ້ຈະວ່າແນວໃດດົ້? ລາວຄຶດເຫັນບໍ່ວ່າ ກາຣາບານົບ ເຄີຍປຸ້ນຈີ້ຄົນເດີນ

ທາງໃນກະຫນົນໃຫຍ່ມາແລ້ວ ຫລື ບູຮູນ ເຄີຍບິນເຂົ້າບ່ອງຢ້ຽມເຮືອນຄົນ, ບູຮູນ ນັກບິນຜູ້ຄ່ອງໄວ ສ່ວນວ່າສ່ຽວເກີນັກບິນອື່ນໆກໍກຍິງເປົ້າໄປແລ້ວ? ແນວຫມູ່ນີ້ລາວເຄີຍເຫັນບໍ່?

- ເຈົ້າຄຶດຫຍັງຢູ່ເນາະ? ເອີກາເຕີຣີນາ ກຣີກໍເຣັບນາ ກາມຂຶ້ນ, - ເຈົ້າຄຶດແລ້ວກໍຫົວ.

- ຂ້ອຍກຳລັງຢູ່ໃນພິທີການເຄັ່ງຂຶມບ່ອນຫນຶ່ງ, ຂ້າພະເຈົ້າບອກ.

- ອັນນັ້ນມັນຈະແຈ້ງຢູ່ແລ້ວ, ວ່າແຕ່ວ່າບັດນີ້ພວກເຮົາຊິເຮັດແນວໃດກັນ ບໍ່ມີແກນກາງແນວນີ້?

- ຣະ ... ຣະ ... ອັນນີ້ເອງເນາະ ທີ່ວ່າຈະເປັນພະແນກຫນຶ່ງໃນອະນາຄົດຂອງວິຊາການສຶກສາ ຄືພະແນກແກນກາງ.

- ພະແນກໃດ?

- ຂ້ອຍເວົ້າຮອດແກນກາງ, ກ້າມີການຢູ່ໂຮມຫມູ່ ມັນກໍຕ້ອງມີແກນກາງບ່ອນຫນຶ່ງ.

- ອັນນີ້ມັນຂຶ້ນຢູ່ກັບວ່າ ແມ່ນແກນຊະນິດໃດ.

- ອັນເຫມາະສົມຫັ້ນແລ້ວ, ເຮົາຕ້ອງເບິ່ງການຢູ່ໂຮມຫມູ່ຂອງເຮົາໃນແງ່ດີແດ່, ເອີກາເຕີຣີນາ ກຣີກໍເຣັບນາ ເອີຍ, ພວກເຮົາພາກັນວິຕົກເລື່ອງແກນກາງ ແຕ່ການຢູ່ໂຮມຫມູ່ຂອງພວກເຮົາໄດ້ສ້າງແກນຂອງມັນຂຶ້ນເອງແລ້ວ ເຈົ້າໂລດບໍ່ສັງເກດເຫັນມັນຊ້ຳ, ແກນທີ່ດີຕ້ອງຂະຫຍາຍຕົວອອກເອງ ດ້ວຍລະບົບແບ່ງໃນຕົວຂອງມັນເອງ, ຈົດອັນນີ້ໃສ່ປຶ້ມນ້ອຍຂອງເຈົ້າໄວ້ເດີ ສຳລັບວິຊາສຶກສາສາດໃນອະນາຄົດ.

-ດີແລ້ວ, ຂ້ອຍຊິຈົດມັນໄວ້ດອກ, ນາງຕອບເຫັນດີນຳຢ່າງງ່າຍດາຍ.

ມື້ຕໍ່ມາ ກຸ່ມຄູສອນຫງ່ວມເຫງົາໄປແດ່, ການລ້ຽງສະຫລອງດຳເນີນໄປຢ່າງເບີກບານຕາມຮູບການເທົ່ານັ້ນ, ຂ້າພະເຈົ້າບໍ່ຢາກຊ້ຳເຕີມອາລົມເຈັບປວດເຫລົ່ານີ້ ຈຶ່ງສະແດງຕົວຄືກັບວ່າ ຢູ່ເທິງເວທີສະແດງ, ເຮັດເປັນຜູ້ມີຄວາມສຸກທີ່ສຸດ ຊົມເຊີຍພົນສຳເລັດຂອງຄວາມມຸ່ງຫວັງທີ່ຫມາຍຫມັ້ນໄວ້ຫລາຍກວ່າຫມູ່.

ຕອນທ່ຽງພວກເຮົາເຂົ້ານັ່ງປະຈຳໂຕະອາຫານ ແລະ ໂດຍບໍ່ຄາດຫມາຍໄວ້ກ່ອນ ປາກົດວ່າມີສຽງຫົວຢ່າງເຫລືອເຟືອ. ລາປິດສະແດງລະຄອນຕະຫລົກ ດ້ວຍການເຮັດບົດບາດນັກສຶກສາແຫ່ງມະຫາວິທະຍາໄລກຳມະກອນຂອງພວກເຮົາໃນ ໗ ຫລື ໘ ປີຂ້າງຫນ້າ. ຫມໍສະແດງທ່າເປັນວິສະວະກອນ ຊາໂດຣອບ ພວມຊິຕາຍຍ້ອນເຈັບເອິກ ສ່ວນຢູ່ປາຍຕີນຂອງຫມໍ ນາຍແພດ ບູຣູນ ກັບແວກຊະເນັບ ຊ້ຳສິນນຳການແບ່ງເງິນຄ່າກວດພະຍາດກັນ ໃນຂະນະທີ່ນັກດົນຕີ ກຣາຍນິກ ມາພົບພໍດີແລະຮຽກຮ້ອງໃຫ້ຈ່າຍຄ່າເສບງັນພິທີສິ່ງສະການ ໃນທັນທີ ບໍ່ຊັ້ນຫມໍຈະບໍ່ຫລິ້ນຕໍ່. ເຖິງຢ່າງນັ້ນກໍ່ຕາມ ຢູ່ໃນສຽງຫົວຂອງພວກເຮົາ ກໍ່ຄືການເວົ້າໂຍກຂອງ ລາປິດນັ້ນແລ້ວ ມັນບໍ່ອອກມາຈາກຄວາມມ່ວນຊື່ນເບີກບານແບບທຳມະຊາດເລີຍ ມັນອອກມາໂດຍເຈດຕະນາແທ້ ໆ.

ເວລາບ່າຍສາມໂມງ ພວກເຮົາຈັດແຖວ ແລະ ເອົາທຸງອອກມາ. ພວກນັກສຶກສາຢືນຢູ່ດ້ານຂວາ, ອານໂຕນ ຂັບກວຽນທຽມມ້າບັກນ້ອຍມາແຕ່ທາງຄອກມ້າ, ເດັກນ້ອຍຫລາຍຄົນພາກັນຂິນ

ກະຕ່າເຄື່ອງຜູ້ຈະຈາກໄປຂຶ້ນໃສ່ກວຽນ. ພໍສຸດສຽງບັນຊາ ສຽງກອງກໍດັງລີວຂຶ້ນ ຂະບວນແຖວອອກເດີນໜ້າມຸ່ງສູ່ສະຖານີລົດໄຟ. ປະມານເຄິ່ງຊົ່ວໂມງ ພວກເຮົາກໍຊວ່າງໃຈທີ່ໄດ້ຜ່ານທາງຍ່າງດິນຊາຍພິງ ຕາມແຄມຫ້ວຍ. ໂກໂລມາກ ແລະ ກ້າວເຂົ້າຍໍ່າກໍຫຍ້າຫ້ຽນແຕ່ຫນາ ເຊິ່ງໃນອະດີດເຄີຍເປັນສາຍທາງກວ້າງທີ່ພວກ ຕາຕາກ ແລະ ພວກໂກຊັກ ລ່ອງນ້ຳ ດະນຽບ ເຄີຍບຸກຜ່ານຢຽບຍ່ຳມາແລ້ວ. ນັກຕີກອງຍົກບ່າໄຫລ່ຂຶ້ນ ແລະ ໄມ້ຕີໃນມືກໍຟາດນໍ່າລົງໃສ່ໜ້າກອງຍ່າງຄຶກຄື້ນມ່ວນຊື່ນກວ່າເກົ່າ.

-ຕັ້ງໂຕໃຫ້ຊື່... ເງີຍຫົວໄວ້! ຂ້າພະເຈົ້າບັນຊາຢ່າງເຂັ້ມງວດ.

ໂດຍບໍ່ຫລຽວບາດຕີນຍ່າງ ກາຣາບານົບ ຫັນມາສະແດງລວດລາຍເດັ່ນສະເພາະຂອງມັນ ດ້ວຍການຍິ້ມຢ່າງທະນົງຕົວ, ສະແດງຄວາມເບີກບານແຈ່ມໃສ, ໄມຕີຈິດມິດຕະພາບ ແລະ ຄວາມເຊື່ອໝັ້ນໃນຕົວຂອງຫມໍ ຕໍ່ອະນາຄົດທີ່ຄອງຄອຍຫມໍຢູ່. ຄຽງຂ້າງມັນແມ່ນ ຊາໂດຣອບ, ຫມໍນີ້ເຂົ້າໃຈທັນທີໃນກິລິຍາເຊັ່ນນີ້ ຫມໍຈຶ່ງຟ້າວປັດເປົ່າເຊື່ອງອຳຄວາມຕື່ນເຕັ້ນ ແບບເຂີນອາຍຄືຕາມເຄີຍຂອງຫມໍໄວ້ ໂດຍການພັບຕາຍິບໆແນມໄປຍັງຂອບຟ້າກວ້າງໄກ ແລະແຫງນຫນ້າຂຶ້ນເບິ່ງຈອມທຸງ. ໃນທັນໃດນັ້ນ ກາຣາບານົບ ກໍຮ້ອງເພງຂຶ້ນແຮງສຸດສຽງຂອງມັນ, ຫມົດແຖວພາກັນຮ້ອງໃນທັນທີ. ໃນຫົວໃຈຂອງຂ້າພະເຈົ້າ ມັນຮູ້ສຶກວ່າເວລານີ້ບໍ່ຕ່າງຫຍັງກັບຂະບວນຍ່າງວັນທີ ໑ ພຶດສະພາເລີຍ, ຂ້າພະເຈົ້າສຳນຶກໄດ້ຢ່າງແນ່ໃຈແລ້ວວ່າ ອາລົມຈິດອັນດຽວກັນໄດ້ຜູກຮັດພວກເຮົາ ທັງຂ້າພະເຈົ້າ

ແລະ ເດັກນ້ອຍໄວ້ນຳກັນ. ເຫດການຍິ່ງໃຫຍ່ທັງເດັ່ນທັງສຳຄັນຢ່າງໜຶ່ງ ປາກົດຕົວຂຶ້ນຕໍ່ໜ້າພວກເຮົາ ແລ້ວສິ່ງນັ້ນກໍຄື: ນິຄົມກ້ອກກີ ໄປສົ່ງນັກຮຽນຊຸດທຳອິດຂອງດິນ. ການທີ່ພົບທຸງແພໄໝປິວສະບັດຢູ່ເທິງຄັນທຸງ, ສຽງກ້ອງດັງທຶ້ມໆ ແລະ ແຖວຂະບວນເຄື່ອນໂຄ້ງໄປຢ່າງສວຍງາມນັ້ນ ກໍແມ່ນເປັນການໃຫ້ກຽດແກ່ພວກເຂົາ ໃນຂະນະທີ່ດວງອາທິດສີບົວສົດໃສ ຄ້ອຍຕ່ຳພົກຕົວອອກຈາກຫົນທາງໃຫ້ພວກເຮົານັ້ນ ມັນຄ້າຍກັບວ່າພະອາທິດເອງກໍໄດ້ຮ້ອງລຳ ເພງທຳນອງຕະຫລົກແກມຫວານຮັກ ທີ່ພັນລະນາເຖິງທະຫານມ້າຄົນໜຶ່ງພວມມີຄວາມຮັກແຕ່ໃນຕົວຈິງ ມັນຊ້ຳເວົ້າເຖິງກອງນັກສຶກສາ ມະຫາວິທະຍາໄລກຳມະກອນ ທີ່ພວມອອກເດີນທາງໄປ ຄາຄົບ ຕາມຄຳສັ່ງຂອງສະພານາຍກອງ ມື້ວານນີ້ກອງພິເສດໝາຍເລກ ໆ ທີ່ມີ ອາເລັກຊັງ ຊາໂດຣອບ ເປັນຜູ້ບັນຊາ, ພວກເດັກນ້ອຍຮ້ອງເພງຢ່າງຂຶ້ນອົກຂຶ້ນໃຈ ທັງເສືອດຕາແນມເບິ່ງຂ້າພະເຈົ້າ, ພວກເຂົາດີໃຈທີ່ເຫັນວ່າ ຂ້າພະເຈົ້າເອງກໍເບີກບານຄືກັນ. ທາງເບື້ອງຫລັງພວກເຮົາ ມີຝຸ່ນກຸ້ມຂຶ້ນເປັນລອນຕິດຕາມມາດົນແລ້ວ, ບໍ່ດົນພວກເຮົາກໍຈື່ ຜູ້ຂີ່ມ້າມຸ່ງໜ້າມາຫາພວກເຮົາໄດ້ແກ່ ໂອເລຍ ໂວໂຣໂນວານັ້ນເອງ.

ເມື່ອໂດດລົງມ້າແລ້ວ ນາງບອກຂ້າພະເຈົ້າວ່າ:

- ຂີ່ມ້າແມ້, ອານດີດີ..., ອານທະຫານມ້າແທ້ງລະ, ຂອຍເກືອບມາຊ້າເນາະ.

-ໂຍ້ວ ກັນບໍ່ໄດ້ເປັນຜູ້ບັນຊານ່າ, ໃຫ້ ລາບິດ ສາ... ດຽວ
ນີ້ຫມໍເປັນເລຂາສະພາບາຍກອງເດ້.

-ຖືກແລ້ວ, ລາບິດ ເວົ້າຂຶ້ນແລ້ວໂດດຂຶ້ນມ້າ, ຫມໍເລັ່ງມ້າ ຂຶ້ນໄປບັນຊາຢູ່ຫົວແຖວ ດົນຕົວໂຍກເຍກໂອ່ນໄປມາຢູ່ເທິງອານ ມ້າເບື່ອງຫນຶ່ງຍົກຂຶ້ນລູບຫນວດທີ່ບໍ່ມີຈັກເສັ້ນ.

ຈໍາເປັນໄດ້ອອກຄໍາສັ່ງວ່າ "ຍ່າງຕາມສໍາບາຍ" ເພາະ ໂອເລຍ ນັ້ນຕ້ອງການໂອ້ລົມ ແລະ ລາບິດ ກໍເຮັດໃຫ້ເດັກນ້ອຍຫົວຫລາຍ ໂພດ.

ຢູ່ສະຖານີລົດໄຟ ຄວາມເສົ້າເຫງົາເຢັນຫົວໃຈ ແກມສຽງຫົວ ແຮງໆບໍ່ເປັນລະບົບຍອບຄຸມບັນຍາກາດ. ເມື່ອຂຶ້ນໄປໃນຕູ້ລົດໄຟ ແລ້ວ ພວກນັກສຶກສາຍັງແນມນໍາແຖວເດີນຂອງພວກເຮົາດ້ວຍ ຄວາມພາກພູມໃຈ, ຜູ້ຄົນອື່ນໆຕ່າງກໍແຕກຕື່ນນໍາການປາກົດຕົວ ຂອງພວກເຮົາ.

ເມື່ອສຽງສັນຍານຄັ້ງທີ່ສອງດັງຂຶ້ນແລ້ວ ລາບິດ ຈຶ່ງກ່າວປາໄສ ສັ້ນໆວ່າ:

-ພວກຫມູ່ເອີຍ ລະວັງຢ່າໃຫ້ເສຍກຽດຂອງຊາວນິຄົມເດີ້..., ອາເລັກຊັງ ເບິ່ງແຍງພວກເຂົາດີໆໃດ໋ ສະເພາະແລ້ວຢ່າພາກັນລືມ ເອົາຕູ້ລົດໄຟໄປສົ່ງຄືນຫໍພິພິດທະພັນລະ ແລ້ວຂຽນຈາລຶກໃສ່ນໍາ ວ່າ: ໃນຕູ້ລົດໄຟຕູ້ນີ້ ເຊມີຍົງ ກາຣາບານົບ ໄດ້ນັ່ງເດີນທາງມາ ເພື່ອໄປຍັງມະຫາວິທະຍາໄລກໍາມະກອນ.

ເວລາກັບມາພວກເຮົາເລືອກເອົາກະຫນົນເສັ້ນນ້ອຍໆ ແລະ ແຄບໆ, ມີຂົວຂ້າມເຮັດດ້ວຍລໍາໄມ້, ມີຫ້ວຍນໍ້ານ້ອຍໆ ແລະ

ຮ່ອງທີ່ຕ້ອງໄດ້ເຕັ້ນຂ້າມ. ຈັ່ງຊັ້ນແຖວຍາວຈຶ່ງແຕກເປັນກຸ່ມໃຜກຸ່ມມັນ, ທ່າມກາງແສງສະຫວ່າງອ່ອນໆໃນຍາມອັດສະດົງ ແຕ່ລະຄົນຈຶ່ງສະແດງຄວາມຈິງ ທີ່ເຊື່ອງຊ້ອນໃນວິນຍານຂອງຕົນອອກມາໃຫ້ຫມູ່ຄູ່ຮູ້ນຳແບບອາຍໆ ໂດຍບໍ່ຄູຍໂມ້ໂຍກຂຶ້ນຕື່ມ. ກູດ ເວົ້າວ່າ:

-ເຮົານີ້ບໍ່ໄປເຂົ້າມະຫາວິທະຍາໄລກຳມະກອນ ທາງໃດດອກ, ເຮົາຊິເປັນຊ່າງເຮັດເກີບ ແລະ ເຮັດເກີບດີໆ. ມັນຂີ້ຮ້າຍກວ່າຫມູ່ຊັ້ນຫວະ? ບໍ່ດອກເນາະ... ແຕ່ວ່າມັນໂສກເສົ້າໂພດນ່າເວລາຫມູ່ຈາກໄປ, ມັນທໍລະມານຫົວໃຈໂພດແມ່ນບໍ່?

ກູດລາຕີ ອ້າຍບ່າວນ້ອຍຫນ້າຕຸ່ນ ທັງຍ່າງຂາໂຂງແຕ່ເຄັ່ງຂຶມຈິງຈັງ ເສືອດແສງຕາຮ້າຍໆເບິ່ງຫມໍ.

-ແລ້ວໂຕກໍຈະເປັນຊ່າງເກີບຊະນິດໂຫລທີ່ສຸດ, ອາທິດແລ້ວນີ້ໂຕໃສ່ພື້ນຮອງສົ້ນເກີບໃຫ້ເຮົາເບື້ອງຫນຶ່ງ ຮອດມື້ແລງອອກແລ້ວເດ້. ຊ່າງເກີບແບບນີ້ຂີ້ຮ້າຍກວ່າທ່ານຫມໍ ແຕ່ຊ່າງເກີບດີໆເກາະ... ອາດຈະດີກວ່າແພດຫມໍກໍໄດ້.

ຕອນຄ່ຳ ຄວາມງຽບສະຫງັດບີບຫົວໃຈຢ່າງຫນຶ່ງຄອບງຳໄປທົ່ວນິຄົມ ແຕ່ກ່ອນຈະເຖິງຍາມມອດໄຟ ອິດຊາຈີ ສິບເວນປະຈຳວັນກໍລາກທ້າວ ກູດ ເມົາເຫລົ້າມາຫາ. ເວົ້າແທ້ແລ້ວມັນກໍບໍ່ເມົາມາຍພໍທີ່ໃດດອກ ແຕ່ມັນອ່ອນແອອາລົມລະເມີໄປແດ່ເທົ່ານັ້ນ. ໂດຍບໍ່ເອົາຫົວຊາຕໍ່ຫມູ່ຄູ່ທີ່ຫຸ້ມລ້ອມເບິ່ງມັນຢູ່ ກູດ ຍືນຂຶງຕໍ່ຫນ້າຂ້າພະເຈົ້າ ເວົ້າສຽງຕ່ຳໆ ແສງຕາຈ້ອງເບິ່ງບອກນ້ຳເມິກເທິງໂຕະຂອງຂ້າພະເຈົ້າ:

-ຂ້ອຍເຂົ້າໃຈແລ້ວວ່າເປັນຫຍັງຈຶ່ງຕ້ອງເປັນແນວນີ້, ຂ້ອຍ

ເປັນຊ່າງເກີບ ແຕ່ຂ້ອຍກໍມີຫົວໃຈ ມີວິນຍານດວ່າເບາະ? ຣື... ຂ້ອຍມີ... ແລ້ວ... ບັດຫມູ່ພວກເຮົາຈາກໄປຕັ້ງຫລາຍຄົນແນວນີ້ທັງຊາໂດຣອບ ນຳ ໃຜຊິທົນຕໍ່ໄປໄດ້ແດ່? ບໍ່... ບໍ່ຂ້ອຍທົນບໍ່ໄດ້ ຊັ້ນລະຂ້ອຍກໍເລີຍໄປກິນເຫລົ້າຊະ ເອົາເງິນຂອງຂ້ອຍເອງນີ້ລະ. ເອີ້... ຂ້ອຍໄດ້ແປງພື້ນຮອງເກີບໂບກໃຫ້ຊ່າງສີເຂົ້າເດີ ແມ່ນບໍ່ລະ? ອາໄສເງິນນີ້ແລ້ວຂ້ອຍຊິນ້ຳເມົາໄດ້. ແມ່ນຂ້ອຍໄດ້ຕີໄດ້ຂ້າໃຜເລືອດຕົກຍາງອອກຫວະ? ໄດ້ດ່າວ່າຜິດຖຽງກັບໃຜຫວະ? ຫລືວ່າກຸມປ້ຳຂົ່ມຂືນຜູ້ສາວເບາະ? ບໍ່ເລີຍ ບໍ່ໄດ້ເຮັດຈັກຢ່າງ ແລ້ວມັນຊ້ຳມາຮ້ອງໃສ່ຂ້ອຍວ່າ: ໄປຫາ ອານໂຕນ... ແລ້ວແມ່ນໃຜລະ ອານໂຕນ ແມ່ນເຈົ້າເບາະ ອານໂຕນ ເຊມີວໂນວິດ? ແລ້ວເຈົ້າເດ້ແມ່ນໃຜ? ແມ່ນສັດເດຍລະສານຫວະ? ບໍ່... ບໍ່ແມ່ນສັດ ເຈົ້າເປັນຄົນໂງ່ຈ້າຫລ້າຫລັງບໍ່? ບໍ່ກະບໍ່ແມ່ນ... ເອົາລະຊັ້ນຂ້ອຍກໍເລີຍມາຂໍສະເຫມີກັບເຈົ້າ, ຂ້ອຍທ້າວ ກູດ ຊ່າງເຮັດເກີບຂີ້ຕະລຸ່ຍ!

- ມຶງຊິອົດຟັງກູເວົ້າຈົບສຸດໄດ້ບໍ?

- ເຈົ້າ... ຂ້ອຍສາມາດອົດຟັງສິ່ງທີ່ເຈົ້າຈະເວົ້າໄດ້.

- ເອົາຊັ້ນ ຟັງເດີ້: ການເຮັດເກີບເປັນສິ່ງທີ່ມີປະໂຫຍດ ເປັນສິ່ງທີ່ດີ, ມຶງຈະເປັນຊ່າງເກີບທີ່ດີ ແລ້ວກໍໄດ້ເປັນຜູ້ອຳນວຍການໂຮງງານເກີບ ພຽງແຕ່ວ່າມຶງຊິບໍ່ແຕະຕ້ອງເຫລົ້າອີກເທົ່ານັ້ນ.

- ແມ່ນແຕ່ໃນຍາມແບບນີ້ຫວະ? ຍາມຫມູ່ຮັກຫມູ່ແພງຫນີຈາກຈັ່ງຊີ້.

- ເອີ້, ແມ່ນແຕ່ຍາມຈັ່ງຊີ້.

-ໝາຍຄວາມວ່າ... ຂ້ອຍກິນເຫຼົ້າຜິດຊັ້ນຫວະ ໃນສາຍຕາຂອງເຈົ້ານະ?

-ເອີ ມຶງເຮັດຜິດ.

-ຊັ້ນກະແປວ່າເຮັດຫຍັງບໍ່ໄດ້ແລ້ວເນາະ, ເຈົ້າຊິລົງໂທດຂ້ອຍເນາະ, ກູດ ກົ້ມຫົວລົງຕ່ຳໆ.

-ໄປນອນສາ, ເທື່ອນີ້ບໍ່ລົງໂທດດອກ.

-ກູວ່າແລ້ວນ່າ! ກູດ ປະກາດກ້ອງກັບໝູ່ທີ່ຢືນຫຸ້ມລ້ອມມັນຢູ່ ທັງກວາດແສງຕາເຍາະເຍີ້ຍໄປຫາທຸກຄົນ ຈາກນັ້ນໝໍຈຶ່ງຍົກມືເຄົາລົບ ຕາມແບບຊາວນິຄົມ:

-ເຂົ້າໃຈແລ້ວສະຫາຍ!

ລາບິດ ໂຈມກ້ອງຂີ້ແຮ້ມັນແລ້ວພາໄປສົ່ງຫໍພັກແຕ່ໂດຍດີຄ້າຍໆກັບວ່າມັນເປັນຕົວແທນແຫ່ງຄວາມເຈັບປວດ ທໍລະມານຂອງນິຄົມ.

ເຄິ່ງຊົ່ວໂມງຕໍ່ມາ ກູດລາຕີ ກໍເລີ່ມແຈກຢາຍເກີບລະດູໜາວໃຫ້ແກ່ສະມາຊິກຢູ່ ຫ້ອງການຂອງຂ້າພະເຈົ້າ. ເມື່ອດຶງແອບເກີບຄູ່ໃໝ່ອ່ຽມອອກມາຢ່າງກະນຸກະໜອມແພງແລ້ວໝໍ ກໍຈັດແບ່ງໄວ້ເປັນໝວດກອງຕາມບັນຊີ, ຢູ່ປາກປະຕູມີຄົນຮ້ອງເຂົ້າມາໃສ່ວ່າ:

-ເຮີຍ ປານໃດໂຕຊິໃຫ້ປ່ຽນເກາະ, ຄູ່ຂອງເຮົາຄັບໂພດ.

ກູດລາຕີ ຕອບໄປຕອບມາຫລາຍເທື່ອ ໃນທີ່ສຸດກໍໂມໂຫຂຶ້ນ:

-ເຮົາບອກພວກໂຕຈັກເທື່ອແລ້ວວ່າ ເຮົາບໍ່ໃຫ້ໃຜປ່ຽນໃນມື້ນີ້, ມື້ອື່ນຈຶ່ງມາປ່ຽນ ພວກຫົວຂີ້ເລື່ອຍເອີ້ຍ!

ຢູ່ຂ້າງໂຕະເຮັດວຽກຂອງຂ້າພະເຈົ້າ, ລາບິດ ເຮັດຫນ້າຂຶມ ຫົວຄີ້ວຢູ່ ແລະ ເວົ້າກັບ ກູດລາຕີ ວ່າ:

- ສະຫາຍ, ຜູ້ຊາຍຕ້ອງສຸພາບອ່ອນນ້ອມກັບລູກຄ້າເດີ!

ບົດທີ ໑໔

ລະດູໃບໄມ້ຫລົ່ນ

ອີກຄັ້ງຫນຶ່ງ ທີ່ລະດູຫນາວໄດ້ວົນວຽນມາຢ້ຽມຢາມພວກເຮົາ. ມາຮອດເດືອນຕຸລາພວກເຮົາຈຶ່ງຈັດການກັບ "ບວກຕີ" ເພື່ອມ້ຽນ ຫົວຜັກກາດໃຫ້ສັດ ທີ່ຍາວເປັນຊາວໆແມັດນັ້ນແລ້ວ ແລະ ລາບິດ ກໍສະເຫນີຕໍ່ສະພານາຍກອງວ່າ:

- ມີການຕົກລົງວ່າ: ຫັນໃຈຢ່າງໂລ່ງອົກໄດ້.

"ບວກຕີ" ແມ່ນຮ່ອງເລິກ ແລະ ຍາວປະມານຊາວແມັດ. ແຊເຣີ ໃຫ້ຂຸດໄວ້ສິບກວ່າຮ່ອງສໍາລັບລະດູຫນາວນີ້ ແຕ່ເຂົາຍັງຍືນ ຢັນວ່າເທົ່ານີ້ຍັງຫນ້ອຍໂພດຢູ່ ແລະ ພວກເຮົາກໍຕ້ອງປະຢັດຫົວ ຜັກກາດອາຫານສັດນີ້ໄວ້ໃຫ້ໄດ້ຫລາຍທີ່ສຸດນໍາ ຕ້ອງເຂົາຜັກກາດ ເຫລົ່ານີ້ລົງມ້ຽນໃນຮ່ອງຢ່າງລະມັດລະວັງ ພໍປານວ່າມັນແມ່ນເຄື່ອງ ແກ້ວປະກອບແວ່ນຕາພຸ້ນລະ, ແຊເຣີ ນັ້ນມີວິທີພາໂຕເອງມາຢູ່ປະ ຈໍາການແຕ່ເຊົ້າເທົ່າຄໍ່າເພື່ອບັນຊາກອງພິເສດ ແລະ ຮ້ອງເຕືອນຢູ່ ບໍ່ເຊົາວ່າ:

- ຄ່ອຍໆແດ່, ຂໍທານນໍາພວກສະຫາຍ, ຢ່າໂຍນມັນແບບນັ້ນ ແມ້, ຂ້ອຍຂໍນໍາ, ຢ່າເບິ່ງໄປທາງອື່ນເວລາພວກເຈົ້າຕີຫົວຜັກກາດ ຫົວດຽວແຮງໆຫັ້ນນ່າ ມັນຈິເລີ່ມຊໍ້າບ່ອນນັ້ນລະ ແລ້ວຕໍ່ໄປຫົວຜັກ

ກາດກໍຈະເປື່ອຍເນົ່າຕິດຕໍ່ອອກທົ່ວຮ່ອງພຸ້ນລະ, ພວກສະຫາຍ... ຂໍທານນຳເອົາໃຈໃສ່ຕື່ມແດ່.

ຍ້ອນຄວາມເມື່ອຍອ່ອນຕ່ວງກາງານອັນຊ້ຳເກົ່າ ຫນ້າເບື່ອຫນ່າຍອັນນີ້ ພວກເດັກນ້ອຍຈຶ່ງບໍ່ພາດໂອກາດສ້າງບັນຍາກາດ ໂດຍຫມູນໃຊ້ຫົວເລື່ອງຍອດນິຍົມທີ່ ແຊເຣີ ປະດິດຂຶ້ນເພື່ອມ່ວນຊື່ນຍ່ອນອາລົມກັນຈັກຫນ້ອຍ. ພວກເຂົາພາກັນເລືອກເອົາຫົວຜັກງາມໆທັງຕຶ່ງທັງກ້ຽງຫົວຫນຶ່ງອອກມາຈາກກອງ, ແລະ ສະມາຊິກຫມົດກອງກໍມາຕີວົງອ້ອມ ທ້າວນາຍກອງ ຊຶ່ງແມ່ນເດັກນ້ອຍປະເພດທົ່ວໄປ ຈະຍົກມືຂຶ້ນ ຈ່າງນິ້ວອອກ ແລ້ວຊື່ມບອກຄ່ອຍໆວ່າ:

- ໂຕຖອຍອອກ, ຢ່າຫັນໃຈ, ມືໃຜສະອາດເອີ້ຍ?

ເປຫາມເປຫນຶ່ງຖືກຫາມອອກມາວາງລົງຂ້າງໆ, ດ້ວມືຂອງນາຍກອງຍົບຫມຸນເອົາຫົວຜັກອອກຈາກກອງ ຢ່າງຄ່ອຍເບົານິ່ມນວນ ແຕ່ໃນທັນໃດກໍມີສຽງຮ້ອງຈ໊ວດຂຶ້ນທັນທີ:

- ໂຕເຮັດຫຍັງຫັ້ນນ່າ? ແມ່ນໂຕເຮັດຫຍັງ?

ທຸກຄົນຢຸດສະງັກ ຕາເຫລືອກຊົ້ນຍ້ອນຄວາມຕື່ນຢ້ານ ບາດແລ້ວຈຶ່ງຖືກຫົວເກືອບພ້ອມໆກັນເປັນສັນຍານວ່າເຂົ້າໃຈ ເມື່ອສຽງນັ້ນເວົ້າຕໍ່ວ່າ:

- ຕ້ອງລະວັງແທ້ໆໃດ໋!

ຜູ້ໃດຜູ້ຫນຶ່ງແກ້ຊຸດກັນເປື້ອນອອກກ່ອນຫມູ່ ພັບກໍ້ເຂົ້າເປັນຄືຫມອນຮອງແລ້ວຈຶ່ງວາງລົງເປຫາມ ຈາກນັ້ນຫົວຜັກກາດນ້ອຍທີ່ກົມກ້ຽງຕຶ່ງເຕັມດີຈຶ່ງຖືກວາງລົງຢ່າງບັນຈົງນຸ່ມນວນ. ເພື່ອບໍ່ໃຫ້ຫົວອອກມາແຮງໂພດ ແຊເຣີ ຈຶ່ງດຶງຫຍ້າເສັ້ນຫນຶ່ງຂຶ້ນມາຫຍ້ຳ

ຫລົ້ນ. ເປຫານກຶກຍົກຂຶ້ນຈາກຫນ້າດິນແລ້ວ; ມິເຕຍ ຊຶ່ມຊັບວ່າ:

-ຄ່ອຍໆ... ຄ່ອຍໆແດ່ສະຫາຍເອີຍ! ເບິ່ງດີໆ, ບ່ອນຊ້ຳບ່ອນນູນເລີ່ມຕົ້ນຢູ່ນີ້ລະ, ຂ້ອຍຂໍນຳຫລາຍໆ.

ນ້ຳສຽງຂອງມິເຕຍ ຄ້າຍຄືສຽງຂອງ ແຊເອີ ຢູ່ແດ່ ຈົ່ງຊັ້ນເອດວກ ນິໂກລາຍວິດ ແຊເອີ ຈຶ່ງບໍ່ໂຍນເສັ້ນຫຍ້າກົ້ມ.

ວຽກງານລະດູໃບໄມ້ຫລົ່ນສຳເລັດຮຽບຮ້ອຍໄປແລ້ວ. ສະໄຫມນັ້ນ ພວກເຮົາຫາກໍເລີ່ມຄິດຝັນເຖິງລົດໄຖ, ແລະ ກ່າວ່າອາໄສໄຖແລະ ມ້າຄ້ານຄູ່ນີ້ ພວກເຮົາໄຖດິນໄດ້ມື້ຫນຶ່ງບໍ່ກາຍເຄິ່ງເຮັກຕາ. ສິ່ງດັ່ງກ່າວເຮັດໃຫ້ ແຊເອີ ຄຶດຫນັກແລະວິຕົກແຮງເມື່ອສັງເກດເບິ່ງວຽກງານຂອງກອງພິເສດທີ I ແລະ ທີ II. ຢູ່ໃນກອງເຫລົ່ານີ້ມີຕົວແທນທີ່ເຄີຍຜ່ານບົດຮຽນມາຫລາຍແລ້ວຮ່ວມຢູ່ນຳ ທັງມີນາຍກອງຜູ້ເຂັ້ມແຂງຮ່າງກົດເຊັ່ນ ເຟໂດເຣັນໂກ, ໂກຣິໂຕ, ໂຊບົດ, ເຖິງແມ່ນວ່າ ພວກເຂົາເຫລົ່ານີ້ມີເຫື່ອແຮງບໍ່ດ້ອຍໄປກວ່າມ້າຄູ່ຫນຶ່ງແລະ ຮູ້ຈັກວຽກງານ ການໄຖນີ້ຢ່າງເລິກເຊິ່ງກໍຈິງ, ແຕ່ພວກສະຫາຍເຫລົ່ານີ້ ຊ້ຳໄດ້ນຳເອົາວິທີໄຖນາມາໃຊ້ກັບຊີວິດຢູ່ໃນຂົງເຂດອື່ນຢ່າງບໍ່ຖືກຕ້ອງເລີຍ. ຢູ່ໃນການດຳລົງຊີວິດຮວມຫມູ່ ກໍຄືຢູ່ໃນຂົງເຂດໄມຕີຈິດມິດຕະພາບ ຢູ່ໃນການຄິງຕົວແບບສ່ວນຕົວ ພວກເຂົາມັກຮ່ອງຊື່ໆແລະເລິກໆທັງນັ້ນ. ແຮງງານຂອງແນວຄວາມຄິດບໍ່ດຳເນີນເກີດຂຶ້ນຢູ່ໃນມັນສະຫມອງຂອງພວກເຂົາ ແຕ່ເກີດຂຶ້ນບ່ອນອື່ນພຸ້ນຫລາຍກວ່າ ຄືໃນກ້າມຊີ້ນແຂງແກ່ນປານເຫລັກ, ຢູ່ໃນໂຄງກະດູກເອິກທີ່ແຂງຫນຽວ ແລະ ຕາມສວ້າງແອວທີ່ແຂງແຮງແບບພິລຶກ. ຢູ່ທີ່ນີ້ຄືມ ພວກເຂົາຕ້ານທານສູ້ທົນກັບມົນສະເຫນທຸກຢ່າງ

ຂອງມະຫາວິທະຍາໄລກຳມະກອນ ແລະ ດ້ວຍຄວາມຫມັ່ນປະຫມາດແບບງຽບໆ ບໍ່ກ່າວເຖິງການໂອ້ລົມເຖິງວິທະຍາສາດທຸກປະເພດ. ກ່ຽວກັບບາງຈຸດນັ້ນພວກເຂົາມີຄວາມເຊື່ອຫມັ້ນອັນຖາວອນແລ້ວ ແລະ ບໍ່ມີເດັກນ້ອຍນິຄົນຄົນໃດດອກທີ່ບໍ່ເປີດຫນ້າໄວ້ຢ່າງໃຈກວ້າງ ແລະ ທະນົງຕົວ ທັງເຊື່ອຫມັ້ນ ແລະ ຂີ້ຖີ່ຄຳປາກເວົ້າຂອງຕົນ.

ຍ້ອນບົດບາດເຄື່ອນໄຫວອັນຫ້າວຫັນຂອງພວກເຂົາຢູ່ໃນກອງພິເສດທີ I ແລະ ທີ II ພວກເດັກນ້ອຍເຫລົ່ານີ້ຈຶ່ງໄດ້ຮັບຄວາມເຄົາລົບຢ່າງເລິກເຊິ່ງຈາກຫມົດທຸກຄົນ, ແຕ່ເຖິງຢ່າງໃດກໍຕາມ ຜູ້ມັກຢອກໄຍຂອງພວກເຮົາບໍ່ອາດຫັກຫ້າມຄຳຕິຊົມສຽດສີແຮງໆໃສ່ພວກເຂົາໄດ້.

ໃນລະດູໃບໄມ້ຫລົ່ນປີນີ້ ກອງພິເສດທີ I ແລະ ທີ II ກໍເກີດປະທະກັນຢູ່ກະໂຕກາງເດີ່ນແຂ່ງຂັນແຮງງານ. ໃນເບື້ອງນັ້ນ ການແຂ່ງຂັນຍັງບໍ່ແມ່ນສິ່ງຂີດຫມາຍເດັ່ນຂອງການອອກແຮງງານ ແບບໂຊວຽດ ໃນທົ່ວໆໄປ ແລະ ຍ້ອນສາເຫດນີ້ເອງ ຂ້າພະເຈົ້າຍັງເຄີຍໄດ້ຮັບທຸກທໍລະມານ ຢູ່ໃນຫ້ອງທໍລະມານຂອງກະຊວງສຶກສາ. ຂ້າພະເຈົ້າສາມາດເວົ້າແກ້ໂຕໄດ້ແຕ່ວ່າ ການແຂ່ງຂັນຂອງພວກເຮົາກືກຳເນີດຂຶ້ນຢ່າງບໍ່ຄາດຝັນ ແລະ ຢູ່ນອກເຈດຕະນາລົມຂອງຂ້າພະເຈົ້າອີກຊ້ຳ.

ກອງພິເສດທີ I ເຮັດວຽກແຕ່ ໖ ໂມງເຊົ້າເຖິງທ່ຽງ, ແລະ ກອງທີ II ເລີ່ມແຕ່ທ່ຽງເຖິງ ໖ ໂມງແລງ ກອງພິເສດເຫລົ່ານີ້ຄົງຕົວຢູ່ປະມານອາທິດຫນຶ່ງ, ອາທິດຕໍ່ໄປ ການຊັບຊ້ອນກຳລັງ

ພາຍໃນກອງພິເສດປ່ຽນແປງໄປນຳແຕ່ລະເທື່ອ ເຖິງແມ່ນວ່າມັນມີຄວາມຊຳນິຊຳນານອັນໃດອັນຫນຶ່ງຢູ່ແລ້ວກໍຕາມ.

ແຕ່ລະມື້ ກ່ອນທີ່ແຕ່ລະກອງພິເສດຈະຍຸດຕິວຽກງານ ອາໂລດຊາ ໂວນກອບ ຮອງຫົວຫນ້າກະເສດຂອງພວກເຮົາກໍຖື "ສ້ອມສຽບ" ດວງຫນຶ່ງ ຍາວຂະຫນາດສອງແມັດໄປແທກພື້ນທີ່ຊຶ່ງແຕ່ລະກອງບຸກເບີກໄດ້.

ກອງພິເສດໄກນາດີ ແຕ່ຍ້ອນດິນມີບ່ອນຫລຸບບ່ອນໂນນຫລາຍ, ສະພາບຂອງມ້າແດ່, ເບີນແດ່ ອາກາດ ແລະ ປັດໃຈພາຍນອກອື່ນໆອີກ ຈຶ່ງເຮັດໃຫ້ມີຄວາມບໍ່ສະຫມ່ຳສະເຫມີເລີຍ. ເທິງກະດານໄມ້ທີ່ຫ້ອຍເພື່ອຕິດຕາມປະກາດທຸກປະເພດ ອາໂລດຊາ ໂວນກອບ ເອົາສໍຂາວຂຽນໃສ່ວ່າ:

໑໒ ຕຸລາ ກອງພິເສດ I ໂກຣິໂຕ......... ໘໓໔໐ ມ^{2}

໑໒ ຕຸລາ ກອງພິເສດ I ແວັດກັບສະກີ.... ໘໓໐໐ ມ^{2}

໑໒ ຕຸລາ ກອງພິເສດ II ເຟໂດເຣັນໂກ.... ໘໔໑໐ ມ^{2}

໑໒ ຕຸລາ ກອງພິເສດ II ເບດຊີຕາຍໂລ.... ໘໘໗໐ ມ^{2}

ຈັ່ງຊັ້ນ ພວກເດັກນ້ອຍກໍເລີຍເກີດຄວາມມ່ວນໄປນຳການສົມທຽບຜົນງານຈາກການເຮັດວຽກຂອງພວກເຂົາເອງ ເທື່ອລະກ້າວ ແລະ ແຕ່ລະກອງພິເສດຈຶ່ງພະຍາຍາມອອກແຮງສຸດຂີດເພື່ອໃຫ້ລື່ນພວກເກົ່າ. ພົບປາກົດວ່າ ເຟໂດເຣັນໂກ ກັບ ໂກຣິໂຕ ເປັນນາຍກອງທີ່ດີເດັ່ນກວ່າຫມູ່, ແລະ ເປັນຜູ້ມີຊື່ຢູ່ແຖວທີ່ຫນຶ່ງໃນບັນຊີເລື້ອຍໆ. ເຖິງວ່າພວກນີ້ເປັນຫມູ່ເພື່ອນເກົ່າແກ່ກັນມາດົນແລ້ວກໍຕາມ ແຕ່ສິ່ງດັ່ງກ່າວນີ້ບໍ່ສາມາດເກືອດຫ້າມຄວາມອິດສາລິດ

ສະຫາຍາຕໍ່ກັນໄດ້ ທັງພະຍາຍາມເຈາະຈົ້ມຫາບ່ອນອ່ອນຢູ່ໃນວຽກງານຂອງອີກຜູ້ຫນຶ່ງສະເຫມີ. ໃນເງື່ອນໄຂເຊັ່ນນີ້ ເຟໂດເຣັນໂກຈຶ່ງພະເຊີນກັບການທົດສອບສຸດເຈັບແສບຢ່າງຫນຶ່ງ ຊຶ່ງເປັນສິ່ງພິສູດໃຫ້ທຸກຜູ້ທຸກຄົນໄດ້ເຫັນປະຈັກຕາວ່າ ຫມໍກໍເປັນຄົນເອົາຈິງເອົາຈັງຄືກັນ. ນັບເປັນເວລາເຫິງເຕີບແລ້ວ ທີ່ເຟໂດເຣັນໂກເປັນຜູ້ນຳຫນ້າຢູ່ໃນກອງພິເສດທຸກໆກອງ, ຕົວເລກທີ່ ອາໂລດຊາໂວນກອບ ຂຽນໃສ່ແຜ່ນກະດານນັ້ນ ຍາມໃດກໍຢູ່ລະຫວ່າງ ໔໔໕໐ ຫາ ໔໖໐໐ ສະເຫມີ. ກອງທີ່ ໂກຣີໂຕ ບັນຊາ ພະຍາຍາມໄລ່ຕິດຕາມ ແຕ່ກໍຍັງຫລ້າຫລັງຢູ່ປະມານ ໕໐ ຫາ ໕໐ ແມັດມົນທົນສະເຫມີ ຈັ່ງຊັ້ນ ເຟໂດເຣັນໂກ ຈຶ່ງເວົ້າຍອກຫມູ່ວ່າ:

- ເຊີນ່າ... ເຊີນ່າສ່ຽວ... ພວກໂຕຍັງຫນຸ່ມນ້ອຍໂພດ.

ໃນທ້າຍເດືອນ ຕຸລາ ອີໂຊຣກາ ລົ້ມປ່ວຍ, ແຊເຣີ ເອົາມ້າຄູ່ດຽວເຂົ້າໃສ່ໄກ, ເພື່ອໃຫ້ໄດ້ແຮງຫນູນຊ່ອຍລາວຈຶ່ງສະເຫນີຕໍ່ສະພານາຍກອງໃຫ້ຍ້າຍ ເຟໂດເຣັນໂກ ມາຢູ່ກອງພິເສດຂອງ ໂກຣີໂຕ.

ທຳອິດ ເຟໂດເຣັນໂກ ບໍ່ສັງເກດເຫັນສະພາບອັນໂສກເສົ້າແສບໃຈ ຂອງໂຕມັນເອງ ເພາະວ່າຄວາມເຈັບປ່ວຍຂອງ ອີໂຊຣກາ ແລະ ຄວາມຈຳເປັນໃນການຮີບຮ້ອນໄກນາໂດຍອາໄສໄກຄັນດຽວນັ້ນ ໄດ້ຫນີບເຕັງກົດຫນ່ວງຫົວໃຈ ພໍແຮງແລ້ວ. ຫມໍກະໂດດເຂົ້າໃສ່ວຽກງານຢ່າງເອົາເປັນເອົາຕາຍ ແລະ ຕາດີຂຶ້ນກໍຕໍ່ເມື່ອເຫັນອາໂລດຊາ ໂວນກອບ ຂຽນໃສ່ແຜ່ນກະດານວ່າ:

໔໕ ຕຸລາ ກອງພິເສດທີ II ໂກຣີໂຕ..... ໔໗໖໐ ມ^3

ໂກຣີໂຕ ພາກພູມໃຈແຮງທີ່ໄດ້ຮັບໄຊຊະນະ ແລະ ລາປິດກໍ່ທ່ຽວປະກາດໃນທົ່ວນິຄົມວ່າ:

-ເຮີ້... ເບິ່ງເອົາແມ້ ເຮັດແນວໃດຫນໍ ເຟໂດເຣັນໂກ ຈັ່ງຊິສູ້ກັບ ໂກຣີໂຕ ໄດ້! ໂກຣີໂຕ ຫນໍເປັນກະເສດຕະກອນເດີ້... ສ່ວນ ເຟໂດເຣັນໂກ ຫວະ ຍັງຊິຄອງເບິ່ງໄປອີກກ່ອນ!

ພວກເດັກນ້ອຍອ້ອມ ໂກຣີໂຕ ໂຍນຂຶ້ນ ທັງຮ້ອງໄຊໂຍ ສ່ວນ ເຟໂດເຣັນໂກຍັດມືທັງສອງລົງໃນກົງສົງ, ໃບຫນ້າເມັ່ນຈີດ ກັດແຂ້ວເວົ້າດ້ວຍຄວາມອິດສາວ່າ:

-ຫນໍ ໂກຣີໂຕ ນັ້ນຫວະຊິເປັນກະເສດ? ຮື! ນັກກະເສດແບບນີ້ຫວະ... ກັນບໍ່ເຄີຍເຫັນຈັກເທື່ອເວີ້ຍ!

ມີຜູ້ສົ້ລົມ ເຟໂດເຣັນໂກ ດ້ວຍຄຳຖາມໄຮ້ດຽງສາວ່າ:

-ໂຕຮັບຮູ້ແລ້ວຕີວ່າ ໂກຣີໂຕ ແພ້ແລ້ວ?

ແຕ່ ເຟໂດເຣັນໂກ ຄິດພໍ້ແນວອື່ນແລ້ວ, ຢູ່ໃນກອງປະຊຸມສະພານາຍກອງ ຫນໍປະກາດວ່າ:

-ເປັນຫຍັງ ໂກຣີໂຕ ຈຶ່ງອວດອ້າງແທ້? ອາທິດນີ້ອີກກໍຍັງຈະຕ້ອງໄກນາດ້ວຍມ້າຄູ່ດຽວຢູ່. ຍ້າຍ ໂກຣີໂຕ ໄປຢູ່ກອງພິເສດທີ! ແມ້ ຂ້ອຍຊິເຮັດໃຫ້ໄດ້ຮອດ ໙໐໐໐ ມ⁶ ພຸ້ນລະ!

ສະພານາຍກອງອອນຊອນຕໍ່ພຶກໄຫວຂອງ ເຟໂດເຣັນໂກ ຈຶ່ງເຮັດຕາມຂໍ້ສະເຫນີຂອງຫນໍ. ໂກຣີໂຕ ແກວ່ງຫົວໄປມາ ແລ້ວເວົ້າວ່າ:

-ໂອ່... ຈັ່ງແມ່ນມັນຂີ້ລັກເວີ້ຍ ຫນໍ ເຟໂດເຣັນໂກ ນີ້!

-ໂຕລະວັງໄວ້ໃຫ້ດີຫັນເທາະ! ເຟໂດເຣັນໂກ ເວົ້າເນັ້ນແຂ້ວ

ກັບຫມໍ. - ເວລາເຮົາເຮັດວຽກກັບໂຕ ເຮົາສຸມຈິດໃຈໃສ່ສຸດຂີດ, ບັດນີ້ກ້າໂຕລອງອໍແອ້ເບິ່ງ ຊິເຫັນດີກັນ...

ກ່ອນຈະລົງມືເຮັດວຽກແທ້ໆ ໂກຣີໂຕ ຈຶ່ງເຫັນວ່າສະການະການຂອງຫມໍນັ້ນ ຫຍຸ້ງຍາກກັບດານສົມຄວນ.

- ເອົາລະ ຈະເຮັດແນວໃດໄດ້, ເຟໂດເຣັນໂກ ກໍແມ່ນ ເຟໂດເຣັນໂກ ຄືເກົ່າ ແຕ່ທົ່ງນາກໍແມ່ນທົ່ງນາ, ກ້າພວກຫມູ່ພາກັນເວົ້າວ່າ ເຮົາເຮັດເສັ້ນຫມໍ ເຟໂດເຣັນໂກ ຄືນ, ວ່າເຮົາເຮັດວຽກບໍ່ດີ ອັນນີ້ມັນກໍບໍ່ດີຄືກັນ.

ເຟໂດເຣັນໂກ ກັບ ໂກຣີໂຕ ຫົວອີກໆໄປນຳກັນ ເມື່ອອອກໄປເຮັດວຽກໃນຕອນເຊົ້າ, ເຟໂດເຣັນໂກ ວາງທ່ອນໄມ້ໃຫຍ່ລົງໃສ່ຄົນໂກແລ້ວບອກຫມູ່ວ່າ:

- ໂຕເຫັນຕິ ທ່ອນໄມ້ອັນນີ້? ເຮົາຊິບໍ່ເຮັດມືອ່ອນກັບໂຕເດີ້ຢູ່ທົ່ງນານະ.

ໂກຣີໂຕ ຫນ້າແດງຮຶບຂຶ້ນກ່ອນດ້ວຍຄວາມຮູ້ສຶກເກິງການະອັນກັນດານຂອງຕົນ ບາດແລ້ວຫມໍຈຶ່ງຫົວຂຶ້ນ.

ເມື່ອ ອາໂລດຊາ ກັບມາແຕ່ທົ່ງນາໄກພ້ອມດ້ວຍ "ສ້ອມໃຫຍ່" ນັ້ນ ຫມໍຈິກເຂົ້າໃນກົງສົງຄົນເອົາສໍຂາວແຫ່ງກັນໆອອກມາ, ພວກຫມູ່ຫຸ້ມການຫມໍດ້ວຍຄວາມໃຈຮ້ອນວ່າ:

- ເຮີຍ ເປັນແນວໃດເວີ້ຍ?

ອາໂລດຊາ ຂຽນຂໍ້ຄວາມລົງໃສ່ກະດານຊ້າໆ ແລະ. ບໍ່ປາກຫຍັງຈັກຄວາມວ່າ:

໔໖ ຕຸລາ ກອງພິເສດ ! ເຟໂດເຣັນໂກ... ໓໐໑໐ ມ ^{6}.

- ໂຫ້... ເບິ່ງຕິ... ໂຫ້ໆ... ຫມໍ ເຟໂດເຣັນໂກ ນະ... ຕັ້ງສາມພັນ.

ເຟໂດເຣັນໂກ ກັບມາພ້ອມໆກັບ ໂກຣິໂຕ, ພວກເດັກນ້ອຍ ໃຫ້ໄປຕ້ອນຮັບມັນໃນຖານະຜູ້ຊະນະເລີດ ແລ້ວ ລາປິດ ກໍເວົ້າວ່າ:

-ເຮົາເວົ້າແລ້ວບໍ່ວ່າ ຈ້າງໃຫ້ຫມໍ ໂກຣິໂຕ ນໍາຮອຍຫມໍ ເຟໂດເຣັນໂກ ກະບໍ່ທັນ! ຫມໍນີ້ຫວະ ມັນຕັ້ງວ່າ ແມ່ນນັກກະເສດ ແທ້ໆນີ້ໃດ໋!

ເຟໂດເຣັນໂກ ແນມເບິ່ງ ລາປິດ ດ້ວຍທ່າທີສົງໄສ ແຕ່ຫມໍ ຄຶດຢ້ານທີ່ຈະເວົ້າແນວໃດແນວຫນຶ່ງ ກ່ຽວກັບຍຸດໂທບາຍເວົ້າຍ້ອງ ຍໍຂອງຝ່າຍນີ້ ເພາະວ່າເຫດການທັງຫມົດບໍ່ໄດ້ເກີດຂຶ້ນຢູ່ທົ່ງນາ ແຕ່ຢູ່ໃນເດີ່ນຈັ່ງຊີ້ ເຟໂດເຣັນໂກ ຮູ້ສຶກບໍ່ເຊື່ອຫມັ້ນໃນຕົວເລີຍ.

-ໂກຣິໂຕ, ໂຕຖືກຕີຫວະນີ້? ລາປິດ ຖາມຂຶ້ນ.

-ມັນເປັນແນວນີ້ບ່າພວກຫມູ່ເອີຍ, ມັນ... ມັນບໍ່ຖືກດອກ ແລ້ວກະ ເຟໂດເຣັນໂກ ຫັນເກາະ ຫມໍກໍາທ່ອນໄມ້ອອກໄປທົ່ງນາ ພ້ອມໃດ໋, ຊິລະເລື່ອງມັນນະ.

-ກະຂອງແນ່ລະ ທີ່ວ່າກັບເອົາຄ້ອນໄປນໍາ, ເຟໂດເຣັນໂກ ຕອບຮັບ, -ເອົາໄວ້ຂູດຫມາກສີບໄກໄຈ້ດິນອອກຈັ່ງໃດລະ.

-ແລ້ວມັນຍັງເວົ້າອີກວ່າ: "ກັນຊິບໍ່ອີແອ້ກັບໂຕເດີ້".

-ແລ້ວເລື່ອງຫຍັງກັນຈັ່ງຊີ້ອີແອ້ຫລິ້ນລະ, ຢູ່ນີ້ກັນເວົ້າອີກກໍ ຍັງໄດ້ວ່າ ການທີ່ໂຕມາຢູ່ໃຕ້ບັນຊາເຮົານັ້ນ ມັນບໍ່ແມ່ນມາເພື່ອອີ ແອ້ຢອກຫລິ້ນ..., ໂຕບໍ່ແມ່ນສາວນ້ອຍນີ້ບ່າ.

-ແລ້ວມັນເອົາແສ້ຟາດໂຕຈັກເທື່ອລະ? ພວກເດັກນ້ອຍຖາມ ຂຶ້ນແຊວໆ.

-ໂອ່... ເຮົາຢ້ານທ່ອນໄມ້ຫລາຍ ກໍເລີຍເຮັດວຽກຢ່າງບໍ່ມີນ ຫູມືນຕາ ຈັ່ງຊັ້ນມັນກໍເລີຍບໍ່ໄດ້ອອກແຮງຈັກເທື່ອ... ແລ້ວກະເອີ້... ໂຕກະບໍ່ເຫັນວ່າຊິໃຊ້ທ່ອນໄມ້ ເຂ່ຍດິນອອກຈາກຫມາກສີບໄກຈັກເທື່ອເວີ້ຍ ເຟໂດເຣັນໂກ.

-ເອີ້ ກັນກໍເອົາໄປເພື່ອໄວ້ຊື່ໆນີ້ແລ້ວ ແຕ່ອອກໄປຮອດທົ່ງແລ້ວມືວິທີງ່າຍກວ່າເວີ້ຍ.

-ໃນເມື່ອມັນບໍ່ໄດ້ດີໂຕຈັກບາດແລ້ວ ມັນກໍບໍ່ມີເລື່ອງຫຍັງແລ້ວ, ລາປິດອະທິບາຍ, -ໂກຣີໂຕ ເອີຍ, ໂຕວາງແຜນຜິດພາດໄປແລ້ວ, ໂຕຄວນເຮັດແນວນີ້ຫລາຍກວ່າເຮົາວ່ານະ: ບໍ່ຕ້ອງຟ້າວຕ້ອງຝັ່ງຫຍັງຫມົດ ແລ້ວກະຜິດຖຽງກັບນາຍກອງຂອງໂຕຂຶ້ນເວລານັ້ນ ມັນກໍຈະດຶງເອົາອຸປະກອນໃນມືຂອງມັນອອກມາສະແດງລວດລາຍ... ເວລານັ້ນມັນກໍຈະເປັນເລື່ອງໄປເດີ້: ຕ້ອງໄຂສະພານາຍກອງ, ໄຂຫ້ອງການກິນໂຊໂມນ, ໄຂກອງປະຊຸມໃຫຍ່... ໂອ້... ໂອ່ຍ... ບໍ່ອຶດ...

-ກັນໂລດຄຶດບໍ່ອອກເວີ້ຍ! ໂກຣີໂຕ ເວົ້າ.

ຈັ່ງຊັ້ນ ໄຊຊະນະຈຶ່ງຍັງເປັນຂອງ ເຟໂດເຣັນໂກ ຢູ່ ຍ້ອນຄວາມສູ້ທົນເດັດດ່ຽວ ແລະ ຄວາມຫລັກແຫລມຂອງຫມໍ.

ລະດູໃບໄມ້ຫລົ່ນກ້າວເຖິງວາລະສຸດທ້າຍຂອງມັນແລ້ວ ທ່າມກາງຄວາມອຸດົມສົມບູນ ແລະ ຄວາມເຊື່ອຫມັ້ນຕໍ່ອະນາຄົດ. ພວກເຮົາຄຶດຮອດຜູ້ທີ່ຈາກໄປຢູ່ ຄາຄົບ ແດ່ ແຕ່ວຽກງານໃນກາງເວັນ ແລະ ຜູ້ຄົນທີ່ມີຊີວິດຊີວາດີ ເຮັດໃຫ້ຍາມຄ່ຳຄືນເບີກບານດ້ວຍສຽງ

ຫົວ ແລະ ສຽງຍອກໄຍກັນ ຈົນວ່າ ເອີກາເຕີຣິນາ ກຣີກໍເຣັບນາ ໄດ້ອອກປາກວ່າ:

- ເຈົ້າວ່າພິລຶກບໍ່... ຫນ່ວຍຊີວິດໂຮມຫມູ່ຂອງພວກເຮົາຄັກແທ້ໆໃດ່ເນາະ, ມັນເປັນຄືກັບວ່າ ບໍ່ມີຫຍັງເກີດຂຶ້ນຈັ່ງຊັ້ນລະ!

ມາຮອດດຽວນີ້ຂ້າພະເຈົ້າຈຶ່ງເຂົ້າໃຈມັນດີກວ່າເກົ່າ, ເຂົ້າໃຈວ່າບໍ່ໄດ້ມີເຫດການທີ່ພິລຶກພິລໍ້າອັນໃດເກີດຂຶ້ນ, ທຸກຢ່າງເປັນໄປຕາມກົດເກນເທົ່ານັ້ນ. ຄວາມສໍາເລັດໃນການສອບເສັງຢູ່ ຄາຄົບ ແລະ ຄວາມຮູ້ສຶກອັນເກົ່າທີ່ວ່າ ທັງໆທີ່ພວກເຂົາດໍາລົງຊີວິດ ແລະ ເຮັດວຽກຢູ່ໃນອີກເມືອງຫນຶ່ງ, ພວກເຂົາຍັງເປັນສະມາຊິກນິຄົມຂອງກອງພິເສດທີ ໆ ນັ້ນສ້າງຄວາມຫວັງອັນສວຍງາມໃຫ້ແກ່ພວກເຮົາຫລາຍ. ຊາໂດຣອບ ນາຍກອງຂອງກອງພິເສດຫມາຍເລກ ໆ ສົ່ງຈົດຫມາຍລາຍງານປະຈໍາອາທິດມາຢ່າງສະຫມໍ່າສະເຫມີ, ພວກເຮົາເອົາຈົດຫມາຍນີ້ອ່ານໃນການຊຸມນຸມ ທ່າມກາງສຽງເວົ້າຍອກໄຍສະຫນັບສະຫນູນ. ລາຍງານຂອງ ຊາໂດຣອບນັ້ນຂຽນມາຢ່າງລະອຽດ ທັງບອກມາພ້ອມວ່າ ໃຜແດ່ບໍ່ດີໃຈຫນ້າໃດ່ ແລະ ຍ້ອນສາເຫດໃດ ທັງຕື່ມຄວາມເຫັນສ່ວນຕົວຂອງຫມໍໃສ່ນໍາ: "ເຊມີຍົງ ກໍາລັງຕິດສາວມາແຕ່ ແຊກນີກອບ. ຂຽນຫນັງສືໄປບອກໃຫ້ມັນເຊົາແດ່. ແວກຊະແນັບ ນັ້ນຫົວເສຍຫລາຍ, ມັນເວົ້າວ່າຢູ່ມະຫາວິທະຍາໄລບໍ່ໄດ້ຮຽນວິຊາການແພດເລີຍ ແລະ ວິຊາໄວຍະກອນກໍເຮັດໃຫ້ເບື່ອຈົນຊິຕາຍ. ຂຽນຈົດຫມາຍໄປເຕືອນມັນແດ່ ຢ່າເພີ້ຝັນຫລາຍ".

ຢູ່ໃນຈົດຫມາຍອີກສະບັບຫນຶ່ງ ຊາໂດຣອບຂຽນວ່າ:

"ອີກຊານນາ ແລະ ຣາແຊນ ມາຢາມພວກເຮົາເລື້ອຍ, ພວກເຮົາກໍແບ່ງໝູເຄັມໃຫ້ ແລະ ພວກເຂົາກໍຊ່ອຍພວກເຮົາໜ້ອຍໜຶ່ງ ເພາະ ໂກເລຍ ນັ້ນອ່ອນເລື່ອງ ໄວຍະກອນ ແລະ ໂກໂລສ ກໍອ່ອນໃນເລື່ອງເລກ. ພວກເຮົາຂໍສະເໜີໃຫ້ສະພານາຍກອງຈົດຊື່ພວກເຂົາເຂົ້າໃນກອງພິເສດ ໆ, ພວກນາງຍິນດີປະຕິບັດຕາມກົດລະບຽບ". "ອີກຊານນາ ກັບ ຣາແຊນ ບໍ່ມີເກີບໂບກ ແລະ ບໍ່ມີເງິນຊື້. ເກີບຂອງພວກເຮົາເອງກໍໄດ້ສ້ອມແປງແລ້ວ, ຕ້ອງຍ່າງຫລາຍ ແລະ ຍ່າງເທິງກະຫນິນຫີນອີກ. ເງິນທີ່ ອານໂຕນ ເຊມີວໂນວິດ ຝາກມານັ້ນຫມົດໄປແລ້ວເພາະວ່າ ພວກເຮົາເອົາຊື້ປີ້ມ ແລະ ເຄື່ອງແຕ້ມຮູບເສັ້ນ. ຕ້ອງຊື້ເກີບໂບກໃຫ້ ອີກຊານນາ ກັບ ຣາແຊນ ຢູ່ຕະຫລາດເລັ້ນ ລາຄາຄູ່ໜຶ່ງ ໆ ຣຸບ, ພວກເຮົາຢູ່ດີກິນດີສົມຄວນ ຫນ້າເສຍດາຍແຕ່ວ່າມີແຕ່ຄາບດຽວຕໍ່ມື້ເທົ່ານັ້ນ, ຫມູເຄັມກໍຫມົດໄປແລ້ວ, ເຊມີອົງ ມັນກິນຫລາຍ, ຂຽນຈົດຫມາຍບອກມັນກິນຫນ້ອຍແດ່ເດີ້ ກ້າວ່າພວກເຈົ້າຈະຝາກມາອີກນະ".

ພວກເດັກນ້ອຍຕົກລົງຢ່າງພ້ອມກັນ ຢູ່ໃນກອງປະຊຸມໃຫຍ່ວ່າ ຕ້ອງສົ່ງເງິນ ແລະ ນ້ຳມັນຫມູເຄັມໄປຫລາຍກວ່າເກົ່າ, ຮັບເອົາ ອີກຊານນາ ແລະ ຣາແຊນເຂົ້າໃນກອງພິເສດ ໆ ແລະ ສົ່ງຫລຽນກາຊາວນິຄົມໄປໃຫ້ພວກເຂົາ ແລະເຫັນວ່າບໍ່ຈຳເປັນຂຽນຫນັງສືໄປຫາ ເຊມີອົງ ກາຣາບານົບ ກ່ຽວກັບເລື່ອງຫມູເຄັມ ເພາະວ່າ ຢູ່ພຸ້ນພວກເຂົາກໍມີນາຍກອງບັນຊາຢູ່ແລ້ວ ແລະ ມັນກໍແມ່ນຫນ້າທີ່ຂອງນາຍກອງທີ່ຈະເປັນຜູ້ແຈກຢາຍໃຫ້ສະມາຊິກເອງ. ມີການ

ຕົກລົງກັນວ່າຈະຂຽນຫນັງສືຫາ ແວກຊະແນັບ ບໍ່ໃຫ້ເສຍຫົວ, ແລະ ຂຽນຫາ ເຊມິຍົງ ກ່ຽວກັບຜູ້ສາວມາຈາກ ແຊກນິກອບ, ບອກເຕືອນບໍ່ໃຫ້ວົນນຳຜູ້ສາວຫລາຍໂພດ, ແລະ ໃນກໍລະນີຈຳເປັນກໍບອກໃຫ້ອື່ນາງນ້ອຍເມືອງ ແຊກນິກອບ ນັ້ນຂຽນຫາສະພານາຍກອງເອງ.

ລາບົດນັ້ນ ມີວິທີເຮັດໃຫ້ການຊຸມນຸມໃຫຍ່ດຳເນີນໄປຢ່າງວ່ອງໄວຈິງຈັງ ແລະ ເບີກບານ. ຫມໍມີພອນສະຫວັນໃນການສະເຫນີສຳນວນແປກເດັ່ນສຳລັບຂຽນຈົດຫມາຍ ເຖິງພວກນັກສຶກສາຢູ່ມະຫາວິທະຍາໄລກຳມະກອນ. ຄວາມຄິດທີ່ວ່າ ໃຫ້ສາວນ້ອຍຈາກເມືອງ ແຊກນິກອບ ຂຽນຈົດຫມາຍຫາສະພານາຍກອງນັ້ນຖືກໃຈຫລາຍຄົນ ຈັ່ງຊັ້ນໃນເວລາຕໍ່ມາມັນຈຶ່ງໄດ້ປະກົດເປັນຈິງສ່ວນໃດສ່ວນຫນຶ່ງ.

ການດຳລົງຊີວິດຂອງກອງພິເສດ ໆ ຢູ່ ຄາຄົບ ເຮັດໃຫ້ສີສັນຂອງໂຮງຮຽນພວກເຮົາປ່ຽນແປງໄປຢ່າງເລິກເຊິ່ງ. ບັດນີ້ທຸກຄົນເຊື່ອຫມັ້ນແລ້ວວ່າ ມະຫາວິທະຍາໄລກຳມະກອນ ແມ່ນຄວາມເປັນຈິງຢ່າງຫນຶ່ງ ຊຶ່ງທຸກຄົນສາມາດຄວ້າມືເຖິງຖ້າຫາກວ່າເຂົາບາດກະຫນາມັນ. ຈັ່ງຊັ້ນນັບແຕ່ລະດູໃບໄມ້ຫລົ່ນປີນີ້ມາ ພວກເຮົາຈຶ່ງສັງເກດເຫັນວ່າ ມີຄວາມພະຍາຍາມກັນຢ່າງເອົາເປັນເອົາຕາຍຢູ່ໃນການຮຽນ. ບຮາເຊັນໂກ, ເກອໍເກັບສະກີ, ອິດຊາຈີ, ຊະແນແດກ, ເກລແຊ, ມາຮູດເຊຍ ເລັບເຊັນໂກ, ທັງຫມົດນີ້ແນເອົາມະຫາວິທະຍາໄລກຳມະກອນເປັນເປົ້າຫມາຍຢ່າງເປີດແປນ.

ມາຮູດເຊຍ ນັ້ນເຊົາມີການປ່ວງອາລະວາດຢ່າງຂາດຂັ້ນແລ້ວ

ແລະ ມາຕິດອົກຕິດໃຈໃນຕົວຂອງ ເອິກາເຕີຣີນາ ກຣີກໍເຣັບນາ ຢ່າງຫລົງໄຫລ, ນໍາຕິດຕາມນາງໄປທົ່ວ ແລະ ຊ່ອຍວຽກງານໃນມື້ທີ່ນາງເປັນສິບເວນປະຈໍາວັນ, ເນຍນໍາດ້ວຍແສງຕາໂຮງຮຸ່ງຮຸນແຮງ. ຂ້າພະເຈົ້າພໍໃຈທີ່ເຫັນວ່າ ມາຣູດເຊຍ ກາຍເປັນຜູ້ເຄັ່ງຄັດໃນເລື່ອງລະບຽບວິໄນ, ຮຽນຕັ້ງປົກຄໍເສື້ອໃຫ້ຊື່ ແລະ ຫົ່ມເສື້ອທີ່ຕັດຢ່າງດີ. ມາຣູດເຊຍ ກາຍເປັນສາວນ້ອຍແສນງາມຢູ່ຕໍ່ຫນ້າຕໍ່ຕາເຮົາໃນທັນທີທັນໃດ.

ແມ່ນແຕ່ຢູ່ໃນກຸ່ມເດັກຮຸ່ນນ້ອຍໆກໍເຊັ່ນດຽວກັນ, ກິ່ນອາຍຂອງມະຫາວິທະຍາໄລກໍາມະກອນ ທີ່ຢູ່ກວງໄກນັ້ນ ກໍຍັງປິວລອຍມາເຖິງພວກເຂົາ ແລ້ວພວກທີ່ຄ່ອງໄວກວ່າຫມູ່ກໍພາກັນມາສືບເສາະຊອກຮູ້ເລື້ອຍໆ ວ່າມີ ມະຫາວິທະຍາໄລໃດແດ່ທີ່ພວກຕົນຄວນບຸກບືນໄປຫາ.

ນາຕາຊາ ເປເຕຣັນໂກ ສຸມກໍາລັງໃສ່ການສຶກສາຮໍ່າຮຽນຢ່າງເອົາເປັນເອົາຕາຍ. ນາງມີອາຍຸເກືອບ ໑໖ ປີແລ້ວ ແຕ່ຍັງກືກຫນັງສືຢູ່. ພໍແຕ່ໄດ້ເຂົ້າໂຮງຮຽນມື້ທໍາອິດ ນາງກໍສະແດງວ່າມີຄວາມສາມາດພິເສດອອກມາໂລດ ຈັ່ງຊັ້ນຂ້າພະເຈົ້າກໍເລີຍກໍານົດຂອບເຂດວຽກງານໃຫ້ນາງຄື ຮຽນວິຊາຕ່າງໆຕາມຫລັກສູດຂອງປີທີ່ຫນຶ່ງ ແລະ ປີທີ່ສອງພາບກັນໃຫ້ສຸດໃນລະດູຫນາວນັ້ນໂລດ. ນາຕາຊາ ຂອບໃຈຂ້າພະເຈົ້າດ້ວຍການພັບຕາບາດຫນຶ່ງ ແລ້ວເວົ້າສັ້ນໆວ່າ :

- ເປັນຫຍັງຊິບໍ່ຮຽນເນາະ!

ມາຮອດເວລານັ້ນ ນາງເຊົາເອີ້ນຂ້າພະເຈົ້າວ່າ "ລຸງ" ແລ້ວ,

ແລະ ປັບຕົວເຂົ້າກັບສັງຄົມໂຮມຫມູ່ໄດ້ເປັນຢ່າງດີ. ຫມົດທຸກຄົນຮັກແພງນາງຍ້ອນສະເຫນໃນຕົວຕາມທຳມະຊາດຂອງນາງ ແລະ ຮອຍຍິ້ມທີ່ອົບອຸ່ນ ເຊື່ອຫມັ້ນ, ການເວົ້າຈາອັນນິ້ມນວນຂອງນາງ ແລະ ກິລິຍາອັນສຸພາບອ່ອນນ້ອມຂອງນາງ, ນາງຍັງຄົງຮັກສາມິດຕະພາບກັບ ໂຊບິດ ຢ່າງສະຫມ່ຳສະເຫມີ, ສ່ວນ ໂຊບິດ ກໍຍັງຄົງເປັນຜູ້ງຽບຂຶມເສີຍເມີຍຄືແຕ່ກ່ອນ ເປັນຜູ້ປົກປ້ອງນາງແກ້ວຄົນນີ້ໄວ້ຫ່າງຈາກສັດຕູ. ແຕ່ການະຂອງ ໂຊບິດ ເອງນັບມື້ນັບຫຍຸ້ງຍາກຂຶ້ນ ເພາະວ່າ ນາຕາຊາ ນັ້ນບໍ່ມີສັດຕູຢູ່ອ້ອມໆຕົວເລີຍ, ກົງກັນຂ້າມນັບມື້ນາງກໍຍິ່ງມີຫມູ່ເພື່ອນຫລາຍຂຶ້ນ ບໍ່ວ່າຍິງຫລືຊາຍ. ກະໂຕ ລາບິດ ເອງກໍຍັງມີທ່າທີແບບໃຫມ່ຕໍ່ນາງ ຄືບໍ່ມີການເວົ້າຢອກເຍົ້ຍ, ເຮັດຕົວະຫລອກເລີຍ ແຕ່ໃຫ້ຄວາມເອົາໃຈໃສ່ເປັນກັນເອງ ແລະ ສຸພາບ ຈັ່ງຊັ້ນ ໂຊບິດ ຈຳຕ້ອງຄອງຄອຍຢູ່ດົນເຕີບເພື່ອໃຫ້ ນາຕາຊາ ມີເວລາຢູ່ຄົນດຽວເພື່ອໂອ້ລົມກັບນາງກ່ຽວກັບບັນຫາທີ່ລີ້ລັບສຸດຂີດ ຫລືບໍ່ກໍແມ່ນນັ່ງມິດໆຢູ່ນຳກັນ.

ຂ້າພະເຈົ້າເລີ່ມແນມເຫັນຈຸດອັນຕະລາຍຢູ່ໃນພຶດຕິກຳຂອງ ໂຊບິດ ແລ້ວ ແລະ ບໍ່ຮູ້ສຶກແປກໃຈຢ່າງໃດ ເມື່ອຫມໍມາຫາໃນແລງຫນຶ່ງເພື່ອເວົ້າວ່າ:

-ອານໂຕນ ເຊມິວໂນວິດ, ອະນຸຍາດໃຫ້ຂ້ອຍເມືອຍາມອ້າຍຂ້ອຍແດ່.

-ໂອ... ໂຕມີອ້າຍຊັ້ນຫວະ?

-ເອີ ກໍມີລະບໍ້, ລາວເຮັດນາຢູ່ບໍ່ໄກຈາກ ໂປໂກດູດກີບ ເທົ່າໃດດອກ, ຂ້ອຍໄດ້ຮັບຈົດຫມາຍລາວການຫນຶ່ງ.

ຫມໍເດ່ຈົດຫມາຍໃຫ້ຂ້າພະເຈົ້າ. ເນື້ອໃນຂອງຈົດຫມາຍເວົ້າວ່າ: "ອັນທີ່ໂຕເລົ່າກ່ຽວກັບສະພາບຂອງໂຕນັ້ນ ອ້າຍເຂົ້າໃຈແລ້ວ, ໂຕນາຊາ, ນ້ອງທີ່ຮັກ ມິໂກລາ ເຟໂດໂຣວິດ ແລ້ວກໍມາຢູ່ນຳກັນນີ້ເລີຍ ເພາະວ່າເຮືອນກໍຫລັງໃຫຍ່ຢູ່ ແລະ ຄົນແກວງນີ້ກໍບໍ່ມີໃຜມີສວນໄຮ່ຄືອ້າຍດອກ, ອ້າຍດີໃຈຫລາຍຖ້າໄດ້ພົບກັບນ້ອງ, ຖ້າວ່ານ້ອງມີຊູ້ແລ້ວກໍເອົານາງມານຳເລີຍ, ບໍ່ຕ້ອງຫ່ວງຫຍັງຫມົດ".

- ຈັ່ງຊີ້ແລ້ວ ຂ້ອຍເລີຍຢາກຄືນໄປເບິ່ງ.

- ໂຕເວົ້າກັບ ນາຕາຊາ ແລ້ວເບາະ?

- ເວົ້າແລ້ວ.

- ວ່າແນວໃດລະ?

- ນາຕາຊາ ບໍ່ທັນເຂົ້າໃຈເລື່ອງຫມູ່ນີ້ຊ້ຳ, ຂ້ອຍຕ້ອງໄປເບິ່ງໃຫ້ເຫັນກັບຕາເສຍກ່ອນ ເພາະນັບແຕ່ຈາກບ້ານມາ ຂ້ອຍກໍບໍ່ເຄີຍພົບກັບອ້າຍຈັກເທື່ອ.

- ເອົາລະ, ໂຕຄືນເມືອຢາມບ້ານຈັກຄາວກ່ອນແລ້ວຈຶ່ງວ່າກັນ. ອ້າຍໂຕເປັນຊາວນາຮັ່ງແມ່ນບໍ່?

- ຊາວນາຮັ່ງຫວະ ໂອ້ບໍ່ດອກ, ລາວມີມ້າດ້ານໂຕ... ແຕ່ວ່າດຽວນີ້ຂ້ອຍບໍ່ຮູ້ດອກ ວ່າເຫດການມັນເປັນແນວໃດ.

ໂຊບົດ ໄປຢາມອ້າຍໃນລະຫວ່າງຕົ້ນເດືອນທັນວາ ແລະ ເປັນເວລາດົນນານຈຶ່ງກັບຄືນມາ.

ນາຕາຊາ ນັ້ນເຮັດຄືກັບວ່າບໍ່ຮູ້ເລື່ອງການໄປຂອງຫມໍ ແລະ ກໍຍັງຄົງຮັກສາຄວາມແຈ່ມໃສເບີກບານດັ່ງເດີມໄວ້ຄືເກົ່າ, ສືບຕໍ່ເອົາໃຈໃສ່ຮ່ຳຮຽນຢ່າງເຄັ່ງຄັດ, ຂ້າພະເຈົ້າເຊື່ອວ່າ ສາວນ້ອຍຄົນນີ້ສາ

ມາດຣຽນພາບສາມຫ້ອງໄດ້ໃນຊ່ວງລະດູຫນາວ.

ຍຸດໂທບາຍຂອງເດັກນ້ອຍນິຄົມຕໍ່ໂຮງຮຽນປ່ຽນແປງໂສມຫນ້າຂອງນິຄົມຫລາຍ. ບັດນີ້ນິຄົມຂອງພວກເຮົາມີລະດັບວັດທະນະທຳດີຂຶ້ນ ແລະ ມີສະພາບໃກ້ຄຽງກັບໂຮງຮຽນທຳມະດາສາມັນແຫ່ງຫນຶ່ງ. ຢູ່ໃນຕົວຊາວນິຄົມ ບໍ່ມີທ່າທີສົງໄສ ບໍ່ແນ່ໃຈຕໍ່ການເຫັນຄວາມຈຳເປັນ ແລະ ຄວາມສຳຄັນຂອງການສຶກສາຄົງຄ້າງຢູ່ແລ້ວ. ທ່າອຽງອັນນີ້ຍິ່ງເພີ່ມພະລັງແຮງພ້ອມກັນຫລາຍຂຶ້ນ ຢູ່ໃນກະແສແນວຄິດຂອງພວກເຮົາຕໍ່ ມາກຊິມ ກ໊ອກກີ. ຢູ່ໃນຈົດຫມາຍສະບັບຫນຶ່ງຂອງເພິ່ນ ອາເລັກໄຊ ມາກຊິໂມວິດ* ຂຽນວ່າ:

"ຂ້ອຍຢາກໃຫ້ຊາວນິຄົມອ່ານເລື່ອງ "ໄວເດັກ" ຂອງຂ້ອຍໃນຕອນແລງລະດູຫນາວແລງຫນຶ່ງ. ໃນນັ້ນ ພວກເຂົາຈະເຫັນວ່າຂ້ອຍເອງກໍແມ່ນຄົນປະເພດດຽວກັບເຂົານັ້ນເອງ, ພຽງແຕ່ວ່າຂ້ອຍນັ້ນແຕ່ນ້ອຍໆມາພຸ້ນແລ້ວ ຂ້ອຍຮູ້ຈັກອົດທົນພາກພຽນຮັກສາເຈດຈຳນົງຢາກຮ່ຳຮຽນມາຕະຫລອດ ແລະ ຂ້ອຍກໍບໍ່ເຄີຍຢ້ານກົວວຽກງານໃດໆ. ຂ້ອຍເຊື່ອມາສະເຫມີວ່າ ຄວາມພາກພຽນພະຍາຍາມເທົ່ານັ້ນຈະພາໄປສູ່ຄວາມສຳເລັດ".

ດົນນານມາແລ້ວທີ່ຊາວນິຄົມໄດ້ຂຽນຈົດຫມາຍຕິດຕໍ່ກັບ ກ໊ອກກີ. ຈົດຫມາຍສະບັບທຳອິດຂອງພວກເຮົາທີ່ສົ່ງໄປນັ້ນ ຈ່າຫນ້າຊອງວ່າ: "ມາກຊິມ ກ໊ອກກີ, ທີ່ ໂຊເຣັນຕໍ" ນັ້ນໄດ້ຮອດມືເພິ່ນ

---

* ອາເລັກໄຊ ມາກຊິໂມວິດ ເປຊະກົບ: ແມ່ນຊື່ແທ້ຂອງ ມາກຊິມ ກ໊ອກກີ.

ໂດຍທີ່ພວກເຮົາບໍ່ຄາດຝັນແລະ ອາເລັກໄຊ ມາກຊີໂມວິກກໍຕອບມາໂລດດ້ວຍສຳນວນກ້ອຍຄຳອົບອຸ່ນເປັນກັນເອງ ແຝງຄວາມເອົາໃຈໃສ່, ພວກເຮົາເອົາຈົດໝາຍອ່ານສູ່ກັນຟັງຢູ່ຕະຫລອດອາທິດໜຶ່ງເຕັມໆ ຈົນເຈ້ຍຂາດເປັນຮູ ນັບແຕ່ນັ້ນມາພວກເຮົາກໍຂຽນຈົດໝາຍເຖິງ ກ້ອກກີ ເປັນປະຈຳ ພວກເດັກນ້ອຍແຕ່ລະກອງຂຽນຫາ ກ້ອກກີ ເອງແລ້ວເອົາຈົດໝາຍຂອງພວກເຂົາມາໃຫ້ຂ້າພະເຈົ້າກວດແກ້ ແຕ່ຂ້າພະເຈົ້າເຫັນວ່າບໍ່ຈຳເປັນ, ພວກເຂົາຂຽນມີລັກສະນະເປັນທຳມະຊາດກວ່າ ແລະ ກ້ອກກີ ກໍຍິນດີອ່ານມັນ. ຈັ່ງຊັ້ນວຽກງານຂອງຂ້າພະເຈົ້າກ່ຽວກັບເລື່ອງນີ້ຈຶ່ງຈຳກັດຢູ່ໃນຂອບເຂດການອອກຄວາມເຫັນແບບຂໍ້ສັງເກດປະເພດນີ້:

- ເຈ້ຍຈົດໝາຍພວກເຈົ້າບໍ່ງາມປານໃດ.
- ແລ້ວເປັນຫຍັງບໍ່ເຊັ່ນລະ?

ເມື່ອມີຈົດໝາຍຈາກ ອີຕາລີ ນັ້ນກ່ອນທີ່ມັນຈະຕົກເຖິງມືຂອງຂ້າພະເຈົ້ານັ້ນ ຈຳເປັນຕ້ອງໃຫ້ເດັກນ້ອຍແຕ່ລະຄົນແຕະຕ້ອງຈັບບາຍມັນກ່ອນ ທັງສະແດງຄວາມປະຫລາດໃຈທີ່ເຫັນວ່າ ກ້ອກກີ ເປັນຜູ້ຂຽນຈ່າໜ້າຊອງເອງ, ພວກເຂົາພິຈາລະນາເບິ່ງຮູບເຈົ້າຊີວິດໃນສະແຕມ ດ້ວຍແສງຕາຕຳໜິຕິຕຽນ:

- ເຮັດໃດວ່າພວກເຂົາຍັງອົດທົນມີເຈົ້າຊີວິດ ຢູ່ໄດ້ດົນປານນີ້ເນາະ, ພວກຄົນອີຕາລີ ນີ້ນ່າ? ເຈົ້າຊີວິດ... ມີໄວ້ເຮັດຫຍັງ?

ມີແຕ່ຂ້າພະເຈົ້າເທົ່ານັ້ນ ທີ່ມີສິດໄຂຊອງຈົດໝາຍ ແລະ ອ່ານມັນດ້ວຍສຽງດັງເປັນເທື່ອທຳອິດ, ແລະ ຈາກນັ້ນຈຶ່ງສົ່ງຕໍ່ໃຫ້ເລຂາສະພານາຍກອງເປັນຜູ້ຮັກສາໄວ້ ເພື່ອໃຫ້ພວກກະຕືລືລົ້ນທັງຫລາຍ

ອ່ານຕໍ່ເອົາເອງພາຍໃຕ້ເງື່ອນໄຂຂໍ້ດຽວຂອງລາປິດ ທີ່ເນັ້ນຍໍ້າວ່າ:

- ຢ່າເອົາປື້ມມືຈໍ້າໄປນໍາເດີ້. ສູມີຕາຢູ່ແລ້ວ... ເອົາຕານໍາໄປກໍພໍແລ້ວ, ເລື່ອງຫຍັງຈິເອົາປື້ມຈືອີກ?

ພວກເດັກນ້ອຍພົບວ່າ ຢູ່ໃນແຕ່ລະແຖວທີ່ ກ໊ອກກີ ຂຽນມານັ້ນ ລ້ວນແຕ່ເຜີງດ້ວຍປັດຊະຍາອັນຫນຶ່ງທີ່ຈິງຈັງ ຈົນວ່າຢູ່ໃນກ໊ອຍຄໍາເຫລົ່ານີ້ບໍ່ມີໃຜແນມເຫັນຄວາມສົງໄສໃດໆ. ກ້າວ່າແມ່ນປື້ມ ມັນກໍຍັງເປັນອີກແບບຫນຶ່ງດອກ, ອາດຈະສົນທະນາກົກຖຽງກັນໄດ້ຢູ່, ຮອດໂຕ້ຖຽງກັບມັນພຸ້ນແລ້ວກ້າວ່າມັນບໍ່ມີຄວາມຈິງ, ແຕ່ນີ້ມັນບໍ່ແມ່ນປື້ມ ແຕ່ແມ່ນກະໂຕຈົດຫມາຍຂອງ ກ໊ອກກີ ເອງ.

ເວົ້າແທ້ແລ້ວ ໃນຕອນຕົ້ນໆ ພວກເດັກນ້ອຍມີຄວາມຮູ້ສຶກຕໍ່ ກ໊ອກກີ ຄ້າຍກັບຄວາມບູຊາອັນຫນຶ່ງຕໍ່ສາດສະຫນາ ພວກເຂົາຖືເພິ່ນຄືກັບມະນຸດປະເສີດສູງກວ່າຄົນອື່ນໆ, ການປະຕິບັດຕົນຄືກັບເພິ່ນ ເປັນຄືກັບການລົບຫລູ່ສິ່ງສັກກາລະ, ພວກເຂົາບໍ່ເຊື່ອວ່ານິຍາຍເລື່ອງ "ໄວເດັກ" ເປັນບົດພັນລະນາເຖິງເຫດການຈິງໃນຊີວິດແທ້ຂອງເພິ່ນ.

- ນັກຂຽນຄືເພິ່ນ! ໂອ່!... ຈັ່ງແມ່ນເພິ່ນໄດ້ເຫັນຊີວິດຂອງຫລາຍຜູ້ຫລາຍຄົນເນາະ, ເພິ່ນຜ່ານສິ່ງເຫລົ່ານີ້ມາແລ້ວກໍເລົ່າໄວ້ແຕ່ເພິ່ນເອງນັ້ນຕິ, ແນ່ນອນແລ້ວ... ເວລາເພິ່ນຍັງນ້ອຍນັ້ນເພິ່ນບໍ່ໄດ້ເປັນຄືຜູ້ອື່ນໆເດີ້.

ຂ້າພະເຈົ້າພະຍາຍາມຢູ່ດົນເຕີບ ຈຶ່ງເຮັດໃຫ້ເດັກນ້ອຍເຊື່ອວ່າສິ່ງທີ່ ກ໊ອກກີເວົ້າມາໃນຈົດຫມາຍນັ້ນເປັນຄວາມຈິງ ແລະ ບອກວ່າແມ່ນແຕ່ຜູ້ມີແວວປະເສີດກໍຕ້ອງເຮັດວຽກຫລາຍ ຮໍ່າຮຽນຫລາຍ

ຄືກັນ. ລັກສະນະອັນມີຊີວິດຊີວາຂອງທ້າວນ້ອຍອາໂລດຊາ* ເຊິ່ງມີຊີວິດຄ້າຍຄືກັບເດັກນ້ອຍນີ້ຄົນນັ້ນ ກາຍເປັນສິ່ງໃກ້ຊິດຊິນເຄີຍຂອງພວກເຮົາຢ່າງບໍ່ຕ້ອງອອກແຮງເທົ່າໃດ. ແມ່ນໃນລະຍະນີ້ເອງທີ່ພວກເດັກນ້ອຍຄຶດຢາກພົບພໍ່ ນາກຊິມ ກ້ອກກີ ກວ່າໝູ່ ແລະ ພາກັນຝັນໃຝ່ຢາກໃຫ້ເພິ່ນມາຍັງມຢາມນີຄົນ ໂດຍບໍ່ເຊື່ອດອກວ່າ ສິ່ງດັ່ງກ່າວຈະເປັນໄປໄດ້ແທ້.

- ເພິ່ນຊິເດີນທາງມາຮອດນີຄົນຊຸ້ນບໍ່ຫວະ! ເຮີຍສູ!... ໂຕຄຶດວ່າໂຕມີແນວເປັນຕາສົນໃຈຫລາຍຊຸ້ນຫວະ? ຄັກກວ່າຜູ້ອື່ນໆຊຸ້ນຫວາ... ເອີ, ທ່ານ ກ້ອກກີເພິ່ນໂລດເຄີຍພົບເຄີຍເຫັນມາພໍແຮງແລ້ວນ່າຄົນຄືໂຕນະ... ພົບພໍ້ມາເປັນໝື່ນເປັນແສນ.

- ເອີ້ ແລ້ວເປັນຫຍັງລະ? ແລ້ວເພິ່ນຂຽນຈົດໝາຍມາຫາທຸກຄົນບໍ່ລະ?

- ເພິ່ນຂຽນນີ້ລະຊາວກ້ານພຸ້ນແລ້ວ, ໂຕລອງໄລ່ເບິ່ງວ່າເປັນເດືອນໜຶ່ງຈັກສະບັບ? ໖໐໐ ສະບັບພຸ້ນນ່າ.

ພວກເດັກນ້ອຍຈັດຕັ້ງກັນສືບສວນກ່ຽວກັບບັນຫານີ້ ແລະ ມາຖາມຂ້າພະເຈົ້າເປັນພິເສດກ່ຽວກັບຈຳນວນຈົດໝາຍທີ່ ກ້ອກກີຂຽນໃນແຕ່ລະມື້.

ຂ້າພະເຈົ້າຕອບພວກເຂົາວ່າ:

---

* ອາໂລດຊາ ເປຊະກົບ, ແມ່ນຕົວລະຄອນໃນນະວະນິຍາຍອັດຕະປະຫວັດສາມເຫລັ້ມຂອງ ກ້ອກກີ ຄື: ໄວເດັກ, ຫາລ້ຽງຊີບ ແລະ ມະຫາວິທະຍາໄລຂອງຂ້ອຍ.

- ຫນຶ່ງຫລືສອງສະບັບຕິເບາະ ແລ້ວກໍບໍ່ຂຽນທຸກມື້ດອກ.

- ເປັນໄປບໍ່ໄດ້! ຫລາຍກວ່າຕີ...

- ບໍ່ຫລາຍກວ່ານີ້ດອກ, ເພິ່ນຂຽນປື້ມເດ້ ຈຶ່ງຕ້ອງການເວລາ ແລ້ວຍັງຜູ້ຄົນທີ່ທຽວມາຫາເພິ່ນອີກຈັກເທົ່າໃດ? ແລ້ວເພິ່ນກໍຕ້ອງ ພັກຜ່ອນແດ່ ບໍ່ແມ່ນຫວະ?

- ຄັນເປັນແນວນີ້ ເປັນຄືເຈົ້າວ່າ, ໃນເມື່ອເພິ່ນຂຽນຫາພວກ ເຮົາ ມັນກໍຫມາຍຄວາມວ່າ ຄົນຄືພວກເຮົານີ້ກືວ່າ ເປັນຜູ້ຮູ້ຈັກ ຮັກແພງກັບເພິ່ນແລ້ວແມ່ນບໍ່?

ຂ້າພະເຈົ້າຕອບວ່າ:

- ບໍ່ແມ່ນຜູ້ຮູ້ຈັກຮັກແພງດອກ, ພວກເຮົາແມ່ນສະມາຊິກນິ ຄົມ ກ໊ອກກີ ເພິ່ນເປັນພໍ່ຮັກຂອງພວກເຮົາ. ຍິ່ງພວກເຮົາຂຽນ ຫາເພິ່ນດຸ ພວກເຮົາກໍຍິ່ງເຂົ້າໃຈກັນດີຂຶ້ນ ແລ້ວກໍຈະກາຍເປັນມິດ ສະຫາຍກັນ, ມິດສະຫາຍແບບນີ້ ກ໊ອກກີ ເພິ່ນບໍ່ມີຫລາຍດອກ.

ໃນທີ່ສຸດຮູບພາບຂອງ ກ໊ອກກີ ໃນຈິດສຳນຶກຂອງພວກເດັກ ນ້ອຍຈຶ່ງຄ່ອຍມີຮູບຊົງທຳມະດາຂຶ້ນ ແລະ ມາຮອດບັດນີ້ ຂ້າພະ ເຈົ້າຈຶ່ງສັງເກດເຫັນວ່າ ພວກເດັກນ້ອຍນັ້ນບໍ່ໄດ້ເຄົາລົບບູຊາເພິ່ນ ຄືກັບມະຫາບຸລຸດ ຫລືກືເພິ່ນໃນການະນັກປະພັນຜູ້ຍິ່ງໃຫຍ່ອີກ ແລ້ວ ແຕ່ພວກເຂົາຮັກແພງ ກ໊ອກກີ ຢ່າງຮຸນແຮງ ແລະ ມີຄວາມ ກະຕັນຍູຮູ້ບຸນຄຸນຢ່າງແທ້ຈິງຕໍ່ບຸລຸດທີ່ຢູ່ຫ່າງໄກ ພິດສະດານ ເຂົ້າ ໃຈຍາກຫນ້ອຍຫນຶ່ງ ແຕ່ກໍມີຊີວິດຢູ່ຢ່າງແທ້ຈິງຄົນນີ້.

ນັບວ່າ ເປັນຄວາມຮັກທີ່ຫາແນວມາພິສູດສະແດງຢືນຢັນໄດ້ ຍາກສົມຄວນ, ຈະສະແດງບອກດ້ວຍກ້ອຍຄຳສຳນວນຫລື ພວກເຂົາ

ກໍບໍ່ສາມາດເຮັດໄດ້ ທັງຮູ້ສຶກເຂີນອາຍບໍ່ກ້າທີ່ຈະຂຽນອອກພຸ້ນແລ້ວ ເພາະວ່າພວກເຂົານັ້ນບໍ່ລົ້ງກັບການສະແດງອາລົມຈິດໃດໆເລີຍ ມີແຕ່ ກູດ ກັບສະມາຊິກໃນກອງຂອງເຂົາເທົ່ານັ້ນທີ່ຫາທາງແກ້ໄຂໄດ້. ພວກເຂົາຂຽນຈົດຫມາຍຫາ ກັອກກີ ສະບັບຫນຶ່ງ ແລະ ຂໍຮ້ອງໃຫ້ເພິ່ນບອກຂະຫນາດຂອງຕີນມາເພື່ອວ່າ ພວກເຂົາຈະໄດ້ເຮັດເກີບໂບກໃຫ້ເພິ່ນຄູ່ຫນຶ່ງ. ເດັກນ້ອຍກອງທີ່ຫນຶ່ງເຊື່ອຫມັ້ນວ່າ ກັອກກີ ຈະຕອບຮັບຄຳຮ້ອງຂໍຂອງພວກເຂົາຢ່າງຫລີກບໍ່ໄດ້ ເພາະວ່າເກີບໂບກແມ່ນວັດຖຸອັນຫນຶ່ງຊຶ່ງມີຄຸນຄ່າໃນຕົວຢູ່ແລ້ວ, ມີຜູ້ຄົນຈຳນວນຫນ້ອຍດຽວເທົ່ານັ້ນ ສັ່ງເຮັດເກີບໂບກນຳຮ້ານຂອງພວກເຮົາ ແຕ່ປານນັ້ນມັນກໍຍັງສ້າງຄວາມຫຍຸ້ງຍາກໃຫ້ພວກເຮົາສົມຄວນ. ຈຳຕ້ອງໄປເລາະລຽບຕະຫລາດຫລາຍເທື່ອເພື່ອຫາຫນັງຫລືວັດຖຸດີໆເຫມາະສົມ, ຕ້ອງຊື້ແນວຮອງພື້ນສົ້ນ, ແນວຮອງດ້ານໃນ ແລະ ຊັ້ນຫຸ້ມດ້ານໃນ. ຊ່າງເກີບຕ້ອງເກັ່ງສົມຄວນເພື່ອເຮັດເກີບດີໆ ບໍ່ຮັດປາຍຕີນ. ເກີບໂບກຄົງຈະເປັນປະໂຫຍດສຳລັບເພິ່ນຕະຫລອດເວລາ ແລະ ກັອກກີ ກໍຄົງຈະອອນຊອນໃຈທີ່ໄດ້ໃສ່ເກີບເຮັດໂດຍເດັກນ້ອຍນິຄົມ ແທນທີ່ຊິແມ່ນຊ່າງແປງເກີບເກົ່າຊາວອິຕາລີ.

ຊ່າງເຮັດເກີບຄົນຫນຶ່ງມາແຕ່ໃນເມືອງ, ຮູ້ຈັກລົ້ງແກວ່ນກັບໄທເຮົາ ທັງໄດ້ຊື່ວ່າເປັນຜູ້ຊ່ຽວຊານຍິ່ງໃຫຍ່ຄົນຫນຶ່ງໃນກຸນແກວນີ້ໄດ້ມາຍັງນິຄົມເພື່ອສິເຂົ້າແປ້ງ, ລາວຢືນຢັນສະຫນັບສະຫນຸນທັດສະນະຂອງພວກເດັກນ້ອຍວ່າ :

- ຄົນອິຕາລີກັບຄົນຝະລັ່ງບໍ່ໃສ່ເກີບໂບກແບບດຽວກັບພວກເຮົາ

ແລະ ພວກເຂົາກໍບໍ່ຮູ້ຈັກເຮັດມັນດອກ, ວ່າແຕ່ວ່າ ພວກເຈົ້າຢາກເຮັດເກີບໂບກແບບໃດໃຫ້ກ້ອກກີ ລະ? ຢ່າງຫນ້ອຍກໍຄວນຈະຮູ້ວ່າເພິ່ນມັກແບບໃດເດ໊, ເອົາແບບຕໍ່ກັນເປັນແຜ່ນດຽວ ຫລືວ່າ ຕໍ່ກັນ, ສົ້ນແບບໃດ ແລະ ພື້ນບັ້ງແບບໃດ? ຈະເຮັດບ້ງມັນອ່ອນນິ້ມນັ້ນກໍເປັນເລື່ອງຫນຶ່ງເດ໊, ລາງຄົນຊໍ້າມັກແຂງກໍທີ່ ແລ້ວຫນັງເດ໊ຊິເອົາແນວໃດດີ, ກ້າເອົາຫນັງແບ້ນ້ອຍເຮັດໂຕເກີບ ບ້ງໂບກກໍຕ້ອງເອົາຫນັງງົວພອກ... ແຕ່ຈະສູງຊໍ່າໃດລະ!

ກູດ ອຸກເອົ້ານໍາຄວາມສັບສົນອັນນີ້ ຈຶ່ງມາປຶກສານໍາຂ້າພະເຈົ້າ.

-ສົມມຸດວ່າເກີບໂບກທີ່ເຮັດໄປນັ້ນບໍ່ເປັນຕາເອົາເດ໊... ຈັ່ງແມ່ນຊິຄຶກຕວ່າ, ແລ້ວຊິເອົາວັດຖຸຊະນິດໃດມາເຮັດມັນລະ: ຫນັງແກະ ຫລືວ່າຫນັງເຫລືອມດີກວ່າ? ແລ້ວແມ່ນໃຜຊິໄປຫາຫນັງເຫລືອມມາໃຫ້ພວກເຮົາລະ? ເຈົ້າຄຶດວ່າຂ້ອຍຫາໄດ້ຫວະ? ຫລືບາງທີອາດຈະແມ່ນ ກາລີນາ ອີວາໂນວິດ ເບາະ? ແຕ່ລາວເວົ້າວ່າ: ແມ່ນສູຫັ້ນຫວະ... ພວກພາກເອີຍ ຊິພາກັນເຮັດເກີບໂບກໃຫ້ກ້ອກກີ ນະ! ລາວວ່າແນວນີ້ລະ, ກ້ອກກີ ເພິ່ນໄປສັ່ງເຂົາເຮັດຢູ່ຮ້ານຊ່າງເກີບເຈົ້າຊີວິດ ອີຕາລີ ເອງແລ້ວລະ!

ກາລີນາ ອີວາໂນວິດ ຢືນຢັນຍໍ້າໃນທັນທີ.

-ມັນຊິຜິດຊຸ່ນຫວະອັນກູເວົ້າກັບມຶງຫັ້ນນ່າ? ຮ້ານ ກູດແລະສະຫາຍ ຫັ້ນຍັງບໍ່ເກີດເທື່ອເດ໊. ເກີບໂບກແນວດີງຫັ້ນສູເຮັດບໍ່ໄດ້ເທື່ອດອກ, ເກີບທີ່ດີນັ້ນ ເວລາໃສ່ກົງຂາບາງກໍບໍ່ເກາະບໍ່ຂອງເດີ ແລ້ວສູຫັ້ນຫວະ ສູລຶງເຄີຍກັບຫຍັງລະ? ສູໂລດເອົາຕີນພັນຜ້າຈັກວ່າກີ່ຮອບງຢັດເຂົ້າໃນເກີບ... ບໍ່ສົນວ່າມັນຊິຄັບຊິເຫມັນ

ຫຍັງຫມົດ... ພວກພາກເອີຍ... ຈົ່ງແມ່ນຄັກດວ່າຄົນດີນ ກັອກກີ ໂພງຍ້ອນເກີບພວກສູນະ!

ກູດ ເຫງົາຫາງອຍໄປຍ້ອນ, ຫມໍຈ່ອຍຜອມລົງຍ້ອນທັດສະນະ ສັບສົນຄັດຄ້ານກັນຕ່າງໆຫມູ່ນີ້.

ຄຳຕອບຈາກ ກັອກກີ ມາເຖິງໃນເດືອນຫນຶ່ງຕໍ່ມາ:

"ຂ້ອຍບໍ່ຕ້ອງການເກີບໂບກ, ຂ້ອຍຢູ່ໃນບ້ານນອກບ້ານນາບໍ່ ຕ້ອງການເກີບດອກ".

ກາລີນາ ອີວາໂນວົດ ພົ່ນຄວັນກອກແຮງໆບາດຫນຶ່ງ, ເງີຍ ຫົວຂຶ້ນແລ້ວເວົ້າວ່າ:

-ນີ້ຈັ່ງແມ່ນຄົນສະຫລາດ, ລາວເຂົ້າໃຈເລື່ອງດີ. ຍ່າງຕີນ ເປົ່າຍັງດີກວ່າໃສ່ເກີບພວກສູເພາະວ່າແມ່ນແຕ່ເກົ້າຊີລົນຕີກໍຍັງບ້ອຍ ດ່າບໍ່ເຊົາເວລາມັນໃສ່ເກີບພວກສູ ທັງໆທີ່ວ່າເກົ້ານີ້ ມັນເຄີຍຊິນກັບ ທຸກສິ່ງທຸກຢ່າງ...

ກູດ ຫລິ່ວຕາເບື້ອງຫນຶ່ງແລ້ວເວົ້າວ່າ:

-ແນ່ນອນແລ້ວ, ກາລີນາ ອີວາໂນວົດ ເອີຍ, ໃຜຊິເຮັດເກີບ ໂບກງາມໆກໍກດີນໄດ້ ໃນເມື່ອວ່ານາຍຊ່າງຢູ່ບ່ອນຫນຶ່ງ ລູກຄ້າ ຊໍາຢູ່ ອີຕາລີ ພຸ້ນ? ຢ່າລະ ບໍ່ເປັນຫຍັງດອກ, ຍັງບໍ່ຫລ້າບໍ່ສວຍ, ຄອງແຕ່ວ່າມື້ໃດເພິ່ນມາພັກອນ ແລ້ວເຈົ້າຈະເຫັນເອງດອກວ່າເກີບ ໂບກທີ່ພວກເຮົາຈະເຮັດໃຫ້ເພິ່ນນັ້ນ ມັນຊິຄັກປານໃດ...

ລະດູໃບໄມ້ຫລົ່ນຜ່ານໄປຢ່າງມິດ ໆ.

ຜູ້ກວດການກະຊວງສຶກສາປະຊາຊົນ ນາງ ລິວບົບ ເຊເວ ເລັບນາ ຊຸກຣິນສະກາຍຢາ ໄດ້ມາຍັງມຍາມພວກເຮົາຢ່າງບໍ່ຄາດ

ຝັນ. ນາງຕັ້ງເດີນທາງມາແຕ່ຄາຄີບ ໂດຍສະເພາະ ເພື່ອມາເບິ່ງນິຄົມຂອງພວກເຮົາ ແລະ ຂ້າພະເຈົ້າກໍຕ້ອນຮັບນາງຄືກັບທີ່ພວກເຮົາຕ້ອນຮັບຜູ້ກວດການທົ່ວໆໄປ ຄືລະວັງຕົວສຸດຂີດ ຄ້າຍຄືຫມາໃນທີ່ກຸກໄລ່ໂຫ່. ແມ່ນ ມາເຣຍ ກົງດຣາແຕັບນາ ຜູ້ແຈ່ມໃສແກ້ມແດງອ່ອງຕ່ອງສະເຫມີນັ້ນເອງທີ່ພານາງມາ.

-ຂໍແນະນຳໃຫ້ຮູ້ຈັກກັບຄົນດົງຄົນປ່າຜູ້ນີ້, ມາເຣຍ ກົງດຣາແຕັບນາ ເວົ້າ, - ທຳອິດຂ້ອຍກໍຄືດວ່າລາວເປັນຄົນຫນ້າສົນໃຈດີຢູ່ດອກ ແຕ່ບັດນີ້ຂ້ອຍເຂົ້າໃຈແລ້ວວ່າລາວແມ່ນຄຸນພໍ່ນັກບຸນອົງຫນຶ່ງດີງນີ້ເອງ, ຂ້ອຍຍ້ານລາວ ແລະ ຈິດສຳນຶກຂ້ອຍກໍສັບສົນວຸ່ນວາຍໂລດເມື່ອຢູ່ກັບລາວ.

ຊູກຣິນສະກາຍຢາ ຈັບບ່າໄຫລ່ຂອງ ໂບໂກວາ ໄວ້ແລ້ວເວົ້າວ່າ:

-ຢ່າເປັນກ້າງຂວາງຄໍເລີຍ, ເຈົ້າຊິໄປໃສກໍໄປສາ, ພວກເຮົາບໍ່ຢາກຟັງເລື່ອງຕະຫລົກຂອງເຈົ້າດອກ.

-ດ້ວຍຄວາມເຕັມໃຈສຸດຂີດ! ແກ້ມບ່ອງເລີກຂອງ ມາເຣຍ ກົງດຣາແຕັບນາບຸ້ມເຂົ້າອີກ, - ເລື່ອງຕະຫລົກຂອງຂ້ອຍບໍ່ອຶດແຕ່ຜູ້ຢາກຟັງດອກຢູ່ນີ້ນະ, ແລ້ວພວກເດັກນ້ອຍເຈົ້າຢູ່ໃສຫມົດດຽວນີ້? ຢູ່ນ້ຳຫ້ວຍຫວະ?

-ມາເຣຍ ກົງດຣາແຕັບນາ, ສຽງແຫລມກ້ອງຂອງ ເຊລາປູດີນ ຮ້ອງມາໃສ່ແຕ່ແຄມຝັ່ງນ້ຳ, - ມາເຣຍ ກົງດຣາແຕັບນາ ມານີ້ໄວ, ພວກເຮົາມີລີ້ເລື່ອນຄັກຂະຫນາດເລີຍ!

- ແລ້ວຂີ່ເທື່ອລະສອງຄົນໄດ້ບໍ່ລະ? ມາເອຍ ກົງດຣາແຕັບນາ ກາມ; ເວລານັ້ນນາງຍ່າງໄປໄດ້ເຄິ່ງທາງແລ້ວ.

- ສະບາຍ, ຕື່ມໂກເລຍ ອີກກໍຍັງໄດ້! ແຕ່ສິ້ນກະໂປງເຈົ້ານີ້ດີ ບໍ່ຄັກປານໃດຕອນກົ້ງລົງ.

- ບໍ່ເປັນຫຍັງດອກ ຂ້ອຍຮູ້ວິທີກົ້ງຢູ່, ແສງຕາຄົມແຫລມປານ ລູກສອນຂອງນາງເບັ່ງແນມາໃສ່ ຊູກຣິນສະກາຍຢາ.

ນາງຍ່າງຕໍ່ໄປຍັງແຄມຝັ່ງຫ້ວຍ ເຊິ່ງໂອບໄປດ້ວຍຫີນມະເຂງ ສ່ວນ ຊູກຣິນສະກາຍຢາ ກໍແນມນຳນາງໄປຢ່າງຮັກແພງ ທັງເວົ້າ ວ່າ:

- ຄົນພິເສດແທ້ງ, ນາງເຮັດພໍປານກັບວ່າຢູ່ເຮືອນໂຕເອງຈັ່ງ ຊັ້ນແຫລະ.

- ຈັກຫນ້ອຍແຮ່ງຊິຮ້າຍກວ່ານີ້ດອກ, ຂ້າພະເຈົ້າຕອບ, ຈັກ ຫນ້ອຍຂ້ອຍຊິລົງໂທດລາວເອງຍ້ອນເຮັດສຽງອຶກກະທຶກໂຜດ.

- ເຈົ້າເຮັດໃຫ້ຂ້ອຍຄຶດພ້ອງກທີ່ມາພໍດີເລີຍ, ຂ້ອຍມາທີ່ນີ້ກໍ ເພື່ອໂອ້ລົມກັບເຈົ້າກ່ຽວກັບລະບົບລະບຽບວິໄນ ຊັ້ນແປວ່າເຈົ້າບໍ່ປະ ຕິເສດວ່າ ບໍ່ໄດ້ໃຊ້ລະບົບການລົງໂທດເນາະ? ແລ້ວວຽກງານຫນັກ ອີກ... ມີຄົນເວົ້າວ່າຍັງມີການເຮັດແນວນີ້ອີກຢູ່ໃນນິຄົມເຈົ້າ ຄືຂັງ ຄົນໄວ້ໃຫ້ກິນແຕ່ເຂົ້າກິນກັບນ້ຳລ້າແມ່ນແທ້ຫວະ?

ຊູກຣິນສະກາຍຢາ ແມ່ນແມ່ຍິງຮ່າງສູງ ໃບຫນ້າບໍລິສຸດຜຸດ ຜ່ອງ ດວງຕາສົດໃສຄືເດັກນ້ອຍ. ຂ້າພະເຈົ້າບໍ່ຢາກໃຊ້ການໂອ້ລົມ ແບບນັກການທູດກັບນາງເລີຍ.

- ຂ້ອຍບໍ່ເຄີຍຂັງຄົນແບບບໍ່ໃຫ້ກິນເຂົ້າກິນນ້ຳຈັກເທື່ອ ແຕ່ກໍ

ມີບາງຄັ້ງທີ່ໃຫ້ອົດເຂົ້າເພນ ແລະ ໃຫ້ເຮັດວຽກຫນັກ. ການກັກຂັງກໍມີຄືກັນ ແຕ່ບໍ່ໄດ້ຢູ່ຫ້ອງອັບບໍ່ໄຂ ແຕ່ໄປຢູ່ຫ້ອງການຂອງຂ້ອຍຫັ້ນລະ. ອັນເຈົ້າຮູ້ມາຖືກຕ້ອງແລ້ວ.

- ຕາຍແລ້ວ... ແຕ່ທັງຫມົດນີ້ລ້ວນແຕ່ຖືກເກືອດຫ້າມໃດ໋!

- ກົດຫມາຍບໍ່ໄດ້ຫ້າມແນວຫມູ່ນີ້ດອກ ແລະ ຂ້ອຍກໍບໍ່ໄດ້ອ່ານປຶ້ມໂລງເລງກ່ຽວກັບເລື່ອງນີ້ນຳ.

- ໂອ້ຍ... ເຈົ້າບໍ່ອ່ານປຶ້ມກ່ຽວກັບວິທີອົບຮົມເດັກນ້ອຍເລີຍຫວະ? ເຈົ້າເວົ້າແທ້ ໆ ຫວະນີ້?

- ໄດ້ສາມປີມາແລ້ວທີ່ຂ້ອຍບໍ່ໄດ້ອ່ານປຶ້ມ.

- ເຈົ້າບໍ່ຢາກອາຍແດ່ຫວະ? ແລ້ວໄປເດ໋ເຈົ້າອ່ານຫຍັງແດ່?

- ໂດຍທົ່ວໄປຂ້ອຍກໍອ່ານຢູ່ ແລະ ຂ້ອຍກໍບໍ່ອາຍດອກ. ເຈົ້າຄຶດເບິ່ງເອົາ, ຂ້ອຍດູຖູກພວກອ່ານຫມູ່ນີ້ທີ່ສຸດ.

- ເວົ້າແທ້ໆ, ຂ້ອຍຈິຕ້ອງເຮັດໃຫ້ເຈົ້າປ່ຽນຄວາມຄຶດນີ້ສາແລ້ວ, ພວກເຮົາຕ້ອງນຳໃຊ້ຫລັກການວິຊາຄູແບບໂຊວຽດ.

ຂ້າພະເຈົ້າຕັດສິນໃຈວ່າຕ້ອງຍຸດຕິການສົນທະນານີ້ ຈຶ່ງບອກກັບນາງລີວບີບເຊເວເລັບນາວ່າ:

- ເອົາລະ! ຂ້ອຍຈິບໍ່ຖົກຖຽງຫຍັງອີກແລ້ວ, ຂ້ອຍເຊື່ອຫມັ້ນຢ່າງເລິກເຊິ່ງແລ້ວວ່າ ຢູ່ນິຄົມນີ້ພວກເຮົາໄດ້ໃຊ້ຫລັກການວິຊາຄູແບບໂຊວຽດອ້ອຍຕ້ອຍແລ້ວ ຍິ່ງໄປກວ່ານີ້ ພວກເຮົາຍັງສຶກສາອົບຮົມກັນແບບນັກກອມມູນິດອີກ. ສຳລັບພວກເຈົ້ານັ້ນໂລດມີແຕ່ການທົດລອງຫລືການວິໃຈຄົ້ນຄວ້າພົນງານອັນໃດອັນຫນຶ່ງ ຢ່າງເປັນແບບເປັນແຜນເທົ່ານັ້ນເນາະ ທີ່ເຮັດໃຫ້ເຈົ້າເຊື່ອຖືໄດ້ ແຕ່ກ່ຽວ

ກັບເລື່ອງນັ້ນບໍ່ອາດຕັດສິນໄດ້ດ້ວຍການໂອ້ລົມສົນທະນາຄັ້ງໜຶ່ງຄັ້ງດຽວໄດ້ດອກ. ເຈົ້າຈະເຊົາຢູ່ນີ້ດົນບໍ່?

- ສອງມື້.

- ຄັກແລ້ວຊັ້ນ, ເຈົ້າມີວິທີການຮ້ອຍແປດພັນແນວທີ່ຈະເຮັດ, ສົ້ງຊອມໂອ້ລົມກັບພວກເດັກນ້ອຍເອງ, ເຈົ້າອາດຈະກິນເຂົ້າຮ່ວມພາ ເຮັດວຽກນຳພວກເຂົາ ແລ້ວກໍເຊີນສະຫລູບກອດກອນທຸກສິ່ງທຸກຢ່າງທີ່ເຈົ້າຄຶດວ່າຖືກ, ເຈົ້າອາດຈະຂຽນບົດສະຫລູບທີ່ຍາວທີ່ສຸດ ແລະ ບ່ງວິທີການໜຶ່ງທີ່ເຈົ້າເຫັນວ່າຄັກໄວ້ໃຫ້ຂ້ອຍ, ນັ້ນແມ່ນສິດຂອງເຈົ້າ ແຕ່ຂ້ອຍຈະເຮັດໄປຕາມແບບທີ່ຂ້ອຍເຫັນວ່າເປັນປະໂຫຍດ ແລະ ດີນີ້ຕໍ່ໄປ, ຂ້ອຍບໍ່ສາມາດສຶກສາອົບຮົມເດັກນ້ອຍໂດຍບໍ່ມີການລົງໂທດ, ຂ້ອຍຍັງຕ້ອງການຮ່ຳຮຽນສິລະປະອັນນີ້ອີກຢູ່.

ລີວບົບ ຊາເວເລັບນາ ບໍ່ໄດ້ພັກເຊົາຢູ່ນຳພວກເຮົາແຕ່ສອງມື້ແຕ່ນາງຢູ່ຮອດສີ່ມື້, ຂ້າພະເຈົ້າເອງເກືອບວ່າບໍ່ເຫັນນາງເລີຍ, ພວກເດັກນ້ອຍເວົ້າເຖິງນາງວ່າ:

- ໂອ່... ອີ່ນາຍນີ້ຫວະ ພິລຶກໃດ໋, ລາວເຂົ້າໃຈໝົດຊູ່ອັນ.

ໃນລະຍະທີ່ນາງມາພັກຢູ່ນີ້ຄືນນີ້, ເວັດກົບສະກີ ໄດ້ມາພົບຂ້າພະເຈົ້າ ແລະ ເວົ້າວ່າ:

- ຂ້ອຍຊິໄປຈາກນີ້ຄືນ, ອານໂຕນ ເຊມີວໂນວິດ.

- ໄປໃສລະ?

- ຂ້ອຍອາດຈະຊອກວຽກໄດ້ບ່ອນໃດບ່ອນໜຶ່ງ, ຢູ່ນີ້ບໍ່ມີຫຍັງໜ້າສົນໃຈ, ຂ້ອຍຈະບໍ່ໄດ້ໄປເຂົ້າມະຫາວິທະຍາໄລກຳມະກອນ

ດອກ ແລະ ຂ້ອຍກໍບໍ່ຢາກເປັນຊ່າງໄມ້, ຂ້ອຍຢາກໄປທ່ຽວເລາະເບິ່ງໂລກອີກ.

- ແລ້ວຕໍ່ໄປເດ້?

- ຕໍ່ໄປຂ້ອຍຍັງບໍ່ຮູ້, ໃຫ້ໃບຫນັງສືພັກຂ້ອຍແດ່.

- ເອີ... ມື້ແລງມີກອງປະຊຸມສະພານາຍກອງ, ໃຫ້ສະພາຕັດສິນວ່າຈິໃຫ້ໂຕໄປຫລືບໍ່.

ຢູ່ໃນກອງປະຊຸມສະພານາຍກອງ ໂກສເຈຍ ເວັດກອບສະກີວາງທ່າທີບໍ່ຄັກປານໃດ ແລະ ພະຍາຍາມຕອບຄຳຖາມຕາມຮູບການເທົ່ານັ້ນ.

- ເຮົາບໍ່ມັກຢູ່ນີ້ ແລ້ວໃຜຈິບັງຄັບເຮົາຊັ້ນຫວະ? ເຮົາຈິໄປບ່ອນທີ່ເຮົາຕ້ອງການ, ເຮົາຈິເຮັດຫຍັງມັນເລື່ອງຂອງເຮົາ, ບາງທີເຮົາອາດຈິລັກ...

ກູດລາຕີ ໂມໂຫຂຶ້ນ:

- ແມ່ນຫຍັງເກາະ? ໂຕວ່າບໍ່ແມ່ນເລື່ອງຂອງພວກເຮົາວ່າຕີ? ໂຕຈິໄປລັກ ແລ້ວຍັງວ່າບໍ່ແມ່ນເລື່ອງຂອງພວກເຮົາອີກຊັ້ນຫວະ? ແລ້ວຄັນເຮົານີ້ເດ້ ເຮົາຟາດປາກໂຕຈັກບາດແລ້ວຍ້າຍໂຮງສີໂຕເພື່ອບໍ່ໃຫ້ໂຕເສກສັນປັ້ນເລື່ອງແບບນີ້ອອກມາເດ້ ແລ້ວໂຕກະຍັງຈິຄຶດຢູ່ເບາະວ່າ ມັນບໍ່ແມ່ນເລື່ອງຂອງພວກເຮົາ?

ລີວບີບ ຊາເວເລັບນາ ຫນ້າຈືດລ່າເຂົ້າ ຢາກຈະເວົ້າອັນໃດອັນຫນຶ່ງອອກມາແຕ່ບໍ່ທັນໄດ້ເວົ້າ, ພວກເດັກນ້ອຍພິດຮ້ອນຂຶ້ນ ຮ້ອງດ່າ ເວັດກົບສະກີ ສຽງອຶງຄະນຶງ, ໂວໂລຄອບ ຢືນເດັ່ນຕໍ່ຫນ້າຫມໍ ຮ້ອງໃສ່ວ່າ:

- ມີແຕ່ຊິສົ່ງໂຕໄປໂຮງຫມໍເທົ່ານັ້ນແລ້ວ, ເອົາຫນັງສືສົ່ງໃຫ້ມັນຫວະ! ເອີ... ໂຕເຄີຍເຫັນຫວະ! ຊັ້ນກໍບອກຄວາມຈິງມາສາ... ໂຕຊິໄປເຮັດວຽກອັນໃດ?

ກູດ ນັ້ນຂຶ້ນແຮງກວ່າຫມູ່ເລີຍ:

- ຢູ່ນີ້ມີກຳແພງອ້ອມຊັ້ນຫວະຣື! ບໍ່ເລີຍ ບໍ່ມີຫຍັງຊ້ຳ ໃນເມື່ອວ່າໂຕເປັນຄົນຈ້າ - ຊິວປານນີ້ກໍເຊີນໂລດແຫລ້ວ ຫລືໂຕຄຶດວ່າພວກເຮົາຊິຕີມາບັກນ້ອຍ ແລ່ນນຳກົ້ນອ້ອນວອນໂຕຄືນມາຊັ້ນຫວະ? ຈ້າງກູ້ອນ, ຈ້າງເທາະແມ້ ຊິມີໃຜແລ່ນນຳ, ໂຕຢາກໄປໃສກໍເຊີນໂລດ. ເປັນຫຍັງໂຕຈຶ່ງມາຢູ່ນີ້?

ລາປິດ ຈັດການອັດການອະພິປາຍວ່າ:

- ພວກເຈົ້າສະແດງຄວາມຄຶດຄວາມເຫັນພໍແລ້ວ, ໂກສເຈຍເອີຍເລື່ອງມັນຈະແຈ້ງແລ້ວ, ພວກເຮົາບໍ່ເຮັດຫນັງສືລາພັກໃຫ້ໂຕດອກ.

ໂກສເຈຍ ກົ້ມຫົວລົງ, ກັດແຂ້ວ ເວົ້າວ່າ:

- ບໍ່ໃຫ້ກໍບໍ່ເອົາ, ເຮົາຊິໄປຢ່າງບໍ່ມີຫນັງສືຫຍັງຫມົດກໍໄດ້. ເອົາເງິນຄ່າເດີນທາງໃຫ້ເຮົາຈັກ ໑໐ ອຸບແດ່.

- ໃຫ້ມັນບໍ່ຫມູ່? ລາປິດຮ້ອງຖາມຜູ້ອື່ນໆ.

ທຸກຄົນມິດງຽບ, ນາງຊູກຣິນສະກາຍຢາ ຕັ້ງໃຈຟັງ, ຫລັບຕາຫົວເທົ້ງໃສ່ເບາະຮອງດ້ານຫລັງຂອງຕັ່ງນວມຍາວ, ໂກວານເວົ້າຂຶ້ນວ່າ:

- ມັນສະເຫນີຕໍ່ກອງປະຊຸມກົມໂຊໂມນ ກໍເລື່ອງດຽວນີ້ແລ້ວ,

ພວກເຮົາໄລ່ຫມໍອອກຈາກກົມໂຊໂມນແລ້ວ, ແວ່ວ່າເງິນສິບຮຸບນີ້ໃຫ້ຫມໍໄປສາເນາະ.

- ກືກແລ້ວ, ໃຜຜູ້ຫນຶ່ງຮ້ອງຂຶ້ນ, - ນ້ຳຫນ້າ ໑໐ ຣຸບ ໂຍນກົ້ມກໍຍັງໄດ້.

ຂ້າພະເຈົ້າດຶງກະເປົາເງິນອອກມາ.

- ຂ້ອຍຈິໃຫ້ມັນ ໔໐ ຣຸບ, ເຮັດໃບຮັບມາ.

ທ່າມກາງຄວາມມິດສະຫງັດໃນຫ້ອງ, ໂກສເຈຍ ຂຽນໃບຮັບເງິນ, ຮັບເອົາເງິນໄປຍັດໃສ່ກົງສົງ ດຶງຫມວກແງັບອອກມາໃສ່ແລ້ວສັ່ງວ່າ:

- ລາກ່ອນເດີ້ ພັກພວກ!

ບໍ່ມີໃຜຕອບຄຳສັ່ງລາຂອງຫມໍ, ມີແຕ່ ລາປິດ ຄົນດຽວລຸກຄາດລາດຂຶ້ນຈາກຕັ່ງນັ່ງ ແລ້ວຮ້ອງໃສ່ ໂກສເຈຍ ທີ່ກ້າວຂາໄປຮອດປາກປະຕູອອກແລ້ວ:

- ເຮີ້ຍ, ໂຕ ບັກຫລ້າ, ຍາມໃດທ່ຽວຫລິ້ນຫມົດເງິນ ໔໐ ຣຸບແລ້ວ ເຊີນກັບມານີ້ຄືນໂລດເດີ້, ບໍ່ຕ້ອງກົງວົນຫຍັງຫມົດ, ໂຕມາເຮັດວຽກແທນເງິນຈຳນວນນັ້ນເອົາ!

ພວກນາຍກອງແຍກຍ້າຍກັນໄປດ້ວຍອາລົມຂຸ່ນມົວ. ລີວບີບຊາເວເລັບນາໄດ້ສະຕິ ຈຶ່ງເວົ້າວ່າ:

- ໂອີຍ... ຈັ່ງແມ່ນເປັນຕາຢ້ານ! ຕ້ອງເວົ້າກັບມັນດີໆໃດ໋ ຫມໍນ້ອຍນັ້ນນ່າ...

ນາງມິດໄປຊົ່ງຄຶດຊົ່ງລົງ ແລ້ວເວົ້າວ່າ:

- ແຕ່ວ່າສະພາບາຍກອງພວກເຈົ້າ ຈັ່ງແມ່ນເຂັ້ມແຂງພິລຶກ ດອກ... ເດັກນ້ອຍຫມູ່ນີ້ກະດາຍ!

ພໍດີ່ມາບາງກໍອອກເດີນທາງແຕ່ເຊົ້າ, ອານໂຕນ ບຣາເຊັນໂກ ຂັບກວຽນເລື່ອນມາ, ເທິງພື້ນເລື່ອນມີຫຍ້າແຫ້ງເປື້ອນ ແລະ ເສດເຈ້ຍຢາຍຊະ, ເມື່ອນາງລິວບິບ ຊາເວເລັບນາ ຂຶ້ນໄປນັ່ງຮຽບ ຮ້ອຍແລ້ວ ຂ້າພະເຈົ້າເວົ້າກັບ ອານໂຕນວ່າ:

- ເປັນຫຍັງຈຶ່ງເປື້ອນອະຍະແນວນີ້ຣີ?

- ຂ້ອຍບໍ່ມີເວລາ, ອານໂຕນ ຕອບສຽງໃນແຂ້ວ ທັງຫນ້າ ແດງ.

- ຢູ່ຫ້ອງຂັງຈີນຮອດຍາມກູຄືນມາເດີ້!

- ຈ້າວ, ອານໂຕນ ຕອບ ທັງກອຍຫ່າງອອກຈາກກວຽນ ເລື່ອນ, - ຢູ່ຫ້ອງການແມ່ນບໍ່?

- ເອີ!

ອານໂຕນ ຍ່າງມຸ່ງຫນ້າໄປຍັງຫ້ອງການຊ້າ ໆ, ເຈັບປວດ ຫົວໃຈຍ້ອນຄວາມເຄັ່ງຄັດຂອງຂ້າພະເຈົ້າ ແລ້ວພວກເຮົາກໍອອກ ຈາກນິຄົມມາມິດໆ ຈົນມາຮອດສະຖານີລົດໄຟພີ້ ລິວບິບ ຊາເວ ເລັບນາ ຈຶ່ງເອົາແຂນຂອງນາງມາຄ້ອງແຂນ ຂ້າພະເຈົ້າ ແລະ ເວົ້າ ວ່າ:

- ເຊົາເຮັດໃຈຫ້ຽມເທາະ, ເຈົ້າມີລະບົບດໍາລົງຊີວິດໂຮມຫມູ່ ທີ່ຄັກຫລາຍ; ຂ້ອຍຈົນງົງງວາໄປຫມົດ... ວ່າແຕ່ວ່າ... ເຈົ້າແນ່ ໃຈແທ້ງເບາະວ່າ ດຽວນີ້ທ້າວອານໂຕນ ນັ້ນມັນຍັງຢູ່ໃນຫ້ອງຂັງ?

ຂ້າພະເຈົ້າເບິ່ງນາງດ້ວຍຄວາມຕ່າງໃຈ:

-ອານໂຕນ ເປັນຜູ້ກຶກງດສັກສີຄົນຫນຶ່ງ, ແນ່ນອນວ່າມັນຍັງຢູ່ໃນຫ້ອງຂັງ, ແຕ່ວ່າເວົ້າໂດຍທົ່ວໄປແລ້ວ ພວກເຂົາກໍຫາກປ່າເກືອນຢູ່ດອກ.

-ຢ່າ, ຢ່າເວົ້າແນວນີ້ເລີຍ, ນີ້ມັນແມ່ນຍ້ອນທ້າວ ໂກສເຈຍຜູ້ດຽວນັ້ນແມ່ນບໍ່? ຂ້ອຍເຊື່ອແນ່ວ່າມັນຈືກັບຄືນມາ ແຕ່ອັນທີ່ຫນ້າສົນໃຈກໍແມ່ນຄວາມພົວພັນລະຫວ່າງຄົນກັບຄົນ ຢູ່ໃນນິຄົມຂອງເຈົ້າ, ແລ້ວຫມໍ ໂກສເຈຍ ນັ້ນກໍພິລຶກກວ່າຫມູ່.

ຂ້າພະເຈົ້າຫັນໃຈໃຫຍ່ ແລະ ບໍ່ຕອບຫຍັງ.

ບົດທີ ໑໓

ເບື້ອງຫລັງຂອງຄວາມຮັກແລະບົດກະວີ

ປີ ໑໙໔໘ ມາເຖິງແລ້ວ, ມັນເລີ່ມຂຶ້ນຢ່າງບໍ່ຫນ້າອອນຊອນເລີຍ.

ໂອປຣິສໂກ ປະກາດຕໍ່ສະພານາຍກອງວ່າ ເຂົາຢາກແຕ່ງດອງແຕ່ວ່າພໍ່ເຖົ້າລູກາເຊັນໂກບໍ່ຍິນຍອມຕົກລົງຍົກ ມາຣູດເຊຍ ໃຫ້ ກໍ່າວ່າທາງນິຄົມບໍ່ໃຫ້ຂອງຂວັນມີຄ່າເທົ່າກັບທີ່ໃຫ້ນາງໂອເລຍ ໂວໂຣໂນວາ ມາແລ້ວ, ກໍາວ່າມີຂອງຂວັນດັ່ງກ່າວພໍ່ເຖົ້າ ລູກາເຊັນໂກຈຶ່ງຈະຮັບເອົາເຂົາໄປຢູ່ເຮືອນນໍາ ແລ້ວຈະເຮັດນາຮ່ວມກັນ.

ຢູ່ໃນກອງປະຊຸມສະພານາຍກອງ ໂອປຣິສໂກ ຫລິ້ນບົດບາດຕົວລະຄອນຫນ້າຊັງ ຜູ້ສືບທໍລະດົກຂອງເຖົ້າ ລູກາເຊັນໂກ ແລະບຸລຸດຜູ້ມີການະດີໄດ້ຢ່າງຄ່ອງຄື.

ພວກນາຍກອງພາກັນມິດ ເພາະບໍ່ຮູ້ວ່າຈະຕັດສິນບັນຫານີ້ແບບ

ໃດ ໃນທີ່ສຸດລາປິດ ທີ່ບັງເອີນມີສີດຳແຫ່ງຫນຶ່ງຢູ່ໃນມື ຈຶ່ງເອົາປາຍສໍຊີ້ໃສ່ ໂອປຣິສໂກ ແລ້ວເວົ້າຄ່ອຍ ໆ ວ່າ:

- ເປັນຊັ້ນເນາະ ດີມິຕຣີ, ແລ້ວໂຕລະ ໂຕຄຶດແນວໃດ? ໂຕຊິໄປຢູ່ນຳພໍ່ເກົ່າ ລູກາເຊັນໂກ ມັນກໍຫມາຍຄວາມວ່າໂຕຊິໄປເປັນປະຊາຊົນແມ່ນບໍ່?

ໂອປຣິສໂກ ເຫລືອດຕາເບິ່ງ ລາປິດ ຍິ້ມແບບເຍີຍວ່າ:

- ເປັນປະຊາຊົນ ຫລືແນວໃດກໍໄດ້ຕາມໃຈໂຕ.

- ຕາມຄວາມເຫັນຂອງໂຕແລ້ວ ຊິເປັນແນວໃດ?

- ແລ້ວຫາກຈະເຫັນ ເມື່ອເຖິງເວລາ!

- ເອົາລະ, ລາປິດ ເວົ້າຂຶ້ນ, ມີໃຜຢາກປະກອບຄວາມເຫັນແດ່?

ໂວໂລຄອບ ຫົວຫນ້າກອງທີ ໖ ເປັນຜູ້ເວົ້າ:

- ແມ່ນຢູ່ວ່າ ພວກຜູ້ຊາຍເຮົາແຕ່ລະຄົນຄຶດຫາທາງສ້າງຊີວິດຕົນເອງ, ບໍ່ມີໃຜຊິຢູ່ນິຄົມໄປຈົນຕາຍ ແລ້ວພວກເຮົາມີວິຊາຊີບດົງອັນໃດແດ່? ສຳລັບຜູ້ເຮັດວຽກຢູ່ກອງທີ ໖, ທີ ໔ ຫລືທີ ໙ ນັ້ນແຄນແດ່ ພວກເຂົາອາດຈະເປັນຊ່າງຕີເຫລັກ, ຊ່າງໄມ້ ຫລືຊ່າງສີເຂົ້າ ແຕ່ກອງທີ່ເຮັດວຽກກະເສດນີ້ດ ບໍ່ມີວິຊາສະເພາະອັນໃດເລີຍ, ໃນກໍລະນີນີ້ ໃຜຢາກເປັນຊາວນາກໍແມ່ນເລື່ອງຂອງມັນເອງ ແຕ່ວ່າກໍລະນີຂອງ ໂອປຣິສໂກນີ້ ຄືວ່າບໍ່ຄັກປານໃດເອີ້ຍ. ໂຕເປັນກົມໂຊໂມນແມ່ນບໍ່?

- ເອີ້ ເປັນ, ແລ້ວຊິເປັນຫຍັງລະຄັນເຮົາເປັນກົມໂຊໂມນນະ?

- ເຮົາຫວະ? ໂວໂລຄອບ ເວົ້າຕໍ່, - ເຮົາຄຶດວ່າກ້າຍຶກບັນຫານີ້ຂຶ້ນໃນກອງປະຊຸມກົມໂຊໂມນກ່ອນຄືຈະດີກວ່າ ສະພາບາຍກອງຢາກຮູ້ວ່າ ອົງການກົມໂຊໂມນມີຄວາມເຫັນແນວໃດຕໍ່ເລື່ອງນີ້.

- ຫ້ອງການກົມໂຊໂມນໃຫ້ທັດສະນະຂອງມັນໄປແລ້ວ, ໂກວານເວົ້າຂຶ້ນ, - ນີຄົມບໍ່ມີຫນ້າຫລັງເກືອພວກຊາວນາຮັ່ງ, ລູກາເຊັນໂກ ເປັນຊາວນາຮັ່ງ.

- ຊາວນາຮັ່ງວ່າຕີ? ໂອປຣິສໂກ ຮ້ອງຄັດຄ້ານ, ຍ້ອນລາວມີເຮືອນມຸງສັງກະສີຫັ້ນກໍເອີ້ນວ່າຊາວນາຮັ່ງແລ້ວຊັນຫວະ?

- ແຕ່ລາວມີມ້າສອງໂຕແມ່ນບໍ່?

- ເອີ້ ສອງໂຕ.

- ມີບ່າວນາຄົນຫນຶ່ງ ແມ່ນບໍ່?

- ບໍ່ມີບ່າ.

- ແລ້ວ ເຊຣິໂອຊາ ຫັ້ນເດ?

- ເຊຣິໂອຊາ ຫັ້ນ ທາງພະແນກສຶກສາປະຊາຊົນມອບໃຫ້ລາວລ້ຽງ, ມັນມາແຕ່ເຮືອນເດັກກໍ່ພ້າ, ເພິ່ນເອີ້ນວ່າເປັນຜູ້ດູແລຫັ້ນບ່າ.

- ມັນກໍອັນດຽວກັນນັ້ນແລ້, ໂກວານເວົ້າຕໍ່, - ແມ່ນມັນມາແຕ່ພະແນກສຶກສາປະຊາຊົນຫລືບໍ່ມັນກໍເປັນບ່າວນາຫັ້ນລະ.

- ແຕ່ວ່າ ຄົນເພິ່ນໃຫ້ລາວມາ...

- ເຖິງວ່າເພິ່ນໃຫ້ ຄົນໂຕເປັນຄົນດີກໍບໍ່ຮັບເອົາຈັກຄົນ...

ໂອປຣິສໂກ ບໍ່ຄາດເລີຍວ່າຕົນຈະໄດ້ຮັບການຕ້ອນຮັບແບບນີ້, ຫມໍເວົ້າສຽງຊຸ່ນ ໆ ວ່າ:

- ເປັນຫຍັງພວກເຈົ້າຈຶ່ງເວົ້າແນວນີ້? ບາດຫີ ໂອເລຍ ພວກເຈົ້າໃຫ້...

ໂກວານ ຕອບວ່າ:

- ຂໍ້ທີຫນຶ່ງ, ເລື່ອງຂອງໂອເລຍ ຕ່າງກັບເລື່ອງຂອງໂຕ, ໂອເລຍ ເອົາກັບໄຫເຮົາເອງ ແລະ ດຽວນີ້ປາແວນ ກັບ ໂອເລຍ ກໍເຂົ້າມາຢູ່ໃນກອມມູນແລ້ວ, ຊັບສິນບັດຂອງພວກເຮົາຈະຖືກຊີມໃຊ້ຢ່າງເຫມາະສົມ. ຂໍ້ທີສອງ, ເວລາ ໂອເລຍຢູ່ກັບພວກເຮົາລາວເປັນສະມາຊິກນິຄົມແບບບໍ່ຄືກັບໂຕ, ຂໍ້ທີສາມ, ພວກເຮົາບໍ່ສົນໃຈວ່າຈະອຸດຫນູນລ້ຽງດູພວກຊາວນາຮັ່ງ.

- ແລ້ວຊິໃຫ້ເຮົາເຮັດແນວໃດຊັ້ນ ບາດນີ້?

- ແລ້ວແຕ່ໃຈໂຕ.

- ບໍ່, ບໍ່ໄດ້ດອກແບບນີ້. ສະຕູບິດຊິນເວົ້າຂຶ້ນ, - ຖ້າວ່າພວກເຂົາມັກກັນກໍໃຫ້ພວກເຂົາເອົາກັນ, ກໍຕ້ອງໃຫ້ມີຫຍັງແດ່ຈັກເລັກຈັກຫນ້ອຍແກ່ ດີມີຕຣີ, ໃນເງື່ອນໄຂວ່າຫມໍຕ້ອງໄປຢູ່ກອມມູນ ບໍ່ແມ່ນໄປຢູ່ເຮືອນເກົ່າ ລູກາເຊັນໂກ. ຢູ່ພຸ້ນ ໂອເລຍຄືຊິຊ່ອຍໃຫ້ທຸກຢ່າງເຂົ້າຮູບເຂົ້າຮອຍງ່າຍໆດອກ.

- ພໍ່ຂອງມາຣູດເຊຍບໍ່ຍອມໃຫ້ນາງໄປດອກ.

- ມາຣູດເຊຍ ບໍ່ຕ້ອງໄປສົນໃຈນຳພໍ່ຂອງນາງອີກ.

- ລາວເຮັດແນວນັ້ນບໍ່ໄດ້ດອກ.

- ຄັນເປັນແນວນັ້ນກໍຫມາຍຄວາມວ່າ ນາງບໍ່ມັກໂຕຫລາຍພໍປານໃດ... ນາງເປັນຊາວນາຮັ່ງເດ້.

- ແລ້ວມັນເລື່ອງຫຍັງຂອງໂຕລະ ນາງຊິມັກ ຫລືບໍ່ມັກເຮົານະ?

- ກະໂຕຕ່ອນມັນແລ້ວ, ມັນກ່ຽວກັບເຮົາໂດຍກົງເລີຍລະ, ມັນຫມາຍຄວາມວ່ານາງເອົາກັບໂຕຍ້ອນເລື່ອງຜົນປະໂຫຍດ... ກ້າຫາກວ່ານາງມັກໂຕ...

- ນາງອາດຊິມັກກັນຢູ່ ແຕ່ນາງຕ້ອງຟັງຄວາມພໍ່, ຈັ່ງຊັ້ນຈຶ່ງບໍ່ສາມາດເຂົ້າໄປຢູ່ໃນກອມມູນໄດ້.

- ກ້າວ່ານາງໄປຢູ່ບໍ່ໄດ້ ກໍບໍ່ຈຳເປັນມາຄຶດກັບຈິນຫົວຊິແຕກຢູ່ສະພານາຍກອງແບບນີ້! ກູດລາຕີ ຕອບໂຕ້ຄືນຢ່າງແຮງໆ, - ໂຕຢາກໄປຢູ່ນຳຊາວນາຮັ່ງ ແລະເກົ້າ ລູກາເຊັນໂກ ນັ້ນກໍຢາກໄດ້ລູກເຂີຍຮັ່ງໄປຢູ່ໃນເຮືອນນຳພໍດີກັນແລ້ວເດ້ ແລ້ວມັນກ່ຽວຫຍັງກັບພວກເຮົາ? ອັດກອງປະຊຸມ...

ລາປິດ ຫົວເຣັດປາກຈິກຮອດກົກຫູດ້ວຍຄວາມພໍໃຈ:

- ເຮົາປະກາດອັດກອງປະຊຸມ ເນື່ອງຈາກວ່າຄວາມຮັກຂອງມາຣູດເຊຍເປົາບາງໂພດ...

ໂອປຣິສໂກ ເຫງົາງຽບໄປ ຫມໍ່ລ່ອງລອຍຢູ່ໃນນິຄົມພໍປານໂງ່ນເມກເພື່ອຊອກເກາະພົດກັບພວກເດັກນ້ອຍໆ ມື້ຕໍ່ມາມັນກິນເຫລົ້າເມົາອາລະວາດຢູ່ໃນຫໍພັກ. ສະພານາຍກອງໄຂກອງປະຊຸມເພື່ອຕັດສິນໂທດລອງ ໂອປຣິສໂກ ໃນຂໍ້ຕູ່ຫາກິນເຫລົ້າເມົາ.

ທຸກຄົນນັ່ງຢ່າງງຽບເຫງົາເສົ້າໃຈ ແລະ ໂອປຣິສໂກ ຜູ້ຫນ້າຫມອງມົວຢືນເອື່ອຍຝາ, ລາປິດ ເວົ້າຂຶ້ນວ່າ:

- ເຖິງໂຕເປັນນາຍກອງກໍຕາມ ແຕ່ເມື່ອຖືກເກາະຕົວມາຍ້ອນເລື່ອງສ່ວນຕົວໂຕຕ້ອງມາຢືນຢູ່ກາງຫ້ອງພີ້.

ເປັນປະເພນີຢ່າງຫນຶ່ງຢູ່ໃນນິຄົມຂອງພວກເຮົາ ທີ່ຜູ້ເປັນຈຳເລີຍຕ້ອງມາຢືນຢູ່ກາງຫ້ອງ.

ໂອປຣິສໂກ ເລື່ອນແສງຕາເຫງົາເສົ້າຂອງມັນໄປສູ່ໃບຫນ້າຂອງປະທານສະພາ ແລະ ເວົ້າຢູ່ໃນແຂ້ວວ່າ:

- ຂ້ອຍບໍ່ໄດ້ລັກຫຍັງ ຂ້ອຍບໍ່ໄປຢືນກາງຫ້ອງດອກ.

- ພວກເຮົາຊິພາໂຕໄປຢືນເອງ, ລາປິດ ເວົ້າຄ່ອຍໆ.

ໂອປຣິສໂກ ກວາດແສງຕາໄປຮອບໆສະມາຊິກສະພາ ແລະ ເຂົ້າໃຈເອົາເອງວ່າ ມັນຈະຕ້ອງຖືກຍ້າຍບ່ອນແທ້ ຈຶ່ງກອຍອອກຈາກຝາແລ້ວກ້າວໄປຢືນຢູ່ກາງຫ້ອງ.

- ເອົາລະ ດີແລ້ວ.

- ຢືນໂຕກົງເວີ້ຍ, ລາປິດ ອອກຄຳສັ່ງ.

ໂອປຣິສໂກ ຍົກບ່າໄຫລ່ ຍິ້ມຢ່າງຂົມຂື່ນຄຽດແຄ້ນ ແຕ່ກໍຢຽດແຂນຕັ້ງຕົວໃຫ້ຊື່.

- ບັດນີ້ເຊີນບອກພວກເຮົາມາເບິ່ງດູວ່າ ດ້ວຍເຫດໃດໂຕຈຶ່ງບັງອາດກິນເຫລົ້າເມົາມາຍ ແລ້ວອາລະວາດຢູ່ຫໍພັກໄດ້? ໂຕ ເຊິ່ງເປັນກົມໂຊໂມນ, ເປັນນາຍກອງ ເປັນຊາວນິຄົມຄົນຫນຶ່ງ, ເວົ້າມາ!

ໂອປຣິສໂກ ເປັນອ້າຍບ່າວນ້ອຍຊຶ່ງມີພຶດຕິກຳຊ້ອນຄູ່ກັນມາແຕ່

ດິນແລ້ວ, ຖ້າໂອກາດອຳນວຍຫມໍຈະບໍ່ປະລະເລີຍ, ຫມໍສະແດງຕົວເປັນຜູ້ຕໍ່ຕ້ານ, ລວນລາມຫນ້າດ້ານ, "ບໍ່ເອົາຫົວຊາຫຍັງຫມົດ" ແຕ່ໃນຕົວຈິງ ລ້ວນແຕ່ທຳທຸກຢ່າງແບບຫລັກແຫລມຄືນັກການທູດຫລ່ຽມສູງ. ພວກເດັກນ້ອຍຮູ້ຈັກຫມໍດີ ຍ້ອນແນວນີ້ ທ່າທີຍອມຈຳນົນຂອງເຂົາຕໍ່ສະພານາຍກອງ ຈຶ່ງບໍ່ເຮັດໃຫ້ໃຜຕ່າງໃຈເລີຍ. ໂຈຣາ ໂວນກອບ, ຫົວຫນ້າກອງທີ ໗ ທີ່ຫາກໍໄດ້ຮັບແຕ່ງຕັ້ງແທນ ເວັດກອບສະກີ ໃຫມ່ໆ ຍົກແຂນຊີ້ໄປທາງໂອປຣິສໂກ ແລ້ວເວົ້າວ່າ:

-ບັດນີ້ຫມໍກໍເລີຍເປັນນັກບຸນນ້ອຍໆອົງຫນຶ່ງ, ປ່ຽນນິໄສໃຈຄໍຫມົດແລ້ວ ແຕ່ມື້ອື່ນເດີ້ເພິ່ນຊິສະແດງບົດພະເອກອີກ.

-ບໍ່, ໃຫ້ຫມໍອະທິບາຍມາ! ອົດຊາຈິ ເວົ້າກັດແຂ້ວ.

-ເຮົາບໍ່ມີຫຍັງແກ້ໂຕ ເຮົາຜິດໄປແລ້ວ.

-ບໍ່, ໂຕຕ້ອງເວົ້າອອກມາວ່າ ເຮັດແນວໃດໂຕຈຶ່ງບັງອາດກ້າຫານປານນີ້.

ໂອປຣິສໂກເຮັດແສງຕາສຳອອຍ ອໍເຊາະເຈາະຈິງ, ວາມືອອກແບບຍອມຮັບຜິດວ່າ:

-ຊິມີຄວາມບັງອາດກ້າຫານອິ່ສັງຢູ່ນັ້ນ? ເຮົາກິນເຫລົ້າຍ້ອນຄວາມທຸກໃຈ, ຈັ່ງຊັ້ນຄົນເມົາແລ້ວຊິໄປຮູ້ເມື່ອຫຍັງ.

-ໂອ່... ເປັນຈັ່ງຊັ້ນຫວະ? ອານໂຕນ ເວົ້າ, -ໂຕຊິຕ້ອງຮັບ. ເຊື່ອ ໂລດວ່າໂຕເຂົ້າໃຈຜິດຢ່າງໃຫຍ່ເລີຍລະ ຖ້າໂຕຄືດວ່າໂຕຊິບໍ່ມີຜິດຫຍັງ, ໂຕຊິຖືກໄລ່ອອກຈາກນິຄົມ ໂດຍສະເພາະຜູ້ທີ່ກິນເຫລົ້າຈະບໍ່ໄດ້ຮັບຄວາມເວດທະນາປານີໃດໆ!

- ເສັດ ບາດນີ້, ມັນຈິເຮັດແນວໃດຈຶ່ງ, ເກອໍເກັບສະກີ ເວົ້າເຮັດຕາດີ, - ມັນຈິໄປຫລີ້ງທາງແລ້ວ.

- ເຊີນມັນຫລີ້ງໄປເທາະແມ້.

- ໂຢ້ວ ມັນເຮັດໄປຍ້ອນຄວາມທຸກຫມົກທຸກໃຈນ່າ! ແມ່ນພວກໂຕພາກັນກວນມັນເຮັດຫຍັງ, ມັນມີຄວາມທຸກຈິຕາຍພວກໂຕຍັງຈິຫາເລື່ອງກັນຢູ່ໃນສະພາບາຍກອງອີກເນາະ! ອີດຊາຈີ ເວົ້າຂຶ້ນ ທັງເສືອກແສງຕາເຍາະເຍີ້ຍແບບເປີດເຜີຍໃສ່ວາດທ່າຈິງໃຈບຸນຂອງ ໂອປຣີສໂກ.

- ແລ້ວພໍ່ເກົ້າ ລູກາເຊັນໂກ ກໍຈະບໍ່ຮັບເອົາມັນແລ້ວ ຄັນບໍ່ມີສົມບັດນະ, ຕາຣາແບັດ ເວົ້າເສີມ.

- ແລ້ວມັນກ່ຽວຫຍັງກັບພວກເຮົາລະ! ອານໂຕນ ຮ້ອງຂຶ້ນ,- ກ້າວ່າລາວບໍ່ຮັບເອົາມັນ ຫມໍ ໂອປຣີສໂກ ກໍຄວນໄປຊອກຫາຢູ່ກັບຊາວບາຮັ່ງອີກຜູ້ໃຫມ່...

- ເປັນຫຍັງຈຶ່ງໄລ່ມັນຫນີລະ? ເກອໍເກັບສະກີ ເລີ່ມເວົ້າຂຶ້ນຄ່ອຍໆ, - ມັນກໍແມ່ນສະມາຊິກເກົ່າແກ່ຄົນຫນຶ່ງຂອງນິຄົມ, ມັນເຮັດຜິດໄປແລ້ວ ແມ່ນແທ້ແຕ່ມັນກໍສາມາດແກ້ໂຕໄດ້ຢູ່ເດ້, ພວກເຮົາຄວນເຫັນຄວາມຮັກຂອງພວກເຂົາສໍາຄັນແດ່, ຄວາມຮັກລະຫວ່າງຫມໍ ກັບ ມາຣູດເຊຍ ຫັ້ນນ່າ, ຊ່ອຍພວກເຂົາຕາມຄວາມສາມາດຂອງພວກເຮົານັ້ນແລ້ວ.

- ມັນເປັນລູກກໍາພ້າກໍາພອຍຫລະ? ລາປິດ ກາມຢ່າງປະຫລາດໃຈແຮງ, - ແລ້ວເປັນຫຍັງມັນຈຶ່ງຈິແກ້ໂຕຢູ່ລະ? ມັນແມ່ນສະມາຊິກນິຄົມ.

ຊະແປແດກ ນາຍກອງຄົນໃຫມ່ຂອງກອງທີ ໘ ທີ່ຮັບຕໍາແຫນ່ງແທນ ກາຣາບານົບ ຜູ້ນໍາຫນ້າຫນ່ວຍວິລະຊົນຫນ່ວຍນີ້ລຸກຂຶ້ນເວົ້າ. ຢູ່ໃນກອງທີ ໘ ມີຫລາຍຄົນຢູ່ ທີ່ເຂັ້ມແຂງດີ ເຊັ່ນ ເຟໂດເຣັນໂກ ແລະ ໂກຣີໂຕ. ພາຍໃຕ້ການນໍາຂອງ ກາຣາບານົບ ນັ້ນ ຄວາມແຫລມຄົມໃນບຸກຄະລະພາບອັນແຂງດ້ານຂອງພວກເຂົາຖືກຂູດເກົາໃຫ້ປູ້ບ່ານລົງຢ່າງເຫັນໄດ້ຄັກ. ກາຣາບານົບ ຮູ້ຈັກຫມູນໃຊ້ພວກເຂົາເຂົ້າໃນວຽກງານທຸກແບບທຸກແນວ ແລະ ພວກເຂົາກໍຮູ້ຈັກປະຕິບັດວຽກງານໃຫ້ສໍາເລັດເປັນຢ່າງດີດ້ວຍຄວາມບາກບັ່ນຫ້າວຫານແບບຊາວໂກຊັກ ພ້ອມດຽວກັນກໍເຊີດຊູຄັນທຸງແຫ່ງກຽດຕິຍົດຂອງນິຄົມໄວ້ຢ່າງສູງສົ່ງ. ທໍາອິດ ການປາກົດຕົວຂອງ ຊະແປແດກ ຢູ່ໃນກອງທີ ໘ ນັ້ນ ຄືວ່າບໍ່ເຫມາະສົມປານໃດ, ຕອນຫນໍ່ມາຮອດນັ້ນ ຫນໍ່ຍັງນ້ອຍທັງຈ່ອຍໂຊຊີງຂີ້ພະຍາດ, ຜົມຫຍອງຫຍຸ້ງເລັກນ້ອຍ. ຫລັງຈາກເກີດເລື່ອງກັບ ອິດຊາຈີ ແລ້ວ ແນວຄິດຕ້ານພວກຍິວກໍບໍ່ສາມາດໂປໂລຫົວຂຶ້ນຢູ່ໃນນິຄົມ ໄດ້ອີກຈັກເທື່ອ. ແຕ່ທ່າທີທີ່ຫມູ່ເພື່ອນສະແດງຕໍ່ ຊະແປແດກ ນັ້ນຍັງແຝງແວວສຽດສີເຍາະເຍີ້ຍຢູ່ດົນນານເຕັບ. ແມ່ນຢູ່ວ່າຊະແປແດກ ນັ້ນບາງເທື່ອໄດ້ຊົບຊ້ອນຄໍາສັບ ແລະ ຮູບປະໂຫຍກຕາມໄວຍາກອນພາສາລັດເຊຍເປັນຕາຢາກຫົວ ທັງການເຮັດວຽກງານກະສິກໍາກໍຍັງຕະຫລົກຢູ່ ແຕ່ເມື່ອວັນເວລາຜ່ານໄປ ສາຍສໍາພັນຮູບໃຫມ່ພາຍໃນກອງທີ ໘ ໄດ້ຖືກໍາເນີດເກີດຂຶ້ນເທື່ອລະກ້າວ. ຊະແປແດກ ກາຍເປັນລູກແດງທີ່ຮັກ, ທຸກໆຄົນທີ່ເປັນຕົວເດັ່ນຂອງ ກາຣາບານົບ ພາກັນພາກພູມໃຈໃນຕົວມັນ. ຫນໍ່ເປັນຄົນສະຫລາດ ມີແວວປະ

ເລີດໃນດ້ານຈັດຕັ້ງຈິດຕະສາດ ເລິກເຊິ່ງ ແລະ ກ້າກວນທີ່ສຸດ. ດວງຕາຄູ່ດຳໃຫຍ່ຂອງມັນເບິ່ງປະກາຍອ່ອນໂຍນຕໍ່ບັນຫາອັນສັບສົນຫຍຸ້ງຍາກທີ່ເກີດຂຶ້ນໃນກອງ ແລະ ຫມໍກໍຮູ້ຈັກໃຊ້ຄຳສັບເຫມາະສົມກວ່າຫມູ່. ເຖິງວ່າຮ່າງກາຍຂອງຫມໍເກືອບບໍ່ເຕີບໃຫຍ່ຂຶ້ນເລີຍຕະຫລອດເວລາທີ່ຫມໍມາຢູ່ນີ້ກໍຕາມ ແຕ່ຫມໍກໍແຂງແຮງຂຶ້ນຫລາຍ ມີກ້າມຊີ້ນເປັນກ້ອນ ເຖິງຂັ້ນວ່າສາມາດນຸ່ງເສື້ອກ້າມໄດ້ຢ່າງບໍ່ອາຍໃນຍາມຮ້ອນ ແລະ ບໍ່ມີໃຜຫັນຫນ້າຫນີໄປຍິ້ມທາງອື່ນອີກແລ້ວເມື່ອຫມໍຈັບຄົນໄກ. ສະມາຊິກໃນກອງທີ ຊ ເລືອກເອົາຫມໍເປັນນາຍກອງຢ່າງເອກະສັນ, ນາຮອດນີ້ ຂ້າພະເຈົ້າ ແລະ ໂກວານ ກໍຕີລາຄາຄວາມຄິດຂອງສະມາຊິກໃນທຳນອງນີ້:

- ພວກເຮົາຮັກສາກອງທີ ຊ ເອງ, ແລະ ຊະແນແດກ ຈະເປັນຄົນຕະລະບັດເທົ່ານັ້ນ.

ແຕ່ໃນມື້ຕໍ່ມານີ້ດຽວເທົ່ານັ້ນ ຊະແນແດກ ໄດ້ສະແດງຕົວວ່າການທີ່ເຂົາໄດ້ເຂົ້າເປັນສິດຂອງ ກາຣາບານົບ ນັ້ນ ມັນບໍ່ແມ່ນເປັນລ້າງ, ຫມໍສະແດງເຈດຈຳນົງອອກມາວ່າ ຫມໍຈະບໍ່ເປັນພຽງຄົນຕະລະບັດປະດັບກອງລ້າງ ແຕ່ຈະບັນຊາມັນນຳ, ແລະ ເຟໂດເຣັນໂກເຊິ່ງຊິນເຄີຍກັບສຽງແຮງປານຟ້າຮ້ອງຂອງ ກາຣາບານົບເອງກໍເລີ່ມຊິນເຄີຍກັບຄຳສັ່ງຕຳຫນິແບບໃຈເຍັນ ແລະ ເປັນກັນເອງໃນບາງໂອກາດຂອງຫົວຫນ້າໃຫມ່ຢ່າງງ່າຍດາຍ.

ຊະແນແດກ ເວົ້າວ່າ:

-ກ້າວ່າ ໂອປຣິສໂກ ເປັນສະມາຊິກໃຫມ່ ພວກເຮົາອາດຈະຍົກໂທດໃຫ້ຫມໍໄດ້ຢູ່ ແຕ່ບັດນີ້ມັນເປັນໄປບໍ່ໄດ້ແລ້ວ, ໂອປຣິສໂກ

ສະແດງຕົວຢ່າງຈະແຈ້ງວ່າ ເຂົາບໍ່ຫົວຊາຕໍ່ການຢູ່ໂຮມຫມູ່ຂອງພວກເຮົາ. ພວກໂຕຄຶດວ່າ ຫມໍຈະເຮັດແບບນີ້ເປັນເທື່ອສຸດທ້າຍຫວະ? ພວກເຮົາທຸກຄົນຕ່າງກໍຮູ້ດີວ່າບໍ່ມີທາງເລີຍ. ເຮົາເອງບໍ່ຢາກໃຫ້ຫມໍໂອປຣິສໂກ ປາສະຈາກຄວາມສຸກ, ມີຫຍັງດີສໍາຫລັບພວກເຮົາ? ຈັ່ງຊັ້ນກໍຫາດາປ່ອຍໃຫ້ຫມໍໄປໃຊ້ຊີວິດຢູ່ນອກນິຄົມພວກເຮົາເບິ່ງ ແລ້ວຫມໍຫາກຊິເຂົ້າໃຈເອງ, ແລະ ພວກເຮົາກໍຄວນເຮັດໃຫ້ຄົນອື່ນໆເຫັນວ່າ ພວກເຮົາບໍ່ຍອມຮັບໃຫ້ມີການຮື່ວໄຫລໄປຫາພວກກູລັກແບບນີ້. ກອງທີ ຊ ຮຽກຮ້ອງໃຫ້ໄລ່ຫມໍອອກ.

ຄໍາຮຽກຮ້ອງຂອງກອງທີ ຊ ກາຍເປັນປັດໃຈຕັດສິນເດັດຂາດ. ຢູ່ໃນກອງນີ້ເກືອບບໍ່ມີສະມາຊິກໃຫມ່ເລີຍ ພວກນາຍກອງແນມເບິ່ງຂ້າພະເຈົ້າ, ລາບິດ ຈຶ່ງສະເຫນີໃຫ້ຂ້າພະເຈົ້າມີຄວາມເຫັນ:

- ເລື່ອງຈະແຈ້ງແລ້ວ, ອານໂຕນ ເຊມີວໂນວິດ, ເຊີນ ປະກອບຄວາມເຫັນ.

- ໄລ່ມັນອອກໄປ, ຂ້າພະເຈົ້າເວົ້າສັ້ນ ໆ.

ໂອປຣິສໂກ ເຂົ້າໃຈແລ້ວວ່າບໍ່ມີທາງເລືອກສໍາລັບມັນ ຈຶ່ງດຶງຫນ້າກາກນັກການທູດກົ້ມທັນທີ:

- ໄລ່ອອກຊັ້ນຫວະ? ແລ້ວຊິໃຫ້ຂ້ອຍໄປໃສ? ລັກກິນຫວະ? ພວກເຈົ້າຄຶດວ່າບໍ່ມີອໍານາດອື່ນເຫນືອພວກເຈົ້າຫວະ? ຄັນຈໍາເປັນແທ້ ຂ້ອຍຊິໄປຮອດ ຄາຄົບ...

ມີສຽງຫົວອື້ອຶງຂຶ້ນໃນກອງປະຊຸມ:

- ຄັກຫລາຍ! ເຊີນໄປໂລດແຫລ້ວ... ໄວໆ, ຢູ່ ຄາຄົບ ພຸ້ນ

ເພິ່ນຄົງຊິອອກຫນັງສືໃຫ້ໂຕດອກ ແລ້ວໂຕກໍຈະກັບມານີຄົມ ຢູ່ກັບພວກເຮົາຢ່າງມີສິດເຕັມຂີດ, ຈັ່ງແມ່ນໂຕຊິສະບາຍຕວ່າ, ອອນຊອນເດ໋!

ໂອປຣິສໂກ ເຂົ້າໃຈແລ້ວວ່າ ຫມໍເວົ້າຜິດໄປຢ່າງບໍ່ມີທາງແກ້ໄຂໄດ້ແລ້ວຈຶ່ງອັດປາກມິດໄປ.

- ຊັ້ນແປວ່າ ມີແຕ່ ເກອໍເກັບສະກີ ຜູ້ດຽວບໍ່ເຫັນດີນໍາ, ລາບິດ ເວົ້າທັງເສືອດຕາເບິ່ງໄປທີ່ອງ, - ສິບເວນປະຈໍາວັນ!

- ຮັບຄໍາສັ່ງ! ແລ້ວ ເກອໍເກັບສະກີ ກໍຢືນກົງຂຶ້ນ.

- ພາ ໂອປຣິສໂກ ອອກໄປ.

- ຈ້າວ, ຂ້ອຍຊິພາມັນອອກໄປ, ເກອໍເກັບສະກີ ຕອບທັງຍົກມືຂໍານັບຕາມເຄີຍ ແລ້ວຫັນມາງຶກຫົວໃສ່ ໂອປຣິສໂກ ເພື່ອຊວນມັນອອກໄປ.

ມື້ຕໍ່ມາ ພວກເຮົາໄດ້ຂ່າວວ່າ ໂອປຣິສໂກ ໄປຢູ່ເຮືອນນໍາລູກາເຊັນໂກ. ບໍ່ມີໃຜຮູ້ວ່າ ມີການຕົກລົງເງື່ອນໄຂອັນໃດແດ່ ແຕ່ພວກເດັກນ້ອຍຢືນຢັນວ່າ ມາຣູດເຊຍເປັນຜູ້ດໍາເນີນເລື່ອງທັງຫມົດ.

ລະດູຫນາວຜ່ານໄປແລ້ວ, ຮອດທ້າຍເດືອນມີນາ ແຜ່ນນ້ຳກ້າມແຕກອອກເປັນປ່ຽງ ຟູໄປຕາມຫນ້ານ້ຳ. ພວກເດັກນ້ອຍກໍຂີ່ແພນ້ຳກ້ອນດັ່ງກ່າວໃນຫ້ວຍ ໂກໂລມາກຢ່າງມ່ວນຊື່ນ, ແລະຕົກລົງໄປອາບນ້ຳກາງລະດູບານໃຫມ່ທີ່ມາຢ້ຽມເຢືອນ ກ່ອນເວລາຫມາຍບອກໃນປະຕິທິນ ເພາະພະລັງແຫ່ງທຳມະຊາດໄດ້ເຮັດໃຫ້ພວກເຂົາຕ້ອງແຫລັດລົງຈາກແພນ້ຳກ້ອນ ແລະ ງ່າໄມ້ຢ່າງກະທັນຫັນໂດຍບໍ່ທັນກອດສົ້ງຂາຍາວ ແລະ ເສື້ອກັນຫນາວອອກຊ້ຳ. ຈັ່ງຊັ້ນ

ຈຶ່ງເປັນທຳມະດາວ່າ ມີຫລາຍຄົນໄດ້ເປັນຫວັດເປັນໄອຍ້ອນ.

ພໍແຕ່ເຊົາຫວັດໄອ, ນ້ຳຫມອກກໍຕົກກົ້ວ, ບໍ່ດົນ ກູດລາຕີເລີ່ມພົບເຫັນເສື້ອກັກກອດກຶ້ມຢູ່ກາງເດີນ, ເຂົາຈຶ່ງລົງມືສ້າງບັນຍາກາດຂອງລະດູບານໃຫມ່ໂລດ ໂດຍຊູ່ວ່າຈະໃຫ້ທຸກຄົນນຸ່ງສົ້ງຂາສັ້ນ ແລະ ເສື້ອກ້າມຄໍຈວຍສອງອາທິດກ່ອນກຳນົດປົກກະຕິໃນປະຕິທິນ.

ບົດທີ ໑໔

ບໍ່ມີສຽງໂອ່ຍຄາງ !

ຮອດກາງເດືອນເມສາ ພວກນັກສຶກສາຊຸດທຳອິດຂອງພວກເຮົາກໍມາພັກຍາມລະດູບານໃຫມ່ກັບພວກເຮົາ.

ພວກເຂົາຈ່ອຍຜອມຊົງອິດເມື່ອຍ, ລາປົດ ແນະນຳໃຫ້ຈັດພວກເຂົາເຂົ້າຢູ່ພະແນກລ້ຽງຫມູນ້ອຍ ເພື່ອບຳລຸງໃຫ້ອ້ວນພີ. ຂ້າພະເຈົ້າດີໃຈທີ່ເຫັນວ່າ ພວກເຂົາບໍ່ໄດ້ສະແດງທ່າທີຂີ້ຄ້ອງອ້າງຕົວເປັນນັກສຶກສາຕໍ່ຫນ້າພວກເດັກນ້ອຍນິຄົມ. ໂດຍບໍ່ສະລະເວລາການຂ່າວຄາວກັບຫມົດທຸກຜູ້ທຸກຄົນຊ້ຳ ກາຣາບານົບ ຟ້າວແລ່ນໄປຢ້ຽມຢາມບ່ອນຜະລິດ ແລະ ໂຮງຊ່າງຕ່າງໆໂລດ, ສ່ວນ ເບຍລູກິນ ກືກເດັກນ້ອຍຫຸ້ມລ້ອມໄວ້ ຈຳໄດ້ລົມເລື່ອງເມືອງຄາຄົບ ແລະ ຊີວິດນັກສຶກສາສູ່ພວກເຂົາຟັງ.

ໃນຕອນຄ່ຳພວກເຮົາພາກັນນັ່ງຊົມດາວ ໃນທ້ອງຟ້າລະດູບານໃຫມ່ ຄືເຄີຍເຮັດມາແຕ່ເກົ່າ ເພື່ອປຶກສາຫາລືກ່ຽວກັບວຽກງານຂອງນິຄົມ. ເຫດການທັງຫລາຍທີ່ເກີດຂຶ້ນກັບນິຄົມຫວ່າງມໍ່ໆມານີ້ ບໍ່ກືກໃຈ ກາຣາບານົບ ຫລາຍ, ຫມໍເວົ້າວ່າ:

-ເຮັດໄປແນວນັ້ນກໍຖືກແລ້ວລະ, ໃນເມື່ອວ່າຫມໍ ໂກສເຈຍ ມັນປະກາດເອງວ່າ ບໍ່ມັກຢູ່ນີ້ແລ້ວເດ້ ປ່ອຍມັນໄປດີກວ່າ, ຢ່າຫ້າວ ມັນສາ, ສ່ວນວ່າຫມໍ ໂອປຣິສໂກຢາກເປັນ ກູລັກນັ້ນ ກໍພໍເຂົ້າໃຈ ຢູ່ດອກ, ມັນໄປຢູ່ນຳຄົນປະເພດດຽວກັນດີແລ້ວ, ແຕ່ຖ້າວ່າເຮົາ ລອງຄຶດເບິ່ງຄັກໆ ເຮົາຈະເຫັນວ່າມັນມີອັນໃດອັນຫນຶ່ງບໍ່ຄັກເດີ້, ຄວນຄຶດເບິ່ງພວກເຮົາຢູ່ ຄາຄົບ ພວກເຮົາໄດ້ພົບເຫັນຊີວິດອີກ ແບບຫນຶ່ງ, ການດຳລົງຊີວິດຢູ່ພຸນຊ້ຳແຕກຕ່າງກັບພວກເຮົາ, ຜູ້ ຄົນກໍຕ່າງ.

-ຊັ້ນພວກເຮົາຢູ່ນິຄົມນີ້ເປັນຄົນບໍ່ດີຊັ້ນຫວະ?

-ຜູ້ຄົນໃນນິຄົມເປັນຄົນດີ, ກາຣາບານົບ ຕອບ, -ແຕ່ເບິ່ງ ອ້ອມຂ້າງພວກເຮົາດູ ມີແຕ່ຊາວນາຮັ່ງ, ນັບມື້ນັບຫລາຍຂຶ້ນ, ນິ ຄົມຂອງພວກເຮົາຈະຢູ່ຕໍ່ໄປໄດ້ແບບໃດ? ຈຳຕ້ອງຕໍ່ສູ້ແບບນັກເລງ ຫລືບໍ່ກໍເປີດຫນີໄປເລີຍ.

-ບັນຫາມັນບໍ່ແມ່ນແນວນັ້ນດອກ, ບູຣູນ ຄັດຄ້ານຂຶ້ນທັງລາກ ສຽງຍາວເຢັນແບບຄົນໃຊ້ຄວາມຄຶດ, -ທຸກຄົນຕ້ອງຕໍ່ສູ້ຕ້ານກັບ ພວກກູລັກ, ນີ້ແມ່ນວຽກງານຫນຶ່ງ ແຕ່ບໍ່ແມ່ນອັນຕົ້ນຕໍ. ເລື່ອງ ມັນມີຢູ່ວ່າ ຢູ່ນິຄົມນີ້ ພວກເຮົາບໍ່ມີຫຍັງເຮັດ, ພວກເຮົາມີນຳກັນ ຮອດ ໑໘໐ ຄົນ ນັບວ່າເປັນກຳລັງຍິ່ງໃຫຍ່ອັນຫນຶ່ງ ແຕ່ພວກເຮົາ ເຮັດວຽກງານອັນໃດ? ພວກເຮົາຫວ່ານແນວປູກແລ້ວກໍເກັບກ່ຽວ ແລ້ວກໍຫວ່ານອີກໃຫມ່, ເສຍເຫື່ອແຮງໄປຫລາຍ ແຕ່ຜົນໄດ້ຮັບ ເດແນມບໍ່ເຫັນເລີຍ, ມັນຫນ້ອຍເກີນໄປ... ດຳເນີນຊີວິດແບບນີ້

ໄປອີກຈັກປີ ພວກເດັກນ້ອຍກໍຈະເບື່ອຫນ່າຍ, ພວກເຂົາຢາກເຮັດອັນໃດອັນຫນຶ່ງດີກກວ່າ...

-ແມ່ນແລ້ວ, ຫມໍ ບູຣູນ ເວົ້າຕໍ່, ເບຍລູກິນ ຫຍັບມານັ່ງໃກ້ໆຂ້າພະເຈົ້າ. ເດັກນ້ອຍຄືພວກເຮົາທີ່ເພິ່ນເອີ້ນວ່າ ພວກໄຮ້ຍາດນີ້ເພາະ ມີເລືອດກຳມາຊຶບໃນໂຕ, ມັນຕ້ອງມີອຸດສາຫະກຳໃຫ້ພວກເຮົາ. ວຽກງານການປູກຝັງກໍມ່ວນຫນ້າເຮັດຢູ່ດອກແຕ່ຕໍ່ໄປເດ້ພວກເຂົາຈະໄດ້ຫຍັງແດ່ຈາກການກະເສດນີ້? ຊິໄປຕັ້ງຕົວຢູ່ໃນບ້ານທ່າມກາງພວກນາຍທຶນນ້ອຍຄືວ່າຫັ້ນຫວະ? ມັນເປັນຕາຫນ້າອາຍໂພດ ນີ້ແມ່ນຂໍ້ຫນຶ່ງລະ, ຂໍ້ສອງມາ ໃນຂັ້ນຕົ້ນຈະບໍ່ມີຫຍັງເລີຍ ເພາະວ່າເມື່ອເຮັດການປູກຝັງນີ້ ມັນຕ້ອງມີອຸປະກອນການຜະລິດແດ່: ມີເຮືອນ, ມີມ້າ, ມີໄກ ແລະ ອື່ນໆຫລາຍແນວ. ໄປອາໄສຢູ່ເຮືອນພໍ່ເມຍຄືຫມໍ ໂອປຣິສໂກຫັ້ນຫວະ? ຢ່າເລີຍ ຈັ່ງຊິໄປຢູ່ໃສ? ໂຮງຈັກໂຮງງານຄຸ້ມນີ້ກໍມີແຕ່ໂຮງຊ່າງທາງລົດໄຟ, ພວກກຳມະກອນເອງກໍຍັງບໍ່ຮູ້ວ່າຊິເອົາລູກພວກເຂົາຍັດໄວ້ໃສແລ້ວ.

ພວກນັກສຶກສາປຸ້ມໃສ່ວຽກງານໃນທົ່ງຢ່າງເບີກບານ ແລະ ສະພານາຍກອງກໍມີມາລະຍາດດີວິເສດຫລາຍ ໄດ້ຈັດພວກເຂົາເປັນຫົວຫນ້າກອງພິເສດທັງຫລາຍ. ກາຣາບານົບ ກັບຄືນມາແຕ່ທົ່ງດ້ວຍຄວາມພໍອົກພໍໃຈ.

-ໂອ໊ຍ... ດີກຫລາຍວຽກນີ້! ຫນ້າເສຍດາຍແຕ່ວ່າມັນບໍ່ພາໄປຮອດໃສນີ້ດີ, ອາຊີບຂັ້ນສູງນີ້. ຄັນວ່າຂຸດດິນຂຸດຫຍ້າຫມູ່ນີ້ແລ້ວກໍມີແຕ່ຕັດກ່ຽວ ບາດແລ້ວບໍ່ຈັກແຜ່ນແພ, ເກີບໂບກ, ເຄື່ອງຈັກເຄື່ອງລາງ, ລົດໄກ, ຫີບເພງ, ແວ່ນຕາ, ໂມງ, ກອກຢາ...

ແນວຫມູ່ນີ້ເກີດຂຶ້ນພົບພັບໂລດແບບນີ້ຄືຊິຄັກຂະຫນາດເລີຍລະ... ອ່າ... ອ່າ... ຟ້າເອີຍ ເປັນຫຍັງບໍ່ການກັບແດ່ຕອນເພິ່ນສ້າງໂລກນັ້ນນ່າ, ພວກເພດເອີ້ຍ!

ພວກນັກສຶກສາມະຫາວິທະຍາໄລ ຕ້ອງຮ່ວມສະເຫລີມສະຫລອງບຸນວັນທີ ໑ ພຶດສະພາກັບພວກເຮົາ, ສິ່ງດັ່ງກ່າວ ເຮັດໃຫ້ບຸນຂອງພວກເຮົາຄັກຂຶ້ນກວ່າເກົ່າອີກ.

ຄືຜ່ານມານັ້ນແລ້ວ, ນິຄົມຕື່ນມືນຕາຂຶ້ນຕັ້ງແຕ່ເຊົ້າໆທ່າມກາງສຽງແກທອງເຫລືອງ ແລ້ວຈັດແຖວອອກເດີນທາງມຸ່ງຫນ້າສູ່ທົ່ງນາເປັນກອງພິເສດ ໂດຍບໍ່ງວາກຫລັງ ແລະ ສູນເສຍພະລັງແມ່ນແຕ່ເມັດດຽວເພື່ອວິໃຈຊີວິດ. ແມ່ນແຕ່ພວກຫົວແຂງຫົກຫນາເຊັ່ນ ເອີບແກເນັບ, ນາຊາເຣັນໂກ, ເປເຣເປລຽດເຊັນໂກ ກໍເຊົາສ້າງບັນຫາຫຍຸ້ງຍາກໃຫ້ພວກເຮົາ.

ໃນປີ ໑໙໒໕ ນັ້ນ ນິຄົມຂອງພວກເຮົາເລີ່ມເຕີບໃຫຍ່ເປັນບ່ອນດຳລົງຊີວິດໂຮມຫມູ່ທີ່ຫນັກແຫນ້ນບ່ອນຫນຶ່ງ. ຍິ່ງໄປກວ່ານີ້ເມື່ອເບິ່ງໃນຮູບນອກແລ້ວ ມັນຍັງແຈ່ມໃສເບີກບານອີກ ມີແຕ່ ໂຊບິດ ຜູ້ດຽວທີ່ກາຍເປັນອຸປະສັກຕໍ່ການຂະຫຍາຍຕົວຂອງພວກເຮົາ ແລະ ຂ້າພະເຈົ້າກໍບໍ່ສາມາດແກ້ໄຂຫຍັງຊ່ອຍມັນ.

ເມື່ອກັບມາແຕ່ຍາມອ້າຍໃນເດືອນມີນານັ້ນ ໂຊບິດ ເລົ່າວ່າອ້າຍຂອງຫມໍພໍຢູ່ພໍກິນ ແຕ່ບໍ່ມີບ່ານາ. ເຂົາເປັນຊາວນາກາງ. ໂຊບິດ ບໍ່ຮູ້ຂໍການຊ່ວຍເຫລືອໃດໆນຳນິຄົມ ແຕ່ເລີ່ມເວົ້າເກີ່ງ ນາຕາຊາ ໂລດ, ຂ້າພະເຈົ້າບອກມັນວ່າ:

-ແມ່ນໂຕມາເວົ້ານຳກູເຮັດຫຍັງ, ໃຫ້ ນາຕາຊາ ຕັດສິນໃຈເອງດີກວ່າ...

ອາທິດຫນຶ່ງຕໍ່ມາມັນມາຫາຂ້າພະເຈົ້າອີກ, ເທື່ອນີ້ທ່າທາງຮ້ອນຮົນກວ່າເກົ່າ:

-ກ້າບໍ່ມີ ນາຕາຊາ ຂ້ອຍກໍຢູ່ບໍ່ໄດ້, ເວົ້ານຳນາງໃຫ້ແດ່, ໃຫ້ນາງໄປກັບຂ້ອຍ.

-ໂຊບິດ, ມຶງກໍຈັ່ງແມ່ນເປັນຮ້າຍດອກ! ເວົ້າເອົາເອງລະບໍ່ກູບໍ່ເວົ້າດອກ.

-ກ້າເຈົ້າເວົ້າມັນ ມັນຈະເຮັດນຳໂລດ ແຕ່ກ້າແມ່ນຂ້ອຍບອກ... ເອີ້ຂ້ອຍເວົ້າຕາມຊື່ ຄືຊິບໍ່ເປັນທ່າດອກ.

-ມັນເວົ້າແນວໃດແດ່ຊັ້ນ?

-ບໍ່ເວົ້າຫຍັງເລີຍ.

-ເປັນຫຍັງຈຶ່ງວ່າ "ບໍ່ເວົ້າຫຍັງເລີຍ"?

-ບໍ່ເວົ້າ, ມັນມີແຕ່ໄຫ້.

ໂຊບິດ ແນມເບິ່ງຂ້າພະເຈົ້າ ແສງຕາເຕັ່ງຂຶມຮ້ອນຮົນ, ສຳລັບມັນແລ້ວປະຕິກິລິຍາຂອງຂ້າພະເຈົ້າຕໍ່ຄຳເວົ້າຂອງມັນມີຄວາມສຳຄັນຫລາຍ ຂ້າພະເຈົ້າບໍ່ເຊື່ອງອຳຄວາມຮູ້ສຶກເຈັບປວດອັນນີ້.

-ບໍ່ດີດອກ, ໂຊບິດ ເອີຍ, ຂ້າພະເຈົ້າເວົ້າຂຶ້ນ, -ກູຊິເວົ້າກັບມັນດອກ.

ໂຊບິດແນມເບິ່ງຂ້າພະເຈົ້າ, ຕາແດງປານເລືອດຂອງມັນເຈາະຈົ້ມເຂົ້າໃນຈິດວິນຍານຂອງຂ້າພະເຈົ້າ. ມັນເວົ້າສຽງແຫບໆວ່າ:

- ເວົ້າກັບນາງໃຫ້ແດ່, ແຕ່ວ່າ... ເຈົ້າຮັບຮູ້ໄວ້ເດີ ຖ້ານາງບໍ່ໄປນຳ ຂ້ອຍຊິຂ້າໂຕຕາຍໂລດ!

- ແມ່ນຫຍັງເກາະ ບັກຂີ້ໂງ່? ຂ້າພະເຈົ້າຮ້ອງໃສ່ມັນ, - ແມ່ນມຶງເປັນຄົນຫລືເປັນສັດ...? ມຶງບໍ່ອາຍແດ່ຫວະ?

ແຕ່ ໂຊບິດ ບໍ່ປ່ອຍໃຫ້ຂ້າພະເຈົ້າເວົ້າສຸດ, ມັນເຊັ່ນງເປະລົງໃສ່ແປ້ນມ້າ ແລະ ສະອື້ນໃຫ້ອອກມາເຈັບປວດ ແລະ ຜິດຫວັງຢ່າງບໍ່ສາມາດພັນລະນາໄດ້. ຂ້າພະເຈົ້າແນມເບິ່ງມັນມິດໆ ເອົາມືລູບຫົວຮ້ອນຮຸ່ມໆຂອງມັນໄປມາ. ມັນລຸກຂຶ້ນຢືນປຶບປັບ ຈ່ອງແຂນສອກຂ້າພະເຈົ້າ ແລະ ລຸບລຸ່ມຄຳເວົ້າສັບສົນປົນເປກັນອອກມາເປັນບາດໆວ່າ:

- ຍົກໂທດໃຫ້ຂ້ອຍທ້ອນ... ຂ້ອຍຮູ້ດີວ່າຂ້ອຍເຮັດໃຫ້ເຈົ້າວຸ່ນວາຍນຳ... ແຕ່ຂ້ອຍບໍ່ຮູ້ວ່າຈະເຮັດແນວໃດ... ຂ້ອຍເອງ... ຄືເຈົ້າຮູ້ນັ້ນແລ້ວວ່າຂ້ອຍເປັນຄົນແນວໃດ, ເຈົ້າຮູ້ ເຫັນທຸກຢ່າງ... ບໍ່ມີ ນາຕາລຊາ ແລ້ວຂ້ອຍກໍຢູ່ບໍ່ໄດ້.

ຂ້າພະເຈົ້າເວົ້າກັບມັນຢູ່ຫມົດຄືນ ແລະ ຕະຫລອດຄືນກໍຮູ້ສຶກວ່າຄວາມຫວັງມີຫນ້ອຍລົງໆ. ຂ້າພະເຈົ້າເວົ້າກັບມັນເຖິງຄຸນຄ່າອັນຍິ່ງໃຫຍ່ຂອງຊີວິດ ແລະ ເສັ້ນທາງອັນສະຫວ່າງສະໄຫວຂອງຊີວິດ, ຄວາມສຸກແບບຕ່າງໆຂອງມະນຸດຊາດ. ຂ້າພະເຈົ້າເລົ່າເຖິງຄວາມຈຳເປັນຂອງຄວາມຮອບຄອບລະມັດລະວັງໃນຊີວິດ ແລະ ແຜນການ. ຂ້າພະເຈົ້າບອກມັນວ່າ ນາຕາລຊາ ຕ້ອງຮ່ຳຮຽນອີກ, ວ່ານາງມີຄວາມສາມາດດີ ແລະ ຕໍ່ໄປນາງຈະຊິດຊ່ອຍມັນໄດ້ ຈັ່ງຊັ້ນຈຶ່ງບໍ່ຄວນຊຸກດັນບັງຄັບໃຫ້ນາງໄປຝັງຊີວິດໄວ້ກັບບ້ານຫ່າງໄກ ເຊັ່ນບ້ານ

ນີ້, ນາງອາດຈະຕາຍຍ້ອນຄວາມງຽບເຫງົາ... ແຕ່ທັງຫມົດນີ້ບໍ່ສາມາດແຕະຕ້ອງສະຕິສໍານຶກຂອງ ໂຊບິດ ເລີຍ ຫມໍຟັງຄວາມເວົ້າຂອງຂ້າພະເຈົ້າແບບບໍ່ເອົາໃຈໃສ່ ແລ້ວເວົ້າພຸມໆວ່າ:

- ຂ້ອຍຍິນດີເຮັດວຽກຈົນໃຈຂາດ, ເຮັດທຸກຢ່າງ ຂໍພຽງແຕ່ໃຫ້ນາງໄປນໍາ...

ຂ້າພະເຈົ້າປ່ອຍໃຫ້ມັນຈາກໄປໃນສະພາບສັບສົນແບບເດີມ ຄືເປັນຄົນເສຍທິດທາງໄປ ແລະ ປາດສະຈາກສິ່ງຍັບຍັ້ງຫ້າມໃຈ. ມື້ແລງຕໍ່ມາ ຂ້າພະເຈົ້າ ເອີ້ນນາຕາຊາ ມາຫາ ນາງຟັງຄໍາການສັ້ນໆຂອງຂ້າພະເຈົ້າຢ່າງບໍ່ມີທ່າທີສະແດງອາການໃດໆອອກມາ ນອກຈາກແພຂົນຕາເຫນັງຍິບໆຫນ້ອຍຫນຶ່ງ ແລ້ວຕອບດ້ວຍນໍ້າສຽງເສາະໃສປາດສະຈາກຄວາມອຽງອາຍໃດໆວ່າ:

- ໂຊບິດ ເຄີຍກອບກູ້ຊີວິດຂ້ອຍ... ແຕ່ດຽວນີ້ຂ້ອຍຢາກຮຽນ.

- ຫມາຍຄວາມວ່າ ໂຕບໍ່ຢາກແຕ່ງດອງແລ້ວໄປຢູ່ກັບມັນຊັ້ນຫວະ?

- ຂ້ອຍຢາກຮຽນຫນັງສື... ແຕ່ຖ້າເຈົ້າບອກໃຫ້ຂ້ອຍໄປກັບມັນຂ້ອຍກໍຈະໄປ.

ຂ້າພະເຈົ້າຈ້ອງແນມເບິ່ງຕາຄູ່ໃຫຍ່ສົດໃສ ແລະ ເປີດເຜີຍຂອງນາງ ຄືດຢາກການນາງອີກຈັກເທື່ອວ່າ ນາງຮູ້ສະພາບຈິດໃຈຂອງໂຊບິດ ບໍ່ ແຕ່ຂ້າພະເຈົ້າບໍ່ຮູ້ວ່າເປັນຫຍັງຈຶ່ງບໍ່ການອອກໄປ, ຂ້າພະເຈົ້າບອກນາງແຕ່ພຽງວ່າ:

- ເອົາລະ ໄປນອນໄດ້ແລ້ວ.

- ຊັ້ນແປວ່າຂ້ອຍບໍ່ໄປກັບລາວແມ່ນບໍ່? ນາງຖາມຄືແບບເດັກນ້ອຍ ຫັງງ່ງາຫົວໄປຂ້າງຫນຶ່ງ.

- ບໍ່, ໂຕບໍ່ໄປດອກ, ຮຽນຫນັງສືສາ: ຂ້າພະເຈົ້າຕອບສຽງເຫງົາໆແລ້ວກໍໃຊ້ຄວາມຄິດຕໍ່ ໂດຍບໍ່ສັງເກດວ່າ ນາຕາຊາ ໄດ້ອອກຈາກຫ້ອງໄປແລ້ວມິດ ໆ.

ເຊົ້າມື້ຕໍ່ມາ ຂ້າພະເຈົ້າເຫັນ ໂຊບິດ, ຫມໍມາຍືນຢູ່ຕໍ່ຫນ້າປະຕູກາງເຮືອນຕຶກຂາວ ສະແດງວ່າຄອງພົບຂ້າພະເຈົ້າຢ່າງຈະແຈ້ງ. ຂ້າພະເຈົ້າງຶກຫົວເອີ້ນເຂົ້າມາຫາຢູ່ຫ້ອງການ. ໃນຂະນະທີ່ຂ້າພະເຈົ້າສິນລະອິນນຳການເອົາລູກກຸນແຈໄຂລີ້ນຊັກໂຕະນັ້ນ ຫມໍໄດ້ແນມນຳຂ້າພະເຈົ້າບໍ່ວາງຕາຢ່າງມິດໆ ແລະ ແລ້ວໃນທັນໃດນັ້ນກໍເວົ້າຂຶ້ນແຮງໆຄືເວົ້າກັບໂຕເອງວ່າ:

- ຊັ້ນແປວ່າ ນາຕາຊາ ບໍ່ໄປນຳຂ້ອຍເນາະ.

ຂ້າພະເຈົ້າແນມເບິ່ງມັນ ແລະ ເຫັນຢ່າງຈະແຈ້ງວ່າ ມັນບໍ່ມີຄວາມຮູ້ສຶກໃດໆ ນອກຈາກຄວາມຮູ້ສຶກໃນການສູນເສຍຂອງຕົນເອງ. ຫມໍຢືນອຽງບ່າເບື້ອງຫນຶ່ງເອື່ອຍໃສ່ປະຕູ ແສງຕາສັກໃສ່ຂອບປ່ອງຢ້ຽມເບື້ອງເທິງ ແລະ ຈົ່ມພຸມໆອັນໃດອັນຫນຶ່ງ, ຂ້າພະເຈົ້າຮ້ອງໃສ່ມັນວ່າ:

- ໂຊບິດ!

ປາກົດວ່າມັນບໍ່ໄດ້ຍິນສຽງຂ້າພະເຈົ້າເລີຍ, ດ້ວຍທ່າທາງຄ່ອຍເບົາຈົນສັງເກດຍາກ ຫມໍກອຍອອກຈາກປະຕູ ແລະ ອອກໄປຢ່າງມິດໆ ໂດຍບໍ່ແນມເບິ່ງຮອດຂ້າພະເຈົ້າ ບໍ່ຜິດຫຍັງກັບປີສາດຕົວເບົາຍ່ອງ.

ຂ້າພະເຈົ້າຕິດຕາມສັງເກດມັນ. ຫລັງຈາກກິນເຂົ້າແລງແລ້ວ ມັນກໍ່ເຂົ້າປະຈຳບ່ອນຢູ່ໃນກອງພິເສດ, ຕອນຄ່ຳ ຂ້າພະເຈົ້າເອີ້ນ ຊະແບແດກ ນາຍກອງຂອງມັນມາຫາ:

-ໂຊບົດ ເປັນແນວໃດ?

-ມັນບໍ່ໄຂປາກເລີຍ.

-ແລ້ວມັນເຮັດວຽກເປັນແນວໃດ?

-ຕາມຫລໍ ເນຊີຕາຍໂລ ຫົວໜ້າກອງພິເສດຂອງມັນເວົ້າ ກໍ ວ່າດີຢູ່.

-ຢ່າລະສາຍຕາຈາກມັນເດີໃນ ໔-໕ ມື້ນີ້ ກ້າສັງເກດເຫັນ ຫຍັງຜິດສັງເກດພາວມາບອກກູໂລດ.

-ແນ່ນອນ, ພວກເຮົາຮູ້ໜ້າທີ່ດີແລ້ວ, ຊະແບແດກ ຕອບ.

ໂຊບົດອັດປາກມິດຢູ່ຫລາຍມື້ ແຕ່ມັນອອກໄປເຮັດວຽກ ແລະ ໄປໂຮງອາຫານຢູ່. ເບິ່ງອອກຢ່າງຈະແຈ້ງວ່າ ມັນພະຍາຍາມຫລີບ ໜ້າຂ້າພະເຈົ້າ. ກ່ອນຮອດມື້ເຮັດບຸນ ຂ້າພະເຈົ້າມອບວຽກສະ ເພາະອັນໜຶ່ງໃຫ້ມັນຄືຕິດຄຳຂວັນໃສ່ຕຶກອາຄານທຸກຫລັງ, ມັນ ຕັ້ງໃຈສ້ອມແປງຂັ້ນໄດກ່າຍອັນໜຶ່ງຢ່າງລະມັດລະວັງ ແລະ ມາສະ ເໜີຂ້າພະເຈົ້າວ່າ:

-ສັ່ງເຂົາເບີກຕະປູໃຫ້ຂ້ອຍແດ່.

-ຫລາຍປານໃດ?

ມັນເບີດຕາຂຶ້ນເບິ່ງເພດານ ເວົ້າພຸມໆ ຄາວໜຶ່ງຈຶ່ງຕອບວ່າ:

-ຈັກກິໂລໜຶ່ງຄືຈະພໍ.

ຂ້າພະເຈົ້າກວດກາເບິ່ງວຽກງານຂອງມັນ. ມັນຈັດວາງແຜ່ນ

ປ້າຍຄຳຂວັນດ້ວຍຄວາມກີ້ກວນ ລະມັດລະວັງ ແລະ ວາງໄດ້ສະຫມ່ຳສະເຫມີດີ, ສຽງສັ່ງການບອກຫມູ່ຢູ່ເທິງຂັ້ນໄດອີກຂັ້ນຫນຶ່ງກໍຄ່ອຍຄ່ຽມສະເຫມີວ່າ:

-ບໍ່, ຫຍັບຂຶ້ນອີກຫນ້ອຍຫນຶ່ງ..., ໄດ້ລະ ຕອກຕະປູເລີຍ.

ພວກເດັກນ້ອຍອອນຊອນໃຈຫລາຍທີ່ໄດ້ຫ້າງກຽມບຸນ ໂດຍສະເພາະແມ່ນບຸນວັນທີ ໑ ພຶດສະພາ, ເພາະມັນແມ່ນບຸນຕ້ອນຮັບລະດູບານໃຫມ່ນຳ. ແຕ່ປີນີ້ ວັນທີ ໑ ພຶດສະພາ ມາຍັ້ງມຢາມພວກເຮົາໃນຍາມບັນຍາກາດບໍ່ອຳນວຍປານໃດ. ກ່ອນມື້ບຸນພຽງວັນດຽວເທົ່ານັ້ນ ຝົນກໍຕົກຈົ່າກໆລົງມາເປັນລະຍະໆ ຕັ້ງແຕ່ເຊົ້າໆພຸ້ນໂລດ, ມັນຢຸດໄປຄາວຫນຶ່ງແລ້ວກໍກອກເກລົງມາອີກ, ຮວາຍຮຳຢູ່ຫັ້ນບໍ່ຢຸດບໍ່ເຊົາເປັນ ພໍປານຝົນໃນລະດູໃບໄມ້ຫລົ່ນ. ແຕ່ໃນຕອນແລງ ດວງດາວກໍເລີ່ມສ່ອງແສງຍິບຍັບຢູ່ໃນທ້ອງຟ້າທາງທິດຕາເວັນຕົກທີ່ມືດມົວດຳເປັນໂງ່ນ ສ່ອງເງົາສະຫລົວມຸມມົວລົງມາໃສ່ນິຄົມຢ່າງບໍ່ເມດຕາປານີ. ພວກເດັກນ້ອຍແລ່ນສິນລະວົນພຸ້ນພີ້ເພື່ອຊ້ຳວຽກໃຫ້ແລ້ວກ່ອນຈະມາເຂົ້າກອງປະຊຸມ ເຊັ່ນການກະກຽມເຄື່ອງນຸ່ງ ຕັດຜົມ ອາບນ້ຳ ແລະ ປ່ຽນຜ້າປູບ່ອນ. ຢູ່ເທິງເກີຍຊານທີ່ຍັງປຽກຊຸ່ມ ແລະ ສະອາດ ນັກຕີກອງຂອງພວກເຮົາພວມຖູເຄື່ອງດົນຕີຂອງຕົນເຫລື້ອມພົ້ງໆສະອາດອ່ຽມ, ມື້ອື່ນແມ່ນພວກມັນນີ້ແລ້ວຊິເປັນຕົວລະຄອນເອກ.

ນັກຕີກອງຂອງພວກເຮົາບໍ່ຄືຂອງໃຜຫມົດ, ບໍ່ມີຫຍັງຄ້າຍຄືນັກຕີກອງຕາຍໆໃນຫນ່ວຍເຍົາວະຊົນທຳມະດາ ທີ່ເຮັດແຕ່ສຽງດັງຕ້ອມໆ ແຕ້ມໆ ບໍ່ກັງວານເສາະໃສນັ້ນດອກ. ນັກຕີກອງຂອງນິຄົມ

ກັອກກີ ບໍ່ໄດ້ໄປຮ່ຳຮຽນນຳນັກຕີກອງຂັ້ນອາຈານຢູ່ກອງພັນຮອດ ຝ ເດືອນດາຍເບິ່ງດອກ, ຍັງຄົງມີແຕ່ ອີວານ ອີວາໂນວິດ ນັ້ນລະທີ່ຈົ່ມຄັດຄ້ານຜູ້ດຽວວ່າ: -ຈັ່ງແມ່ນຊາດ ພວກເຂົາໃຊ້ວິທີພິລຶກ...

ດວງຕາຂອງລາວເປັ່ງປະກາຍຢ້ານກົວເມື່ອພັນລະນາເຖິງວິທີການອັນນີ້ສູ່ຂ້າພະເຈົ້າຟັງ, ຊຶ່ງຄຳເວົ້າທີ່ຄ່ອງລ່ຽນສຳຜັດກັນປານກາບກອນນັ້ນ ມີຄຳສັບເຊັ່ນແມ່ຍິງປາກບອນ, ຢາສູບ, ເບຍແຂງ, ຢາງປູທາງ ແລະ ສັບອື່ນໆ ເຊິ່ງຂ້າພະເຈົ້າບໍ່ອາດຍົກຂຶ້ນມາເວົ້າຢູ່ໃນນີ້ໄດ້, ແຕ່ຄຳເວົ້າເຫລົ່ານັ້ນໄດ້ຮັບໃຊ້ວົງການຕີກອງໄດ້ຢ່າງຊື່ສັດ. ວິທີການອັນຫນ້າຂົນຫົວລຸກນີ້ຊ້ຳບັນລຸຜົນສຳເລັດໃນການອົບຮົມສິດສອນຂອງມັນ, ທຳນອງຈັງຫວະກອງຂອງພວກເຮົາແປກຕ່າງ ເດັ່ນກວ່າຫມູ່ຍ້ອນຄວາມມ່ວນ ແລະ ມີຊີວິດຊີວາຂອງມັນ, ເພງເສບຂອງພວກເຮົາມີຢູ່ຫລາຍຈັງຫວະດ້ວຍກັນເຊັ່ນ "ຈັງຫວະເດີນ", "ຈັງຫວະປຸກ", "ຈັງຫວະເຄົາລົບທຸງ", "ເດີນສວນສະຫນາມ", "ຈັງຫວະເດີນບຸກ", ແຕ່ລະຈັງຫວະລ້ວນແຕ່ມີຈຸດພິເສດໃນການລົວນ້ຳ, ໃນການເນັ້ນສຽງແຈ້ດເປັນຊຸດໆ ສຽງຟາດບາດຫນັກໆແບບຕຸ້ມໆ, ຄ່ອຍເບົາຫລືເສາະໃສ, ມີຕອນຂຶ້ນສຽງຢ່າງຂາດຂັ້ນພໍປານຈັງຫວະເພງເຕັ້ນລຳ. ນັກຕີກອງຂອງພວກເຮົາປະຕິບັດຫນ້າທີ່ຂອງພວກເຂົາໄດ້ດີຫລາຍ ຈົນເມື່ອພວກທ່ານຜູ້ກວດການຫລາຍຄົນຈາກກະຊວງສຶກສາປະຊາຊົນໄດ້ຍິນໄດ້ຟັງມັນແລ້ວ ພາກັນຈຳຍອມຮັບວ່າພວກເພິ່ນບໍ່ໄດ້ນຳເອົາອຸດົມການແປກໃຫມ່ສະເພາະອັນໃດເຂົ້າມາສູ່ພະລິດຕະກຳແຫ່ງວົງການສຶກສາອົບຮົມທາງດ້ານສັງຄົມເລີຍ.

ໃນຕອນແລງ, ເມື່ອໄຂກອງປະຊຸມສະມາຊິກນິຄົມ ພວກເຮົາໄດ້ສຳຫລວດກວດກາເບິ່ງວຽກງານການກະກຽມບຸນຂອງພວກເຮົາຄືນ, ເຮັດໃຫ້ລາຍລະອຽດຍິບຍ່ອຍຕ່າງໆທີ່ບໍ່ຄັກແນ່ຈະແຈ້ງອອກເຊັ່ນ ມີການຕັ້ງບັນຫາວ່າ ຖ້າມື້ອື່ນມາຝົນຕົກເດ້ຈະເຮັດແນວໃດ. ມີຜູ້ສະເຫນີຢ່າງຕະຫລົກໆວ່າ ໃຫ້ອອກຄຳຂວັນວ່າ: ສະເຫນີໃຫ້ສືບເວນປະຈຳວັນຮັບປະກັນອາກາດດີ.

ຂ້າພະເຈົ້າໄດ້ຢືນຢັນວ່າ ຝົນຈະຕ້ອງຕົກຢ່າງແນ່ນອນ, ກາລີນາອີວາໂນວົດ ກໍມີຄວາມເຫັນດີກັບກັບຂ້າພະເຈົ້າ ແຕ່ພວກເດັກນ້ອຍພາກັນຄັດຄ້ານຄວາມຢ້ານກົວໃນເລື່ອງຝົນຕົກຂອງພວກເຮົາ ແລະຮ້ອງວ່າ:

- ແລ້ວມັນຊິເປັນຫຍັງລະ?

- ໂຍ້ວ ສູກໍຊິບໍ່ຽກຫັ້ນຕິ.

- ແລ້ວພວກເຮົາແມ່ນກ້ອນນ້ຳອ້ອຍຊັ້ນຫວະ?

ຂ້າພະເຈົ້າຈຳເປັນໄດ້ອອກສຽງປ່ອນບັດກ່ຽວກັບບັນຫາທີ່ວ່າຈະພາກັນເຂົ້າໃນເມືອງບໍ່ ຖ້າຝົນຕົກຕັ້ງແຕ່ເຊົ້າ? ມີຜູ້ຍົກມືຄັດຄ້ານສາມຄົນ ໃນນັ້ນມີຂ້າພະເຈົ້າຜູ້ຫນຶ່ງ. ທຸກຄົນຫົວໂຄບຂຶ້ນຢ່າງຜູ້ຊະນະ, ຜູ້ໃດຜູ້ຫນຶ່ງຮ້ອງຂຶ້ນວ່າ:

- ພວກເຮົາແພ້ແລ້ວ.

ຫລັງຈາກນັ້ນຂ້າພະເຈົ້າຈຶ່ງເວົ້າວ່າ:

- ບັດນີ້ຈື່ໃຫ້ດີເດີວ່າ ເຖິງແມ່ນຫມາກເຫັບຊິຕົກ ພວກເຮົາກໍຍັງຊິເຂົ້າໃນເມືອງຢູ່.

- ເອົາໂລດແລ້ວ, ເຊີນມັນຕົກມາໂລດ! ລາບິດ ຮ້ອງຂຶ້ນ.

- ແຕ່ວ່າສູລະວັງເດີ້... ຢ່າມີສຽງໂອ່ຍຄາງລະ! ດຽວນີ້ສູເປັນຜູ້ກ້າຫານ ແຕ່ເມື່ອືນຄອງເບິ່ງ ຫາກຊິລາກຂຶ້ດິນແລ້ວກໍຈະພາກັນໂອ່ຍຄາງຮ້ອງໄຫ້. ໂອ້ຍ ຕາຍແລ້ວ. ຂ້ອຍປຽກ, ໂອ້ຍ ຂ້ອຍຫນາວສັ່ນ...

- ແລ້ວແມ່ນພວກເຮົາເຄີຍຮ້ອງໄຫ້ໂອ່ຍຄາງແຕ່ຫວ່າງໃດ?

- ເອົາລະດີແລ້ວ... ຢ່າໃຫ້ໄດ້ຍິນສຽງນີ້.

- ຕົກລົງ! ບໍ່ໃຫ້ໂອ່ຍຄາງເລີຍ!

ຕອນເຊົ້າຕ້ອນຮັບພວກເຮົາດ້ວຍຟ້າມືດມົວ ແລະ ຝົນຝອຍລິນແຊະໆ ເຊິ່ງບາງຄັ້ງກໍແຮງຂຶ້ນ ກ້ອນເຫນົ້າດິນເປັນບ່ອນພໍປານວ່າເອົາຝັກບົວມາຫົດ, ຄາວຫນຶ່ງກໍເຫຈົ້າກຽລົງມາບໍ່ມີລົມມີສຽງ, ແນມບໍ່ເຫັນເລີຍວ່າຈະມີແດດ.

ຢູ່ເຮືອນຕຶກຂາວ ພວກເດັກນ້ອຍໃນຊຸດກຽມຕົວອອກເດີນທາງພາກັນມາຫາຂ້າພະເຈົ້າ ທັງສົ່ງຊອມເບິ່ງສີຫນ້າຄວາມຮູ້ສຶກຂອງຂ້າພະເຈົ້າ ແຕ່ຂ້າພະເຈົ້າຕັ້ງວາງສີຫນ້າແຂງກະແດ້ງປານໃສ່ຫນ້າກາກຫີນ ຈາກນັ້ນຈຶ່ງມີສຽງສະທ້ອນດັງກ້ອງໄປທຸກຈອມທຸກແຈວ່າ:

- ຢ່າມີສຽງໂອ່ຍຄາງເດີ້!

ຜູ້ກີທຸງກໍກົ່ງມາຫາຂ້າພະເຈົ້າ ເພື່ອສືບຮູ້ສະພາບການໃຫ້ລະອຽດ:

- ຕ້ອງເອົາທຸງໄປນຳບໍ່?

- ແລ້ວຊິໄປໂດຍບໍ່ມີທຸງໄດ້ແນວໃດລະ?

- ແຕ່... ເອີ້ຝົນ...

- ໂດເອີ້ນວ່າຝົນຫວະນີ້ຊ່ານີ້... ເອົາຊີບມາໃສ່ມັນຈົນຮອດໃນເມືອງ.

- ຈ້າວ! ໃສ່ຊີບ, ທ້າວກືຫຸ່ງຮັບຄຳສັ້ນ ໆ.

ພໍຮອດເຈັດໂມງ ສຽງກະແລ່ງເອີ້ນໂຮມແຖວກໍດັງຂຶ້ນ, ແຖວເດີນມຸ່ງໜ້າສູ່ໃນເມືອງ ຕາມໂມງເວລາທີ່ກຳນົດໄວ້. ແຕ່ນີຄືນເກີງໃຈກາງເມືອງ ລະຍະທາງຢ່າງ ໑໐ ກິໂລແມັດ ແລະ ປາກົດວ່າຝົນຕົກແຮງຂຶ້ນຊຸກໄຊ້. ຢູ່ເດີ່ນພິທີ, ບໍ່ມີໃຜຈັກຄົນ, ມັນຈະແຈ້ງແລ້ວວ່າ ເພິ່ນໄດ້ສັ່ງລືບລ້າງການສວນສະໜາມ. ພວກເຮົາອອກເດີນທາງກັບພາຍໃຕ້ສາຍຝົນລິນແຮງ ແຕ່ບັດນີ້ທຸກຢ່າງໄຮ້ຄວາມໝາຍໄປແລ້ວ: ທຸກພາກສ່ວນໃນຮ່າງກາຍປຽກມອດຍອດ, ນ້ຳຢູ່ສົ້ນເກີບໂບກຂອງຂ້າພະເຈົ້າໄຫລບຸ້ນອອກພໍປານລົ້ນຈາກຄຸ. ຂ້າພະເຈົ້າສັ່ງຢຸດແຖວ ແລະ ເວົ້າກັບເດັກນ້ອຍວ່າ:

- ກອງປຽກໝົດແລ້ວ, ພວກເຮົາຊິຮ້ອງເພງ. ລະວັງ ບາງແຖວເຊົ້ວແລ້ວເດີ້, ບໍ່ຕ້ອງເບິ່ງຕີນ, ດັງຫົວສູງໆ!

ພວກເດັກນ້ອຍຫົວໂຄບຂຶ້ນ, ນ້ຳຝົນຍ້ອຍອາບໜ້າພວກເຂົາເປັນສາຍ:

- ໜ້າເດີນ... ໄປ!

ກາຣາບານົບ ເປັນຜູ້ຂຶ້ນເພງ ສຽງທອງວ່າ:

- ເອົາເລີຍ... ເພື່ອນເອີຍ ບຸກໄປ ບຸກໄປ... ຫນາມຂວາງໜ້າປ່າຂວາງຕີນບໍ່ຫວັ່ນ...

ເນື້ອເພງສອດຄ່ອງກັບສະພາບການຫລາຍ ຈົນເຮັດໃຫ້ມີສຽງຫົວຮາຂຶ້ນບາດໜຶ່ງກ່ອນ. ຮອດຮອບທີ່ສອງພວກເຮົາຈຶ່ງພ້ອມ

ກັນຮ້ອງເພງຫນຶ່ງກະຈາຍກ້ອງລ່ອງລອຍໄປຕາມກະຫນົນເບິ່ງແປນ ແລະ ຈົມຈຸ່ມຢູ່ກອງສາຍຝົນ.

ໂຊບົດ ຍ່າງຢູ່ທາງຂ້າງຂ້າພະເຈົ້າໃນແຖວຫນ້າ, ມັນບໍ່ຮ້ອງເພງ ທັງກໍບໍ່ຮູ້ສຶກວ່າຝົນຕົກຊໍ້າ ສາຍຕາຂອງມັນລອຍໄປທາງຫນ້າ ເບິ່ງແນຢູ່ຈຸດໃດຈຸດຫນຶ່ງຢ່າງດຶກດຶງທັງບໍ່ສົນໃຈວ່າຂ້າພະເຈົ້າ ໄດ້ສັງເກດເບິ່ງມັນຕະຫລອດເວລາ.

ຜ່ານສະຖານີລົດໄຟມາແລ້ວ ຂ້າພະເຈົ້າຈຶ່ງອະນຸຍາດໃຫ້ແຕກແຖວ. ອັນຊວຍທີ່ສຸດກໍແມ່ນວ່າ ບໍ່ມີໃຜຈັກຄົນມີກອກຢາແຫ້ງ ຫລືວ່າຢາເສັ້ນຈັກຫຍຸມ ຈັ່ງຊັ້ນຫມົດທຸກຄົນຈຶ່ງຫຍຸ້ມມາໃສ່ກອງຢາໃນແອບຫນັງຂອງຂ້າພະເຈົ້າທັນທີ ພວກເຂົາພາກັນລ້ອມຂ້າພະເຈົ້າໄວ້ ແລ້ວທວນຄໍາເວົ້າເກົ່າຢ່າງອວດອ້າງວ່າ:

- ເຫັນແລ້ວຕີ ບໍ່ມີໂອ່ຍຄາງຈົ່ມວ່າຫຍັງເລີຍ.

- ກາຍໂຄ້ງນີ້ໄປກ່ອນແມ້, ຫມາກເຫັບຫາກຊິຕົກລົງມາໃສ່ດອກ, ແລ້ວສູຊິພາກັນວ່າແນວໃດລະ?

- ຫມາກເຫັບຫວະ... ກະ ບໍ່ຄືກປານໃດລະ ແຕ່ອັນຮ້າຍກວ່ານີ້ຍັງມີນ່າ. ໂຕຢ່າງປືນກົນມືຈັ່ງໃດລະ.

ກ່ອນຈະຜ່ານປະຕູນີຄົມ ພວກເຮົາຈັດແຖວຄືນອີກ, ກວດກາແຖວໃຫ້ຊື່ ແລະ ຮ້ອງເພງຂຶ້ນແຮງໆ ເກືອວ່າສຽງຂອງມັນເກືອບບໍ່ແຮງກ້ວາສຽງຝົນ ແລະ ສຽງຟ້າຮ້ອງຣື່ມໆ ເຊິ່ງຟັງແລ້ວຫນ້າອອນຊອນດີ ເພາະມັນເປັນສຽງຟ້າຮ້ອງເທື່ອທໍາອິດຂອງປີນີ້, ຟັງຄືກັບວ່າ ມັນຮ້ອງຕ້ອນຮັບການກັບມາຂອງພວກເຮົາ. ພວກເຮົາຍ່າງຜ່ານປະຕູເຂົ້ານີຄົມ, ຫິວເງີຍຊື່ຢ່າງທະນົງ ແລະ ບາດຕີນກໍກັງ

ຫວະເພື່ອບໆ. ຄືດັ່ງເຄີຍເຮັດຜ່ານມານັ້ນແລ້ວ ພວກເຮົາເຄົາລົບທຸງກ່ອນ ຫລັງຈາກນັ້ນຈຶ່ງແຍກຍ້າຍກັນໄປຍັງຫ້ອງໃຜຫ້ອງມັນ ຂ້າພະເຈົ້າຮ້ອງຂຶ້ນວ່າ:

-ວັນທີ ໑ ພຶດສະພາ ຫມັ້ນຍືນ! ໄຊໂຍ!

ພວກເດັກນ້ອຍໂຍນມວກແງ໊ບປຽກເອ້ເລ້ ຂອງພວກເຂົາຂຶ້ນທັງຮ້ອງໂຮ່ສຽງສະນັ່ນ ຈາກນັ້ນຈຶ່ງປຸ້ມເຂົ້າມາຫາຂ້າພະເຈົ້າຢ່າງບໍ່ມີການບັນຊາຈາກຜູ້ໃດເລີຍ, ພວກເຂົາໂຍນຂ້າພະເຈົ້າຂຶ້ນສູງສຸດຊ່ວງແຂນ, ນ້ຳເຢັນໆຍ້ອຍຈາກເກີບໂບກຢ້ອນຕົກລົງໃສ່ຫົວຂ້າພະເຈົ້າອີກຄັ້ງຫນຶ່ງ.

ຫນຶ່ງຊົ່ວໂມງຕໍ່ມາ, ປ້າຍຄຳຂວັນໃຫມ່ປ້າຍຫນຶ່ງກໍ່ກນຳໄປຕິດໃສ່ຝາສະໂມສອນ, ເທິງແຜ່ນຜ້າຍາວໆນັ້ນ ມີຕົວຫນັງສືຂະຫນາດໃຫຍ່ຂຽນສັ້ນໆວ່າ: "ບໍ່ມີສຽງໂອ່ຍຄາງ!".

ບົດທີ ໑໕

ວັນເວລາທີ່ກັນດານ

ໂຊບົດຜູກຄໍຕາຍໃນຄືນວັນທີ ៦ ພຶດສະພາ.

ກອງເວນຍາມປຸກຂ້າພະເຈົ້າ, ພໍແຕ່ໄດ້ຍິນສຽງທຸບປ່ອງຢ້ຽມເທົ່ານັ້ນຂ້າພະເຈົ້າກໍເດົາໄດ້ໂລດວ່າ ມີຫຍັງເກີດຂຶ້ນ. ພວກເດັກນ້ອຍຟ້າວເອົາຮ່າງໂຊບົດລົງມາແລ້ວກໍຈັດການບີບນວດ ພາຍລົມເຂົ້າປອດຂອງມັນທ່າມກາງແສງສະຫວ່າງຂອງໂຄມໄຟໃນຄອກມ້າ. ດ້ວຍຄວາມພະຍາຍາມສຸດຂີດຫລາຍຄັ້ງຫລາຍຄາວ ເອີກາເຕີຣີນາກຣີກໍເຮັບມາ ກັບພວກເດັກນ້ອຍໄດ້ເຮັດໃຫ້ມັນຫັນໃຈຄືນ ແຕ່ມັນ

ບໍ່ມີສະຕິ ແລະ ພໍດຶກຄ່ຳກໍຂາດໃຈຕາຍ. ພວກແພດທີ່ພວກເຂົາໄປນຳມາແຕ່ໃນເມືອງບອກພວກເຮົາວ່າ ບໍ່ສາມາດຊ່ອຍຊີວິດຂອງມັນໄດ້ແລ້ວ. ໂຊບິດ ແຂວນຄໍຕາຍ ຢູ່ເທິງລະບຽງຄອກມ້າ, ມັນຂຶ້ນໄປຢືນເທິງລະບຽງເອົາເຊືອກຜູກຄໍແລ້ວໂຕນລົງລຸ່ມ, ກະດູກຕໍ່ຄໍຂອງມັນຫັກໄປຫລາຍຕ່ອນ.

ພວກເດັກນ້ອຍຮັບຮູ້ຂ່າວອັດຕະວິບາດຂອງ ໂຊບິດ ແບບສະຫງວນທ່າທີ, ບໍ່ມີໃຜສະແດງຄວາມເສົ້າໂສກອອກມາຢ່າງເປີດເຜີຍ, ເຟໂດເຣັນໂກ ເວົ້າພຽງແຕ່ວ່າ:

- ຫນ້າເສຍດາຍບໍ່ເກົ້າໂກຊັກຄືນນັ້ນ, ມັນອາດຈະເປັນພົນທະຫານທີ່ດີຄົນຫນຶ່ງໃນກອງທັບຂອງ ບູດິນນີ*.

ແຕ່ ລາປິດ ຕອບມັນວ່າ:

- ຢ່າກະລ່າວວ່າ ມັນຊິໄດ້ເປັນພົນທະຫານຂອງ ບູດິນນີເທາະ, ມັນເກີດມາເປັນກູລັກພໍແຮງ, ຢູ່ແບບພວກກູລັກ ແລະ ກໍຕາຍລົງແບບພວກກູລັກ ຍ້ອນຄວາມໂລບມາກໂລພາ.

ໂກວານ ເສືອດແສງຕາຄຽດໆໄປຍັງສະໂມສອນບ່ອນໂລງຜີຕາຍ ໂຊບິດວາງຢູ່, ມັນປະຕິເສດບໍ່ຍອມເປັນສິບເວນພິທີການທັງບໍ່ມາຮ່ວມພິທີສົ່ງສະການ, ຫນໍເວົ້າວ່າ:

- ຄົນຄືຫມໍ ໂຊບິດ ຫວະ, ເຮົາຊິຈັດການແຂວນຄໍມັນດ້ວຍມືເຮົາເອງແຫລະ: ມັນເອົາເລື່ອງໄຮ້ສາລະ ບ້າໆ ບໍໆຂອງຕົນມາຂວາງທາງເດີນຂອງຫມູ່!

---

* ບູດິນນີ: ແມ່ທັບລັດເຊຍສະໄຫມສົງຄາມກາງເມືອງທີ່ຕໍ່ສູ້ເພື່ອການປະຕິວັດ.

ມີແຕ່ພວກແມ່ຍິງເທົ່ານັ້ນທີ່ພາກັນໄຫ້ ແຕ່ປານນັ້ນມາຣູດເຊຍ ເລັບເຊັນໂກກໍຍັງເວົ້າຢ່າງຮ້າຍໆ ເມື່ອເຊັດນ້ຳຕາແຫ້ງແລ້ວວ່າ:

-ບັກພີບ້າ, ຈັ່ງແມ່ນຈ້າ! ແລ້ວຊິໃຫ້ມັກແບບໃດເນາະ ໄປເປັນແມ່ເຮືອນໃຫ້ມັນເທາະແມ້! ຈັ່ງແມ່ນ ນາຕາຊາ ຊິມີຄວາມສຸກຕວ່າ! ມັນດີພໍແຮງແລ້ວລະທີ່ ນາຕາຊາ ບໍ່ໄປກັບມັນຫັ້ນນະ, ຄົນແບບນີ້ ແບບ ໂຊບິດ ນີ້ລະມີຢູ່ບໍ່ອຶດດອກໃນໂລກນີ້, ພວກເຮົາຍັງຊິໄດ້ເຫັນຢູ່... ຢາກໃຫ້ພວກເຂົາແຂວນຄໍຕາຍມື້ລະຫລາຍກວ່ານີ້ເດ້.

ນາຕາຊາ ບໍ່ຮ້ອງໄຫ້ເລີຍ, ນາງຫລຽວເບິ່ງຂ້າພະເຈົ້າ, ທ່າທີຫວາດກົວເມື່ອຂ້າພະເຈົ້າເຂົ້າໄປໃນຫ້ອງພັກແມ່ຍິງ, ນາງຖາມຂ້າພະເຈົ້າສຽງອ່ອນເພື່ອຍວ່າ:

-ແລ້ວບັດນີ້ຊິໃຫ້ຂ້ອຍເຮັດແນວໃດ?

ມາຣູດເຊຍ ຕອບແທນຂ້າພະເຈົ້າ:

-ໂຕກໍຢາກແຂວນຄໍຕາຍຄືກັນຕີບາດນີ້? ຟ້າເອີຍ... ດີແຕ່ວ່າບັກເວນນັ້ນມັນຈັດການກັບໂຕເອງແນວນັ້ນນະ ບໍ່ຊັ້ນມີຫວັງມັນຊິກຸກກວນໂຕຕະຫລອດຊີວິດຕວ່າ. ເບິ່ງເທາະ ມາບັດນີ້ເພິ່ນຊ້ຳມາຖາມວ່າ "ຊິຕ້ອງເຮັດແນວໃດ"... ໄປມະຫາວິທະຍາໄລກໍ່ມະກອນກ່ອນ ແລ້ວໂຕຊິມີເວລາຄຶດອີກ...

ນາຕາຊາ ເງີຍຫນ້າເບິ່ງ ມາຣູດເຊຍ ສາວຂີ້ໂມໂຫ ແລ້ວແລ່ນໄປກອດແອວນາງໄວ້:

-ຈັ່ງຊັ້ນຊັ້ນຫວະ... ດີແລ້ວ.

- ຂ້ອຍຈິເປັນເອື້ອຍລ້ຽງ ນາຕາຊາ ກ່ອນ, ມາຣູດເຊຍ ເວົ້າ ທັງສັກແສງຕາຮຸ່ງວາບໆແບບທ້າທາຍມາໃສ່ຂ້າພະເຈົ້າ.

ຂ້າພະເຈົ້າກົ້ມຫົວໃຫ້ນາງແບບຢອກ ໆ:

- ເຊີນໂລດແລ້ວ, ສະຫາຍນາງ ເລັບເຊັນໂກ, ຂ້ອຍຂໍຮ້ອງ ແຕ່ວ່າ ເຈົ້າຈີບັບເອົາຂ້ອຍເຂົ້າເປັນຜູ້ຮ່ວມງານຄົນຫນຶ່ງໄດ້ບໍ່ລະ?

- ໄດ້, ແຕ່ມີເງື່ອນໄຂວ່າ ເຈົ້າຈີບໍ່ຜູກຄໍຕາຍ ເພາະວ່າ ພໍ່ລ້ຽງ ແບບນີ້ເຈົ້າກໍຄົງຮູ້ດີຕີວ່າ ໂຍນໃຫ້ຫມາແຫ້ນຍັງດີກວ່າ, ມີພໍ່ລ້ຽງ ເອື້ອຍລ້ຽງຄືວ່ານັ້ນ ຄົງຈະຮ້າຍກວ່າດີເປັນແນ່.

- ເຫັນດີ, ບໍ່ມີການແຂວນຄໍ!

ນາຕາຊາ ປ່ອຍແອວເພື່ອນຂອງນາງ, ຍິ້ມໃຫ້ພໍ່ລ້ຽງ ແລະ ເອື້ອຍລ້ຽງຜູ້ໃຫມ່, ຜິວແກ້ມຂອງນາງມີສີສັນຂຶ້ນແດ່.

- ໄປກິນເຂົ້າເທາະ... ອີນ້ອຍ! ມາຣູດເຊຍ ເວົ້າຢ່າງເບີກ ບານ.

ເບິ່ງໃນແງ່ນີ້ຂ້າພະເຈົ້າກໍຮູ້ສຶກວ່າເບົາໃຈໄປແດ່. ໃນຕອນຄ່ຳ ພະນັກງານພິສູດສິບ ກັບ ມາເຣຍ ກົງດຣາແຕັບນາ ກໍມາເຖິງ. ຂ້າພະເຈົ້າຂໍຮ້ອງພະນັກງານສັນນະສູດສິບບໍ່ໃຫ້ສົນການ ນາຕາຊາ. ໂຊກດີລາວເປັນຄົນເຂົ້າໃຈເລື່ອງງ່າຍ. ຫລັງຈາກບັນທຶກຄະດີສັ້ນໆ ແລະ ກິນເຂົ້າແລ້ວລາວກໍກັບເມືອ. ມາເຣຍ ກົງດຣາແຕັບນາຢູ່ຕໍ່, ທ່າທາງເຫງົາເສົ້າ. ໃນກາງເດິກເມື່ອທຸກຄົນຫລັບນອນແລ້ວ ນາງ ຈຶ່ງເຂົ້າມາຍັງຫ້ອງການຂ້າພະເຈົ້າພ້ອມດ້ວຍ ກາລີນາ ອີວາໂນວິດ, ນັ່ງແປະລົງແຮງໆເທິງຕັ່ງນອນຍາວແບບອ່ອນລ້າເພຍແຮງ.

- ເດັກນ້ອຍຂອງເຈົ້າຈັ່ງແມ່ນເປັນຕາຫນ່າຍ, ຫມູ່ຕາຍທັງຄົນ

ຍັງພາກັນຫົວເສີຍ, ຫມໍ່ນັ້ນ... ລາປົດ ຫັ້ນຍັງເຮັດຕະຫລົກ ໂປກຮາຄືເກົ່າ.

ມື້ຕໍ່ມາ ຂ້າພະເຈົ້າອອກໄປສົ່ງພວກນັກສຶກສາ, ໃນເວລາເດີນ ທາງໄປຍັງສະຖານີລົດໄຟນັ້ນ ແວກສະເບັບ ເວົ້າວ່າ:

-ພ...ພວກ ດ...ເດັກ ນ້ອຍນະ ບໍ່ເຂົ້າໃຈຫຍັງ ຫມ... ຫມົດ ວ່າມັນແມ່ນເລື່ອງຫຍັງ, ເມື່ອຄົນຜູ້ຫນຶ່ງຕັດສິນໃຈເລືອກ ເອົາຄວາມຕາຍເປັນທາງອອກ... ນັ້ນມັນຫມາຍຄວາມວ່າ ຊີວິດ ຕົກຕໍ່າແລ້ວ ພ...ພວກເຂົາ ຄ...ຄິດວ່າ ເປັນຍ້ອນນາຕາຊາ ແຕ່ ຄວາມຈິງມັນບໍ່ແມ່ນຍ້ອນ ນາຕາຊາ ດອກ ມັນແມ່ນຍ້ອນຊີວິດ ເອງ.

ເບຍລູກິນ ແກວ່ງຫົວ:

-ໂອ້ຍ ບໍ່ແມ່ນແນວນັ້ນຈັກຫນ້ອຍເດີ, ໂຊບົດ ຫັ້ນເກາະ ເກືອງຢ່າງໃດມັນກໍຕາຍມາດົນແລ້ວ, ມັນບໍ່ແມ່ນມະນຸດ ແຕ່ແມ່ນຂ້າ ທາດ, ມັນບໍ່ມີເຈົ້ານາຍ ແລ້ວກໍເລີຍຄິດຢາກໃຫ້ນາຕາຊາ ເປັນ ເຈົ້າຊີວິດໃຫມ່ຂອງມັນ.

-ພວກໂຕພາກັນເວົ້າໄປເລີກແລບໂພດ ຫມູ່ເອີຍ, ເຊມີຍົງ ກາຣາບານົບເວົ້າຂຶ້ນ, -ເຮົາໂລດບໍ່ມັກເລີຍເອີ້ຍ, ຄົນຜູ້ຫນຶ່ງຕາຍ ໄປ, ເຮົາພາກັນຂຸດຂ້າຊີ້ມັນອອກເລີຍ, ພໍລະ... ແຕ່ພວກເຮົາ ຕ້ອງຄິດເກືອງມື້ຕໍ່ໄປ, ເຮົາຂໍບອກເດີວ່າ ທາງທີ່ດີນີ້ຄົມຄວນຍ້າຍ ອອກຈາກນີ້ ບໍ່ຊັ້ນຫມົດທຸກຄົນຊິພາກັນແຂວນຄໍຕາຍຫມົດຫັ້ນ!

ຂາກັບຂ້າພະເຈົ້າຄິດຮອດຕອງກ່ຽວກັບຊາຕາກຳຂອງນິຄົມ ຢ່າງ ຫນັກຫນ່ວງ. ວິກິດການແບບຮ້າຍແຮງອັນຫນຶ່ງປາກົດຂຶ້ນໃນສາຍ

ຕາຂອງຂ້າພະເຈົ້າ, ແລະຫລາຍສິ່ງຫລາຍຢ່າງທີ່ມີຄຸນຄ່າທີ່ສຸດອາດຈະຖືກຊຸກດັ່ນດັບມອດລົງໃນຫຸບເຫວເລິກ, ສິ່ງນັ້ນມີຄຸນຄ່າຍອດຍິ່ງເຕັມໄປດ້ວຍຊີວິດຊີວາ ເປັນສິ່ງມະຫັດສະຈັນອັນເກີດຂຶ້ນຈາກພົນງານຕະຫລອດເວລາ ໕ ປີຂອງການດຳລົງຊີວິດຮວມຫມູ່ຂອງພວກເຮົາ ເຊິ່ງເວົ້າກັນຢ່າງກ່ອມຕົນທີ່ສຸດແລ້ວ ຂ້າພະເຈົ້າກໍຍັງບໍ່ຢາກຫຽບລາຄາໃຫ້ມັນເລີຍ. ຢູ່ໃນຊີວິດໂຮມຫມູ່ແບບພວກເຮົານີ້, ການທີ່ຊາຕາກຳສ່ວນຕົວຍັງມືດມົວຢູ່ນັ້ນ ມັນບໍ່ສາມາດເຮັດໃຫ້ເກີດມີວິກິດການອັນໃດຫນຶ່ງເລີຍ. ເພາະວ່າຊາຕາກຳສ່ວນຕົວຍາມໃດມັນກໍຍັງຄົງມືດມົວຢູ່ສະເຫມີ. ແລະ ຊາຕາກຳທີ່ແຈ່ມແຈ້ງຂອງຜູ້ໃດຜູ້ຫນຶ່ງມັນແມ່ນຫຍັງກັນແທ້? ມັນບໍ່ແມ່ນຫຍັງດອກນອກຈາກການແຍກຕົວອອກຈາກຊີວິດໂຮມຫມູ່, ການສະສົມແນວຄິດນາຍທຶນນ້ອຍ ຄ້າຍຄືກັບຄວາມຫ່ວງໄຍທີ່ຫນ້າເບື່ອຫນ່າຍທີ່ມາຮອດກ່ອນກຳນົດ ເຫາະງກັບຄິດວ່າ ເຂົາຈະຊຸກນັ່ງອນຈະໄດ້ມາແຕ່ໃສ ແລະ ການຕີລາຄາວິຊາຊີບທີ່ຄວນອວດອ້າງໄດ້ເຊັ່ນນີ້. ຊັ້ນຊົມວິຊາຊີບແນວໃດອີກ? ຊ່າງໄມ້, ຊ່າງເກີບ, ຊ່າງສີເຂົ້າ ຫັ້ນຫວະ, ບໍ່ດອກ ຂ້າພະເຈົ້າເຊື່ອຫມັ້ນວ່າສຳລັບບ່າວນ້ອຍຮຸ່ນ ໑໖ ປີ ທີ່ຢູ່ໃນຍຸກສະໄຫມຊີວິດແບບໂຊວຽດເຮົານີ້ ບໍ່ມີວິຊາອາຊີບໃດວິເສດໄປກວ່າການເປັນຄົນ ແລະ ເປັນນັກຕໍ່ສູ້.

ຂ້າພະເຈົ້າສຳນຶກເຖິງກຳລັງຂອງຊີວິດໂຮມຫມູ່ຂອງພວກນີຄົມ, ໃນທັນໃດນັ້ນ ຂ້າພະເຈົ້າຈຶ່ງເຂົ້າໃຈວ່າ ບັນຫາສຳຄັນມັນມີຢູ່ບ່ອນໃດ: ແນ່ນອນແລ້ວ, ແຕ່ເປັນຫຍັງຂ້າພະເຈົ້າຈຶ່ງໃຊ້ເວລາດົນແທ້ເພື່ອຄົ້ນພົບມັນ? ທຸກສິ່ງທຸກຢ່າງທີ່ເກີດຂຶ້ນນີ້ ແມ່ນຍ້ອນພວກເຮົາ

ຍືນຈົ້ງຢູ່ບ່ອນເກົ່າ, ໃນຊີວິດໂຮມຫມູ່ ມັນບໍ່ຄວນມີການຢຸດສະງັກໃດໆ.

ຂ້າພະເຈົ້າດີໃຈຄືກັບເດັກນ້ອຍໆ ຈົ່ງແມ່ນຫນ້າອອນຊອນ! ສັດຈະວິພາກທີ່ປະເສີດສຸດ ແລະ ສະເຫນແຮງ! ຫນ່ວຍອອກແຮງງານໂຮມຫມູ່ທີ່ເສລີຕ້ອງບໍ່ຢໍ່າຕີນຢູ່ບ່ອນເກົ່າ, ບັດນີ້ກົດເກນສາກົນແຫ່ງການຂະຫຍາຍຕົວທົ່ວໄປ ຫາກໍສໍາແດງພະລັງທີ່ແທ້ຈິງຂອງມັນອອກມາ. ຮູບແບບແຫ່ງການຄົງຕົວຢູ່ຂອງຫນ່ວຍອອກແຮງງານໂຮມຫມູ່ຂອງມະນຸດແມ່ນການເຄື່ອນເຫນັງ, ຮູບແບບຫມົດຊີວິດຂອງມັນກໍແມ່ນການຢຸດສະງັກນັ້ນເອງ.

ແມ່ນແນວນີ້ເອງ ເກືອບສອງປີມາແລ້ວທີ່ພວກເຮົາຢູ່ບ່ອນເກົ່າ: ໃນທົ່ງນາ, ຫນານຜັກບ່ອນເກົ່າ, ໂຮງຊ່າງໄມ້ບ່ອນເກົ່າ ແລະ ລະບົບວຽກງານປະຈໍາປີແບບເກົ່າ.

ຂ້າພະເຈົ້າຟ້າວກັບມາຍັງນິຄົມເພື່ອຈົ້ງແນມເຂົ້າໃນດວງຕາຂອງພວກເດັກນ້ອຍ ແລະ ກວດກາວ່າ ການຄົ້ນພົບອັນຍິ່ງໃຫຍ່ອັນນີ້ຂອງຂ້າພະເຈົ້າກໍ່ກົດຕ້ອງຫລືບໍ່.

ຢູ່ຕໍ່ຫນ້າຊານຕຶກຂາວມີລົດມ້າສອງຄັນຈອດຢູ່ ແລະ ລາປິດມາຕ້ອນຮັບຂ້າພະເຈົ້າ ພ້ອມທັງບອກວ່າ:

- ມີຄະນະກໍາມະການຊຸດຫນຶ່ງມາແຕ່ ຄາຄົບ.

"ກໍດີຄືກັນ, ຂ້າພະເຈົ້າຄິດ, ບາດນີ້ລະຊີຈັດການທຸກຢ່າງໃຫ້ແຈ້ງຂາວໄປເລີຍ".

ຢູ່ໃນຫ້ອງການມີຜູ້ລໍຖ້າຂ້າພະເຈົ້າຢູ່ ສີ ຄົນຄື ລິວບົບ ຊາເວເລັບນາ ຊູກຣິນສະກາຍຢາ, ຄົນຫນຶ່ງເປັນສຸພາບສັດຕີຮ່າງອ່ວນ

ອ້ວນ ໃນຊຸດກະໂປງສີດອກບົວແດງບໍ່ໃຫມ່ສົດໃສປານໃດ, ອາຍຸ ອານາມຫລາຍແລ້ວ ແຕ່ດວງຕາທັງຄູ່ວ່ອງໄວລະແວດລະວັງໄປ ຫມົດ ແລະ ຜູ້ຊາຍອີກຄົນຫນຶ່ງທ່າທາງຕ້ອກລ້ອກ, ຜົມແດງປົນ ເຫລືອງ ແລະ ມີຂົນອ່ອນຄ້າຍຄືເຄົາຢູ່ປາຍຄາງ, ແວ່ນຕາຂອງ ລາວຫລຸດລົງມາກ່າຍຢູ່ເທິງດັງ ແລະ ລາວກໍຈໍາຕ້ອງໄດ້ດຶງແປງມັນ ເລື້ອຍໆ ດ້ວຍມືຂ້າງທີ່ບໍ່ຖືກະຕ່າບ.

ລິວບິບ ຊາເວເລັບນາ ພະຍາຍາມຍິ້ມບາດຫນຶ່ງເພື່ອຕ້ອນຮັບ ແລະ ແນະນໍາຂ້າພະເຈົ້າກັບແຂກອື່ນໆວ່າ:

- ອ່າ... ນີ້ເດ໋ ສະຫາຍ ມາກາເຣັນໂກ. ຂໍແນະນໍາໃຫ້ຮູ້ຈັກ ຜູ້ນີ້ແມ່ນວາວະຣາ ວິກໂຕຣີບນາ ເບຣແຊນ ແລະ ນີ້ສະຫາຍ ແຊກ ເກ ວາຊີເລັບວິດ ຊາຍກິນ.

ບໍ່ມີເຫດຜົນໃດໆເລີຍທີ່ພີ່ດົມເຮົາຈະບໍ່ຕ້ອນຮັບ ວາວະຣາ ວິກ ໂຕຣີບນາ ເບຣແຊນ, ນາງແມ່ນຫົວຫນ້າສູງສຸດຂອງຂ້າພະເຈົ້າ ເອງ ແຕ່ທ່ານຊາຍກິນນີ້ດີ ເປັນຫຍັງຕ້ອງຕ້ອນຮັບ? ຂ້າພະເຈົ້າ ເຄີຍໄດ້ຍິນວ່າ ລາວເປັນອາຈານຝ່າຍສຶກສາສາດ. ຈັ່ງແມ່ນເປັນ ຫນ້າສົນໃຈອີ່ຫລີ ຫລືວ່າລາວເຄີຍເປັນຜູ້ອໍານວຍການເຮືອນລ້ຽງ ເດັກຈັກບ່ອນແດ່ບໍ່?

- ພວກເຮົາມານີ້ເພື່ອກວດກາວິທີການຂອງເຈົ້າໂດຍສະເພາະ.

- ຂ້ອຍຂໍຄັດຄ້ານຢ່າງເດັດຂາດ, ຂ້າພະເຈົ້າເວົ້າຂຶ້ນ, - ຂ້ອຍ ບໍ່ມີວິທີການອັນໃດຫມົດ.

- ແລ້ວເຈົ້າໃຊ້ວິທີການອັນໃດຊັ້ນ?

- ວິທີການແບບໂຊວຽດທໍາມະດາ.

ເບຣແຊບ ຍິ້ມແບບຫັງມຽວາດໃດວາດໜຶ່ງ.

-ບາງທີອາດຈະແມ່ນແບບໂຊວງດຢູ່ ແຕ່ຄືຊິບໍ່ທຳມະດາດອກ ແນວໃດກໍດີ, ຕ້ອງກວດກາຢູ່ນັ້ນແລ້ວ.

ແລະ ແລ້ວການສິນທະນາອັນໜ້າອະເຫຼືອງກວ່າໝູ່ແບບນີ້ ກໍເລີ່ມຂຶ້ນ, ບໍ່ຈັກຜູ້ຢາກຫລິ້ນສຳນວນໂວຫານແບບໃດແດ່ ຕ່າງກໍເຊື່ອວ່າຄຳສັບສາມາດກຳນົດຄວາມເປັນຈິງໄດ້ ຂ້າພະເຈົ້າຈຶ່ງເວົ້າຂຶ້ນວ່າ:

-ຂ້ອຍຊິບໍ່ສົນທະນາແບບນີ້ກັບພວກເຈົ້າອີກຕໍ່ໄປ. ຖ້າພວກເຈົ້າເຫັນວ່າເໝາະສົມ ຂ້ອຍຊິສະເໜີລາຍງານບົດໜຶ່ງ ແຕ່ຂໍບອກໄວ້ກ່ອນລ່ວງໜ້າເດີວ່າ ຢ່າງໜ້ອຍມັນຊິກິນເວລາສາມຊົ່ວໂມງ.

ເບຣແຊບ ເຫັນດີ, ຈັ່ງຊັ້ນພວກເຮົາຈຶ່ງເຂົ້າໄປຍັງຫ້ອງການ ອັດປະຕູຫ້າມຄົນພາຍນອກເຂົ້າ ແລ້ວຂ້າພະເຈົ້າກໍລົງມືເຮັດວຽກທີ່ແສນໜັກໃຈອັນນີ້ ຄືໃຊ້ຄຳສັບແທນຄຳຮູ້ສຶກນຶກຄິດ, ການຮິນຕອງ, ຄວາມສົງໄສ, ແລະ ບົດຮຽນຕ່າງໆທີ່ສະສົມໄວ້ຕະຫລອດ ໕ ປີ. ປາກົດວ່າຂ້າພະເຈົ້າເວົ້າໄດ້ຢ່າງແຈ່ມແຈ້ງ ແລະມີໂວຫານເໝາະສົມທີ່ສຸດສຳຫລັບມະໂນພາບທີ່ອາວຊັບຊ້ອນເລິກລັບພິລຶກ ໂດຍການໃຊ້ມີດຂອງການວິເຄາະນີ້, ຂ້າພະເຈົ້າຈຶ່ງຄົ້ນຄວ້າເຖິງບາງຂົງເຂດ ເຊິ່ງມາຮອດປັດຈຸບັນຍັງເປັນສິ່ງລີ້ລັບຢູ່ດ້ວຍຄວາມບັງອາດຮອບຄອບ ແລະ ໄດ້ເວົ້າເຖິງທາງເດີນຂອງອະນາຄົດ ແລະ ຄວາມຫຍຸ້ງຍາກໃນວັນຂ້າງໜ້າ. ຢ່າງໃດກໍດີ ຂ້າພະເຈົ້າໄດ້ເວົ້າໄປຢ່າງຈິງໃຈໂດຍຕະຫລອດ ບໍ່ມີອະຄະຕິໃສ່ໃຜ ແລະ ບໍ່ຫວັ່ນກົວທີ່ຈະຊີ້

ບອກວ່າ "ທິດສະດີ" ນັ້ນ ສຳລັບຂ້າພະເຈົ້າແລ້ວ ມັນຫນ້າເອດ ທະນາ ແລະ ເປັນສິ່ງແປກໃຫມ່ພໍພຽງໃດ.

ຊູກຣິນສະກາຍຢາ ຟັງຂ້າພະເຈົ້າດ້ວຍໃບຫນ້າແຈ່ມໃສ ແລະ ຈິງຈັງ. ເບຣແຊນ ນັ້ນບໍ່ສະແດງຄວາມຮູ້ສຶກໃດໆອອກມາ ແລະ ຂ້າພະເຈົ້າກໍ່ບໍ່ຄິດກັງວົນພໍເທົ່າໃດນຳຊາຍກັນ.

ເມື່ອຂ້າພະເຈົ້າເວົ້າສຸດ ເບຣແຊນກໍເອົານິ້ວມືກົມໆຂອງນາງ ເຄາະໃສ່ໂຕະ ແລະ ເວົ້າດ້ວຍສຳນຽງເຊິ່ງຟັງບໍ່ອອກວ່າ ນາງເວົ້າ ຢ່າງຈິງໃຈຫລືເຍາະເຍີ້ຍຂ້າພະເຈົ້າແທ້.

- ຈັ່ງຊັ້ນເນາະ... ຂ້ອຍຂໍເວົ້າຢ່າງຈິງໃຈວ່າ ຫນ້າສົນໃຈທີ່ສຸດ, ຫນ້າສົນໃຈອີຫລີ ແມ່ນບໍ່ ແຊກເກ ວາຊີເລັບວິດ?

ຊາຍກັນ ພະຍາຍາມແປງແວ່ນຕາ, ກົ້ມຫນ້າໃສ່ປຶ້ມນ້ອຍໆຂອງ ລາວ ແລ້ວດ້ວຍທ່າທີສຸພາບທີ່ສຸດທີ່ສອດຄ່ອງກັບອາຊີບນັກວິທະ ຍາສາດອ້ອຍຕ້ອຍ, ລາວເຮັດຫນ້າເບະແດ່ ແລະ ສະແດງອາການ ນອບນ້ອມແບບເຂີນໆຈັກຫນ່ອຍ ແລ້ວຈຶ່ງກ່າວຄຳດັ່ງຕໍ່ໄປນີ້ອອກ ມາ.

- ທັງຫມົດນີ້ຫນ້າສົນໃຈຢູ່ດອກ, ທຳມະດາແລ້ວ ຄວນເຮັດ ໃຫ້ທຸກຢ່າງແຈ່ມໃສຂຶ້ນ... ແຕ່ວ່າ ຂ້ອຍເອງ... ເອີ້ ແມ່ນແຕ່ໃນ ເວລານີ້... ເອີ້ ໂດຍບໍ່ປິດບັງເດີ້ ຂ້ອຍຍັງມີແນວສົງໄສບາງຢ່າງຢູ່ ກ່ຽວກັບຫລັກທິດສະດີຂອງເຈົ້າ... ກ້າເວົ້າໄດ້ແນວນີ້..., ເຈົ້າ ເອີ້ ໄດ້ສະເຫນີລາຍງານສູ່ພວກເຮົາຟັງຢ່າງມີຊີວິດຊີວາແທ້ໆ, ຂ້ອຍຂໍ ບອກວ່ານັ້ນມັນກໍແມ່ນການສະແດງຄວາມເຊື່ອຫມັ້ນຂອງເຈົ້າເອງ, ດີແລ້ວ ແຕ່ວ່າຍັງມີອີກແນວຫນຶ່ງຊຶ່ງພວກເຮົາຮູ້ແລ້ວ ແຕ່ເຈົ້າຊ້ຳພັດ

ບໍ່ເວົ້າອອກມາ, ຄືວ່າປິດອຳມັນໄວ້, ປາກົດວ່າພວກເຈົ້າຈັດຕັ້ງແຂ່ງຂັນກັນແນວໃດແນວຫນຶ່ງ ວ່າແນວນີ້ເນາະຄື ແມ່ນພວກນັກຮຽນຈັດຕັ້ງຂຶ້ນເອງ: ຜູ້ເຮັດໄດ້ຫນ້ອຍກວ່າກໍຖືກຕຳຫນິ ຜູ້ເຮັດໄດ້ຫລາຍກວ່າກໍໄດ້ຮັບຄຳຍ້ອງຍໍຊົມເຊີຍ. ເຊັ່ນການໄກນາ ມີການແຂ່ງຂັນກັນແມ່ນບໍ່? ເຈົ້າບໍ່ເວົ້າຮອດຈັກຄວາມເລີຍ ອາດຈະແມ່ນບໍ່ເຈດຕະນາດອກ, ນີ້ແລ້ວແນວທີ່ຂ້ອຍຢາກໄດ້ຍິນຈາກເຈົ້າ: ເຈົ້າເອງເຄີຍຮູ້ບໍ່ວ່າ ພວກເຮົາກືວ່າການແຂ່ງຂັນແມ່ນວິທີການຂອງພວກນາຍທຶນອ້ອຍຕ້ອຍ ເພາະວ່າມັນນຳເອົາສາຍພົວພັນໂດຍທາງອ້ອມກັບວັດຖຸມາແທນສາຍພົວພັນໂດຍກົງກັບວັດຖຸ, ນີ້ແມ່ນຈຸດຫນຶ່ງ, ອີກຈຸດທີ່ສອງ; ເຈົ້າແຈກຢາຍເງິນໃຫ້ເດັກນ້ອຍໃນຍາມບຸນແມ່ນບໍ່? ແຕ່ວ່າບໍ່ໄດ້ເທົ່າກັນຫມົດທຸກຄົນດອກ, ຈະວ່າໄດ້ຕາມອັດຕາສ່ວນຂອງວຽກງານຂອງພວກເຈົ້າເອງວ່າຊັ້ນສາ. ເຮັດແນວນີ້ເຈົ້າບໍ່ຮູ້ສຶກບໍ່ວ່າເຈົ້າໄດ້ປ່ຽນສິ່ງກະຕຸກພາຍໃນມາເປັນສິ່ງກະຕຸກພາຍນອກແບບໃຊ້ວັດຖຸອ້ອຍຕ້ອຍເລີຍເນາະ? ອັນຕໍ່ມາ ການລົງໂທດ, ແນວນີ້ເນາະ ເຈົ້າວ່າເອງເດ... ເຈົ້າເອງກໍຮູ້ດີຢູ່ແລ້ວວ່າ ການລົງໂທດແມ່ນວິທີການສຶກສາອົບຮົມພວກຂ້າທາດ ແຕ່ພວກເຮົາຕ້ອງເປັນຄົນຜູ້ມີອິດສະຫລະ ຊຶ່ງມີພຶດຕິກຳກຳນົດດ້ວຍສິ່ງຊຸກຍູ້ພາຍໃນ ແລະ ສະຕິຕື່ນຕົວທາງດ້ານການເມືອງຂອງເຂົາເອງ ບໍ່ແມ່ນຍ້ອນການຢ້ານໄມ້ຄ້ອນ ຫລືອິດທິພົນອື່ນໆ.

ລາວເວົ້າຕໍ່ອີກຫລາຍຢ່າງຫລາຍແນວຢູ່ ທ່ານຊາຍກິນຄືນນີ້, ຂ້າພະເຈົ້າຄຶດຫາບົດເລົ່າເລື່ອງຂອງ ເຊກີບ ເຊິ່ງພັນລະນາການຄາດຕະກຳລາຍຫນຶ່ງ ຊຶ່ງອາໄສລູກຄິດເປັນເຄື່ອງມື, ຕໍ່ມາຂ້າພະ

ເຈົ້າຈຶ່ງຮູ້ສຶກວ່າ ມັນບໍ່ຈຳເປັນຈະຕ້ອງເຂັ່ນຂ້າຊາຍກີນເລີຍ ແຕ່ຂຽນ ຕີລາວຊຶ່ງກໍພຽງພໍແລ້ວ. ແລະ ບໍ່ແມ່ນວ່າຈະຂຽນຕີດ້ວຍໄມ້ແສ້ ຫລືອຸປະກອນຊະນິດໃຊ້ຢູ່ໃນລະບອບເກົ່າ ເຊັ່ນໄມ້ຄ້ອນນາກາຍ ກາດອກ ແຕ່ໃຊ້ສາຍແອວທຳມະດາທີ່ຊາວກຳມະກອນໃຊ້ຮັດສົ້ງຂອງ ເຂົາເນັ້ນແລ້ວ. ເຮັດແນວນີ້ຄືງກີກຕ້ອງຕາມອຸດົມການແລ້ວລະ.

ເບຣແຊນ ເວົ້າຂັດຊາຍກີນ ແລະ ຖາມຂ້າພະເຈົ້າວ່າ:

- ເປັນຫຍັງເຈົ້າຈຶ່ງຍິ້ມ? ອັນທີ່ສະຫາຍຊາຍກີນເວົ້ານັ້ນຕະ ຫລົກຊັ້ນຫວະ?

- ໂອ່, ບໍ່ດອກ, ບໍ່ຕະຫລົກເລີຍ.

- ແຕ່ຫນ້າເສົ້າໃຈ ແມ່ນບໍ່? ນາງວ່າທັງຍິ້ມໃຫ້ຄືກັນ.

- ບໍ່ນ່າ..., ເປັນຫຍັງຊິເສົ້າ? ບໍ່ດອກ, ບໍ່ເປັນແນວນີ້, ມັນ ເປັນຄືແຕ່ເກົ່າມາຫລັງຫັນແລ້ວ.

ເບຣແຊນແນມເບິ່ງຂ້າພະເຈົ້າຢ່າງເອົາໃຈໃສ່ ບາດແລ້ວກໍຫັນ ໃຈໃຫຍ່ ເວົ້າຍອກ ໆ ວ່າ:

- ເວລາຢູ່ກັບພວກເຮົານີ້ ເຈົ້າຄືຊິຍາກໃຈຫລາຍເນາະ?

- ບໍ່ດອກ, ຂ້ອຍຊິນເຄີຍກັບຄົນເວົ້າຍາກມາແລ້ວ, ຢູ່ນີ້ ຜູ້ເວົ້າ ຍາກກວ່າພວກເຈົ້າກໍມີ.

ເບຣແຊນ ຫົວກ້າກຂຶ້ນທັນທີ.

- ສະຫາຍ ມາກາເຮັນໂກ ເຈົ້າເວົ້າຕະຫລົກສະເຫມີເນາະ, ນາງເວົ້າຂຶ້ນເມື່ອເຊົາຫົວ, - ແຕ່ເຈົ້າຊິຕອບ ແຊກເກ ວາຊິເລັບ ວິດ ຈັກຫນ້ອຍຢູ່ຕີ?

ຂ້າພະເຈົ້າກົ້ມແສງຕາອ່ອນຫວານແກມຂໍຮ້ອງໃສ່ນາງ:

- ຂ້ອຍຄຶດວ່າໃຫ້ຄະນະກຳມະການສຶກສາສາດຮັບພາລະເປັນຜູ້

ແກ້ໄຂບັນຫາເຫລົ່ານີ້ຄົງຈະດີກວ່າ, ພວກເພິ່ນຄືຊິຈັດການເລື່ອງໃຫ້ຮຽບຮ້ອຍກວ່ານີ້ດອກ, ດຽວນີ້ພວກເຮົາໄປກິນເຂົ້າກັນດີກວ່າ.

-ເອົາລະ ວ່າແນວນັ້ນກໍໄດ້, ເບຣແຊນ ເວົ້າເຮັດຫນ້າບູດຫນ້ອຍຫນຶ່ງ, -ແຕ່ວ່າບອກຂ້ອຍອີກກ່ອນວ່າ ເລື່ອງມັນເປັນແນວໃດແທ້? ເຈົ້າໄລ່ນັກຮຽນຜູ້ຫນຶ່ງຊື່ ໂອບຣິສໂກ ຫນີຊັ້ນຫວະ?

-ແມ່ນແລ້ວ, ຍ້ອນມັນກິນເຫລົ້າອາລະວາດ.

-ແລ້ວດຽວນີ້ມັນຢູ່ໃສລະ? ພະເນຈອນທ່ອງທ່ຽວໄປຕາມແຄມກະຫນົນແມ່ນບໍ່ລະ?

-ບໍ່ເລີຍ, ມັນຢູ່ແຖວໆນີ້ແລ້ວ, ຢູ່ກັບຊາວນາຮັ່ງຄົນຫນຶ່ງ.

-ສະຫລູບແລ້ວກໍແປວ່າ ເຈົ້າສົ່ງມັນໄປຫາຜູ້ອຸປະການະຫວະ?

-ກໍຢາກຄ້າຍໆນັ້ນແລ້ວ; ຂ້າພະເຈົ້າຕອບທັງຍິ້ມ.

-ເຈົ້າແນ່ໃຈເບາະວ່າ ມັນຍັງຢູ່ຫັ້ນ?

-ແນ່ໃຈ, ຂ້ອຍຮູ້ດີ, ຫມໍໄປຢູ່ນຳຊາວນາຮັ່ງຄົນຫນຶ່ງຊື່ ລູກາເຊັນໂກ. ພໍ່ເຖົ້ານີ້ "ຮັບອຸປະການະ" ເດັກນ້ອຍໄຮ້ຍາດສອງຄົນແລ້ວຢູ່ກັບເຮືອນຂອງລາວເອງ.

-ເອົາລະ, ແລ້ວພວກເຮົາຊິໄປກວດກາເບິ່ງ.

-ເຊີນຕາມສະບາຍ.

ພວກເຮົາໄປກິນເຂົ້າ ຕໍ່ມາທັງ ເບຣແຊນ ທັງ ຊາຍກິນ ກໍຄືຢາກເຫັນຕົວຈິງກັບຕາຕົວເອງ, ຂ້າພະເຈົ້າຫລົບມາພົບກັບ ລິວບົບຊາເວເລັບນາ ແລະ ເປີດເຜີຍກັບນາງວ່າ:

-ສະຫາຍເອີຍ, ພວກເຈົ້າທີ່ມາຈາກກະຊວງສຶກສາປະຊາຊົນຄົງເຫັນກັບຕາແລ້ວ ແມ່ນບໍ່ວ່າ ພວກເຮົາຢູ່ກັນຢ່າງຄັບແຄບພໍ

ພຽງໃດ ແຕ່ຢູ່ນີ້ພວກເຮົາກໍໄດ້ເຮັດທຸກຢ່າງຮຽບຮ້ອຍແລ້ວ ຂືນຢູ່ນີ້ຕໍ່ໄປອີກຈັກ ໒ ເດືອນ ພວກເຮົາຄົງຈະພາກັນບ່ວງບ້າຫມົດ. ຫາບ່ອນໃຫມ່ທີ່ກວ້າງໃຫຍ່ກວ່ານີ້ໃຫ້ພວກເຮົາແດ່ ໃຫ້ມີວຽກເຮັດຈິງຫືວຫມຸນພຸ້ນບ່າ, ພວກເຈົ້າມີທຸກສິ່ງທຸກຢ່າງແລ້ວ, ຢ່າເອົາແຕ່ຫລັກການມາໃຊ້ເດີ.

ລິວບິບ ຊາເວເລັບນາ ຫົວຂຶ້ນອີກເທື່ອແລ້ວເວົ້າວ່າ:

-ຂ້ອຍເຂົ້າໃຈດີ, ຄືຊິໄດ້ຢູ່ດອກ, ໄປ-ໄປລືມກັນຢ່າງລະອຽດຕື່ມ ແຕ່ກ້າກ່ອນ, ເຈົ້າຄືວ່າຄຶດຫາແຕ່ອະນາຄົດແທ້, ການຍັງມຢາມກວດກາແບບນີ້ລົບກວນເຈົ້າຫລາຍຫວະ?

-ໂອ້ຍ, ບໍ່ດອກ, ບໍ່ເລີຍ, ແລ້ວເຈົ້າຄຶດວ່າມັນມີທາງເປັນແບບອື່ນໄດ້ຊັ້ນຫວະ?

-ແລ້ວການສະຫລູບບັນຫາທັງຫມົດຂອງ ຊາຍກິນ ນັ້ນເດ້ ບໍ່ເຮັດໃຫ້ເຈົ້າເປັນຫ່ວງແດ່ຫວະ?

-ບໍ່ແລ້ວ, ເປັນຫຍັງຂ້ອຍຊິຕ້ອງເປັນຫ່ວງລະ? ຕ້ອງໃຫ້ຄະນະກຳມະການສຶກສາສາດພຸ້ນລະບໍ່ຮັບພາລະ ບໍ່ແມ່ນຫວະ? ແມ່ນພວກເພິ່ນພຸ້ນແລ້ວຊິພາກັນຄຶດຈົບຫົວຊິແຕກນະ, ສ່ວນຂ້ອຍຫວະຂ້ອຍບໍ່ສົນໃຈມັນເລີຍ.

ໃນຕອນກາງຄືນກ່ອນຈະເຂົ້ານອນ ເບຣແຊບ ໄດ້ມາສະແດງຄວາມຮູ້ສຶກຈິງໃຈຂອງນາງຕໍ່ຂ້າພະເຈົ້າວ່າ:

-ການຢູ່ໂຮມຫມູ່ຂອງເຈົ້າວິເສດຫລາຍ, ແຕ່ວ່າເກີງຢ່າງໃດວິທີການຂອງເຈົ້າກໍຍັງເປັນຕາຢ້ານຢູ່ຫັ້ນແຫລະ.

ຂ້າພະເຈົ້າຄຶດດີໃຈພິດໆ: ດີແຕ່ວ່ານາງບໍ່ຮູ້ຫຍັງກ່ຽວກັບການຮຽນຕຶກອງຂອງພວກເຮົາ.

-ລາດີສະຫວັດ ເບຣແຊນ ເວົ້າຂຶ້ນ, -ແລ້ວກໍ່ຮູ້ໄວ້ແດ່ເດີວ່າກ່ຽວກັບການຕາຍຂອງ ໂຊບິດ ນັ້ນບໍ່ມີໃຜຄຶດຕູ່ໂທດເຈົ້າດອກ.

ຂ້າພະເຈົ້າກົ້ມຫົວຮັບຄຳຂອງນາງ ດ້ວຍອາລົມສຳນຶກໃນບຸນຄຸນຢ່າງເລິກເຊິ່ງ.

ບົດທີ ໑໖

ອັດສະວິນ ຊາໂປໂຣເຊ*

ອີກຄັ້ງໜຶ່ງ ລະດູຮ້ອນໄດ້ຫວນຄືນມາ ແລະ ອີກຄັ້ງໜຶ່ງທີ່ກອງພິເສດຂອງພວກເຮົາໄດ້ອອກແຮງໄປເຮັດວຽກກາງທົ່ງພ້ອມໆກັບດວງຕາເວັນພົ້ນໂປໂລຂຶ້ນສູ່ຂອບຟ້າ ໂດຍບໍ່ຊັກຊ້າເສຍເວລາ. ອີກຄັ້ງໜຶ່ງ ແລະ ກໍ່ແມ່ນຢູ່ພາຍໃຕ້ການບັນຊາຂອງ ບູຮູນ ຄືເກົ່ານັ້ນແລ້ວ ທີ່ກອງພິເສດທີ່ສີ່ທັງຫລາຍໄດ້ຄອງທຸງແດງນຳໜ້າໝູ່ມາສະເໝີ.

---

* ອັດສະວິນ ຊາໂປໂຣເຊ: ຊື່ເອີ້ນຊາວໂກຊັກລ່ອງແມ່ນ້ຳດະນຽບ ຊຶ່ງຈັດຕັ້ງຂຶ້ນນະໄຫມບູຮານ ເພື່ອປົກປ້ອງເຂດ ອູກຣາອີນ ຈາກພວກຮຸກຮານຕ່າງດ້າວ, ເຂົາເຈົ້າມັກເສລີພາບ, ນັບຖືກົດລະບຽບຂອງຕົນຢ່າງເຄັ່ງຄັດ, ແລະ ໄດ້ຄັດເລືອກຫົວໜ້າຂອງພວກຕົນໂດຍເອີ້ນຊື່ວ່າອັດຕາມັງ. ກອງທະຫານອາສາສະມັກດັ່ງກ່າວກໍ່ກະບົດພະເຈົ້າຊາລີນລ້າງໃນຕອນທ້າຍສະຕະວັດທີ່ສິບແປດ.

ພວກນັກສຶກສາມະຫາວິທະຍາໄລກຳມະກອນ ມາຮອດນິຄົມໃນກາງເດືອນມິຖຸນາ ທັງນຳເອົາຂ່າວຄາວຄວາມສຳເລັດໃນການສອບເສັງຂຶ້ນປີທີສອງຂອງພວກເຂົາ ມາສູ່ພວກເຮົາ ພ້ອມທັງພາສະມາຊິກໃຫມ່ອີກສອງຄົນຄື ອີກຊານນາ ແລະຣາແຊນ ກັບມານຳ, ແນ່ນອນແລ້ວ, ໃນນາມວ່າ ພວກນີ້ເປັນສະມາຊິກນິຄົມຄືກັນແລະພວກນາງທັງສອງກໍ່ບໍ່ມີທາງເລືອກທາງອື່ນ ມີແຕ່ກັບມານີ້ເທົ່ານັ້ນ. ນອກນີ້ຍັງມີສາວນ້ອຍຈາກ ແຊກນີກອບ ຕິດຕາມພວກເຂົາມາອີກ, ນາງນີ້ມີແກ່ນຕາ ແລະ ຂົນຄິ້ວດຳປີ້ບໍ່ມີແນວທໍ່ ແລະ ຊື່ວ່າ ກາເລຍ ໂປດກອກນາຢາ. ເຊມີຍົງ ກາຣາບານົບ ພານາງມາຮ່ວມກອງປະຊຸມໃຫຍ່ ແລ້ວແນະນຳກັບທຸກຄົນວ່າ:

-ຊາໂດຮອບ ຂຽນຈົດຫມາຍມາຫານິຄົມ ຈົນວ່າເຮົາເອງກໍເກີດຄວາມສົນໃຈນາງສາວຈາກ ແຊກນີກອບຄົນນີ້. ຄວາມຈິງແລ້ວບໍ່ມີຫຍັງດອກຫມູ່ເອີຍ ເຮົາຂໍເອົາກຽດຊາວຫນຸ່ມກົມໂຊໂມນເປັນປະກັນເດີ, ສິ່ງສຳຄັນມີຢູ່ວ່າ ກາເລຍ ໂປດກອກນາຢາ ເອງກໍບໍ່ມີ... ຄືເພິ່ນວ່ານັ້ນນ່າ... ດິນແດນບ່ອນຈະໄປພັກຮ້ອນນັ້ນແລ້ວ, ເຊີນພວກສະຫາຍຕັດສິນເອງວ່າໃຜຜິດໃຜຖືກ.

ເຊມີຍົງ ນັ່ງລົງກັບພື້ນດິນ ການປະຊຸມດຳເນີນຢູ່ໃນອຸທິຍານ, ສາວນ້ອຍຈາກແຊກນີກອບ ພິຈາລະນາເບິ່ງສັງຄົມຂອງພວກເຮົາດ້ວຍຄວາມປະຫລາດໃຈ, ພວກເດັກນ້ອຍປະຕີນເປົ່າ ແຂນຂາເປືອຍຫມົດ ບາງຄົນໃຫ້ວ່າເກືອບເປືອຍຫມົດໂຕເອົາໂລດ. ລາປົດ ກັດພີສົບເຂົ້າແລ້ວລີ່ວຕາ, ຫນັງຕາເຫີບປາສະຈາກຂົນຕາຂອງຫມໍພົບພຶບໆ ແລ້ວເວົ້າຂຶ້ນດ້ວຍສຽງຫ້າວແຕກບ່າວວ່າ:

-ນາງສະຫາຍແຫ່ງ ແຊກນິກອບ ເອີ້ຍ, ກະລຸນາບອກພວກເຮົາແດ່ເທາະວ່າ ເອີ້... ສາວນ້ອຍຈາກ ແຊກນິກອບ ກັບທີ່ປະຊຸມທັງຫມົດພາກັນກາງຫູຄອງຟັງ:

-ເອີ້... ເຈົ້າຮູ້ຈັກ "ພະບິດາຂອງພວກຜູ້ຂ້າ"* ບໍ່?

ນາງຍິ້ມອາຍຈົນຫນ້າແດງແລະຕອບດ້ວຍຄວາມປະຫມ່າວ່າ:

-ບໍ່, ຂ້ອຍບໍ່ຮູ້ຈັກ...

-ໂອ່! ເຈົ້າບໍ່ຮູ້ຈັກຫວະ? ລາປິດ ກັດສົບແລະເຮັດຕາພິບໆອີກແບບພາໂລ, -ແລ້ວຄຳວ່າ "ຜູ້ຂ້າສັດທາ" ເດ້ລະ ເຈົ້າຮູ້ຈັກບໍ່?

-ບໍ່, ຂ້ອຍບໍ່ຮູ້ຈັກ.

-ເອົາລະ ແລ້ວເຈົ້າສາມາດລອຍຂ້າມນ້ຳ ດະນຽບ ໄດ້ບໍ່?

-ເອີ້... ຈະວ່າແນວໃດເນາະ, ຂ້ອຍເປັນນັກລອຍນ້ຳຜູ້ຫນຶ່ງ, ຂ້ອຍຄຶດວ່າຂ້ອຍຄືຊິລອຍໄດ້ຢູ່...

ລາປິດ ງວາກໄປຫາທີ່ປະຊຸມ ເຮັດສີຫນ້າຄືຄົນໂງ່ຈ້າພວມໃຊ້ຄວາມຄຶດຢ່າງຫນັກ: ຫມໍເຮັດແກ້ມປຸ້ງອອກ, ລັບຕາພິບໆ, ນິ້ວໂປ້ຊີ້ຈ້ຳໃສ່ປາຍດັງ, ສີຫນ້າບໍ່ສະແດງອອກຈັກເມັດວ່າຢາກຫົວ.

* "ພະບິດາຂອງຜູ້ຂ້າ" ແລະ "ຜູ້ຂ້າສັດທາ" (ຢູ່ລຸ່ມ) ແມ່ນສອງບົດສູດມົນທຳອິດຂອງສາສະຫນາຄຣິດ ທີ່ກ່າວໃນເວລາທຳພິທີຮັບເອົາສະມາຊິກໃຫມ່ເຂົ້າໃນກອງທະຫານໂກຊັກ. ຜູ້ໃດຢາກເຂົ້າຮັບໃຊ້ໃນກອງທະຫານໂກຊັກກໍຕ້ອງສາມາດທ່ອງບົດສູດມົນສອງບົດດັ່ງກ່າວ ແລະ ທັງສາມາດລອຍຂ້າມແມ່ນ້ຳດະນຽບໄດ້ນຳອີກ.

- ແມ່ນແນວນັ້ນເນາະ! ບັດນີ້ພວກເຮົາຮູ້ແລ້ວວ່າ: ນາງບໍ່ຮູ້ຫຍັງເລີຍກ່ຽວກັບ "ພະບິດາ", "ຜູ້ຂ້າສັດທາ" ກໍຄືກັນ, ນາງສາມາດລອຍຂ້າມນ້ຳ ດະນຽບໄດ້, ຫລືບາງທີອາດຈະບໍ່ໄດ້ຈ້ຳ ໃຜຈະຮູ້ເນາະ?

- ລອຍໄດ້ ລອຍໄດ້! ມີສຽງຮ້ອງຕອບຈາກຜູ້ຟັງ.

- ເອົາລະ, ໄດ້ແລ້ວ, ກ້ານາງລອຍຂ້າມນ້ຳ ດະນຽບບໍ່ໄດ້ຢ່າງໜ້ອຍກໍຄືຈະຂ້າມຫ້ວຍ ໂກໂລມາກ ໄດ້ຢູ່.

- ຫ້ວຍ ໂກໂລມາກ... ໄດ້ໄດ້! ພວກເດັກນ້ອຍຮ້ອງຕອບທັງຫົວແຊວໆ.

- ຈັ່ງຊັ້ນນາງກໍສົມເຂົ້າເປັນສະມາຊິກນິຄົມແຫ່ງອັດສະວິນ ຊາໂປໂຣເຊແລ້ວແມ່ນບໍ່?

- ເອີ້ ສົມແລ້ວ.

- ແລ້ວຊິໃຫ້ຢູ່ໜ່ວຍໃດ?

- ໜ່ວຍທີ່ ៥.

- ຄັນຊັ້ນ ຈົ່ງເອົາດິນຊາຍໂພະຫົວນາງເລີຍ ແລ້ວພາໄປສົ່ງໜ່ວຍ.

- ເຮີ້ຍ ໂຕອອກນອກເລື່ອງແລ້ວເວີ້ຍ! ກາຣາບານິບ ຮ້ອງຂຶ້ນ. - ເພິ່ນໂພະດິນຊາຍໃສ່ຫົວພວກອັດຕະມັນເທົ່ານັ້ນເດີ້ຍ!

- ໂຢ້ວ! ໂກຊັກ ໂຕບອກມາເບິ່ງຊິວິດເຮົາວິວັດເປັນບໍ່? ລາບິດ ກາມຄືນ.

- ວິວັດໄປເລື້ອຍໆເວີ້ຍ, ແລ້ວຊິເປັນຫຍັງລະ?

- ແຕ່ກ່ອນ ເພິ່ນໂພະດິນໃສ່ແຕ່ຫົວພວກອັດຕະມັນ, ບັດນີ້ຫົວໃຜກໍໂພະໃສ່ໄດ້ຫມົດເອີ້ຍ!

- ຣະຮ່າ... ຖືກແລ້ວ! ກາຣາບານົບ ຮ້ອງຂຶ້ນ.

ແນວຄິດວ່າຈະໂຍກຍ້າຍໄປ ຊາໂປໂຣເຊ ກໍາເນີດຂຶ້ນໃນຫົວສະຫມອງຂອງພວກເຮົາ ຫລັງຈາກໄດ້ຮັບຈົດຫມາຍສະບັບຫນຶ່ງຂອງ ຊູກຣິນສະກາຍຢາ, ໃນຈົດຫມາຍສະບັບນີ້ນາງບອກພວກເຮົາວ່າ ມີຂ່າວຊ່າລືວ່າ ເພິ່ນຈະຕັ້ງນິຄົມເດັກຂະຫນາດໃຫຍ່ບ່ອນຫນຶ່ງໃສ່ດອນ ຄອກຕິດຊາ, ນາງເວົ້າຕື່ມໃນຕອນທ້າຍວ່າ ທາງກະຊວງສຶກສາປະຊາຊົນຈະດີໃຈຫລາຍ ຖ້ານິຄົມ ກັອກກີ ໄດ້ເປັນແກ່ນກາງການຈັດຕັ້ງໃນຄັ້ງນີ້.

ຍັງບໍ່ມີການຄົ້ນຄວ້າຢ່າງລະອຽດກ່ຽວກັບໂຄງການນີ້ເລີຍ. ຕໍ່ຄໍາຖາມຫລາຍຂໍ້ຂອງຂ້າພະເຈົ້າ ຊູກຣິນສະກາຍຢາ ຕອບມາວ່າ ບໍ່ຄວນຄິດວ່າຈະມີການຕັດສິນໃຈຢ່າງເດັດຂາດໃນເວລາຈັ້ງນີ້ເລີຍ ເພາະວ່າທຸກສິ່ງທຸກຢ່າງຕິດພັນກັບໂຄງການສ້າງເຂື່ອນທີ່ແມ່ນໍ້າ ດະນຽບ.

ພວກເຮົາບໍ່ຮູ້ວ່າຢູ່ ຄາຄົບ ພຸນເພິ່ນເຮັດແນວໃດກັນແດ່ ແຕ່ຢູ່ນິຄົມພັດມີການສູ້ຍັນກັນຫລາຍ, ມັນເປັນການຍາກທີ່ຈະບອກໄດ້ຄັກແນ່ວ່າ ພວກເດັກນ້ອຍນິຄົມຄິດຝັນຫາຫຍັງແດ່. ອາດຈະຝັນເຖິງແມ່ນໍ້າດະນຽບ, ດອນກາງນໍ້າ, ທົ່ງນາກວ້າງ ຫລືໂຮງຈັກໂຮງງານໃດຫນຶ່ງ. ຫລາຍຄົນຄິດອອນຊອນຝັນຫວານນໍາແນວຄິດທີ່ວ່າພວກເຮົາຈະມີເຮືອຈັກອາຍນໍ້າ ເປັນຂອງພວກເຮົາເອງ. ລາປົດເວົ້າຢອກພວກແມ່ຍິງວ່າ ອີງຕາມຮີດຄອງເກົ່າແກ່ຢ່າງຫນຶ່ງຂອງ

ຊາວໂກຊັກ ນັ້ນ ເພິ່ນຈະບໍ່ອະນຸຍາດໃຫ້ພວກແມ່ຍິງຂຶ້ນໄປຢູ່ເທິງດອນ ຈັ່ງຊັ້ນຈຳເປັນຈະຕ້ອງໄດ້ສ້າງບ່ອນຢູ່ແບບໃດແບບຫນຶ່ງໃຫ້ພວກເຂົາຢູ່ເທິງແຄມຝັ່ງແມ່ນ້ຳ ດະນຽບ ນີ້.

- ແຕ່ວ່າບໍ່ເປັນຫຍັງດອກເດີ້, ຫມໍເວົ້າອີ່ນອອຍພວກເຂົາ, - ພວກເຮົາຊິພາກັນມາຢັ້ງມຢາມພວກເຈົ້າດອກ ແລ້ວກ້າຜູ້ໃດຢາກແຂວນຄໍກໍຈະເຊີນໄປແຂວນຢູ່ເທິງດອນພຸ້ນ ໂດຍບໍ່ຕ້ອງມາລົບກວນເຈົ້າດອກ!

ພວກນັກສຶກສາມະຫາວິທະຍາໄລກຳມະກອນ ກໍມາຮ່ວມຝັນຫວານມ່ວນໆກ່ຽວກັບການໄດ້ເປັນເຈົ້າຂອງມໍລະດົກດອນກາງນ້ຳ ດະນຽບ ແຫ່ງນີ້ຄືກັນ, ພວກເຂົາຕັ້ງໃຈຮ່ວມຫລິ້ນລະຄອນບົດນີ້ຢ່າງສະມັກໃຈ ຄືກັບວ່າພວກເຂົາຍັງບໍ່ໃຫຍ່ເກີນການຫລິ້ນແບບນີ້ອີກແລ້ວ. ສະມາຊິກນິຄົມທັງຫມົດໄດ້ຫົວຈົນໄຫ້ຕະຫລອດຄ່ຳນຳການສະແດງຮຽນແບບຊີວິດຂອງຊາວ ຊາໂປໂຣເຊ ຢູ່ໃນເດີ່ນ, ເພື່ອການຫລິ້ນບົດນີ້ຫລາຍຄົນໄດ້ລົງມືສຶກສາ ຢ່າງລະອຽດກ່ຽວກັບເລື່ອງ ຕາຣາສ ບູນບາ*. ຄວາມສາມາດໃນການຮຽນແບບປະເພດນີ້ຂອງພວກເດັກນ້ອຍມີຢ່າງລົ້ນເຫລືອ, ບາງເທື່ອແມ່ນກາຣາບານົບ ເອງທີ່ປາກົດຕົວອອກມາໃນຊຸດສົ້ງຂາຍາວເຮັດດ້ວຍຜ້າກັ້ງໂຮງລະຄອນແລ້ວເຂົາ ກໍພັນລະນາກ່ຽວກັບການສ້າງເຄື່ອງນຸ່ງປະເພດນີ້

---

* ຕາຣາສ ບູນບາ: ຊື່ນະວະນິຍາຍແອ້ມປະຫວັດສາດຂອງໂກໂກນ ກ່ຽວກັບວິລະກຳຂອງນັກຮົບ ໂກຊັກຕາມລ່ອງແມ່ນ້ຳ ດະນຽບໃນລະຫວ່າງສະຕະວັດທີ ໑໗.

ເຊິ່ງໃນທັດສະນະຂອງຫມໍແລ້ວ ເຫັນວ່າຕ້ອງໃຊ້ຜ້າຕັ້ງ ໑໘໐ ແມັດ* ບາງເທື່ອຢູ່ເດີ່ນກໍແມ່ນສາກສະແດງການທໍລະມານຊາວ ຊາໂປໂຣເຊ ຜູ້ຖືກຖືກຕູ່ຫາວ່າລັກເຄື່ອງໂດຍຊາວ ຊາໂປໂຣເຊທັງຫມົດ. ໃນບົດນີ້ມີການຮັກສາລາຍລະອຽດຕາມຕໍານານທຸກຢ່າງ ຢ່າງຄົບຖ້ວນເປັນພິເສດ ເຊັ່ນ ການປະຫານຊີວິດນັ້ນຕ້ອງໃຊ້ໄມ້ຄ້ອນ ແຕ່ຜູ້ມີສິດລົງມືໃຊ້ຄ້ອນຊໍ້າແມ່ນແຕ່ຜູ້ໄດ້ "ຈັດການກັບໄຫເຫລົ້າ" ຮຽບຮ້ອຍແລ້ວເທົ່ານັ້ນ. ຍ້ອນວ່າບໍ່ມີເຫລົ້າເປັນໄຫ ພວກເດັກນ້ອຍຈຶ່ງເອົານໍ້າມາໃຫ້ຜູ້ຈະລົງມືຕັ້ງໄຫໃຫຍ່ ຂະຫນາດວ່າ ຜູ້ເປັນນັກດື່ມທີ່ອຶດຫິວນໍ້າມາພໍແຮງແລ້ວ ກໍບໍ່ສາມາດຈັດການກັບມັນໃຫ້ຫມົດໄດ້. ບາງເທື່ອກໍແມ່ນກອງພິເສດທີ່ສີ່ກ່ອນອອກໄປເຮັດວຽກໄດ້ນໍາເອົາໄມ້ເທົ້າຫົວໂປ ແລະ ແສ້ຍອຍ** ມາໃຫ້ ບູຣູນ. ຫົວໂປຂອງແສ້ແມ່ນຫມາກອຶອ່ອນຫນ່ວຍຫນຶ່ງສຸບໃສ່ປາຍໄມ້ ສ່ວນຍອຍແມ່ນງ່າຕໍ່ຍອດມີໃບ. ບູຣູນ ວາງທ່າຮັບເອົາ "ສັນຍາລັກ" ເຫລົ່ານີ້ດ້ວຍທ່າທາງນອບນ້ອມ ເຂົາກົ້ມຫົວຂໍ່ານັບໄປທັງສີ່ທິດ.

ລະດູຮ້ອນຜ່ານໄປແລ້ວ ແຕ່ໂຄງການຍົກຍ້າຍໄປຢູ່ດອນກອງແມ່ນໍ້າດະນຽບຍັງຄົງສະພາບເປັນໂຄງການຢູ່ ແລະ ພວກເດັກນ້ອຍ

---

* ສົ້ງຂາກວ້າງ, ຫຸບຕີນ ຊຶ່ງແມ່ນເຄື່ອງນຸ່ງແບບພື້ນເມືອງຂອງຊາວ ຊາໂປໂຣເຊ.

** ໄມ້ເທົ້າຫົວໂປແລະແສ້ຍອຍ: ຕາມປະເພນີຂອງກອງທະຫານໂກຊັກ, ເຂົາເຈົ້າຈະມອບອາວຸດສອງຢ່າງນີ້ໃຫ້ແກ່ ຫົວຫນ້າຜູ້ທີ່ຖືກຄັດເລືອກໃຫມ່.

ກໍເລີ່ມເບື່ອໜ່າຍການຫລິ້ນບົດບາດນີ້ຂອງພວກເຂົາແລ້ວ. ໃນເດືອນສິງຫາ ພວກນັກສຶກສາອອກເດີນທາງກັບຄືນມະຫາວິທະຍາໄລກໍາມະກອນ ທັງນໍາເອົາກຸ່ມນັກສຶກສາໃຫມ່ອີກກຸ່ມຫນຶ່ງໄປພ້ອມ... ມີນາຍກອງບໍ່ຕໍ່າກວ່າ ໕ ຄົນ ອອກຈາກຕໍາແຫນ່ງສູ້ຮົບຂອງພວກເຂົາໄປ ແຕ່ບໍ່ມີການຈາກໄປຂອງນາຍກອງຄົນໃດສ້າງຄວາມອາໄລສະເທືອນໃຈເທົ່າກັບນາຍກອງທີສອງຄື ອານໂຕນ ບຣາເຊັນໂກ ເຊິ່ງກໍໄປຮຽນຕໍ່ຄືກັນ, ຫມັ້ນນີ້ເປັນເພື່ອນສະຫນິດຄົນຫນຶ່ງຂອງຂ້າພະເຈົ້າທັງເປັນຜູ້ຮ່ວມກໍ່ຕັ້ງນິຄົມກັອກກີນໍາ. ອີກຜູ້ຫນຶ່ງທີ່ຈາກໄປກໍແມ່ນ ອີດຊາຈີ, ຫມໍນີ້ຂ້າພະເຈົ້າໄດ້ອຸທິດຊີວິດໃຫ້ມັນສ່ວນຫນຶ່ງສໍາຄັນເຕີບ. ແຕ່ກ່ອນມັນເຄີຍເປັນຮອດໂຈນພຸ້ນແລ້ວ ແຕ່ບັດນີ້ມັນໄດ້ເຂົ້າຮຽນໃນສະກາບັນເຕັກນິກທີ່ ຄາຄົບ ແລ້ວມັນເປັນບ່າວເຈົ້າຊູ້ຮ່າງສູງສົມສ່ວນ ທ່າທີຄ່ອງໄວຄັກແນ່, ລັກສະນະເຄັ່ງຂຶມແຕ່ຫາກແຝງໄວ້ດ້ວຍຄວາມມີຊີວິດຊີວາ ແລະ ພະລັງຕາມແບບສະເພາະຂອງມັນ, ໂກວານເວົ້າເຖິງມັນວ່າ:

-ອີດຊາຈີ, ຊາວຫນຸ່ມກົມໂຊໂມນຄັກຄົນຫນຶ່ງເດີ! ຫນ້າເສຍດາຍທີ່ຕ້ອງແຍກກັບກົມໂຊໂມນແບບນີ້.

ແມ່ນແທ້ຕະຫລອດເວລາສອງປີ ອີດຊາຈີ ໄດ້ແບກຫາບພາລະສັບສົນພິລຶກຢ່າງຫນຶ່ງຄືການເປັນນາຍກອງຮັບຜິດຊອບໂຮງສີ, ເຂົາຕ້ອງແກ້ໄຂບັນຫາຍິບຍ່ອຍຫມົດບໍ່ເປັນ, ຄິດບັນຊີຊະນິດບໍ່ສຸດຈັກເທື່ອກັບຊາວບ້ານ ແລະ ຄະນະກໍາມະການຊາວນາທຸກ.

ເກອໍເກັບສະກີ ລູກຊາຍອະດີດທ່ານເຈົ້າແຂວງ ອຽກກູດ ກໍຈາກພວກເຮົາໄປຄືກັນ, ເຂົາຜູ້ນີ້ບໍ່ສາມາດລືບລ້າງຮອຍດ່າງຫນ້າ

ອັບອາຍອັນຫນຶ່ງຈາກຊີວິດເລີຍເກີງວ່າຢູ່ໃນແບບຂຽນຕອບຄຳການທາງການ ເຂົາໄດ້ຂຽນແຈ້ງວ່າ: "ບໍ່ຮູ້ຈັກພໍ່ແມ່" ກໍຕາມ.

ຜູ້ຈາກໄປອີກຄົນຫນຶ່ງແມ່ນ ຊະເນແດກ ນາຍກອງທີຊຫັງ ແມ່ນກອງຊະນະເລີດ ແລະ ນາງ ມາຣູດເຊຍ ເລັບເຊັນໂກ ນາຍກອງທີ່ ໕.

ພວກເຮົາອອກໄປສົ່ງພວກເຂົາຮອດສະຖານີລົດໄຟ ແລະ ໃນທັນທີທັນໃດນັ້ນພວກເຮົາກໍສັງເກດເຫັນວ່າ ນິຄົມກ້ອກກີຂອງພວກເຮົາຫນຸ່ມແຫນ້ນຂຶ້ນຕັ້ງຫລາຍເທົ່າ. ແມ່ນແຕ່ຢູ່ໃນສະພານາຍກອງເອງ ກໍມີເດັກນ້ອຍທີ່ຫາກໍມາໃຫມ່ໆຫລາຍຄົນເຊັ່ນ ກອງທີສອງແມ່ນ ວິເຕຍ ໂບໂກຍອັບເລັນສະກີ, ກອງທີ່ສາມແມ່ນ ຊາຣິບສະກີ ໂກສະເຈຍແທນ ໂອປຣິສໂກ, ກອງທີ່ຫ້າແມ່ນ ນາຕາຊາ ເປເຕຣັນໂກ, ກອງທີເກົ້າແມ່ນ ມິເຕຍ ເຊເວລີ ແລະ ຢູ່ກອງທີແປດຈຶ່ງແມ່ນທ້າວຍັກ ເຟໂດເຣັນໂກ ທີ່ໃນທີ່ສຸດກ້າວຂຶ້ນເປັນຫົວຫນ້າກອງຈົນໄດ້. ເກອໍເກັບສະກີໄດ້ສົ່ງເດັກຮຸ່ນນ້ອຍສຸດ ເຊິ່ງຫມໍດູແລນຳພາມາສາມປີແລ້ວນັ້ນ ໃຫ້ແກ່ ໂຕສະກາ ໂຊໂລແວັບ.

ອີກຄັ້ງຫນຶ່ງພວກເຮົາຂຸດຂຸມມ້ຽນຫົວຜັກກາດຂາວອາຫານສັດ ແລະ ຫົວມັນຝະລັ່ງ. ເອົາເຟືອງປູ້ຊອບຄອກສັດ, ຝັດ ແລະ ໄຈ້ແນວປູກສຳລັບລະດູບານໃຫມ່ແລະໃນຄັ້ງນີ້ກອງທີ ໑ ກັບກອງທີ ໔ ໄດ້ລົງມືບຸກວຽກໂຖນາສຳລັບເຮັດໃນລະດູໃບໄມ້ຫລົ່ນ ຢ່າງບໍ່ມີການແຂ່ງຂັນກັບໃຜ. ຮອດເວລານີ້ພວກເຮົາຈຶ່ງໄດ້ຮັບຂໍ້ສະເຫນີຈາກຄາຄົບ ໃຫ້ໄປເບິ່ງເຄຫາສະຖານ ໂປປົບ ຢູ່ໃນເຂດ ຊາໂປໂຣເຊ.

ພໍແຕ່ທົ່ວກອງປະຊຸມໃຫຍ່ໄດ້ຍິນແຈ້ງການຈາກຂ້າພະເຈົ້າ ແລະ

ເມື່ອຫນັງສືຈາກກະຊວງສຶກສາປະຊາຊົນໄດ້ຈໍລະຈອນຈາກມືຫນຶ່ງສູ່ມືຫນຶ່ງຈົນທົ່ວແລ້ວເທົ່ານັ້ນ ແຕ່ລະຄົນຈຶ່ງຮູ້ສຶກວ່າ ມັນແມ່ນເລື່ອງສຳຄັນແທ້ໆ ນອກນັ້ນພວກເຮົາຍັງມີເຈັຍອີກໃບຫນຶ່ງຊຶ່ງທາງກະຊວງໄດ້ຂຽນຂໍຮ້ອງໃຫ້ຄະນະກຳມະການບໍລິຫານແຂວງ ມອບເຄຫາສະຖານບ່ອນນີ້ເປັນສິດຂອງນິຄົມ.

ໃນເວລານັ້ນ ພວກເຮົາຄິດວ່າກ້ອຍຄຳໃນເຈັຍເຫລົ່ານີ້ ໄດ້ແກ້ໄຂບັນຫາ ແບບກາວອນແລ້ວ. ບາດນີ້ພວກເຮົາມີແຕ່ຊົ້ນໃຈຢ່າງປອດໂປ່ງໂລ່ງລຽນ, ລືມການສົນທະນາໂອ້ລົມອັນຍືດເຍື້ອຂອງພວກເຮົາກ່ຽວກັບເຄຫາສະຖານອື່ນໆ, ນິຄົມຈະບິດບໍ່ປະສົບຄວາມສຳເລັດ ວັດສິມທີ່ຍັງບໍ່ຮ້າງ ແລະ ຫໍໂຮງພວກຊຸບນາງທີ່ຈະຕ້ອງໄປສ້ອມແປງຟື້ນຟູມັນຄືນອີກແລ້ວ. ບັດນີ້ພວກເຮົາຈະຕ້ອງລືມສຳນວນກ່ຽວກັບດອນ ຄອກຕິດຊາ ໄດ້ແລ້ວ ແລະ ແຕ່ງຫີບເຄື່ອງເພື່ອກຽມຕົວອອກເດີນທາງ.

ມິເຕຍ ເຊເວລີ ໄດ້ຮັບເລືອກຈາກກອງປະຊຸມໃຫຍ່ໃຫ້ເດີນທາງໄປກັບຂ້າພະເຈົ້າ ເພື່ອກວດກາ ແລະ ເຮັດເອກະສານເຂົ້າຄອບຄອງເຄຫາສະຖານໂປປົບ. ມິເຕຍ ມີອາຍຸ ໑໘ ປີ ແຕ່ເວລາເຂົ້າແກວຫນໍສູງລົ່ນຫມູ່ໄວດຽວກັນແຕ່ດົນແລ້ວ ທັງເປັນຜູ້ຜ່ານຜ່າບົດຮຽນການທົດສອບອັນສັບສົນໃນດ້ານການເປັນຫົວຫນ້າກອງພິເສດມາແຕ່ດົນແລ້ວ, ບໍ່ເທົ່ານັ້ນຫນໍຍັງໄດ້ເຂົ້າເປັນສະມາຊິກກົມໂຊໂມນມາຫນຶ່ງປີເຕັມແລ້ວ ແລະ ຫວ່າງມໍ່ໆມານີ້ກໍຖືກສະເຫນີໃຫ້ເປັນຫົວຫນ້າກອງທີ ລ (ກອງຮັບຜິດຊອບໂຮງສີ). ມິເຕຍ ເປັນຕົວແທນຂອງຊາວນິຄົມ ກ໊ອກກີ ຮຸ່ນໃຫມ່. ດ້ວຍໄວພຽງ ໑໘ ປີ,

ຮູບຮ່າງອ່ອນນີ້ມປານເຫລັກໃສ້ເສືອ. ຫມໍໄດ້ຜ່ານວຽກງານຕົວຈິງຍິ່ງໃຫຍ່ມາແລ້ວ ມີແວວປະເສີດໃນດ້ານການຈັດຕັ້ງ ທັງຊາບຊຶມເອົາວິທີການເຮັດວຽກຫລາຍອັນຫລາຍແນວ ຂອງພວກຮຸ່ນອ້າຍວິລະຊົນມາໄວ້ເປັນຢ່າງດີ. ນັບແຕ່ມື້ທຳອິດທີ່ມາຮອດ, ມິເຕຍ ກາຍເປັນມິດທີ່ດີຂອງ ກາຣາບານົບ ໂລດ, ເບິ່ງຄືວ່າຫມໍສືບທອດເອົາແກ່ນຕາໂຮງຮຸ່ງປານແປວໄຟຂອງ ກາຣາບານົບ ພ້ອມດ້ວຍວາດຊົງທ່າຍ່າງອັນສະຫງ່າງາມເດັດດ່ຽວນັ້ນນຳ. ສິ່ງດຽວທີ່ຫມໍຕ່າງກັບເຊມິຍົງ ກໍແມ່ນວ່າໃນໄວ ໑໘ ປີ ເທົ່ານັ້ນ ຫມໍໄດ້ຮຽນຢູ່ຫ້ອງ ປ. ໘ ແລ້ວ.

ຂ້າພະເຈົ້າກັບ ມິເຕຍ ອອກເດີນທາງໃນມື້ຫນຶ່ງລະຫວ່າງທ້າຍເດືອນພະຈິກ, ອາກາດຫນາວແຮງຈົນກະດ້າງ ແລະ ບໍ່ມີຫິມະຕົກຮວາຍຮຳເລີຍ, ພວກເຮົາໃຊ້ເວລາຫນຶ່ງມື້ເຕັມໆຈຶ່ງມາຮອດ ຊາໂປໂຣເຊ. ດ້ວຍຄວາມໄຮ້ດຽງສາຊ້າຊື່ແທ້ໆ ພວກເຮົາພາກັນຄຶດຝັນວ່າ ເກິງຍຸກຕ້ອນຮັບຊົມເຊີຍນິຄົມ ກ້ອກກີ ແລ້ວ ແລະ ພວກເຮົາຄົງຈະໄດ້ຮັບການຕ້ອນຮັບໃນທຳນອງນີ້: ປະທານຄະນະກຳມະການບໍລິຫານງານແຂວງ ທ່ານສຸພາບບຸລຸດໃຈດີຫນ້າຮັກ ທ່າທີເປັນມິດແບບນັກປະຕິວັດ, ອອກມາຕ້ອນຮັບພວກເຮົາຢ່າງຍິ້ມແຍ້ມແຈ່ມໃສເປັນກັນເອງ ແລ້ວເວົ້າວ່າ:

- ເຄຫາ ໂປປົບ ຫວະ? ສຳລັບນິຄົມ ກ້ອກກີ ເນາະ! ໂອ... ກະແທ້ລະບໍ້, ບໍ່ມີບັນຫາດອກ, ຂ້ອຍຮູ້ແລ້ວ, ເຊີນ ... ເຊີນເລີຍ, ນີ້ເດ໋ເອກະສານຄຳສັ່ງສຳລັບພວກເຈົ້າ, ເຊີນຍ້າຍມາຢູ່ໂລດແຫລ້ວ!

ຈັ່ງຊັ້ນພວກເຮົາກໍມີແຕ່ຈະຖາມທາງໄປສູ່ເຄຫາສະຖານນີ້ກ່ອນ

ແລ້ວສຸບປີກບິນຄືນເມືອນິຄົມ, ໄປຈົ່ນເລົ້າພວກເດັກນ້ອຍໃຫ້ແຕ່ງຫີບເກັບເຄື່ອງຂອງໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້.

ພວກເຮົາບໍ່ຄຶດຈັກເທື່ອວ່າຈະບໍ່ມັກເຄຫາ ໂປປິບ ເລີຍ ເພາະແມ່ນແຕ່ສຸພາບສະຕີຜູ້ຮອບຄອບເຊັ່ນ ນາງ ເບຣແຊນ ຢູ່ກະຊວງສຶກສາປະຊາຊົນເອງກໍຍັງເວົ້າກັບພວກເຮົາຕອນທີ່ ມີເຕຍ ກັບຂ້າພະເຈົ້າແວ່ໄປຢາມນາງຢູ່ ຄາດີບວ່າ:

- ເຄຫາສະຖານ ໂປປິບ ຫວະ? ເຫມາະສົມກັບທ່ານ ມາກາເຣັນໂກທີ່ສຸດເລີຍ! ເກົ້າ ໂປປິບ ຄືນນີ້ລາວເປັນຄົນແປກປະຫລາດສົມຄວນ, ລາວສ້າງແນວອັດສະຈັນພິລຶກໆໄວ້, ຢູ່ພຸ້ນນ່າ ເອົາລະໆພວກເຈົ້າໄປເບິ່ງເອງດີກວ່າ! ງາມ! ຈົບ... ເຫັນແລ້ວຫາກຊິມັກດອກ!

ນາງຊູກຣົນສະກາຍຢາ ກໍຍັງເວົ້າຄືກັນ:

- ເປັນສະຖານທີ່ຫນ້າອອນຊອນ ງາມດີ, ເປັນບ່ອນດີທີ່ສຸດສຳລັບເຮັດນິຄົມເດັກ...

ມາເຣຍ ກົງດຣາແຕັບນາ ເວົ້າເສີມວ່າ:

- ຄັກແທ້ໆໃດ່ ບ່ອນນີ້ນະ!

ຍ້ອນວ່າມີຫລາຍຜູ້ຫລາຍຄົນຮູ້ຈັກຊື່ສຽງຄວາມສວຍງາມຂອງມັນແນວນີ້ແລ້ວຂ້າພະເຈົ້າກັບມີເຕຍຈຶ່ງຍິ່ງຮູ້ສຶກຫລົງເຊື່ອຢ່າງຫລັບຫູຫລັບຕາ. ໂອ໋! ຊາຕາຊີວິດຈະບັນດານໃຫ້ມັນມາເປັນສົມບັດຂອງພວກເຮົາຊາວນິຄົມກັອກກີແທ້ໆບໍ່?

ແຕ່ຂໍ້ຄາດຄະເນທັງຫມົດຂອງເຮົາກໍຖືກຕ້ອງກັບຄວາມຈິງຢູ່ແຕ່ພຽງຂໍ້ດຽວ ຄືທ່ານປະທານຄະນະກຳມະການບໍລິຫານແຂວງນັ້ນ

ເປັນຄົນຫນ້າຮັກແບບນັກປະຕິວັດແທ້. ສ່ວນຂໍ້ອື່ນໆເປັນໄປໃນທາງກົງກັນຂ້າມອ້ອຍຕ້ອຍ ນັບຕັ້ງແຕ່ຄຳຖາມຂ່າວຄາວຄຳທຳອິດຂອງເພິ່ນ.

ຫລັງຈາກອ່ານເອກະສານຂອງກະຊວງສຶກສາປະຊາຊົນ ແລ້ວທ່ານປະທານເວົ້າວ່າ:

- ເອີ້ ແຕ່ວ່າຢູ່ພຸ້ນມີປະຊາຄົມນາແລ້ວເດ໋! ແລ້ວນີ້ຄົນກົອກກີ້ນີ້ແມ່ນຫຍັງລະ?

ເພິ່ນສັງເກດພວກເຮົາທັງສອງຢ່າງພິຈາລະນາ, ມີເຕຍ ນັ້ນເບິ່ງຄືວ່າຖືກໃຈເພິ່ນກວ່າຂ້າພະເຈົ້າຊ້ຳອີກ ເພິ່ນຍິ້ມກັບປະສານແສງຕາກັບແວວຕາຄູ່ດຳປີ້ ຂອງມີເຕຍ ແລ້ວຈຶ່ງຖາມວ່າ:

- ຊັ້ນແປວ່າ ແມ່ນເດັກນ້ອຍຄືທ້າວອັນນີ້ຫວະ ຊິໄປຢູ່ເປັນເຈົ້າຄອບຄອງດິນດອນນີ້ບໍ່?

ມີເຕຍ ຫນ້າແດງຂຶ້ນທັນທີ ແລະ ເວົ້າຢ່າງບໍ່ສຸພາບປານໃດວ່າ:

-ຊັ້ນເຈົ້າຄິດວ່າ ພວກເຮົານີ້ເປັນພຽງເດັກນ້ອຍອົມໂປ້ຢູ່ຊັ້ນຫວະ? ຢ່າງຫນ້ອຍພວກເຮົາກໍຄືຈະເຮັດວຽກດີກວ່າພວກມູຊິກຂອງເຈົ້າຢູ່ດອກ!

ເມື່ອປ່ອຍຄຳສັບເຫລົ່ານີ້ອອກມາແລ້ວ ມີເຕຍ ກໍຍິ່ງຫນ້າແດງຫລາຍຂຶ້ນແລະທ່ານປະທານກໍຍິ້ມຫລາຍຂຶ້ນນຳຄືກັນ ທັງສະແດງຄວາມຮັບຮູ້ແບບໄວ້ເນື້ອເຊື່ອໃຈອອກມາວ່າ:

- ແມ່ນພວກຊາວນາທັນຫວະ? ພວກເຈົ້າເອີ້ນພວກເຂົາວ່າແນວນັ້ນຫວະ? ພວກມູຊິກ ໂອະ! ແມ່ນແທ້ ພວກນີ້ເຮັດວຽກບໍ່

ເປັນຕາເອົາເລີຍ ແຕ່ຢູ່ພຸ່ນທີ່ດິນກວ້າງຕັ້ງ ໑໘໐໐ ເຮັກຕາພຸ້ນເດີ້ ຈັ່ງ ຊັ້ນລະ ເລື່ອງມັນກໍເລີຍເກີນພັນທະຂອງຄະນະບໍລິຫານງານທ້ອງ ຖິ່ນແດ່, ພວກເຈົ້າຕ້ອງໄປຕໍ່ສູ້ກັບກະຊວງກະສິກໍາແລ້ວລະ ...

ມິເຕຍ ຢູ່ຫົວຄິ້ວເຂົາຢ່າງສົງໄສ ສະແດງວ່າຢາກຖາມທ່ານປະ ທານ:

- ເຈົ້າ ... ເອີ້ ... ທ່ານ ເວົ້າວ່າດງອນ້ອງກມັນກາຍ ... ອື້ ... ແມ່ນຫຍັງເກາະ ... ພັນທະ ຫມາຍຄວາມວ່າແນວໃດ ?

- ເອີ້ ... ເອົາລະ, ເອົາລະ ! ເຮົາເຂົ້າໃຈພາສາຂອງຫມວດໂຕ ຫລາຍກວ່າທີ່ຫມວດໂຕເຂົ້າໃຈພາສາຂອງເຮົາຊໍ້າອີກ ..., ບາດ ແລ້ວຜູ້ອໍານວຍການຂອງໂຕຫາກຊິບອກດອກວ່າ ພັນທະມັນແມ່ນ ຫຍັງ ແລ້ວຊິໃຫ້ຂ້ອຍເຮັດແນວໃດລະນີ້ ? ຂ້ອຍຊິຈັດກວງນມ້າໃຫ້ ຄົນຫນຶ່ງເພື່ອໄປເບິ່ງສະຖານທີ່ເອງໄປຮອດແລ້ວ ຈຶ່ງໂອ້ລົມກັບ ຊາວນາເລີຍເດີ້, ບາງທີອາດຊິຕົກລົງກັນໄດ້ບໍ່ຈັກ, ແຕ່ການຕັດສິນ ບັນຫາແມ່ນຢູ່ຄາຄີບພຸ້ນເດີ້, ຢູ່ກະຊວງກະສິກໍາພຸ້ນ !

ທ່ານປະທານຈັບມືກັບ ມິເຕຍ ທັງຫົວ :

- ກ້າວ່າເດັກນ້ອຍຂອງເຈົ້າທຸກຄົນເປັນຄືກັບມັນນີ້ ຂ້ອຍຊິສະ ຫນັບສະຫນູນເຈົ້າເອງ.

ພວກເຮົາ ຄືຂ້າພະເຈົ້າກັບ ມິເຕຍ ເຫັນເຄຫາສະຖານໂປປິບ ແລ້ວ ແລະຄິດຫລົງໄຫລໃນຄວາມງາມວິຈິດຂອງມັນໃນທັນທີ.

ສໍາລັບພວກເຮົາແລ້ວເຫັນວ່າແມ່ນບ່ອນຕັ້ງເຮືອນຂອງ ຕາຣາສ ບູນບາ ນັ້ນເອງ ມັນຕັ້ງຢູ່ດິນຕອນແມ່ນໍ້າກາຣາເຊກຣາກ, ແຄມທີ່ງ ກວ້າງໃຫຍ່ທີ່ມີຊື່ສຽງໂດ່ງດັງ ແລະ ມີສາຍພູນ້ອຍຕັ້ງສະຫລັບຊັບ

ຊ້ອນຢັ້ງຢາຍກັນໄປຕາມປ່າຄັງ. ແມ່ນ້ຳກາຣາເຊກຣາກທີ່ຊື່ຢຽດພໍປານຄົນລູກສອນ ຄ້າຍຄືຮ່ອງນ້ຳຫລາຍກວ່າແມ່ນ້ຳສາຍຫນຶ່ງ ເລາະລຽບໄປຕາມຫວ່າງພູນ້ອຍ ແລ້ວປ້ອງໃສ່ແມ່ນ້ຳດະນຽບ ຢູ່ເທິງຝັ່ງເບື້ອງຫນຶ່ງແມ່ນສິ່ງສວຍງາມມະຫັດສະຈັນຢ່າງຫນຶ່ງ ຕັ້ງສະຫງ່າຢູ່. ເບື້ອງຫລັງກຳແພງສູງທີ່ມີປ່ອງປືນເຈາະເປັນລະຍະນັ້ນມີຫໍຜາສາດຫລັງຄາແຫລມ ແລະ ກົ່ງມົນສະຫລັບກັນແບບໄຮ້ກົດເກນແປກພິດສະດານຫລັງຫນຶ່ງ. ເທິງຈອມຫໍຄອຍບາງຫໍຍັງມີກົງຫັນລົມຄ້າງຢູ່ແຕ່ປ່ອງຢ້ຽມຕາມຝາກຳແພງເຊິ່ງເບິ່ງຄ້າຍຄືປ່ອງປືນ ໂກນດຳມູມມົວທັງຫລາຍຊ່າງຂັດກັບສິ່ງປະດິດສ້າງ ອັນມີຊີວິດຊີວາຕາມແບບສິລະປະມູຣິສ ຫລືອາຫລັບນັ້ນຢ່າງຫນ້າເສຍດາຍ.

ເມື່ອຜ່ານປະຕູໄຊກ້ອງຫໍຄອຍສອງຊັ້ນຫລັງຫນຶ່ງ ເຂົ້າໄປແລ້ວກວຽນຂອງພວກເຮົາກໍຕົກໃສ່ເດີ່ນກວ້າງປູຫີນສີ່ຫລ່ຽມບ່ອນຫນຶ່ງ ກໍຫຍ້າຮົກເຮື້ອພັນອູກຣາອີນປົ່ງຊອນຂຶ້ນຕາມຫວ່າງກ້ອນຫີນເຫັ້ງກະແດ້ງແລ້ວ ແຕ່ກໍເຫັນໄດ້ຈະແຈ້ງວ່າມີສັດຕ່າງໆໄດ້ຜ່ານກາຍມາຢ້ຽມຢາມແລ້ວ ຄືງົວ ຫມູ ແບ້, ແລະ ສັດພວກນີ້ກໍປະຮ່ອງຮອຍໄວ້ໃຫ້ເຫັນທົ່ວໆໄປ. ພວກເຮົາເຂົ້າໄປໃນຫໍຜາສາດຫລັງທີຫນຶ່ງ ໃນທີ່ນັ້ນບໍ່ມີວັດຖຸສິ່ງຂອງອັນໃດເຫລືອຄົງຄ້າງຢູ່ເລີຍ ນອກຈາກກະແສລົມແຜ່ງກິ່ນອັບຂອງປູນ ແລະ ຮູບປັ້ນເທບທິດາວິນັດແຫ່ງໄມໂລວາງກົ້ມຢູ່ໃນກອງຂີ້ເຫຍື້ອ, ຮູບປັ້ນນີ້ນອກຈາກແຂນກຸດແລ້ວ ຂາກໍກຸດນຳອີກ. ໃນຫໍຜາສາດຫລັງອື່ນໆທີ່ສູງ ແລະ ສະຫງ່າງາມດີນັ້ນພວກເຮົາຍັງຮູ້ສຶກເຖິງກິ່ນອາຍຂອງການປະຕິວັດສົດໆຮ້ອນໆຢູ່. ອາໄສບົດຮຽນໃນດ້ານການສ້ອມແປງ, ຂ້າພະເຈົ້າຄິດໄລ່ຄ່າໃຊ້ຈ່າຍ

ທັງຫມົດຢູ່ໃນໃຈ, ບໍ່ມີຫຍັງເສຍຫາຍຮ້າຍແຮງເທົ່າໃດມີແຕ່ຕ້ອງສ້ອມແປງປະຕູ ປ່ອງຢ້ຽມ ປູພື້ນ ແລະ ໂບກຝາຄືນໃຫມ່ເທົ່ານັ້ນ, ຮູບປັ້ນເທບທິດາວິບັດແຫ່ງໄມໂລນັ້ນ ກໍ່ບໍ່ຈຳເປັນຈະສ້ອມແປງຫຍັງມັນດອກ ສ່ວນຂັ້ນໄດເພດານ ເຕົາຜິງນັ້ນ ຍັງຢູ່ໃນສະພາບດີສົມຄວນ.

ມີເຕຍ ນັ້ນຍັງບໍ່ສາມາດລະງັບຄວາມຕື່ນເຕັ້ນໄວ້ໄດ້ເທົ່າຂ້າພະເຈົ້າຊ້ຳ. ບໍ່ມີການທຳລາຍມ້າງເພ້ອນໃດທັບກຶມລຶບລ້າງຄວາມກະຕືລືລົ້ນໃນແງ່ສູນທອນທັດຢູ່ໃນຕົວຂອງມັນ. ມີເຕຍ ຍ່າງເລາະຈາກຫ້ອງຫນຶ່ງໄປຍັງຫ້ອງຫນຶ່ງຈາກຫໍຄອຍຫນຶ່ງສູ່ຫໍຄອຍຫນຶ່ງ, ຂ້າມຂິວ ຂ້າມເດີ່ນ ຮ່ອມຮ່ອງຕ່າງໆ ທັງອຸໂທອຸທັງວ່າ:

- ໂອ້ຍ ຈັ່ງແມ່ນພິລຶກເນາະ, ເບິ່ງແມ້ຫັ້ນນ່າ, ຄັກອີ່ຫລີໃດ໋, ເວົ້າແທ້ໆເດ໊ ບ່ອນນີ້ງາມຢ່າງຕາຍເລີຍ, ອານໂຕນ ເຊມີວໂນວິດເອີຍ! ຈັ່ງແມ່ນພວກເດັກນ້ອຍເຮົາຊິດີໃຈຕວ່າເນາະ! ຂ້ອຍວ່າມັນຄັກແທ້ໆໃດ໋, ພວກເຮົາຊິຢູ່ກັນໄດ້ທໍ່ໃດນີ້... ບໍ່ແມ່ນຮອດພັນກະໄດ້ຫວະ?

ຂ້າພະເຈົ້າເອງຄຶດໄລ່ຢູ່ໃນໃຈມິດໆຮຽບຮ້ອຍແລ້ວວ່າ ສະການທີ່ນີ້ສາມາດບັນຈຸນັກຮຽນໄດ້ຮອດ ໕໐໐ ຄົນ.

- ແລ້ວພວກເຮົາຊິເຮັດຫລ້ອນຫວະ ຕັ້ງ ໕໐໐ ຄົນ! ຜູ້ຫາຊິມາແຕ່ຕະຫລາດກໍມີ ແລ້ວຜູ້ເປັນນາຍກອງເດັດໆ ກໍໄປຢູ່ມະຫາວິທະຍາໄລຫມົດແລ້ວ!

ພວກເຮົາຈະເຮັດຫລ້ອນຫລືບໍ່ຫລ້ອນນັ້ນ ບໍ່ທັນໄດ້ພາກັນຄຶດດອກ, ພວກເຮົາກ້າວຕໍ່ໄປຂ້າງຫນ້າເລື້ອຍໆ. ຢູ່ໃນເດີ່ນດຳເປື້ອນ

ມຸມມືວບ່ອນໜຶ່ງ ມີໂຮງເຮັດວຽກຂອງພວກຊາວນາຂອງປະຊາຄົມ ແລະ ກຽງນາຂອງຂະເຈົ້າຕັ້ງຮຽງຍາຍກັນຢູ່ຢ່າງບໍ່ມີລະບົບລະບຽບໃດໆ, ເບິ່ງຂັດຕາຍິ່ງໜັກ. ໂຮງມ້າທີ່ກວ້າງຍາວນັ້ນກໍເຕັມເປິະໄປດ້ວຍມູນສັດ ແລະ ຂອງຂີ້ດຽດອື່ນໆ ເໝັນອືອ້ອງອໍໄປໝົດ ສະແດງອອກຢ່າງຈະແຈ້ງວ່າ ຂາດຄວາມເອົາໃຈໃສ່ບົວລະບັດ, ບໍ່ມີຮອດບ່ອນສັດຈະນອນ, ຢູ່ທ່າມກາງສິ່ງເຫລົ່ານີ້ ມີມ້າຂີ້ພະຍາດຈ່ອຍເຫັນກະດູກແຫລມຄືທ່ອນໄມ້ພົ້ນທັ້ງອອກ, ກົ້ນມ້າຈົ້ນປຽກບາງຕົວນັ້ນໜັງລອກປອກເປີກເປັນກະດ່າງກະດາວ. ກະແສລົມທັ່ງຊີ່ເຂົ້າມາໄດ້ທຸກທິດທຸກທາງ ຕາມຮູຝາຄອກໝູຂະໜາດໃຫຍ່, ມີໝູຢູ່ບໍ່ພໍເທົ່າໃດຕົວ ແລະ ເບິ່ງກໍບໍ່ມີຕົວເປັນຕາເອົາພໍດີ. ໃນເດີ່ນຕາມໂບນດິນແກ່ນແຂງກະແດ້ງດ້ວຍຄວາມໜາວມີຊາກກວຽນ, ຈັກຫວ່ານ ກົງກວຽນ, ເຄື່ອງໄມ້ແຕກຫັກ ວາງຊະຊາຍກົ້ນຢາຍຢູ່ທົ່ວ ຄືງມີແຕ່ຄວາມໂດດດ່ຽວປ່າເກືອບໜັກໜ່ວງຢ່າງໜຶ່ງເທົ່ານັ້ນທີ່ໂອບຫຸ້ມສິ່ງເຫລົ່ານີ້ໄວ້. ມາຮອດຄອກໝູພໍ້ ຈຶ່ງມີຊາຍຊະລາຮ່າງຈ່ອຍນ້ອຍຫລັງກົ່ງຄົນໜຶ່ງໜວດເຄົາແຫລມສ້ອຍລົງນັ່ງຢູ່, ລາວເວົ້າກັບພວກເຮົາວ່າ:

- ກ້າວ່າເຈົ້າຊອກຫາຫ້ອງການ ກະເຂົ້າໄປໃນຕູບນັ້ນ ໂລດ.

- ແລ້ວໝູຂອງພວກເຈົ້າຢູ່ໃສລະ? ມີເຕຍ ກາມຂົ້ນ.

- ແມ່ນຫຍັງເກາະ? ໝູວ່າຕີ?... ມັນຢູ່ໃສ?

ຊາຍຊະລາຍ່າງຍ່ຳຕີນໄປມາບ່ອນເກົ່າ, ຍົກນິ້ວມືຮຽວເມັ້ນຂົ້ນລູບໜວດແລະ ເສືອດຕາເບິ່ງຄອກສັດ, ເຫັນໄດ້ຢ່າງຈະແຈ້ງວ່າ

ຄຳຖາມຂອງ ມີເຕຍ ເຮັດໃຫ້ລາວງົງງວາໄປຫລາຍເຕີບ ແຕ່ລາວ ກໍທັນຍຶກມືຂຶ້ນເວົ້າປະກອບທ່າທາງຂຶງຂັງວ່າ:

- ໂຍ້ວ! ພວກເຂົາກໍພາກັນກິນຫມົດແລ້ວເດ້, ພວກເຜດ ຫັ້ນນ່າ, ກິນຫມົດເລີຍ.

- ແມ່ນໃຜ?

- ແມ່ນໃຜຊັ້ນຫວະ? ອ້າວກະໄທເຮົານີ້ແລ້ວ, ພວກເຂົາພາ ກັນກິນຫມົດພວກປະຊາຄົມຫັ້ນລະ!

- ຊັ້ນເຈົ້າກໍກິນຄືກັນຕີພໍ່ເຖົ້າ, ເຈົ້າກໍເປັນສະມາຊິກປະຊາຄົມຄື ກັນເດ້!

- ເອີ້... ເອີ ບັກຫລ້າເອີຍ, ພໍ່ເຖົ້າເປັນສະມາຊິກປະຊາຄົມ ຊາວນາ ຄືກັບງົວນ້ອຍຫລົງຫມູ່ ໄປນຳຝູງແກະຫັ້ນລະ, ບັດນີ້ມັນ ຜູ້ປາກດັງເວົ້າແຮງເທົ່ານັ້ນຈິ່ງມີສິດບັນຊາ, ຈັ່ງຊັ້ນສຳຫລັບຄົນ ເຖົ້າຄົນແກ່ຄືພໍ່ເຖົ້ານີ້ ພວກເຂົາບໍ່ໄດ້ວ່າຊິເອົາຊີ້ນຫມູມາໃຫ້ຊີມຈັກ ຕ່ອນຊ້ຳດອກເດີ້. ເອີວ່າແຕ່ວ່າ ພວກເຈົ້າມາຫຍັງກັນລະນີ້?

- ມາວຽກ.

- ມາວຽກເນາະ, ຊັ້ນກໍເຊີນໄປທາງພຸ້ນເດີ້, ຢູ່ພຸ້ນລະບ່ອນ ເພິ່ນປະຊຸມກັນ, ... ດຽວນີ້ກໍພວມປະຊຸມກັນຢູ່ ... ມີດາຍແຕ່ປະຊຸມ ກັບປະຊຸມຫັ້ນລະ ... ສ່ວນວ່າຢູ່ນີ້ ... ໂອ້ຍ ...

ເບິ່ງຊົງພໍ່ເຖົ້າຢາກທັ່ງເທຄວາມຮູ້ສຶກທີ່ອັງແຄ້ນຢູ່ພາຍໃນໃຈ ອອກມາຈົນຫມົດພຸ້ນແລ້ວ ແຕ່ພວກເຮົາບໍ່ມີເວລາຟັງ.

ຢູ່ໃນຫ້ອງການອ່ານຄັບແຄບນີ້ ມີຕັ່ງໂຍະເຍະຂອງມືລາງເຈົ້າ ຂອງເກົ່າວາງຢາຍຢູ່ ຜູ້ຄົນຈຳນວນຫນຶ່ງນັ່ງໂອ້ລົມປະຊຸມກັນ, ທ່ານ

ກາງຄັວນຈາກກອກຢາພັນເອງນັ້ນ ເບິ່ງບໍ່ຮູ້ເລີຍວ່າມີສະມາຊິກປະຊຸມຫລາຍເທົ່າໃດ ແຕ່ອາໄສສຽງອຶນອໍວຕ່າງໆ ພໍຄາດຄະເນໄດ້ວ່າຄືຈະມີຄົນມາຮ່ວມປະຊຸມປະມານຊາວປາຍ. ບໍ່ເປັນຈັ່ງໃຊກເລີຍ, ພວກເຮົາບໍ່ຮູ້ຮອດວ່າ ພວກເພິ່ນພວມເວົ້າກັນໃນເລື່ອງໃດ ເພາະວ່າພໍແຕ່ພວກເຮົາໂປໂລເຂົ້າໄປເທົ່ານັ້ນ ຊາຍຫົວຫຍອງຄົນຫນຶ່ງຫນວດເຄົາດຳປີ້ ຫນ່ວຍຕາມີນ້ອງກ້ອງເຈືອຈານດ້ວຍແວວຫວານຄືຕາສາວນ້ອຍ ກໍຖາມພວກເຮົາຂຶ້ນວ່າ:

- ພວກເຈົ້າມາແຕ່ໃສ?

ໃນຂັ້ນຕົ້ນການໂອ້ລົມສົນທະນາເລີ່ມຂຶ້ນຢ່າງເປັນການເປັນງານໃນລັກສະນະບໍລະປັກກັນຢ່າງຈະແຈ້ງ ແລະ ຮຸນແຮງຂຶ້ນເປັນລຳດັບແຕ່ໃນທີ່ສຸດຄືປະມານ ໔ ຊົ່ວໂມງຕໍ່ມາ ຈຶ່ງກາຍມາເປັນການເຈລະຈາແບບທຸລະກິດຂອງວຽກງານງ່າຍໆ ອັນຫນຶ່ງ.

ປາກົດວ່າ ຂ້າພະເຈົ້າເຂົ້າໃຈຜິດຫມົດເລີຍ ຄືປະຊາຄົມ ຢູ່ໃນສະພາບເປື່ອຍເຍື່ອຍພໍແຮງແລ້ວ ແຕ່ສະມາຊິກຫາກບໍ່ຍອມຈຳນົນ, ພໍແຕ່ຮູ້ວ່າພວກເຮົາຈະເປັນຜູ້ມາຂຸດຂຸມຝັງຊາກສົບມັນ ພວກເຂົາໂກດແຄ້ນເປັນຟືນເປັນໄຟຂຶ້ນ ສະແດງກຳລັງຍອດສຸດທ້າຍອອກມາເພື່ອບົ່ງບອກເຖິງຄວາມຫວງແຫນກະຫນອມແພງຊີວິດອອກມາ.

ມີສິ່ງຫນຶ່ງຈະແຈ້ງຢູ່ແລ້ວ ຄືເນື້ອທີ່ ໑໕໐໐ ເຮັກຕານີ້ ເປັນຈຳນວນທີ່ດິນຫລາຍເກີນຄວາມສາມາດຂອງຊາວນາ ໃນບ້ານນີ້, ຄວາມຮັ່ງມີອຸດົມສົມບູນເຫລືອເຟືອເຫລົ່ານີ້ ເປັນສາຍເຫດຫນຶ່ງຂອງຄວາມທຸກຍາກພາຍໃນຂອງມັນ, ຈັ່ງຊັ້ນຈຶ່ງບໍ່ແມ່ນເລື່ອງຍາກເທົ່າໃດ ທີ່ພວກເຮົາຈະຕົກລົງກັນໄດ້ໃນເລື່ອງແບ່ງປັນດິນ. ທາງ

ປະຊາຄົມຍິນຍອມຍົກຫໍພາສາດ ຫໍຄອຍ, ກຳແພງປ່ອງປືນ ແລະ ຮູບປັ້ນເທບທິດາ ວິນັດແຂນຂາກຸດ ຕົວນັ້ນໃຫ້ພວກເຮົາຢ່າງງ່າຍດາຍທີ່ສຸດ. ແຕ່ພໍເວົ້າຮອດເດີ່ນຖຽງບາຄອກສັດເທົ່ານັ້ນ, ຄວາມຮູ້ສຶກອາລົມຂອງແຕ່ລະຝ່າຍກໍຟົດຮ້ອນຂຶ້ນ, ມິເຕຍ ເອງບໍ່ສາມາດອົດກັ້ນການໂຕ້ຖຽງແບບເປັນທາງການອັນນີ້ໄດ້ ແລະ ໄດ້ເວົ້າສຽດສີ ເຖິງບັນຫາພາຍໃນຂອງປະຊາຄົມນີ້ເລີຍ.

- ແລ້ວເປັນຫຍັງມາຮອດດຽວນີ້ ພວກເຈົ້າຈຶ່ງຍັງບໍ່ກູ້ຫົວຜັກຫມົດເທື່ອ?

ທ່ານປະທານຕອບວ່າ:

- ໂຕຫັ້ນຍັງນ້ອຍໂພດຫລ້າເອີຍ, ບໍ່ຄວນຊິມາເວົ້າກັບພວກເຮົາໃນເລື່ອງຫົວຜັກກາດດອກ!

ຈົນເດິກດື່ນທ່ຽງຄືນພີ້ ພວກເຮົາຈຶ່ງສາມາດເຈລະຈາຕົກລົງກັນໄດ້ໃນເລື່ອງນີ້; ມິເຕຍ ເວົ້າວ່າ:

- ເອົາລະ, ເອົາລະ, ແລ້ວເປັນຫຍັງພວກເຮົາຈຶ່ງຊິມາຜິດກັນເອງ ຄືຫມາບ້າແນວນີ້, ເຮັດຮົ້ວເຕ້ຍໆແບ່ງເດີ່ນກັນກໍໄດ້ຕວ່າ.

ພວກເຮົາເຫັນດີນຳກັນໃນເລື່ອງນີ້ແລ້ວ.

ພວກເຮົາກັບຄືນມາຮອດນິຄົມ ກ້ອກກີ ໄດ້ແນວໃດນັ້ນຂ້າພະເຈົ້າຮອດບໍ່ຈື່ຊ້ຳແຕ່ຮູ້ສຶກຄືກັບວ່າໄດ້ບິນມາເອົາ. ບົດລາຍງານຂອງພວກເຮົາຕໍ່ກອງປະຊຸມໃຫຍ່ໄດ້ຮັບການຕ້ອນຮັບ ໂຫ່ຮ້ອງສຽງກຶກກ້ອງແບບບໍ່ເຄີຍມີມາກ່ອນ. ພວກເດັກນ້ອຍອຸ້ມຂ້າພະເຈົ້າກັບ ມິເຕຍ ໂຍນຂຶ້ນກາງອາກາດແຮງໆ ແວ່ນຕາຂອງຂ້າພະເຈົ້າເກືອບຫລຸດຕົກ ແລະ ມິເຕຍ ເອງກໍຮູ້ສຶກວ່າມີສ່ວນໃດສ່ວນຫນຶ່ງໃນຮ່າງ

ກາຍແຕກ ອາດຈະແມ່ນດັງຫລືຫນ້າຜາກກໍບໍ່ຮູ້ແນ່.

ຍຸກສະໄຫມແຫ່ງຄວາມສຸກເບີກບານອັນແທ້ຈິງຢ່າງຫນຶ່ງປາກົດຂຶ້ນຢູ່ໃນນິຄົມຂອງພວກເຮົາແລ້ວ. ຕະຫລອດເວລາສາມເດືອນພວກເດັກນ້ອຍດຳລົງຊີວິດຢູ່ນຳການວາງແຜນຕ່າງໆນາໆ. ເມື່ອເບຣແຊນ ມາຢາມພວກເຮົາຄັ້ງຫນຶ່ງນັ້ນ ນາງຈົນຕຳຫນິຂ້າພະເຈົ້າວ່າ:

- ມາກາເຣັນໂກ, ເຈົ້າລ້ຽງຄົນຊະນິດໃດ? ນັກເພີ້ຝັນຫວະ?

ຈະເວົ້າວ່ານັກເພີ້ຝັນກໍບໍ່ຜິດດອກ, ຂ້າພະເຈົ້າເອງບໍ່ມັກ ແລະ ອອນຊອນນຳຄຳສັບນີ້ເທົ່າໃດເລີຍ ເພາະວ່າຄວາມຈິງແລ້ວມັນກໍຢາກຄື "ຄວາມເພີ້ຝັນຂອງສາວນ້ອຍ" ແລະ ບາງເທື່ອຮ້າຍແຮງກວ່ານີ້ກໍມີ. ແຕ່ຄວາມຝັນກໍມີຫລາຍແບວແຕກຕ່າງກັນ, ຄົນວ່າຜູ້ສາວຝັນເຖິງອັດສະວິນຊຸນເສີກ ຂີ່ອາຊະໄນສີຂາວ ມັນກໍເປັນເລື່ອງຫນຶ່ງ ແລະ ຄົນຊິຝັນເຖິງການມີເດັກນ້ອຍ ໑໐໐ ຄົນຢູ່ໃນນິຄົມມັນກໍເປັນອີກເລື່ອງຫນຶ່ງຕ່າງຫາກ. ເມື່ອພວກເຮົາດຳລົງຊີວິດຢູ່ໃນຫ້ອງເຮືອນທີ່ຕ່ຳຄັບແຄບພວກເຮົາບໍ່ພາກັນຝັນຢາກຢູ່ໃນຫ້ອງໂລ່ງກວ້າງສູງໆເບາະ? ທັງໆທີ່ວ່າ ຕ້ອງເອົາຜ້າຂາດມາພັນຫົວຕີນແທນເກີບ ພວກເຮົາກໍຍັງຝັນຢາກໃສ່ເກີບທີ່ມະນຸດທົ່ວໆໄປໃສ່ກັນ. ພວກເຮົາຝັນເຖິງມະຫາວິທະຍາໄລກຳມະກອນ ແລະ ຊາວຫນຸ່ມກົມໂຊໂມນ. ພວກເຮົາຄຶດຝັນຢາກໄດ້ມ້າຄັກໆຄືບັກຫນຸ່ມ ແລະ ງົວແມ່ພັນ ຊິມເມີທານຈັກຝູງ. ເມື່ອຂ້າພະເຈົ້າເອົາຫມູນ້ອຍພັນອັງກິດມາ ໔ ໂຕນັ້ນ, ນັກຝັນຂອງພວກເຮົາຄົນຫນຶ່ງຄືບັກນ້ອຍວາເນຍ ເຊລາປູຕິນ ຫົວບໍ່ໄດ້ພໍ້ຄັ້ງເດີມາເປັນເວລາດົນນານແລ້ວ

ນັ່ງເອົາມືຮອງກົ້ນ, ຫລືນັ່ງຢູ່ເທິງແປ້ນມ້າສູງ, ຂາທັງສອງແກວ່ງໄປມາ ແສງຕາເຫລືອດເບິ່ງເພດານ:

- ດຽວນີ້... ແມ່ນຫມູນ້ອຍສອງໂຕຫນຶ່ງດອກ, ແຕ່ຕໍ່ໄປມັນຈິເກີດລູກອີກທໍ່ໃດໃຜຈິຮູ້. ແລ້ວອີກຫ້າປີຂ້າງຫນ້າ ພວກເຮົາຈີມີຫມູຮອດ ໑໐໐ ໂຕ, ໂອ່ຍ... ເຮີຍ ໂຕສະກາ ໂຕໄດ້ຍິນບໍ່? ຕັ້ງຮ້ອຍພຸ້ນນ່າ!

ແລ້ວທັງບັກຝັນ ແລະ ໂຕສະກາ ກໍພາກັນຫົວຂື້ນອັກໆ ແບບອິດບໍ່ຢູ່ ເຮັດໃຫ້ການສົນທະນາອັນເຄັ່ງຂຶມຢູ່ໃນຫ້ອງການຂ້າພະເຈົ້າຢຸດສະງັກໄປ. ບັດນີ້, ມາຮອດມື້ນີ້ ພວກເຮົາມີຫມູນ້ອຍ ໓໐໐ ໂຕແລ້ວ ແລະ ໃຜໆກໍພາກັນລືມຄວາມຝັນຂອງເຊລາປູຕິນ ຫມົດແລ້ວ.

ອາດເປັນໄປໄດ້ວ່າ ຄວາມແຕກຕ່າງຕົ້ນຕໍລະຫວ່າງລະບົບການສຶກສາອົບຮົມຂອງພວກເຮົາກັບຂອງພວກນາຍທຶນນັ້ນ ມີຢູ່ບ່ອນວ່າສຳລັບພວກເຮົານັ້ນ, ຫນ່ວຍຊີວິດໂຮມຫມູ່ຂອງພວກເດັກນ້ອຍນັ້ນຕ້ອງອຸດົມສົມບູນ ແລະ ຂະຫຍາຍຕົວອອກນຳທຸກໆເວລາ, ຫນ່ວຍຊີວິດໂຮມຫມູ່ດັ່ງກ່າວຕ້ອງເຫັນວ່າ ຊີວິດໃນມື້ອື່ນສວຍສົດງົດງາມກວ່າທີ່ເປັນຢູ່ໃນປັດຈຸບັນສະເຫມີ ເພື່ອຈະໄດ້ພ້ອມກັນກ້າວເນັ່ງໄປຍັງຈຸດຫມາຍຮ່ວມອັນດຽວກັນ ດ້ວຍການສູ້ທົນພາກພຽນທ່າມກາງຄວາມມ່ວນຊື່ນຫັນສາ. ບາງທີສັດຈະທຳຂອງຫລັກການວິຊາຄູອັນແທ້ຈິງອາດຈະນອນໃນທີ່ນີ້ເອງ.

ຍ້ອນແນວນີ້ແລ້ວ ຂ້າພະເຈົ້າຈຶ່ງບໍ່ຫ້າມປາມຂັດຂວາງບໍ່ໃຫ້ພວກເດັກນ້ອຍຄຶດຝັນ, ຊ້ຳບໍ່ພໍຂ້າພະເຈົ້າເອງຍັງຮ່ວມຝັນໄປນຳ

ພວກເຂົາອີກ, ເຊິ່ງໃນບາງຄັ້ງກໍອາດກ້າວໄປໄກໂພດຊ້ຳ ແຕ່ນັ້ນມັນແມ່ນຍຸກທີ່ພວກເຮົາມີຄວາມສຸກຫລາຍ, ພວກມິດສະຫາຍຫລາຍຄົນ ຕ່າງກໍຈົດຈຳວາລະນີ້ໄດ້ເປັນຢ່າງດີ. ທ່ານ ມາກວິນ ກັອກກີເອງກໍຍັງຝັນໄປນຳພວກເຮົາ ເພາະພວກເຮົາໄດ້ຂຽນຈົດຫມາຍບອກເລົ່າລາຍລະອຽດກ່ຽວກັບເລື່ອງນີ້ສູ່ເພິ່ນຟັງຕະຫລອດມາ.

ຢູ່ໃນນີຄົນມີພຽງບາງຄົນເທົ່ານັ້ນ ທີ່ບໍ່ຍອມເພີ້ຝັນໄປນຳພວກເຮົາ ໃນຈຳນວນເຫລົ່ານີ້ມີ ກາລິນາ ອີວາໂນວິດ ຢູ່ນຳ. ຈິດໃຈວິນຍານຂອງລາວຍັງຫນຸ່ມຢູ່ ແຕ່ປາກົດວ່າການຈະຊ່າງຄິດຊ່າງຝັນນີ້ການມີຈິດໃຈຫນຸ່ມຊຶ່ງບໍ່ພຽງພໍ, ກາລິນາ ອີວາໂນວິດ ເວົ້າເອງວ່າ:

- ໂຕເຄີຍເຫັນດີ, ມ້າດີນັ້ນມັນຢ້ານລົດໂອໂຕເດີ້, ມັນມີຄວາມຫມາຍວ່າ ກະໂຕມັນເອງນັ້ນແລ້ວຍາກມີຊີວິດຢູ່ຕໍ່ໄປ, ຜາກເອີຍ! ສ່ວນວ່າມ້າເກົ້າຂີ້ພະຍາດຫັນເກາະ ມັນບໍ່ຢ້ານຕາຍພິສັງດອກ ບໍ່ວ່າລົດຫລືຈັກຊະນິດໃດຫມົດ, ທຸກຢ່າງຄືກັນຫມົດສຳຫລັບມັນ: ເຂົ້າບະເລຫລືເຂົ້າໂອືດ ບໍ່ຕ່າງຫຍັງກັບຄືພວກລັດເຊຍເຂົາວ່ານັ້ນແລ້ວ.

ຂ້າພະເຈົ້າພະຍາຍາມຊັກຊວນ ກາລິນາ ອີວາໂນວິດ ຍ້າຍໄປກັບພວກເຮົາແລະ ພວກເດັກນ້ອຍກໍພະຍາຍາມເຮັດຄືກັນ ແຕ່ລາວຊ້ຳຫນັກແຫນ້ນແທ້ ໆ.

- ຂ້ອຍຫວະ, ບັດນີ້ບໍ່ຢ້ານບໍ່ກົວສັງແລ້ວເດີ້ ແລະ ພວກເຈົ້າກໍບໍ່ໄດ້ວ່າຊິຕ້ອງການເກົ້າຜາກເກາະຄືຂ້ອຍແລ້ວ. ຂ້ອຍລົງເຮືອລຳດຽວກັບພວກເຈົ້າມາລະຍະຫນຶ່ງແລ້ວ, ພໍລະ ບັດນີ້ເຖິງເວລາກິນບຳນານແລ້ວ! ອຳນາດໂຊວຽດດີໃຈພໍໃຈລ້ຽງດູຄົນເກົ້າຄົນແກ່ທີ່ຮູ້ແຕ່ນັ່ງກິນນອນກິນຄືພວກເຮົາຢູ່ດອກ.

ສອງພີວເມຍ ອີດຊີປີບ ກໍປະກາດກອນໂດບໍ່ຍອມອົບພະຍົບໄປທາງໃດກັບນິຄົມອີກແລ້ວ. ພວກເຮົາເຄີຍຜ່ານລະຍະຕື່ນເຕັ້ນຫວາດສຽວມາພຽງພໍແລ້ວ.

-ພວກເຮົາເປັນຄົນມັກຫນ້ອຍ. ນາຕາເລຍ ມາກກອບນາເວົ້າຂຶ້ນ, -ພວກເຮົາຮອດບໍ່ເຂົ້າໃຈຊ້ຳວ່າ ເປັນຫຍັງເຈົ້າຈຶ່ງຢາກມີນັກຮຽນຕັ້ງ ໒໐໐ ຄົນ! ເວົ້າແທ້ໃດ໋ ອານໂຕນ ເຊມີວໂນວິດ! ເຈົ້າຊິຕາຍຍ້ອນວຽກອັນນີ້ແລ້ວ.

ຂ້າພະເຈົ້າຕອບນາງຄືນດ້ວຍເນື້ອເພງຕໍ່ໄປນີ້:

"ພວກເຮົາຂໍຮ້ອງເພງສັນລະເສີນຜູ້ກ້າຫານຊານໄຊ".

ພວກເດັກນ້ອຍຕົບມືໂຄບໆທັງຫົວ ແຕ່ວິທີການດັ່ງກ່າວບໍ່ໄດ້ເຮັດໃຫ້ສອງພີວເມຍ ອີດຊີປີບ ໃຈອ່ອນນຳດອກ.

ຊີລັນຕີ ອິ່ນອອຍຂ້າພະເຈົ້າວ່າ:

-ຫາດາປ່ອຍພວກເຂົາໄວ້ຫນີ້, ໂຕຫັ້ນເກາະ ອານໂຕນ ເຊມີວໂນວິດເອີຍ, ຍາມໃດໂຕໂລດຢາກດຶງເອົາສັດຫມົດທຸກໂຕມາແກ່ກວຽນແຂ່ງຂັນຫມົດ; ຄືເພິ່ນວ່າຫັ້ນລະ, ສຳລັບເລື່ອງນີ້ເກາະ... ງົວແມ່ດ້ານໂຕ ມັນຊິມີປະໂຫຍດຫຍັງ... ໂຕຊ້ຳພັດຢາກເອົາມັນມາລາກກວຽນແຂ່ງຂັນຊ່ອຍຢູ່...

-ແລ້ວເຈົ້າເດ້ລະ? ຊີລັນຕີ ເຊມີວໂນວິດ, ເຈົ້າຈັດການເລື່ອງນີ້ໄດ້ຫວະ?

-ເລື່ອງໃດ?

-ອ້າວກະເລື່ອງແກ່ກວຽນແຂ່ງຂັນຫັ້ນຕີ!

-ສຳຫລັບຂ້ອຍຫວະ? ບໍ່ມີບັນຫາດອກ ໄປໃສກໍໄດ້, ຂະ

ຫນາບໃຫ້ຢູ່ກ້ອງອານັດ ບູດິນບິ ນີ້ກໍຍັງໄດ້ບ່າ, ເຈົ້າຮູ້ດີພວກຜີເພດນັ້ນ ມັນຄຶດວ່າຈີເອົາຂ້ອຍໄວ້ເປັນຜູ້ແກ່ຝຸ່ຍນ້ຳ, ດຽວນີ້ພວກມັນຍັງບໍ່ເຫັນວ່າ ຂ້ອຍນີ້ແມ່ນຊາດເຊື້ອອາຊະໄນສູ້ຣົບຕົວຫນື່ງຊື່ງດອກ!

ຊີລັນຕີ ເບີດຫນ້າຂຶ້ນ ທັງທົບຕີນແຮງໆ, ເວົ້າຕື່ມວ່າ:

- ເຫັນບໍ່ວ່າມັນເປັນແນວໃດ.

ຍ້ອນວ່າຄູສອນເກືອບທຸກຄົນໂຮມທັງ ຊີລັນຕີ, ໂກເຊຍ, ເອລິດຊີບ, ຊ່າງຕີເຫລັກ ໂກດາໂນວິດ, ຈົນຮອດສາວຊັກເຄື່ອງ ແມ່ຄິວ ແລະ ພວກສີເຂົ້າຕີກລີງໃຈໄປກັບພວກເຮົາ ມັນເຮັດໃຫ້ການຍົກຍ້າຍຄັ້ງນີ້ມີລັກສະນະເປັນຄອບເປັນຄົວ ແລະ ແນ່ນອນຫລາຍຂຶ້ນ.

ແຕ່ໃນເວລາດຽວກັນ ເຫດການຢູ່ ຄາຄົບ ຊ້ຳດຳເນີນໄປຢ່າງຮີບຮ້ອນ, ຂ້າພະເຈົ້າຕ້ອງເດີນທາງໄປພຸ້ນເລື້ອຍໆ.

ແມ່ນແຕ່ທາງກະຊວງສຶກສາປະຊາຊົນເອງ ກໍສະຫນັບສະຫນູນພວກເຮົາພໍປານຄົນຄົນດຽວກັນ ກະທັ່ງຮອດນາງ ເບຣແຊນ ກໍຜັນໄປນຳພວກເຮົາ ເກີງວ່າໃນເບີ້ງນັ້ນນາງຍັງເອີ້ນຂ້າພະເຈົ້າວ່າ ເປັນດົງກີຊົດ* ແຫ່ງຊາໂປໂຣເຊກຕາມ.

ແລະ ຮອດກະໂຕທາງກະຊວງກະສິກຳ ເຊິ່ງໃນເວລານັ້ນຍັງເວົ້າເກີງພວກເຮົາແບບບໍ່ເຕັມປາກປານໃດ ຄືເພິ່ນມັກຫລີງລືມຊື່ພວກເຮົາເລື້ອຍໆ ໂດຍເອີ້ນພວກເຮົາວ່າ ຊາວນິຄົມ ກ້ອກກີແດ່,

---

* ດົງກີຊົດ: ຕົວລະຄອນແອດຊະປາຍ ຊຶ່ງກືວ່າເປັນນັກເພີ້ຝັນ.

ບຶຄົມ ໂກໂຣເລັນໂຕ ແດ່, ບຶຄົມເຊັບເຊັນໂກ ແດ່, ແຕ່ໃນທີ່ສຸດ ເພິ່ນກໍເວົ້າວ່າ:

- ເອົາ... ເອົາເລີຍ, ເອົາດິນ ໑໐໐ ເດເຊຍຕິນ ກັບເຄຫາ ໂປປົບໃຫ້ພວກເຂົາສາ ແລ້ວຢ່າມາລົບກວນວິນວາຍອີກເດີ!

ໂຕສັດຕູຂອງພວກເຮົາບໍ່ອອກມາລຽນແຖວປະຈັນບານກັບພວກເຮົາຢ່າງເປີດເຜີຍດອກ ແຕ່ຊຸດຊຸມທ້າງແຮ້ວຢ່າງຄັກ. ຂ້າພະເຈົ້າໂດດເຂົ້າໃສ່ເຂົາຢ່າງດຸເດືອດພິດຮ້ອນ, ຄິດຝັນຢ່າງໝັ້ນໃຈວ່າ ຈະເປັນຜູ້ຍາດໄຊຊະນະໃນຂັ້ນສຸດທ້າຍແທ້ໆແລະຄິດຕໍ່ໄປວ່າ ຫລັງຈາກນັ້ນຈຶ່ງຈະຕີຄ້ອງຮ້ອງປ່າວປະກາດໄຊຊະນະຄັ້ງນີ້. ແຕ່ສິ່ງໂປໂລອອກມາຈາກພຸ່ມໄມ້ ເພື່ອຂວາງຂັ້ນຕ້ານການບຸກໂຈມຕີຂອງຂ້າພະເຈົ້າ ແມ່ນຊາຍຮ່າງນ້ອຍໃສ່ເສື້ອນອກກົ້ນໆຄົນໜຶ່ງ, ລາວເວົ້າອອກມາບໍ່ພໍເທົ່າໃດຄວາມ ຂ້າພະເຈົ້າກໍຮູ້ສຶກແລ້ວວ່າ ຕົນເອງຈະເປັນຝ່າຍພ່າຍແພ້ຢ່າງບໍ່ມີທາງສູ້ ມີແຕ່ຖອຍທ່າດຽວທັງຟ້າວປະກົ້ນອາວຸດ ແລະ ທຸງໄຊ ບຸໜັ້ນກັບເຂົ້າມາຢູ່ໃນແຖວດ້ານໜ້າຂອງເດັກນ້ອຍບຶຄົມ.

- ກະຊວງການເງິນບໍ່ສາມາດຕົກລົງຕາມເງື່ອນໄຂນີ້ໄດ້, ສະເພາະການມອບເງິນ ໓໐ 000 ຣຸບ ເພື່ອສ້ອມແປງຫໍພາສາດຫລັງໜຶ່ງຊຶ່ງບໍ່ມີໃຜຕ້ອງການແລ້ວໃນຂະນະທີ່ບຶຄົມເກົ່າບ່ອນເຄີຍຢູ່ມາແລ້ວນັ້ນ ຊໍ້າຈະຮ້າງຮ້າໄປຊື່ ໆ!

- ແຕ່ທັງໝົດນັ້ນມັນບໍ່ແມ່ນການສ້ອມແປງລ້າໆເດ? ມີທັງງົບປະມານຄ່າຂົນຍ້າຍນຳ.

- ພວກເຮົາຮູ້ແລ້ວ, ຮູ້ດີທຸກຢ່າງ: ທີ່ດິນ ໑໐໐ ເດເຊຍຕິນ,

ເດັກບໍ່ມີຍາດແປດຮ້ອຍຄົນ, ງົວແມ່ ໑໐໐ ໂຕ. ຍຸກສະໄໝຂອງ ກິດຈະການແບບນີ້ຜ່ານໄປແລ້ວເດີ້, ພວກເຮົາໝົດເງິນໃຫ້ກະ ຊວງພວກເຈົ້າໄປຈັກລ້ານແລ້ວ! ຈີເວົ້າແນວໃດກໍເວົ້າ ບໍ່ເຫັນມີ ໝາກຜົນ: ທຸກຄົນພາກັນລັກ ໆ...ໆ ທັບມ້າງທຸກສິ່ງທຸກຢ່າງ ແລ້ວເປີດໜີ.

ຊາຍຮ່າງນ້ອຍຄົນນີ້ ໄດ້ເອົາປາຍຕີນຂອງລາວຢຽບບີ້ຄວາມຝັນ ອັນງົດງາມຂອງພວກເຮົາ, ຄວາມຝັນອັນເຕັມໄປດ້ວຍຄວາມພິດ ພື້ນມີຊີວິດຈິດໃຈ..., ບໍ່ມີນ້ຳຕາບໍ່ມີຄຳອ້ອນວອນໃດໆເອົາຊະນະ ແລະ ຈີ້ສະແດງໃຫ້ລາວຮູ້ວ່າທັງໝົດນີ້ມັນແມ່ນຄວາມຝັນຂອງ ຊາວນິຄົມ ກັອກກີ, ບໍ່ເລີຍ! ບໍ່ມີສິ່ງໃດໝົດ, ຄວາມຝັນງົດງາມ ທັງປວງມຸດມອດໄປກັບຕາ.

ເມື່ອເດີນທາງກັບນິຄົມບ້ານເກີດນັ້ນ ຂ້າພະເຈົ້າຮູ້ສຶກເຈັບ ແຄ້ນແໜ້ນໃຈທີ່ສຸດ ເມື່ອຄິດເຫັນວ່າຢູ່ໃນບົດຮຽນຊຸດໜຶ່ງນັ້ນ ພວກເຮົາໄດ້ສິດສອນເດັກນ້ອຍກ່ຽວກັບ "ການບຸກເບີກດິນດອນຊາ ໂປໂຣເຊ". ແຊເອີ ໄດ້ເດີນທາງໄປເບິ່ງເຄຫາສະຖານ ໂປປົບ ຮອດສອງຄັ້ງ, ເຂົາວາງແຜນການ ແລະສະເໜີມັນອອກຕໍ່ໜ້າ ເດັກນ້ອຍແລ້ວ, ມັນແມ່ນແຜນການເສດຖະກິດ ທີ່ສານສອດດ້ວຍ ໄຍໄໝສາຍເພັດແກ້ວມໍລະກົດ ແລະ ແກ້ວພິລາ, ໃນນັ້ນມີແສງ ເຫລື້ອມແວວວັບຂອງລົດໄຖ, ຝູງງົວແມ່ເປັນຮ້ອຍໆ, ຝູງແກະ ເປັນພັນໆ ແລະ ເປັດໄກ່ເປັນໝື່ນໆໂຕ, ມີການສົ່ງນ້ຳມັນເບີ ແລະ ໄຂ່ອອກຂາຍໄປປະເທດອັງກິດ, ມີການບົ່ມພືດ, ການໄຈ້ ແຍກແນວສັດ ແລະ ສວນໝາກໄມ້ຫລາຍຫລາກແນວ. ກ່ອນນີ້

ພຽງອາທິດດຽວເທົ່ານັ້ນ, ເມື່ອຂ້າພະເຈົ້າກັບມາແຕ່ຄາຄີບ, ພວກເດັກນ້ອຍຍັງປຸ້ມກັນມາຫຸ້ມດ້ວຍທ່າທີຕື່ນເຕັ້ນດີໃຈ, ພວກເຂົາລາກແກ່ຂ້າພະເຈົ້າລົງຈາກລົດມ້າ ທັງລາຍງານສຽງດັງວ່າ:

- ອານໂຕນ ເຊມີວໂນວິດ, ອານໂຕນ ເຊມີວໂນວິດ! ໂຊຣກາໄດ້ມ້ານ້ອຍໂຕຫນຶ່ງແລ້ວເດ້ ມາເບິ່ງໄວ ໆ!

ພວກເຂົາລາກແກ່ຂ້າພະເຈົ້າໄປໂຮງມ້າ ບ່ອນເຊິ່ງເດັກນ້ອຍຫລາຍຄົນຍືນຫຸ້ມລ້ອມມ້ານ້ອຍຂົນເຫລືອງອຸ່ຍຮຸ່ຍປານຄຳໂຕຫນຶ່ງ, ຕີນຕົວຂອງມັນຍັງປຽກຊຸ່ມ ແລະ ສັ່ນທິດໆຢູ່. ໃບຫນ້າພວກເດັກນ້ອຍຍິ້ມແຍ້ມແຈ່ມໃສ ແລະ ມິດຈ້ຽງງຢູ່ຄາວຫນຶ່ງ, ມີຜູ້ຫນຶ່ງຜູ້ດຽວເວົ້າຂຶ້ນວ່າ:

- ພວກເຮົາຂະຫນານນາມມັນວ່າ ບັກຊາໂປໂຣເຊ!

ໂອ່! ພວກເດັກນ້ອຍເອີ້ຍ, ພວກສູໂຊກບໍ່ດີ ພໍຈະໄດ້ໄປແກ່ໄກຢູ່ທົ່ງກວ້າງໃຫຍ່ສຸດສາຍຕາບ່ອນນັ້ນ, ບໍ່ມີໂອກາດໄດ້ນອນໃນທໍາພາສາດແບບໃນເທບນິຍາຍນີ້ຈ໊າ, ສຽງແກພວກສູກໍບໍ່ໄດ້ດັງສະເທືອນໄປເກືອງທໍຄອຍ ແລະ ການທີ່ພວກສູໃສ່ຊື່ມ້ານ້ອຍຂົນເຫລືອງຄໍາຕົວນີ້ວ່າ "ຊາໂປໂຣເຊ" ນັ້ນກໍແມ່ນຕົງດາຍດອກ!

ບົດທີ ໑໗

ຕ້ອງຄິດໄລ່ແນວໃດ

ບາດຄ້ອນ ເຊິ່ງສຸພາບບຸລຸດຈາກກະຊວງການເງິນພາດມານັ້ນຮຸນແຮງຫນັກຫນ່ວງຫລາຍຈົນທີ່ວໃຈຂອງພວກເດັກນ້ອຍແຫລກມຸ່ນຕີນຕັບຍ້ອນ, ຜູ້ຫວັງຮ້າຍແທ້ກໍຍິ້ມແຍ້ມແຈ່ມໃສ ແລະ ຮ້ອງ

ສຽງຫອງດ້ວຍຄວາມດີໃຈ, ສ່ວນຂ້າພະເຈົ້າເອງກໍບໍ່ຮູ້ວ່າຈະໄປທາງໃດ. ແຕ່ບໍ່ມີໃຜໃນຫມູ່ພວກເຮົາຄຶດຈັກຫນ້ອຍວ່າ ຈະຢູ່ເທິງແຄມຝັ່ງຫ້ວຍໂກໂລມາກ ອີກຕໍ່ໄປ. ຢູ່ກະຊວງສຶກສາປະຊາຊົນເພິ່ນຈຳໄດ້ຍອມຟັງພວກເຮົາຍ້ອນເຫັນຄວາມປາກະຫນາອັນຫນັກແຫນ້ນບໍ່ປ່ຽນແປງຂອງພວກເຮົາ. ບັດນີ້ບັນຫາມີຢູ່ວ່າພວກເຮົາຈະພາກັນໄປຢູ່ໃສ.

ໃນລະຫວ່າງເດືອນກຸມພາກັບເດືອນມີນາ ໑໙໒໖ ນັ້ນ, ທຸກສິ່ງທຸກຢ່າງປາກົດວ່າຫຍຸ້ງຍາກສັບສົນຫລາຍ. ຄວາມປະລາໄຊກ່ຽວກັບໂຄງການ "ຊາໂປໂຣເຊ" ໄດ້ດັບມອດຫມັດໄຟເມັດສຸດທ້າຍແຫ່ງຄວາມຫວັງງາມໆ ແລະ ໄຊຊະນະຂອງພວກເຮົາແລ້ວ ແຕ່ໃນຂະນະດຽວກັນ, ຄວາມເຊື່ອຫມັ້ນຫນັກແຫນ້ນຢ່າງຫນຶ່ງ ກໍຊ້ຳກໍກຳເນີດຂຶ້ນພາຍໃນຫນ່ວຍຊີວິດໂຮມຫມູ່ຂອງພວກເຮົາ. ບໍ່ມີຈັກອາທິດດອກທີ່ບໍ່ມີການສົນທະນາໂອ້ລົມກັນໃນເລື່ອງໃດເລື່ອງຫນຶ່ງ ທີ່ກ່ຽວກັບການຍົກຍ້າຍ. ຢູ່ໃນປ່າຄ້າງອັນກວ້າງໃຫຍ່ໄຮ້ຂອບເຂດຂອງລັດ ອູກຣາອິນ ນັ້ນຍັງມີກິ່ນການເຮືອນຊານປະກົ້ມບໍ່ມີໃຜຄອບຄອງຫລາຍບ່ອນຢູ່ ຫລືບໍ່ກໍຕົກຢູ່ໃນມືຂອງຄົນບໍ່ຮູ້ກຳກັບຮັກສາມັນ. ພວກຫມູ່ຄູ່ຜູ້ຮູ້ຈັກກັບຄົນໃນກະຊວງສຶກສາປະຊາຊົນ, ອົງການຈັດຕັ້ງຊາວຫນຸ່ມກົມໂຊໂມນ, ຄົນລົ້ງແກວ່ນແຕ່ເກົ່າກ່ອນ, ພະນັກງານປົກຄອງທີ່ພວກເຮົາເຄີຍຕິດຕໍ່ພົວພັນມາແຕ່ດົນ ພາກັນສະເຫນີຊື່ສະຖານທີ່ຫລາຍບ່ອນມາໃຫ້ພວກເຮົາຕ່າງກັນ. ໃນລະຍະນັ້ນ ແຊເຣີກັບພວກເດັກນ້ອຍແລະ ຂ້າພະເຈົ້າເອງ ໄດ້ອອກເດີນທາງໂດຍໃຊ້ກວຽນເປັນພາຫານະ, ທາງຢ່າງເອົາແດ່, ທາງຊີລົດຍົນລົດໄຟ, ອາ

ໄສ້ມ້າບັກນ້ອຍ ມ້າໂຕອື່ນໆ ແລະ ສວຍໃຊ້ພາຫານະຕາມທ້ອງຖິ່ນທຸກແນວ.

ແຕ່ນັກສ່ອງແສງຂອງພວກເຮົາ ໄດ້ນຳເອົາແຕ່ຄວາມເມື່ອຍອ່ອນເທົ່ານັ້ນກັບຄືນມາບ່ອນພັກ: ຢູ່ກອງປະຊຸມໃຫຍ່ ພວກເດັກນ້ອຍຮັບຟັງບົດລາຍງານຂອງພວກເຮົາດ້ວຍສີຫນ້າເຍັນກະດ້າງ ໄຮ້ຄວາມຮູ້ສຶກຄ້າຍຄືນັກທຸລະກິດ ຈາກນັ້ນແຕ່ລະຄົນກໍກັບຄືນສູ່ວຽກງານຂອງຕົນ ທັງໂຍນຄຳຖາມຫນ້າຫົນຫລາຍຂໍ້ທຳອິດ ທີ່ເຂົາຄຶດອອກກ່ອນຫມູ່ໃສ່ຫນ້າຜູ້ສົ່ງຂ່າວວ່າ:

- ແລ້ວຊິໄດ້ຢູ່ຈັກຄືນລະ ບ່ອນຫັ້ນນະ? ໑໔໐ ຄືນຫວະ? ບໍ່ຄັ້ກເອີຍ!

- ຢູ່ເມືອງໃດເກາະ? ປີເຣຍຕົນ ຫວະ? ຂີ້ຝອຍ.

ພວກນັກສົ່ງຂ່າວເອງກໍດີໃຈທີ່ມີການສະຫລູບແນວນີ້. ເຄຫາຂອງສະຕາຣິດສະກີ ຢູ່ເມືອງວານກີ, ແລະ ວິຫານຢູ່ ປີເຣຍຕົນ ແລະ ຢູ່ລູບນີ, ຫໍພາສາດຂອງພວກເຈົ້າໂກດຊູເບ ຢູ່ດີກັນກາ ແລະ ເຮືອນຊານແບບອື່ນໆອີກຫລາຍແບບ ຈຶ່ງຜ່ານສາຍຕາພວກເຮົາໄປລຸດໆ.

ຍັງມີສະຖານທີ່ອື່ນໆອີກຫລາຍບ່ອນ ຖືກສະເຫນີຂຶ້ນມາແຕ່ຖືກປະຕິເສດໄປ, ໃນທັນທີຄືກັບວ່າມັນບໍ່ສົມທີ່ຈະສົ່ງຄົນໄປເບິ່ງດອກ. ໃນສະຖານທີ່ເຫລົ່ານັ້ນມີຄົມເດັກກູເຣັຍແຊ ເຊິ່ງຢູ່ປາກປະຕູເມືອງ ຄາຄົບ ໂຣມຢູ່ນຳ. ມີສຽງຊ່າລືວ່າ ເດັກນ້ອຍຢູ່ປະຈຳໃນນີ້ ໔໐໐ ຄົນຕົກຢູ່ໃນສະພາບທີ່ກອຍຂາດສິນທຳທຸກຢ່າງ ຮູບພາບນີ້ຄົມເດັກທີ່ພວມເປື່ອຍເຍື່ອຍເປັນເຫດການຫນຶ່ງ ທີ່ເຮັດໃຫ້ພວກ

ເຮົາຮູ້ສຶກອະເຫຼືອງຂຶ້ນເຄັ່ງຄຽດຊາຍຫລາຍ ຈົນວ່າແນວຄວາມຄິດ ກ່ຽວກັບ ກຸເຣັຍແຊ ບໍ່ກໍ່ໃຫ້ເກີດຄວາມຮູ້ສຶກໃດໆນອກຈາກພໍແຕ່ ເຮັດໃຫ້ມີຝອດຟອງນ້ອຍໆ ທີ່ພໍແຕ່ເກີດຂຶ້ນກໍແຕກຕົວໄປໂລດ.

ຄັ້ງຫນຶ່ງເມື່ອຂ້າພະເຈົ້າເດີນທາງໄປຄາຄົບ ນັ້ນ ຂ້າພະເຈົ້າບັງ ເອີນໄປຈອບວາລະປະຊຸມກ່ຽວກັບການປ້ອງກັນເດັກ, ກອງປະຊຸມ ພວມປຶກສາຫາລືກັນກ່ຽວກັບສະພາບຂອງນິຄົມ ກຸເຣັຍແຊ ເຊິ່ງຢູ່ ພາຍໃຕ້ຄວາມຮັບຜິດຊອບຂອງຄະນະກຳມະການເອງ. ຢູເຣັບ ຜູ້ ກວດການສຶກສາປະຊາຊົນ ກ່າວລາຍງານສະພາບນິຄົມດ້ວຍນ້ຳສຽງ ແຫ້ງກະແດ້ງຮຸນແຮງ ໂດຍເລືອກເຟັ້ນເອົາຄຳສັບສຳນວນສັ້ນໆ ຫນັກແຫນ້ນ ເຮັດໃຫ້ສະພາບທີ່ເກີດຂຶ້ນຢູ່ພຸ້ນເປັນຕາຢ້ານ ແລະ ເປັນຕາຫນ່າຍຫລາຍຂຶ້ນ, ຟັງແລ້ວຮູ້ສຶກຄືກັບວ່າ ພວກຄູສອນ ໔໐ ຄົນ ກັບເດັກນ້ອຍນັກຮຽນ ໔໐໐ ຄົນທີ່ຢູ່ໂຮງຮຽນນີ້ເປັນນັກຕະ ຫລົກບ້າໆ ບໍໆ ພົນພະລຶດຈາກອາລົມສຳນຶກມະນຸດຂາດສະຕິ ທີ່ມີ ຈິດໃຈກຽດຊັງຄຽດແຄ້ນເພື່ອນມະນຸດດ້ວຍກັນຄົນຫນຶ່ງ. ຂ້າພະເຈົ້າ ເກືອບຟາດກຳປັ້ນໃສ່ໂຕະແລ້ວຮ້ອງຂຶ້ນວ່າ:

- ເປັນໄປບໍ່ໄດ້! ໃສ່ຮ້າຍກັນ!

ແຕ່ ຢູເຣັບ ພິສູດຕົວວ່າເຂົາເປັນຜູ້ເຂັ້ມແຂງທີ່ສຸດຄົນຫນຶ່ງ, ທ່າທີສຸຂຸມຈິງສຸພາບຂອງຜູ້ລາຍງານ, ຄວາມຮູ້ສຶກເສົ້າແສບ ທີ່ບົ່ມ ຊ້ອນພາຍໃນຈິດໃຈຂອງພະນັກງານສຶກສາປະຊາຊົນຄົນຫນຶ່ງ ຄ່ອຍ ປາກົດຕົວຂຶ້ນ ຈົນຂ້າພະເຈົ້າເອງສາມາດເຂົ້າໃຈສະພາບການໄດ້ ເປັນຢ່າງດີ. ຢູເຣັບ ຮູ້ສຶກອັບອາຍຂ້າພະເຈົ້າ ຄ້າຍໆກັບວ່າລາວຮູ້

ສຶກວ່າຕົນເອງນຸ່ງເສື້ອບໍ່ຮຽບຮ້ອຍດີ. ເມື່ອວາລະປະຊຸມສຸດລົງ ລາວ ມາຫາຂ້າພະເຈົ້າ ແລະ ເວົ້າວ່າ:

- ຈັ່ງແມ່ນເປັນຕາອາຍ ທີ່ຕ້ອງກະຈາຍຄວາມຂີ້ດຽດເຮີຮ້າຍອັນນີ້ອອກຕໍ່ໜ້າເຈົ້າ, ມີຜູ້ເວົ້າວ່າ ຢູ່ນິຄົມຂອງເຈົ້າພຸ້ນ ຄົນວ່າພວກເດັກນ້ອຍໄປໂຮງອາຫານຊ້າຈັກ໕ ນາທີເທົ່ານັ້ນ ເຈົ້າສັ່ງຂັງ ໔໘ ຊົ່ວໂມງ ໃຫ້ກິນແຕ່ເຂົ້າຈີ່ກັບນ້ຳລ້າໂລດແລະ ບັກນ້ອຍນັ້ນກໍຈະຍິ້ມຕອບຮັບວ່າ "ຈ້າວ!"ໂລດແມ່ນບໍ່?

- ບໍ່, ບໍ່ເປັນແນວນັ້ນດອກ, ກ້າຫາກວ່າຂ້ອຍນຳໃຊ້ວິທີການແບບວ່ານີ້ເຈົ້າຄົງເຮັດລາຍງານກ່ຽວກັບນິຄົມ ກ້ອກກີ ດ້ວຍຄຳສັບຄ້າຍຄືກັບອັນເຈົ້າເວົ້າໃນມື້ນີ້ແລ້ວ.

ພວກເຮົາຄື ຢູເຣັບ ກັບຂ້າພະເຈົ້າໂອ້ລົມກັນແດ່ ກົກກຽງກັນແດ່, ລາວເຊີນຂ້າພະເຈົ້າໄປກິນເຂົ້າ ແລະ ຫລັງຈາກກິນເຂົ້າແລ້ວຈຶ່ງເວົ້າວ່າ:

- ເປັນຫຍັງເຈົ້າຈຶ່ງບໍ່ຮັບເອົານິຄົມ ກູເຣັຍແຊ ເລີຍຊ້ຳສະ?

- ແລ້ວຢູ່ຫັ້ນມີຫຍັງດີລະ? ຊ້ຳບໍ່ພໍ ຍັງບໍ່ມີບ່ອນຢູ່ອີກ.

- ເປັນຫຍັງຊິບໍ່ມີ, ພວກເຮົາຊິຫາບ່ອນສຳຫລັບເດັກນ້ອຍ ໑໘໐ ຄົນໃຫ້ເຈົ້າ.

- ຂ້ອຍບໍ່ຄິດຢາກເຮັດແນວນີ້ດອກ, ວຽກຂີ້ດຽດເອົາໂພດ, ອີກຢ່າງໜຶ່ງພວກເຈົ້າກໍຈະບໍ່ປ່ອຍໃຫ້ຂ້ອຍເຮັດວຽກຕາມໃຈດອກ.

- ປ່ອຍ, ປ່ອຍແທ້ລະບໍ້! ຕ້າຍ ເຈົ້າຢ້ານພວກເຮົາປານນີ້ພຸ້ນຫວະ? ພວກເຮົາຊິມອບສິດເດັດຂາດໃຫ້ເຈົ້າເລີຍ. ຊິເຮັດຫຍັງກໍເຮັດໂລດຕາມໃຈເຈົ້າທຸກຢ່າງ. ກູເຣັຍແຊ ນັ້ນ ເປັນຮ້າຍແທ້ໆໃດ໋

ຫ້າງທີ່ວ່າຢູ່ໃກ້ເມືອງແຫ້ງ ແຕ່ມັນຊ້ຳກາຍເປັນຮວງຮັງຊຸມໂຈນ ເຈົ້າຄືຊິໄດ້ຍິນແລ້ວລະ ພວກເຂົາອອກມາລັດປຸ້ນລັດຈີ້ຜູ້ຄົນຕາມກະຫນົນ! ແຕ່ຢູ່ໃນນິຄົມເອງ, ພວກເຂົາລັກເງິນໄປຮອດ ໑໘ ໐໐໐ ຮຸບ ໃນລະຍະ ໔ ເດືອນ.

- ມັນຫມາຍຄວາມວ່າ ຕ້ອງປິດພະນັກງານຫ້າງຫມົດອອກ.

- ບໍ່ນໍ່າ, ເປັນຫຍັງລະ? ຜູ້ຈົບຜູ້ດີກໍມີຢູ່ເດ້.

- ໃນກໍລະນີແບບນີ້ ຂ້ອຍມັກໃຊ້ວິທີຂ້າເຊື້ອໂຣກຢ່າງສົມບູນ.

- ເອີ້... ວ່າຊັ້ນກໍໄດ້, ໄລ່ອອກ, ຍົກຍ້າຍ.

- ແຕ່ວ່າພວກເຮົາຊິບໍ່ຍ້າຍໄປ ກູເຣັຍແຊ ເດີ.

- ເຈົ້າຍັງບໍ່ທັນເຫັນມັນຊ້ຳ.

- ແມ່ນແທ້.

- ເອົາຊີ້ສາ, ເຈົ້າຢູ່ຕໍ່ຮອດມື້ອື່ນ ແລ້ວພວກເຮົາເອົາ ຄາລາບູດາ ໄປນຳ, ໄປຍ້ຽມເບິ່ງສະຖານທີ່ນີ້ຈັກຫນ້ອຍເນາະ!

ຂ້າພະເຈົ້າຕົກລົງ, ມື້ຕໍ່ມາພວກເຮົາທັງສາມກໍອອກເດີນທາງໄປ ກູເຣັຍແຊ. ຂ້າພະເຈົ້າໄປນະທີ່ນີ້ ໂດຍບໍ່ຄິດສົງຫອນຈັກຫນ້ອຍວ່າ ພວມໄປເລືອກບ່ອນຝັງຊຸມຜີໃຫ້ນິຄົມຂອງຕົນເອງ.

ຊີດໍ ກາກໂປວິດ ຄາລາບູດາ ປະທານປ້ອງກັນເດັກກໍໄປນຳພວກເຮົາ. ລາວດຳລົງຕຳແຫນ່ງນີ້ດ້ວຍຄວາມຊື່ສັດສົມຄວນ, ສະຖານທີ່ຕ່າງໆທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງລາວປະກອບດ້ວຍເຮືອນລ້ຽງເດັກປະເພດຂີ້ຮ້າຍສຸດຂີດ, ນິຄົມທີ່ພວມເປື່ອຍເຍື່ອຍ, ຮ້ານຂາຍເຄື່ອງແຫ້ງ, ໂຮງສາຍຮູບເງົາ, ຮ້ານຂາຍເຄື່ອງຫວາຍ, ສວນພັກຜ່ອນສາທາລະນະ, ຕູ້ຂາຍຫວຍ ແລະ ຫ້ອງບັນຊີ. ຊີດໍ

ກາກໂປວິດ ກືກພວກພາກເກາະຫຸ້ມແຫ້ນຢູ່ທົ່ວໂຕ ເຊັ່ນ ພວກພໍ່ຄ້າບາຍທຶນ, ຕົວແທນການຄ້າ, ເຈົ້າຂອງໂຮງໄພ້, ນັກຕົ້ມ, ແພດເຖື່ອນ, ນັກເລງຕົ້ມເງິນ..., ຂ້າພະເຈົ້າເອງຢາກຊີ້ຢາຂ້າແມງໄມ້ໃຫ້ລາວຈັກແກ້ວທີ່ສຸດ. ເປັນເວລາເຫີງນານມາແລ້ວທີ່ຫູຂອງລາວຫນວກຫນັກໄປດ້ວຍສຽງສັບສົນລາຍງານຈາກທຸກທິດທາງ ບໍ່ວ່າຈະແມ່ນເລື່ອງເສດຖະກິດ, ວິຊາການສຶກສາ, ຈິດຕະສາດ ແລະ ອື່ນໆ, ຕັ້ງດົນນານມາແລ້ວ, ລາວຫມົດຫວັງ, ຫມົດຫົນທາງ ທີ່ຈະເຂົ້າໃຈວ່າເປັນຫຍັງນິຄົມຂອງລາວຈຶ່ງມີແຕ່ຄວາມແປນເປົ່າ, ມີແຕ່ການລັກຫນີຕະພຶດຕະພື, ມີແຕ່ການລັກ ແລະ ການປຸ້ນຈີ້ປານໂຈນຜູ້ຮ້າຍ. ລາວຈຳນົນຕໍ່ຄວາມເປັນຈິງ ໂດຍເຊື່ອຢ່າງຕາຍໃຈວ່າ ເດັກຂາດຍາດເຫລົ່ານີ້ເປັນຕົວແທນສົມບູນຂອງບາບສາຫັດທັງເຈັດຢ່າງ ແລະ ສຸຂະທັດຂອງລາວມາຮອດປັດຈຸບັນ ຍັງເຫລືອແຕ່ຄວາມເຊື່ອກືຕໍ່ອະນາຄົດອັນດີກວ່າ ເຊັ່ນດຽວກັບການເຫັນວ່າ ການປູກເຂົ້າໄຮ ຈະເຮັດໃຫ້ຊີວິດປະຊາຊົນເຮົາດີຂຶ້ນກວ່າເກົ່ານຳ. ນິໄສອັນສຸດທ້າຍຂອງລາວນີ້ ຂ້າພະເຈົ້າຄົ້ນພົບໃນຂັ້ນຕໍ່ມາພີ້ ເວລາທີ່ມານັ່ງຢູ່ເທິງລົດຍົນນຳກັນ ແລະ ຂ້າພະເຈົ້າກໍຟັງລາວເວົ້າຢ່າງບໍ່ຄຶດສົງໄສອັນໃດຫມົດ.

- ຕ້ອງໃຫ້ຄົນມີເຂົ້າໄຮກິນຢ່າງພຽງພໍກ່ອນ, ຖ້າມີເຂົ້າກິນແລ້ວກໍບໍ່ຢ້ານຫຍັງຫມົດ, ບໍ່ຈຳເປັນວ່າຊິຕ້ອງຮ່ຳຮຽນວັນນະຄະດີຂອງໂກໂກນ ດອກ, ຊິມີປະໂຫຍດຫຍັງຖ້າວ່າພວກເຂົາບໍ່ມີເຂົ້າຈີ່ກິນ ? ເອົາເຂົ້າໄຮຍັດປາກເຂົາກ່ອນ ແລ້ວຈຶ່ງຍັດປຶ້ມໃສ່ມື. ເບິ່ງ... ແມ້

ພວກໂຈນຫມູ່ນັ້ນຮອດບໍ່ຮູ້ຈັກຫວ່ານແນວປູກສ້ຳ ແຕ່ບາດລັກນ່າ ມັນຊ້ຳເກັ່ງໂພດ!

- ພວກເຂົາບໍ່ຈັບຫວະ?

- ໃຜ? ພວກເຂົາຫັ້ນຫວະ? ໂອ້ຍ ເຈົ້າຫາກຊິເຫັນເອງ ດອກ, ລາງຄືນມາຫາຂ້ອຍ ແລ້ວເວົ້າຫນ້າເສີຍຕາເສີຍວ່າ ຊີດໍ ກາກໂປວິດ, ຂ້ອຍຂໍເງິນຈັກ ໕ ຣຸບແດ່ ຂ້ອຍຢາກດູດຢານະ. ຂ້ອຍກະເອົາໃຫ້ມັນ ບາດແລ້ວ... ໄດ້ອາທິດດຽວເທົ່ານັ້ນລະ ມັນ ກະມາອີກເວົ້າວ່າ: ຊີດໍ ກາກໂປວິດ ຂໍເງິນອີກແດ່ ໕ ຣຸບ, - ກູ ໃຫ້ມຶງແລ້ວເດ້? ຂ້ອຍຕອບມັນຄືນ. - ແມ່ນແທ້! ມັນຕອບ, - ແຕ່ນັ້ນແມ່ນເພື່ອສູກອກຢາເດ້, ບັດນີ້ຂ້ອຍຢາກກິນເຫລົ້ານະ.

ລົມແລ່ນຜ່ານກະຫນິບດິນຮາບພຽງດີແກມຂີ້ຊາຍ ມາໄດ້ປະ ມານ ໓ ກິໂລແມັດ ລົດຂອງພວກເຮົາກໍຂຶ້ນໂພນພູນ້ອຍຫນ່ວຍ ຫນຶ່ງ ແລະ ແລ່ນຜ່ານປະຕູໃຫຍ່ເຂົ້າໄປໃນບໍລິເວນວິຫານບ່ອນ ຫນຶ່ງ. ຢູ່ໃນເດີ່ນຮູບວົງມົນ ມີເງົາມຸມມົວຂອງສິມຫລັງຫນຶ່ງ, ເຖິງວ່າມັນເກົ່າແກ່ຫລາຍແລ້ວ ແຕ່ກໍບໍ່ງາມເທົ່າໃດ, ຢູ່ທາງດ້ານ ຫລັງມີສິ່ງກໍ່ສ້າງຢ່າງຫນຶ່ງສອງຊັ້ນ ເປັນຮູບເຄິ່ງວົງມົນຍາວຢັ້ງຢາຍ ອອກດ້ວຍເກີຍຊານທີ່ເພພັງເກືອບຫມົດແລ້ວ. ຫ່າງອອກໄປ ຫນ້ອຍຫນຶ່ງ ແຕ່ຢູ່ແຄມຮ່ອງເລິກພຸ່ນ ມີເຮືອນພັກປຸກດ້ວຍໄມ້ ພວມຢູ່ໃນລະຫວ່າງການສ້ອມແປງ, ຕາມຄອກແຄແຈຮົ້ວທຸກບ່ອນ ມີເຮືອນຫລັງນ້ອຍໆ, ເລົ້າ, ໂຮງກວຽນ, ເຮືອນຄົວປຸກໃຫມ່, ເຊິ່ງເບິ່ງບໍ່ອອກວ່າ ເຮັດດ້ວຍວັດຖຸຊະນິດໃດ ຫລືບລີເຊືອງບັງ ຕັ້ງ ຢັ້ງຢາຍຢູ່, ຕັ້ງແມ່ນບ່ອນສະສົມຊາກອາຣາມເກົ່າແກ່ຫັກພັງມາໄດ້

ກວ່າ ໓໐໐ ປີ ແລ້ວແທ້ ໆ. ສິ່ງທີ່ກະທົບຂ້າພະເຈົ້າຫລາຍກວ່າຫມູ່ ແມ່ນກິ່ນອາຍອັບໆອັນຫນຶ່ງທີ່ລອຍກ້ວຢູ່ໃນບໍລິເວນນິຄົມ ມັນແມ່ນກິ່ນການປະສົມ ກິ່ນເຖົາງປູດ ກິ່ນມູນສັດ ກິ່ນທູບທຽນ ສັບປົນເຂົ້າກັນໄປຫມົດ. ຢູ່ໃນສິມເພິ່ນພວມຮ້ອງເພງ, ຕາມຂັ້ນໄດຂຶ້ນສິມມີພວກແມ່ຍິງເຖົ້າໆຈ່ອຍເຫ້ງແສງຕາຂຶງຄຽດ ນັ່ງກໍ່ຊໍ່ຢູ່, ແນ່ນອນວ່າພວກເພິ່ນພວມຄຶດລຳລຶກເຖິງວັນເວລາອັນຜາສຸກ ຕອນທີ່ພວກເພິ່ນຢູ່ທ່າງນັ່ງຂໍທານຢູ່ບ່ອນນີ້. ແຕ່ພວກເຮົາແນມບໍ່ເຫັນພວກເດັກນ້ອຍນິຄົມຈັກຄົນເລີຍ.

ຜູ້ອຳນວຍການນິຄົມທ່າທີຊີງເມື່ອຍລ້າ, ແນມເບິ່ງລົດຟຽດຂອງພວກເຮົາດ້ວຍແສງຕາເສົ້າໆ ລາວເອົາມືເຄາະຂ້າງລົດ ແລ້ວຈຶ່ງພາພວກເຮົາເລາະຍ້ຽມນິຄົມ. ເຫັນໄດ້ຢ່າງຈະແຈ້ງວ່າ ລາວລຶ້ງເຄີຍກັບການທີ່ແຂກມາຊົມນິຄົມຂອງລາວ ໂດຍບໍ່ມີການຍ້ອງຍໍຊົມເຊີຍ ນອກຈາກວ່າຊິຕຳຫນິຕິຕຽນເທົ່ານັ້ນ.

- ຢູ່ນີ້ແມ່ນຫໍກຸ່ມທີ່ຫນຶ່ງ, ລາວບອກເມື່ອກ້າວລ່ວງມາຮອດສະຖານທີ່ຊຶ່ງແຕ່ກ່ອນມີປະຕູປ່ອງຫນຶ່ງ ແຕ່ບັດນີ້ບໍ່ຍັງເຫລືອຮອດຂອບປະຕູຊ້ຳ. ຕໍ່ມາພວກເຮົາໄດ້ຍ່າງຂ້າມທໍລະນີປະຕູອີກອັນຫນຶ່ງໂດຍບໍ່ມີອຸປະສັກອັນໃດຂວາງທາງເຊັ່ນກັນ ຈາກນັ້ນຈຶ່ງລ້ຽວຊ້າຍເຂົ້າຮ່ອມນ້ອຍໆຮ່ອມຫນຶ່ງ. ຮອດເວລານີ້ຂ້າພະເຈົ້າຈຶ່ງເຂົ້າໃຈວ່າບໍ່ມີສິ່ງໃດຂວາງກັ້ນຮ່ອມລະບຽງກັບອາກາດເຢັນພາຍນອກ. ສິ່ງຍັ້ງຢືນອື່ນໆກໍແມ່ນສາຍຫມອກກ້າມທີ່ໂອບເກາະຢູ່ຕາມຕີນຝາ, ເບິ່ງມັນເປັນສີຫມອງຫມົ່ນປົກຫຸ້ມດ້ວຍຂີ້ຝຸ່ນດຳໆເຕັມໄປຫມົດ.

-ໂອ້ວ, ແມ່ນເຮັດແນວໃດລະນີ້? ເປັນຫຍັງບໍ່ມີປະຕູ? ຂ້າພະເຈົ້າຖາມຂຶ້ນ.

ຜູ້ອຳນວຍການພະຍາຍາມເຮັດໃຫ້ພວກເຮົາເຫັນວ່າ ແຕ່ກ່ອນລາວກໍຮູ້ຍິ້ມຮູ້ຫົວຢູ່, ຢູເຣັບ ເປັນຜູ້ເວົ້າຂຶ້ນແຮງໆວ່າ:

-ປະຕູກືກມ້າງໄປດັ່ງໄຟແຕ່ດົນແລ້ວ, ກ້າວ່າຊິກືກມ້າງແຕ່ປະຕູກໍຍັງດີຢູ່ດອກ, ບັດນີ້ພວກເຂົາພາກັນງ້າງງັດຮອດພື້ນເຮືອນ ແລ້ວເອົາໄປເຜົາໄຟຜິງພຸ້ນບ່າ, ໄມ້ກ້າງລືມຫ້ອງອາຫານກັບກອງນຕັ້ງເຕັ່ງເຫລົ້ມ ພວກເຂົາກໍເຜົາກຶ້ມລ້າງຄືກັນ!

-ແລ້ວພື້ນສຳລັບດັ່ງເຕົາຜິງເດ້?

-ໃຜຊິໄປຮູ້ນຳ ວ່າເປັນຫຍັງພວກເຂົາຈຶ່ງບໍ່ມີພື້ນດັ່ງເຕົາຜິງ, ງົບປະມານສິບເຊື່ອຊີ້ພື້ນກໍຄືມີຢູ່!

ຄາລາປູດາ ສັ່ງຂີ້ມູກ ແລ້ວເວົ້າວ່າ:

-ໄມ້ພື້ນບັ້ນຫວະ! ຄືຊິພໍມີຢູ່ດອກ ແຕ່ພວກເຂົາບໍ່ຍອມເລື່ອຍບໍ່ຍອມຜ່າ ຫັ້ນຕີ, ແລ້ວເງິນຊິຈ້າງຊໍ້າຜັດບໍ່ມີ, ພື້ນມີຢູ່, ພວກຂ້ອສູດຫມູ້ນີ້..., ເຈົ້າເຫັນແລ້ວຕີວ່າພວກເຂົາບໍ່ຕ່າງຫຍັງກັບໂຈນປ່າ...

ໃນທີ່ສຸດພວກເຮົາກໍມາຮອດປະຕູທີ່ມີຝາແຫ້ງບ່ອນຫນຶ່ງ ທີ່ຍັງອັດແຈບຢູ່ບ່ອນເຂົ້າຫໍພັກນອນ. ຄາລາປູດາ ໃຊ້ຕີນທຳແຮງໆບາດຫນຶ່ງ ມັນກໍຫລູດອອກໂລດຍ້ອນວ່າມັນຄາຢູ່ຍ້ອນເຫລັກບານພັບດ້ານຫລຸ່ມອັນດຽວເທົ່ານັ້ນ ຈັ່ງຊັ້ນມັນຈຶ່ງອາດລົ້ມຟາດໃສ່ຫົວພວກເຮົາໄດ້. ຄາລາປູດາ ຈັບບານປະຕູໄວ້ແລ້ວ ຫົວຂຶ້ນທັງເວົ້າວ່າ:

-ເອີ້ ນີ້ ຜີປອບເກົ່າ ກູຮູ້ຈັກມຶງດີນ່າ!

ພວກເຮົາລ່ວງເຂົ້າໄປໃນຫໍນອນ. ດ້ວຍທ່າທາງອິດອາດສະຫງ່າງາມພວກເດັກນ້ອຍກໍ່ພ້າໄຮ້ຍາດແທ້ໆນັ່ງຢູ່ເທິງຕຽງເປື້ອນໆທັງຫັກໂຍະເຍະ ບາງຄົນນັ່ງຢູ່ເທິງກອງຜ້າຂີ້ດຽດຂາດເກົ່າຊະນິດພໍໂຍນຖິ້ມນັ້ນແລ້ວ, ພວກເຂົາພະຍາຍາມຍາດບຽດຫົດເຂົ້າຢູ່ໃນເສດຜ້າຂາດສ້ອຍເຫລົ່ານີ້ ເພື່ອສະແຫວງຫາຄວາມອົບອຸ່ນ. ຢູ່ໃກ້ໆກັບເຕົາຜີງທີ່ດັບສົນິດແລ້ວນັ້ນ ມີເດັກນ້ອຍສອງຄົນພວມໃຊ້ຂວານຜ່າແຜ່ນແປ້ນສີເຫລືອງໆ ຊຶ່ງເບິ່ງຄືກັບວ່າຫາກໍ່ຜ່ານການທາສີມາສົດໆ ຮ້ອນໆ. ມີກອງຂີ້ເຫຍື້ອສຸມຢາຍຢູ່ທຸກຈອກແຈ ແລະຊະຍາຍອອກມາຮອດທາງຍ່າງ. ກິ່ນອາຍທີ່ອູດເອົາກົ້ວຢູ່ໃນຫ້ອງນີ້ຄາຍກັບກິ່ນຢູ່ໃນເດີ່ນ ແຕ່ບໍ່ມີກິ່ນທູບທຽນຫລາຍເທົ່າ.

ພວກເດັກນ້ອຍແນມເບິ່ງພວກເຮົາ ແຕ່ບໍ່ມີໃຜງວາກຫັນມາ. ຂ້າພະເຈົ້າສັງເກດໄດ້ວ່າ ເດັກນ້ອຍໄຮ້ຍາດເຫລົ່ານີ້ມີອາຍຸກາຍ ໑໕ ປີຫມົດທຸກຄົນແລ້ວ.

-ພວກຮຸ່ນອ້າຍໃຫຍ່ແມ່ນບໍ່? ຂ້າພະເຈົ້າຖາມຂຶ້ນ.

-ເຈົ້າ, ແມ່ນກຸ່ມແກ່ກວ່າຫມູ່ ແລະ ເປັນຊຸດທໍາອິດ, ຜູ້ອໍານວຍການອະທິບາຍສຽງເຫງົາເສົາ.

ມີສຽງຫ້າວແຫບຂອງຜູ້ໃດຜູ້ຫນຶ່ງຮ້ອງລອດມາຈາກແຈໃດແຈຫນຶ່ງວ່າ:

-ຢ່າເຊື່ອພວກເຂົາເດີ້, ຂີ້ຕົວະຫມົດຫັ້ນລະ!

ຢູ່ກົ້ນຫ້ອງອີກເບື້ອງຫນຶ່ງ ກໍມີຜູ້ໃດຜູ້ຫນຶ່ງເວົ້າອອກມາຢ່າງບໍ່ຈຽມສົບຈຽມປາກວ່າ:

-ເຮີ້... ເອົາຄົນມາຍັ່ງເມາຍາມ... ໂອ້ຍ ພໍປານວ່າມີຫຍັງ

ເບິ່ງແດ້ອນຢູ່ນີ້ນ່າ! ພາເພິ່ນໄປເບິ່ງເຄື່ອງລັກມາພຸນຍັງຊິດກວ່າ!

ພວກເຮົາບໍ່ຫົວຊາຕໍ່ສຽງເວົ້າສຽດສີເຫລົ່ານີ້ ນອກຈາກ ຢູເຣັບ ຄົນດຽວເຂົ້າຫນ້າແດງຮືນຂຶ້ນທັງເສືອດແສງຕາເບິ່ງຂ້າພະເຈົ້າ.

ພວກເຮົາອອກມາຮອດຮ່ອມລະບຽງ.

-ຢູ່ຕຶກນີ້ມີຫໍພັກ ໗ ຫ້ອງ, ຈະໄປເບິ່ງບໍ່? ຜູ້ອຳນວຍການ ຖາມຂຶ້ນ.

-ພາພວກເຮົາໄປເບິ່ງໂຮງຊ່າງແດ່. ຂ້າພະເຈົ້າຂໍຮ້ອງລາວ. ຕາລາປູດາລີງມີເລົ່າເລື່ອງຍືດຍາວອັນຫນຶ່ງໃຫ້ພວກເຮົາຟັງກ່ຽວກັບວິທີການທີ່ລາວໃຊ້ ເພື່ອຊື້ເຄື່ອງຈັກກົງ.

ພວກເຮົາຊອດມາຫາເດີ່ນອີກຄັ້ງຫນຶ່ງ. ຕາມທາງພວກເຮົາພົບເດັກນ້ອຍຜູ້ຊາຍຄົນຫນຶ່ງ ໂຕຫົດຢູ່ໃນເສື້ອຄຸມຂາດສ້ອຍ. ບັກນ້ອຍໂດດເຕັ້ນໄປຕາມຫນ້າດິນທັງພະຍາຍາມຫລີກເວັ້ນ ບໍ່ໃຫ້ຂາເປື້ອນໆ ດຳໆ ຂອງມັນຕົກໃສ່ຫິມະແຂງ. ຂ້າພະເຈົ້າຢຸດລົມກັບມັນປ່ອຍໃຫ້ຜູ້ອື່ນຍ່າງຕໍ່.

-ໂຕຊິແລ່ນໄປໃສນ້ອຍ?

ມັນຢຸດແລ້ວເງີຍຫນ້າຂຶ້ນ:

-ຂ້ອຍຫວະ? ຂ້ອຍຊິໄປຊອມເບິ່ງວ່າ ເພິ່ນຊິພາພວກເຮົາຍ້າຍໄປໃສອີກ.

-ໄປທາງໃດ?

-ມີຄົນເວົ້າ ເພິ່ນຊິສົ່ງພວກເຮົາໄປຢູ່ບ່ອນອື່ນ.

-ແລ້ວຢູ່ນີ້ບໍ່ດີບຫວະ?

-ຢູ່ນີ້ບໍ່ເປັນຕາຢູ່ເລີຍ, ເດັກນ້ອຍເວົ້າສຽງຕ່ຳ ໃນຫນ້າຫມອງ

ເສົ້າ ຫມໍເອົາແຂນເສື້ອຂຶ້ນປັດໃບຫູ. - ຢູ່ນີ້ພວກເຮົາຫນາວຊິຕາຍ ແລ້ວຍັງກຶກຕືອກ.

- ແມ່ນໃຜຕີພວກເຈົ້າລະ?

- ຫມົດທຸກຄືນນັ້ນແລ້ວ.

ເດັກນ້ອຍຄືນນີ້ມີທ່າທາງສະຫລາດສະຫລຽວດີ ແລະ ເບິ່ງຄືວ່າ ຫມໍຍັງບໍ່ເຄີຍຜ່ານຊີວິດພະເນຈອນໄປຕາມແຄມກະຫນົນເທື່ອ. ດວງຕາທັງຄູ່ຂອງມັນເປັນສີຟ້າໃສແຈ້ງ ແບບບໍ່ທັນກຶກຄວາມຫລອກລວງຕາມຫ້ອງກະຫນົນທຳຮ້າຍໃຫ້ເສຍຮູບຊົງ: ຖ້າມັນໄດ້ອາບນ້ຳສະອາດ ກໍຄົງເປັນເດັກຫນ້າຮັກຄົນຫນຶ່ງ.

- ແລ້ວເປັນຫຍັງເພິ່ນຈຶ່ງຕີຫມວດໂຕລະ?

- ບໍ່ມີຫຍັງຫມົດ, ຖ້າວ່າພວກເຮົາບໍ່ເອົາຂອງທີ່ເພິ່ນຢາກໄດ້ໃຫ້ເພິ່ນ, ບໍ່ຊັ້ນເພິ່ນກໍຍຶດອາຫານໄປເລີຍ, ພວກເຮົາຊຸມເດັກນ້ອຍນີ້ເກາະ... ດີນແລ້ວເດ້ ບໍ່ໄດ້ໄປກິນເຂົ້າຢູ່ໂຕະນະ!... ແລ້ວບາງເທື່ອເພິ່ນຍັງຍຶດເອົາຮອດເຂົ້າຈີ່ ພວກເຮົາພຸ້ນໃດ໋ ຫລືວ່າຄັນພວກເຮົາບໍ່ລັກ... ເພິ່ນກໍຊ້ຳບອກໃຫ້ລັກແນວໃດແນວຫນຶ່ງ... ແລ້ວເຈົ້າຮູ້ແດ່ບໍ່ວ່າ ເພິ່ນຊິສົ່ງພວກເຮົາໄປໃສ?

- ລຸງບໍ່ຮູ້ດອກ ຫລ້າເອີຍ.

- ເພິ່ນບອກວ່າບໍ່ດົນກໍແມ່ນລະດູຮ້ອນແລ້ວ...

- ແລ້ວໂຕຄອງຄອຍລະດູຮ້ອນເຮັດຫຍັງລະ?

- ຂ້ອຍຊິຫນີໄປຈາກນີ້...

ເພິ່ນມາເອີ້ນຂ້າພະເຈົ້າໄປໂຮງຊ່າງ, ຂ້າພະເຈົ້າຮູ້ສຶກວ່າບໍ່ອາດຈາກເດັກນ້ອຍຫນ້າສົງສານຄົນນັ້ນມາໄດ້ໂດຍບໍ່ເວົ້າຫຍັງອົບອຸ່ນມັນ

ຈັກຫນ້ອຍ ແຕ່ມັນຊ່ຳເຕັ້ນຍືອດຈາກດິນກອງຫນຶ່ງໄປຍັງອີກກອງ ຫນຶ່ງແລ້ວ ໂດດມຸ່ງຫນ້າໄປທາງທີ່ພັກ ເຊິ່ງຄົງຕ້ອງເປັນບ່ອນອົບ ອຸ່ນກວ່າຢູ່ນອກແນວນີ້.

ພວກເຮົາບໍ່ສາມາດແນມເຫັນໂຮງຊ່າງເລີຍ: ປາກົດວ່າແມ່ນ ຊາຍເລີກລັບຄົນຫນຶ່ງເປັນຜູ້ມ້ຽນກະແຈ ແລະ ຜູ້ອຳນວຍການເອງ ກໍບໍ່ສາມາດຄົ້ນຫາໂຕລາວພໍ້ ຈຶ່ງຊັ້ນພວກເຮົາກໍເລີຍໄດ້ແຕ່ຢືນຊົມຢູ່ ທາງນອກແນມຜ່ານປ່ອງຢ້ຽມເຂົ້າໄປ: ຢູ່ໃນນັ້ນມີເຕົາຫລອມໂລ ຫະສອງບ່ອນ, ໂຕະກົບໄມ້ ແລະ ເຄື່ອງກຶງສອງຊຸດ, ທັງຫມົດນີ້ ມີອຸປະກອນຢູ່ ໑໘ ຢ່າງ. ສ່ວນໂຮງເຮັດເກີບ, ໂຮງຕັດຫຍິບນັ້ນ ຕັ້ງຢູ່ໃນຕຶກອີກຫລັງຫນຶ່ງຕ່າງຫາກຄ້າຍຄືກັນກັບເສົາຄ້ຳ ອັນແຫນ້ນ ຫນາຂອງຫລັກການວິຊາຄູ.

- ມັນຄືຊິແມ່ນວັນພັກຂອງພວກເຈົ້າເນາະ ?

ຜູ້ອຳນວຍການບໍ່ຕອບ, ຢູ່ເອັບ ວາງຕົວເປັນຜູ້ແບກຫາບພາ ລະ ອະທິບາຍອີກວ່າ:

-ອານໂຕນ ເຊມົວໂນວິດ, ເຈົ້າເຮັດໃຫ້ຂ້ອຍຕ່າງໃຈແທ້ໆ, ຄວາມຈິງເຈົ້າຕ້ອງເຂົ້າໃຈທຸກສິ່ງທຸກຢ່າງແລ້ວນ່າ, ຢູ່ທີ່ນີ້ບໍ່ມີໃຜ ເຮັດວຽກຕາມກົດເກນທົ່ວໄປ. ອຸປະກອນເຄື່ອງມືກໍກລັກໄປກັງງ, ບໍ່ມີວັດຖຸດິບ, ບໍ່ມີພະລັງງານ, ບໍ່ມີການສັ່ງຊື້ສິນຄ້າ, ບໍ່ມີຫຍັງ ຫມົດ... ເວົ້າແທ້ ຢູ່ນີ້ບໍ່ມີໃຜຮູ້ເຮັດວຽກດອກ.

ສະກາບີໄຟຟ້າຂອງພວກຂະເຈົ້າເອງ ເຊິ່ງ ຄາລາບູດາ ກໍໄດ້ ເລົ່າເລື່ອງເປັນມາຂອງມັນຢ່າງຄົບກ້ວນສູ່ຂ້າພະເຈົ້າຟັງນັ້ນ ກໍບໍ່ແລ່ນ ແລ້ວ, ແນ່ນອນວ່າຕ້ອງມີສິ່ງໃດສິ່ງຫນຶ່ງແຕກຫັກໄປ.

- ເອີ້... ແລ້ວໂຮງຮຽນລະ?

ກະໂຕຜູ້ອຳນວຍການເປັນຜູ້ຕອບວ່າ:

- ມີໂຮງຮຽນຢູ່ຫລັງຫນຶ່ງ, ລາວເວົ້າ, - ແຕ່ພວກເຮົາມີແນວອື່ນເຮັດຢູ່ແລ້ວ...

ຄາລາບູດາ ເລັ່ງພາພວກເຮົາໄປຍັງທົ່ງນາ. ພວກເຮົາອອກຈາກບໍລິເວນເດີ່ນວົງມົນ ເຊິ່ງອ້ອມຮອບດ້ວຍຝາຫນາປະມານສອງແມັດນັ້ນ ແລ້ວຈຶ່ງແນມເຫັນໂຫມ້ງຄາບຫລຸບໆກວ້າງຂອງຫນອງເກົ່າບ່ອນຫນຶ່ງ ເຂດແດນເບື້ອງຫນຶ່ງຕໍ່ໃສ່ປ່າ ແລະ ອີກດ້ານຫນຶ່ງເປັນທົ່ງປົກຫຸ້ມດ້ວຍຫິມະຊັ້ນບາງໆ ເພາະຖືກລົມພັດກວາດໄປມາ. ຄາລາບູດາ ເດ່ແຂນຢ່າງອົງອາດຄ້າຍພົນທະຫານນາໂປເລອົງ ແລ້ວອຸທານອອກມາຢ່າງຜູ້ຊະນະ:

- ຕັ້ງວ່າຮ້ອຍຊາວເດເຊຍຕິນພຸ້ນນ່າ..., ມະຫາສົມບັດຕ່ອນຫນຶ່ງ!

- ແລ້ວເຂົ້າໄຣແນວລະດູໃບໄມ້ຫລົ່ນ ໄດ້ຫວ່ານແລ້ວຫວະ? ຂ້າພະເຈົ້າຖາມອອກໄປຢ່າງຂາດຄວາມລະມັດລະວັງ.

- ເຂົ້າໄຣແນວລະດູໃບໄມ້ຫລົ່ນຫວະ...! ຄາລາບູລາ ອຸທານອອກມາດ້ວຍຄວາມດີໃຈ, - ຫວ່ານເຂົ້າໄຣຕັ້ງວ່າ ໓໐ ເດເຊຍຕິນພຸ້ນນ່າ, ກ້າວ່າໄດ້ ໑, ໖ ໂຕນຕໍ່ເດເຊຍຕິນ ມັນກໍເປັນ ໔໘ ໂຕນ... ຕັ້ງແຕ່ເຂົ້າໄຣໃດ໋ຫັ້ນ! ບັດນີ້ພວກເຂົາຊິບໍ່ອຶດເຂົ້າຈີ່ກິນກັນລະ! ເຂົ້າໄຣແນວພິລຶກຊ້ຳອີກໃດ໋ຫັ້ນ! ຄັນວ່າຫມົດທຸກຄົນພາກັນປູກເຂົ້າໄຣແລ້ວ ມັນກໍບໍ່ຈຳເປັນປູກຫວ່ານແນວອື່ນອີກແລ້ວນ່າ. ອັນເຂົ້າບະເລຫັ້ນແມ່ນຫຍັງ? ເຂົ້າຈີ່ດຳທີ່ເຮັດດ້ວຍເຂົ້າໄຣຫັ້ນ

ເກາະ ພວກເຢຍລະມັນຮອດບໍ່ກິນໃດ໋ ແລ້ວພວກຝະລັ່ງກໍຄືກັນ ແຕ່ວ່າພວກເຮົາ... ຢູ່ບ້ານພວກເຮົາ ເຂົາຈິ່ງດໍານີ້...

ພວກເຮົາກັບຄືນມາຮອດລົດແລ້ວ, ຄາລາບູດາ ຍັງເວົ້າຮອດເຂົາໄຮບໍ່ເຊົາ. ທໍາອິດພວກເຮົາຮູ້ສຶກລໍາຄານແດ່ ແຕ່ຕໍ່ມາຊໍ້າສິນໃຈຂຶ້ນຄຶດວ່າ ແມ່ນລາວຊິຊອກຫາຫຍັງມາເວົ້າກ່ຽວກັບເຂົ້າໄຮນີ້ໄດ້ຕື່ມອີກແດ່?

ພວກເຮົາຂຶ້ນລົດ ແລະ ອອກເດີນທາງໂດຍມີກ້າວອໍານວຍການຜູ້ງຽບຂຶມໂດດດ່ຽວໂບກມືສົ່ງທາງ. ຄວາມມືດງຽບຄອບງໍາຍືນຍາວຈົນມາຮອດເຂດພູເຢັນ. ເມື່ອຜ່ານຕະຫລາດນັ້ນ ຢູເຣັບ ຈຶ່ງງຶກຫົວໄປໃສ່ເດັກນ້ອຍໄຮ້ຍາດກຸ່ມໜຶ່ງ ທັງເວົ້າວ່າ:

- ເດັກນ້ອຍ ກຸເຣັຍແຊ ໃດ໋ຫັ້ນ, ວ່າແນວໃດເຈົ້າຊິຮັບເອົາພວກເຂົາບໍ່?

- ບໍ່.

- ໂຍ້ວ! ແລ້ວແມ່ນເຈົ້າຢ້ານຫຍັງໃນໂຕພວກເຂົາລະ? ໃນເມື່ອວ່າກະໂຕນີ້ຄືມ ກັອກກີ ເອງກໍແມ່ນນີ້ຄືມເດັກນ້ອຍຕິດໄພສົງຄາມບ່ອນໜຶ່ງ. ເຖິງຢ່າງໃດຄະນະກໍາມາທິການແຫ່ງລັດຊູກຣາອີນກໍສົ່ງຄືນທຸກແບບທຸກປະເພດມາໃຫ້ເຈົ້າຢູ່ແລ້ວ ສ່ວນວ່າຢູ່ນີ້ພວກເຮົາເອົາແຕ່ເດັກນ້ອຍທໍາມະດາໃຫ້ເຈົ້າ.

- ທໍາມະດາຊັ້ນຫວະ... ນີ້? - ແມ່ນແຕ່ ຄາລາບູດາ ເອງກໍຫົວກ້າກງຂຶ້ນ.

ຢູເຣັບ ເວົ້າຕາມແນວຄວາມຄຶດຂອງລາວຕໍ່ໄປ:

- ພວກເຮົາຊິພາກັນໄປແວ່ຫາ ຊູກຣີນສະກາຍຢາ ໂລດ ເພື່ອ

ເວົ້າເລື່ອງນີ້. ອີງການຄຸ້ມຄອງເດັກຈະຍົກນິຄົມໃຫ້ກະຊວງສຶກສາ

ປະຊາຊົນ. ໃຫ້ເມືອງ ຄາຄົບ ສົ່ງເດັກນ້ອຍຕິດໄພສັງຄົມໄປໃຫ້ເຈົ້າທັ້ນ ມັນບໍ່ສະດວກດອກ ແລະ ພວກເພິ່ນກໍບໍ່ມີນິຄົມເປັນຂອງຕົນເອງຈັກບ່ອນເລີຍ, ບາດນີ້ແລ້ວເພິ່ນຊິມີ..., ແລ້ວນິຄົມຢ່າງຄັກຊໍ້າບ່າ: ໔໐໐ ບ່ອນພັກໃດ໋ເນາະ ຢູ່ທັ້ນຈຳພວກໂຈງຊ່າງກໍບໍ່ຂີ້ຮ້າຍດອກ, ຊີດໍ ກາກໂປວິດ ເຈົ້າຊິຍົກນິຄົມໃຫ້ພວກເຮົາບໍ່?

ຄາລາປູດາ ຄຶດຊຶ່ງຢູ່:

- ເຂົ້າໄຮ່ຕັ້ງ ໒໐ ເດເຊຍຕິນ... ຫມົດແນວປູກໄປຕັ້ງ ໔ ໂຕນພຸ້ນໃດ໋ແລະ ແຮງງານອີກຕັ້ງເທົ່າໃດ..., ເຈົ້າຈະຈ່າຍບໍລະ? ແຕ່ວ່າເລື່ອງຫຍັງພວກເຮົາຊິບໍ່ຍົກນິຄົມໃຫ້ພວກເຈົ້າລະ? ພວກເຮົາຊິຍົກໃຫ້ໂລດລະບໍ້.

- ຊັ້ນແວ່ໄປຫາ ຊູກຣິນສະກາຍຢາ ເລີຍ, ຢູເຣັບເວົ້າຊໍ້າ. - ນອກນີ້ພວກເຮົາຍັງຊິຍ້າຍເດັກນ້ອຍຮຸ່ນນ້ອຍກວ່າຫມູ່ ໑໔໐ ຄົນອອກໄປໄວ້ບ່ອນອື່ນ, ສ່ວນເດັກນ້ອຍ ໔໙໐ ຄົນທີ່ຍັງເຫລືອປ່ອຍໄວ້ໃຫ້ເຈົ້າອົບຮົມ, ເວົ້າຕາມທາງການແລ້ວພວກນີ້ບໍ່ແມ່ນເດັກນ້ອຍຕິດໄພສັງຄົມດອກ ແຕ່ເມື່ອໄດ້ຜ່ານການສຶກສາອົບຮົມຢູ່ ກູເຣັຍແຈ ແລ້ວມັນໂລດຮ້າຍກວ່າເກົ່າຊໍ້.

- ແລ້ວເລື່ອງຫຍັງຂ້ອຍຊິໂດດລົງຫນອງຕົມບ່ອນນີ້ລະ? ຂ້າພະເຈົ້າເວົ້າກັບ ຢູເຣັບ. - ນອກນີ້ຍັງຊິຕ້ອງສ້ອມແປງໃຫ້ເຂົ້າຮູບເຂົ້າຮອຍແດ່ຈັກເລັກຈັກຫນ່ອຍ, ຕ້ອງຫມົດບໍ່ຕ່ຳກວ່າສອງຫມື່ນຮູບ.

- ຊີດໍ ກາກໂປວິດ ຈະເອົາໃຫ້ເຈົ້າດອກ.

ຄາລາປູດາ ສະດຸ້ງ:

- ສອງຫມື່ນຣຸບ, ຊິເອົາໄປເຮັດຫຍັງ?

- ຄ່າສ້ອມແປງປະຕູປ່ອງຢ້ຽມ, ຕຽງນອນ, ເຄື່ອງມື, ເສື່ອ ຜ້າ ທຸກຢ່າງ...!

ຄາລາປູດາ ເບະປາກ ແລ້ວເວົ້າວ່າ:

- ສອງຫມື່ນພັນຫວະ! ແພງປານນີ້ພວກເຮົາເຮັດເອົາຫມົດກໍ ໄດ້.

ມາຮອດຫ້ອງການ ລູກຣິນສະກາຍຢາ ແລ້ວ ຢູເຣັບ ກໍໂຄສະ ນາຕໍ່ນາງ, ລູກຣິນສະກາຍຢາຟັງລາວເວົ້າທັງຍິ້ມ ແລະ ແນມເບິ່ງ ຂ້າພະເຈົ້າ ແລ້ວເວົ້າຢ່າງສົງໄສວ່າ:

- ຄົງຈະເປັນການທົດລອງທີ່ອ່າວແພງຢູ່ຈັກຫນ້ອຍ. ພວກເຮົາ ບໍ່ອາດເອົານິຄົມ ກ້ອກກີ ມາສ່ຽງອັນຕະລາຍແນວນີ້ດອກ, ຄວນ ອັດນິຄົມ ກູເຣັຍແຊ ຫັ້ນຊື່ໆ ແລ້ວແຈກຢາຍເດັກນ້ອຍອອກໄປຢູ່ ນິຄົມອື່ນໆ. ນອກນີ້ສະຫາຍ ມາກາເຣັນໂກ ກໍຄົງຈະບໍ່ໄປຢູ່ ກູເຣັຍ ແຊ ດອກ.

- ບໍ່, ຂ້ອຍບໍ່ໄປດອກ, ຂ້າພະເຈົ້າຕອບ.

- ແມ່ນຄຳຂາດຂອງເຈົ້າແລ້ວເບາະນີ້? ຢູເຣັບ ຖາມ.

- ຂ້ອຍຈະລົມກັບເດັກນ້ອຍອີກ ແຕ່ເກືອບແນ່ນອນວ່າພວກເຂົາ ຈະປະຕິເສດ.

ຄາລາປູດາ ຫລັບຕາພິບ ໆ.

- ແມ່ນໃຜຊິປະຕິເສດ?

- ພວກເດັກນ້ອຍນິຄົມ.

- ເຈົ້າ... ເຈົ້າຫມາຍຄວາມວ່າ... ພວກລູກສິດເຈົ້າຫັ້ນຫວະ?

- ເອີ້.

- ແລ້ວພວກເຂົາເຂົ້າໃຈເລື່ອງນີ້ຊັ້ນຫວະ?

ຊູກຣິນສະກາຍຢາ ວາງມືໃສ່ແຂນເສື້ອຂອງ ຄາລາປູດາ:

- ສະຫາຍ ຊິດ! ຢູ່ນິຄົມ ກອກກີ... ພວກເຂົາເຂົ້າໃຈທຸກຢ່າງ ດີກວ່າທັງຂ້ອຍທັງເຈົ້າໂຮມເຂົ້າກັນຊ້ຳບ່າ, ຂ້ອຍຈັ່ງແມ່ນຢາກເຫັນ ໜ້າພວກເຂົາ ເວລາພວກເຂົາໄປເຫັນນິຄົມ ກູເຣັຍແຊ ຂອງ ເຈົ້າ.

ຄາລາປູດາ ໂນໂຫໂຫໂສຂຶ້ນ:

- ແລ້ວເລື່ອງຫຍັງໃຜຈຶ່ງໂຍນໃສ່ຫົວຂ້ອຍຫມົດລະ: "ກູເຣັຍ ແຊ ຂອງເຈົ້າ?" ມັນເປັນຂອງຂ້ອຍຊັ້ນຫວະ? ຂ້ອຍໃຫ້ເງິນໄປຕັ້ງ ໕ ຫມື່ນຣຸບ, ເຄື່ອງຈັກຫນ່ວຍຫນຶ່ງ ກັບໂຮງກົງຕັ້ງ ໑໘ ບ່ອນ. ແຕ່ຄູສອນຂອງເຈົ້າຫັ້ນດີ... ແລ້ວຂ້ອຍຊິເຮັດແນວໃດໄດ້ ຖ້າຫາກ ວ່າພວກເຂົາບໍ່ເຮັດວຽກເຮັດງານແນວນີ້...?

ຂ້າພະເຈົ້າປົບຫນີຈາກພວກນັກສັງຄົມສຶກສາທີ່ເຈລະຈາແກ້ບັນ ຫາພາຍໃນຄອບຄົວຂອງພວກເພິ່ນ ແລ້ວແລ່ນໄປສະຖານີລົດໄຟ. ກາຣາບານົບ ແລະ ຊາໂດຣອບ ຕິດຕາມມາສົ່ງຂ້າພະເຈົ້າຮອດສະ ຖານີ. ເມື່ອຟັງຂ້າພະເຈົ້າເລົ່າເລື່ອງແລ້ວພວກເຂົາກໍພາກັນຄຶດຊຶງ ຢູ່ ແສງຕາສັກໃສ່ກົງລໍ້ລົດໄຟ, ໃນທີ່ສຸດ ກາຣາບານົບ ຈຶ່ງເວົ້າ ອອກມາວ່າ:

- ມາສະສາງລ້າງວິດ ກໍບໍ່ແມ່ນເລື່ອງທີ່ມີກຽດສັກສີແນວໃດ ດອກ ສຳລັບຊາວນິຄົມ ກອກກີ... ແຕ່ຟ້າເອີ້ຍ! ຄວນຄຶດຄັກ ໆ ຢູ່ໃດ່ລະ...

-ພວກເຮົາກໍຢູ່ບໍ່ໄກປານໃດ, ມາຊ່ອຍເຈົ້າໄດ້ຢູ່ດອກ, ຊາໂດຣອບເວົ້າຕື່ມ ທັງຫົວຈົນເຫັນແຂ້ວທຸກເຫລັ້ມ. -ໂຕຣູ້ບໍ່ ເຊມິຍິງ... ເອົາລະ... ເມືອກ່ອນ, ມື້ອື່ນຄ່ອຍວ່າກັນ.

ກອງປະຊຸມໃຫຍ່ຮັບຟັງລາຍງານຂອງຂ້າພະເຈົ້າຢ່າງເຄັ່ງຂຶມຈິງຈັງຄືກັບທຸກໆຄັ້ງໃນລະຍະຫລັງໆມານີ້. ຂະນະເວົ້າຢູ່ນັ້ນ ຂ້າພະເຈົ້າກໍຫາງ່ຽງຫູຟັງ ບໍ່ພຽງແຕ່ມະຫາຊົນຜູ້ຟັງເທົ່ານັ້ນ ແຕ່ໃນນ້ຳສຽງຕົນເອງຂ້າພະເຈົ້າກໍເກີດສົງໄສຂຶ້ນມາ. ໃນທັນໃດນັ້ນຂ້າພະເຈົ້າກໍຄຶດຢາກຍິ້ມແບບເສົ້າໆຂຶ້ນມາຈັກບາດ. ມັນເກີດຫຍັງຂຶ້ນແລ້ວ? ຊັ້ນຂ້າພະເຈົ້າກໍເປັນເດັກນ້ອຍຄືນຫນຶ່ງຫວະ? ຫວ່າງສີ່ເດືອນກ່ອນນີ້ຂ້າພະເຈົ້າກໍເປັນບ້າລະເມີໄປນຳພວກເຂົາ ເດັກນ້ອຍ ໂດຍຄຶດວ່າໄດ້ເປັນເຈົ້າຂອງຄອບຄອງຫໍພາສາດກາງດອນນັ້ນແລ້ວ. ໃນລະຍະສີ່ເດືອນນັ້ນ ຂ້າພະເຈົ້າເຕີບໃຫຍ່ແກ່ໂຕຂຶ້ນຊັ້ນຫລະ? ຫລືວ່າກົງກັນຂ້າມ ຂ້າພະເຈົ້າໂງ່ຈ້າລົງກວ່າເກົ່າຊ້ຳ. ຂ້າພະເຈົ້າຮູ້ສຶກຢ່າງຈະແຈ້ງວ່າ ມີຄວາມບໍ່ເຊື່ອຫມັ້ນແບບຫນ້າຂີ້ດຽດຢ່າງຫນຶ່ງແຝງຢູ່ໃນນ້ຳສຽງຄຳເວົ້າ ແລະ ສີຫນ້າທ່າທາງຂອງຕົນ. ຕະຫລອດເວລາຫນຶ່ງປີເຕັມໆ ພວກເຮົາຊຸ້ນຂ້ຽວເຮັດທຸກຢ່າງເພື່ອມຸ່ງຫມັ້ນກ້າວໄປໃຫ້ເຖິງບ່ອນທີ່ຮຸ່ງເຮືອງກວ່າ ແລ້ວຈະໃຫ້ເຊື່ອແນວໃດວ່າຄວາມມຸ່ງຫວັງອັນງົດງາມທັງຫມົດຂອງພວກເຮົາ ຈະຖືກແຫຍ້ເຂົ້າໄປຈົນຕາແຈຢູ່ໃນນາຣົກ ກູເຣັຍແຊ ບ່ອນຫນ້າສົມເພດແຫ່ງນີ້? ແລ້ວມັນເປັນໄປໄດ້ແບບໃດທີ່ຂ້າພະເຈົ້າເອງ ໄດ້ເວົ້າຮອດອະນາຄົດອັນບໍ່ເປັນຕາຮັບເອົາຂະຫນາດນີ້ໄດ້ ສູ່ເດັກນ້ອຍຟັງ? ມັນມີສະເຫນ່ດຶງດູດພວກເຮົາບ່ອນໃດອັນ ກູເຣັຍແຊ ຫັ້ນ? ແມ່ນເພື່ອສິ່ງງົດງາມ

ມີຄຸນຄ່າອັນໃດພວກເຮົາຈຶ່ງຈະປະຖິ້ມຊີວິດ ທີ່ໂອບລ້ອມດ້ວຍສວນດອກໄມ້ ແລະ ຊຸ່ມຊື່ນດ້ວຍຫ້ວຍໂກໂລມາກ, ຫນີຈາກພື້ນເຮືອນປູແປ້ນ ແລະ ເຄຫາທີ່ຫາກໍ່ສ້ອມແປງແລ້ວເຫລົ່ານີ້?

ແຕ່ຂະນະດຽວກັບ ຢູ່ໃນບົດສະເຫນີຂອງຂ້າພະເຈົ້າທີ່ບັນຈຸກ້ອຍຄຳຄວາມຈິງບໍ່ມີສຳນວນໂວຫານ ທີ່ບົ່ງຮອດຄວາມຫວັງເຮືອງຮອງໃດໆແມ່ນແຕ່ສັບດຽວນັ້ນ ຂ້າພະເຈົ້າຊ້ຳຮູ້ສຶກຂຶ້ນເອົາເອງໂດຍບໍ່ຄາດຝັນວ່າ ເກີດມີຄຳຮຽກຮ້ອງຈິງຈັງຢ່າງຫນຶ່ງແຝງດ້ວຍຄວາມເບີກບານຢ່າງຫນຶ່ງ ຊຶ່ງແນມເຫັນທ່າງໆພໍມຸມມືວ ແລະ ຈາງໆ.

ບາງເວລາພວກເດັກນ້ອຍກໍ່ຂັດການເວົ້າຂອງຂ້າພະເຈົ້າ ດ້ວຍສຽງຫົວ ແລະ ກືກກະໂດບ່ອນທີ່ຂ້າພະເຈົ້າຄຶດຢາກໃຫ້ພວກເຂົາງຶງງວາຕຶກຂະຫມ່ານັ້ນລະ... ເມື່ອທັກທ້ານອາລົມແຕກຕະເຫລີດໄດ້ແລ້ວ ພວກເຂົາຈຶ່ງຕັ້ງສັ້ງການຂ້າພະເຈົ້າ ແລະເມື່ອຂ້າພະເຈົ້າຕອບໄປ ພວກເຂົາກໍ່ຍິ່ງຫົວຫລາຍຂຶ້ນ, ມັນບໍ່ແມ່ນສຽງຫົວແຫ່ງຄວາມຫວັງຫລືຍ້ອນມີຄວາມສຸກດອກ ແຕ່ແມ່ນສຽງຫົວເຍີ້ຍຫຍັນ.

- ແລ້ວພວກຄູສອນ ໔0 ຄົນນັ້ນເຮັດຫຍັງລະ?

- ບໍ່ຮູ້.

ສຽງຫົວ.

- ອານໂຕນ ເຊມີວໂນວິດ, ແລ້ວເຈົ້າບໍ່ໄດ້ຟາດປາກໃຜຈັກຄົນຫວະຢູ່ພູ້ນນະ? ຄັນແມ່ນຂ້ອຍຄືຊິອົດບໍ່ຟັງດອກເດີ..., ເວົ້າແທ້ ໆ ໃດ໋!

ສຽງຫົວ.

- ແລ້ວມີໂຮງອາຫານບໍ່?

- ມີ ແຕ່ໃນເມື່ອວ່າພວກເດັກນ້ອຍບໍ່ມີເກີບໃສ່ເລີຍ ພວກເຂົາກໍເລີຍພາກັນເອົາຫມໍ້ເອົາຊາມມາຫ່ານອນຫມົດ ແລ້ວກິນກັນຢູ່ຫັ້ນເລີຍ...

ສຽງຫົວ.

- ແລ້ວແມ່ນໃຜເອົາມາລະ?

- ຂ້ອຍບໍ່ເຫັນຕອນນີ້, ແຕ່ຄືງແມ່ນພວກເຂົາເອງຫັ້ນລະ...

- ຈັດກັນເປັນພຽນດີ?

- ອາດຊິແມ່ນແນວນັ້ນ.

- ກໍແປວ່າມີການຈັດຕັ້ງລະນໍ້.

ສຽງຫົວ.

- ແລະ ມີສະມາຊິກກິນໂຊໂມນຈັກຄົນບໍ່?

ເທື່ອນີ້ມີສຽງຫົວຮາກ້ອມຂຶ້ນໂດຍບໍ່ຕ້ອງລໍຖ້າຄໍາຕອບຈາກຂ້າພະເຈົ້າຊ້ຳ.

ແຕ່ເຖິງຢ່າງໃດກໍຕາມ ເມື່ອຂ້າພະເຈົ້າເວົ້າສຸດ ທຸກຄົນກໍຈ້ຶງແນມເບິ່ງຂ້າພະເຈົ້າຢ່າງເຄັ່ງຂຶມ ແຝງດ້ວຍຄວາມວິຕົກກັງວົນ.

- ແລ້ວ... ເຈົ້າຄຶດວ່າແນວໃດລະ? ໃຜຜູ້ຫນຶ່ງຮ້ອງຂຶ້ນ.

- ຂ້ອຍຫວະ? ກໍຄືກັບພວກເຈົ້ານັ້ນແລ້ວ...

ລາປົດແນມເບິ່ງຂ້າພະເຈົ້າຢ່າງລະມັດລະວັງ ແລະ ເຫັນໄດ້ຢ່າງຈະແຈ້ງວ່າ ຫມໍບໍ່ສາມາດເຂົ້າໃຈອາລົມຂອງຂ້າພະເຈົ້າໄດ້.

- ໂຢ້ວ ພວກສູກໍອອກຄວາມເຫັນມາແດ່ແມ໋... ວ່າແນວໃດ...? ເປັນຫຍັງບໍ່ເວົ້າລະ? ກໍເປັນຫນ້າສົນໃຈຢູ່ເດ້, ແລ້ວປານໃດເຈົ້າຊິຕັດສິນໃຈລະ?

ເດນິສ ກູດລາຕີ ຍົກມືຂຶ້ນຂໍເວົ້າ.

- ເອີ້ຍ ເດນິສ, ເອົາເບິ່ງ ໂຕຊິວ່າແນວໃດ.

ເດນິສ ລຸກຂຶ້ນ ເລີ່ມຕົ້ນດ້ວຍການຍົກມືເບື້ອງໜຶ່ງຂຶ້ນເກົາງ່ອນ ແຕ່ພໍຄືດອອກວ່າ ກິລິຍາແນວນີ້ຈະເຮັດໃຫ້ພວກເດັກນ້ອຍຫົວ ເຂົາຈຶ່ງຟ້າວກົກມືໄຮ້ປະໂຫຍດເບື້ອງນີ້ລົງ ແຕ່ພວກເດັກນ້ອຍຫັນໄດ້ເຫັນແລ້ວ ແລະ ພາກັນຫົວໂຄບຂຶ້ນ.

- ເວົ້າແທ້ແລ້ວ ກັນນີ້ບໍ່ມີຫຍັງຊິເວົ້າດອກ... ແມ່ນຢູ່ວ່າ ຄາຄິບຢູ່ບໍ່ໄກ, ແມ່ນແທ້... ແຕ່ຊິໂດດເຂົ້າໄປຈັດການເລື່ອງແນວນີ້ຫວະ... ແລ້ວພວກເຮົາເອງລະມີໃຜແດ່, ຜູ້ຈົບໆກໍໄປມະຫາວິທະຍາໄລກໍາມະກອນຫມົດແລ້ວ.

ຫມໍສັ່ນຫົວບິດຄໍຄືກັບວ່າມັນຫລົງກືນແມງວັນລົງທ້ອງແລ້ວ.

- ເວົ້າກັນຕາມຄວາມຈິງແລ້ວ ບໍ່ເປັນຕາຍ້ານໄປ ກູເຮັຍແຊດອກ. ເປັນຫຍັງພວກເຮົາຈຶ່ງຊິໄປຢູ່ຫັ້ນ? ກ້າໄປເດ້ ຊິເປັນແນວໃດ: ເດັກນ້ອຍພວກນັ້ນ ຕັ້ງ ໔໘໐ ຄົນ ແລ້ວພວກເຮົາ ໑໔໐... ແລະ ໃນໝູ່ພວກເຮົາກໍມີແຕ່ຄົນໃຫມ່, ຄົນເກົ່າມີດາມທໍ່ໃດຫນຶ່ງ, ເບິ່ງຕີ... ໂຕສະກາຍັງເປັນນາຍກອງແລ້ວ, ນາຕາຊາກໍຄືກັນແຕ່ຫມໍ ເປເອເປ ລຽດເຊັນໂກ, ກູດສະໂຕຍວັນ ກັບ ກາລາເຕັນໂກເດ້?

- ແມ່ນຫຍັງ - ກາລາເຕັນໂກ ອີຫຍັງ? ສຽງງ້ວງນອນແກມບໍ່ພໍໃຈຂອງຫມໍດັງຂຶ້ນ. ບັກໃດກໍມີແຕ່ເວົ້າຮອດ ກາລາເຕັນໂກ ນີ້ລະນໍ!

- ຢຸດເວີ້ຍ, ລາບິດຮ້ອງສັ່ງ.

- ແລ້ວເລື່ອງຫຍັງເຮົາຈຶ່ງຊິຢຸດລະ? ອານໂຕນ ເຊມີວໂນວິດ ຫາກໍເລົ່າເລື່ອງໃຫ້ຟັງວ່າພວກເຂົາເປັນແນວໃດ. ພວກຢູ່ພຸ້ນນະ... ແລ້ວເຮົາເດ໋ເຮົາບໍ່ເຮັດວຽກຊັ້ນຫວະ?

- ເອົາລະໆ... ດີແລ້ວ, ເດີນສເວົ້າຕໍ່. ເຮົາຂໍໂທດ, ວ່າແຕ່ວ່ະພວກເຮົາຊິກີກເຂົາຟາດປາກແນວໃດລະຢູ່ພຸ້ນນະ... ເຮົາຄຶດແນວນັ້ນລະ.

ມີເຕຍ ເຊເວລີ ເງີຍຫົວຂຶ້ນເວົ້າວ່າ:

- ເວົ້າດີໆແດ່ກ່ຽວກັບປາກຫັ້ນ.

- ແລ້ວໂຕຊິເຮັດຫຍັງລະ?

- ໂຕບໍ່ຕ້ອງຫ່ວງດອກວ່າເຮົາຊິເຮັດແນວໃດ.

ກູດລາຕີ ນັ່ງລີງຄືນ, ອີວານ ອີວາໂນວິດ ເປັນຜູ້ເວົ້າຕໍ່:

- ສະຫາຍຊາວນິຄົມທັງຫລາຍ, ຂ້ອຍຊິບໍ່ຍ້າຍບໍ່ຫນີໄປທາງໃດຫມົດ, ຢ່າງໃດກໍດີຈັ່ງກີວ່າຂ້ອຍເປັນຜູ້ຢູ່ນອກວົງຢູ່ຫັ້ນລະ, ຂ້ອຍເປັນຜູ້ເບິ່ງຜູ້ເຫັນດີກວ່າ. ແລ້ວເປັນຫຍັງຊິໄປຢູ່ກູເຣັຍແຊລະ? ເຂົາປະເດັກນ້ອຍທີ່ຮ້າຍຂາດທີ່ສຸດໄວ້ໃຫ້ແລ້ວຍັງຊິມາແຕ່ ຄາຄີບອີກ...

- ແລ້ວຢູ່ນີ້ ເພິ່ນບໍ່ຈ່ັງພວກມາແຕ່ຄາຄີບໃຫ້ພວກເຮົາຫວະ? ລາປິດກາມຂຶ້ນ.

- ຂ້ອຍຮູ້ຢູ່, ແຕ່ລອງຄຶດເບິ່ງເອົາ... ຕັ້ງ ໓00 ແລ້ວ ອານໂຕນເຊມີວໂນວິດ ເວົ້າວ່າ ພວກຢູ່ພຸ້ນພວມກິນພວມໃຫຍ່ ນອກນີ້ຄວນຄຶດອີກວ່າ ພວກເຮົາຊິໄປຢູ່ບ່ອນພວກເຂົາ, ກ້າຫາກວ່າພວກເຂົາພາກັນລັກເຄື່ອງນຸ່ງຂອງກີເປັນເງິນຮອດ ໑໘ ພັນຣຸບ

ແລ້ວ ຄິດເບິ່ງວ່າ ພວກມັນຊິຈັດການພວກສູແນວໃດ.

- ປົ້ງເລີຍ! ຜູ້ໃດຜູ້ໜຶ່ງຮ້ອງຂຶ້ນ.

- ເຮີ້ຍ... ພວກມັນບໍ່ທັນປົ້ງພວກເຮົາໃຫ້ສຸກດອກ, ເຂົາຊິພາກັນກິນພວກເຮົາດິບໆ ແດງໆ ນັ້ນລະ.

- ແລ້ວໄທເຮົານີ້ກໍຫລາຍຄົນຊິໄປຮຽນລັກນຳເຂົາຄືກັນ, ອີວານ ອີວາໂນວິດເວົ້າຕໍ່ວ່າ: ພວກເຮົາມີຄົນປະເພດນີ້ຢູ່ນີ້ບໍ່?

- ມີຫລາຍໂພດ, ກູດລາຕິ ຕອບທັນທີ, - ຈຳພວກຂີ້ກ້ອຍກໍມີຢູ່ແລ້ວຕັ້ງ ໔໐, ພຽງແຕ່ວ່າພວກເຂົາຍັງຢ້ານຢູ່ທີ່ນັ້ນລະ!

- ເຫັນບໍ່... ເຫັນບໍ່! ອີວານ ອີວາໂນວິດ ຮ້ອງຂຶ້ນຢ່າງຕື່ນເຕັ້ນ, - ນັບເບິ່ງບັດນີ້ ພວກເຈົ້າ ໗໐ ຕໍ່ກັບພວກເຂົາ ໓໔໐, ລົບພວກແມ່ຍິງກັບພວກຮຸ່ນນ້ອຍໆອອກນຳ... ທັງໝົດນີ້ເພື່ອຫຍັງ? ເພື່ອມ້າງເພນີຄົມ ກ້ອກກີ ຊັ້ນຫວະ? ເຈົ້າຊິຈົບຫາຍວາຍວອດໝົດທັ້ນແລ້ວ ອານໂຕນ ເຊມີອໂນວິດ ເອີ້ຍ!

ອີວານ ອີວາໂນວິດ ນັ່ງລົງຄືນ ທັງພາດແສງຕາໄປເບິ່ງຜູ້ຢູ່ອ້ອມຢ່າງຜູ້ມີໄຊ. ມີສຽງອື້ອຶງບັ້ນແຊວດັງຂຶ້ນ ທ່າມກາງກັນແກວເດັກນ້ອຍຄືກັບວ່າເຫັນດີນຳ ແຕ່ຂ້າພະເຈົ້າບໍ່ໄດ້ຍິນກ້ອຍທຳນອງຕັດສິນແນວໃດເລີຍ.

ກາລີນາ ອີວາໂນວິດ ໃນເສື້ອຍາວສີໜົ່ນໂຕເກົ່າ ແຕ່ໂກນໜວດເຄົາມາໃໝ່ໆສະອາດອ່ຽມຄືຕາມປົກກະຕິຂອງລາວ ໄດ້ຮັບອະນຸຍາດຈາກທີ່ປະຊຸມໃຫ້ລຸກຂຶ້ນເວົ້າ. ກາລີນາ ອີວາໂນວິດ ຮູ້ສຶກເຈັບປວດຫົວໃຈພໍແຮງແລ້ວ ຍ້ອນວ່າລາວເຫັນຄວາມຈຳເປັນທີ່ຕ້ອງຕັດແຍກຕົວອອກຈາກນິຄົມ ແລະ ບັດນີ້ໃນດວງຕາຄູ່ສີຟ້າ

ໃສຂຸ່ນມົວຍ້ອນຄວາມຊະລາພາບນັ້ນ ຂ້າພະເຈົ້າແນມເຫັນຄວາມຫງ່ວມເຫງົາຢ່າງເລິກເຊິ່ງແຝງຢູ່.

- ມັນເປັນຄືແນວນີ້ເນາະ, ລາວເລີ່ມເວົ້າຢ່າງບໍ່ຟ້າວຟັ່ງ, ປາກົດວ່າຂ້ອຍນີ້ກໍຈິບໍ່ໄປນຳພວກເຈົ້າໄດ໋... ມັນເປັນແນວນັ້ນລະ, ດັ່ງນັ້ນຈຶ່ງຖືວ່າຂ້ອຍມັນຄົນວົງນອກ ແຕ່ນັ້ນມັນບໍ່ຫມາຍຄວາມວ່າຂ້ອຍເປັນຄົນຫ່າງເຫີນພວກເຈົ້າແທ້ເດີ, ພວກເຈົ້າຈິເລືອກໄປທາງໃດແລະ ຊີວິດມັນຈິນຳພາພວກເຈົ້າໄປທາງໃດມັນຕ່າງກັນ. ເດືອນແລ້ວພວກເຮົາຍັງພາກັນເວົ້າຢູ່ວ່າ ຈິສົ່ງນ້ຳມັນເບີອອກໄປຂາຍໃຫ້ພວກອັງກິດ. ແຕ່ຂໍນຳ, ພວກເຈົ້າເວົ້າໃຫ້ຂ້ອຍຟັງເບິ່ງດຸ, ຂ້ອຍຜູ້ເຖົ້າໆແລ້ວຊ່ຳນີ້ລະວ່າ ການທີ່ພວກເຮົາຈິເຮັດວຽກເພື່ອພວກຄົນອັງກິດຫມູ່ນີ້ ມັນສົມຄວນແລ້ວເບາະ? ແລ້ວຂ້ອຍຍັງເຫັນອີກວ່າພວກເຮົາຢູ່ນີ້ໃຈຮ້ອນບໍ່ອິດບໍ່ທົນຈັກດີ້: ໄປ ໄປ ໄປ! ເອົາລະພວກເຈົ້າຈິໄປ, ແຕ່ໄປແລ້ວຈິເປັນແນວໃດລະ? ຕາມທິດສະດີແລ້ວກໍດີຢູ່ດອກ ໄປ ຊາໂປໂຣເຊ ຫັ້ນແຕ່ໃນຕົວຈິງແລ້ວແມ່ນຫຍັງ ໄປລ້ຽງງົວຄືເກົ່າຫັ້ນຕວ່າ! ກ່ອນຈິສົ່ງນ້ຳມັນເບີໄປໃຫ້ພວກອັງກິດຫັ້ນ ພວກສູຈິຫມົດເຫື່ອຫມົດແຮງໄປເທົ່າໃດ? ຄິດໄລ່ເບິ່ງແດ່ບໍ່? ຍັງທົ່ງຫຍ້າເດ້, ຍັງການລ້າງຄອກ ລ້າງຂີ້ງົວ ລ້າງກົ້ນຫັ້ນເດ້, ບໍ່ຊັ້ນພວກອັງກິດທີ່ວ່າຫັ້ນ ເຂົາຈິບໍ່ກິນເດີ້ ນ້ຳມັນເບີສູຫັ້ນ! ແຕ່ເລື່ອງຫມູ່ນີ້ສູບໍ່ຄຶດດອກ ພວກຈ້າ ມີແຕ່ຈິໄປຈິໄປທ່າດຽວ. ຊັ້ນມັນດີຫລາຍແລ້ວລະທີ່ພວກສູບໍ່ໄດ້ໄປຫັ້ນ, ແລ້ວພວກອັງກິດກໍຈິໄດ້ກິນແຕ່ເຂົ້າຈີ່ລ້າງໆ. ບັດນີ້ຊ້ຳແມ່ນ ກູເຮັຍແຊ, ແລ້ວພວກສູຊ້ຳພາກັນຢູ່ນີ້, ຄຶດຈົນຫົວຈິແຕກ. ແມ່ນມັນຈິມີຫຍັງຄຶດກະດັກກະ

ດໍ້? ຄົນຜູ້ກ້າວຫນ້າຄືພວກສູ ເບິ່ງເອົາຕີ ເດັກນ້ອຍນ້ອງນຸ່ງສູເອງ ເຊື້ອສາຍດຽວກັບສູ, ກັບຊາວນິຄົມມາກຊິມ ກັອກກີ ຕັ້ງ ໕00 ກຳລັງຊິເສຍຜູ້ເສຍຄົນ. ອານໂຕນ ເຊມີວໂນວິດ ຫາກໍເລົ່າໃຫ້ສູຟັງຢູ່ນີ້ ແລ້ວພວກສູຊ້ຳພາກັນຫົວທ້ອງແຂງ ແມ່ນມັນມີຫຍັງເປັນຕາຫົວຊັ້ນ ຫວະ? ເຮັດແນວໃດອຳນາດໂຊວຽດຈຶ່ງສາມາດຍອມໃຫ້ກະໂຕນະຄອນຫລວງຄາຄົບເອງຢູ່ກ້ອງຮູດັງທ່ານ ກຣິກໍຣີ ອີວາໂນວິດ* ເອງມີເດັກນ້ອຍຕັ້ງ ໕00 ຄົນຕັ້ງຕົວເປັນໂຈນ, ແລ້ວອຳນາດໂຊວຽດຊິບອກສູວ່າ: ໄປ, ໄປຈັດການເຮັດໃຫ້ພວກນີ້ກາຍເປັນຄົນດີມີຄຸນສົມບັດ: ຄືດເບິ່ງ ພວກນັ້ນຕັ້ງ ໕00 ຄົນ! ແລ້ວພວກຊິເບິ່ງແຍງພວກສູບໍ່ແມ່ນພວກກ່ອຍຄືເກົ້າ ລູກາ ເຊມີວໂນວິດ ຫລືຜູ້ອື່ນຫວະ ຫັ້ນດອກເດີ, ມີແຕ່ຊາວກຳມາຊີບຄາຄົບທັງຫມົດຫັ້ນແລ້ວ! ແຕ່ສູ ຊ້ຳບໍ່ວ່າ! ພວກສູອອນຊອນນຳແຕ່ເລື່ອງຊິເຮັດໃຫ້ອັງກິດໄດ້ກິນອິ່ມກິນເຕັມ, ມີນ້ຳມັນເບີກິນຢ່າງພຽງພໍ ຂໍໃຫ້ພວກເຂົາກິນອິ່ມຈົນໄສ້ແຕກພຸ້ນເດີ. ພໍແຕ່ຫ່າງຫນີຈາກສວນກຸຫລາບທໍ່ນັ້ນກໍຢ້ານຂາສັ່ນແລ້ວ: ພວກເຮົາມີກັນເທົ່າໃດ ແລ້ວພວກພາກນີ້ມີທ່ໃດ. ເມື່ອກູກັບ ອານໂຕນ ເຊມີວໂນວິດ ພາກັນມາຕັ້ງນິຄົມນີ້ນະ ແລ້ວເປັນແນວໃດ? ພໍປານວ່າ ພວກເຮົາເຄີຍຮຽກປະຊຸມໃຫຍ່ແບບນີ້ ແລ້ວກ່າວຄຳປາໄສແບບນີ້ຕວ່າ... ຮື? ເອົາແມ້ ໃຫ້ພວກນັ້ນມັນເວົ້າສູ່ຟັງແມ້, ໂວໂລຄອບ ກັບ ຕາຣາແນັດ

---

* ກຣິກໍຣີ ອີວາໂນວິດ ເປຕຣົບສະກີ: ປະທານຄະນະກຳມະການບໍລິຫານງານສູນກາງຂອງ ອູກຣາອີນຜູ້ທຳອິດ.

ແລະ ກູດຫັ້ນ, ການັ້ນເບິ່ງ ພວກກູຢ້ານພວກເຂົາບໍ, ພວກພາກ ຫມູ່ນີ້? ເຮັດແນວນີ້ມັນແມ່ນວຽກງານຂອງລັດຢ່າງຫນຶ່ງ ເປັນສິ່ງ ຈໍາເປັນຢ່າງຫນຶ່ງສໍາລັບອໍານາດໂຊວຽດ. ຊັ້ນລະ, ກູຂໍບອກວ່າ: ໄປ! ໄປໂລດ. ແລ້ວ ມາກຊິມ ກັອກກີ ຈະເວົ້າວ່າ: ພວກເຂົາ! ຊາວນິຄິນກັອກກີ ເປັນຈັ່ງຊີ້ແລ້ວ, ກ້າວໄປຫນ້າເລີຍໆບໍ່ມີຢ້ານ ຫຍັງຫມົດ!

ຍິ່ງເວົ້າ ພວງແກ້ມຂອງ ກາລີນາ ອີວາໂນວິດ ກໍຍິ່ງແດງຂຶ້ນ ແລະ ດວງຕາຂອງພວກເດັກນ້ອຍກໍຄືວ່າໂຮງຮຸ່ງດ້ວຍແປວໄຟກ້າ ຫລາຍຂຶ້ນ. ຈໍານວນຫນຶ່ງຊຶ່ງນັ່ງຢູ່ເທິງພື້ນ ພາກັນຫຍັບເຂົ້າມາໃກ້ ພວກເຮົາ, ສ່ວນອີກພວກຫນຶ່ງເອົາຄາງກ່າຍບ່າຫມູ່ຜູ້ຢູ່ຂ້າງໆ, ກົ້ງ ຕາບໍ່ພັບ, ບໍ່ແມ່ນກົ້ງຕາເບິ່ງໃບຫນ້າຂອງ ກາລີນາ ອີວາໂນວິດ ດອກ ແຕ່ມັນເຫມື່ອລອຍໄປໄກແສນໄກ. ແລະ ເມື່ອ ກາລີນາ ອີວາ ໂນວິດ ເວົ້າຮອດກັອກກີ, ແກ່ນຕາດໍາຂອງພວກເຂົາກໍຕື່ກວ້າງຂຶ້ນ ອີກ, ເປັ່ງຄວາມເມົາມົວໃນຄວາມຮັກຕໍ່ເພື່ອນມະນຸດອອກມາ, ພວກເດັກນ້ອຍພາກັນຮ້ອງຄາງແຫຍ້ຊຸກກັນ, ຢາກຕິບມີແຕ່ພວກ ເຂົາບໍ່ມີໂອກາດ. ມິເຕຍ ເຊເວລີ ຢືນຢູ່ກາງຫມູ່ຄູ່ຂອງມັນທີ່ນັ່ງຢູ່ ພື້ນເຮືອນ, ຮ້ອງໄປໃສ່ພວກຢູ່ແຖວສຸດທ້າຍ ບ່ອນມັນຄິດແນ່ໃຈ ວ່າ ຈະມີຜູ້ຄັດຄ້ານວ່າ:

-ພວກເຮົາຊິໄປ... ພວກພາກເອີ້ຍ, ໄປແທ້ງຕວ່າ!

ແຕ່ພວກຢູ່ແຖວສຸດທ້າຍເອງກໍຊົດແສງຕາໂຮງຮຸ່ງ ທັງເຮັດ ຫນ້າລິງຫລອກມິເຕຍ ຄືນທຸກແບບທຸກແນວ. ມິເຕຍ ຈຶ່ງໂດດ ເຂົ້າໄປຫາ ກາລີນາ ອີວາໂນວິດເຊິ່ງບັດນີ້ກໍກຫມູ່ເດັກນ້ອຍມາຫຸ້ມ

ລ້ອມໄວ້ແຫນ້ນ ຈຶ່ງພວກເຂົາບໍ່ສາມາດເຮັດຫຍັງໄດ້ນອກຈາກຮ້ອງ ປົບຂຶ້ນ ແລະ ມີເດຍກໍກ່າວວ່າ:

- ຄັນຊັ້ນ ກາລີນາ ອີວາໂນວິດ ເອີຍ, ກໍຫມາຍຄວາມວ່າ ເຈົ້າຊິໄປນຳພວກເຮົາແມ່ນບໍ່?

ກາລີນາ ອີວາໂນວິດ ພຽງແຕ່ຍິ້ມສີເສົາໆ ທັງຍັດຢາໃສ່ກອກ. ລາປິດປະກາດຂຶ້ນວ່າ:

- ເບິ່ງນີ້... ເພີ່ນຂຽນຫຍັງໄວ້ເວີຍ ຫມູ່, ອ່ານແມ້!

ຫມົດທຸກຄົນຮ້ອງຂຶ້ນພ້ອມກັນວ່າ:

- ບໍ່ມີການໂອ່ຍຄາງ!

- ດີແລ້ວ, ແຕ່ວ່າ ອ່ານຄືນອີກເທື່ອຫນຶ່ງ!

ລາປິດ ພາດກໍາປັ້ນລົງ ແລ້ວທຸກຄົນກໍເວົ້າພ້ອມກັນແຮງໆກ້ອງ ກັງວານວ່າ:

- ບໍ່ມີການໂອ່ຍຄາງ!

- ແລ້ວພວກສູກໍໂອ່ຍຄາງ! ພວກສູທັງຫມົດເປັນນັກຄິດໄລ່: ເບິ່ງເອົາ ໑໐ ມາລົມກັບ ໑໐໐ ຕະພິດຕະພື... ມີໃຜແດ່ຄິດໄລ່ ແບບນີ້? ພວກເຮົາຮັບມາແຕ່ ຄາຄົບ ໔໐ ຄົນ... ນັບເຂົ້າແລ້ວ ເບາະ? ພວກເຂົາຢູ່ໃສ?

- ຢູ່ນີ້! ພວກເຮົາຢູ່ນີ້! ພວກເດັກນ້ອຍຮ້ອງຕອບ.

- ແລ້ວເປັນຫຍັງລະ?

ແລ້ວພວກເດັກນ້ອຍກໍຮ້ອງຕອບຂຶ້ນອີກວ່າ:

- ຄັກຫລາຍ!

- ແລ້ວເປັນຫຍັງຕ້ອງຄິດໄລ່ແບບນີ້ລະ? ແທນທີ່ຈະເຮັດຄື

ອີວານ ອີວາໂນວິດ ຂ້ອຍໂລດຊີບັບແບບນີ້: ພວກເຮົາບໍ່ມີເທົ່າ ສ່ວນພວກເຂົາມີຕັ້ງ ໑໐ ພັນໂຕ! ຊັ້ນພວກເຮົາຢຸດຢູ່ບ່ອນເກົ່າ ເນາະ!

ກອງປະຊຸມໂຮຂຶ້ນ ທັງຫັນໄປເບິ່ງ ອີວານ ອີວາໂນວິດ ເຊິ່ງ ໜ້າແດງຮືນຍ້ອນຄວາມອາຍ.

ລາປິດເວົ້າຕໍ່ວ່າ:

- ພວກເຮົາຕ້ອງນັບງ່າຍໆແບບນີ້: ຝ່າຍພວກເຮົາ, ນີຄົມ ກັອກກີ ແລ້ວຝ່າຍພວກເຂົາມີໃຜແດ່? ບໍ່ມີຈັກຄົນ.

ເມື່ອ ລາປິດ ເວົ້າສຸດແລ້ວ ພວກເດັກນ້ອຍຮ້ອງຂຶ້ນວ່າ:

- ແມ່ນແລ້ວ, ໄປເລີຍ ພວກເຮົາໄປກັນໝົດເລີຍ, ອານ ໂຕນ ເຊມີວໂນວິດ ຂຽນຈົດໝາຍຫາກະຊວງໂລດ.

ກູດລາຕີ ເວົ້າຂຶ້ນວ່າ:

- ດີແລ້ວ! ໃນເມື່ອວ່າຊີໄປ ກໍຕ້ອງໄປ ແຕ່ຕ້ອງໃຊ້ສະໝອງ ແດ່. ມື້ອື່ນກໍແມ່ນເດືອນມີນາແລ້ວ, ບໍ່ມີເວລາຊີເສຍແມ່ນແຕ່ນາ ດຽວ, ບໍ່ຕ້ອງຂຽນຈົດໝາຍດອກ ແຕ່ສົ່ງໂທລະເລກເລີຍ ບໍ່ຊັ້ນ ພວກເຮົາຊີເຮັດສວນປູກຜັກບໍ່ທັນ. ນອກນີ້, ຍັງມີອີກເລື່ອງ ໜຶ່ງ... ເກືອງແນວໃດພວກເຮົາຊີໄປໂດຍບໍ່ມີເງິນຈັກອັດ ບໍ່ໄດ້, ຢ່າງໜ້ອຍຕ້ອງ ໔໐ ໐໐໐, ຕ້ອງມີເງິນ.

ລາປິດ ປຶກສານຳຂ້າພະເຈົ້າວ່າ:

- ຕ້ອງລົງຄະແນນສຽງບໍ່?

- ໃຫ້ອານໂຕນ ເຊມີວໂນວິດ ປະກອບຄວາມເຫັນ! ມີຜູ້ບອກ ມາແຕ່ລຸ່ມ.

-ແມ່ນໂຕບໍ່ເຫັນຊຸ້ນຫວະ? ຮ້ວຍ! ລາປິດ ເວົ້າ, ເກືອງຢ່າງໃດກໍຕ້ອງເຮັດຫັ້ນຕາມລະບຽບ, ເຊີນ ອານໂຕນ ເຊມີວໂນວິດເວົ້າ.

ຂ້າພະເຈົ້າລຸກຂຶ້ນຢືນຕໍ່ຫນ້າທີ່ປະຊຸມ ແລ້ວເວົ້າສັ້ນ ໆ ວ່າ:

-ນິຄົມ ກັອກກີ ຫມັ້ນຍືນ!

ເຄິ່ງຊົ່ວໂມງຕໍ່ມາ ວິເຕຍ ໂບໂກຍຢາບເລັ່ນສະກີ ຫົວຫນ້າໂຮງມ້າຄົນໃຫມ່ຂອງນິຄົມ ກັອກກີ ແລະ ຫົວຫນ້າກອງທີສອງ ກໍຄວບມ້າເຂົ້າໃນເມືອງ.

ໃນຫມວກສຸບຂອງມັນມີຂໍ້ຄວາມສົ່ງໂທລະເລກວ່າ:

"ກະຊວງສຶກສາ ຄາຄີບ, ລູກຣິນສະກາຍຢາ. ຂໍຮ້ອງໃຫ້ມອບກູເຣັຍແຊ ໃຫ້ພວກເຮົາດ່ວນ, ກຽມແນວປູກ ແລະ ສົ່ງງົບປະມານມາໃຫ້.

ກອງປະຊຸມໃຫຍ່ສະມາຊິກນິຄົມ.

ມາກາເຣັນໂກ"

ບົດທີ ໑໗

ການຮັບຮູ້ຢ່າງໄວວາ

ລູກຣິນສະກາຍຢາ ສົ່ງໂທລະເລກເອີ້ນຂ້າພະເຈົ້າໄປພົບໃນມື້ຕໍ່ມານັ້ນໂລດ. ພວກເດັກນ້ອຍຜູ້ເຊື່ອງ່າຍ ພາກັນໃຫ້ຄວາມສຳຄັນແກ່ໂທລະເລກສະບັບນີ້ຢ່າງຫລວງຫລາຍ.

-ໂຕເຫັນບໍ່... ວ່າເພິ່ນເຮັດວຽກກັບແນວໃດ. ມີແຕ່ໂທລະເລກດ່ວນກັບດ່ວນໃສ່ກັນເອົາໂລດ.

ວ່າກັນຕາມຄວາມເປັນຈິງແລ້ວ ເຫດການກໍຫາກດໍາເນີນໄປຕາມກະແສຂອງມັນນັ້ນແລ້ວ. ເຖິງແມ່ນວ່າໄດ້ຮັບຮູ້ກັນທົ່ວໄປແລ້ວວ່າ ນິຄົມ ກູເຣັຍແຊ ບໍ່ອາດຍືນຍົງຄົງຕົວຕໍ່ໄປໄດ້ ທັງນີ້ກໍແມ່ນແຕ່ຍ້ອນວ່າ ມີເຈົ້າຂອງເຮືອນຫລາຍຫລັງຄຸ້ມກໍາມະກອນ ແລະ ຫມູ່ບ້ານອ້ອມຂ້າງ ພາກັນຮຽກຮ້ອງໃຫ້ອັດນິຄົມນີ້ ແຕ່ ກູເຣັຍແຊ ກໍຊ້ຳມີຜູ້ປົກປ້ອງມັນຢູ່. ເວົ້າແທ້ໆແລ້ວກໍມີແຕ່ ຊູກຣິນສະກາຍຢາ ແລະ ຢູເຣັບ ເທົ່ານັ້ນທີ່ຮຽກຮ້ອງໃຫ້ພວກເຮົາຍ້າຍມາຢູ່ ກູເຣັຍແຊ ຢ່າງບໍ່ມີເງື່ອນໄຂ. ຢູເຣັບ ຜູ້ດຽວທີ່ເຊື່ອຫມັ້ນຕໍ່ການຍົກຍ້າຍຕາມໂຄງການນີ້ ສ່ວນ ຊູກຣິນສະກາຍຢາ ສະຫນັບສະຫນູນກໍຍ້ອນວ່ານາງເຊື່ອຫມັ້ນໃນຕົວຂ້າພະເຈົ້າ ແຕ່ໃຊ້ສ້ຽວນາທີຫນຶ່ງ ນາງກໍຍອມຮັບຢ່າງຈິງໃຈກັບຂ້າພະເຈົ້າວ່າ:

- ເວົ້າແທ້ແລ້ວ... ຂ້ອຍຄຶດຢ້ານຢູ່ໃດ໋ ອານໂຕນ ເຊມີວໂນວິດ, ຂ້ອຍບໍ່ສາມາດອົດກັ້ນໄດ້ ແຕ່ຂ້ອຍຄຶດຢ້ານ...

ເບຣແຊນ ກໍເຫັນດີນໍາການຍົກຍ້າຍ ທັງວາງເງື່ອນໄຂທີ່ຂ້າພະເຈົ້າບໍ່ສາມາດຮັບເອົາໄດ້ຄື ນາງຢາກໃຫ້ມີຄະນະກໍາມະການພິເສດ ໕ ຄົນ ເພື່ອຊີ້ນໍາການປະຕິບັດງານທັງຫມົດ. ຫລັກການ, ປະເພນີທັງຫລາຍຂອງນິຄົມ ກ້ອກກີ ຈະຕ້ອງຄ່ອຍຊຶມແຊກເຂົ້າໃນຫນ່ວຍຊີວິດໂຮມຫມູ່ຊຸດໃຫມ່ເປັນຂັ້ນໆ ແລະ ເພິ່ນຈະສົ່ງສະມາຊິກກົມໂຊໂມນມາແຕ່ ຄາຄົບ ໔໐ ຄົນ ເພື່ອຊ່ວຍຂ້າພະເຈົ້າໃນໄລຍະຫນຶ່ງເດືອນ.

ຄາລາບູດາ ນັ້ນຕົກຢູ່ພາຍໃຕ້ອິດທິພົນຂອງກຸ່ມບຸກຄົນຫົວແຫລມທີ່ຫ້ອມລ້ອມລາວຢູ່ ຈັ່ງຊັ້ນຈຶ່ງບໍ່ສາມາດຮັບຟັງເລື່ອງໃຫ້ທຶນ

ຮອດ ໔໐ ໐໐໐ ຣຸບ ນັ້ນເສຍ ລາວໄດ້ແຕ່ເວົ້າຊ້ຳຄວາມເກົ່າບໍ່ເລີກບໍ່ແລ້ວວ່າ:

- ເອົາ ໔໐ ໐໐໐ ຣຸບວ່າດີ, ພວກເຮົາຈັດການທຸກຢ່າງເອງໄດ້.

ສັດຕູບໍ່ຄາດຝັນ ໂປໂລອອກມາຈາກອົງການກຳມະບານເພື່ອບຸກໂຈມຕີພວກເຮົາ. ຊາຍຄົນຫນຶ່ງຊື່ວ່າ ກລາແຍ, ຜົມສີດຳ, ໃຈຮ້ອນປານພູໄຟລະເບີດ ແລະ ເອີ້ນຕົນວ່າ ສະຫາຍຂອງປະຊາຊົນຮ້ອງໂຮໂຄສະນາແບບຕ່ຳຊາມເປັນພິເສດ. ຈົນຮອດເວລານີ້ ຂ້າພະເຈົ້າເອງຍັງບໍ່ເຂົ້າໃຈວ່າ ເປັນຫຍັງຊື່ນິຄົມກ້ອກກີຈຶ່ງເຮັດໃຫ້ລາວຕົກຢູ່ໃນສະພາບນີ້ ແຕ່ລາວມັກເວົ້າຮອດນິຄົມພວກເຮົາດ້ວຍໃບຫນ້າບິດບ້ຽວເຈັບແຄ້ນ, ທັງຄາດກົ້ມນ້ຳລາຍ ແລະ ຟາດກຳປັ້ນໄປມາດ້ວຍຄວາມໂມໂຫ:

- ຢູ່ໃສກະມີນັກປະຕິຮູບຫມົດ! ແລ້ວມັນແມ່ນໃຜ ທ້າວ ມາກາເຣັນໂກຄົນນີ້! ເປັນຫຍັງຍ້ອນເກົ້ານີ້ຜູ້ດຽວ ພວກເຮົາຈຶ່ງຕ້ອງລະເມີດກົດຫມາຍ ແລະ ສິດພົນປະໂຫຍດຂອງຊາວຜູ້ອອກແຮງງານ? ແລ້ວມີໃຜແດ່ຮູ້ຈັກນິຄົມ ກ້ອກກີ? ມີໃຜເຄີຍເຫັນ? ລູກກິນສະກາຍຢາ ຫວະ? ແລ້ວເປັນແນວໃດລະ? ລາວເຂົ້າໃຈທຸກສິ່ງທຸກຢ່າງຊົນຫວະ ລູກກິນສະກາຍຢາຫັ້ນ?

ລາວຂົນຫົວລຸກຍ້ອນຂໍ້ຮຽກຮ້ອງເຫລົ່ານີ້ຂອງຂ້າພະເຈົ້າ:

໑ - ບິດພະນັກງານທັງຫມົດຂອງ ກູເຣັຍແຊ ໂດຍບໍ່ມີການພິຈາລະນາ.

໔ - ລັບລ້ອນຜູ້ດູແລມາໃຫ້ນິຄົມກ້ອກກີ ໑໕ ຄົນ (ຕາມກົດ

ລະບຽບຕ້ອງມີ ໔໐ ຄົນ).

໓ - ໃຫ້ເງິນເດືອນຜູ້ດູແລຄູເຝິກ ໘໐ ຣຸບ ແທນ ໔໐.

໔ - ພະນັກງານຝ່າຍສຶກສາ ແມ່ນຂ້າພະເຈົ້າເປັນຜູ້ເລືອກ, ຍົກເວັ້ນມີຄຳຄັດຄ້ານຈາກອົງການກຳມະບານ.

ຂໍ້ຮຽກຮ້ອງເລັກໆ ນ້ອຍໆ ເຫລົ່ານີ້ແລ້ວເຮັດໃຫ້ ກລາແມ ໂມໂຫ ຈົນນ້ຳຕາຍ້ອຍ.

- ຈັ່ງແມ່ນຂ້ອຍຢາກຮູ້ວ່າ ຊິມີໃຜແດ່ກ້າເຫັນດີເຫັນງາມນຳຄຳຂາດອັນອວດເກັ່ງແນວນີ້? ແຕ່ລະເກົ່າເວົ້າລ້ວນແຕ່ຫມິ່ນປະຫມາດກົດຫມາຍໂຊວຽດທັງນັ້ນ. ມັນຕ້ອງການຄູເຝິກ ໑໕ ຄົນ ແລະ ອີກ ໒໕ ຄົນຫັ້ນໂລດເຫລືອລ້າງ. ມັນຊິບັງຄັບໃຫ້ພວກເຂົາເຮັດວຽກປານນັກໂທດຢູ່ຄຸກພຸ້ນແລ້ວ, ຍ້ອນແນວນີ້ມັນຈຶ່ງບໍ່ກ້າເອົາຮອດ ໔໐ ຄົນ, ພວກເຂົາຊິບໍ່ຟັງເດ້.

ຂ້າພະເຈົ້າບໍ່ຍອມຜະເຊີນຫນ້າໂຕ້ຖຽງໂດຍກົງກັບ ກລາແມ ເພາະຂ້າພະເຈົ້າບໍ່ສາມາດເດົາເຈດຕະນາອັນແທ້ຈິງຂອງເຂົາໄດ້.

ໂດຍທົ່ວໄປແລ້ວ ຂ້າພະເຈົ້າພະຍາຍາມຢູ່ນອກວົງສົນທະນາໂຕ້ຖຽງກັນສະເຫມີ ເພາະວ່າຂ້າພະເຈົ້າເອງກໍບໍ່ສາມາດຮັບປະກັນວ່າຕົນເອງຈະເປັນຝ່າຍມີໄຊຢ່າງຂາດຂັ້ນໄດ້ ຈັ່ງຊັ້ນຈຶ່ງບໍ່ຢາກບີບໃຫ້ໃຜມາຮັບຜິດຊອບ ເຊິ່ງກະໂຕເຂົາເອງກໍເຫັນວ່າ ບໍ່ສົມເຫດສົມຜົນ. ເວົ້າກັນຕາມຄວາມຈິງແລ້ວ ຂ້າພະເຈົ້າມີເຫດຜົນອ້າງຢູ່ຂໍ້ດຽວຄື: ນິຄົມ ກ້ອກກີ, ແຕ່ມີຄົນຫນ້ອຍດຽວເທົ່ານັ້ນທີ່ໄດ້ມາເຫັນນິຄົມ ແລະ ຂ້າພະເຈົ້າກໍຮູ້ສຶກວ່າ ບໍ່ເຫມາະທີ່ຕົນຈະເວົ້າເຖິງມັນ.

ມີບຸກຄົນຫລາຍປະເພດ, ຄວາມຂື້ນໃຈຫລັງໄຫລ ແລະ ສາຍສຳພັນຫລາຍອັນ ຖືກແກ່ດຶງເຂົ້າມາກ່ຽວພັນກັນຢູ່ໃນເລື່ອງຍົກຍ້າຍນິຄົມ, ບໍ່ດົນຂ້າພະເຈົ້າ ກໍຫລົງທິດເລີຍ ຍິ່ງຂ້າພະເຈົ້າເຂົ້າໄປໃນເມືອງຄາຄົບບໍ່ກາຍມື້ໜຶ່ງແບບນີ້ ແລະ ບໍ່ເຄີຍເຂົ້າຮ່ວມກອງປະຊຸມອັນໃດໝົດ. ດ້ວຍເຫດຜົນອັນໃດອັນໜຶ່ງ ຂ້າພະເຈົ້າຈຶ່ງບໍ່ເຊື່ອວ່າ ພວກຄູ່ສັດຕູທັງຫລາຍມີຄວາມຈິງໃຈສັດຊື່ ແລະ ຄິດສົງໃສວ່າຢູ່ເບື້ອງຫລັງເຫດຜົນອ້າງອີງທີ່ຍົກຂຶ້ນມານັ້ນ ມີສາເຫດອື່ນໆເຊື່ອງຊ້ອນຢູ່.

ມີພຽງຄັ້ງດຽວ, ທີ່ຂ້າພະເຈົ້າປະເຊີນໜ້າກັບບຸກຄົນໜຶ່ງຢູ່ກະຊວງສຶກສາປະຊາຊົນ ເຊິ່ງມີອາລົມເລີກ ແລະ ເຊື່ອໝັ້ນຕົນເອງຢ່າງແທ້ຈິງຄົນໜຶ່ງ ແລະ ຂ້າພະເຈົ້າກໍສະແດງຄວາມນິຍົມຊົມຊອບລາວອອກໄປຢ່າງເປີດເຜີຍໂລດ. ຄົນຜູ້ນີ້ເປັນແມ່ຍິງ... ຖ້າເບິ່ງສົ້ນກະໂປງຂອງລາວ ແຕ່ຄືງເປັນມະນຸດໄຮ້ເພດຫລາຍກວ່າ, ຮ່າງຕ່ຳນ້ອຍໜ້າແຫລມໆຄືໜ້າມ້າ, ໜ້າເອິກແປແລບແຊບປານແຜ່ນແປ້ນ, ແຂ່ງຂາໃຫຍ່ທຶກຈົນນາງບໍ່ຮູ້ຈະເຮັດແນວໃດກັບມັນ. ນາງມັກແກວ່ງມືແດງປານກຸ້ງຕົ້ມໄປມາຢູ່ສະເໝີ ເພື່ອເວົ້າອັນໃດອັນໜຶ່ງອອກມາ ແລະ ບາງເທື່ອເພື່ອແປງຜົມສີເຫລືອງອ່ອນແບບເຟືອງແຫ້ງ ແລະ ຍຽດຊື່. ທຸກໆຄົນເອີ້ນນາງວ່າ ສະຫາຍໂຊຢາ. ນາງມີອິດທິພົນສົມຄວນຢູ່ໃນຫ້ອງການຂອງ ເບຣແຊນ.

ພໍແຕ່ເຫັນຂ້າພະເຈົ້າເທື່ອທຳອິດ ສະຫາຍ ໂຊຢາ ກໍບໍ່ມັກໜ້າຂ້າພະເຈົ້າ ໂລດ ແລະ ນາງກໍບໍ່ເຊື່ອງອຳມັນໄວ້ ແລະ ບໍ່ລັ່ງເລທີ່ຈະໃຊ້ສຳນວນຮຸນແຮງທີ່ສຸດກັບຂ້າພະເຈົ້າ:

- ເຈົ້າທັງຫລາຍ ສະຫາຍ ມາກາເຣັນໂກ, ເຈົ້າບໍ່ແມ່ນນັກສຶກສາສາດ, ເຈົ້າເປັນທະຫານ, ຂ້ອຍໄດ້ຍິນວ່າແຕ່ກ່ອນເຈົ້າເປັນນາຍພັນຕີ, ເບິ່ງກໍຄືແທ້. ຂ້ອຍພຽງແຕ່ບໍ່ເຂົ້າໃຈເທົ່ານັ້ນລະວ່າ ເປັນຫຍັງຢູ່ນີ້ຜູ້ຄົນຈຶ່ງພາກັນຫຍຸ້ງສົນລະວົນໄປນຳເຈົ້າຫມົດ. ຂ້ອຍຊິບໍ່ຍອມໃຫ້ເຈົ້າເຂົ້າໃກ້ເດັກນ້ອຍດອກ.

ຄວາມຈິງໃຈໃສແຈ້ງຄືແກ້ວພະລຶກ ແລະ ຄວາມເມົາມົວອັນໃສສະອາດຂອງສະຫາຍ ໂຊຢາ ກືກໃຈຂ້າພະເຈົ້າ ແລະ ຂ້າພະເຈົ້າກໍບໍ່ເຊື່ອງອຳພັນໄວ້ເມື່ອຕອບໄປຕາມທຳມະດາວ່າ:

- ຂ້ອຍນິຍົມຊົມຊອບເຈົ້າສະເຫມີ ສະຫາຍ ໂຊຢາ, ແຕ່ມີຢ່າງຫນຶ່ງ ຂໍບອກ... ຄືຂ້ອຍບໍ່ເຄີຍໄດ້ເປັນພັນຕີຈັກເທື່ອ.

ສະຫາຍ ໂຊຢາ ກືວ່າການຍົກຍ້າຍນີ້ຄົມຈະສຸດລົງດ້ວຍຄວາມວາຍວອດຢ່າງຫລີກບໍ່ໄດ້, ນາງຟາດກຳປັ້ນໃສ່ໂຕະ ແລ້ວຮ້ອງແຈດໆວ່າ:

- ພວກເຈົ້າພາກັນຕາບອດຫມົດທຸກຄົນ! ແມ່ນ... ພວກເຈົ້າໄດ້ກິນນ້ຳອີຫຍັງນຳລາວ... ທ່ານ... ນາງ ເວົ້າທັງກົງຕາເບິ່ງຂ້າພະເຈົ້າ.

- ທ່ານ ໂກໂລແນນ ຜູ້ນີ້, ຂ້າພະເຈົ້າຕໍ່ໃຫ້ນາງ ຢ່າງເຄັ່ງຂຶມ.

- ເອີ... ໂກໂລແນນ... ຄືຂ້ອຍວ່າຫັ້ນລະ, ແລ້ວທັງຫມົດນີ້ມັນຊິສຸດລົງແບບໃດ. ຂ້າກັນມຸ່ນຫມົດ. ລາວເອົາເດັກນ້ອຍລາວມາ ໑໔໐ ຄົນ ແລ້ວກະຊິປາດຄໍກັນກົ້ມ ເຈົ້າຄິດວ່າແນວໃດຮື? ສະຫາຍ ມາກາເຣັນໂກ?

-ການຕີລາຄາຂອງເຈົ້າເຮັດໃຫ້ຂ້ອຍດີໃຈ, ສະຫາຍ ໂຊຢາ, ແຕ່ກ້າຮູ້ວ່າ ແມ່ນໃຜຊີປາດຄໍໃຜກ່ອນ.

ເບຣແຊນ ເວົ້າຂັດການປະທະຄາລົມ ຂອງພວກເຮົາວ່າ:

-ໂຊຢາ... ເຈົ້າກໍຢ່າໂພດຫລາຍດຸ! ຂ້າກັບຊຸ້ນຫວະ! ແລ້ວກະເຈົ້າຫັ້ນ ອານໂຕນ ເຊມີວໂນວິດ ຍາມໃດກໍເວົ້າຕະຫລົກຢູ່ເລີຍ ໆ.

ກ້ອຍຄຳໂຕ້ຖຽງຂັດແຍ່ງກັນຂອງພວກເຮົາ ເລີ່ມວົນວຽນກັງວົນເກີດອົງການພັກ ອັນເຮັດໃຫ້ຂ້າພະເຈົ້າອຸ່ນໃຈຂຶ້ນ. ຂ້າພະເຈົ້າພໍໃຈທີ່ໄດ້ຍິນອີກວ່າ ນັກຄົມກູເຣັຍແຊ ເລີ່ມເປື່ອຍເຍື່ອຍແຕກພັງລົງເລື້ອຍໆ, ມັນເປັນຮ້າຍລົງຈັກໄຊ້ ຈົນຮຽກຮ້ອງໃຫ້ໃຊ້ມາດຕະການເຂັ້ມງວດທັງຮີບດ່ວນຫລາຍອັນ. ກະໂດ ກູເຣັຍແຊ ເອງບີບບັງຄັບໃຫ້ມີການຕັດສິນໃຈ ເກີດແມ່ນວິທີການຄັດຄ້ານ ມາຈາກຝ່າຍພະນັກງານສຶກສາຂອງມັນດີກັນກໍຕາມ, ການໂອ້ລົມສົນທະນາທຸກຢ່າງກ່ຽວກັບການຍົກຍ້າຍນັກຄົມກ້ອກກີ ເຮັດໃຫ້ພວກນັກຄົມ ກູເຣັຍແຊ ເສຍກຳລັງໃຈ ຫມົດຫວັງຢ່າງສຸດຂີດ.

ພວກຄູສອນ ຄູເຝິກກຸ່ມດຽວນີ້ແລ້ວ ສ້າງຂ່າວເປົ່າປີ້ວຂຶ້ນພາຍໃນພວກເຂົາວ່າ ພວກນັກຄົມ ກູເຣັຍແຊ ຈະໃຊ້ມີດແຫລມຈັດການຕ້ອນຮັບພວກນັກຄົມ ກ້ອກກີ. ສະຫາຍ ໂຊຢາ ຮ້ອງໃສ່ຫນ້າຂ້າພະເຈົ້າວ່າ:

-ເຈົ້າເຫັນແລ້ວເບາະ? ເຈົ້າເຫັນແລ້ວເບາະ?

-ຈ້າວ, ຂ້າພະເຈົ້າຕອບ, ຫມາຍຄວາມວ່າທຸກເສິ່ງທຸກຢ່າງ

ຈະແຈ້ງແລ້ວແມ່ນພວກເຂົາຊິປາດຄຳພວກເຮົາ ບໍ່ແມ່ນເຮົາເຮັດເຂົາ.

- ເປັນທຳມະດາແລ້ວວ່າ ເລື່ອງມັນຈະແຈ້ງແລ້ວ, ສະຫາຍເບຣແຊນ, ເຈົ້າຮັບຜິດຊອບຕໍ່ທຸກສິ່ງທຸກຢ່າງເດີ້! ມີໃຜເຄີຍເຫັນເລື່ອງແນວນີ້ຢູ່ໃສ? ປ່ອຍໃຫ້ເດັກນ້ອຍໄຮ້ຍາດສອງກຸ່ມໂດດເຂົ້າໃສ່ກັນ!

ໃນທີ່ສຸດຂ້າພະເຈົ້າກໍຖືກເອີ້ນເຂົ້າໄປຍັງອົງການສູງສຸດອົງການໜຶ່ງ. ບຸລຸດຫົວໂລ້ນຄົນໜຶ່ງເງີຍໜ້າອອກຈາກເຈ້ຍທີ່ພວມເບິ່ງຢູ່ ແລ້ວເວົ້າວ່າ:

- ເຊີນນັ່ງ, ສະຫາຍ ມາກາເຣັນໂກ.

ຊູກຣິນສະກາຍຢາ ແລະ ກລາແມ ກໍຢູ່ໃນຫ້ອງນີ້ຄືກັນ.

ຂ້າພະເຈົ້ານັ່ງລົງ.

ຊາຍຫົວໂລ້ນເວົ້າຂຶ້ນດ້ວຍນ້ຳສຽງສະຫງົບວ່າ:

- ເຈົ້າແນ່ໃຈບໍ່ວ່າ ເຈົ້າກັບເດັກນັກຮຽນຂອງເຈົ້າ ຈະສາມາດຈັດການກັບສິ່ງເປື່ອຍເຍື່ອຍ ຢູ່ໃນນິຄົມ ກູເຣັຍແຊ ໃນປັດຈຸບັນນີ້ໄດ້?

ແນ່ນອນແລ້ວວ່າ ຂ້າພະເຈົ້າຄຶງໜ້າມ້ານໄປກັບບາດ ເພາະຂ້າພະເຈົ້າຕ້ອງຕອບຄຳຖາມສຳລັບບັນຫາໜຶ່ງ ຊຶ່ງຖືກຕັ້ງຂຶ້ນຢ່າງຖືກຕ້ອງທີ່ສຸດແລ້ວນີ້ ດ້ວຍຄຳເຫັດ ທັງຕ້ອງປະສານສາຍຕາກັບລາວຢ່າງກົງໆອີກວ່າ:

- ຂ້ອຍແນ່ໃຈ.

ບຸລຸດຫົວໂລ້ນແນມເບິ່ງຂ້າພະເຈົ້າຢ່າງໜັກແໜ້ນ ແລ້ວເວົ້າຕໍ່:

- ບັດນີ້, ບັນຫາເຕັກນິກຂໍ້ໜຶ່ງ, ສະຫາຍ ກລາແມ ຟັງດີໆເດີ້, ມັນແມ່ນບັນຫາເຕັກນິກ ບໍ່ແມ່ນບັນຫາຫລັກການ: ບອກຂ້ອຍມາຢ່າງສັ້ນໆ ງ່າຍໆ ວ່າ ເປັນຫຍັງເຈົ້າບໍ່ຢາກໄດ້ຄູສອນ ໔໐ ຄົນ ແຕ່ເອົາພຽງ ໑໘ ຄົນ ແລະ ເປັນຫຍັງຈຶ່ງ ບໍ່ເຫັນດີນຳອັດຕາເງິນເດືອນ ໔໗ ຣຸບ.

ຂ້າພະເຈົ້າຄຶດແລ້ວຕອບວ່າ:

- ເອົາລະ, ຂ້ອຍຈິເວົ້າສັ້ນໆ: ຄູສອນ ໔໐ ໄດ້ເງິນ ເດືອນລະ ໔໐ ອາດຈະສ້າງຄວາມທໍ້ຖອຍໝົດຫວັງໃຫ້ແກ່ນັກຄົນເດັກໄຮ້ຍາດໜຶ່ງ... ບໍ່ພຽງແຕ່ນັກຄົນເດັກ ແຕ່ນັກຄົນໃດໆກໍຄືກັນໝົດ.

ບຸລຸດຫົວໂລ້ນເງີກຫລັງໄປອີງແຜ່ນຮອງຫລັງຕັ່ງອີ້ຂອງລາວທັງຫົວອອກມາແຮງໆຢ່າງເປີດເຜີຍ ບາດແລ້ວ ລາວທັງຈີ້ດີ້ວມືອອກມາດ້ວຍໜຶ່ງ ແລະ ກາມທັງນ້ຳຕາແຕກຕາແຕນວ່າ:

- ແມ່ນແຕ່ຫນ່ວຍຊີວິດໂຮມໝູ່ ສຳລັບຄົນປະເພດ ກລາແມຫວະ?

- ໂອ້ຍ ອັນນັ້ນແນ່ນອນແລ້ວ, ຂ້າພະເຈົ້າຕອບຢ່າງຈິງຈັງ.

ທ່າທີຮອບຄອບແບບເປັນທາງການຂອງລາວປາກົດວ່າເຫືອຫາຍໄປໃນພັບຕາດຽວ ພໍປານກືກລົມພັດ, ລາວເດ່ມືໄປຫາ ລືວບິບ ຊາເວເລັບນາ:

- ຂ້ອຍເວົ້າແລ້ວຕວ່າວ່າ "ຈຳນວນບໍ່ເທົ່າຄຸນຄ່າ".

ລາວແກວ່ງຫົວແຮງໆດ້ວຍທ່າທີເມື່ອຍອ່ອນ ແລ້ວເວົ້າກັບລູກຣິນສະກາຍຢາ ດ້ວຍນ້ຳສຽງຂຶງຂັງເປັນທາງການ ແລະ ເອົາຈິງເອົາຈັງວ່າ:

- ຫາດາໃຫ້ລາວໄປ, ໄວທີ່ໃດຍິ່ງດີ!

- ໔໐ ໐໐໐ ຣຸບ! ຂ້າພະເຈົ້າບອກເມື່ອລຸກຂຶ້ນ.

- ເຈົ້າຫາກຊິໄດ້; ຫລາຍແລ້ວແມ່ນບໍ່?

- ບໍ່, ຫນ້ອຍໂພດ.

- ເອົາລະ ໄດ້ລະ, ລາກ່ອນ - ໄປໂລດ ແລະ ຂໍໃຫ້ສຳເລັດເດີ້.

ຢູ່ນິຄົມ ກັອກກີ ຄວາມພົດພັນຣຸນແຮງຂອງການຕັດສິນໃຈໃນຂັ້ນທຳອິດຄ່ອຍໆປ່ຽນຮູບມາເປັນການກະກຽມມິດໆ ແລະ ລະອຽດລະອໍຕາມແບບທະຫານ. ໃນຕົວຈິງແລ້ວ ແມ່ນ ລາປິດ ເປັນຜູ້ນຳພາຢູ່ໃນນິຄົມ ໂດຍມີ ໂກວານ ເປັນຜູ້ຊ່ອຍໃນກໍລະນີຫຍຸ້ງຍາກ ແຕ່ປາກົດວ່າບໍ່ມີຂໍ້ຫຍຸ້ງຍາກ. ຜ່ານມາບໍ່ເຄີຍມີການຕົກລົງຢ່າງເປັນເອກະສັນແນວນີ້ຈັກເທື່ອ ທັງບໍ່ເຄີຍມີຄວາມຮູ້ສຶກເຊື່ອຕໍ່ພັນທະຕໍ່ກັນ. ແມ່ນແຕ່ພວກເຮັດຜິດພາດນ້ອຍໆເອງກໍຍັງໄດ້ຮັບການຕອບໂຕ້ແບບແປກໆ ເຊິ່ງສະແດງອອກດ້ວຍສຳນວນສັ້ນໆເຍາະເຍີ້ຍວ່າ:

- ແລ້ວໂຕກໍຄືດຢາກໄປ ກູເຮັຍແຊ!

ຢູ່ທີ່ນິຄົມບໍ່ມີໃຜຮັກສາແນວຄິດສິ່ງໃສອັນໃດອັນຫນຶ່ງຕໍ່ພາລະກິດຂອງພວກເຮົາ. ໂດຍບໍ່ຮູ້ສຶກຕົວ ພວກເດັກນ້ອຍນິຄົມຮູ້ສຶກຕາມສັນຊາດສະຍານອັນອ່ອນໄຫວຄ່ຽມຄົມທີ່ສຸດຂອງພວກເຂົາວ່າ ມັນ

ມີຄວາມຈຳເປັນຢ່າງໜຶ່ງທີ່ທຸກຄົນ ຕ້ອງຍອມທຸກຢ່າງເພື່ອສ່ວນ ໂຮມ ແລະ ເລື່ອງນີ້ບໍ່ແມ່ນການອຸທິດເສຍສະຫລະຢ່າງໃດ. ມັນ ແມ່ນຄວາມສຸກເບີກບານຢ່າງໜຶ່ງ ຊຶ່ງບາງເທື່ອອາດນຸ່ມນວນອ່ອນ ຫວານກວ່າໝູ່ໃນໂລກຊ້ຳທີ່ຮູ້ສຳນຶກໄດ້ເຖິງສາຍຜູກພັນ, ຄວາມ ຍຶດໜຽວແໜ້ນແຮງຂອງສາຍພົວພັນ, ມັນແມ່ນຄວາມອ່ອນຫວານ ແບບຕື່ນເຕັ້ນ ຍ້ອນຄວາມຮູ້ສຶກວ່າມີພະລັງແຮງອັນລົ້ນເຫລືອນັ້ນ ຄືພະລັງອັນຍິ່ງໃຫຍ່ຂອງການຢູ່ໂຮມໝູ່. ທຸກສິ່ງເຫລົ່ານີ້ສະແດງ ອອກໃນສາຍຕາໃນທ່າທີ ໃນໃບໜ້າທ່າທາງ ໃນການອອກແຮງ ງານຂອງພວກເຂົາ. ດວງຕາຂອງທຸກຄົນແນມຟາດຂຶ້ນໄປທາງ ເໜືອ ເຊິ່ງຢູ່ລະຫວ່າງກຳແພງຂະໜາດຍັກນັ້ນ ມີກຸ່ມຄົນໂງ່ຈ້າ ເບົາປັນຍາເຕົ້າໂຮມກັນຍ້ອນຄວາມທຸກໄຮ້, ຍ້ອນແນວຄິດອະນາທິ ປະໄຕ ແລະ ຄວາມດຶ້ດ້ານອັນບໍ່ມີແນວປຽບ.

ຂ້າພະເຈົ້າສັງເກດເຫັນວ່າ ພວກເດັກນ້ອຍບໍ່ຄຸຍໂມ້ໃສ່ກັນຊ້ຳ. ຄວາມຮູ້ສຶກຢ້ານກົວວິຕົກກັງວົນຢ່າງໜຶ່ງສິງສະຖິດຢ່າງລີ້ລັບຢູ່ພາຍ ໃນຈິດໃຈຂອງແຕ່ລະຄົນ, ຄວາມຮູ້ສຶກນີ້ຮຸນແຮງຍ້ອນວ່າ ບໍ່ມີໃຜ ເຫັນສັດຕູກັບຕາມາກ່ອນເລີຍ.

ພວກເດັກນ້ອຍທຸກຄົນຄອງຄອຍການກັບມາແຕ່ລະຄັ້ງຂອງຂ້າ ພະເຈົ້າດ້ວຍໃຈຈິດຈໍ່ວິນວາຍ, ມີການວາງຍາມຕາມກະໜົນ ແລະ ຕາມຕົ້ນໄມ້ເປັນລະຍະ, ບາງຄົນຂຶ້ນນັ່ງຈອບຢູ່ເທິງຫລັງຄາ. ພໍ ແຕ່ກວຽນມ້າຂອງຂ້າພະເຈົ້າ ແລ່ນຜ່ານເດີ່ນເຂົ້າມາເທົ່ານັ້ນ ນັກ ເບິ່ງແກຜູ້ຢູ່ເວນປະຈຳວັນກໍຄວາຈັບເອົາແກແລ້ວເປົ່າສັນຍານເອີ້ນ ປະຊຸມ ໂດຍບໍ່ຕ້ອງການຮອດຄວາມເຫັນຂ້າພະເຈົ້າ. ຂ້າພະເຈົ້າ

ຈຶ່ງໄປຮ່ວມປະຊຸມຢ່າງວ່ານອນສອນງ່າຍ. ໃນເບິ່ງນັ້ນ ມັນກາຍເປັນປະເພນີອັນຫນຶ່ງແລ້ວກອງປະ ຊຸມຕ້ອນຮັບຂ້າພະເຈົ້າດ້ວຍສຽງຕົບມືກ້ອງສະນັ່ນປານສິນລະປິນຜູ້ຍິ່ງໃຫຍ່. ແນ່ນອນວ່າການກະທຳດັ່ງກ່າວບໍ່ມີຄວາມຫມາຍຫຍັງຫລວງຫລາຍຕໍ່ຂ້າພະເຈົ້າເທົ່າກັບຕໍ່ພາລະກິດຮ່ວມຂອງພວກເຮົາດອກ.

ໃນທີ່ສຸດ, ມາຮອດຕົ້ນເດືອນພຶດສະພາ ຂ້າພະເຈົ້າ ເຂົ້າມາຮ່ວມປະຊຸມພ້ອມດ້ວຍເອກະສານສັນຍາທີ່ກຽມພ້ອມຫມົດແລ້ວ.

ອີງໃສ່ເອກະສານສະບັບນີ້ ແລະ ອີງຕາມຄຳສັ່ງຂອງກະຊວງສຶກສາປະຊາຊົນ, ນິຄົມ ກ້ອກກີ ພ້ອມດ້ວຍສະມາຊິກນັກຮຽນ, ພະນັກງານຄົບຊຸດ, ເຄື່ອງໂຕະຕັ່ງ, ຝູງສັດ ແລະ ອຸປະກອນທຸກຢ່າງຈະຖືກຍົກຍ້າຍໄປຍັງ ກູເຣັຍແຊ. ນິຄົມກູເຣັຍແຊ ຖືກຍຸບແລ້ວ, ນັກຮຽນຂອງມັນ ໔໗໐ ຄົນ, ຊັບສິນບັດທຸກຢ່າງຂອງມັນຈຶ່ງມອບເປັນກຳມະສິດຂອງ ນິຄົມກ້ອກກີ. ພະນັກງານທັງຫມົດຂອງ ກູເຣັຍແຊ ຖືກປົດອອກຈາກຕຳແຫນ່ງໃນທັນທີທີ່ມີການມອບໂອນອຳນາດໃຫ້ແກ່ຜູ້ອຳນວຍການນິຄົມ ກ້ອກກີ, ຍົກເວັ້ນນາຍຊ່າງວິຊາສະເພາະບາງຄົນ.

ໃນເອກະສານຍັງບອກໃຫ້ຮູ້ອີກວ່າ ຂ້າພະເຈົ້າເປັນຜູ້ຊີ້ນຳວຽກງານຢູ່ ກູເຣັຍແຊ ນັບແຕ່ວັນທີ ໕ ພຶດສະພາໄປ ການຂົນຍ້າຍນິຄົມກ້ອກກີຈຳຕ້ອງເຮັດໃຫ້ສຳເລັດໃນວັນທີ ໑໕.

ຫລັງຈາກອ່ານຂໍ້ສັນຍາ ແລະ ຄຳສັ່ງຂອງກະຊວງສຶກສາປະຊາຊົນແລ້ວພວກເດັກນ້ອຍຮອດບໍ່ຮ້ອງໄຊໂຍຊ້ຳ ພວກເຂົາບໍ່ໂຍນຜູ້ໃດຂຶ້ນກາງອາກາດຊ້ຳ. ລາປົດເອງເວົ້າຂຶ້ນທ່າມກາງຄວາມງຽບສະຫງັດແຕ່ພຽງວ່າ:

- ພວກເຮົາຊິຊຽນຈິດຫມາຍຫາກ້ອກກີ ແລ້ວກະພວກສູເດີ້...
ຢ່າພາກັນຈື່ມວ່າ ໂອ່ຍຄາງ!

- ຈ້າວ... ບໍ່ມີຈື່ມວ່າ ໂອ່ຍຄາງ! ພວກເດັກນ້ອຍຂານຕອບ
ແລ້ວ ກາລີນາ ອີວາໂນວິດ ຈຶ່ງຍົກແຂນຂຶ້ນຊີ້ ແລະ ເວົ້າຕື່ມວ່າ:

- ໄປເລີຍສູເດັກນ້ອຍ, ບໍ່ຕ້ອງຢ້ານ!

ບັນດາທ່ານຜູ້ອ່ານທີ່ນັບຖື !

ສຳນັກພິມ "ຣາດູກາ" ຂໍສະແດງຄວາມຂອບໃຈລ່ວງຫນ້າມາຍັງທ່ານຜູ້ອ່ານ ທີ່ໃຫ້ຄວາມຄິດເຫັນ ກ່ຽວກັບການແປ ແລະ ການຮຽບຮຽງປຶ້ມຫົວນີ້.

ດັ່ງນັ້ນ ຖ້າຫາກທ່ານມີຄຳສະເຫນີອັນໃດທີ່ຈະເປັນການຊ່ວຍໃຫ້ການປັບປຸງການພິມ ໃນຄັ້ງຕໍ່ໄປດີຂຶ້ນກວ່າເກົ່າແລ້ວ ກະລຸນາສົ່ງຄວາມຄິດເຫັນໄປຍັງ:

Raduga Publishers,
17, Zubovski Boulevard, Moscow,
USSR, 119859

ບັນດາທ່ານຜູ້ອ່ານ ທີ່ນັບຖື!

ພວກຂ້າພະເຈົ້າຮູ້ສຶກດີໃຈ ທີ່ຈະແຈ້ງໃຫ້ບັນດາທ່ານຊາບວ່າ ໃນປີ ໑໙໙໐ - ໑໙໙໑ ທີ່ຈະເຖິງນີ້ ສຳນັກພິມ "ຣາດູກາ" ມີຈຸດປະສົງທີ່ຈະຂະຫຍາຍການພິມຈຳໜ່າຍປຶ້ມ ສຳລັບທ່ານຜູ້ອ່ານລາວ. ໃນຈຳນວນປຶ້ມທີ່ຈະພິມອອກເວລານີ້ ພວກທ່ານຈະພົບເຫັນບົດນິພົນ ຂອງນັກຂຽນທີ່ລືຊື່ຂອງສະໃຫມໂຊວຽດ ເຊັ່ນ: "ຕົ້ນຫຸງບິນຈອມຫາດ" ຂອງ ມາກາເຣັນໂກ ແລະ "ແມ່ນ້ຳດົງແລນສະຫງົບ" ຂອງ ໂຊໂລກົບ. ເມື່ອອ່ານປຶ້ມເຫລົ່ານີ້ແລ້ວ ທ່ານຈະໄດ້ຊາບເຖິງໂຊກຊາດາທີ່ລຳບາກສັບສົນໃນສະໃຫມສ້າງຕັ້ງອຳນາດການປົກຄອງໂຊວຽດ ແລະ ການດຳລົງຊີວິດແບບໃຫມ່ຂອງຊາວລັດເຊຍ.

ຫ້າມຈຳໜ່າຍ

บันดาท่านผู้อ่าน ที่นับถือ!

ในปี ๑๙๙๐ - ๑๙๙๑ สำนักพิมพ์ "ธาตูกา" จะสืบต่อพิมจำหน่ายปึ้มสำลับเด็กน้อย และ เยົາວະຊົນ.

เมื่ออ่านปึ้มเลื่อง "บางเหดการจากปะหวัดสาดลัดเชย" ของ อาเล็กไซเอบ, ท่านก็จะฮู้เถิงเหดการที่สำคันที่สุดในชีวิดของปะเทดลัดเชย, ซึ่งต่อมาได้กายเป็นสะหะพาบโซเวียด ในไลยะเวลา ๒๐๐ ปีก่อนมา. ปึ้มหัวนี้ถืกขຽນขึ้นด้วยพาสาที่ง่ายดาย, จะแจ้ง และ เหมาะสมสำลับเด็กน้อย.

ปึ้ม "มะนุดยิ่งใหย่ถืแนวใด" ของ อิลิน และ เชกาน เล่าโดยหย่อเถิงความเป็นมาของมວນมะนุดนับแต่สะໄໝປະຖົມບູຮານເປັນຕົ້ນມາ, มันได้อะทิบายว่า มะนุดเฮົາได้ປະກົດຕົວ และ ຂະຫຍາຍຕົວຂຶ້ນ ຄືແນວໃດ และ ສາມາດກາຍເປັນເຈົ້າຂອງທຳມະຊາດໄດ້ຄືແນວໃດ.

ສຳນັກພິມ "ຣາດູກາ"
ມົດສະກູ